ບົດທີ

1

ຄວາມເປັນມາຂອງຊາດລາວ

1.1 ລາວສະໄໝບູຮານ

1.1.1 ສິ່ງທີ່ຄວນຮູ້ກ່ຽວກັບປະຫວັດສາດລາວ

1.1.1.1 ການບັນທຶກປະຫວັດສາດລາວ

ລາວ ເປັນຊາດໜຶ່ງ ທີ່ມີປະຫວັດຄວາມເປັນມາອັນຍາວນານ ຕັ້ງແຕ່ສະໄໝດຶກດຳບັນ ຈົນມາເຖິງປະຈຸບັນ. ໂດຍຜ່ານຂະບວນວິວັດອັນຍາວນານນັ້ນ ມີຫຼາຍເຫດການທີ່ເກີດຂຶ້ນທີ່ສ້າງ ຄວາມສັບສົນ ໃຫ້ແກ່ການສຶກສາ ແລະ ຍາກທີ່ຈະຫາຄຳຕອບ ເນື່ອງຈາກຂໍ້ມູນມີທີ່ມາທີ່ໄປແຕກຕ່າງ ກັນໃນທາງເຫດຜົນປະກອບກັບວິທີການບັນທຶກ ກໍມີການແຊກຊ້ອນບັນຈຸເນື້ອໃນ ເພື່ອຮັບໃຊ້ ຈຸດປະສົງໃນລັກສະນະທີ່ແຕກຕ່າງກັນ. ເທົ່າທີ່ມີຂໍ້ມູນຫຼັກຖານໃນປັດຈຸບັນ ກ່ຽວກັບ ການຂຽນປະຫວັດ ສາດລາວນັ້ນ ພົບວ່າ ມີການຂຽນ ຢູ່ໃນ 3 ລັກສະນະ ຄື:

1) ການຂຽນປະຫວັດສາດໃນລັກສະນະຂອງ "ພື້ນ ຫຼື ຕຳນານ"

ການຂຽນປະຫວັດສາດໃນລັກສະນະພື້ນ ຫຼື ຕຳນານນີ້ ເທົ່າທີ່ສຶກສາພົບວ່າເປັນການບັນທຶກ ເຫດການປະຫວັດສາດຂອງອະດີດທີ່ເກົ່າແກ່ທີ່ສຸດເທົ່າທີ່ພົບໃນລາວ. ການຂຽນຕຳນານສ່ວນໃຫຍ່ ບັນທຶກໃສ່ໃບລານເປັນຕົວອັກສອນລາວເດີມ, ອັກສອນບາລີ ຫຼື ຕົວທຳ ຊຶ່ງຄົນລາວເອີ້ນວ່າ "ໜັງສືຜູກໃບລານ". ຮູບແບບການຂຽນມີລັກສະນະແຊກຊ້ອນເນື້ອໃນເຫດການປະຫວັດສາດເຂົ້າກັບ ເລື່ອງໄສຍະສາດ (ນິທານປະລຳປະລາ) ແລະ ພຸດທະສາສະໜາ ເຊັ່ນ: ຕຳນານຂຸນບູລົມ[1], ຕຳນານ ພະແກ້ວມໍຣະກົດ, ຕຳນານພະບາງ, ຕຳນານເມືອງວຽງຈັນ ແລະ ອື່ນໆ.

2) ການຂຽນປະຫວັດສາດໃນລັກສະນະຂອງ "ພົງສາວະດານ"

ການຂຽນປະຫວັດສາດໃນຮູບແບບພົງສາວະດານເທົ່າທີ່ສຶກສາ ພົບວ່າ ເປັນການບັນທຶກ ເຫດການປະຫວັດສາດຂອງອະດີດໃນລັກສະນະການຂຽນ ທີ່ຍຶດຖືເອົາການຮຽງລຳດັບອັນເດືອນປີ ກຳກັບຄັກແນ່. ເນື້ອໃນສ່ວນໃຫຍ່ທີ່ຂຽນໃນພົງສາວະດານ ແມ່ນເປັນເລື່ອງຂອງກະສັດຜູ້ປົກຄອງ ແລະ ລາຊະວົງເປັນຫຼັກ ເຊັ່ນ: ເຫດການກ່ຽວກັບພາລະກິດການເຄື່ອນໄຫວຂອງກະສັດ, ລະບຽບແບບແຜນ ການປົກຄອງເມືອງ ແລະ ການຕິດຕໍ່ສຳພັນກັບຕ່າງແດນ. ແຫຼ່ງຂໍ້ມູນທີ່ນຳມາໃຊ້ ແມ່ນໄດ້ມາຈາກເລື່ອງ ບອກເລົ່າ, ສິລາຈາລຶກ, ຕຳນານ, ຈົດໝາຍເຫດ....ຜົນງານສຳຄັນຂອງປະຫວັດສາດແບບນີ້ ໄດ້ແກ່:

- ພົງສາວະດານເມືອງພວນ ທີ່ຂຽນໂດຍເຈົ້າ ຄຳໝັ້ນ ວົງກົດຣັດຕະນະ ພິມປີ ຄສ 1951.
- ພົງສາວະດານລາວ ທີ່ຂຽນໂດຍ ມະຫາສິລາ ວີຣະວົງ ທີ່ຈັດພິມຄັ້ງທຳອິດ ໃນປີ ຄສ 1951 ຊຶ່ງຕໍ່ມາໄດ້ມີການຈັດພິມໃນຫຼາຍຄັ້ງ ເຊັ່ນ: ຄັ້ງທີສອງກະຊວງສຶກສານຳມາພິມເຜີຍແຜ່ ໃນປີ ຄສ 1952. ຕໍ່ມາມະຫາສິລາ ໄດ້ມີການປັບປຸງຕື່ມ ແລ້ວຈັດພິມຄັ້ງທີສາມ ໃນປີ ຄສ 1972 ແລະ ຕໍ່ມາ ໄດ້ຈັດພິມຕື່ມ ໃນປີ ຄສ 1973 ສຳລັບໃຊ້ປະກອບການສອນໃນວິທະຍາໄລແບບປະສົມຟ້າງຸ່ມ. ນອກຈາກນີ້, ຍັງມີພົງສາວະດານເມືອງຫຼວງພະບາງ ແລະ ອື່ນໆອີກ.

3) ການຂຽນປະຫວັດສາດໃນທາງວິທະຍາປະຫວັດສາດ

ການຂຽນປະຫວັດສາດໃນລັກສະນະແບບນີ້ ເປັນການຂຽນປະຫວັດສາດໃນລັກສະນະ ທີ່ ອາໄສການເຊື່ອມໂຍງລະຫວ່າງຫຼັກຖານຂໍ້ມູນຕ່າງໆ ເພື່ອອະທິບາຍເລື່ອງລາວຄວາມເປັນມາໃນອະດີດ ເຊັ່ນ: ໃຊ້ການບອກເລົ່າ ແລະ ໃຊ້ການອ້າງເຫດອ້າງຜົນ ດ້ວຍການອີງຫຼັກຖານໃສ່ກັບກົດ ຫຼື ທິດສະດີ ທາງສັງຄົມສາດ, ພິຈາລະນາຮຽບຮຽງຕາມລຳດັບເວລາ ເພື່ອໃຫ້ສອດຄ່ອງເປັນອັນໜຶ່ງອັນດຽວກັນ

[1] ຕຳນານຂຸນບູລົມມີທັງໝົດ 15 ສະບັບ. ສະບັບທຳອິດແຕ່ງຂຶ້ນ ໃນປີ ຈສ 874 (ຄສ 1512) ແຕ່ງໂດຍພະມະຫາເທບຫຼວງ ກັບມະຫາມຸງຄຸນ ສິດທິເຈົ້າ ໃນລາຊະການພະເຈົ້າ ວິຊຸນນະຣາດ

ຢ່າງມີເຫດຜົນ. ໃນນັ້ນ ສິ່ງທີ່ສຳຄັນທີ່ສຸດ ການຂຽນປະຫວັດສາດໃນລັກສະນະແບບນີ້ ຄືການຫຼີກລ່ຽງ ຄວາມເປັນ "ອະຄະຕິ" ໃຫ້ຫຼາຍທີ່ສຸດ ຈຶ່ງຈະສາມາດອະທິບາຍເຫດການໃນອະດີດຕາມຄວາມເປັນຈິງ ຫຼື ຢ່າງນ້ອຍກໍໃກ້ຄຽງຄວາມເປັນຈິງ.

ມາຮອດປັດຈຸບັນນີ້, ການຂຽນປະຫວັດສາດ ໃນປະເທດລາວ ໄດ້ມີການພັດທະນາຮູບແບບ ການຂຽນອອກມາໃນຫຼາຍລັກສະນະ. ນອກຈາກການຂຽນປະຫວັດສາດໃນລະດັບຊາດແລ້ວ ຍັງມີ ການຂຽນປະຫວັດສາດກ່ຽວກັບປະຫວັດຂອງບຸກຄົນ,ປະຫວັດສາດທ້ອງຖິ່ນ,ປະຫວັດສາດເສດຖະກິດ, ປະຫວັດສາດການເມືອງ - ການປົກຄອງ, ປະຫວັດສາດກອງທັບ, ປະຫວັດສາດພັກ ແລະ ອື່ນໆ.

1.1.1.2 ສັກກະລາດທີ່ນຳໃຊ້ໃນການຂຽນປະຫວັດສາດລາວ

ການນຳໃຊ້ສັກກະລາດມາບັນທຶກ ເພື່ອບົ່ງບອກເວລາຂອງເຫດການໃນປະຫວັດສາດ ຂອງ ລາວເຮົານັ້ນພົບວ່າ ມີການນຳໃຊ້ໃນຫຼາຍຮູບແບບ ຄືມີທັງການນຳໃຊ້ແບບພຸດທະສັກກະລາດ, ຈຸນລະສັກກະລາດ ແລະ ຄຣິດຕະສັກກະລາດ.

ພຸດທະສັກກະລາດ

ພຸດທະສັກກະລາດ ເປັນການນັບສັກກະລາດທາງພຸດທະສາສະໜາ ແລະ ມີການນຳໃຊ້ໃນ ຫຼາຍປະເທດ ໂດຍສະເພາະປະເທດທີ່ນັບຖືສາສະໜາພຸດ. ສຳລັບປະເທດລາວເລີ່ມມີການນຳມາ ໃຊ້ໃນຍຸກອານາຈັກລາວລ້ານຊ້າງ ສະໄໝຊຽງທອງ ຊຶ່ງເທົ່າທີ່ປາກົດມີຫຼັກຖານບົ່ງບອກ ຄືໃນສະໄໝ ການປົກຄອງ ຂອງພະເຈົ້າວິຊຸນນະລາດ. ການນັບແບບພຸດທະສັກກະລາດນີ້ ແມ່ນເລີ່ມກຳນົດເອົາ ເມື່ອ ພະພຸດທະເຈົ້າປະລິນິພານເປັນຈຸດແຫ່ງການຕັ້ງຕົ້ນ ຊຶ່ງເອີ້ນວ່າ "ພຸດທະສັກກະລາດ ຫຼື ພຸດທະສັງກາດ ທີ 1" ແລະ ນິຍົມຂຽນຫຍໍ້ວ່າ " ພส 1". ພຸດທະສັກກະລາດເກີດກ່ອນຄຣິດຕະສັກກະລາດ 543 ປີ.

ຈຸນລະສັກກະລາດ

ຈຸນລະສັກກະລາດ ເປັນວິທີການນັບສັກກະລາດຕາມແບບການນັບຂອງກະສັດຂອງພະມ້າ ໃນສະໄໝອານາຈັກພູການທີ່ໄດ້ປະກາດໃຊ້ ໃນປີ ພส 1181. ຈຸນລະສັກກະລາດເກີດຕາມຫຼັງພຸດທະ ສັກກະລາດ 1181 ປີ ແລະ ຖືການນຳເຂົ້າມາໃຊ້ບັນທຶກເຫດການທາງປະຫວັດສາດ ໃນອານາຈັກ ລາວລ້ານຊ້າງ ໂດຍຜ່ານການແຜ່ຜາຍເຂົ້າມາທາງອານາຈັກລ້ານນາ.

ຄຣິດຕະສັກກະລາດ

ຄຣິດຕະສັກກະລາດເປັນວິທີການນັບສັກກະລາດຕາມແບບທາງສາສະໜາຄຣິດ ໂດຍກຳນົດ ເອົາແຕ່ສະໄໝພະເຍຊູເກີດເປັນການຕັ້ງຕົ້ນ ຄຣິດຕະສັກກະລາດທີ 1 ຫຼື ຄส 1. ສ່ວນໃນຊ່ວງເວລາ ກ່ອນພະເຍຊູເກີດ ເອີ້ນວ່າ ກ່ອນຄຣິດຕະສັກກະລາດ ຫຼື ກ່ອນ ຄส (BC = Before Common Era). ຄຣິດຕະສັກກະລາດ ກຳເນີດຕາມຫຼັງພຸດທະສັກກະລາດ 543 ປີ ແລະ ເກີດກ່ອນຈຸນລະສັກກະລາດ 638 ປີ. ການທຽບຄຣິດຕະສັກກະລາດ ເປັນພຸດທະສັກກະລາດໃຫ້ບວກ 543 ເຮົາຈະໄດ້ ພส ທີ່ຖືກຕ້ອງ.

1.1.1.3 ຫຼັກຖານທີ່ໃຊ້ປະກອບການສຶກສາປະຫວັດສາດລາວ

ໃນປະຫວັດສາດລາວ ຍັງມີຫຼາຍບັນຫາທີ່ຜູ້ສຶກສາ ແລະ ນັກຄົ້ນຄວ້າຫຼາຍທ່ານຕ້ອງການຮູ້ ຂໍ້ມູນຄວາມຈິງແຕ່ຊອກຫາຄຳຕອບໄດ້ຍາກ. ສາເຫດມາຈາກການມີຫຼັກຖານ ແລະ ຂໍ້ມູນທາງ ປະຫວັດສາດຂ້ອນຂ້າງໜ້ອຍ ແລະ ບໍ່ຄົບຖ້ວນ ຊຶ່ງມີສາເຫດມາຈາກຫຼັກຖານດັ່ງກ່າວ ໄດ້ຖືກທຳລາຍ ໄປ ໃນຍາມເສິກສົງຄາມ, ກຸ່ມຄົນຊາດອື່ນເກັບກວາດເອົາໄປ ແລະ ບາງຫຼັກຖານມີການປົກປັກຮັກສາ ບໍ່ຖືກວິທີ ຈຶ່ງມີການສູນຫາຍໄປຕາມກາລະເວລາ. ເຖິງຢ່າງໃດກໍຕາມ, ເຮົາກໍຍັງມີຫຼັກຖານພໍ ທີ່ຈະນຳມາ


ສຶກສາ ແລະ ເປັນຂໍ້ມູນປະກອບໃນການຄົ້ນຄວ້າປະຫວັດສາດຊາດ ສົມທົບກັບຂໍ້ມູນຫຼັກຖານຂອງຊາວຕ່າງດ້າວທີ່ບັນທຶກ. ຫຼັກຖານທີ່ນຳມາປະກອບການສຶກສາຄົ້ນຄວ້າປະຫວັດສາດລາວ ປະກອບມີດັ່ງນີ້:

1) ຫຼັກຖານທີ່ມີການບັນທຶກ (Written Records) ໝາຍເຖິງຫຼັກຖານທີ່ມີການບັນທຶກເປັນລາຍລັກອັກສອນໃສ່ແຜ່ນຫີນ, ໃບລານ, ແຜ່ນແພ ແລະ ເຈ້ຍເປັນຕົ້ນ ເຊັ່ນ:

- ສິ່ງທີ່ບັນທຶກໃສ່ແຜ່ນຫີນ ຊຶ່ງໃນພາສາລາວເຮົາເອີ້ນກັນວ່າ ສິລາຈາຣຶກ, ສິລາເລກ ແລະ ໃບເສມາ.




ຮູບທີ 1: ສິລາຈາຣຶກໂຮງພະຍາບານ ຊາຍຟອງ



ຮູບທີ 2: ໃບເສມາ ທີ່ພິພິທະພັນຫໍພະແກ້ວ ສະຕະວັດທີ 12 ໝາຍເລກທະບຽນ ຫພກ 1/74
ທີ່ມາ: ພິພິທະພັນຫໍພະແກ້ວ ນະຄອນຫຼວງວຽງຈັນ

- ສິ່ງທີ່ບັນທຶກໃສ່ໄມ້ ເອີ້ນວ່າປັ້ງຈຸ້ມ ແລະ ບັນທຶກໃສ່ໄມ້ຄືໃບລານ ເອີ້ນວ່າ ໜັງສືຜູກ



ຮູບທີ 3: ໜັງສືຜູກໃບລານ

ຫຼັກຖານປະເພດສິ່ງບັນທຶກ ທີ່ນຳມາປະກອບໃນການສຶກສາປະຫວັດສາດລາວໃນຍຸກບູຮານ ນອກຈາກ ສິລາຈາຣຶກ, ປັ້ງຈຸ້ມ, ໜັງສືໃບລານແລ້ວ ກໍມີຈົດໝາຍເຫດ, ພົງສາວະດານ, ບັນທຶກ ຄວາມຊົງຈຳຕ່າງໆ ແລະ ອື່ນໆ. ຫຼັກຖານດັ່ງກ່າວນີ້ປາກົດຕໍ່ຂຶ້ນ ເມື່ອມະນຸດມີການປະດິດຕົວອັກສອນຂຶ້ນມາໃຊ້ ແລະ ຮູ້ຈັກຂຽນໜັງສືແລ້ວ.

2) ຫຼັກຖານປະເພດວັດຖຸ (Material Remains) ໝາຍເຖິງ ຫຼັກຖານທີ່ເປັນປະເພດຊາກສິ່ງວັດຖຸສິ່ງຂອງຕ່າງໆ ທີ່ຍັງເຫຼືອຕົກຄ້າງມາຮອດປະຈຸບັນ ຊຶ່ງປະກອບມີ:

- ຊາກຂອງສິ່ງທີ່ມີຊີວິດທີ່ເອີ້ນວ່າ "Fossil" ໃນອາດີດທີ່ຍັງເຫຼືອຕົກຄ້າງຢູ່ໃນຊັ້ນດິນປະເພດຕ່າງໆ ເຊັ່ນ: ຊາກໂຄງກະດູກຂອງມະນຸດ, ສັດ ແລະ ພືດ.

- ຊາກບູຮານສະຖານ, ບູຮານວັດຖຸ ຊຶ່ງໄດ້ແກ່ສິ່ງທີ່ມະນຸດເຮົາປະດິດຂຶ້ນມາໃນອະດີດ ທີ່ເປັນຫຼັກຖານສຳຄັນ ຊ່ວຍໃຫ້ເຮົາຮູ້ຂໍ້ມູນຄວາມຈິງ ກ່ຽວກັບ ວິຖີການດຳລົງຊີວິດ, ຄວາມເຊື່ອຖືຕະຫຼອດຮອດ ຂະນົບທຳນຽມປະເພນີບາງຢ່າງ ຂອງມະນຸດໃນສະໄໝບູຮານໂດຍອາໄສການກວດສອບ, ຕີລາຄາ ຈາກນັກບູຮານຄະດີ.

3) ຫຼັກຖານປະເພດຄຳບອກເລົ່າ (Oral Sources) ໝາຍເຖິງ ຫຼັກຖານທີ່ມີການບອກເລົ່າສືບທອດຕໍ່ກັນມາໃນອະດີດ ໄດ້ແກ່: ຕຳນານ, ນິທານ ແລະ ເລື່ອງເລົ່າຕ່າງໆ ກ່ຽວກັບ ຂະນົບທຳນຽມປະເພນີ ລວມທັງຫຼັກຖານທີ່ໃຫ້ຂໍ້ມູນຄວາມຈິງ ຈາກການສຳພາດບອກເລົ່າຂອງຜູ້ທີ່ຮ່ວມຮູ້ ແລະ ເຫັນເຫດການ.

1.1.1.4 ການຈັດແບ່ງຍຸກສະໄໝປະຫວັດສາດ

ໂດຍທົ່ວໄປແລ້ວ ການແບ່ງຍຸກປະຫວັດສາດ ຈະມີຄວາມແຕກຕ່າງກັນທາງດ້ານການລະເວລາ ຊຶ່ງນັກປະຫວັດສາດແຕ່ລະກຸ່ມຕ່າງກໍມີເຫດຜົນຂອງໃຜລາວ. ສະເພາະປະຫວັດສາດລາວ ເຖິງແມ່ນວ່າ ຍັງບໍ່ທັນມີຄວາມເປັນເອກະພາບກັນໃນດ້ານການກຳນົດ ແຕ່ໂດຍທົ່ວໄປ ເພິ່ນໄດ້ກຳນົດການແບ່ງໄລຍະປະຫວັດສາດໄວ້ ດັ່ງນີ້:

- ສະໄໝບູຮານ

ເລີ່ມກຳນົດເອົາຕັ້ງແຕ່ປາກົດມີມະນຸດອາໄສໃນແຜ່ນດິນລາວຈົນຮອດປີ ຄສ 1353 ຊຶ່ງເປັນປີທີ່ພະເຈົ້າຟ້າງຸ່ມຂຶ້ນຄອງລາດທີ່ນະຄອນຊ່ຽງທອງ.

- ສະໄໝກາງ

ກຳນົດເອົາຕັ້ງແຕ່ ປີ ຄສ 1353 ຈົນຮອດ ປີ ຄສ 1893 ຄືເລີ່ມນັບເອົາແຕ່ບັນດາຫົວເມືອງລາວ ບູຮານຖືກເຕົ້າໂຮມເຂົ້າກັນ ເປັນອານາຈັກລາວລ້ານຊ້າງເອກະພາບ ຈົນຮອດປີທີ່ດິນແດນລາວຖືກຕັດແບ່ງອອກເປັນສອງສ່ວນ ລະຫວ່າງ ຈັກກະພັດຝຣັ່ງກັບສັກດິນາສະຫຍາມຄື ດິນແດນຝັ່ງຊ້າຍແມ່ນ້ຳຂອງຢູ່ພາຍໃຕ້ການປົກຄອງຂອງຝຣັ່ງ ແລະ ດິນແດນຝັ່ງຂວາຂຶ້ນກັບສັກດິນາສະຫຍາມ. ໃນນັ້ນ, ຍົກເວັ້ນສອງແຂວງ ຄື ແຂວງໄຊຍະບູລີ ແລະ ຈຳປາສັກທີ່ຂຶ້ນກັບລາວ ໃນປີ ຄສ 1904.

- ສະໄໝໃໝ່:

ກຳນົດນັບເອົາຕັ້ງແຕ່ປີ ຄສ 1893 ຄື ນັບເອົາແຕ່ປະເທດລາວເຮົາຕົກເປັນຫົວເມືອງຂຶ້ນຂອງຝຣັ່ງ ມາຈົນຮອດ ປີ ຄສ 1975 ຊຶ່ງເປັນປີທີ່ປະເທດລາວ ໄດ້ສຳເລັດໃນພາລະກິດການຕໍ່ສູ້ປົດປ່ອຍຊາດ ແລ້ວສະຖາປະນາປະເທດ ເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

- ສະໄໝປັດຈຸບັນ:

ກຳນົດເອົາຕັ້ງແຕ່ ປີ ຄສ 1975 ຊຶ່ງເປັນປີທີ່ລາວປ່ຽນຮູບແບບການປົກຄອງ ຈາກລາຊາທິປະໄຕ ມາເປັນສາທາລະນະລັດ ຈົນຮອດປັດຈຸບັນ.

1.1.1.5 ທີ່ມາ ແລະ ຄວາມໝາຍຂອງຄຳວ່າ ລາວ

ສຳລັບຄຳວ່າ "ລາວ" ນັ້ນມີນັກວິຊາການຫຼາຍທ່ານ ໄດ້ອະທິບາຍ ແລະ ໃຫ້ທັດສະນະໄວ້ແຕກຕ່າງກັນ ເຊັ່ນ:

1) ລາວ

ມີນັກວິຊາການຫຼາຍທ່ານ ໄດ້ໃຫ້ທີ່ມາຂອງຄຳວ່າ "ລາວ" ນັ້ນມາຈາກຄຳສັບໃນພາສາບາລີວ່າ "ລາວ" ທີ່ມີຄວາມໝາຍໃນພາສາລາວວ່າ "ໝາກນໍ້າເຕົ້າ". ການທີ່ຄຳວ່າ "ລາວ" ກ່ຽວຂ້ອງກັບໝາກນໍ້າເຕົ້ານີ້ ກໍເພາະວ່າ ນັກປາດບູຮານຂອງລາວໄດ້ເວົ້າວ່າ ຄົນລາວເກີດມາຈາກໝາກນໍ້າເຕົ້າປຸງ ຊຶ່ງເປັນນະໂຍບາຍທາງການເມືອງ ຂອງຂຸນບູລົມທີ່ມີຈຸດປະສົງ ເພື່ອໃຫ້ກຸ່ມຄົນໄຕລາວມີຄວາມສາມັກຄີຮັກແພງກັນ[2].

2) ລ໊ວະ ຫຼື ລະວ້າ

ຄຳວ່າ "ລາວ" ມາຈາກຄຳວ່າ "ລ໊ວະ ຫຼື ລະວ້າ" ຊຶ່ງເປັນຊື່ຂອງກຸ່ມຄົນພື້ນເມືອງເດີມທີ່ອາໄສຢູ່ດິນແດນແຫ່ງນີ້ມາກ່ອນ[3] ຕໍ່ມາເມື່ອຊົນຊາດອ້າຍລາວເຄື່ອນຍ້າຍເຂົ້າມາຢູ່ປະປົນກັບກຸ່ມຄົນພວກນີ້ ກໍຮຽກເອີ້ນຄົນພວກນີ້ວ່າ ລາວ.

3) ຫຼົ້ງ, ລີ, ລຸ໋ງ, ລວ໋ງ

ຄຳວ່າ " ລາວ" ມາຈາກຄຳວ່າ "ຫຼົ້ງ, ລີ, ລຸ໋ງ, ລວ໋ງ" ຕໍ່ມາໄດ້ປ່ຽນເປັນລາວ[4].

4) ດາວ

ນັກປາດບາງທ່ານມີຄວາມຄິດເຫັນວ່າຄຳວ່າ "ລາວ" ມາຈາກຄຳວ່າ "ດາວ" ທີ່ມີຄວາມໝາຍວ່າຈະເລີນ, ສູງ... ຊຶ່ງຄຳຄຳນີ້ ສັນນິຖານວ່າ ຄົນຈີນເປັນຜູ້ເອີ້ນຊື່ໃຫ້ຄົນກຸ່ມໜຶ່ງ ທີ່ດຳລົງຊີວິດໃນດິນແດນຈີນແຕ່ເນື່ອງຈາກວ່າຄົນຈີນຜັນສຽງຕົວ "ດ" ບໍ່ຊັດເຈນຈຶ່ງອອກເປັນສຽງຕົວ "ລ". ດັ່ງນັ້ນຄຳວ່າ "ອ້າຍດາວ" ຈຶ່ງກາຍເປັນ "ອ້າຍລາວ[5]"

ສະຫຼຸບແລ້ວ ເຖິງແມ່ນວ່າ ຈະມີນັກວິຊາການຫຼາຍທ່ານໃຫ້ທີ່ມາຂອງຄຳວ່າ "ລາວ" ໄວ້ໃນຫຼາຍໆ ເຫດຜົນກໍຕາມ ແຕ່ຫາກພິຈາລະນາດ້ວຍເຫດຜົນແລ້ວ ຄຳວ່າ "ລາວ" ນັ້ນຄົງມາຈາກຄວາມໝາຍທີ່ສະແດງເຖິງຄວາມເຄົາລົບນັບຖື ແລະ ຄຳຍົກຍ້ອງດ້ວຍເຫດ ແລະ ຜົນດັ່ງນີ້:

ກ. ພິຈາລະນາຈາກຕຳນານໄທ-ລາວ ແລ້ວ ຄຳວ່າ "ລາວ" ຈະມີຄວາມໝາຍໃນທາງຍົກຍ້ອງຢ່າງສູງສົ່ງເຖິງຜູ້ເປັນໃຫຍ່ ແລະ ມີຖິ່ນຖານຢູ່ບໍລິເວນສອງຟາກຝັ່ງແມ່ນໍ້າຂອງ ຄື ລາວ ແລະ ຕາເວັນອອກສຽງເໜືອຂອງໄທໃນປັດຈຸບັນນີ້ ເຊັ່ນ:

- ໃນຕຳນານ ສິງຫານຸວັດ (ສະບັບຂອງມານິດ ວັດລິໂພດົມ ທີ່ຄະນະກຳມະການຈັດພິມເອກະສານທາງປະຫວັດສາດ ສຳນັກນາຍົກລັດຖະມົນຕີ ປະເທດໄທ ພິມເຜີຍແຜ່ ໃນປີ ຄສ 1973) ໄດ້ບອກວ່າ ຫົວໜ້າຄົນພື້ນເມືອງທີ່ອາໄສຢູ່ໃນດິນແດນສອງຟາກຝັ່ງແມ່ນໍ້າຂອງທາງພາກເໜືອຂອງປະເທດລາວ ແລະ ໄທໃນປັດຈຸບັນນີ້ ມີຊື່ວ່າ"ລາວກະຍູ" ເມື່ອສິ້ນລາວກະຍູແລ້ວກໍແມ່ນ"ປູ່ເຈົ້າລາວຈົກ[6]" ສືບທອດເປັນຫົວໜ້າຄົນພື້ນເມືອງ.

- ຕຳນານເມືອງຊຽງໃໝ່ ແລະ ຕຳນານເມືອງພະເຍົາ ຕ່າງກໍໄດ້ກ່າວເຖິງຄຳວ່າ "ລາວ" ໂດຍສະເພາະ "ປູ່ເຈົ້າລາວຈົກ" ວ່າເປັນຕົ້ນຕະກຸນຂອງກຸ່ມຄົນລາວໃນພາກເໜືອແລ້ວສືບລູກຫຼານ ເຊັ່ນ: ຕຳນານຊຽງໃໝ່ ເລີ່ມຈາກປູ່ເຈົ້າລາວຈົກ, ລາວເກົ້າແກ້ວ ຈົນມາຮອດລາວເມັ່ງ ຊຶ່ງລູກຊາຍຂອງລາວເມັ່ງຄົນໜຶ່ງຊື່ວ່າ ມັງຮາຍ ໄດ້ສ້າງເມືອງຊຽງໃໝ່ຂຶ້ນ ແລ້ວເອີ້ນຕົນເອງວ່າ "ພະຍາມັງຮາຍ". ສ່ວນໃນຕຳນານພະເຍົານັ້ນ ກໍບອກວ່າ ປູ່ເຈົ້າລາວຈົກ ເປັນຕົ້ນຕະກຸນ ແລ້ວສືບລູກຫຼານ ຈາກລາວເກົ້າແກ້ວ

[2] ທີ່ມາ : ພົງສາວະດານລ້ານຊ້າງສະບັບຂຸນບູລົມລາຊາທິລາດ.
[3] ຕຳນານ ຊາດໄທ ຂອງພະຍາ ອະນຸມານ ຣາຊທົນ .
[4] ມະຫາສິລາ ວີຣະວົງ . ພົງສາວະດານລາວແຕ່ບູຮານເຖິງ 1946. ຫໍສະມຸດແຫ່ງຊາດ. 2001
[5] ຈົດໝາຍເຫດຂອງຈີນອ້າງໃນອູ່ຄຳພົມວົງສາ. ຄວາມເປັນມາຂອງຊາດລາວ. 1958: 7,8,9
[6] ເຫດຜົນທີ່ເອີ້ນຊື່ວ່າ "ປູ່ເຈົ້າລາວຈົກ" ກໍເພາະບຸກຄົນນີ້ເປັນຫົວໜ້າໃຫຍ່ມີ "ຈົກ" ຊຶ່ງຄົນຫົວໄປບໍ່ມີ ຈຶ່ງເອີ້ນວ່າ "ລາວຈົກ"

ຈົນມາຮອດຂຸນເງິນ ແລ້ວລູກຂຸນເງິນຊື່ວ່າ ຂຸນຈອມທຳ ໄດ້ໄປສ້າງຕັ້ງເມືອງພະເຍົາ ຈາກນັ້ນລູກຊາຍ ຂອງຂຸນຈອມທຳຊື່ວ່າ ຂຸນເຈືອງ ໄດ້ປົກຄອງສືບຕໍ່ມາ.

ຕຳນານຂອງລາວ ເອີ້ນ "ຂຸນເຈືອງ" ວ່າ ຕຳນານທ້າວຮຸ່ງທ້າວເຈືອງ ຊຶ່ງໄດ້ຂຽນໄວ້ຢ່າງຊັດເຈນ ໃນວັນນະຄະດີເອກຂອງລ້ານຊ້າງ. ແຕ່ຄຳນີ້ ໃນພາສາຂອງກຸ່ມຄົນໄຕລື້ສິບສອງພັນນາ ຂອງຈີນ ເອີ້ນ ວ່າ "ພະຍາເຈືງ" ແລະ ໃນຕຳນານຊຸງໃໝ່ເອີ້ນວ່າ "ລາວເຈືງ[7]" .

ດ້ວຍເຫດນັ້ນ, ທັງກຸ່ມຄົນທີ່ອາໄສຢູ່ໃນດິນແດນລ້ານນາ ແລະ ລ້ານຊ້າງ ຈຶ່ງໄດ້ຊື່ວ່າເປັນ "ຄົນລາວ" ຕາມຊື່ "ລາວເຈືອງ" ທີ່ສືບເນື່ອງມາຈາກຕະກຸນລາວ ຂອງປູ່ເຈົ້າລາວຈົກ ຄືດັ່ງປາກົດຢູ່ໃນ ພົງສາວະດານເມືອງເງິນຍາງ ຊຸງແສນ (ພົງສາວະດານ ເມືອງໂຍນົກ ສະບັບ ປີ 1964: 238) ວ່າ "ແຕ່ນັ້ນມາ ເມືອງຍອນລ້ານນາ ແລະ ເມືອງລ້ານຊ້າງ ທັງສອງເມືອງນີ້ຈຶ່ງເອີ້ນວ່າລາວ ".

ຂ. ພິຈາລະນາຈາກ "ຄຳສັບພະນາມ" ຊຶ່ງໃຊ້ເປັນຄຳຮຽກເອີ້ນ ບຸລຸດທີສາມ ໃນພາສາລາວ ຊຶ່ງມີທັງຄຳທີ່ສຸພາບ ແລະ ທຳມະດາ. ໃນນັ້ນ ຄຳວ່າ "ລາວ" ຊຶ່ງໃນປັດຈຸບັນ ກໍເປັນຄຳສັບພະນາມບຸລຸດ ທີສາມ ທີ່ສະແດງເຖິງຄວາມເຄົາລົບນັບຖື ໃນຖານະຄວາມຮັກແພງ ຊຶ່ງມີຄວາມໝາຍຄ້າຍຄືກັນກັບ ຄຳວ່າ "ທ່ານ" ເຊັ່ນ : "ລາວບອກວ່າມື້ອື່ນຈະມາ" ນີ້ກໍສະແດງວ່າ "ທ່ານບອກວ່າມື້ອື່ນທ່ານຈະມາ".

ດັ່ງນັ້ນ, ດ້ວຍເຫດທີ່ຄຳວ່າ "ລາວ" ໃນອະດີດມີຄວາມໝາຍສູງສົ່ງ ແລະ ມີຖານັນດອນເປັນ "ຜູ້ໃຫຍ່ ຫຼື ເຈົ້ານາຍ" ຊຶ່ງສະແດງອອກໃນທາງຍົກຍ້ອງ ແລະ ເຄົາລົບນັບຖື ເທົ່າທີ່ມີຮ່ອງຮອຍຫຼັກ ຖານປາກົດໃນຕຳນານນີ້ ຈຶ່ງເຮັດໃຫ້ກຸ່ມຄົນທີ່ດຳລົງຊີວິດໃນສອງຝັ່ງແມ່ນ້ຳຂອງ ໄດ້ນຳມາເປັນຊື່ຮຽກ ເອີ້ນຕົນເອງວ່າ "ລາວ" ກໍຄືຄົນລາວ ແລະ ກໍເອີ້ນປະເທດຕົນເອງໃນຕໍ່ມາວ່າ "ປະເທດລາວ" ຈົນມາ ຮອດປັດຈຸບັນ.

1.1.2 ແນວຄວາມຄິດກ່ຽວກັບຖິ່ນກຳເນີດຊາດລາວ

ຜົນການສຶກສາ ແລະ ຈາກການສຳຫຼວດເອກະສານຕ່າງໆ ຂອງນັກວິຊາການທີ່ຄົ້ນຄວ້າ ກ່ຽວກັບ ຖິ່ນກຳເນີດຂອງກຸ່ມຄົນລາວນັ້ນພົບວ່າມີຫຼາຍກະແສແນວຄິດທີ່ແຕກຕ່າງກັນ, ໂດຍພື້ນຖານ ມີ 4 ກະແສແນວຄິດໃຫຍ່ໆ ເຊັ່ນ:

1.1.2.1 ແນວຄວາມຄິດທີໜຶ່ງ: ແນວຄິດອານໄຕ

ນັກວິຊາການກຸ່ມນີ້ເຊື່ອວ່າ "ດິນແດນທີ່ເປັນບໍລິເວນປະເທດລາວໃນປັດຈຸບັນ ບໍ່ແມ່ນຖິ່ນຖານ ກຳເນີດຂອງກຸ່ມຄົນຕະກຸນໄຕລາວ. ຖິ່ນກຳເນີດຂອງກຸ່ມຄົນໄຕລາວຢູ່ດິນແດນບໍລິເວນສາຍພູອານໄຕ". ກຸ່ມຄົນນີ້ ໄດ້ສ້າງຕັ້ງອານາຈັກຂອງຕົນຂຶ້ນຊື່ວ່າ "ອານາຈັກນານເຈົ້າ" ຢູ່ຕາມລ່ອງແມ່ນ້ຳເຫຼືອງ, ແມ່ນ້ຳ ຢັ້ງຊີກຽງ ໂດຍມີນະຄອນລຸງ, ນະຄອນປາ ແລະ ນະຄອນງ້ຽວເປັນລາຊະທານີ. ຈາກນັ້ນ, ຈຶ່ງມີການ ອົບພະຍົບລົງມາທາງພາກໃຕ້ຂອງຈີນ ແລ້ວສ້າງອານາຈັກຂອງຕົນເອງຂຶ້ນຢູ່ໃນເຂດຢູນານ ເອີ້ນຊື່ວ່າ "ອານາຈັກນານເຈົ້າ". ຫຼັງຈາກນັ້ນຕໍ່ມາ ຈຶ່ງໄດ້ອົບພະຍົບເຂົ້າສູ່ດິນແດນລາວທາງພາກເໜືອ ເມື່ອ ປະມານສະຕະວັດທີ 6.

1.1.2.2 ແນວຄວາມຄິດທີສອງ: ແນວຄິດເສສວນ

ນັກວິຊາການກຸ່ມນີ້ ປະຕິເສດແນວຄິດອານໄຕ ແລະ ມີຄວາມເຊື່ອວ່າ "ດິນແດນບໍລິເວນ ມົນທົນເສສວນຂອງຈີນ ຄືຖິ່ນກຳເນີດຂອງກຸ່ມຄົນໄຕລາວ". ປະມານສະຕະວັດທີ 6 ກ່ອນ ຄສ ກຸ່ມຄົນ ດັ່ງກ່າວນີ້ ໄດ້ຖືກກຸ່ມຄົນຈີນຮຸກຮານແລ້ວອົບພະຍົບມາຢູ່ເຂດຢູນານທາງພາກໃຕ້ຂອງຈີນ ແລະ ແຈກ

[7] ສຸຈິດ ວົງເທດ . ເຈົ້າປົ້ນລາວ . ສິລະປະວັດທະນະທຳສະບັບພິເສດ. ເຮືອນແກ້ວການພິມ 1987 : 16-17

ຢາຍກັນຢູ່ຕາມທິດຕ່າງໆທາງຕອນໃຕ້ຂອງຈີນ ແລ້ວກະຈາຍເຂົ້າສູ່ອານາຈັກລ້ານຊ້າງ ແລະ ລ້ານນາ ໃນສະຕະວັດທີ 6.

1.1.2.3 ແນວຄວາມຄິດທີສາມ: ແນວຄິດຢູນານພາກໃຕ້ຂອງຈີນ

ນັກວິຊາການກຸ່ມນີ້ ປະຕິເສດແນວຄິດອານໄຕ ແລະ ເສສອນແຕ່ເຊື່ອວ່າ "ຖິ່ນກຳເນີດຂອງ ກຸ່ມຄົນໄຕລາວ ກະຈາຍຢູ່ທົ່ວໄປໃນດິນແດນບໍລິເວນຕອນໃຕ້ຂອງຈີນ ແລະ ທາງພາກເໜືອຂອງ ອາຊີຕາເວັນອອກສ່ຽງໃຕ້". ເຫດຜົນທີ່ພາໃຫ້ເກີດຄວາມເຊື່ອແບບນີ້ ກໍເພາະວ່າ ກຸ່ມຄົນໄຕເປັນກຸ່ມຄົນ ໃຫຍ່ມີຫຼາຍເຜົ່າຊົນ ທີ່ມີຄວາມສຳພັນທາງເຄືອຍາດທີ່ໃກ້ຊິດກັນ ໂດຍສະເພາະທາງດ້ານວັດທະນະທຳ, ພາສາ ແລະ ກະຈາຍຢູ່ທົ່ວໄປ ໂດຍມີສູນກາງຄື "ນ່ານເຈົ້າ". ຕໍ່ມາກຸ່ມຄົນດັ່ງກ່າວນີ້ໄດ້ຖືກກຸ່ມຄົນຈີນ ຮຸກຮານແລ້ວ ກໍອົບພະຍົບເຄື່ອນຍ້າຍເຂົ້າສູ່ດິນແດນບໍລິເວນທີ່ເປັນປະເທດລາວ ປະມານສະຕະວັດທີ 8 ຫຼັງຈາກທີ່ອານາຈັກໜ່ຽງແສ ຫຼື ນ່ານເຈົ້າຂອງເຂົາເຈົ້າຖືກແຕກມ້ວງ.

1.1.2.4 ແນວຄວາມຄິດທີສີ່: ແນວຄິດອິນດູຈີນ ຫຼື ສຸວັນນະພູມ

ແນວຄິດທີສີ່ນີ້ ເປັນແນວຄິດທີ່ເກີດມາຈາກການບໍ່ຍອມຮັບເອົາແນວຄິດນ່ານເຈົ້າວ່າເປັນ ອານາຈັກດັ່ງເດີມຂອງກຸ່ມຄົນໄຕ. ນັກວິຊາການກຸ່ມນີ້ເຊື່ອວ່າ "ຕະກຸນເຜົ່າໄຕລາວມີຖິ່ນກຳເນີດ ແລະ ວິ ວັດທະນາການຢູ່ເທິງດິນແດນລ່ອງແມ່ນ້ຳຂອງ ບໍລິເວນທີ່ເປັນດິນແດນປະເທດລາວ-ໄທໃນປັດຈຸບັນ". ເຫດຜົນຂອງຄວາມເຊື່ອນີ້ມາຈາກ:

- ການຄົ້ນພົບວັດຖຸບູຮານ ແລະ ຊາກກະດູກມະນຸດບູຮານໃນດິນແດນ ທີ່ເປັນປະເທດລາວ ປັດຈຸບັນ ຊຶ່ງການພົບຊາກສິ່ງດັ່ງກ່າວເຊື່ອວ່າ ອາດຈະເປັນບັນພະບຸລຸດຂອງຄົນລາວໃນປັດຈຸບັນກໍໄດ້.
- ປັດໄຈທີສອງ ຄື ກຸ່ມຄົນດັ່ງກ່າວນີ້ ເປັນກຸ່ມຄົນທີ່ມີຈຳນວນປະຊາກອນຫຼາຍ ແລະ ປະກອບ ໄປດ້ວຍຫຼາຍເຜົ່າ ທີ່ກະຈາຍກັນຕັ້ງຖິ່ນຖານຕາມສະຖານທີ່ແຕກຕ່າງກັນ ໄປຕາມຄວາມເໝາະສົມ.

ສະຫຼຸບລວມແລ້ວ, ຄວາມເປັນມາ ແລະ ຖິ່ນກຳເນີດຂອງຊາດລາວ ຫາກພິຈາລະນາ ຈາກ ຫຼັກຖານ ແລະ ເຫດຜົນແລ້ວຖິ່ນກຳເນີດ ຂອງກຸ່ມຄົນລາວ ໜ້າຈະຍອມຮັບກັນວ່າ ກະຈາຍຢູ່ທົ່ວໄປ ໃນດິນແດນບໍລິເວນຕອນໃຕ້ຂອງຈີນ, ທາງພາກເໜືອຂອງອາຊີຕາເວັນອອກສ່ຽງໃຕ້ ແລະ ບໍລິເວນ ດິນແດນທີ່ເປັນປະເທດລາວ, ປະເທດໄທໃນປັດຈຸບັນ. ບັນດາກຸ່ມຄົນທີ່ຕັ້ງຖິ່ນຖານຢູ່ແຜ່ນດິນລາວ ປັດຈຸບັນ ແມ່ນມີຫຼາຍຊົນເຜົ່າປະສົມປະສານເຂົ້າກັນທັງກຳເນີດຢູ່ທີ່ນີ້ເອງ ແລະ ເຄື່ອນຍ້າຍໄປມາໃນ ຂົງເຂດໃກ້ຄຽງທາງຕອນໃຕ້ຂອງຈີນ ຮວມເຂົ້າກັນເປັນຊົນເຜົ່າພື້ນເມືອງຢູ່ຂົງເຂດນີ້ ຊຶ່ງປະກອບມີ ລະວ້າ, ຂອມ, ມອນ ແລະ ໄທລາວ. ຈາກນັ້ນ ກໍໄດ້ສຳພັນ ແລະ ພ້ອມພາກັນສ້າງເປັນອານາຈັກເມືອງ ຫຼື ນະຄອນລັດຂອງຕົນເອງຂຶ້ນຄົງຕໍ່ມາເປັນປະເທດລາວ ແລະ ຄົນລາວບັນດາເຜົ່າໃນປັດຈຸບັນ.

1.1.3 ຮ່ອງຮອຍຫຼັກຖານທາງບູຮານຄະດີໃນລາວ

ຜົນການຄົ້ນຄວ້າຂອງນັກປະຫວັດສາດ ແລະ ນັກບູຮານຄະດີຫຼາຍທ່ານໄດ້ຢັ້ງຢືນໃຫ້ຮູ້ວ່າ ບໍລິເວນດິນແດນທີ່ເປັນປະເທດລາວໃນປັດຈຸບັນນີ້ ມີມະນຸດອາໄສຢູ່ມາແຕ່ດຶກດຳບັນ ແລະ ມີພັດທະນາ ການຢ່າງເປັນລະບົບຕໍ່ເນື່ອງມາຕັ້ງແຕ່ຍຸກຫີນເກົ່າ, ຫີນກາງ, ຫີນໃໝ່ ແລະ ຍຸກໂລຫະ ເຊັ່ນ:

1.1.3.1 ຍຸກຫີນ


ກ. ຍຸກຫີນເກົ່າ (Palaeolithic)

ຍຸກຫີນເກົ່າໃນລາວຄາດວ່າ ມີອາຍຸແຕ່ 500.000 ຫາ 10.000 ປີ ກ່ອນ ຄສ. ມະນຸດໃນຍຸກນີ້ ດຳເນີນຊີວິດດ້ວຍການເກັບເດັດ-ລ່າສັດ ຕາມທຳມະຊາດເປັນອາຫານ ແລະ ມີການເຄື່ອນທີ່ໄປຕາມ ເຂດທຳມາຫາກິນເພື່ອການມີຊີວິດຢູ່ລອດ. ທີ່ພັກພາອາໄສ ແມ່ນຖ້ຳ, ເງີບຜາຫີນ ແລະ ໂກນໄມ້ມີການ


ນຳໃຊ້ເຄື່ອງມືຫີນແບບງ່າຍໆ. ໃນລາວເຮົາ ເພິ່ນໄດ້ຄົ້ນພົບຮ່ອງຮອຍສະໄໝຫີນເກົ່າ ໃນຫຼາຍແຫ່ງ ເຊັ່ນ: ຫົວພັນ, ຊຽງຂວາງ, ຫຼວງພະບາງ, ວຽງຈັນ ແລະ ຄຳມ່ວນ. ໃນນັ້ນ, ເດັ່ນແມ່ນການຄົ້ນພົບແຂ້ວ ບ້ຽກະດູກຂະໜັບຊ້າຍຂອງຄົນບູຮານ ຢູ່ຖ້ຳຜາເລີຍຍອດນ້ຳຄານ ມີອາຍຸຢູ່ໃນລະຫວ່າງ 500.000 - 40.000 ກ່ອນ ຄສ 8, ມະນຸດຖ້ຳຜາລີງ ເມືອງວຽງທອງ ແຂວງຫົວພັນ ມີອາຍຸ 61.589 ປີ ກ່ອນ ຄສ ແລະ ມະນຸດຖ້ຳຮາງເມືອງວຽງທອງ ແຂວງຫົວພັນ ທີ່ຄົ້ນພົບ ໃນປີ ຄສ 1934 ມີອາຍຸ 22.000 ປີ ກ່ອນ ຄສ.



ຮູບທີ 4: ກະໂຫຼກຫົວມະນຸດຖ້ຳຜາລີງ



ຮູບທີ 5: ກະໂຫຼກຫົວມະນຸດຖ້ຳຮາງ



ຮູບທີ 6: ເຄື່ອງມືຫີນຫຍາບ ພົບທີ່ຖ້ຳວັງຕາແຫຼວ ແລະ ພູຜ້ຳຂາວ
ແຫຼ່ງທີ່ມາ: ພາກວິຊາປະຫວັດສາດ-ບູຮານວິທະຍາ ມຊ


ຂ. ຍຸກຫີນກາງ (Mesolithic)

ຍຸກຫີນກາງໃນລາວຄາດວ່າ ມີອາຍຸຢູ່ລະຫວ່າງ 10.000 -8000 ກ່ອນຄສ ຊຶ່ງເປັນຍຸກເຊື່ອມຕໍ່ ລະຫວ່າງ ຍຸກຫີນເກົ່າກັບຍຸກຫີນໃໝ່. ການດຳລົງຊີວິດຍັງອາໄສທຳມະຊາດເປັນຕົ້ນຕໍ ໂດຍສະເພາະ ອາຫານການກິນ ແລະ ທີ່ພັກພາອາໄສ. ຍຸກນີ້ເປັນຍຸກທີ່ມະນຸດເຮົາ ເລີ່ມມີແນວຄິດຂັ້ນຕົ້ນຂອງການ ກະສິກຳກຳເນີດ. ມະນຸດໃນຍຸກນີ້ຮູ້ຈັກປະດິດເຄື່ອງມືຫີນດ້ວຍການໃສ່ດ້າມ ແລະ ນຳໃຊ້ເຂົ້າສັດ ເປັນອາວຸດ. ຮ່ອງຮອຍມະນຸດບູຮານຍຸກຫີນກາງ ໄດ້ຖືກຄົ້ນພົບຢູ່ໃນຫຼາຍບ່ອນໃນດິນແດນລາວ ປະຈຸບັນ ເຊັ່ນ: ເພິ່ນໄດ້ຄົ້ນພົບຮ່ອງຮອຍໂຄງກະດູກ ແລະ ເຄື່ອງມືຫີນຕ່ອຍ[9] ທີ່ຖ້ຳດິນບ້ານວັງ ເມືອງ ຊະນະຄາມ, ເຄື່ອງມືຫີນຕ່ອຍ[10] ຖ້ຳຜາຮອມເມືອງວັງວຽງ.

8 ສຸເນດ ໄພທິສານ ແລະ ໜູໄຊ ພູມມະຈັນ. ປະຫວັດສາດລາວດຶກດຳບັນ . ໂຮງພິມແຫ່ງລັດ 2000 : 4-5
9 ອາດມີອາຍຸລະຫວ່າງ 9000 - 20.000 ປີ
10 ມະນຸດອາໄສຢູ່ທີ່ນີ້ ບໍ່ຕ່ຳກວ່າ 10.000 ປີ

ຄ. ຍຸກຫີນໃໝ່ (Neolithic)

ຍຸກຫີນໃໝ່ໃນລາວ ນັກວິຊາການໄດ້ຄາດກະວ່າ ມີອາຍຸຢູ່ລະຫວ່າງ 8000 ປີກ່ອນ ຄສ 4000 ໂດຍປະມານ. ຍຸກຫີນໃໝ່ ເປັນຍຸກທີ່ມະນຸດປ່ຽນວິຖີຊີວິດ ຈາກການດຳລົງຊີວິດແບບເຄື່ອນທີ່ ມາເປັນແບບຄົງທີ່, ເປັນຍຸກທີ່ມະນຸດປ່ຽນຈາກການເກັບເດັດລ່າສັດ ມາເປັນການກະສິກຳ ຄື ປູກຝັ່ງ ແລະ ລ້ຽງສັດ. ໃນຍຸກນີ້ເທັກນິກ ຫຼື ກຳມະວິທີໃນການປະດິດເຄື່ອງມືຫີນ ມີການປ່ຽນແປງໃຫ້ມີລັກສະນະຄ່ອງແຄ້ວ, ປານີດມີຄວາມສະດວກໃນການນຳໃຊ້ ຊຶ່ງນັກບູຮານຄະດີເອີ້ນວ່າ "ເຄື່ອງມືຫີນຝົນ ຫຼື ຫີນຂັດ" ເອກະລັກຂອງເຄື່ອງມືຫີນໃນຍຸກນີ້ ຄື ຂວານຫີນພາດບ່າ. ຮ່ອງຮອຍຍຸກຫີນໃໝ່ທີ່ຄົ້ນພົບໃນລາວ ໄດ້ແກ່: ໂຄງກະດູກມະນຸດ, ເຄື່ອງມືຫີນຝົນ ແລະ ເປືອກຫອຍທະເລທີ່ຖ້ຳມະຫາໄຊ ແຂວງຄຳມ່ວນ ຊຶ່ງມີອາຍຸຢ່າງນ້ອຍ 6000 ປີ.



ຮູບທີ 7 : ຂວານຫີນ ພົບທີ່ແຂວງຫຼວງພຣະບາງ

1.1.3.2 ຍຸກໂລຫະ

ອີງໃສ່ຫຼັກຖານທີ່ພົບ ນັກວິຊາການໄດ້ຄາດຄະເນວ່າ ຍຸກໂລຫະໃນລາວມີອາຍຸຢູ່ລະຫວ່າງ ປະມານ 4000 ປີກ່ອນ ຄສ ຫາ 500 ປີກ່ອນ ຄສ. ຫຼັກຖານທີ່ບົ່ງບອກເຖິງພັດທະນາການຂອງມະນຸດຍຸກໂລຫະ ໃນປະເທດລາວນັ້ນປັດໄຈທີ່ສຳຄັນ ຄື ການມີແຫ່ງໂລຫະ ແລະ ການຄົ້ນພົບເຕົາ ຫຼື ເບົ້າຫຼອມໂລຫະ. ນັກວິຊາການເຊື່ອກັນວ່າ ໂລຫະປະເພດທຳອິດທີ່ມະນຸດນຳມາໃຊ້ໃນລາວເຮົາ ກໍຄົງຈະແມ່ນທອງແດງ, ກົ່ວ, ຊີນ, ເງິນ ຊຶ່ງເປັນສ່ວນປະສົມທອງສຳລິດ. ຮ່ອງຮອຍການນຳໃຊ້ໂລຫະໄດ້ຖືກຄົ້ນພົບຫຼາຍແຫ່ງ ໃນດິນແດນລາວປັດຈຸບັນ ເຊັ່ນ:


ແຂວງຫຼວງພະບາງ: ທີ່ຖ້ຳຫົວໝູ ເມືອງຈອມເພັດ ເພິ່ນໄດ້ພົບເຄື່ອງທອງສຳລິດ ເຊັ່ນ: ໂອທອງ, ກະດິ່ງ, ປອກແຂນ ແລະ ເຄື່ອງໃຊ້ທີ່ເຮັດດ້ວຍເຫຼັກມີໃບຫອກ, ກ່ຽວ, ມີດ ແລະ ອື່ນໆ. ຖ້ຳນາງອັ້ນ ຢູ່ບ້ານສົມ ເມືອງຈອມເພັດ ເພິ່ນໄດ້ຄົ້ນພົບພາຊະນະເຄື່ອງໃຊ້ທີ່ເຮັດດ້ວຍໂລຫະ ເຊັ່ນ: ຂວານທອງແດງ, ຂວານທອງເຫຼືອງ, ຄ້ອງບ້າງ ແລະ ສິ່ງເອ້ຍ້ອງອື່ນໆ ເພິ່ນສັນນິຖານວ່າມີອາຍຸຢູ່ລະຫວ່າງ 1000 ຫາ 500 ປີ ກ່ອນ ຄສ.

ແຂວງຄຳມ່ວນ: ເຂດລ່ອງແມ່ນ້ຳເທີນ ເພິ່ນໄດ້ຄົ້ນພົບຮ່ອງຮອຍບູຮານວັດຖຸຍຸກໂລຫະ ເຊັ່ນ: ຄົກຫີນ, ແກ່ວຫີນຕ່ຳ ແລະ ກົ້ງລໍ້ຫີນທີ່ສັນນິຖານວ່າ ສ້າງຂຶ້ນໃນຍຸກທອງ ແລະ ຍຸກເຫຼັກ.

ນະຄອນຫຼວງ: ທີ່ເລົ່າປ່າໂກ, ເມືອງໄຊທານີ ເພີ່ນໄດ້ຄົ້ນພົບວັດຖຸບູຮານ, ເຄື່ອງມືເຄື່ອງໃຊ້ທີ່ເຮັດດ້ວຍໂລຫະ ໂດຍສະເພາະທອງສຳລິດ ເຊັ່ນ: ຄ້ອງບ້າງສຳລິດ, ຂວານ, ຫອກ, ຫົວລູກສອນ, ຂັນ, ໂອ ແລະ ເຄື່ອງປະດັບ. ເລົ່າປ່າໂກນີ້ ສັນນິຖານວ່າ ເປັນສຸສານຄົນບູຮານທີ່ມີອາຍຸຢູ່ໃນຍຸກໂລຫະທີ່ຂະຫຍາຍຕົວແລ້ວ.


ນອກຈາກເຄື່ອງປະດິດທີ່ເຮັດຈາກໂລຫະແລ້ວ ຫຼັກຖານສຳຄັນທີ່ເປັນຮ່ອງຮອຍໃນຍຸກໂລຫະຂອງລາວ ຄື ການປະດິດເຄື່ອງຫີນຂະໜາດໃຫຍ່ ໂດຍສະເພາະ ໄດ້ມີການນຳເອົາແທ່ງຫີນຂະໜາດໃຫຍ່ມາສ້າງເປັນ "ອະນຸສາວະລີຫີນ" (Megalithic Monument) ຫຼື "ອະນຸສອນສະຖານ" ຫຼື ເພື່ອຜົນປະໂຫຍດ ທາງພິທີກຳຄວາມເຊື່ອຖື ຫຼື ໃຊ້ເພື່ອກິດຈະກຳອື່ນໆ. ຫຼັກຖານສະໄໝຫີນໃຫຍ່ ທີ່ພົບໃນລາວ ໄດ້ແກ່:

- ຫີນຕັ້ງ (Menhir) ທີ່ພົບໃນແຂວງຫົວພັນ ຊຶ່ງມີກະຈາຍຢູ່ທົ່ວໄປໃນຫຼາຍບ່ອນ ເຊັ່ນ: ເມືອງຫົວເມືອງ, ເມືອງຊຳໃຕ້ ແລະ ເມືອງ ວຽງໄຊ[11].



ຮູບທີ 8 : ເສົາຫີນຕັ້ງ ບ້ານປ່າຈ້າ ເມືອງຫົວເມືອງ ແຂວງຫົວພັນ
ແຫຼ່ງທີ່ມາ: ຖ່າຍພາບ (ມິນາ ປີ ຄສ 2013)

- ຫີນຕັ້ງ (Stone henge) ແລະ (Alignement) ທີ່ພົບຢູ່ໃນເຂດພູຈອມສີ ເມືອງນາແລ ແຂວງ ຫຼວງນ້ຳທາ.



ຮູບທີ 9 : ເສົາຫີນຕັ້ງ ພູຈອມສີ ບ້ານຈອມສີ ເມືອງນາແລ ແຂວງຫຼວງນ້ຳທາ
ແຫຼ່ງທີ່ມາ: ຖ່າຍພາບ (ກຸມພາ 2008)

[11] ເມືອງຊຳໃຕ້: ມີຢູ່ພູແກ ແລະ ເມືອງວຽງໄຊພົບເຫັນໃນເຂດພູຂຽວ

- ຕັ່ງຫີນ: ທີ່ພົບເທິງພູເຂົ້າລີບ,ບ້ານຫ້ວຍຄີງ ແລະ ສົບແອກເມືອງປາກແຊງ ແຂວງ ຫຼວງພະບາງ ຊຶ່ງປະຊາຊົນທ້ອງຖິ່ນເອີ້ນວ່າ "ຕັ່ງເຈືອງ".







ຮູບທີ 10: ຕັ່ງຫີນ ບ້ານສົບແອກເມືອງປາກແຊງ ແຂວງຫຼວງພະບາງ

ແຫຼ່ງທີ່ມາ: ຖ່າຍພາບ (ກຸມພາ 2008)

- ໄຫຫີນ (Stone Jar) ແຂວງຊຽງຂວາງ ເປັນກຸ່ມໄຫຫີນຂະໜາດໃຫຍ່ ທີ່ກະຈາຍຢູ່ທົ່ວໄປໃນ ຫຼາຍແຫ່ງ ຊຶ່ງມາຮອດ ປີ ຄສ 2013 ເພິ່ນໄດ້ຄົ້ນພົບເຖິງ 85 ແຫ່ງ ແລະ ໄດ້ຜ່ານການສຳຫຼວດດ້ວຍ ການຂຶ້ນທະບຽນ ພ້ອມທັງບັນທຶກພາບໄວ້ແລ້ວ 58 ແຫ່ງ. ແຕ່ວ່າທາງການ ໄດ້ນຳໃຊ້ເປີດໃຫ້ຜູ້ຄົນໄດ້ ເຂົ້າໄປທ່ຽວຊົມ 3 ແຫ່ງ. ເທົ່າທີ່ສຳຫຼວດມາ ເພິ່ນພົບເຫັນວ່າກຸ່ມທີ່ມີຫຼາຍກ່ວາໝູ່ ແມ່ນຢູ່ບ້ານສ່ວຍ ຄືມີ ເຖິງ 200 ໜ່ວຍ, ໜ່ວຍໃຫຍ່ທີ່ສຸດມີນ້ຳໜັກ 15 ໂຕນ,ເສັ້ນຜ່າໃຈກາງແທກໄດ້ 3 ແມັດ, ສູງ 3.25 ແມັດ ສາມາດບັນຈຸຄົນໄດ້ 6 ຄົນ. ໄປຄຽງຂ້າງກັບໄຫຫີນ ເພິ່ນຍັງພົບແຜ່ນຫີນ ທີ່ແກະສະລັກເປັນຮູບຄົນ ຫຼື ສັດ ແລະ ພົບພາຊະນະວັດສະດຸເຄື່ອງໃຊ້ ທີ່ເຮັດດ້ວຍໂລຫະ ເຊັ່ນ: ປອກແຂນທອງສຳລິດ, ມີດ, ພ້າ, ລູກໜາກປັດ, ເຄື່ອງປັ້ນດິນເຜົາ ແລະ ອື່ນໆ.



ຮູບທີ 11: ໄຫຫີນທົ່ງ 1



ຮູບທີ 12 : ໄຫຫີນທົ່ງ 2

ແຫຼ່ງທີ່ມາ: ຖ່າຍພາບ (ກຸມພາ 2015)



ຮູບທີ 13: ຝາປົກໄຫຫີນ ທີ່ມີການຄວັດຮູບ
ແຫຼ່ງທີ່ມາ: ກອງບູຮານ ກົມມໍລະດົກ (2013)

ນັກປະຫວັດສາດ ແລະ ນັກບູຮານຄະດີໄດ້ຈັດກຸ່ມ ຫີນຕັ້ງ,ໄຫຫີນ ຫຼື ກຸ່ມແທ່ງຫີນເຫຼົ່ານີ້ ເຂົ້າໃນ "ວັດທະນະທຳຫີນໃຫຍ່" ຫຼື ເອີ້ນວ່າ "ຍຸກຫີນໃຫຍ່ (Megalithic)" ທີ່ມີອາຍຸໃນຍຸກທອງສຳລິດ ແລະ ຍຸກເຫຼັກປະມານ 2000 – 400 ປີ ກ່ອນ ຄສ [12].

1.1.4 ນະຄອນລັດລາວບູຮານ

ສະໄໝນະຄອນລັດຂອງລາວ ເປັນສະໄໝທີ່ສັງຄົມຂອງລາວ ນອນຢູ່ໃນສະໄໝບູຮານ ຊຶ່ງ ນັກປະຫວັດສາດກຳນົດເອົາແຕ່ເລີ່ມປາກົດມີມະນຸດອາໄສຢູ່ໃນດິນແດນລາວມາຈົນຮອດ ປີ ຄສ 1353 ຊຶ່ງເປັນຊ່ວງທີ່ບັນດາກຸ່ມຄົນຊົນເຜົ່າຕ່າງໆ ອັນປະກອບມີລະວ້າ, ຂອມ, ມອນ ແລະ ໄຕລາວທີ່ອາໄສ ຢູ່ຮ່ວມກັນໃນຜືນແຜ່ນດິນຕອນນີ້ ໄດ້ສຳພັນກັນເຂົ້າ ແລະ ພ້ອມພາກັນສ້າງເປັນອານາຈັກເມືອງ ຫຼື ນະຄອນລັດຂອງຕົນເອງຂຶ້ນ.

ຂະບວນວິວັດແຫ່ງການຕັ້ງຖິ່ນຖານເປັນເມືອງ, ນະຄອນລັດ ຫຼື ອານາຈັກຂອງຄົນລາວນັ້ນ ມີຄວາມເປັນມາຍາວນານ, ລະອຽດລະອ້ຽວ ແລະ ສະລັບສັບຊ້ອນເພາະຄຳວ່າ "ເມືອງ" ນັ້ນມີການຮຽກ ຊື່ເອີ້ນແຕກຕ່າງກັນໄປ ເຊັ່ນ: ວຽງ, ຊຽງ, ນະຄອນ, ແຄວ້ນ ແລະ ອານາຈັກ. ອານາຈັກເມືອງບູຮານ ຂອງຊົນເຜົ່າລາວນັ້ນ ມີຫຼາຍເມືອງທີ່ກະຈາຍກັນຢູ່ທົ່ວໄປເທິງດິນແດນບໍລິເວນສອງຟາກຝັ່ງແມ່ນ້ຳຂອງ ແລະ ສາຂາຂອງມັນ. ແຕ່ລະເມືອງມີການປົກຄອງ ເປັນອິດສະຫຼະພໍໃຜລາວ ຄ້າຍຄືກັນກັບລັດໜຶ່ງ ຊຶ່ງປະກອບມີ ບັນດາຫົວເມືອງລາວບູຮານທີ່ສຳຄັນ ດັ່ງນີ້: ເມືອງລຸງ, ເມືອງປາ, ເມືອງງ້ວຍ, ເມືອງ ໜອງແສ, ເມືອງຊຽງແສນ, ເມືອງແຖນ, ເມືອງສຸວັນນະໂຄມຄຳ, ເມືອງຊວາ, ເມືອງພວນ, ເມືອງ ສີໂຄດຕະບອງ, ເມືອງວຽງຈັນ, ເມືອງຈຳປາກະຕອນ, ເມືອງຮ້ອຍເອັດ ແລະ ເມືອງອື່ນໆ ເປັນຕົ້ນ. ຢ່າງໃດກໍຕາມ, ເພື່ອໃຫ້ເຫັນພັດທະນາການ ຂອງບັນດານະຄອນລັດບູຮານຂອງຄົນລາວ ຈຶ່ງຂໍ ນຳສະເໜີໃຫ້ເຫັນໃນ 2 ທັດສະນະໃຫຍ່ດັ່ງນີ້:

1.1.4.1 ການສ້າງຕັ້ງນະຄອນລັດນອກດິນແດນລາວໃນປັດຈຸບັນ

ມີນັກປະຫວັດສາດຫຼາຍທ່ານ ບອກໃຫ້ຮູ້ວ່າ ໃນສະໄໝບູຮານກຸ່ມຄົນໄຕລາວ ໄດ້ກະຈາຍກັນ ຕັ້ງຖິ່ນຖານຢູ່ທົ່ວໄປໃນພາກໃຕ້ຂອງຈີນ, ແລ້ວກຸ່ມຄົນດັ່ງກ່າວ ໄດ້ສຳພັນກັນເຂົ້າສ້າງຕັ້ງນະຄອນລັດ ຂອງຕົນຂຶ້ນຕາມຈຸດຕ່າງໆ ຕັ້ງແຕ່ເຂດຍູນນານຂຶ້ນໄປຈົນຮອດເສສວນ ມາຕັ້ງແຕ່ຍຸກກ່ອນຄຣິດຕະ ສັກກະລາດ, ກ່ອນຈະມີການເຄື່ອນຍ້າຍເຂົ້າມາສົມທົບກັບກຸ່ມຄົນລາວ ທີ່ອາໄສຢູ່ໃນດິນແດນ ທີ່ເປັນ ປະເທດລາວໃນລະຫວ່າງສະຕະວັດທີ 8 ຊຶ່ງປາກົດ ມີດັ່ງນີ້:

[12] ບຸນເຮືອງ ບົວສີແສງປະເສີດ 1991:41 ແລະ ທອງສາ ໄຊຍະວົງຄຳດີ 1996: 14 -15

1) ອານາຈັກອ້າຍລາວ

ນັກປະຫວັດສາດຫຼາຍທ່ານ ຍັ້ງຍືນວ່າ ກຸ່ມຄົນໄຕລາວບູຮານຈຳນວນໜຶ່ງ ໄດ້ພາກັນສ້າງຕັ້ງຖິ່ນຖານຂອງຕົນເອງຂຶ້ນຢູ່ໃນບໍລິເວນດິນແດນຂອງປະເທດຈີນ ຊຶ່ງເວລານັ້ນຄົນຈີນເອີ້ນຄົນກຸ່ມນີ້ວ່າ "ອ້າຍລາວ". ກຸ່ມຄົນອ້າຍລາວນີ້ ໄດ້ສ້າງຕັ້ງນະຄອນລັດຂອງຕົນເອງຂຶ້ນໃນລະຫວ່າງ 1500 -1000 ປີ ກ່ອນ ຄສ ຊຶ່ງຮວມມີ 4 ເມືອງ ຄື:

ກ. ນະຄອນລຸງ

ນະຄອນລຸງ ມີທີ່ຕັ້ງຢູ່ໃນເຂດຕອນຕົ້ນຂອງແມ່ນ້ຳຮວາງໂຫດ້ານເໜືອຄົນຈີນ ເອີ້ນວ່າ: ລຸງເຈົ້າ. ນະຄອນລັດນີ້ ມີປະຊາກອນບໍ່ຫຼວງຫຼາຍປານໃດ.

ຂ. ນະຄອນປາ

ນະຄອນປາ ມີທີ່ຕັ້ງຢູ່ທາງຕອນໃຕ້ຂອງແມ່ນ້ຳຮວງໂຫ ບໍລິເວນມົນທົນເສສວນໃນປັດຈຸບັນ. ນະຄອນປານີ້ ຄົນຈີນເອີ້ນວ່າ: ຈຸງກິງ.

ຄ. ນະຄອນງ້ຶວ

ນະຄອນງ້ຶວ ມີທີ່ຕັ້ງຢູ່ໃນເຂດຕອນກາງຂອງແມ່ນ້ຳຢັ້ງຊີກຽງ ຊຶ່ງຄົນຈີນ ເອີ້ນວ່າ: ຈາງຊາ. ບັນດາເມືອງເຫົ່ານີ້ ມີການປົກຄອງເປັນເອກະລາດພໍໃຜລາວ. ມາຮອດ ປີ 843 ກ່ອນ ຄສ ພວກສັກດິນາຈີນ ໄດ້ເຂົ້າຍຶດເອົາເມືອງລຸງເຮັດໃຫ້ກຸ່ມຄົນອ້າຍລາວ ສ່ວນຫຼາຍພ້ອມພາກັນອົບພະຍົບລົງທາງໃຕ້ ແລະ ເຂົ້າໄປອາໄສຢູ່ເມືອງປາ ຊຶ່ງເປັນເມືອງໃຫຍ່ກວ່າໝູ່ໃນຈຳນວນ 3 ເມືອງຂອງອ້າຍລາວ. ຮອດ ປີ 338 ກ່ອນ ຄສ ພວກສັກດິນາຈີນ ກໍສືບຕໍ່ຮຸກຮານອານາຈັກເມືອງຂອງຄົນອ້າຍລາວອີກ ແຕ່ກໍຖືກກຸ່ມຄົນອ້າຍລາວ ດຳເນີນການຕໍ່ຕ້ານຄືນຢ່າງແຂງແຮງ ແຕ່ຕ້ານທານບໍ່ໄຫວ. ສຸດທ້າຍ ກໍຖືກຈີນຍຶດຄອງ. ຫຼັງຈາກນັ້ນກຸ່ມຄົນອ້າຍລາວ ຈຶ່ງປະຖິ້ມເມືອງປາ ເດີນທາງລົງມາທາງໃຕ້. ຕໍ່ມາໃນ ປີ 221 ກ່ອນ ຄສ ພວກຈີນ[13] ກໍສືບຕໍ່ຮຸກຮານອານາຈັກເມືອງຂອງຄົນລາວອີກ ແລະ ສາມາດບຸງດຍຶດເອົາເມືອງງ້ຶວ ຂອງອ້າຍລາວໄດ້ ໃນປີ 215 ກ່ອນ ຄສ.

ງ. ນະຄອນເພງ້ວຍ

ຫຼັງຈາກສູນເສຍເມືອງໃຫ້ກັບສັກດິນາຈີນແລ້ວ, ບັນດາກຸ່ມຄົນອ້າຍລາວ ກໍສືບຕໍ່ໜີລົງມາທາງໃຕ້ ໄດ້ທ້ອນໂຮມກັນເຂົ້າສ້າງຕັ້ງເມືອງຂອງຕົນຂຶ້ນເມື່ອ ປີ 200 ກ່ອນ ຄສ ຢູ່ບໍລິເວນມົນທົນເສສວນ ແລະ ຮຸນນຳຂອງປະເທດຈີນໃນປັດຈຸບັນຊື່ວ່າ "ນະຄອນເພງ້ວຍ", ມີຂຸນເມັງ ຫຼື ຂຸນເມືອງ ເປັນກະສັດ[14]. ຊາວລາວເມືອງເພງ້ວຍ ໄດ້ດຳລົງຊີວິດຢູ່ໃນຄວາມສະຫງົບມາຈົນຮອດ ປີ 90 ກ່ອນ ຄສ ນະຄອນເພງ້ວຍ ຈຶ່ງໄດ້ຖືກກອງທັບສັກດິນາຈີນມາບຸກໂຈມຕີອີກຄັ້ງ.ຊາວລາວແຫ່ງນະຄອນເພງ້ວຍ ໄດ້ດຳເນີນການຕໍ່ສູ້ຕ້ານກັບການບຸງດຍຶດຂອງກອງທະຫານຈີນນານເຖິງ 3 ປີ ຈຶ່ງເສຍໄຊ. ຈາກນັ້ນ, ນະຄອນເພງ້ວຍ ໄດ້ຕົກຢູ່ໃນອຳນາດຂອງຈີນ ນານເຖິງ 100 ກວ່າປີ. ແຕ່ຊາວລາວ ກໍໄດ້ສືບຕໍ່ດຳເນີນການຕໍ່ສູ້ຕ້ານສັກດິນາຈີນເລື້ອຍມາຈົນຮອດ ປີ ຄສ 9 ຈຶ່ງສາມາດຫຼຸດພົ້ນອອກຈາກອຳນາດຂອງຈີນໄດ້.

ພາຍຫຼັງໄດ້ຮັບເອກະລາດແລ້ວ, ນະຄອນເພງ້ວຍໄດ້ຮັບການກໍ່ສ້າງ ແລະ ປົກປັກຮັກສາເລື້ອຍມາຈົນເຖິງສະໄໝການປົກຄອງ ຂອງຂຸນຫຼວງລີເມົາ. ພະອົງໄດ້ນຳເອົາສາສະໜາພຸດລັດທິມະຫາຍານ ເຂົ້າມາເຜີຍແຜ່ໃນນະຄອນຂອງຕົນ ຊຶ່ງເປັນຄັ້ງທຳອິດທີ່ຄົນລາວໄດ້ນັບຖືສາສະໜາພຸດ. ຂຸນຫຼວງລີເມົາ ປົກຄອງນະຄອນເພງ້ວຍມາຮອດ ປີ ຄສ 78 ກໍສ້ຽງພະຊົນ. ຫຼັງຈາກນັ້ນ ຂຸນໄລລາວ

[13] ຈີນສະໄໝລາຊະວົງຊິນ "ພະເຈົ້າຈິນຊີຮວາງຕີ" ທຳການຂະຫຍາຍອານາເຂດ ແລະ ກວດຕ້ອນຄົນໄປເປັນກຳລັງງານໃນການກໍ່ສ້າງກຳແພງ ເຮັດໃຫ້ຄົນລາວ ໃນສາມນະຄອນລັດພາກັນອົບພະຍົບລົງມາທາງໃຕ້.
[14] ສີລາ ວິຣະວົງ. ພົງສາວະດານລາວ. ມັນທາຕຸລາດການພິມ, ວຽງຈັນ 2001 : 11

ຜູ້ເປັນລາຊະໂອລົດ ກໍຂຶ້ນປົກຄອງນະຄອນສືບຕໍ່ມາ ແລະ ໄດ້ຖືກພວກສັກດິນາຈີນທຳການຮຸກຮານອີກ ຄັ້ງໜຶ່ງ. ຂຸນໄລລາວ ໄດ້ນຳພາຊາວລາວຕໍ່ສູ້ຕ້ານຄືນຢ່າງອາດຫານ ແຕ່ກໍບໍ່ສາມາດເອົາຊະນະກອງທັບຈີນໄດ້ ແລະ ພະອົງເອງ ກໍໄດ້ເສຍຊີວິດຄາສະໜາມຮົບ ໃນປີ ຄສ 78 ແລ້ວນະຄອນເພງາຍຂອງລາວ ກໍຂຶ້ນກັບພວກຈີນອີກ.

ຈາກນັ້ນ, ກຸ່ມຄົນລາວ ທີ່ມັກຄວາມເປັນອິດສະຫຼະພາບ ກໍໄດ້ພ້ອມພາກັນອົບພະຍົບຫຼົບໜີລົງ ມາທາງໃຕ້ເລື້ອຍໆ. ສ່ວນພວກທີ່ບໍ່ເຄື່ອນຍ້າຍ ກໍກາຍເປັນພົນລະເມືອງຂອງຈີນມາຈົນຮອດປັດຈຸບັນນີ້.

2) ອານາຈັກໜອງແສ

ອານາຈັກໜອງແສ ສ້າງຕັ້ງຂຶ້ນໃນລະຫວ່າງ ປີ ຄສ 221 ທ່າມກາງການຂັດແຍ່ງກັນພາຍໃນ ຂອງສັກດິນາຈີນ ເຮັດໃຫ້ສັກດິນາຈີນແຕກແຍກເປັນສາມກ໊ກ. ສວຍເອົາໂອກາດນີ້ ຄົນລາວທີ່ອົບພະຍົບ ລົງມາທາງໃຕ້ນັ້ນໄດ້ເຕົ້າໂຮມກັນເຂົ້າ ສ້າງຕັ້ງເປັນເມືອງຂອງຕົນຂຶ້ນ ຢູ່ເຂດມົນທົນເສສວນ ຂອງຈີນ ໃນປະຈຸບັນ ຊຶ່ງລວມມີ 6 ເມືອງ ທີ່ເປັນເອກະລາດດັ່ງມີລາຍຊື່ທີ່ປາກົດໃນຕຳນານຈີນ[15]. ໃນຈຳນວນ 6 ເມືອງນີ້ ແມ່ນເມືອງໜອງແສ (ຈີນເອີ້ນວ່າ: ມົ໋ງເສເຈົ໋ງ) ເປັນເມືອງໃຫຍ່ກວ່າໝູ່.

ປີ ຄສ 225 ອານາຈັກໜອງແສ ກໍຖືກພວກສັກດິນາຈີນເຂົ້າຮຸກຮານ ຊຶ່ງນຳພາໂດຍ ຂົງເບັ້ງ ແມ່ທັບສຳຄັນຂອງເລ່ົາປີ. ປະຊາຊົນຊາວໜອງແສດຳເນີນການຕໍ່ສູ້ເປັນເວລາຫຼາຍປີ ແຕ່ກໍບໍ່ສາມາດ ຕ້ານທານກອງທັບຂອງຂົງເບັ້ງໄດ້ ເຮັດໃຫ້ອານາຈັກໜອງແສ ຕົກຢູ່ໃຕ້ການປົກຄອງຂອງພວກ ສັກດິນາຈີນ ເປັນເວລາຫຼາຍປີ. ຈາກນັ້ນຄົນລາວ ກໍສືບຕໍ່ອົບພະຍົບລົງມາທາງທິດໃຕ້ ຈົນມາຮອດ ປະມານປີ ຄສ 395 ກຸ່ມຄົນລາວທີ່ຍັງອາໄສຢູ່ໃນນະຄອນທ້ົງຫ໋ົວ ໄດ້ກອບກູ້ຄວາມເປັນອິດສະຫຼະພາບ ຄືນ ແລະ ສືບຕໍ່ປົກຄອງເປັນເອກະລາດພໍໃຫລາວ. ຈົນມາຮອດ ປີ ຄສ 649 ຂຸນສີນຸໂລ (ສີທະນະຣະ) ໄດ້ທ້ອນໂຮມທັ້ງ 6 ເມືອງເຂົ້າເປັນເອກະພາບ ເອີ້ນວ່າອານາຈັກໜອງແສ ມີເມືອງໜອງແສເປັນສູນກາງ.

ຂຸນສີນຸໂລ ສິ້ນພະຊົນແລ້ວ ຂຸນໂລເສັ໋ງ ຫຼື ຂຸນໜອງແສ ຜູ້ເປັນໂອລົດ ໄດ້ຂຶ້ນປົກຄອງແທນ ໃນປີ ຄສ 685. ໃນສະໄໝ ຂຸນໂລເສັ໋ງ ເປັນກະສັດປົກຄອງອານາຈັກນີ້ ພະອົງໄດ້ເດີນທາງໄປປະເທດຈີນ ເພື່ອສ້າງສາຍສຳພັນອັນດີກັບຈີນ ເຮັດໃຫ້ບ້ານເມືອງມີຄວາມສະຫງົບສຸກ. ເມື່ອມີການສິ້ນພະຊົນ ຂອງຂຸນໂລເສັ໋ງ[16] ແລ້ວເຫດການປະຫວັດສາດຂອງອ້າຍລາວໃນອານາຈັກໜອງແສ ບໍ່ຈະແຈ້ງ ມີແຕ່ ກ່າວວ່າ ມີກະສັດສືບຕໍ່ປົກຄອງກັນມາເຖິງສາມອົງ ກ່ອນຈະມາຮອດ ຂຸນບູຣົມ ປົກຄອງ.

ປີ ຄສ 729 ຂຸນບູຣົມຣາຊາທິຣາດ ໄດ້ຂຶ້ນປົກຄອງອານາຈັກໜອງແສຊຶ່ງກົງກັບລາຊະການທີ 7 ຕາມລຳດັບກະສັດຂອງວົງຕະກຸນໜອງແສ. ພະອົງໄດ້ປັບປຸງອຳນາດການປົກຄອງໃຫ້ເຂັ້ມແຂງ ເວລາ ນີ້ ສະພາບການພາຍໃນອານາຈັກ ມີຄວາມສະຫງົບສຸກ ແລະ ມີຂອບເຂດຊາຍແດນອັນກ້ວ້າງຂວ້າງ ຊຶ່ງ ສະແດງອອກໃນການແຕ່ງຕັ້ງລູກຊາຍ ໄປປົກຄອງຫົວເມືອງຕ່າງໆ ໂດຍສະເພາະ ຫົວເມືອງທາງຝ່າຍ ໃຕ້ ຊຶ່ງກວມເອົາເຂດຊຽງຕຸງ, ຊຽງແສນ, ຊຽງທອງ ແລະ ຊຽງຂວ້ງ. ພາຍຫຼັງ ຂຸນບູຣົມສິ້ນພະຊົນ ໃນປີ ຄສ 750 ຂຸນລໍ ຜູ້ເປັນລາຊະບຸດ ກໍໄດ້ຂຶ້ນປົກຄອງໜອງແສແທນພະບິດາ. ໃນປີ ຄສ 751 ສັກດິນາຈີນໄດ້ຍົກ ທັບມາຮຸກຮານໜອງແສ 2 ຄັ້ງ ແຕ່ກໍຖືກຊາວລາວໜອງແສ ທີ່ນຳພາໂດຍຂຸນລໍຕໍ່ຕ້ານຄືນ ແລະ ສາມາດ ຂັບໄລ່ທະຫານຈີນອອກຈາກດິນແດນໄດ້. ພາຍຫຼັງສະຫງົບເສິກ ແລະ ປັບປຸງສາຍສຳພັນກັບຈີນແລ້ວ,

[15] ນະຄອນທ້ົງຫ໋ົ ປະກອບມີ: ເມືອງມົ໋ງລຸ້ຍ, ເມືອງເອ໋ີຍເຊ໋, ເມືອງລ້ວງກົ໋ງ, ເມືອງເທ້ົງຊຸ໋ງ, ເມືອງຊີລ້ານ ແລະ ເມືອງມົ໋ງເສ ອ້າງໃນ ອູ່ຄຳ ພົມວົງສາ, 1958: 9 ແລະ ສີລາວິຣະວົງ 2001:13

[16] ບໍ່ມີຫຼັກຖານບົ່ງບອກວ່າ ຂຸນໂລເສັ໋ງ ສິ້ນພະຊົນໃນປີໃດ ນອກຈາກບອກວ່າ ມີກະສັດລາວສາມອົງປົກຄອງ ຕໍ່ມາຈຶ່ງຮອດຂຸນບູຣົມ. ສົມມຸຕິຖານວ່າ ອາດເປັນຊ່ວງທີ່ກຸ່ມຄົນອ້າຍລາວ ມີການຂັດແຍ່ງກັນພາຍໃນກໍເປັນໄດ້.

ພະອົງໄດ້ມອບລາຊະການບ້ານເມືອງຢູ່ໜອງແສ ໃຫ້ແກ່ຫຼານຊາຍຊື່ ອີເມົາຊິນ ປົກຄອງແທນ. ສ່ວນ ພະອົງໄດ້ລົງມາປົກຄອງຢູ່ເມືອງກາຫຼົງ[17] ຈົນມາຮອດ ປີ ຄສ 757 ຈຶ່ງໄດ້ຍ້າຍມາປົກຄອງຢູ່ເມືອງຊວາ[18].

ສະຫຼຸບລວມແລ້ວ ເມືອງໜອງແສ ນັບແຕ່ສະໄໝການປົກຄອງຂອງ ຂຸນສີນຸໂລ ປົກຄອງ ປີ ຄສ 649 ຈົນຮອດກະສັດອົງສຸດທ້າຍ ຂອງໜອງແສຊື່ວ່າ ຂຸນຂຸນຟ້າ ທີ່ປົກຄອງໃນ ລະຫວ່າງ ປີ ຄສ 898 ຫາ ຄສ 903 ຊຶ່ງນັບເປັນເວລາເຖິງ 254 ປີ ໄດ້ມີກະສັດລາວປົກຄອງສືບຕໍ່ກັນມາເຖິງ 14 ອົງ. ຈາກນັ້ນມາ ລາຊະອົງລາວໜອງແສ ກໍໄດ້ມີການປົກຄອງຮ່ວມກັບຄົນຈີນ ແລະ ວັດທະນະທຳຂອງກຸ່ມ ຄົນລາວ ກໍຖືກເຊື່ອມປະສານເຂົ້າກັບຮູບແບບຊີວິດສັງຄົມ ຂອງວັດທະນະທຳຈີນ ໄປຕາມການເວລາ ກາຍເປັນວັດທະນະທຳປະສົມປະສານ. ແຕ່ໃນປັດຈຸບັນນີ້ ກໍຍັງມີບາງກຸ່ມຄົນຍັງຄົງຮັກສາໄວ້ຢູ່. ມາ ຮອດ ປີ ຄສ 1283 ຄົນຈີນ ກໍສາມາດຍຶດຄອງໜອງແສໄດ້ຢ່າງສົມບູນ.

1.1.4.2 ການສ້າງຕັ້ງນະຄອນລັດໃນດິນແດນລາວ

ຕາມຫຼັກຖານທາງປະຫວັດສາດ ແລະ ບູຮານຄະດີ ທີ່ພົບໃນດິນແດນລາວ ບອກໃຫ້ຮູ້ວ່າ ດິນແດນບໍລິເວນທີ່ເປັນປະເທດລາວປັດຈຸບັນນີ້ ມີກຸ່ມຄົນອາໄສຢູ່ມາແຕ່ບູຮານນະການ ໂດຍສະເພາະ ກຸ່ມຄົນທີ່ເອີ້ນຕົນເອງວ່າ ຊົນຊາດລາວ. ບັນດາກຸ່ມຄົນດັ່ງກ່າວນີ້ ໄດ້ສ້າງຕັ້ງເປັນນະຄອນລັດຂອງຕົນ ຂຶ້ນຄຽງຄູ່ກັນກັບນະຄອນລັດ ຂອງກຸ່ມຄົນລາວທີ່ຕັ້ງຖິ່ນຖານ ຢູ່ບໍລິເວນຮອບນອກດິນແດນລາວ ໃນປັດຈຸບັນ. ບັນດານະຄອນລັດບູຮານທີ່ສຳຄັນໃນດິນແດນລາວ ມີຫຼາຍອານາຈັກເມືອງທີ່ກະຈາຍກັນ ຢູ່ທົ່ວໄປ ແຕ່ໃນທີ່ນີ້ ຂໍນຳສະເໜີພຽງແຕ່ບາງຫົວເມືອງລາວບູຮານເທົ່ານັ້ນ ເຊັ່ນ:

1) ອານາຈັກສີໂຄດຕະບອງ

ສີໂຄດຕະບອງ ເປັນອານາຈັກເມືອງເກົ່າແກ່ຂອງລາວ, ອານາຈັກນີ້ສ້າງຕັ້ງຂຶ້ນໃນ ລະຫວ່າງ ສະຕະວັດທີ 10 -6 ກ່ອນ ຄສ (1000 - 600 ປີ ກ່ອນ ຄສ[19]) ສູນກາງການປົກຄອງທຳອິດ ຕັ້ງຢູ່ ລ່ອງແມ່ນ້ຳເຊປັ້ງໄຟ, ນັບແຕ່ປາກແມ່ນ້ຳເລິກເຂົ້າໄປປະມານ 15 ກິໂລແມັດ[20], ມີກະສັດປົກຄອງເມືອງ ທຳອິດທີ່ປາກົດຕາມຊື່ເມືອງວ່າ ພະຍາສີໂຄດຕະບູນ.

ຕົ້ນສະຕະວັດທີ 3 ອານາຈັກຟູນານ ຊຶ່ງມີສູນກາງຕັ້ງຢູ່ສາມຫຼ່ຽມປາກແມ່ນ້ຳຂອງ ໄດ້ມີຄວາມ ເຂັ້ມແຂງແລ້ວ ແຜ່ຂະຫຍາຍອຳນາດ ແລະ ອິດທິພົນຂຶ້ນມາທາງພາກເໜືອ ກວມເອົາດິນແດນຂອງ ບັນດາອານາຈັກອ້ອມຂ້າງ ຮວມທັ້ງອານາຈັກສີໂຄດຕະບອງດ້ວຍ. ຈົນມາຮອດກາງສະຕະວັດທີ 6 ໂດຍ ສວຍໂອກາດທີ່ອານາຈັກຟູນັນກຳລັງຊຸດໂຊມລົງ, ຊາວສີໂຄດຕະບອງພາຍໃຕ້ການນຳພາ ຂອງພະຍາ ນັນທະເສນ ໄດ້ປະກາດແຍກຕົວອອກເປັນເອກະລາດ ແລະ ປັບປຸງບ້ານເມືອງໃຫ້ເຂັ້ມແຂງ, ມີອານາເຂດ ກວ້າງຂວາງກວ່າເກົ່າ. ແຕ່ເມື່ອສິ້ນສຸດສະໄໝການປົກຄອງຂອງພະຍານັນທະເສນແລ້ວ ອານາຈັກ ສີໂຄດຕະບອງ ໄດ້ເລີ່ມຊຸດໂຊມລົງ ແລະ ມີການຍົກຍ້າຍສູນກາງໄປຢູ່ຝັ່ງຂວາ ແມ່ນ້ຳຂອງບໍລິເວນ ທາດພະນົມ (ນະຄອນພະນົມ, ປະເທດໄທໃນປະຈຸບັນ) ແລະ ໄດ້ຕັ້ງຊື່ເມືອງໃໝ່ວ່າ "ເມືອງ ມະຮຸກຂະນະຄອນ". ແຕ່ໃນໄລຍະນີ້ ໄດ້ມີຫຼາຍຫົວເມືອງແຍກຕົວອອກ ເປັນເອກະລາດບໍ່ຍອມຂຶ້ນກັບ ສູນກາງ.

---

[17] ບໍລິເວນເມືອງຊຽງຮຸ່ງ ມົນທົນຢູນານຂອງຈີນໃນປະຈຸບັນ

[18] ປີ ຄສ 757 ຂຸນລໍ ໄດ້ຍົກກຳລັງລົງມາຍຶດເອົາເມືອງຊວາ, ຊຶ່ງເວລານັ້ນ ແມ່ນຂຸນກັນຮາງເປັນຜູ້ຄອງເມືອງ ຈາກນັ້ນກໍໄດ້ຂຶ້ນປົກຄອງເມືອງຊວາ ແລະ ໄດ້ປ່ຽນນາມຂອງຕົນ ເປັນຂຸນຊວາ ຕາມນາມເດີມຂອງຜູ້ກໍ່ຕັ້ງເມືອງຊວາ ແລະ ໄດ້ປ່ຽນຊື່ຂອງເມືອງເປັນເມືອງຊຽງທອງ ແລະ ສະຖາປະນາເອົາ ເມືອງ ຊຽງທອງເປັນລາຊະທານີຂອງຊົນຊາດລາວ. ສັນນິຖານວ່າ ໄລຍະນີ້ເອງທີ່ກຸ່ມຄົນອ້າຍລາວໄດ້ເຄື່ອນຍ້າຍເຂົ້າປະສົມປະສານກັບຊົນເຜົ່າລາວເດີມ ຢູ່ດິນແດນລາວນັບມື້ນັບຫຼາຍຂຶ້ນ.

[19] ບຸນມີ ເທບສີເມືອງ, ຄວາມເປັນມາຂອງຊົນຊາດລາວ. ໂຮງພິມສຶກສາ 2006 : 131-140. ບາງເອກະສານ ບອກວ່າ ເກີດໃນສະຕະວັດທີ 1 ກ່ອນ ຄສ ມະຫາສີລາ ວີຣະວົງ, ພົງສາວະດານລາວ. ມັນທາຕຸຣາດການພິມ ວຽງຈັນ 2001 : 4 ແລະ ອ້າງໃນປະຫວັດສາດລາວ ຂອງ ສຸເນດ ໂພທິສານ ແລະ ພູມມະຈັນ, 2000 : 52

[20] ສຸເນດ ໂພທິສານ ແລະ ໜູໄຊພູມມະຈັນ .ປະຫວັດສາດລາວຄຶກດຳບັນ-ປັດຈຸບັນ. ໂຮງພິມແຫ່ງລັດ2000 : 52.

ມາໃນຕົ້ນສະຕະວັດທີ 7 ອານາຈັກຈັນລາແຫ່ງພວກຂອມທີ່ຢູ່ທາງພາກໃຕ້ມີຄວາມເຂັ້ມແຂງ ແລ້ວທຳການແຜ່ຂະຫຍາຍດິນແດນຂຶ້ນມາທາງພາກເໜືອ ບຸດຍຶດເອົາຫົວເມືອງຕ່າງໆ ຂອງອານາຈັກ ສີໂຄດຕະບອງ. ແຕ່ພໍກ້າວເຂົ້າໄລຍະທ້າຍສະຕະວັດທີ 7 ອານາຈັກຈັນລາ ກ້າວເຂົ້າສູ່ຄວາມອ່ອນເພຍ ລົງ, ສະນັ້ນ ພະຍາສຸມິດຕະທຳມະວົງສາ ຈຶ່ງໄດ້ປະກາດແຍກສີໂຄດຕະບອງ ອອກຈາກອຳນາດ ຂອງ ອານາຈັກຈັນລາ. ພາຍຫຼັງໄດ້ຮັບເອກະລາດແລ້ວ ພະຍາສຸມິດຕະທຳມະວົງສາ ໄດ້ທຳການປັບປຸງ ອຳນາດໃຫ້ເຂັ້ມແຂງ ແລະ ມີອານາເຂດກວ້າງຂວາງ. ແຕ່ມາຮອດຕອນທ້າຍການປົກຄອງ ອານາຈັກ ສີໂຄດຕະບອງ ໄດ້ແຍກອອກເປັນສອງອານາຈັກເມືອງ ຄື: ເມືອງສີໂຄດຕະບອງ ແລະ ເມືອງ ຈັນທະບູຣີ ໂດຍມີແມ່ນ້ຳມະດີງເປັນສາຍແດນ.

ມາຮອດສະຕະວັດທີ 10 ອານາຈັກສີໂຄດຕະບອງ ໄດ້ກ້າວເຂົ້າສູ່ຄວາມອ່ອນເພຍ ແລະ ຖືກ ພວກຂອມແຫ່ງອານາຈັກອັງກໍ ຍຶດຄອງດິນແດນຕັ້ງແຕ່ຫຼີຜີເຖິງວຽງຈັນ ແລ້ວຕັ້ງສູນກາງການປົກຄອງ ຢູ່ເມືອງຫາດຊາຍຟອງ ຈົນຮອດສະຕະວັດທີ 13 ອານາຈັກອັງກໍ ຈຶ່ງໄດ້ເຊື່ອມອຳນາດລົງ. ຈາກນັ້ນ ບັນດາຫົວເມືອງລາວ ທີ່ຂຶ້ນກັບອານາຈັກສີໂຄດຕະບອງໃນເມື່ອກ່ອນ ຕ່າງກໍໄດ້ພາກັນແຍກຕົວອອກ ເປັນເອກະລາດ ແລະ ປົກຄອງພໍໃຜລາວຕາມແຕ່ລະຫົວເມືອງ ຈົນມາຮອດກາງສະຕະວັດທີ 14 ຈຶ່ງໄດ້ຮັບ ການທ້ອນໂຮມເຂົ້າເປັນອານາຈັກລາວລ້ານຊ້າງເອກະພາບ ພ້ອມກັນກັບບັນດາຫົວເມືອງ ລາວບູຮານອື່ນໆ.

2) **ອານາຈັກເມືອງຊວາ**

ເມືອງຊວາ ສ້າງຕັ້ງຂຶ້ນກ່ອນສະຕະວັດທີ 8 ໂດຍແມ່ນກຸ່ມຄົນລະວ້າ ແລະ ມີສາມຕະກຸນ ຄອບຄອງ ຄື: ຕະກຸນ "ນັນທາ", ຕະກຸນ "ພະຍາມາ" ແລະ ຕະກຸນ "ຈັນທະພານິດ". ບັນດາວົງຕະກຸນນີ້ ນັກປະຫວັດສາດສ່ວນໃຫຍ່ເຊື່ອກັນວ່າ ແມ່ນກຸ່ມຄົນໄທລາວ ຫຼື ພວກອ້າຍລາວຮຸ່ນຄົນທຳອິດ ທີ່ເຄື່ອນ ຍ້າຍເຂົ້າມາອາໄສຢູ່ດິນແດນແຫ່ງນີ້.

ຕົກມາຮອດກາງສະຕະວັດທີ 8 ບຸດຊາຍຂອງຂຸນບູຮົມຊື່ວ່າ ຂຸນລໍ ຊຶ່ງເປັນຊົນເຜົ່າລາວ ຫຼື ອ້າຍລາວກຸ່ມໜຶ່ງ ທີ່ຕັ້ງຖິ່ນຖານຢູ່ທາງພາກເໜືອ ຄື ບໍລິເວນແຖບສິບສອງປັນນາ ຊຶ່ງເປັນທີ່ຮູ້ຈັກກັນດີ ໃນນາມອານາຈັກໜອງແສ ໄດ້ເຄື່ອນຍ້າຍແຜ່ຂະຫຍາຍລົງມາທາງໃຕ້ ເຂົ້າຍຶດເອົາເມືອງຊວາ ໃນປີ ຄສ 757 ແລ້ວກໍຂຶ້ນປົກຄອງເມືອງຊວາ ແລະ ໄດ້ປ່ຽນຊື່ ເມືອງຊວາມາເປັນ "ຊຽງດົງຊຽງທອງ" ແລ້ວເອີ້ນວ່າ "ນະຄອນຊຽງທອງ". ຈາກນັ້ນມາຮອດ ປີ ຄສ 1353 ເມືອງຊຽງທອງ ກໍໄດ້ຖືກທ້ອນໂຮມເຂົ້າເປັນ ເມືອງໜຶ່ງ ຂອງອານາຈັກລ້ານຊ້າງໃຕ້ການນຳພາຂອງເຈົ້າຟ້າງຸ່ມ ແລະ ກາຍເປັນສູນກາງການປົກຄອງ ຂອງອານາຈັກ ລ້ານຊ້າງມາຈົນຮອດ ປີ ຄສ 1560 ຈຶ່ງໄດ້ມອບໜ້າທີ່ລາຊະທານີຂອງອານາຈັກໃຫ້ແກ່ ເມືອງວຽງຈັນ.

3) **ອານາຈັກເມືອງວຽງຈັນ**

ເມືອງວຽງຈັນ ເປັນເມືອງເກົ່າແກ່ເມືອງໜຶ່ງຂອງຄົນລາວ ທີ່ມີພັດທະນາການຄວາມເປັນມາ ອັນຍາວນານ ຊຶ່ງໃນອະດີດນັ້ນ, ເມືອງນີ້ມີທີ່ຕັ້ງກວມເອົາດິນແດນບໍລິເວນສອງຟາກຝັ່ງແມ່ນ້ຳຂອງ ຄື ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ສ່ວນໜຶ່ງຂອງແຂວງບໍລິຄຳໄຊ ແລະ ແຂວງໜອງຄາຍໃນປັດຈຸບັນ.

ຕາມຫຼັກຖານທາງບູຮານຄະດີ ພົບວ່າ ບໍລິເວນອ້ອມແອ້ມເມືອງວຽງຈັນ ມີຫຼາຍເມືອງບໍລິວານ ຂຶ້ນກັບ ເຊັ່ນ: ທາງທິດຕາເວັນອອກສຽງເໜືອຫ່າງຈາກນະຄອນຫຼວງວຽງຈັນປະມານ 70 ກິໂລແມັດ ຕາມແຄມຝັ່ງນ້ຳງື່ມ ມີເມືອງໜຶ່ງຊື່ວ່າວຽງຄຳ, ທິດເໜືອຫ່າງຈາກນະຄອນຫຼວງວຽງຈັນປະມານ 100 ກິໂລແມັດແຄມຝັ່ງນ້ຳຂອງມີເມືອງໜຶ່ງຊື່ວ່າ ເມືອງຊຽງຄານ (ຊະນະຄາມໃນປັດຈຸບັນ), ທິດຕາເວັນຕົກ ທາງຝັ່ງຂວາແມ່ນ້ຳຂອງມີ ເມືອງປາກຫ້ວຍຫຼວງ, ວຽງຄຸກ... ທາງທິດໃຕ້ ມີເມືອງວຽງຜານ ຕັ້ງຢູ່

ບໍລິເວນປາກນ້ຳຊັນ ແລະ ນ້ຳກະດິງ[21]. ນອກຈາກພົບຮ່ອງຮອຍເມືອງບູຮານແລ້ວ, ຍັງພົບເຫັນຮ່ອງຮອຍ ສິລະປະວັດທະນະທຳບູຮານເປັນຕົ້ນ ເຄື່ອງມືເຄື່ອງໃຊ້ທີ່ເຮັດດ້ວຍຫີນ, ໂລຫະ ແລະ ເຄື່ອງປັ້ນດິນເຜົາ ທີ່ມີລັກສະນະແຕກຕ່າງກັນໄປຕາມກາລະເວລາ. ຜົນການວິໄຈພົບວ່າ ວັດຖຸບູຮານທີ່ພົບໃນເຂດນີ້ມີ ສາມຮູບແບບທີ່ເປັນສັນຍາລັກ ຂອງສາມຍຸກສະໄໝແຫ່ງສິລະປະວັດທະນະທຳທີ່ພົບໃນລາວ ເຊັ່ນ: ສິລະປະສະໄໝສີໂຄດຕະບອງ, ສິລະປະສະໄໝຊາຍຟອງ ແລະ ສິລະປະສະໄໝລ້ານຊ້າງ.

ສຳລັບຄວາມເປັນມາຂອງເມືອງວຽງຈັນໃນສະໄໝບູຮານນັ້ນ ຂ້ອນຂ້າງມີຄວາມສັບສົນ ທາງ ດ້ານເວລາໃນການກຳເນີດວ່າສ້າງຂຶ້ນໃນເວລາໃດ? ແຕ່ອີງຫຼັກຖານປະເພດຕຳນານ ແລະ ຄຳບອກເລົ່າ ແລ້ວເຫັນວ່າ ຈຸດກຳເນີດຂອງເມືອງວຽງ ກ່ຽວພັນກັນກັບຕຳນານ ດັ່ງນີ້:

- ຕຳນານພະຍານາກ: ທີ່ເປັນຕຳນານແບບເລົ່າປາກຕໍ່ປາກສືບຕໍ່ກັນມາ ທີ່ກ່ຽວຂ້ອງກັບ ເມືອງວຽງຈັນວ່າ ເມືອງວຽງຈັນນີ້ສ້າງຂຶ້ນໂດຍພະຍານາກ ດ້ວຍເຫດນັ້ນ ເມືອງວຽງຈັນຈຶ່ງມີເມືອງໜຶ່ງ ເອີ້ນວ່າ "ວຽງຈັນສັດຕະນາກ ຫຼື ເມືອງສີສັດຕະນາກ" ໃນປັດຈຸບັນ.

- ຕຳນານພະລັກພະລາມບອກວ່າເມືອງວຽງຈັນສ້າງຕັ້ງຂຶ້ນ ໂດຍທ້າວທະຕະລັດຖະທີ່ເດີນທາງ ມາຈາກເມືອງອິນທະປັດຖະນະຄອນ, ໄດ້ມາພັກເຊົາໃນເຂດດອນຈັນ ແລ້ວມີນາມເຈັດທອນຂຶ້ນມາ ບອກໃຫ້ສ້າງເມືອງໃໝ່ຂຶ້ນທີ່ຝັ່ງນ້ຳຕາເວັນອອກ ຈຶ່ງຈະເລີນຮຸ່ງເຮືອງ. ດັ່ງນັ້ນ, ເມືອງໃໝ່ແຫ່ງນີ້ ຈຶ່ງມີ ຊື່ວ່າ "ເມືອງສີສັດຕະນາກ" ຕາມນາກເຈັດທອນບອກ.

- ຕຳນານອຸຮັງຄະທາດບອກວ່າ ເມືອງວຽງຈັນສ້າງຕັ້ງຂຶ້ນທຳອິດ ໂດຍທ້າວ ບູຣີຈັນ ຊຶ່ງໄລຍະທຳອິດ ມີຊື່ວ່າ "ໜອງຄັນແທເສື່ອນ້ຳ". ຕໍ່ມາໃນລະຫວ່າງສະຕະວັດທີ 4 ທ້າວຄຳບາງ ທີ່ເປັນເຊື້ອສາຍ ຂອງພະຍາສຸວັນນະພິງຄານ ແຫ່ງເມືອງໜອງຫານຫຼວງ ໄດ້ນຳພາໄພ່ພົນຂອງຕົນ ອົບພະຍົບຈາກໜອງຫານຫຼວງຂຶ້ນມາຕັ້ງບ້ານເມືອງ ຢູ່ທີ່ບໍລິເວນປາກຫ້ວຍເກົ້າລ້ຽວເກົ້າຄົດ (ບໍລິເວນ ບ້ານເກົ້າລ້ຽວ, ນາໍແພງນະຄອນ) ໂດຍໃຫ້ຊື່ເມືອງຂອງຕົນວ່າ "ສຸວັນນະພູມ" ແລ້ວໃຫ້ໄພ່ພົນຂອງຕົນ ແຍກຍ້າຍກັນໄປຕັ້ງບ້ານເຮືອນຢູ່ອ້ອມແອ້ມໃກ້ຄຽງກັນນັ້ນ. ຕໍ່ມາທ້າວ ຄຳບາງ ໄດ້ໃຫ້ລູກ ສາວຂອງຕົນ ຊື່ວ່າ ນາງ ອິນທະສະຫວ່າງ ແຕ່ງງານກັບທ້າວບູຣີຈັນ ຊຶ່ງເປັນຫົວໜ້າບ້ານໜອງຄັນແທເສື່ອນ້ຳ ແລ້ວບູຣີຈັນ ກໍໄດ້ປ່ຽນຊື່ບ້ານ ໜອງຄັນແທເສື່ອນ້ຳ ມາເປັນເມືອງເອີ້ນວ່າ "ເມືອງຈັນທະບູຣີ" ແລະ ບູຣີຈັນ ກໍໄດ້ຈັດແຈງເຄື່ອງບັນນາການໄປຖວາຍ ເຈົ້າສຸມິດຕະທຳມະວົງສາ ຊຶ່ງເປັນ ເຈົ້າເມືອງ ມະຮຸກະນະຄອນ ຫຼື ສີໂຄດຕະບູນໃຫ້ຮັບຮູ້. ຈາກນັ້ນພະຍາສຸມິດຕະທຳມະວົງສາ ກໍໄດ້ເຮັດພິທີ ອະພິເສກບູຣີຈັນຂຶ້ນເປັນຜູ້ປົກຄອງເມືອງ ມີພະນາມວ່າ ພະຍາຈັນທະບູຣີປະສິດທິສັກ ພ້ອມນັ້ນ ກໍໄດ້ກຳນົດເຂດໝາຍແດນດິນ ຊຶ່ງທາງໃຕ້ ນັບແຕ່ ນ້ຳກະດິງຂຶ້ນມາ ແລະ ເມືອງນີ້ກໍມີຊື່ວ່າ "ວຽງຈັນ" ໃນເວລາຕໍ່ມາຕາມຄວາມໝາຍຂອງບູຣີຈັນ.

ຈາກນັ້ນມາຈົນຮອດປະມານສະຕະວັດທີ 6 ຈຶ່ງປາກົດມີຊື່ເມືອງວຽງຈັນ ນອນຢູ່ໃນ 17 ຕົວເມືອງ ທີ່ຂຶ້ນກັບອານາຈັກສີໂຄດຕະບອງ ແລະ ມາຮອດກາງສະຕະວັດທີ 8 ເມືອງວຽງຈັນ ກໍຖືກສະຖາປະນາ ເປັນນະຄອນຫຼວງຂອງອານາຈັກສີໂຄດຕະບອງຈົນມາຮອດສະຕະວັດທີ 11. ຈາກນັ້ນພວກຂອມທີ່ໄດ້ ແຜ່ຂະຫຍາຍອຳນາດມາປົກຄຸມອານາຈັກສີໂຄດຕະບອງ ຈຶ່ງສັນນິຖານວ່າ ເມືອງວຽງຈັນໃນຊ່ວງເວລານີ້ ກໍຕົກຢູ່ໃຕ້ການປົກຄອງຂອງພວກຂອມ. ມາຮອດສະຕະວັດທີ 14 ປະມານ ປີ ຄສ 1357 ເມືອງວຽງຈັນ ກໍຖືກເຕົ້າໂຮມເຂົ້າກັນເປັນເມືອງໜຶ່ງຂອງອານາຈັກລ້ານຊ້າງ ໃຕ້ການນຳພາຂອງພະເຈົ້າຟ້າງຸ່ມ.

[21] ສຸເນດ ໂພທິສານ ແລະ ໜູໄຊພູມມະຈັນ. ປະຫວັດສາດລາວດຶກດຳບັນ-ປັດຈຸບັນ .ໂຮງພິມແຫ່ງລັດ 2000:46-47.

1.2 ລາວສະໄໝກາງ

1.2.1 ການສ້າງຕັ້ງອານາຈັກລາວລ້ານຊ້າງ

ລ້ານຊ້າງ ເປັນຊື່ອານາຈັກໜຶ່ງຂອງຄົນລາວ ທີ່ກຳເນີດຂຶ້ນໃນສະຕະວັດທີ 14 ມີອານາເຂດກວມເອົາດິນແດນປະເທດລາວໃນປະຈຸບັນ ລວມໄປເຖິງດິນແດນພາກອີສານຂອງປະເທດໄທ, ເຂດເມືອງແຖງຂອງຫວຽດນາມ ແລະ ເຂດກະແຈະ-ຊຽງແຕງຂອງກຳປູເຈຍ ຊຶ່ງໃນອະດີດ ເປັນດິນແດນຂອງອານາຈັກລ້ານຊ້າງ.

ດິນແດນທີ່ເອີ້ນວ່າ ອານາຈັກລ້ານຊ້າງກ່ອນໜ້າການທ້ອນໂຮມຂອງພະເຈົ້າຟ້າງຸ່ມນັ້ນ ເປັນດິນແດນທີ່ມີຫຼາຍອານາຈັກເມືອງຂອງກຸ່ມຄົນລາວ ທີ່ມີການປົກຄອງເປັນເອກະລາດພໍໃຜມັນ. ບັນດາອານາຈັກເມືອງທີ່ສຳຄັນ ໄດ້ແກ່: ເມືອງຊວາ, ເມືອງພວນ, ເມືອງວຽງຈັນ, ເມືອງກະບອງ, ເມືອງຈຳປາສັກ, ແລະ ເມືອງອື່ນໆ ຕາມສອງຟາກຝັ່ງແມ່ນ້ຳຂອງຕັ້ງແຕ່ຍອດຜູເຖິງຫຼີ່ຜີ. ໃນສະຕະວັດທີ 10-11 ອານາຈັກອັງກໍແຫ່ງພວກຂອມ ມີຄວາມເຂັ້ມແຂງ ໄດ້ດຳເນີນການຂະຫຍາຍອານາເຂດແຜ່ອິດທິພົນຂຶ້ນມາຕາມລ່ອງແມ່ນ້ຳຂອງ ເຮັດໃຫ້ຫົວເມືອງລາວຕ່າງໆ ທີ່ຢູ່ທາງພາກໃຕ້ ແລະ ພາກກາງຕົກຢູ່ໃຕ້ອິດທິພົນຂອງພວກຂອມແຫ່ງອັງກໍ[22]. ມາຮອດກາງສະຕະວັດທີ 13 ອານາຈັກອັງກໍ ມີຄວາມອ່ອນເພຍ ແລ້ວບັນດາຫົວເມືອງລາວ ທາງພາກກາງ ແລະ ພາກໃຕ້ນັບແຕ່ຫຼີ່ຜີຂຶ້ນມາຕາມສອງຟາກຝັ່ງແມ່ນ້ຳຂອງ ຈົນຮອດວຽງຈັນກໍໄດ້ແຍກຕົວອອກເປັນເອກະລາດ.

ກາງສະຕະວັດທີ 14 ອານາຈັກເມືອງຊວາ ຊຶ່ງເປັນອານາຈັກໜຶ່ງທີ່ມີຄວາມເຂັ້ມແຂງກວ່າໝູ່ ໃນບັນດາຫົວເມືອງລາວບູຮານຕ່າງໆ ຈຶ່ງໄດ້ມີແຜນການເພື່ອທ້ອນໂຮມຫົວເມືອງລາວເຫຼົ່ານັ້ນເຂົ້າກັນເປັນອານາຈັກເອກະພາບ ຄືກັນກັບອານາຈັກອື່ນໆ ອ້ອມຂ້າງ. ແຕ່ວ່າສະພາບພາຍໃນຂອງເມືອງຊວາເອງໃນເວລານັ້ນກໍມີການຂັດແຍ່ງກັນລະຫວ່າງກຸ່ມສັກດິນາພາຍໃນດ້ວຍກັນ. ດັ່ງນັ້ນ, ເຈົ້າຟ້າງົ່ວທີ່ເປັນບິດາຂອງເຈົ້າຟ້າງຸ່ມ ຈຶ່ງມີແຜນຍຸດໂທບາຍດ້ວຍຮູບການສົ່ງເຈົ້າຟ້າງຸ່ມ ພ້ອມດ້ວຍເສນາອາມາດທີ່ໃກ້ສິດລົງໄປທາງພາກໃຕ້ດ້ວຍກົນອຸບາຍທີ່ວ່າ "...ເຈົ້າຟ້າງຸ່ມເກີດມາເປັນຄົນເຂັດຄົນຂວາງ, ແພ້ບ້ານແພ້ເມືອງຕ້ອງເອົາໃສ່ແພໄຫຼນ້ຳເສຍ..." ໃນຄວາມເປັນຈິງແລ້ວ ສິ່ງດັ່ງກ່າວນັ້ນເປັນພຽງຂໍ້ອ້າງ ເພື່ອເອົາເປັນເຫດຜົນໃນການກະກຽມ, ເກັບກຳຂໍ້ມູນ ແລະ ສະສົມກຳລັງຕາມແຜນການທ້ອນໂຮມຫົວເມືອງລາວບູຮານຕ່າງໆ ເຂົ້າກັນເປັນອານາຈັກດຽວ.

ໃນຂະນະທີ່ ເຈົ້າຟ້າງຸ່ມກຳລັງດຳເນີນການເຄື່ອນໄຫວເຕົ້າໂຮມກຳລັງຢູ່ພື້ນຖານຕາມທ້ອງຖິ່ນຕ່າງໆ ທາງພາກໃຕ້ນັ້ນ, ເຫດການທາງເມືອງຊວາ ກໍມີການປ່ຽນແປງປະກອບກັບສະພາບການໃນແຫຼມສຸວັນນະພູມ ກໍມີການປ່ຽນແປງອີກເຊັ່ນກັນ. ສະພາບການປ່ຽນແປງດັ່ງກ່າວນັ້ນໄດ້ກາຍເປັນເງື່ອນໄຂອັນດີໃຫ້ແກ່ແຜນການເຕົ້າໂຮມຫົວເມືອງລາວທີ່ຕັ້ງຢູ່ສອງຟາກຝັ່ງແມ່ນ້ຳຂອງເຂົ້າເປັນອານາຈັກດຽວກັນ ຂອງພະເຈົ້າຟ້າງຸ່ມ. ດັ່ງນັ້ນມາ ໃນປີ ຄສ 1349 ພະເຈົ້າຟ້າງຸ່ມພ້ອມດ້ວຍພັກພວກໄດ້ນຳພາປະຊາ ຊົນດຳເນີນການທ້ອນໂຮມຫົວເມືອງລາວຕ່າງໆເຂົ້າກັນເປັນອານາຈັກເອກະພາບພາຍໃຕ້ຊື່ດຽວກັນເອີ້ນວ່າ"ອານາຈັກລາວລ້ານຊ້າງ"ຢ່າງສຳເລັດຜົນ ໃນປີ ຄສ 1357 ຊຶ່ງມີສູນກາງການປົກຄອງຢູ່ນະຄອນຊຽງທອງ.

[22] ຫຼັກຖານທີ່ຢັ້ງຢືນເຖິງການແຜ່ອຳນາດຄວບຄຸມດິນແດນລາວທາງພາກກາງ ແລະ ພາກໃຕ້ໄດ້ແກ່: "...ປະຕິມາກຳຮູບເທົ່າລົບເຊັ່ນ ພະພຸດທະຮູບທີ່ສ້າງຂຶ້ນຕາມສິລະປະຂອມທີ່ຄົ້ນພົບຢູ່ເມືອງຊາຍຟອງ, ຮູບປັ້ນຂະໜາດໃຫຍ່ຂອງພະເຈົ້າໄຊຍະວໍລະມັນທີ 7 ຢູ່ວັດທາດພູວຽງເໜືອ ແລະ ພະພຸດທະຮູບທີ່ຖ້ຳອັງຊ້າງແຂວງວຽງຈັນ. ສະຖາປັດຕະຍະກຳຂອມ ເຊັ່ນ ຫາສາດຫີນວັດພູຈຳປາສັກ, ເຮືອນຫີນທີ່ແຂວງສະຫວັນນະເຂດ ແລະ ສິລາຈາລຶກທີ່ຄົ້ນພົບຢູ່ເມືອງຊາຍຟອງ ແຂວງກຳແພງນະຄອນວຽງຈັນ ປີ ຄສ 1977 ຊຶ່ງເວົ້າເຖິງການສ້າງໂຮງພະຍາບານຂອງພະເຈົ້າ ໄຊຍະວໍລະມັນ ໃນປີ ຄສ 1186..."

ແຜນທີ່ 1: ອານາຈັກລາວລ້ານຊ້າງໃນສະຕະວັດທີ 14



1.2.2 ພັດທະນາການຂອງອານາຈັກລາວລ້ານຊ້າງ

ອານາຈັກລ້ານຊ້າງ ເປັນອານາຈັກໜຶ່ງທີ່ມີພັດທະນາການທາງການເມືອງສັງຄົມຢ່າງຕໍ່ເນື່ອງ ຄືກັນກັບອານາຈັກອື່ນໆ ໃນແຖບອາຊີຕາເວັນອອກສ່ຽງໃຕ້. ໂດຍທົ່ວໄປແລ້ວ ເຮົາສາມາດແບ່ງ ຂອບເຂດພັດທະນາການທາງສັງຄົມການເມືອງຂອງອານາຈັກລ້ານຊ້າງອອກເປັນ 3 ໄລຍະດັ່ງນີ້ :

1.2.2.1 ລ້ານຊ້າງ ສະໄໝຊ່ຽງທອງ

ອານາຈັກລ້ານຊ້າງສະໄໝຊ່ຽງທອງນີ້, ເປັນຊ່ວງທີ່ອານາຈັກລ້ານຊ້າງ ຢູ່ໃນໄລຍະເລີ່ມຕົ້ນ ແລະ ກຳລັງພັດທະນາຈາກສັງຄົມຂະໜາດນ້ອຍມາເປັນສັງຄົມຂະໜາດໃຫຍ່ທີ່ເປັນປຶກແຜ່ນ. ອານາຈັກ ລ້ານຊ້າງ ສະໄໝຊ່ຽງທອງນີ້ກຳນົດເອົາແຕ່ ປີ ຄສ 1357 ຈົນຮອດ ປີ ຄສ 1560 ແລະ ມີສູນກາງການ ປົກຄອງຢູ່ທີ່ເມືອງຊ່ຽງທອງ ແລະ ມີກະສັດປົກຄອງສືບຕໍ່ກັນມາ 18 ອົງ.

ตาลางที 1: ບັນດາກະສັດທີ່ຄອບຄອງລ້ານຊ້າງ ສະໄໝຊຸງທອງ

ລຳດັບ	ປີຄອງລາດ	ຊື່ກະສັດ	ນາມມະຍົດ
1	ຄສ 1353 -1373	ພະເຈົ້າຟ້າງຸ່ມ	ພະເຈົ້າຟ້າຫຼ້າທໍລະນີ ສີສັດຕະນາຄະນະຫຸດ
2	ຄສ 1374- 1417	ພະເຈົ້າອຸ່ນເຮືອນ	ພະຍາສາມແສນໄທ ໄຕພູວະນາຖາທິປັດ ສີສັດຕະນາຄະນະຫຸດ
3	ຄສ 1417- 1428	ພະຍາລ້ານຄຳແດງ	
	ຄສ 1428- 1430	ພະຍາພົມມະທັດ	ຄອງລາຊະບັນລັງ 10 ເດືອນ
	ຄສ 1430- 1431	ທ້າວຄຳເຕັ້ມ	ຄອງລາຊະບັນລັງ 5 ເດືອນ
	ຄສ 1431- 1432	ທ້າວພົ້ນໄຊ/ສີໄຊ	ຄອງລາຊະບັນລັງ 6 ເດືອນ
	ຄສ 1432- 1435	ທ້າວຜາໄດ/ໄຄ່ບົວບານ	ຄອງລາຊະບັນລັງ 3 ປີ
	ຄສ 1435- 1436	ທ້າວກ້ອນຄຳ	ຄອງລາຊະບັນລັງ 1 ປີກັບ 6 ເດືອນ
	ຄສ 1436- 1437	ທ້າວຍຸນ / ຍຸຄອນ	ຄອງລາຊະບັນລັງ 8 ເດືອນ
	ຄສ 1437- 1439	ທ້າວຄຳເກີດ	ຄອງລາຊະບັນລັງ 2 ປີ
4	ຄສ 1456- 1479	ທ້າວວັງບູລີ	ພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ
5	ຄສ 1479- 1487	ເຈົ້າແຫ່ນຄຳ	ພະເຈົ້າສຸວັນນະບັນລັງ
6	ຄສ 1487- 1496	ເຈົ້າຫຼ້າແສນໄຕ	ພະຍາຫຼ້າແສນໄຕພູວະນາດ
7	ຄສ 1497- 1500	ພະເຈົ້າຊົມພູ	
8	ຄສ 1500- 1520	ເຈົ້າວິຊຸນນະລາດ	ພະຍາວິຊຸນລາຊາໄຕພູວະນາທິປັດສີສັດຕະນາ ຄະນະຫຸດ
9	ຄສ 1521- 1550	ເຈົ້າໂພທິສາລາດ	ພະໂພທິສາຣະລາດ ມະຫາລາຊາທິປະຕິ ຈັກກະພັດພູມິນ ນໍຣິນທະລາດເຈົ້າ

ກ. ການຈັດຕັ້ງ ແລະ ປັບປຸງການປົກຄອງ ປີ ຄສ 1357-1479

1) ການປັບປຸງອຳນາດສັກດິນາລອມສູນ

ອານາຈັກລ້ານຊ້າງສະໄໝຊຸງທອງນີ້ ແມ່ນປົກຄອງດ້ວຍລະບອບສັກດິນາລອມສູນແບບກະຈາຍອຳນາດ. ກະສັດເປັນຜູ້ມີສິດເດັດຂາດໃນການແຕ່ງຕັ້ງ ຜູ້ເຂົ້າດຳລົງຕຳແໜ່ງສຳຄັນຕ່າງໆ ພາຍໃນອານາຈັກ ແລະ ເປັນຜູ້ມີສິດເດັດຂາດໃນການບໍລິຫານແຜ່ນດິນ. ການປົກຄອງໃນໄລຍະນີ້ ສ່ວນໃຫຍ່ ໃຊ້ຄຳສັ່ງ ຫຼື ພະລາຊະໂອງການຂອງເຈົ້າຊີວິດ ເປັນແນວທາງໃນການປະຕິບັດສົມທົບກັບ ຮີດ-ຄອງ ຊຶ່ງເອີ້ນວ່າ "ຂະນົບທຳນຽມ ຫຼື ປະເພນີ" ທີ່ອີງໃສ່ຫຼັກທຳຄະຕິຄຳສອນ ຂອງພຸດທະສາສະໜາ ມາເປັນຫຼັກໃນການປົກຄອງ ແລະ ຄຸ້ມຄອງສັງຄົມ. ການຈັດການປົກຄອງຂອງອານາຈັກລ້ານຊ້າງ ສະໄໝຊຸງທອງນີ້ ມີການປັບປຸງໃຫ້ເປັນລະບົບຊັດເຈນຂຶ້ນມາໂດຍຕະຫຼອດ ເພື່ອໃຫ້ມີຄວາມສອດຄ່ອງ ກັບການຂະຫຍາຍຕົວ ຂອງສັງຄົມໃນແຕ່ລະໄລຍະ ເຊັ່ນ:

- ການປັບປຸງການປົກຄອງ:

ສະໄໝການປົກຄອງຂອງພະເຈົ້າຟ້າງຸ່ມ ໂດຍສະເພາະພາຍຫຼັງສຳເລັດການທ້ອນໂຮມຫົວເມືອງລາວບູຮານເຂົ້າກັນເປັນອານາຈັກລາວລ້ານຊ້າງ ໃນປີ ຄສ 1357 ແລ້ວ ເຈົ້າຟ້າງຸ່ມໄດ້ຈັດແຈງການປົກຄອງອານາຈັກຄືນໃໝ່ ເພື່ອໃຫ້ມີຄວາມສອດຄ່ອງເໝາະສົມ ເຊັ່ນ: ການເລື່ອນຍົດຕຳແໜ່ງບຸກ

ຄົນທີ່ມີຄຸນງາມຄວາມດີ, ມີຜົນງານເຂົ້າຮ່ວມການດຳເນີນການທ້ອນໂຮມແຜ່ນດິນ ແລະ ສັບຊ້ອນ ເຂົ້າຮັບຕຳແໜ່ງທີ່ສຳຄັນຕ່າງໆ ຄື: ແຕ່ງຕັ້ງປູ່ລ້ຽງ (ອ້າຍວຽງຜາ) ເປັນແມ່ທັບໃຫຍ່ຂອງອານາຈັກລ້ານຊ້າງ, ແຕ່ງຕັ້ງໝື່ນກະບອງເປັນຮອງແມ່ທັບໃຫຍ່. ແຕ່ງຕັ້ງໝື່ນຫຼວງ, ພະຍາເມືອງຂວາ, ພະຍາເມືອງຊ້າຍ, ເຈົ້າພູນເໜືອ, ເຈົ້າພູນໃຕ້ເປັນແມ່ທັບ. ແຕ່ງຕັ້ງພະຍາໝື່ນໜ້າເປັນເຈົ້າຫໍແຫ່ນ ຫຼື ເຈົ້າພູມໜ້າ. ແຕ່ງຕັ້ງເຈົ້າໝື່ນນາເໜືອເປັນເຈົ້າຫໍຫຼັງຂຸນລາຊະວັດກຳຫຼັ້ງ. ແຕ່ງຕັ້ງນາຍຫຼວງເໜືອເປັນຂຸນພົນທະຫານເອກຜູ້ຮັກສານະຄອນຫຼວງ. ນອກຈາກນີ້, ຍັງມີຜູ້ອື່ນໆອີກທີ່ໄດ້ຮັບການແຕ່ງຕັ້ງ ແລະ ໄດ້ຖືກມອບໝາຍໃຫ້ໄປປົກຄອງຕາມຫົວເມືອງຂັ້ນຕ່າງໆ ຕາມພາລະບົດບາດຂອງຕົນ ແລະ ຖືກຕາມລະບຽບການປົກຄອງໃໝ່.

ແຕ່ມາຮອດສະໄໝ ການປົກຄອງຂອງພະຍາສາມແສນໄທ ລະບົບການປົກຄອງໃນຂັ້ນຫົວເມືອງຕ່າງໆ ໄດ້ມີການປັບປຸງໃໝ່ໃຫ້ສອດຄ່ອງ ດ້ວຍການແຕ່ງຕັ້ງລາຊະບຸດ ຂອງຕົນຂຶ້ນຮັບຕຳແໜ່ງສຳຄັນ ແລະ ໄປປົກຄອງບັນດາຫົວເມືອງສຳຄັນ ເຊັ່ນ: ແຕ່ງຕັ້ງ ທ້າວລ້ານຄຳແດງ ເປັນແສນຫຼວງ, ທ້າວ ລືໄຊ ໄປປົກຄອງວຽງກະບອງ, ທ້າວຄຳເຕັມຊ້າ ໄປປົກຄອງ ວຽງປາກທ້ວຍຫຼວງ, ທ້າວວັງບູຣີ ໄປປົກຄອງວຽງຈັນ ແລະ ທ້າວກ້ອນຄຳ ໄປປົກຄອງ ວຽງຜານ້ຳຮຸ່ງ-ຊຽງສາ. ຮູບແບບການປັບປຸງອຳນາດ ສັກດິນາແບບນີ້ ໄດ້ກາຍເປັນຫຼັກປະຕິບັດສືບຕໍ່ກັນມາຂອງກະສັດລາວລ້ານຊ້າງ ໃນແຕ່ລະອົງຕໍ່ມາ.

- ການຈັດລະບຽບການປົກຄອງຄົນໃໝ່

ເພື່ອແນໃສ່ເຮັດໃຫ້ການປົກຄອງເປັນອຳນາດລວມສູນ ບັນດາກະສັດທີ່ປົກຄອງລ້ານຊ້າງສະໄໝຊຽງທອງ ຈຶ່ງໄດ້ມີການຈັດແບ່ງການປົກຄອງ ອອກເປັນ 3 ລັກສະນະຄື: ຂັ້ນເຂື່ອນເມືອງ, ແຂວງເມືອງ ແລະ ຂອບເມືອງ.

- ການຈັດແບ່ງຖານະທາງສັງຄົມ

ສັງຄົມສະໄໝລ້ານຊ້າງຊຽງທອງ ໄດ້ມີການແບ່ງຊັ້ນຄົນອອກເປັນປະເພດໃຫຍ່ໆ ດັ່ງນີ້: ກະສັດ, ຂຸນນາງ ຂ້າລາຊະການ ແລະ ໄພ່. ນອກຈາກນີ້, ຍັງມີຊັ້ນຄົນພິເສດ ຄື ພະສົງ. ການຄຸ້ມຄອງສັງຄົມໃນໄລຍະນີ້ສ່ວນໃຫຍ່ ໃຊ້ລະບົບຮີດ-ຄອງປະສົມປະສານ ກັບພະລາຊະໂອງການຂອງເຈົ້າຊີວິດ ທີ່ອີງໃສ່ຫຼັກທຳຄະຕິຄຳສອນຂອງພຸດທະສາສະໜາ ມາເປັນເກນໃນການຄວບຄຸມການປະພຶດປະຕິບັດຂອງຄົນໃນສັງຄົມ.

2) ການປັບປຸງກຳລັງປ້ອງກັນອານາຈັກ

ການປັບປຸງກຳລັງປ້ອງກັນອານາຈັກ ເປັນບັນຫາສຳຄັນເພື່ອຄວາມໝັ້ນຄົງ ແລະ ມີອຳນາດລວມສູນ, ຊຶ່ງການປັບປຸງກຳລັງປ້ອງກັນອານາຈັກ ແມ່ນເລີ່ມຕົ້ນມາຕັ້ງແຕ່ສະໄໝການປົກຄອງ ຂອງພະເຈົ້າຟ້າງຸ່ມ. ໂດຍສະເພາະ ໃນສະໄໝການປົກຄອງຂອງພະເຈົ້າສາມແສນໄທ, ເພິ່ນໄດ້ດຳເນີນການສຳຫຼວດພົນເສິກທົ່ວອານາຈັກຄັ້ນໃໝ່, ເຊິ່ງຜົນການສຳຫຼວດໃນພົບວ່າ ໃນທົ່ວອານາຈັກ ມີຊາຍສະກັນທັງໝົດປະມານ 700,000 ຄົນ ໃນນັ້ນເປັນເຜົ່າໄຕລາວ ປະມານ 300,000 ຄົນ. ຈາກນັ້ນ, ກໍດຳເນີນການຈັດຕັ້ງ ແລະ ປັບປຸງກຳລັງພົນເສິກ ໂດຍຈັດແບ່ງເປັນສອງປະເພດ ດັ່ງນີ້:

- ກອງທັບຫຼວງເປັນກອງທະຫານ ທີ່ຂຶ້ນກັບສູນກາງໂດຍກົງ, ມີຈຳນວນພົນທັງໝົດປະມານ 300.000 ຄົນ ໂດຍແບ່ງອອກເປັນ 5 ຫົວເສິກ (ຫົວເສິກລະ 60.000ຄົນ); ແຕ່ລະຫົວເສິກ ແບ່ງເປັນສາມປະເພດ ຄື: ພົນເສິກສູ້ຮົບ (ພົນລຳຫອກຫົວເສິກ), ພົນເສິກລຳລຽງ (ພົນຫາບເຂົ້າໄຖ່ເຂົ້າຖົງ) ແລະ ພົນເສິກແນວຫຼັງ (ພົນເຝົ້າວຽງ).

- ກອງທະຫານທ້ອງຖິ່ນ ເປັນກອງທະຫານທີ່ປະຈຳຢູ່ໃນແຕ່ລະເມືອງ ເຊັ່ນ: ຫົວເສິກວຽງຈັນ, ຫົວເສິກເມືອງພວນ, ຫົວເສິກວຽງກະບອງ ແລະ ຫົວເສິກອື່ນໆ ເຊິ່ງເປັນກອງໜູນໃຫ້ແກ່ກອງທັບໜ້ວງໃນຍາມເກີດເສິກສົງຄາມ.

3) ການແກ້ໄຂຂໍ້ຂັດແຍ່ງພາຍໃນ

ອານາຈັກລາວລ້ານຊ້າງ ພາຍຫຼັງການສິ້ນພະຊົນຂອງພະຍາລ້ານຄຳແດງ ໃນປີ ຄສ 1428 ສະຖານະການພາຍໃນລາຊະສຳນັກແຫ່ງນະຄອນຊ່ຽງທອງ ເລີ່ມມີຄວາມເຄັ່ງຕຶງຂຶ້ນ ຊຶ່ງສະຖານະການດັ່ງກ່າວ ໄດ້ນຳໄປສູ່ຄວາມຫາຍນະຂອງບັນດາກະສັດທີ່ຂຶ້ນຄອງລາດ ໃນຊ່ວງໄລຍະນັ້ນ. ໂດຍສະເພາະ ນັບແຕ່ ປີ ຄສ 1428 ຫາ ປີ ຄສ 1437 ມີເຊື້ອສາຍກະສັດຖືກປະຫານຊີວິດເຖິງ 7 ອົງ ຍ້ອນຄວາມມັກໃຫຍ່ໄຝ່ສູງ ຂອງບັນດາຂຸນນາງໃນລາຊະສຳນັກທີ່ຕ້ອງການອຳນາດລາຊະບັນລັງ. ສະຖານະການດັ່ງກ່າວນີ້ແກ່ຍາວເປັນຫຼາຍປີ ຈົ່ງສາມາດແກ້ໄຂໃຫ້ກັບຄືນສູ່ສະພາບເດີມ ພາຍໃຕ້ການນຳພາຂອງກຸ່ມນັກປາດທັງສີ່ ສົມທົບກັບພະສົງອົງຄະເຈົ້າ ໄດ້ທຳການໂຄສະນາຊົມຊວນໃຫ້ເສນາມຸນຕີ ແລະ ສາມັນຊົນຮ່ວມເປັນກຳລັງຕໍ່ຕ້ານ ແລະ ທຳການຈັບກຸມເອົານາງມະຫາເທວີ ແລະ ອ້າຍວຽງຜາຜູ້ເປັນຕົ້ນເຫດຂອງຄວາມອຸ້ນວ້າຍ ແລະ ພັກພວກໄປລົງໂທດປະຫານຊີວິດ.

ຫຼັງຈາກນັ້ນ, ກໍໄດ້ແຕ່ງຕັ້ງຄະນະທູດລົງມາເຊີນເອົາ ເຈົ້າວັງບູຣີ (ລູກພະຍາສາມແສນໄທ) ເຈົ້າເມືອງວຽງຈັນ ໄປຂຶ້ນຄອງລາດທີ່ນະຄອນຊ່ຽງທອງ ແລະ ໄດ້ຮັບຖວາຍພະນາມວ່າ: ພະໄຊຍະຈັກກະພັດ ແຜ່ນແຜ້ວ. ພາຍຫຼັງຂຶ້ນຄອງລາດ ພະອົງໄດ້ດຳເນີນການປັບປຸງກົງຈັກການປົກຄອງລ້ານຊ້າງຄືນໃໝ່ ເຊັ່ນ: ທຳການແຕ່ງຕັ້ງຕຳແໜ່ງທາງຝ່າຍສົງ ແລະ ຂ້າລາຊະການບໍລິຫານ ໂດຍໄດ້ແຕ່ງຕັ້ງລາຊະບຸດຂອງຕົນໄປປົກຄອງເມືອງຕ່າງໆ. ພ້ອມດຽວກັນນັ້ນ, ກໍໄດ້ອອກຄຳສັ່ງໃຫ້ດຳເນີນການສຳຫຼວດພົນເສິກຄືນໃໝ່ ເອີ້ນວ່າ: ຕາພົນເສິກ ຜ່ານການສຳຫຼວດຮູ້ວ່າ ທົ່ວອານາຈັກລ້ານຊ້າງມີພົນເສິກ ປະມານ 2.000.000 ຄົນ.

ຂ. ການຕໍ່ສູ້ຕ້ານການຮຸກຮານຂອງສັກດິນາອານາມ

ກ້າວເຂົ້າສູ່ຕອນກາງຂອງສະຕະວັດທີ XV ການພົວພັນລະຫວ່າງສັກດິນາລາວລ້ານຊ້າງ ກັບສັກດິນາອານາມໄດ້ມີຄວາມເຄັ່ງຕຶງຈົນກ້າວໄປສູ່ການເກີດສົງຄາມ ດ້ວຍການເປີດສາກສົງຄາມຮຸກຮານ ລ້ານຊ້າງ ຂອງສັກດິນາອານາມ ໃນປີ ຄສ 1479. ສາເຫດຂອງສົງຄາມຮຸກຮານອານາຈັກລ້ານຊ້າງຄັ້ງນີ້ມາຈາກຫຼາຍປັດໄຈດັ່ງນີ້:

- ເຫດການ ປີ ຄສ 1421 ຊຶ່ງເປັນເຫດການທີ່ເກີດຂຶ້ນກ່ອນໜ້າສົງຄາມປະມານ 50 ກວ່າປີ ຄື ເຈົ້າຊີວິດ ເລເລີ ແຫ່ງອານາຈັກອານາມ ໄດ້ຂໍຄວາມຊ່ວຍເຫຼືອທາງດ້ານກຳລັງ ຈາກກະສັດລ້ານຊ້າງ ໃຫ້ໄປຊ່ວຍຕ້ານທານການບຸກໂຈມຕີ ຂອງກອງທັບຈີນ (ລາຊະວົງມິງ) ທີ່ສະໜັບສະໜູນກຸ່ມຫວຽດກະບົດ. ພະເຈົ້າລ້ານຄຳແດງ ກໍໄດ້ຕອບສະໜອງຕາມຄຳຮ້ອງຂໍ ໂດຍໄດ້ແຕ່ງໃຫ້ ແສນຫຼວງຊ່ຽງລໍ ນຳກຳລັງພົນເສິກ 30.000 ຄົນ ພ້ອມຊ້າງເສິກ 100 ໂຕ ໄປຊ່ວຍທະຫານຂອງເລເລີ; ແຕ່ໃນຂະນະທີ່ເຄື່ອນກຳລັງໄປນັ້ນ ໄດ້ຖືກກຸ່ມກະບົດອານາມ ຊື່ວ່າ ລໍວັນລວດ ໄດ້ທຳອຸບາຍມາຮັບເອົາກອງທັບລ້ານຊ້າງ ໄປບຸກຕີເຂົ້າແນວຫຼັງຂອງທະຫານອານາມ. ແຕ່ສຸດທ້າຍກອງທັບລ້ານຊ້າງກໍຮູ້ຕົນເອງວ່າ ຖືກຫຼອກແລ້ວ ກໍຫັນກຳລັງມາສົມທົບກັບກອງທັບຂອງເລເລີແຫ່ງອານາມຕໍ່ສູ້ກັບຈີນ ຈົນເຮັດໃຫ້ ກອງທະຫານອານາມ ເປັນຝ່າຍໄດ້ຮັບໄຊຊະນະ. ເຫດການຄັ້ງນີ້, ຄະນະທູດຂອງເລເລີ ກໍໄດ້ຮັບຮູ້ວ່າມັນເປັນກົນອຸບາຍຂອງສັດຕູ ທີ່ຫວັງທຳລາຍຄວາມສຳພັນ ບໍ່ແມ່ນເຈຕະນາຂອງຝ່າຍລ້ານຊ້າງແຕ່ຢ່າງໃດ.

ແຕ່ວ່າ ຜົນຂອງເຫດການນີ້ ກໍໄດ້ກາຍເປັນສາເຫດເຮັດໃຫ້ສາຍສຳພັນ ລະຫວ່າງ ອານາມ-ລ້ານຊ້າງ ເລີ່ມຕົ້ນ ບໍ່ມີຄວາມແຈ່ມໃສເໝືອນແຕ່ກ່ອນ.

- ເຫດການ ປີ ຄສ 1471 ຄືການປະຕິເສດການຊ່ວຍເຫຼືອກະສັດອານາມຂອງພະເຈົ້າ ໄຊຍະຈັກກະພັດແຜ່ນແຜ້ວ ກະສັດແຫ່ງອານາຈັກລາວລ້ານຊ້າງ ໃນການນຳເອົາກຳລັງໄປຊ່ວຍ ເລແທ້ງຕົ໋ງ ເພື່ອບຸກໂຈມຕີບຸງດຍຶດອານາຈັກຈາມປາ. ທັງນີ້ ກໍເນື່ອງຈາກວ່າ ການຂໍຮ້ອງດັ່ງກ່າວ ບໍ່ແມ່ນເພື່ອປ້ອງກັນຕົວ ແຕ່ຫາກແມ່ນ ເພື່ອປາບປາມຊາວຈາມປາຜູ້ ເຊິ່ງເປັນອານາຈັກໜຶ່ງຕ່າງຫາກ ແລະ ມີການພົວພັນແບບບ້ານໃກ້ເຮືອນຄຽງກັບຊາວລ້ານຊ້າງ. ສະນັ້ນ, ພະໄຊຍະຈັກກະພັດແຜ່ນແຜ້ວ ຈຶ່ງໄດ້ຕອບປະຕິເສດ ເຊິ່ງເຫດການນີ້ໄດ້ເຮັດໃຫ້ຄວາມສຳພັນ ລະຫວ່າງ ລ້ານຊ້າງ-ອານາມຈືດຈາງ ຫຼື ຂຸດໂຂມລົງ. ປະກອບກັບປະຊາຊົນລ້ານຊ້າງ ຍັງໄດ້ໃຫ້ການຊ່ວຍເຫຼືອແກ່ກອງທະຫານ ແລະ ປະຊາຊົນຈາມປາ ທີ່ຫຼົບໜີຈາກການປາບປາມຂອງກອງທັບອານາມ ເຂົ້າມາໃນດິນແດນລ້ານຊ້າງ ເພື່ອຂໍລີ້ໄພສົງຄາມ

ໃນປີ ຄສ 1471. ກອງທັບຫຼວງອານາມ ກໍໄດ້ໄລ່ຕິດຕາມຂ້າມຊາຍແດນເຂົ້າມາຮອດເມືອງ ຄຳເກີດ ແລະ ຄຳມ່ວນຫຼາຍຄັ້ງ; ແຕ່ກໍຖືກກອງທະຫານລ້ານຊ້າງຕີຕ້ານຂັບໄລ່ອອກໄປຈາກຊາຍແດນ ລ້ານຊ້າງທຸກຄັ້ງ. ເຫດການນີ້ ໄດ້ສ້າງຄວາມບໍ່ພໍໃຈຢ່າງໃຫຍ່ຫຼວງໃຫ້ແກ່ເລແທ້ງຕົ໋ງ ໂດຍກ່າວຫາວ່າ ຝ່າຍລ້ານຊ້າງ ໄດ້ເຂົ້າຂ້າງປະຊາຊົນຈາມປາ ຊຶ່ງເປັນການເຂົ້າຂ້າງສັດຕູຂອງອານາມ.

- ຄວາມຕ້ອງການຂະຫຍາຍດິນແດນ ແລະ ອິດທິພົນຂອງສັກດິນາອານາມ ໂດຍສະເພາະ ຫຼັງຈາກທີ່ສຳເລັດໃນການບຸງດຍຶດອານາຈັກຈາມປາແລ້ວ, ໄດ້ເຮັດໃຫ້ສັກດິນາອານາມ ມີຄວາມ ເຂັ້ມແຂງທີ່ສຸດ ໃນລັດຊະການເລແທ້ງຕົ໋ງ. ສະນັ້ນ, ຈຶ່ງຕ້ອງການຂະຫຍາຍອິດທິພົນດິນແດນໃຫ້ກວ້າງ ຂວາງໂດຍເປົ້າໝາຍທຳອິດ ກໍແມ່ນແນໃສ່ບັນດາລັດທີ່ຢູ່ໃກ້ຄຽງ ຄື ລ້ານຊ້າງເປັນຕົ້ນ ຊຶ່ງໄດ້ກາຍ ເປັນສາເຫດໂດຍກົງ ໃນການເຮັດສົງຄາມຮຸກຮານອານາຈັກລາວລ້ານຊ້າງ ໃນປີ ຄສ 1479.

ໂດຍປະຕິບັດຕາມແຜນຂະຫຍາຍອານາເຂດ ແລະ ອິດທິພົນເໜືອດິນແດນຊາດອື່ນມາ ໃນປີ ຄສ 1479 ເລແທ້ງຕົ໋ງສັກດິນາອານາມ ໄດ້ນຳເອົາກຳລັງພົນເສິກຢ່າງຂະໜາດໃຫຍ່ ບຸກໂຈມ ຕີເຂົ້າອານາຈັກລາວລ້ານຊ້າງເປັນ 5 ປີກ ມຸ່ງໜ້າເຂົ້າສູ່ເມືອງຊຽງທອງ ຊຶ່ງລວມມີກຳລັງພົນທັງໝົດ 650,000 ຄົນ[23].

ຕໍ່ໜ້າສະພາບການດັ່ງກ່າວນັ້ນ, ຝ່າຍນະຄອນຊຽງທອງ ເມື່ອຮູ້ຂ່າວການເຄື່ອນທັບຂອງກອງ ທັບ ອານາມບຸກໂຈມຕີເຂົ້າດິນແດນລ້ານຊ້າງ ກໍຟ້າວເປີດກອງປະຊຸມປຶກສາຫາລື ເພື່ອຫາວິທີປ້ອງກັນ ອານາຈັກ ໂດຍມີການປະຊຸມກັນ ແລະ ໄດ້ແບ່ງປັນໜ້າທີ່ຮັບຜິດຊອບ. ການສູ້ຮົບໄດ້ດຳເນີນໄປຢ່າງດຸ ເດືອດ, ເມື່ອກອງທັບຫຼວງອານາມ ທີ່ນຳພາໂດຍຍອດຂຸນພົນໄຕໜຶ (ເລໂຕຈຸກ) ບຸກຍຶດໄດ້ເມືອງພອນ ແລ້ວກໍເຄື່ອນທັບບຸກຕີເຂົ້ານະຄອນຊຽງທອງ. ໃນການບຸກຍຶດນະຄອນຊຽງທອງມີ 3 ສະໜາມຮົບໃຫຍ່ ຄື: ສະໜາມຮົບທີ 1 ຄື ສະໜາມຮົບຕີນພູມຸງ ຊຶ່ງເປັນສະໜາມທີ່ມີການສູ້ຮົບກັນດຳເນີນໄປຢ່າງດຸເດືອດ ຕະຫຼອດ 3 ວັນ 3 ຄືນ. ກອງທັບລ້ານຊ້າງ ບໍ່ສາມາດຂັບໄລ່ກອງທັບອານາມໃຫ້ຖອຍໄດ້ ຈຶ່ງຈຳເປັນ ຖອຍມາສົມທົບກອງທັບຫຼວງຢູ່ທົ່ງນາເຂົ້າຈ້າວ. ສະໜາມຮົບທີ 2 ຄື ສະໜາມຮົບທີ່ກອງທັບລ້ານຊ້າງ ຕັ້ງສະກັດໃນສາມດ່ານ ຄື: ຮ່ອມພູຜາເຜິ້ງ, ທົ່ງນາມຸງຄຸນ ແລະ ທົ່ງນາໄຮ່ດຽວ. ການສູ້ຮົບ ດຳເນີນໄປ ຢ່າງດຸເດືອດ, ເຖິງວ່າກອງທະຫານອານາມຖືກຂ້າຕາຍຢ່າງຫຼວງຫຼາຍ ແຕ່ກໍເຄື່ອນໜູນເຂົ້າມາບໍ່ໄດ້ຂາດ. ແຕ່ໃນຂະນະດຽວກັນກອງທະຫານລ້ານຊ້າງ ກໍໄດ້ສູນເສຍກຳລັງພົນຢ່າງຫຼວງຫຼາຍຄືກັນ ຈຶ່ງຈຳຕ້ອງ ຖອຍມາຮັບຢູ່ທົ່ງນາເຂົ້າຈ້າວ ເຊິ່ງເປັນດ່ານສຸດທ້າຍຂອງການຮັກສາ ນະຄອນຊຽງທອງ. ສະໜາມຮົບ ທີ 3 ຄືສະໜາມຮົບເກີດຂຶ້ນທີ່ທົ່ງນາເຂົ້າຈ້າວ (ບໍລິເວນເດີ່ນວັດວໍຊຸນໃນປັດຈຸບັນ) ແລນຫຼວງຊຽງລໍ

[23] ມະຫາຄຳ ຈຳປາແກ້ວມະນີ (ປີ ຄສ 1980: 17-18).

ພ້ອມດ້ວຍຊຸນພົນ: ນໍຣະສິງ, ນໍຣະເດດ, ນໍຣະຣາດ, ນໍຣະນາຣາຍ, ໝື່ນບຸນ ແລະ ໝື່ນໜ່ວງ ໄດ້ນຳພາ ທະຫານຂອງຕົນ ຕໍ່ສູ້ກັບກອງທະຫານອານາມ ຢ່າງພິລະອາດຫານທີ່ສຸດ ເຮັດໃຫ້ນາຍ ແລະ ພົນ ທະຫານຂອງອານາມ ຖືກຂ້າຕາຍເປັນຈຳນວນໜ່ວງໜາຍ. ແຕ່ເຖິງແມ່ນວ່າ ກອງທັບລ້ານຊ້າງມີຄວາມ ອາດຫານເກັ່ງກ້າປານໃດ ກໍບໍ່ສາມາດສະກັດກັ້ນການບຸກຍຶດຂອງກອງທັບອານາມ ທີ່ມີກຳລັງໜູນຫຼັງ ເພີ່ມເຕີມມາຢ່າງບໍ່ຂາດໄລຍະ; ໃນທີ່ສຸດ ກໍຈຳຕ້ອງຖອຍທັບມາທາງພະລາຊະວັງຊຽງທອງ ແລະ ຂ້າມ ແມ່ນ້ຳຂອງ ເພື່ອເຄື່ອນລົງໄປສົມທົບກັບກຳລັງ ຂອງເຈົ້າແຫ່ນຄຳຜູ້ເປັນລາຊະບຸດ ຂອງເຈົ້າໄຊຍະ ຈັກກະພັດແຜ່ນແຜ້ວ ທີ່ຕັ້ງທັບສະກັດຖ້ຳຢູ່ທາງດ່ານຊ້າຍ-ຊຽງຄານ.

ສຸດທ້າຍກອງທະຫານອານາມ ກໍສາມາດຍຶດເອົານະຄອນຊຽງທອງໄດ້, ແຕ່ດ້ວຍຄວາມ ປະໝາດ, ອິດເມື່ອຍ ແລະ ເຫຼີງໃຈ ກອງທະຫານອານາມ ເລີຍຖືກກອງທັບອານາຈັກລາວລ້ານຊ້າງ ທີ່ນຳໂດຍເຈົ້າແຫ່ນຄຳທີ່ທຳການດັກຊຸ້ມຢູ່ນັ້ນ ຕີແຕກກະຈັດກະຈາຍ ແລ້ວທຳການຂັບໄລ່ກອງທະຫານ ອານາມອອກຈາກນະຄອນຊຽງທອງ ແລະ ສືບຕໍ່ຂັບໄລ່ອອກຈົນສຸດເຂດແດນອານາຈັກລາວລ້ານຊ້າງ.

ຜ່ານສົງຄາມຄັ້ງນີ້, ມັນໄດ້ເຮັດໃຫ້ກອງທັບອານາມ ໄດ້ຮັບຄວາມເສຍຫາຍຢ່າງໜັກໜ່ວງ ທາງດ້ານກຳລັງພົນເຫຼືອກັບຄືນປະເທດ ປະມານ 20.000 ຄົນ ໂດຍສະເພາະສົງຄາມຄັ້ງນີ້ ເຮັດໃຫ້ ກະສັດ ແຫ່ງອານາມຍອມຮັບວ່າ "ແຕ່ນີ້ເມືອໜ້າຢ່າຊອນຂ້າໄປຕີລາວອີກ". ໃນຂະນະດຽວກັນ ທາງ ຝ່າຍອານາຈັກລ້ານຊ້າງ ກໍໄດ້ຮັບຄວາມເສຍຫາຍທັງຊີວິດ ແລະ ຊັບສິນ ຄືກັນ ໂດຍສະເພາະແມ່ທັບ, ຊຸນພົນ ແລະ ທະຫານຫຼາຍຄົນໄດ້ເສຍສະຫຼະຊີວິດ ເພື່ອຮັກສາບ້ານເກີດ ເມືອງນອນ.

ຄ. ການສ້າງສາ ແລະ ພັດທະນາອານາຈັກ

ພາຍຫຼັງສິ້ນສຸດສົງຄາມຮຸກຮານ ຂອງສັກດິນາອານາມແລ້ວ ອານາຈັກລາວລ້ານຊ້າງໄດ້ກັບ ມາມີຄວາມເຂັ້ມແຂງອີກຄັ້ງ ຈົນເປັນທີ່ເກງຂາມຂອງອານາຈັກອ້ອມຂ້າງ. ຕະຫຼອດໄລຍະແຕ່ ປີ ຄສ 1480-1550 ອານາຈັກລ້ານຊ້າງ ມີຄວາມເຂັ້ມແຂງທາງດ້ານການປົກຄອງ ກໍຄືການປ້ອງກັນອານາຈັກ ອັນໄດ້ເປັນເງື່ອນໄຂພື້ນຖານໃຫ້ເສດຖະກິດ, ສັງຄົມ, ວັດທະນະທຳໄດ້ຮັບການປັນປຸງເສີມຂະຫຍາຍ ແລະ ມີຄວາມເຂັ້ມແຂງໃນຫຼາຍດ້ານ ເຊັ່ນ:

- ດ້ານເສດຖະກິດ:

ການພັດທະນາສ້າງສາເສດຖະກິດ ຂອງອານາຈັກລ້ານຊ້າງໃນຊ່ວງນີ້ ແມ່ນພັດທະນາການ ມາຈາກພື້ນຖານເສດຖະກິດການກະສິກຳ ທີ່ເພິ່ງພາທຳມະຊາດ, ຊຶ່ງເປັນເສດຖະກິດຂະໜາດນ້ອຍ ທີ່ມີລັກສະນະກະແຈກກະຈາຍ ແບບກຸ້ມຕົນເອງເພິ່ງຕົນເອງ. ເຖິງແມ່ນວ່າ ລັດຈະມີແຜນການສົ່ງເສີມ ແລະ ຂະຫຍາຍເນື້ອທີ່ເຮັດການຜະລິດ ແຕ່ກໍຍັງຂຶ້ນກັບທຳມະຊາດເປັນສ່ວນໃຫຍ່. ການກະສິກຳ ປະກອບມີ ການປູກຝັງ, ການຫາປາ, ການລ້ຽງສັດ ແລະ ການເກັບຂອງປ່າ. ການປູກຝັງສ່ວນໃຫຍ່ ແມ່ນການເຮັດນາດຳ, ການເຮັດສວນ ແລະ ການເຮັດໄຮ່.

ການຫັດຖະກຳຂອງລ້ານຊ້າງໃນສະໄໝຊຽງທອງ ປະກອບມີ ຫັດຖະກຳຕ່ຳແຜ່ນ, ປັ້ນດິນ ເຜົາ, ປະດິດເຄື່ອງເອ້ຍ້ອງ, ຄ້ວດລາຍ ແລະ ໜ່ອມໂລຫະ.

ໃນດ້ານການຄ້າຂອງລ້ານຊ້າງສະໄໝຊຽງທອງ ມີສອງປະເພດ ຄືການຄ້າພາຍໃນ ແລະ ການຄ້າພາຍນອກ. ການຄ້າພາຍໃນໝາຍເຖິງ ການຄ້າລະຫວ່າງຫົວເມືອງພາຍໃນອານາຈັກ ແລະ ສິນຄ້າ ທີ່ນຳມາແລກປ່ຽນຄ້າຂາຍໂດຍທົ່ວໄປ ແມ່ນຜົນຜະລິດທາງດ້ານກະສິກຳ ແລະ ຫັດຖະກຳ ເຊັ່ນ: ເຂົ້າ, ສາລີ, ເປັດ, ໄກ່, ໝູ, ສັດປ່າ, ຖົ່ວ, ຝ້າຍ, ໄໝ, ແຜ່ນແພ, ປ່ານ ແລະ ອື່ນໆ. ການຄ້າສ່ວນໃຫຍ່ ແມ່ນເອກະຊົນເປັນຜູ້ດຳເນີນການ; ສ່ວນລັດ ໜຸງແຕ່ເກັບພາສີ ຫຼື ຊື້ສິນຄ້າບາງຊະນິດ ໃນລາຄາບັງຄັບ ເຂົ້າໃນຄັງໜວງ. ສ່ວນການຄ້າພາຍນອກ ໝາຍເຖິງ ການຄ້າຕ່າງແດນກັບອານາຈັກຕ່າງໆ ຊຶ່ງ

ໃນໄລຍະນີ້ ອານາຈັກລາວລ້ານຊ້າງ ໄດ້ມີການຄ້າຂາຍແລກປ່ຽນກັບອານາຈັກໃກ້ຄຽງ ເຊັ່ນ: ລ້ານນາ, ຈີນ, ດາຍຫວຽດ, ສະຫຍາມ, ກຳປູເຈຍ ແລະ ພະມ້າເປັນຕົ້ນ. ຕາມຫຼັກຖານທາງປະຫວັດສາດຂອງອານາຈັກໃກ້ຄຽງ ບອກໃຫ້ຮູ້ວ່າ ອານາຈັກລ້ານຊ້າງສະໄໝຊຽງທອງ ມີການພົວພັນການຄ້າພາຍນອກກັບອານາຈັກຕ່າງໆ ມາແຕ່ດົນນານ ໂດຍຜ່ານສີ່ເສັ້ນທາງຄືທາງຕາເວັນຕົກ, ທາງເໜືອ, ທາງຕາເວັນອອກ ແລະ ທາງໃຕ້ ໂດຍມີ "ນະຄອນຊຽງທອງ" ເປັນລັດສູນກາງການຄ້າພາຍໃນພາກພື້ນທະວີບ. ສິນຄ້າຄັງຫຼວງ ລວມມີ ງາຊ້າງ, ເຂົາກວາງ, ຄັ່ງ, ຍານ, ຂີ້ຊີ, ໝາກແໜ່ງ, ນ້ຳເງິນ, ໜັງສັດ ແລະ ອື່ນໆ ຊຶ່ງສິນຄ້າເຫຼົ່ານີ້ ລັດໄດ້ຫ້າມປະຊາຊົນທົ່ວໄປ ທຳການພົວພັນຄ້າຂາຍ ກັບຄົນຕ່າງປະເທດໂດຍກົງ, ມີພຽງແຕ່ລັດເທົ່ານັ້ນ ທີ່ມີສິດເປັນຜູ້ຈຳໜ່າຍສິນຄ້າຄັງຫຼວງທີ່ກ່າວມານັ້ນ ໃຫ້ກັບຊາວຕ່າງດ້າວ.

ລາຍຮັບຂອງອານາຈັກໄດ້ຈາກການເກັບສ່ວຍ, ການຄ້າຂາຍ-ແລກປ່ຽນ ແລະ ການຂາຍສິນຄ້າ ໃນຄັງຫຼວງ ຊຶ່ງສິນຄ້າເຫຼົ່ານີ້ ແມ່ນໄດ້ມາຈາກການທີ່ບັນດາເມືອງທີ່ຂຶ້ນກັບລ້ານຊ້າງໄດ້ສົ່ງບັນນາການປະຈຳປີ ຫຼື 3 ປີຕໍ່ເທື່ອຕາມທຳນຽມຂອງອຳນາດສັກດິນາ. ເຄື່ອງບັນນາການລວມມີເງິນ, ຄຳ, ດອກໄມ້ເງິນ ຫຼື ດອກໄມ້ຄຳ, ນໍແຮດ, ງາຊ້າງ, ແຜ່ນແພ, ຊ້າງ, ມ້າ, ເຂົາສັດ, ເຂົ້າ, ຖົ່ວ, ງາ ແລະ ອື່ນໆ.

- ດ້ານສັງຄົມ ແລະ ວັດທະນະທຳ

ສັງຄົມສະໄໝລ້ານຊ້າງຊຽງທອງ ໄດ້ມີການແບ່ງຊັ້ນຄົນ ອອກເປັນປະເພດໃຫຍ່ໆ ດັ່ງນີ້: ກະສັດ, ຊຸນນາງ ຂ້າລາຊະການ ແລະ ໄພ່. ນອກຈາກນີ້, ຍັງມີຊັ້ນຄົນພິເສດ ຄື ພະສົງ. ການຄຸ້ມຄອງສັງຄົມໃນໄລຍະນີ້ ສ່ວນໃຫຍ່ໃຊ້ລະບົບຮີດ-ຄອງ ປະສົມປະສານກັບພະລາຊະໂອງການຂອງເຈົ້າຊີວິດ ທີ່ອີງໃສ່ຫຼັກທຳຄະຕິຄຳສອນຂອງພຸດທະສາສະໜາ ມາເປັນເກນໃນການຄວບຄຸມການປະພຶດປະຕິບັດຂອງຄົນໃນສັງຄົມ. ນັບແຕ່ ປີ ຄສ 1480-1550 ເປັນຊ່ວງທີ່ອານາຈັກລາວລ້ານຊ້າງມີຄວາມສະຫງົບສຸກ. ສະນັ້ນ, ມັນຈຶ່ງເປັນເງື່ອນໄຂສະດວກໂດຍພື້ນຖານ ໃຫ້ແກ່ການຂະຫຍາຍວັດທະນະທຳ-ສັງຄົມ ຂອງປະຊາຊົນລ້ານຊ້າງ. ໂດຍພື້ນຖານແລ້ວ, ການພັດທະນາສັງຄົມ-ວັດທະນະທຳ ແມ່ນຕິດພັນກັບການສົ່ງເສີມ

ເຜີຍແຜ່ສາສະໜາ. ສະນັ້ນ, ວັດຈຶ່ງມີບົດບາດເປັນສູນກາງວັດທະນະທຳ, ເປັນໂຮງຮຽນ ແລະ ເປັນສູນກາງເຜີຍແຜ່ສິລະປະຂອງປະຊາຊົນ. ໃນໄລຍະນີ້, ໄດ້ເກີດມີນັກປາດ, ອາຈານ, ນັກພາສາສາດ ທີ່ຮູ້ເລິກໃນສາຂາພາສາປາລີ-ສັນສະກິດ, ມີທັງນັກປາດທີ່ເປັນພະສົງ ແລະ ສາມັນຊົນ. ນັບວ່າເປັນຄັ້ງທຳອິດ ທີ່ທາງການໄດ້ມີການໃຫ້ເງິນເດືອນແກ່ຄູສອນ ຄືກັບຂ້າລາຊະການທົ່ວໄປ.

ໃນໄລຍະດັ່ງກ່າວນີ້ ປາກົດມີຜົນງານທາງດ້ານການຂີດຂຽນຫຼາຍຢ່າງປາກົດເດັ່ນຂຶ້ນ ເຊັ່ນ: ໜັງສື (ຕຳນານ) ຂຸນບູຣົມ ຫຼື ພົງສາວະດານລ້ານຊ້າງສະບັບທຳອິດຂຽນໂດຍ ພະມະຫາເທບຫຼວງ ຊຶ່ງເປັນທຳມະເສນາ ຢູ່ວັດວິຊຸນ ແລະ ຄະນະ. ນອກຈາກນີ້, ຍັງມີການແປໜັງສືຄຳພີຕ່າງໆ ເຊັ່ນ ຄຳພີປັນຈະຕັນຕະລະ ທີ່ແປຈາກພາສາບາລີ-ສັນສະກິດ ມາເປັນພາສາລາວໂດຍຜູ້ແປ ມີຊື່ວ່າ ພະສັງຄະລາຊາວິຊຸນລະມະຫາວິຫານ.

ໄປຄຽງຄູ່ກັບການຂີດຂຽນ ວຽກງານການກໍ່ສ້າງກິດຈະກຳຕ່າງໆ ທາງດ້ານສາສະໜາ ໃນໄລຍະນີ້ໄດ້ມີການຂະຫຍາຍຕົວ ເຊັ່ນ: ການກໍ່ສ້າງປູຊະນີຍະສະຖານທີ່ສຳຄັນ ຄື ວັດວິຊຸນ ພ້ອມທັງພະເຈດີປະທຸມ[24] ເຊິ່ງສ້າງຂຶ້ນ ໃນປີ ຄສ 1503-1504. ສິ່ງທີ່ໂດດເດັ່ນທາງດ້ານວັດທະນະທຳ ກໍຄືການສົ່ງເສີມ ບົດບາດຂອງພຸດທະສາສະໜາ ເຂົ້າມາປ່ຽນແທນບົດບາດຂອງໝໍຜີ ທີ່ຍັງຄອບງຳສັງຄົມລ້ານຊ້າງໃນໄລຍະນັ້ນ ຄື ໄດ້ມີພະລາຊະອົງການຂອງພະໂພທິສາລະຣາດ ໃນປີ ຄສ 1527 ໃຫ້ປະກາດລົບລ້າງການນັບຖື ຜີຟ້າ, ຜີແຖນ ໂດຍໄດ້ມີຄຳສັ່ງໃຫ້ລົບລ້າງຮີດຖອນ ຫໍຜີ ຫໍຊົ່ງຟ້າ ຊົ່ງແຖນ ຂອງ

[24] ເຈດີປະທຸມແປວ່າ ທາດດອກບົວໃຫຍ່ແຕ່ຄົນທັ່ງຫຼາຍມັກເອີ້ນວ່າ ທາດໝາກໂມ.

ເຈົ້າຊີວິດ ຖົ້ມແລ້ວໃຫ້ສ້າງວັດຂອງພຸດທະສາສະໜາຂຶ້ນແທນ ໂດຍໃຫ້ຊື່ວ່າ ວັດສະຫວັນຄະໂລກ. ນອກຈາກນີ້ ກະສັດລ້ານຊ້າງຍັງໄດ້ສົ່ງຄະນະທູດໄປແລກປ່ຽນບົດຮຽນທາງວິຊາການ, ທາງວັດທະນະທຳ ກັບອານາຈັກລ້ານນາຕື່ມອີກ. ທັງໝົດນີ້, ໄດ້ເປັນການປູພື້ນຖານໃຫ້ແກ່ສັງຄົມ-ວັດທະນະທຳ ຂອງ ລ້ານຊ້າງ ຊຶ່ງຕໍ່ມາກໍໄດ້ຮັບການເສີມຂະຫຍາຍກ້າວສູ່ຄວາມຈະເລີນຮຸ່ງເຮືອງໃນທາງສະຕະວັດທີ 17.

ງ. ການຕໍ່ສູ້ຕ້ານການຮຸກຮານຂອງສັກດິນາສະຫຍາມອະຍຸດທະຍາ

ໃນຕອນຕົ້ນ ຂອງສະຕະວັດທີ 16 ສັກດິນາສະຫຍາມອະຍຸດທະຍາ ມີຄວາມເຂັ້ມແຂງ ໂດຍສະເພາະ ພາຍຫຼັງທີ່ເຈົ້າອາທິດຕະຍະວົງຂຶ້ນກຳອຳນາດແລ້ວ, ໄດ້ມີເປົ້າໝາຍຮຸກຮານ ແລະ ຍຶດຄອງດິນແດນລ້ານຊ້າງ ເພື່ອເປັນການແກ້ແຄ້ນກະສັດລ້ານຊ້າງ ທີ່ໄດ້ປະຕິເສດການສົ່ງເຈົ້າໄຊຍະ ຣາຊາ ໃຫ້ແກ່ຕົນ ຕາມການຮ້ອງຂໍ.

ສົງຄາມ ລະຫວ່າງ ລ້ານຊ້າງກັບອະຍຸດທະຍາ ເກີດຂຶ້ນໃນສະໄໝການປົກຄອງຂອງພະເຈົ້າ ໂພທິສາຣະຣາດ ໃນປີ ຄສ 1533 ໂດຍແມ່ນສັກດິນາອະຍຸດທະຍາ ເປັນຜູ້ຍົກທັບມາຮຸກຮານອານາຈັກ ລ້ານຊ້າງ ພາຍໃຕ້ຂໍ້ອ້າງວ່າ "ເພື່ອຈັບນຸມເອົາເຈົ້າໄຊຍະຣາຊາໄປລົງໂທດ" ຕາມແຜນການຄວາມຕ້ອງ ການ ເພື່ອຂະຫຍາຍອິດທິພົນ ແລະ ດິນແດນຂອງສັກດິນາສະຫຍາມອະຍຸທະຍາ ໂດຍໃຊ້ກອງກຳລັງ ຫຼວງແຫ່ງອາຍຸດທະຍາ ບຸກໂຈມຕີເຂົ້າສູ່ດິນແດນອານາຈັກລ້ານຊ້າງ ຍຶດເອົາເມືອງວຽງຄຸກ ຊຶ່ງເປັນ ເມືອງສຳຄັນທາງດ້ານຕາເວັນຕົກຂອງນະຄອນວຽງຈັນ ແລະ ຂ້າມແມ່ນ້ຳຂອງມາຕັ້ງທັບຢູ່ທົ່ງສາລາ ຄຳປ ະຊິດເມືອງວຽງຈັນຈາກນັ້ນກໍແຈກຢາຍກຳລັງປິດລ້ອມເມືອງວຽງຈັນ.

ຜ່ານສົງຄາມຄັ້ງນີ້, ກອງທັບອະຍຸດທະຍາທີ່ຕັ້ງຢູ່ທົ່ງສາລາຄຳ ແລະ ວຽງຄຸກໄດ້ຖືກກອງທັບ ປະຊາຊົນຊາວລ້ານຊ້າງທຳການບຸກຕີຂັບໄລ່ ຈົນແຕກທັບອອກຈາກດິນແດນລ້ານຊ້າງຢ່າງບໍ່ເປັນລະ ບຽບ ແລະໄດ້ສູນເສຍກຳລັງພົນ, ຊ້າງເສິກ ແລະ ມ້າເສິກເປັນຈຳນວນຫຼວງຫຼາຍ.ສົງຄາມຄັ້ງນີ້ ສິ້ນສຸດ ລົງດ້ວຍໄຊຊະນະຂອງກອງທັບລ້ານຊ້າງ ເຊິ່ງບໍ່ພຽງແຕ່ສາມາດຂັບໄລ່ສັດຕູອອກຈາກເຂດແດນລ້ານ ຊ້າງເທົ່ານັ້ນ, ແຕ່ຫາກຍັງໄດ້ສະແດງເຖິງຄວາມເຂັ້ມແຂງ ແລະ ເໜືອກວ່າຂອງກອງທັບລ້ານຊ້າງຕໍ່ກັບ ສັກດິນາສະຫຍາມອະຍຸດທະຍາ.

1.2.2.2 ລ້ານຊ້າງສະໄໝວຽງຈັນ

ອານາຈັກລ້ານຊ້າງສະໄໝວຽງຈັນນີ້ ເປັນຊ່ວງທີ່ອານາຈັກລ້ານຊ້າງມີຄວາມຈະເລີນຮຸ່ງເຮືອງ ເພາະເປັນຊ່ວງທີ່ສັງຄົມລ້ານຊ້າງ ໄດ້ຜ່ານການບູລະນາການມາເປັນເວລາຍາວນານ. ດັ່ງນັ້ນ, ສັງຄົມ ລ້ານຊ້າງໃນໄລຍະນີ້ ຈຶ່ງເປັນສັງຄົມທີ່ມີລະບົບແບບແຜນຢ່າງຊັດເຈນ. ການຄຸ້ມຄອງສັງຄົມມີການ ນຳໃຊ້ກົດໝາຍທີ່ເປັນລາຍລັກອັກສອນ ທີ່ອີງໃສ່ຫຼັກທຳຂອງພຸດທະສາສະໜາ ມາເປັນເຄື່ອງມືຊ່ວຍ ໃນການຄວບຄຸມຄົນ ໃຫ້ມີການຢູ່ຮ່ວມກັນໂດຍສັນຕິ. ອານາຈັກລ້ານຊ້າງສະໄໝວຽງຈັນນີ້ ກຳນົດເອົາ ແຕ່ ປີ ຄສ 1560 ຈົນຮອດ ປີ ຄສ 1713 ແລະ ມີສູນກາງການປົກຄອງ ຢູ່ທີ່ເມືອງວຽງຈັນ.

ຕາລາງທີ.2: ບັນດາກະສັດທີ່ປົກຄອງໃນສະໄໝລ້ານຊ້າງວຽງຈັນ:

ລຳດັບ	ປີຄອງລາດ	ຊື່ກະສັດ	ນາມມະຍົດ
1	ຄສ 1550 - 1572	ພະເຈົ້າເຊຖະວັງໂສ	ພະອຸໄທພູທອນ ບໍ່ອນໄຊຍະເຊດຖາພູວະນາ ຖາທີປັດສີສັດຕະນາຄະນະທຸດ
2	ຄສ 1573 - 1579	ພະຍາແສນສຸລິນທະລືໄຊ	ພະສຸມັງຄະລະໄອຍະໂກໂພທິສັດ
3	ຄສ 1575 - 1579	ພະເຈົ້າວໍລະວັງໂສ	ພະມະຫາອຸປະລາຊາວໍລະວັງໂສ
	ຄສ 1580 - 1582	ພະຍາແສນສຸລິນທະລືໄຊ	ພະສຸມັງຄະລະໄອຍະໂກໂພທິສັດ
4	ຄສ 1582	ພະຍານະຄອນນ້ອຍ	
5	ຄສ 1582 - 1590	ບໍ່ມີກະສັດປົກຄອງເປັນເວລາ 7 ປີ	
6	ຄສ 1591 - 1598	ພະໜໍ່ເມືອງ	
7	ຄສ 1598 - 1600	ພະວໍລະວົງສາ	ພະວໍລະວົງສາທຳມິກະລາດ
8	ຄສ 1600 - 1622	ພະອຸປະຍຸວະລາດ	
9	ຄສ 1623 - 1627	ພະຍາມະຫານາມ	ພະບັນດິດໂພທິສານ
10	ຄສ 1627 - 1638	ເຈົ້າໜ່ອມແກ້ວ	ພະໜ່ອມແກ້ວ
11	ຄສ 1638 - 1690	ເຈົ້າສຸລິຍະກຸມມານ[2]	ພະເຈົ້າສຸລິຍະວົງສາທຳມິກະລາດ
12	ຄສ 1690 - 1695	ເຈົ້າອົ່ງຫຸ່	
13	ຄສ 1695 - 1698	ເຈົ້າບັນທະຣາດ	
14	ຄສ 1698 - 1730	ເຈົ້າໄຊອົ່ງເວ້	ພະໄຊຍະເຊດຖາທິຣາດ[2]

[2] ເຈົ້າສຸລິຍະກຸມມານ ເປັນໄອລົດຜູ້ທີສາມຂອງພະເຈົ້າຕ່ອນຄຳ ມີອ້າຍນ້ອງຮ່ວມອຸທອນນຳກັນສອງຄົນ ຄື ເຈົ້າຊົມພູ ແລະ ເຈົ້າບຸນຊູ. ພະເຈົ້າ ຕ່ອນຄຳ ເປັນໄອລົດຂອງພະໜ່ອມແກ້ວ.

ກ. ການປັບປຸງ ແລະ ສ້າງສາອານາຈັກລ້ານຊ້າງສະໄໝວຽງຈັນ

ຫຼັງຈາກການສິ້ນພະຊົນ[25] ຂອງພະເຈົ້າໂພທິສາຣະຣາດ ໃນປີ ຄສ 1550 ແລ້ວເຈົ້າ ເຊດຖະວັງໂສ ຜູ້ເປັນລາຊະບຸດ ຊຶ່ງໃນຂະນະນັ້ນພວມຄອງລາດຢູ່ນະຄອນຊຽງໃໝ່ລ້ານນາ[26] ໄດ້ມອບ ລາຊະການບ້ານເມືອງຢູ່ລ້ານນາ ໃຫ້ພະຍາກົ່ງກາງຣາດຢູ່ຮັກສາການແທນ ສ່ວນພະອົ່ງໄດ້ກັບຄືນມາ ທີ່ນະຄອນຊຽງທອງ ເພື່ອປົ່ງສົບພະບິດາ. ພາຍຫຼັງທີ່ປະຕິບັດພິທີປົ່ງສົບພະລາຊະບິດາສຳເລັດລົ່ງ ແລ້ວ, ເສນາອາມາດແຫ່ງນະຄອນຊຽງທອງ ໄດ້ທຳການອະພິເສກພະອົ່ງຂຶ້ນຄອງບັນລັງແຫ່ງອານາຈັກ ລ້ານຊ້າງ ແລະ ໄດ້ຮັບນາມໃໝ່ວ່າ "ສົມເດັດ ພະອຸໄພພູທອນ ບໍ່ອນໄຊຍະເຊດຖາ ພູວະນາຖາທີປັດ ສີສັດຕະນາຄະນະທຸດ[27]". ຫຼັງຈາກນັ້ນ ພະອົ່ງກໍໄດ້ຈັດການປັບປຸງການປົກຄອງ ແລະ ກອງທັບໃຫ້ມີ ຄວາມເຂັ້ມແຂງ ມີຄວາມພ້ອມໃນການປົກປ້ອງອານາຈັກ ຈາກການຄຸກຄາມຈາກສັດຕູພາຍນອກ. ຕົ່ກມາ ໃນປີ ຄສ 1551 ໄດ້ເກີດມີກຸ່ມກະບົດຢູ່ຊຽງໃໝ່ ຄື ພະຍາສຸທັດສະນະ ເຈົ້າຄອງນະຄອນຊຽງແສນ ໄດ້ທຳການຍຶດອຳນາດຈາກພະຍາກົ່ງກາງຣາດ[28]; ສະນັ້ນ ເຈົ້າໄຊຍະເຊດຖາທິຣາດ ໄດ້ສົ່ງກຳລັງໄປ ປາບປາມ ແລະ ຈັດຕັ້ງການປົກຄອງຄືນໃໝ່.

[25] ພະອົ່ງຖືກຂ້າງລົ້ມຫັບ ໃນຂະນະທີ່ ສະແດງການຄ້ອງຊ້າງປ່າໃຫ້ແຂກຕ່າງເມືອງ, ຕ່າງອານາຈັກເບິ່ງ ລວມມີ: ທູດພະມ້າ, ທູດອະຍຸດທະຍາ ແລະ ຈາກເມືອງຕ່າງໆ 15 ເມືອງ.
[26] ເຈົ້າເຊດຖະວັງໂສເກີດ ໃນປີ ຄສ 1534, ເປັນລາຊະບຸດຂອງ ພະໂພທິສາຣະຣາດ ແລະ ພະບາງຍອດຄຳ (ລາຊະທິດາພະເມືອງເຫດເກົ້າ (ເຈົ້າແຜ່ນດິນລ້ານນາ), ເມື່ອອາຍຸໄດ້ 14 ປີ (ປີ ຄສ 1548) ໄດ້ຂຶ້ນປົກຄອງລາດທີ່ນະຄອນຊຽງໃໝ່ລ້ານນາ ຕາມຄຳເຊີນຂອງເສນາອາມາດ ແລະ ປະຊາຊົນລ້ານນາ.
[27] ມະຫາຄຳ ຈຳປາແກ້ວມະນີ (ເຫຼັ້ມ 5) 1980: 42
[28] ພະຍາກົ່ງກາງລາດ ເປັນລຸງຂອງເຈົ້າ ໄຊຍະເຊດຖາທິຣາດ

ໃນປີ ຄສ 1553 ທີ່ນະຄອນຊ່ຽງໃໝ່ ໄດ້ເກີດມີຄວາມວຸ້ນວາຍຂຶ້ນ, ຍຶດອຳນາດແລ້ວແຕ່ງຕັ້ງ ພະເມກຸຕິ ຂຶ້ນເປັນເຈົ້າແຜ່ນດິນລ້ານນາ. ມາໃນປີ ຄສ 1555 ເຈົ້າໄຊຍະເຊດຖາທິຣາດ ໄດ້ຈັດຕັ້ງ ກຳລັງຂຶ້ນໄປປາບປາມກຸ່ມກະບົດດັ່ງກ່າວ ໂດຍທີ່ພະອົງໄດ້ຕັ້ງທັບຢູ່ເຂດນ້ຳທາ; ສ່ວນຝ່າຍພະເມກຸຕິ ເກີດຢ້ານກົວ ຈຶ່ງໄດ້ແຕ່ງທູດນຳເອົາເຄື່ອງບັນນາການໄປຖວາຍເຈົ້າບູເຮັ່ງນອງ ແຫ່ງກຸງຫົງສາວະດີ ເພື່ອທູນຂໍກຳລັງລົງມາອາລັກຂາ. ສວຍໂອກາດນີ້ ສັກດິນາພະມ້າຈຶ່ງຟ້າວຍົກທັບລົງມາຍຶດຄອງລ້ານນາ ກ່ອນທີ່ກອງທັບລ້ານຊ້າງຈະເຂົ້າໄປເຖິງຊ່ຽງໃໝ່. ເມື່ອກອງທັບລ້ານຊ້າງໄປເຖິງຈຶ່ງພົບວ່າຊ່ຽງໃໝ່ ຖືກ ກອງທັບບູເຮັ່ງນອງເຂົ້າຍຶດຄອງກ່ອນແລ້ວ ຈຶ່ງຖອຍທັບກັບຄືນ, ແຕ່ເຫດການນີ້ ໄດ້ເປັນຕົ້ນເຫດ ຂອງ ຄວາມຂັດແຍ່ງລະຫວ່າງພະມ້າ-ລ້ານຊ້າງ ແລະ ນຳໄປສູ່ສົງຄາມພະມ້າ-ລ້ານຊ້າງໃນໄລຍະຕໍ່ມາ.

ຂ. ການຍົກຍ້າຍນະຄອນຫຼວງ

ຫຼັງຈາກທີ່ພະເຈົ້າໄຊຍະເຊດຖາທິຣາດ ຂຶ້ນປົກຄອງອານາຈັກລ້ານຊ້າງແລ້ວ, ພະອົງໄດ້ເປີດ ກອງປະຊຸມເປີກສາຫາລືກັບເສນາມຸນຕີ ກ່ຽວກັບ ການຍົກຍ້າຍນະຄອນຫຼວງຈາກຊ່ຽງທອງລົງມາ ວຽງຈັນ. ດັ່ງນັ້ນ, ມາໃນປີ ຄສ 1560 ພະເຈົ້າໄຊຍະເຊດຖາທິຣາດ ຈຶ່ງໄດ້ຕັດສິນໃຈຍົກຍ້າຍນະຄອນຫຼວງ ຈາກນະຄອນຊ່ຽງທອງລົງມາຕັ້ງຢູ່ນະຄອນວຽງຈັນ. ສຳລັບເຫດຜົນໃນການຍ້າຍສູນກາງການປົກຄອງ ນີ້ ກໍມີຫຼາຍທັດສະນະມຸມມອງ ຄື ເຫດຜົນຂອງການຍ້າຍສູນກາງການປົກຄອງ ຈາກນະຄອນຊ່ຽງທອງ ມາຢູ່ວຽງຈັນນັ້ນ ສາມາດສະຫຼຸບ ໄດ້ດັ່ງນີ້:

- ທີ່ຕັ້ງທາງພູມີສາດ:

ເມືອງວຽງຈັນເປັນເມືອງ ທີ່ຕັ້ງຢູ່ໃຈກາງຂອງອານາຈັກ ຄື ລະຫວ່າງ ກາງຂອງດິນແດນ ລ້ານຊ້າງ ທາງພາກເໜືອກັບດິນແດນລ້ານຊ້າງທາງພາກໃຕ້ ແລະ ດິນແດນລ້ານຊ້າງທາງພາກ ຕາເວັນອອກຫາດິນແດນທາງພາກຕາເວັນຕົກ. ທັງນີ້ ກໍເພາະວ່າ ດິນແດນອານາຈັກລ້ານຊ້າງນັ້ນ ມີພື້ນທີ່ກວ້າງຂວາງຫຼາຍກວມເອົາດິນແດນບໍລິເວນສອງຟາກຝັ່ງແມ່ນ້ຳຂອງ. ດ້ວຍເຫດນັ້ນ, ຫາກທຽບ ທາງດ້ານທີ່ຕັ້ງແລ້ວ ເຫັນວ່າເມືອງວຽງຈັນ ແມ່ນມີຄວາມສະດວກ ແລະ ເໝາະສົມທີ່ຈະເປັນສູນກາງ ໃນການຕິດຕໍ່ພົວພັນ ລະຫວ່າງ ຫົວເມືອງຕ່າງໆພາຍໃນອານາຈັກຫຼາຍກວ່ານະຄອນຫຼວງພຣະບາງ. ໄປຄຽງຄູ່ກັບທີ່ຕັ້ງນັ້ນ, ທາງດ້ານພື້ນທີ່ພູມສັນຖານຂອງເມືອງວຽງຈັນ ສ່ວນໃຫຍ່ກໍເປັນພື້ນທີ່ຣາບພຽງ ແລະ ກວ້າງຂວາງ ປະກອບກັບ ຄວາມອຸດົມສົມບູນ ຂອງສາຍນ້ຳໃນພື້ນທີ່. ດັ່ງນັ້ນ, ຫາກພິຈາລະນາ ໃນປະເດັນນີ້ ກໍເວົ້າໄດ້ວ່າ ພື້ນທີ່ຂອງເມືອງວຽງຈັນ ມີຄວາມເໝາະສົມກວ່າຫຼວງພະບາງ ໃນການທີ່ ຈະຂະຫຍາຍຕາໜ່າງການຜະລິດທາງດ້ານກະສິກຳ ອັນເປັນເສດຖະກິດພື້ນຖານຂອງອານາຈັກ ແລະ ຍັງມີຄວາມເໝາະສົມ ທີ່ຈະຂະຫຍາຍ ຫຼື ພັດທະນາຄວາມເປັນຕົວເມືອງອີກດ້ວຍ.

- ປະຊາກອນ:

ວຽງຈັນເປັນເຂດທີ່ມີປະຊາກອນ ອາໄສຢູ່ຢ່າງຫຼວງຫຼາຍ ແລະ ປະຊາກອນກໍເປັນກຳລັງ ພື້ນຖານ ແລະ ຄວາມໝັ້ນຄົງຂອງລັດ. ວຽງຈັນເປັນເມືອງໃຫຍ່ ແລະ ມີຄວາມສຳຄັນ ຊຶ່ງສັງເກດໄດ້ຈາກ ກະສັດລ້ານຊ້າງຊ່ຽງທອງ ທຸກອົງໃຫ້ຄວາມສຳຄັນ ນັບແຕ່ເຈົ້າຟ້າງຸ່ມ, ໄຊຍະຈັກກະພັດແຜ່ນແຜ້ວ, ໂພທິສາຣາດ.... ກໍໄດ້ມາພຳນັກຢູ່ທີ່ວຽງຈັນ.

- ຍຸດທະສາດ:

ວຽງຈັນ ເປັນເປັນເມືອງທີ່ຕັ້ງຢູ່ໃຈກາງ ແລະ ອ້ອມຮອບໄປດ້ວຍຫົວເມືອງໃຫຍ່ຕ່າງໆ. ວຽງຈັນ ເປັນເມືອງສູນກາງ ທີ່ມີຄວາມພ້ອມໃນການບັນຊາ ແລະ ຄວບຄຸມຫົວເມືອງຕ່າງໆ.

- ເສດຖະກິດ:

ວຽງຈັນເປັນເຂດທີ່ເໝາະສົມໃນການຂະຫຍາຍ ແລະ ພັດທະນາເສດຖະກິດ ໂດຍສະເພາະ ການຜະລິດກະສິກຳ. ວຽງຈັນເໝາະສົມໃນການເປັນເຂດສູນກາງທາງການຄ້າ ຄື ການຄ້າພາຍໃນ ອານາຈັກ ແລະ ການຄ້າພາຍນອກຄືເປັນ "ລັດເຄິ່ງເມືອງທ່າ". ເຫດຜົນທີ່ເປັນລັດການຄ້າ ເພາະວ່າ ໃນສະຕະວັດທີ 15-16 ລັດສູນກາງການຄ້າໃນພາກພື້ນ ທະວີບໄດ້ມີການປ່ຽນແປງມາເປັນລັດການຄ້າ ແຄມທະເລ ເພາະວ່າ ເສັ້ນທາງການຄ້າທາງບົກໄດ້ປ່ຽນມາເປັນເສັ້ນທາງການຄ້າທາງທະເລ. ດ້ວຍເຫດ ນັ້ນ ບັນດາຫົວເມືອງທີ່ຕັ້ງຢູ່ຕາມແຄມທະເລ ໃນພາກພື້ນອາຊີ ຈຶ່ງກາຍມາເປັນເມືອງທ່າການຄ້າ. ເຫດຜົນນີ້ ພະເຈົ້າໄຊຍະເສດຖາທິລາດ ຈຶ່ງມຸ້ງຫວັງທີ່ຈະຍ້າຍສູນກາງການເມືອງ, ການປົກຄອງ ຂອງອານາຈັກລ້ານຊ້າງຈາກຊຽງທອງມາວຽງຈັນ ໃຫ້ກາຍເປັນລັດເຄິ່ງເມືອງທ່າທີ່ມີຄວາມຜູກພັນກັບ ການຄ້າທາງທະເລລະຫວ່າງລັດຢ່າງໃກ້ສິດທັງໆ ທີ່ບໍ່ໄດ້ຕັ້ງຢູ່ແຄມທະເລ.

ໃນທີ່ສຸດກອງປະຊຸມ ຈຶ່ງໄດ້ລົງຄວາມເຫັນເປັນເອກະພາບຕົກລົງຍົກຍ້າຍນະຄອນຫຼວງຈາກ ນະຄອນຊຽງທອງ ລົງມາວຽງຈັນ ໂດຍການເດີນທາງໆນ້ຳ ໃນປີ ຄສ 1560 ພ້ອມກັບ ການຍົກຍ້າຍ ເຄື່ອງຂອງ ແລະ ຊັບສົມບັດຂອງນະຄອນທີ່ມີຄ່າຕ່າງໆນັ້ນ ເຊັ່ນ: ພະແກ້ວມໍລະກົດ ແລະ ພະແຊກຄຳ ກໍໄດ້ຮັບການອັນເຊີນລົງມາປະດິດສະຖານຢູ່ວຽງຈັນ, ສ່ວນພະບາງ ແມ່ນຍັງຄົງປະດິດສະຖານຢູ່ ນະຄອນຊຽງທອງຕາມເດີມ.

ຄ. ການພັດທະນາເມືອງວຽງຈັນນະຄອນຫຼວງແຫ່ງໃໝ່

ພາຍຫຼັງຍົກຍ້າຍນະຄອນຫຼວງລົງມາຕັ້ງຢູ່ວຽງຈັນແລ້ວ ນະຄອນຫຼວງແຫ່ງໃໝ່ກໍໄດ້ຮັບການ ສ້າງສາພັດທະນາຫຼາຍໆຢ່າງ ເຊັ່ນ:

- ການພັດທະນາໂຄງລ່າງພື້ນຖານ

ເພື່ອເຮັດໃຫ້ນະຄອນວຽງຈັນ ກາຍເປັນເມືອງຫຼວງແຫ່ງໃໝ່ທີ່ສົມບູນ ພະເຈົ້າໄຊຍະເຊດຖາ ທິລາດ ໄດ້ພ້ອມພາປວງຊົນສ້າງ ແລະ ປົວແປງລະບົບຖະໜົນຫົນທາງຄືນໃໝ່, ດຳເນີນການສ້າງ ກຳແພງເມືອງວຽງຈັນ[29] ເພື່ອປ້ອງກັນທັງໄພທຳມະຊາດຄືໄພນ້ຳຖ້ວມ ແລະ ປ້ອງກັນການ ໂຈມຕີ ຂອງສັດຕູ, ດຳເນີນການສ້າງພະລາຊະວັງ ແລະ ຫໍໂຮງໃຫ້ສົມບູນ.

- ການສ້າງສາສະໜາສະຖານ:

ໄປຄຽງຄູ່ ກັບ ການພັດທະນາ ພະອົງໄດ້ຊຸກຍູ້ສົ່ງເສີມໃຫ້ມີການສ້າງສາວັດວາອາຮາມ ຫຼາຍໆແຫ່ງ ເພື່ອເປັນບ່ອນສັກກາລະບູຊາພຸດທະສາສະໜາ, ເປັນບ່ອນເຜີຍແຜ່ວັດທະນະທຳ, ທັງເປັນ ບ່ອນສຶກສາຮ່ຳຮຽນ; ໃນນັ້ນວັດທີ່ໄດ້ຮັບການກໍ່ສ້າງຂຶ້ນໄລຍະນັ້ນ ມີທັງການກໍ່ສ້າງດ້ວຍງົບປະມານ ຂອງຫຼວງ (ລັດ) ແລະ ງົບປະມານຂອງຊຸມຊົນແຕ່ລະທ້ອງຖິ່ນ ໃນນັ້ນຜົນງານທີ່ເດັ່ນແມ່ນ:

ປີ ຄສ 1565 ຫໍພະແກ້ວສ້າງຂຶ້ນ ເພື່ອເປັນບ່ອນປະດິດສະຖານພະແກ້ວມໍລະກົດ ເຊິ່ງ ເປັນພະມິ່ງມຸງຄຸນຂອງປວງຊົນລາວ. ປີ ຄສ 1566 ໄດ້ສ້າງພະທາດຫຼວງວຽງຈັນຂຶ້ນ ເຊິ່ງມີ ຄວາມສູງ ເຖິງ 45 ແມັດ ມີພະທາດນ້ອຍອ້ອມ 30 ລູກ. ນອກຈາກນີ້, ຍັງມີການກໍ່ສ້າງວັດອື່ນໆອີກ ເຊັ່ນ: ວັດອົງຕື້ ຫຼື ໄຊຍະພູມ, ວັດອົມແປງ, ວັດສີເມືອງ ແລະ ວັດລືສີສັງຫອມ(ວັດສີສັງວອນ). ນອກຈາກກໍ່ສ້າງ ວັດແລ້ວ ຍັງມີການຫຼໍ່ພະພຸດທະຮູບທີ່ສຳຄັນ ຄື: ພະສຸກ, ພະໃສ, ພະເສີມ[30] ແລະ ພະອົງຕື້.

[29] ກຳແພງດິນຈີ່ເສີມດິນທາງດ້ານໃນ, ມີຄວາມສູງກວ່າຫຼັງຊ້າງໃຫຍ່ຊຶ່ງເປັນພາຫະນະສົງຄາມທີ່ສຳຄັນໃນເວລານັ້ນ, ຄຽງຄູ່ກັບກຳແພງ ແມ່ນໄດ້ສ້າງຄອງ ນ້ຳລຽບຂະໜານກັບກຳແພງຊຶ່ງມີຄວາມກວ້າງປະມານ 5 -8 ແມັດແລະມີຄວາມເລິກລະດັບຖ້ວມຫົວຄົນຍືນ.

[30] ໃນປະຈຸບັນ ພຣະສຸກ ເຊື່ອກັນວ່າຍັງຖືກຈົມນ້ຳຢູ່ທ່າຍ້ານເວີນສຸກ, ພະໃສ ຢູ່ວັດໂພໄຊ ໜອງຕາຍ ແລະ ພະເສີມຢູ່ວັດປະທຸມວະນາຣາມ ກຽງເທບ ຊຶ່ງຖືກເຄື່ອນຍ້າຍໃນສະໄໝສົງຄາມສະໜາມ-ລ້ານຊ້າງ.

- ການຜູກສຳພັນໄມຕີກັບອານາຈັກອ້ອມຂ້າງ

ໄປຄຽງຄູ່ ກັບ ການສ້າງສາອານາຈັກນັ້ນ ພະເຈົ້າໄຊຍະເຊດຖາທິລາດຍັງໄດ້ເອົາໃຈໃສ່ການຜູກສຳພັນທະໄມຕຣີ ກັບ ບັນດາອານາຈັກອ້ອມຂ້າງ, ເພື່ອເສີມສ້າງຄວາມແຂ່ງແກ່ນຂອງອານາຈັກ ໂດຍສະເພາະ ພະອົງໄດ້ມີການສ້າງສາຍສຳພັນພິເສດກັບອານາຈັກອະຍຸດທະຍາ. ເພື່ອກະກຽມໃຫ້ແກ່ການຕໍ່ຕ້ານການແຜ່ອິດທິພົນ ຂອງສັກດິນາພະມ້ານັ້ນ ເຈົ້າໄຊຍະເຊດຖາທິຣາດ ໄດ້ຂໍຜູກສຳພັນດ້ວຍການຂໍພະທິດາແຫ່ງກຸງສີອະຍຸດທະຍາ ມາເປັນມະເຫສີ ແລະ ສ້າງສິ່ງຖາວອນວັດຖຸ ເຊັ່ນ ການສ້າງພະທາດສີສອງຮັກຂຶ້ນ ໃນປີ ຄສ 1560 ແລະ ສຳເລັດ ໃນປີ ຄສ 1563 ຊຶ່ງອົງພຣະທາດນີ້ ຕັ້ງຢູ່ເມືອງດ່ານຊ້າຍ ຫ່າງຈາກຕົວເມືອງໄປທາງທິດຕາເວັນຕົກປະມານ 2 ກິໂລແມັດ ໂດຍກຳນົດທີ່ຕັ້ງໃຫ້ຢູ່ລະຫວ່າງກາງຂອງແມ່ນ້ຳບ່ານ ແລະ ແມ່ນ້ຳຂອງໃນໄລຍະຫ່າງເທົ່າກັນ (ປັດຈຸບັນ ຢູ່ເມືອງດ່ານຊ້າຍ ແຂວງເລີຍ ປະເທດໄທ) ເພື່ອເປັນສັນຍາລັກຫຼັກໝາຍຊາຍແດນ ລະຫວ່າງ ກຸງສີອະຍຸດທະຍາ ກັບ ກຸງສີສັດຕະນາຄະນະຫຸດລ້ານຊ້າງ ແລະ ໃຫ້ຊື່ພະທາດອົງນີ້ວ່າ "ພະທາດສີສອງຮັກ". ພະທາດ ລູກນີ້ມີຄວາມສູງ 30 ແມັດ, ຖານກວ້າງດ້ານລະ18 ແມັດ ຊຶ່ງນັບວ່າເປັນການສ້າງຫຼັກຖານວັດຖຸ ເພື່ອສະແດງເຂດແດນຂອງສອງອານາຈັກ. ໃນເວລາກໍ່ສ້າງພະທາດອົງນີ້ ກໍໄດ້ມີພິທີການ ໃຫ້ຄຳສັດຕະຍາບັນຂອງ 2 ກະສັດ ລະຫວ່າງພະເຈົ້າໄຊຍະເຊດຖາທິຣາດ ແຫ່ງອານາຈັກລ້ານຊ້າງ ແລະ ພະມະຫາຈັກກະພັດ ແຫ່ງອານາຈັກອະຍຸດທະຍາ ເຊິ່ງມີໃຈຄວາມວ່າ:

"ພະມະຫາກະສັດເຈົ້າກຸງສີສັດຕະນາຄະນະຫຸດ ແລະ ເຈົ້າແຜ່ນດິນກຸງສີອະຍຸດທະຍາໄດ້ມີຄວາມຮັກແພງກັນ ເພື່ອໃຫ້ອານາຈັກທັ້ງສອງເປັນຜືນແຜ່ນດິນດຽວກັນເທົ່າຊົ່ວພົ້ງພັນ ລູກເຕົ້າ ຫຼານເຫຼັນ ໃຜຢ່າໄດ້ຊິງຊ່ວງລ່ວງດິນແດນແຜ່ນຫຍ້າ ຢ່າໄດ້ກະທຳໂລບລ້ຽວແກ່ກັນ ຈົນເທົ່າສ້ຽງພະອາທິດຕົກລົງມາຢູ່ເໜືອແຜ່ນດິນ ອັນນີ້ເທີ້ນ[31]".

ນັບວ່າເປັນຫຼັກຖານທາງປະຫວັດສາດ ທີ່ຊີ້ແຈງເຖິງ ການພະຍາຍາມສ້າງສາຍສຳພັນລ້ານຊ້າງ ແລະ ອະຍຸດທະຍາໃນສະຖານະການທີ່ທັ້ງສອງ ພວມຕົກຢູ່ໃນສະພາບທີ່ຖືກຄຸກຄາມຈາກການແຜ່ອິດທິພົນຂອງສັກດິນາພະມ້າ.

ງ. ການຕໍ່ສູ້ຕ້ານການຮຸກຮານຂອງສັກດິນາພະມ້າ

ຫຼັງຈາກສັກດິນາພະມ້າ ສຳເລັດໃນການທ້ອນໂຮມບັນດາ ເຂດແຄວ້ນໃຫຍ່ນ້ອຍເຂົ້າເປັນອານາຈັກ ເອກະພາບ ໃນປີ ຄສ 1555 ແລ້ວ ບູເຮ້ງນອງກະສັດແຫ່ງພະມ້າ ຜູ້ມີສາຍພາມວ່າ "ເຈົ້າແຫ່ງສິບທິດ" ກໍດຳເນີນການເປີດກວ້າງຂະຫຍາຍດິນແດນ ໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ ໂດຍມີເປົ້າໝາຍແນໃສ່ອານາຈັກອ້ອມຂ້າງໃກ້ຄຽງ ເຊັ່ນ: ອານາຈັກລ້ານນາ, ອານາຈັກອະຍຸດທະຍາ ແລະ ອານາຈັກລ້ານຊ້າງ.

1) ການຕີຕ້ານການຮຸກຮານລ້ານຊ້າງຂອງສັກດິນາພະມ້າຄັ້ງທີ I:

ໂດຍສວຍໂອກາດ ໃນຂະນະທີ່ປະຊາຊົນຊາວລ້ານຊ້າງ ພວມດຳເນີນການປັບປຸງສ້າງສາບະຄອນຫຼວງແຫ່ງໃໝ່ ແລະ ບັນດາຫົວເມືອງຈຸດສຸມຢູ່ທາງພາກກາງ ແລະ ພາກໃຕ້ ໂດຍສະເພາະໃນຊ່ວງທີ່ ພະເຈົ້າໄຊຍະເຊດຖາທິລາດ ກຳລັງນຳພາໄພ່ພົນລົງໄປປະຕິບັດລາຊະກິດ ຢູ່ທາງພາກໃຕ້ ເຊັ່ນ: ນຳພາປະຊາຊົນສ້າງປ້ອມປາການທີ່ວຽງໜອງຫານ, ວຽງສຸລິນ ປາກນ້ຳຫີນບູນ, ເມືອງໂສກສາລະວັນ ແລະ ທີ່ເມືອງຊຸງ ອັດຕະປື. ພ້ອມນັ້ນກໍໄດ້ນຳພາສ້າງສະຖານທີ່ເຝິກຊ້າງ ແລະ ທຳການເຝິກແອບຊ້າງປ່າໃຫ້ ເປັນຊ້າງເສິກຢູ່ທົ່ງຂີ້ຄວາຍ ເມືອງເກົ່າອັດຕະປື ໂດຍໄດ້ຮັບການຮ່ວມມືຊ່ວຍເຫຼືອຈາກພະຄູຫຼວງຈາວຜູ້ຊຶ່ງເປັນຜູ້ທີ່ມີບົດບາດອິດທິພົນຢູ່ອັດຕະປື.

[31] ມະຫາລຳຈຳປາແກ້ວມະນີ (ເຫຼັ້ມ 5) 1980: 64-65.

ມາໃນປີ ຄສ 1564 ກອງທະຫານພະມ້າ ໄດ້ຍົກທັບລ່ວງລ້ຳເຂົ້າດິນແດນລ້ານຊ້າງທາງພາກເໜືອ ແລະ ລ່ວງເລີຍລົງມາຮອດວຽງຈັນ ໂດຍອ້າງວ່າ "ໄລ່ຕິດຕາມຜູ້ນຳຂະບວນການຕໍ່ສູ້ຕ້ານສັກດິນາພະມ້າ ຂອງປະຊາຊົນລ້ານນາ ຄື: ພະຍາສາມລ້ານ ແລະ ພະຍາຈ່າບ້ານ ທີ່ໄດ້ຫຼົບໜີເຂົ້າມາຂໍລີ້ໄພທີ່ອານາຈັກລ້ານຊ້າງ" ໂດຍມີເປົ້າໝາຍມຸ່ງໜ້າໄປທີ່ຫຼວງພະບາງ ແລະ ທັນກັບລົງມາວຽງຈັນດ້ວຍການບຸກໂຈມຕີ ເຂົ້ານະຄອນວຽງຈັນແບບສາຍຟ້າແມບ ໂດຍທີ່ກອງທະຫານປ້ອງກັນນະຄອນຫຼວງບໍ່ທັນຕັ້ງຕົວ. ຈາກນັ້ນ, ກອງທະຫານພະມ້າກໍທຳການປຸ້ນສະດົມ ແລະ ຈັບກຸມເອົາເຊື້ອສາຍກະສັດກັບໄປພະມ້າ ເພື່ອເປັນຕົວປະກັນ. ຝ່າຍພະເຈົ້າໄຊຍະເຊດຖາທິລາດ ເມື່ອຮັບຊາບເຫດການກໍຟ້າວຈັດກຳລັງທະຫານກັບຄືນນະຄອນວຽງຈັນໂດຍດ່ວນ ແລ້ວທຳການຈັດແບ່ງກຳລັງທັບອອກເປັນ 2 ກອງທັບໃຫຍ່:

- ກອງທັບທີ 1: ບັນຊາໂດຍ ພະຍາແສນສຸລິນເຄື່ອນທັບອອກຈາກເມືອງໜອງຫານ ມີໜ້າທີ່ບຸກຕີຍຶດເອົານະຄອນຫຼວງວຽງຈັນຄືນໂດຍຮີບດ່ວນ ທຳການຂັບໄລ່ກອງທັບພະມ້າອອກຈາກນະຄອນ ແລະ ຍາດແຍ່ງເອົາສະເລີຍ ພ້ອມດ້ວຍເຄື່ອງຂອງຊັບສົມບັດທີ່ມີຄ່າທີ່ພວກເຂົາປຸ້ນເອົາໄປ.
- ກອງທັບທີ 2: ນຳພາໂດຍ ພະເຈົ້າໄຊຍະເຊດຖາທິຣາດ ເປັນກອງໜູນ ເຄື່ອນທັບອອກຈາກອັດຕະປື ແລະ ມຸ່ງໜ້າຂຶ້ນມານະຄອນວຽງຈັນຢ່າງຟ້າວຟັ່ງ.

ເມື່ອຍຶດວຽງຈັນຄືນໄດ້ແລ້ວ ພະເຈົ້າໄຊຍະເຊດຖາທິລາດ ໄດ້ແຕ່ງຕັ້ງພະຍາຊ້າຍແຂນຫັກ ແລະ ແສນຊ່າງທ່າວ ໄລ່ຕິດຕາມກອງທະຫານພະມ້າຈົນຮອດເມືອງມ່ານ ແຕ່ກໍບໍ່ສາມາດກອບກູ້ເອົາຜູ້ທີ່ຖືກພະມ້າຈັບກຸມໄປນັ້ນຄືນມາໄດ້ ຈຶ່ງກັບຄືນມາວຽງຈັນ.

ການບຸກລຸກຂອງກອງທະຫານພະມ້າໃນຄັ້ງນີ້ ເຖິງວ່າຈະເປັນການບຸກໂຈມຕີເຂົ້າໄວ ແລະ ຖອນອອກໄວກໍຕາມ. ແຕ່ກໍໄດ້ສ້າງຄວາມເສຍຫາຍໃຫ້ແກ່ອານາຈັກລ້ານຊ້າງ ໂດຍສະເພາະຊາວເມືອງວຽງຈັນໄດ້ຖືກປຸ້ນສະດົມ ພ້ອມດ້ວຍເຊື້ອສາຍຂອງກະສັດ ໄດ້ຖືກຈັບໄປເປັນສະເລີຍເສິກຢູ່ຫົງສາວະດີເປັນເວລາຫຼາຍປີ ຈົນຮອດໄລຍະທີ່ລ້ານຊ້າງ ເປັນປະເທດສະຖາດຂອງພະມ້າ ຈຶ່ງໄດ້ຖືກສົ່ງກັບຄືນມາ.

2) ການຕີຕ້ານການຮຸກຮານລ້ານຊ້າງຂອງພະມ້າຄັ້ງທີ II

ການຕີຕ້ານການຮຸກຮານ ຂອງສັກດິນາພະມ້າຄັ້ງທີສອງ ເກີດຂຶ້ນພາຍຫຼັງທີ່ກອງທັບລາວລ້ານຊ້າງ ກັບຄືນມາແຕ່ການໄປຊ່ວຍກອງທັບອະຍຸດທະຍາທຳການສູ້ຮົບກັບພະມ້າສອງຄັ້ງ ຄື: ໃນປີ ຄສ 1567 ແລະ ປີ ຄສ 1569 ໂດຍສະເພາະການຊ່ວຍຮົບໃນຄັ້ງທີສອງ ຊຶ່ງຝ່າຍກອງທັບອານາຈັກລາວລ້ານຊ້າງ ໄດ້ຕົກໃນອຸບາຍການເສິກຂອງກອງທັບພະມ້າ ເຮັດໃຫ້ກອງທັບ ຂອງລ້ານຊ້າງ ໄດ້ສູນເສຍກຳລັງພົນ ຫຼາຍສົມຄວນ. ໃນທີ່ສຸດກອງທັບລ້ານຊ້າງໄດ້ປະລາໄຊກັບຄືນນະຄອນວຽງຈັນ.

ພາຍຫຼັງກັບເຖິງນະຄອນວຽງຈັນ, ເຈົ້າໄຊຍະເຊດຖາທິຣາດ ໄດ້ເປີດກອງປະຊຸມຄັ້ງໃຫຍ່ຂຶ້ນທີ່ວຽງຈັນໂດຍມີຄະນະເສນາບໍດີ ແລະ ແມ່ທັບນາຍກອງທັງໝົດເຂົ້າຮ່ວມ ເພື່ອກະກຽມການປ້ອງກັນສົງຄາມຮຸກຮານຄັ້ງໃຫຍ່ຈາກກອງທັບພະມ້າ ແລະ ກອງປະຊຸມໄດ້ປຶກສາຫາລືຕົກລົງກັນວ່າ ຈະໃຊ້ກົນລະຍຸດປ້ອງກັນແບບບ້ານຮ້າງເຮືອນເປົ່າ ຄື:

- ຈະຕ້ອງອົບພະຍົບຊາວວຽງຈັນ ອອກຈາກຕົວເມືອງວຽງຈັນໃຫ້ໝົດແລ້ວໄປຫຼົບຊ້ອນ ຢູ່ບ່ອນປອດໄພນອກເມືອງ, ພ້ອມດຽວກັນຊັບສົມບັດ, ເຂົ້າຂອງເຄື່ອງໃຊ້, ເຂົ້າປາອາຫານແຫ້ງທີ່ຈຳເປັນກໍເອົາໄປນຳ; ສ່ວນທີ່ເອົາໄປບໍ່ໄດ້ ກໍຕ້ອງຂຸກເຊື່ອງບໍ່ໃຫ້ສັດຕູຍຶດໄດ້ ແລະ ປຸ້ນເອົາ ແມ່ນແຕ່ອາຫານການກິນ ກໍບໍ່ໃຫ້ເຫຼືອໄວ້ແກ່ສັດຕູໄດ້ບໍລິໂພກ.
- ເຮັດໃຫ້ວຽງຈັນເປັນເມືອງເປີດ ໝາຍຄວາມວ່າ ຈະບໍ່ຕ້ານທານແບບສຸດຄວາມສາມາດ ແຕ່ຫາກສະກັດກັ້ນສັດຕູຕາມສົມຄວນ ແບບບໍ່ໃຫ້ສູນເສຍກຳລັງພົນ ແລະ ຖ້າຈຳເປັນກໍຖອຍເຂົ້າເມືອງ ແລະ ເມື່ອສັດຕູຍຶດເມືອງໄດ້ ກໍຕ້ອງຖອນກອງທະຫານອອກໄປຢູ່ນອກເມືອງ ແລ້ວຈາງແຜນໂຈມຕີສັດຕູ ຕາມພາຍຫຼັງ.

ພ້ອມດຽວກັນ ກໍຕົກລົງໃຊ້ກົນລະຍຸດຕໍ່ສູ້ສັດຕູ ແບບກອງຫຼອນໝາຍຄວາມວ່າ ພາຍຫຼັງຖອນອອກຈາກວຽງຈັນ ກຳລັງທະຫານຫຼວງ ຈະຖືກຈັດຕັ້ງເປັນຫຼາຍກອງ ແລ້ວດຳເນີນການສູ້ຮົບແບບກອງຫຼອນ ຄື ຫຼອນຈູ່ໂຈມສັດຕູໃນຕອນກາງຄືນ ແລະ ລັດຕີສັດຕູ.

- ຈັດຕັ້ງກຳລັງສະກັດກັ້ນກອງລຳລຽງສະບຽງຂອງສັດຕູ ຊຶ່ງຄາດວ່າຈະເຄື່ອນມາ 2 ເສັ້ນທາງ ຄື ມາຈາກຊຽງແສນລົງມາຕາມລຳແມ່ນ້ຳຂອງ ແລະ ມາຈາກອະຍຸດທະຍາ.

- ກະກຽມສ້າງຖານທີ່ໝັ້ນຂອງກອງທັບຫຼວງ ຊຶ່ງບັນຊາໂດຍເຈົ້າແຜ່ນດິນ ເພື່ອໃຊ້ເປັນບ່ອນຫຼອກລໍ້ສັດຕູສົມທົບກັບການບຸກໂຈມຕີແບບເຄື່ອນທີ່ ເຊັ່ນ: ຢູ່ວຽງປາກງື່ມ, ວຽງໜອງຫານ ແລະ ວຽງສຸລິນ ປາກນ້ຳຫີນບູນ.

- ຈັດຕັ້ງກອງທັບໃຫຍ່ 3 ກອງທັບ ໄປສະກັດຢູ່ປ່າດົງທັງສາມດ້ານຂອງເມືອງວຽງຈັນ ຊຶ່ງຄາດວ່າຈະເປັນເສັ້ນທາງການຖອນທັບຂອງກອງທັບພະມ້າຈະຖອນ.

- ມາໃນປີ ຄສ 1571 ສັກດິນາພະມ້າ ຊຶ່ງນຳພາໂດຍບູເຮັງນອງ ກໍໄດ້ນຳກອງທັບພະມ້າ ຈຳນວນ 10 ກອງທັບ ຊຶ່ງລວມມີກຳລັງພົນເຖິງ 650.000 ຄົນ ອັນປະກອບມີທັງກອງທັບຫຼວງ ຂອງ ພະມ້າ, ກອງກຳລັງໜູນຈາກລ້ານນາ ແລະ ອະຍຸດທະຍາ; ມີອາວຸດປືນໃຫຍ່ (ສະບູຫຼວງ) ປະມານ 1.000 ກະບອກໄດ້ເຄື່ອນທັບ[32] ບຸກຕີເຂົ້າລ້ານຊ້າງ ໂດຍແບ່ງເປັນ 3 ປີກ:

- ປີກທີ 1: ນຳພາກອງທັບໂດຍ ມະຫາອຸປະຣາດ ລູກຊາຍຂອງບູເຮັງນອງ ເຄື່ອນທັບມາທາງເມືອງຊ້າຍຊຽງຄານ.

- ປີກທີ 2: ນຳພາກອງທັບໂດຍ ເຈົ້າກຸງອັງວະ ລູກເຂີຍ, ເຈົ້າເມືອງແປ ນ້ອງຊາຍ, ເຄື່ອນທັບມາທາງສະໜໍສໍ (ເມືອງເພັດສະບູນໃນປະຈຸບັນ) ເຂົ້າສູ່ໜອງບົວລຳພູ.

- ປີກທີ 3: ນຳພາກອງທັບໂດຍບູເຮັງນອງ, ເຄື່ອນທັບມາທາງນ້ຳຊີ ເຂົ້າເມືອງບົວ (ໄຊຍະພູມ) ໜອງບົວລຳພູ.

ເມື່ອກອງທັບພະມ້າ ໄດ້ບຸກຍຶດເອົາໜອງບົວລຳພູ, ທ່າບໍ່, ວຽງຄຸກ, ວຽງພະໂຄໄດ້ແລ້ວ, ພວກເຂົາກໍເກນເຮືອປະມານ 500 ລຳ ແລ້ວເອົາເຮັດຂົວຂ້າມແມ່ນ້ຳຂອງຢູ່ທາງໃຕ້ດອນສັງຄີ. ຈາກນັ້ນ ກໍບຸກຕີເຂົ້າມະຄອນຫຼວງວຽງຈັນ. ເມື່ອກອງທັບພະມ້າຍຶດມະຄອນວຽງຈັນໄດ້ ພວກເຂົາບໍ່ໄດ້ພົບ ຊັບສິນເງິນຄຳ, ເຂົ້າປາອາຫານ, ຕະຫຼອດຮອດຜູ້ຄົນຊາວເມືອງ ທີ່ຈະບັງຄັບຈັບມາຮັບໃຊ້ບຳເລີສຸກຳບໍ່ມີ; ພົບພຽງແຕ່ບ້ານຮ້າງເຮືອນເປົ່າ ທີ່ຊາວລ້ານຊ້າງປະຖິ້ມໄປໂດຍເຈດຕະນາ. ບໍ່ພຽງແຕ່ເທົ່ານັ້ນ, ກອງທະຫານພະມ້າ ຍັງປະເຊີນໜ້າກັບສົງຄາມກອງຫຼອນຂອງກອງທັບລ້ານຊ້າງ ທີ່ຫຼອນຕີໃນຍາມກາງຄືນ ແລະ ກາງເວັ້ນ. ໃນຂະນະດຽວກັນນັ້ນ ກອງລຳລຽງອາຫານຈາກພາຍນອກ ກໍຖືກໂຈມຕີສະກັດກັ້ນ ສົ່ງຜົນໃຫ້ກອງທັບພະມ້າ ບໍ່ສາມາດພົ້ວພັນກັບພາຍນອກໄດ້. ສຸດທ້າຍເຮັດໃຫ້ກອງທະຫານພະມ້າໄດ້ ຖືກລອບຂ້າລົ້ມຕາຍ ເພາະຖືກໂຈມຕີສົມທົບກັບການອຶດຫິວ, ລົ້ມປ່ວຍ... ເຮັດໃຫ້ກຳລັງໜຸດລົງເລື້ອຍໆ ໃນທີ່ສຸດ ບູເຮັງນອງ ໄດ້ຕັດສິນໃຈຖອນກອງທັບອອກຈາກວຽງຈັນ.

ໃນຂະນະທີ່ ກອງທະຫານພະມ້າ ພວມຖອນອອກໄປຈາກວຽງຈັນນັ້ນ, ກອງທັບລ້ານຊ້າງ ພາຍໃຕ້ ການບັນຊາຂອງ ເຈົ້າໄຊຍະເຊດຖາທິຣາດ ໄດ້ທຳການເປີດການບຸກໂຈມຕີຄັ້ງໃຫຍ່ ເພື່ອ ຂັບໄລ່ ແລະ ດັບສູນຢ່າງແຂງແຮງ. ບັ້ນຮົບທີ່ດຸເດືອດກ່ວ່າໝູ່ ແມ່ນເກີດຢູ່ວຽງຄຸກແຂວງໜອງຄາຍ, ໜອງບົວລຳພູ, ແລະ ບ້ານອະໂນໂສມກອງທັບລ້ານຊ້າງ ໄດ້ສືບຕໍ່ບຸກໂຈມຕີຂັບໄລ່ກອງທະຫານພະມ້າ ອອກຈາກເຂດແດນລ້ານຊ້າງຈົນຮອດເຂດເມືອງນ່ານ.

ຜົນຂອງສົງຄາມຄັ້ງນີ້ໄດ້ ເຮັດໃຫ້ກອງທັບພະມ້າຖືກຂ້າຕາຍ ເປັນຈຳນວນຫຼວງຫຼາຍ ແລະ ຖືກຈັບ ເປັນສະເລັຍປະມານ 30.000 ຄົນ, ຊ້າງເສິກປະມານ 200 ໂຕ ແລະ ເກັບງາຊ້າງ ທີ່ຕາຍແລ້ວ

[32] ຈຳປາແກ້ວມະນີ (ເຫຼັ້ມ 6) 1980: 5-6.

ໄດ້ 1.250 ຄູ່. ເຖິງຢ່າງໃດກໍດີ ລ້ານຊ້າງ ເຖິງວ່າຈະເປັນຝ່າຍໄດ້ຮັບໄຊຊະນະ ແຕ່ກໍໄດ້ຮັບຄວາມເສຍຫາຍເຊັ່ນກັນ ເນື່ອງຈາກນະຄອນຫຼວງວຽງຈັນທີ່ຫາກໍ່ສ້າງບໍ່ພໍເທົ່າໃດປີ ກໍໄດ້ປ່ອຍໃຫ້ຕົກຢູ່ໃນການຍຶດຄອງຂອງສັດຕູຊົ່ວຄາວ ປະກອບກັບປະຊາຊົນຊາວວຽງຈັນ ສ່ວນໃຫຍ່ຈຳຕ້ອງໄດ້ຍຸດຕິການຜະລິດ ແລະ ອົບພະຍົບ ໜີປະຈຳເຮືອນໄປລີ້ຊ່ອນຢູ່ປ່າດົງຈົນກ່ວາສົງຄາມຈະສິ້ນສຸດ. ນອກຈາກນີ້, ທາງດ້ານກຳລັງທະຫານ ກໍໄດ້ໄດ້ຮັບບາດເຈັບ ແລະ ເສຍສະຫຼະຊີວິດ ຊຶ່ງນັບວ່າເປັນການເສຍຫາຍທີ່ບໍ່ສາມາດປະເມີນຄ່າໄດ້.

3) ການຕີຕ້ານການຮຸກຮານລ້ານຊ້າງຂອງສັກດິນາພະມ້າຄັ້ງທີ III

ພາຍຫຼັງພະເຈົ້າໄຊຍະເຊດຖາທິຣາດ ສິ້ນພະຊົນ ໃນປີ ຄສ 1572 ແລ້ວ ພາຍໃນອົງການປົກຄອງຂັ້ນສູນກາງຂອງອານາຈັກລ້ານຊ້າງໄດ້ເກີດມີຄວາມວຸ່ນວາຍ, ອັນມີສາເຫດມາຈາກການຍາດແຍ່ງກັນຂຶ້ນອຳນາດ ລະຫວ່າງ ຊຸນນາງຊັ້ນສູງ ໂດຍສະເພາະ ແມ່ນພະຍາແສນສຸລິນທະລືໄຊ ທີ່ດຳລົງຕຳແໜ່ງເປັນແສນເມືອງ ທັງເປັນອັກຄະເສນາບໍດີຝ່າຍທະຫານ ໄດ້ສະຖາປະນາຕົນເອງຂຶ້ນ ເປັນຜູ້ສຳເລັດລາຊະການແຜ່ນດິນ. ແຕ່ໃນຂະນະດຽວກັນ ພະຍາຈັນສີຫາລາດ (ຈັນກອງນາງ) ຊຶ່ງເປັນອັກຄະເສນາບໍດີຝ່າຍປົກຄອງ ໄດ້ທຳການຂັດຄ້ານການກະທຳຂອງພະຍາແສນສຸລິນ ເພາະຕ້ອງການອະພິເສກ ເຈົ້າໜໍ່ເມືອງຂຶ້ນຄອງລາດຕາມລາຊະປະເພນີທີ່ປະຕິບັດກັນມາ. ທັງສອງຝ່າຍ ມີການຂັດແຍ່ງກັນຢ່າງຮຸນແຮງ ຈົນເຖິງຂັ້ນທ້າສູ້ຮົບກັນທີ່ຫາດດອນຈັນ; ຜົນສຸດທ້າຍພະຍາ ແສນສຸລິນທະລືໄຊ ໄດ້ເປັນ ຝ່າຍຊະນະ; ສ່ວນພະຍາຈັນສີຫະຣາດ ໄດ້ຖືກຂ້າຕາຍໃນຂະນະທີ່ຕໍ່ສູ້ກັນ. ການປະລອງສີມືກັນຄັ້ງນີ້ເຮັດໃຫ້ບັນດາຊຸນນາງ ຕ່າງກໍຍອມຮັບອຳນາດຂອງພະຍາແສນສຸລິນ. ສະນັ້ນ, ພະຍາແສນສຸລິນຈຶ່ງໄດ້ປະກາດຕົນເປັນເຈົ້າແຜ່ນດິນ ແລະ ປ່ຽນນາມເປັນ "ພະສຸມັງຄະລາ ໄອຍະໂກໂພທິສັດ".

ການຂຶ້ນຄອງລາດຂອງພະຍາແສນສຸລິນ ເຊິ່ງບໍ່ແມ່ນເຊື້ອກະສັດ ໄດ້ເຮັດໃຫ້ປະຊາຊົນເກີດຄວາມບໍ່ພໍໃຈ, ບາງຫົວເມືອງໄດ້ສະແດງຄວາມບໍ່ເຫັນດີ ເຫັນພ້ອມນຳ ເຊັ່ນ: ເມືອງພວນ, ເມືອງມະລຸກ ຂະນະຄອນ ແລະ ອັດຕະປື ເປັນຕົ້ນ. ສ່ວນປະຊາຊົນຊາວນະຄອນວຽງຈັນ ຜູ້ຢ້ານກົວສົງຄາມ ກໍໄດ້ອົບພະຍົບໜີອອກຈາກນະຄອນຢ່າງຫຼວງຫຼາຍ.

ສະພາບການຂັດແຍ່ງກັນພາຍໃນຊຸນນາງທີ່ກຳອຳນາດ ແລະ ຄວາມບໍ່ສະຫງົບຂອງສັງຄົມລ້ານຊ້າງນີ້ ໄດ້ເປັນເງື່ອນໄຂ ແລະ ໂອກາດອຳນວຍໃຫ້ແກ່ສັກດິນາພະມ້າສວຍໂອກາດຍົກກຳລັງທັບເຂົ້າມາຮຸກຮານອານາຈັກລາວລ້ານຊ້າງອີກຄັ້ງໜຶ່ງ ໃນປີ ຄສ 1574 ເພື່ອເປັນການແກ້ແຄ້ນ ແລະ ເພື່ອຂະຫຍາຍດິນແດນ ກໍຄືຂະຫຍາຍອິດທິພົນຂອງສັກດິນາພະມ້າ.

ສົງຄາມພະມ້າຮຸກຮານລ້ານຊ້າງຄັ້ງທີສາມ ເລີ່ມຕົ້ນຂຶ້ນດ້ວຍການເກາະຜິດຂອງພະມ້າ ຄື ໃນປີ ຄສ 1574 ບູເຣັງນອງ ໄດ້ແຕ່ງຄະນະທູດນຳເອົາລາຊະສານມາສະເໜີຕໍ່ເສນາມຸນຕີ ນະຄອນຫຼວງວຽງຈັນ ໃຫ້ຮັບເອົາພະວໍຣະວັງໂສ ຊຶ່ງເປັນນ້ອງຊາຍຂອງພະເຈົ້າໄຊຍະເຊດຖາທິຣາດ ທີ່ພະມ້າຈັບໄປເປັນສະເລີຍ ໃນປີ ຄສ 1564 ມາເປັນເຈົ້າຊີວິດສືບທອດບັນລັງລ້ານຊ້າງ. ເຫດການນີ້ ແມ່ນເປັນການດູໝິ່ນກຽດສັກສີຂອງພະສຸມັງຄະລາ ໄອຍະໂກໂພທິສັດ ຜູ້ຊຶ່ງຫາກຳຍຶດອຳນາດລາຊະບັນລັງ ມີຄວາມໂກດແຄ້ນຢ່າງຍິ່ງ ຈຶ່ງໄດ້ອອກຄຳສັ່ງຈັບເອົາລາຊະທູດ ຂອງພະມ້າໄປປະຫານຊີວິດຖິ້ມ ເພື່ອເປັນການຕອບໂຕ້.

ເຫດການນີ້ ໄດ້ເປັນການປະກາດສົງຄາມກັບ ບູເຣັງນອງ ແຫ່ງອານາຈັກພະມ້າອີກຄັ້ງໜຶ່ງ. ບູເຣັງນອງ ໄດ້ຈັດສົ່ງກຳລັງຂອງຕົນທີ່ບັນຊາໂດຍຊຸນພົນຍາດາລາ ສົມທົບກັບກອງທັບຊຽງໃໝ່ ແລະ ກອງທັບອະຍຸດທະຍາ ເຄື່ອນພົນເຂົ້າມາບຸກຍຶດເອົາອານາຈັກລ້ານຊ້າງ. ແຕ່ກໍຖືກກອງທະຫານອານາຈັກລາວລ້ານຊ້າງ ສະກັດກັ້ນຕີຕ້ານຄືນໃຫ້ຖອຍກັບໄປຢ່າງໄວວາ. ການແຕກທັບກັບຄືນໄປຂອງ

ກອງທະຫານພະມ້າໃນຄັ້ງນີ້ ໄດ້ເຮັດໃຫ້ບູເຮັງນອງມີຄວາມໂກດແຄ້ນເປັນຢ່າງຍິ່ງ ຈົນເຖິງຂັ້ນສັ່ງໃຫ້ລ້ຽງໂທດນາຍທະຫານ ດ້ວຍການສັ່ງປະຫານຊີວິດແມ່ທັບຊຸນພິນຍາດາລາ. ຈາກນັ້ນ ບູເຮັງນອງກໍໄດ້ສັ່ງໃຫ້ກະກຽມກອງທັບຫຼວງເປັນການໃຫຍ່ ແລ້ວຍົກທັບມາຮຸກຮານລ້ານຊ້າງອີກຄັ້ງໜຶ່ງດ້ວຍຕົນເອງ ໃນຕົ້ນ ປີ ຄສ 1575. ກອງທະຫານທີ່ນຳມາຮຸກຮານລ້ານຊ້າງໃນຄັ້ງນີ້ ປະກອບມີ ກອງທັບຫຼວງພະມ້າ 7 ກອງ ສົມທົບກັບກອງທັບຊຽງໃໝ່ໜຶ່ງກອງທັບ ແລະ ກອງທັບອະຍຸດທະຍາອີກໜຶ່ງກອງທັບ ລວມເປັນ 9 ກອງທັບໃຫຍ່. ພ້ອມດຽວກັນນີ້ ບູເຮັງນອງ ຍັງໄດ້ນຳເອົາພະວໍຣະວົງໂສ ນ້ອງຊາຍເຈົ້າໄຊຍະເຊດຖາທິຣາດ ຈັບໄປເປັນສະເລີຍ ໃນປີ ຄສ 1564 ລ້ຽງມາພ້ອມ ເພື່ອເປັນຂໍ້ອ້າງໃນການໂຄສະນາບິດເບືອນແບ່ງແຍກພາຍໃນກອງທະຫານລ້ານຊ້າງ.

ຍຸດທະສາດທີ່ບູເຮັງນອງ ນຳມາໃຊ້ໃນການຮົບຄັ້ງນີ້ ມີຜົນເປັນຢ່າງຍິ່ງ ໃນການຕອກຍ້ຳຄວາມຂັດແຍ່ງພາຍໃນສັກດິນາລ້ານຊ້າງໃຫ້ສູງຂຶ້ນ ຈົນນຳໄປສູ່ ການເກີດຄວາມແຕກແຍກກັນຢູ່ພາຍໃນກອງທະຫານລ້ານຊ້າງຕື່ມອີກ ໂດຍສະເພາະ ແມ່ນກຸ່ມທີ ຍາກໄດ້ນ້ອງຊາຍ ຂອງພະເຈົ້າໄຊຍະເຊດຖາທິຣາດ ເປັນພະເຈົ້າແຜ່ນດິນ ກັບກຸ່ມທີ່ສະໜັບສະໜູນ ພະສຸມັງຄະລາໄອຍະໂກໂພທິສັດ. ຈົນໃນທີ່ສຸດໄດ້ກາຍເປັນສ່ວນໜຶ່ງ ທີ່ເຮັດໃຫ້ການຮ່ວມມືກັນ ໃນການຕີຕ້ານການຮຸກຮານຂອງພະມ້າ ບໍ່ປະສົບຜົນສຳເລັດ ເຖິງແມ່ນວ່າ ພະຍາແສນສຸລິນ ຈະມີຄວາມຊຳນານໃນການເຮັດສົງຄາມມາແລ້ວກໍຕາມ, ແຕ່ເນື່ອງຈາກມີຂໍ້ຂັດແຍ່ງຢູ່ພາຍໃນ ຈຶ່ງເຮັດໃຫ້ປະຊາຊົນກໍຄືກອງທະຫານ ບໍ່ໃຫ້ການຮ່ວມມືຢ່າງເຕັມທີ່. ສຸດທ້າຍກອງທັບພະມ້າ ກໍສາມາດຍຶດຄອງນະຄອນຫຼວງວຽງຈັນໄດ້ ແລະ ຈັບເອົາພະຍາແສນສຸລິນ ພ້ອມດ້ວຍ ພະໝໍ່ເມືອງ ລູກຊາຍເຈົ້າໄຊຍະເຊດຖາທິຣາດ ໄປເປັນສະເລີຍເສິກຢູ່ທ້າວສາວະດີ. ແລ້ວນັບແຕ່ນັ້ນມາເປັນເວລາ 20 ກ່ວາປີ ອານາຈັກລ້ານຊ້າງໄດ້ຕົກເປັນປະເທດສະລາດຂອງສັກດິນາພະມ້າກ່ອນທີ່ຈະປະກາດແຍກຕົວເປັນເອກະລາດໄດ້ສຳເລັດໃນປີ ຄສ 1600 ໂດຍພະເຈົ້າວໍລະວົງສາ.

ຈ. ອານາຈັກລ້ານຊ້າງສະໄໝຮຸ່ງເຮືອງ ຄສ 1638 -1695

1) ສະພາບການຂອງອານາຈັກລ້ານຊ້າງກ່ອນປີ ຄສ 1638

ພາຍຫຼັງທີ່ ປະກາດເອກະລາດຈາກການເປັນປະເທດສະລາດຂອງພະມ້າແລ້ວ, ອານາຈັກລ້ານຊ້າງໄດ້ກັບສູ່ຄວາມສະຫງົບສຸກອີກຄັ້ງໜຶ່ງ ແຕ່ຄວາມສະຫງົບນັ້ນກໍຄົງຕົວບໍ່ໄດ້ດົນ ຄື ມາຮອດ ປີ ຄສ 1622 ພາຍໃນສັກດິນາລ້ານຊ້າງ ໄດ້ເກີດມີຄວາມຂັດແຍ່ງພາຍໃນ ເພື່ອຍາດຊິງກັນຂຶ້ນປົກຄອງແຜ່ນດິນ ເຊັ່ນ:

- ການຂັດແຍ່ງກັນ ລະຫວ່າງ ພະອຸປະຍຸວະຣາດຜູ້ເປັນໂອລົດ ກັບພະວໍຣະວົງສາທຳມິກະຣາດ ຜູ້ເປັນບິດາ ໃນປີ ຄສ 1622 ໂດຍຕົ້ນເຫດມາຈາກພະຍາວຽງ ຊຶ່ງດຳລົງຕຳແໜ່ງເປັນພະຍາເມືອງຈັນ ທີ່ມີຄວາມມັກໃຫຍ່ໄຝ່ສູງ ໄດ້ທຳການຍຸແຍ່ໃຫ້ພະອຸປະຍຸວະຣາດ ທຳການໂຄ່ນລົ້ມອຳນາດ ຂອງພະບິດາລົງ ໃນປີ ຄສ 1622. ຜົນການໂຄ່ນລົ້ມຄັ້ງນີ້ ເຖິງແມ່ນວ່າ ພະອຸປະຍຸວະຣາດຈະໄດ້ຮັບໄຊຊະນະ ແລະ ຂຶ້ນປົກຄອງກໍຕາມ ແຕ່ວ່າຕະຫຼອດໄລຍະທີ່ປົກຄອງແຜ່ນດິນນັ້ນບ້ານເມືອງ ກໍບໍ່ມີຄວາມສະຫງົບ; ບັນດາສັກດິນາຍິ່ງມີການແຕກແຍກອອກເປັນຫຼາຍກຸ່ມ ຊຶ່ງແຕ່ລະກຸ່ມຕ່າງກໍມີການສະສົມກຳລັງ ເພື່ອກຽມຍຶດອຳນາດສູນກາງເມື່ອກາລະໂອກາດອຳນວຍ.

- ການຍາດແຍ່ງອຳນາດກັນ ລະຫວ່າງ ພະຍາວຽງຜູ້ເປັນເສນາອາມາດ ກັບ ພະບັນດິດໂພທິສານ ທີ່ເປັນກະສັດໃນລະຫວ່າງ ປີ ຄສ 1623-1627 ໂດຍແມ່ນພະບັນດິດເປັນຜູ້ຊະນະ.

- ການຕໍ່ສູ້ຕ້ານການປົກຄອງ ຂອງເສນາອາມາດກັບພະໜ່ອແກ້ວ ຊຶ່ງເປັນກະສັດປົກຄອງໃນລະຫວ່າງ ປີ ຄສ 1627-1638 ເຖິງສອງຄັ້ງ ຄື ຄັ້ງທີ 1 ໃນປີ ຄສ 1628 ໂດຍແມ່ນພະຍາວຽງ ຫຼື ແສນຫຼວງຂວານຟ້າຜ່າ ໄດ້ນຳກຳລັງເຂົ້າຍຶດຕົວເມືອງວຽງຈັນ ແຕ່ກໍໄດ້ຖືກປາບປາມລົງຢ່າງຮຸນແຮງ ແລະ ພະຍາວຽງກໍໄດ້ຖືກຈັບໄປປະຫານຊີວິດ. ຄັ້ງທີ 2 ໃນປີ ຄສ 1635 ໂດຍແມ່ນພະປະທຸມ,

ໜ່ອມຊຸມພູ, ໜ່ອມພິມ ແລະ ພະຍາຈັນນະຄອນໄດ້ທ້ອນໂຮມກຳລັງ ແລ້ວລຸກຂຶ້ນໂຄ່ນລົ້ມອຳນາດ ຂອງພະໜ່ອມແກ້ວ ແຕ່ກໍບໍ່ປະສົບຜົນສຳເລັດ. ໜ່ອມພິມ, ພະປະທຸມໄດ້ຖືກຈັບ ແລະ ນຳໄປປະຫານ ຊີວິດ ໃນປີ ຄສ 1638; ສ່ວນໜ່ອມຊຸມພູສາມາດຫຼົບໜີໄປໄດ້.

ໃນປີ ຄສ 1638 ພາຍຫຼັງການສິ້ນພະຊົນຂອງພະໜ່ອມແກ້ວ ຢູ່ພາຍໃນອານາຈັກລ້ານຊ້າງ ຍິ່ງມີຄວາມວຸ່ນວາຍຂຶ້ນ; ທັ້ງນີ້ ກໍຍ້ອນການຍາດຊິງກັນຂຶ້ນຄອງບັນລັງ ໂດຍສະເພາະ ແມ່ນການຍາດ ຊິງອຳນາດຂອງສອງອ້າຍນ້ອງ ຄື ເຈົ້າຊຸມພູ ແລະ ເຈົ້າບຸນຊູ[33] ຊຶ່ງເປັນອ້າຍຂອງເຈົ້າສຸລິຍະກຸມມານ. ຕໍ່ໜ້າສະພາບການດັ່ງກ່າວ ກຸ່ມທີ່ສະໜັບສະໜູນເຈົ້າສຸລິຍະກຸມມານ ຜູ້ເປັນນ້ອງຫຼ້ານຳນຳເອົາກຳລັງ ຈາກທີ່ໝັ້ນພູເຂົ້າຄວາຍ ເຂົ້າມາຍຶດເອົານະຄອນວຽງຈັນໄດ້ສຳເລັດ. ຈາກນັ້ນ ເສນາອາມາດລາສະຄອນ ຈຶ່ງໄດ້ອະພິເສກເຈົ້າສຸລິຍະກຸມມານ ຂຶ້ນເປັນກະສັດປົກຄອງແຜ່ນດິນ ໃນເດືອນມິຖຸນາ ປີ ຄສ 1638 ແລະ ໄດ້ຖວາຍພະນາມ ວ່າ: ສົມເດັດພະເຈົ້າສຸລິຍະວົງສາ ໄຊຍະເຊດຖາ ທຳມິກະຣາດ.

2) ການຂະຫຍາຍຕົວຮຸ່ງເຮືອງຂອງອານາຈັກລ້ານຊ້າງ

ກ້າວເຂົ້າສູ່ຊຸມປີທີ 30 ຂອງສະຕະວັດທີ 17 ອານາຈັກລ້ານຊ້າງ ໄດ້ມີການພັດທະນາ ຂະຫຍາຍຕົວຮຸ່ງເຮືອງ ໂດຍສະເພາະ ນັບແຕ່ພະເຈົ້າສຸລິຍະວົງສາທຳມິກະຣາດ ໄດ້ຂຶ້ນປົກຄອງ ອານາຈັກ ເປັນຕົ້ນມາແຕ່ປີ ຄສ 1638 ຈົນຮອດ ປີ ຄສ 1695.

ກ. ການປັບປຸງອານາຈັກ

- ການກຳນົດນະໂຍບາຍການປົກຄອງ ຄືການປັບປຸງລະບົບການຈັດຕັ້ງສາຍງານຂອງລັດ ໃຫ້ສອດຄ່ອງ ຊຶ່ງໄດ້ແກ່ການກຳນົດຖານະ ແລະ ສິດອຳນາດຂອງສະຖາບັນກະສັດໃຫ້ຈະແຈ້ງ, ພ້ອມທັງກຳນົດຖານະ ແລະ ສິດອຳນາດຂອງກົງຈັກການຊ່ວຍວຽກກະສັດໃຫ້ຊັດເຈນ. ການປັບປຸງ ລະບົບຕ່າງການປ້ອງກັນຊາດປ້ອງກັນຄວາມສະຫງົບໃຫ້ເຂັ້ມແຂງ, ສ້າງລະບົບປ້ອງກັນນະຄອນຫຼວງ ດ້ວຍການປັບປຸງບູລະນະກຳແພງເມືອງ ແລະ ການສ້າງລະບົບການຄຸ້ມຄອງສັງຄົມ ດ້ວຍກົດໝາຍ ແລະ ລະບຽບການຕ່າງໆ ກຳຈັດກຸ່ມຄົນທີ່ຂັດແຍ່ງ ແລະ ເປັນປໍລະປັກຕໍ່ອຳນາດລັດ ດ້ວຍຮູບການ ຕ່າງໆ. ດຳເນີນການສ້າງສາຍພົວພັນ ກັບອານາຈັກອ້ອມຂ້າງຢ່າງມີໄມຕຣີຈິດ ທັງໃນຮູບແບບ ສາຍ ສຳພັນທາງໂລຫິດ ແລະ ແບບສ້າງສິ່ງຖາວອນທາງວັດຖຸ.

- ການຈັດຕຳແໜ່ງບໍລິຫານການປົກຄອງ ຄື ລະບົບບໍລິຫານອຳນາດສ່ວນກາງ ໃນສະໄໝ ລ້ານຊ້າງວຽງຈັນກວມເອົາເຂດເມືອງຫຼວງ ແລະ ເມືອງປ້ອມປາການ ຫຼື ເອີ້ນວ່າເມືອງກາງຢ້າວ. ລະບົບ ບໍລິຫານການປົກຄອງສ່ວນກາງ ຮວມມີອຳນາດລາຊາຕະກຸນ ແລະ ອຳນາດເສນາບໍດີ. ສະຖາບັນ ກະສັດປະກອບມີກະສັດ, ອຸປະລາດ, ລາຊະວົງ ແລະ ລາຊະບຸດ. ສະຖາບັນຂຸນນາງ ປະກອບມີຄະນະ ເສນາບໍດີຝ່າຍຂວາ, ຄະນະເສນາບໍດີຝ່າຍຊ້າຍ ແລະ ຄະນະເສນາບໍດີຝ່າຍກາງ. ຄະນະເສນາບໍດີ ຫຼື ເສນາມຸນຕີ ແມ່ນຄະນະບໍລິຫານວຽກງານຂອງອານາຈັກ ເຮັດໜ້າທີ່ເປັນກົງຈັກຊ່ວຍວຽກຂອງກະສັດ, ຮັບຜິດຊອບໃນຫຼາຍຖະແໜງການ, ມີການແບ່ງໜ້າທີ່ຂອບເຂດຮັບຜິດຊອບ ຢ່າງລະອຽດຊັດເຈນ. ອຳນາດທ້ອງຖິ່ນ ປະກອບມີ ເມືອງເອກເປັນນະຄອນຫຼວງ, ເປັນສູນກາງການ ປົກຄອງຂອງອານາຈັກ. ເຂື່ອນເມືອງເປັນເມືອງໃຫຍ່ ເມືອງຍຸດທະສາດ, ເປັນເມືອງທີ່ມີການຈັດການປົກຄອງເປັນຂອງຕົນເອງ. ຂອບເມືອງເປັນເມືອງ ທີ່ຕັ້ງຢູ່ຕາມເຂດຊາຍແດນຂອງອານາຈັກ, ຜູ້ປົກຄອງເມືອງເຫຼົ່ານີ້ ມີຖານະ ເປັນເຈົ້າຄອງເມືອງ, ມີສັກດິນາ 1200 ເງິນ. ອຳນາດການປົກ ຄອງຂຶ້ນກົງ ກັບເຂດຫຼວງທີ່ວຽງຈັນ.

[33] ໃນພົງສາວະດານລາວ ກ່າວວ່າ: ເຈົ້າຊຸມພູ, ເຈົ້າບຸນຊູ ແລະ ເຈົ້າສຸຣິຍະກຸມມານ ເປັນລາຊະໂອລົດຂອງເຈົ້າຕ່ອນຄຳ; ເຈົ້າຕ່ອນຄຳ ເປັນໂອລົດ ຂອງພະໜ່ອມແກ້ວ (ວິຣະວົງ, 1973: 79-80).

ຂ. ສັງຄົມ ແລະ ເສດຖະກິດ

ໂຄງປະກອບສ້າງຂອງ ສັງຄົມສະໄໝລ້ານຊ້າງວຽງຈັນ ມີລັກສະນະຄ້າຍຄືກັບສະໄໝ ຊຽງທອງ ໂດຍພິຈາລະນາຕາມກົດໝາຍໂຄສາລາດເຫັນວ່າ ໂຄງປະກອບສ້າງທາງສັງຄົມໄດ້ມີການ ແບ່ງຊັ້ນຄົນອອກເປັນປະເພດທີ່ມີຄວາມຊັດເຈນພໍສົມຄວນ ຄື ແບ່ງອອກເປັນຊັ້ນຄົນໃຫຍ່ໆ ດັ່ງນີ້: ກະສັດ, ຂຸນນາງ ຂ້າລາຊະການ ແລະ ໄພ່. ນອກຈາກນີ້, ຍັງມີຊັ້ນຄົນພິເສດ ຄື ພະສົງ. ການຄວບຄຸມ ຄົນໃນສັງຄົມ ຖືເອົາກົດໝາຍເປັນຫຼັກສົມທົບກັບຮີດຄອງ ແລະ ຄຳສອນຂອງພຸດທະສາສະໜາ ບວກ ກັບວັນນະກຳ ຄຳສອນ. ລັດໃນສັງຄົມລ້ານຊ້າງວຽງຈັນ ຖືເອົາບັນຫາກຳລັງພົນ ຫຼື ໄພ່ລາສະດອນ ເປັນ ອົງປະກອບພື້ນ ຖານທີ່ສຳຄັນຂອງການດຳລົງຄົງຕົວຂອງລັດ. ດັ່ງນັ້ນ, ລັດຈຶ່ງມີມາຕະການຕ່າງໆ ເພື່ອ ເຂົ້າຄວບຄຸມກຳລັງພົນ ໃຫ້ຢູ່ໃນກອບຂອງຮີດບ້ານຄອງເມືອງ ເພື່ອໃຫ້ມີການຢູ່ຮ່ວມກັນໂດຍສັນຕິ.

ໃນດ້ານເສດຖະກິດນັ້ນ ພື້ນຖານເສດຖະກິດຂອງລ້ານຊ້າງສະໄໝວຽງຈັນ ເປັນການກະສິກຳ ຫັດຖະກຳ ແລະ ການຄ້າເປັນອົງປະກອບ. ເສດຖະກິດລ້ານຊ້າງຫາກພິຈາລະນາຈາກຜົນຜະລິດ ແລະ ສິນຄ້າທີ່ສົ່ງອອກແລ້ວ ເຫັນວ່າເປັນເສດຖະກິດຂະໜາດນ້ອຍ, ມີລັກສະນະກະແຈກກະຈາຍ. ເຖິງວ່າ ລັດ ຈະມີແຜນການສົ່ງເສີມຂະຫຍາຍການຜະລິດ ແຕ່ກໍມີລັກສະນະຂຶ້ນກັບທຳມະຊາດ. ການກະສິກຳ ມີສອງປະເພດ: ການປູກຝັງ ແລະ ລ້ຽງສັດ. ການປູກຝັງ ແມ່ນໃຈກາງຂອງອາຊີບມີສອງຮູບແບບຄື ການເຮັດນາດຳ ແລະ ການເຮັດໄຮ່ເຮັດສວນ. ສະໄໝການປົກຄອງຂອງພະເຈົ້າສຸລິຍະວົງສາລັດ ມີການສົ່ງເສີມການຜະລິດການກະສິກຳ ແລະ ອອກກົດລະບຽບກ່ຽວກັບການຄຸ້ມຄອງທີ່ດິນ. ການ ຫັດຖະກຳ ຕາມຫຼັກຖານແລ້ວໄດ້ຮັບການພັດທະນາ ໃຫ້ຂະຫຍາຍຕົວໃນທຸກດ້ານ. ຕາມການບັນທຶກ ຂອງທູດການຄ້າ ໂຮນລັງບອກໃຫ້ຮູ້ວ່າ" ພໍ່ຄ້າຕ່າງແດນ ເຊັ່ນ ຈີນ, ສະຫຍາມ... ໄດ້ເອົາຜ້າ ຈາກອິນເດຍ ແລະ ຈີນມາ ແລກປ່ຽນກັບຜ້າຝ້າຍລາວລ້ານຊ້າງຢ່າງໜ້ອຍສາມຄັ້ງຕໍ່ປີ..." ການຄ້າ ໃນສະໄໝວຽງຈັນ ທຽບໃສ່ສະໄໝຊຽງທອງເຫັນວ່າ ມີການຂະຫຍາຍຕົວຫຼາຍ ຈົນເອີ້ນວ່າ "ຍຸກຄຳ" ຂອງລ້ານຊ້າງ. ອີງຕາມການບັນ ທຶກຂອງພໍ່ຄ້າຊາວຕາເວັນຕົກທີ່ເດີນທາງເຂົ້າມາວຽງຈັນ ໃນສະຕະວັດທີ 17 ບອກວ່າລ້ານຊ້າງມີສິນຄ້າຂາອອກຢູ່ສາມປະເພດ ຄື ແຮ່ທາດ, ເຄື່ອງປ່າຂອງດົງ ແລະ ແຜ່ນແພ (Lejosne :1987:103-164). ສິນຄ້າສົ່ງອອກທີ່ມີລາຄາແພງໄດ້ແກ່: ຍານ, ຄັ່ງ, ງາຊ້າງ, ນໍແຮດ ແລະ ແຮ່ທາດ. ສ່ວນສິນຄ້າ ຂາເຂົ້າ ແມ່ນເປັນສິນຄ້າປະເພດຟຸມເຟືອຍ. ລາຍຮັບ ສ່ວນໃຫຍ່ຂອງລັດໄດ້ມາຈາກ ງວດງາ, ອາກອນ ແລະ ການເກັບສ່ວຍ. ການຄ້າໃນເວລານັ້ນ ມີການໃຊ້ ເງິນເປັນພາຫານະສື່ກາງໃນການແລກປ່ຽນ. ຄ່າຂອງເງິນກຳນົດເອົາ " ບາດ" ເປັນຫົວໜ່ວຍ.

1.2.3 ການຊຸດໂຊມຂອງອານາຈັກລາວລ້ານຊ້າງ

ອານາຈັກລ້ານຊ້າງສະໄໝນີ້ ເປັນຍຸກສະໄໝທີ່ອານາຈັກລ້ານຊ້າງ ມີຄວາມຂັດແຍ່ງພາຍໃນ ໂດຍສະເພາະ ກຸ່ມສັກດິນາທີ່ມີອຳນາດ ຫຼັງຈາກການສິ້ນພະຊົນຂອງພະເຈົ້າສຸລິຍະວົງສາ. ການ ຂັດແຍ່ງພາຍໃນຂອງກຸ່ມສັກດິນານີ້ ໄດ້ກາຍເປັນສາເຫດເຮັດໃຫ້ອານາຈັກລ້ານຊ້າງທີ່ເຄີຍ ຮຸ່ງເຮືອງ ແລະ ເປັນເອກະພາບມາແຕ່ບູຮານນະການ ຕ້ອງຍຸດຕິແລ້ວຖືກແບ່ງອອກເປັນ 3 ອານາຈັກ ຄື: ປີ ຄສ 1707 ແຍກອອກເປັນ 2 ອານາຈັກ ລະຫວ່າງວຽງຈັນກັບຫຼວງພະບາງ ແລະ ປີ ຄສ 1713 ແຍກ ເປັນສາມອານາຈັກ ຄື ຈຳປາສັກແຍກອອກຈາກວຽງຈັນ. ສຸດທ້າຍກໍຕົກຢູ່ໃຕ້ອິດທິພົນຂອງສັກດິນາ ຕ່າງດ້າວ ໂດຍສະເພາະ ສັກດິນາສະຫຍາມ ໃນປີ ຄສ 1779. ອານາຈັກຊ່ວງນີ້ກຳນົດເອົາແຕ່ ປີ ຄສ 1713 ຈົນຮອດ ປີ ຄສ 1893.

1.2.3.1 ສະພາບຂອງອານາຈັກລາວລ້ານຊ້າງກ່ອນການແຕກແຍກ

ພາຍຫຼັງການສິ້ນພະຊົນ ຂອງພະເຈົ້າສຸຣິຍະວົງສາ ປີ ຄສ 1695 ອານາຈັກລາວລ້ານຊ້າງ ໄດ້ກ້າວເຂົ້າສູ່ຄວາມຊຸດໂຊມ ແລະ ແຕກແຍກ ຊຶ່ງສາເຫດຂອງການແຕກແຍກນັ້ນມາຈາກການຂັດແຍ່ງພາຍໃນ ຂອງສັກດິນາລ້ານຊ້າງເອງເພື່ອປົກຄອງ. ຂໍ້ຂັດແຍ່ງດັ່ງກ່າວນັ້ນ ແມ່ນເລີ່ມຈາກຂໍ້ຂັດແຍ່ງລະຫວ່າງ ກຸ່ມພະຍາຫຼວງເມືອງຈັນກັບກຸ່ມຂອງເຈົ້າຊາຍອົ່ງຫຸ່ ຊຶ່ງປະກອບມີເສນາບໍດີ ແລະ ບັນດາຜູ້ທີ່ຈົງຮັກພັກດີຕໍ່ພະເຈົ້າສຸຣິຍະວົງສາ ໃຫ້ການສະໜັບສະໜູນ ໃນປີ ຄສ 1695. ສາເຫດການ ຂັດແຍ່ງມາຈາກເຈົ້າຍິງ ສຸມັງຄະລາປະຕິເສດການຂໍແຕ່ງງານຂອງພະຍາຫຼວງເມືອງຈັນ ພາຍຫຼັງທີ່ປະກາດຕົນເອງ ເປັນຜູ້ສຳເລັດລາຊະການແຜ່ນດິນໃນເດືອນ 4 ປີ ຄສ 1695 ແທນເຈົ້າຊາຍກົ່ງກິດສະລາດ ແລະ ອິນທະໂສມ ທີ່ເປັນຫຼານຂອງພະເຈົ້າສຸຣິຍະວົງສາໂດຍບໍ່ມີໃຜຄັດຄ້ານໄດ້. ຈາກນັ້ນ, ພະຍາຫຼວງເມືອງຈັນກໍວາງແຜນເພື່ອ ຂົ້ນຄອງລາຊະບັນລັງ ໃຫ້ຖືກຕ້ອງຕາມກົດເກນການປົກຄອງຂອງອານາຈັກ ດ້ວຍການພະຍາຍາມສ້າງສາຍສຳພັນທາງເຄືອຍາດກັບເຊື້ອສາຍເຈົ້າສຸລິຍະວົງສາ ຄືຂໍແຕ່ງງານກັບເຈົ້າຍິງສຸມັງຄະລາ (ລູກສາວຂອງເຈົ້າ ສຸລິຍະວົງສາ) ແຕ່ຖືກປະຕິເສດ. ພ້ອມກັນນັ້ນ, ເຈົ້າຍິງ ສຸມັງຄະລາ ຍັງໜີຈາກວຽງຈັນໄປຢູ່ວັດໂພນສະເມັກ ນຳພະຄູຍອດແກ້ວກ່ອນຈະໄປພູສະຫງ້ຳທຳທີ່ເຊໂປນ ຊຶ່ງຕົນຕາມມາ ພາຍຫຼັງເຮັດໃຫ້ຈຳປາສັກມີການ ແຍກຕົວອອກຈາກວຽງຈັນ ໃນປີ ຄສ 1713 .

ການຂົ້ນເປັນເຈົ້າແຜ່ນດິນຂອງພະຍາຫຼວງເມືອງຈັນ ໄດ້ສ້າງຄວາມບໍ່ພໍໃຈຕໍ່ກັບເສນາມຸນຕີ ແລະ ປະຊາຊົນທີ່ພັກດີຕໍ່ພະເຈົ້າສຸລິຍະວົງສາ ອັນໄດ້ພາໃຫ້ເກີດມີກຸ່ມຕໍ່ຕ້ານຂົ້ນອີກຫຼາຍກຸ່ມ ເຊັ່ນ:

- ກຸ່ມເຈົ້າກົ່ງກິດສະລາດ-ອິນທະໂສມ ທີ່ເປັນຫຼານຂອງພະເຈົ້າສຸລິຍະວົງສາເຊິ່ງຕັ້ງໝັ້ນ ຢູ່ທາງພາກເໜືອໃນເຂດເມືອງພົງ, ເມືອງລາ, ແຄ້ວນສິບສອງປັນນາ.
- ກຸ່ມເຈົ້ານັນທະລາດ ໂອລົດຂອງເຈົ້າປຸ ເຊື້ອສາຍຂອງພະເຈົ້າສຸລິຍະວົງສາທີ່ປົກຄອງ ຢູ່ເມືອງນະຄອນພະນົມ.
- ກຸ່ມເຈົ້າໄຊອົ່ງເວ້ (ລູກເຈົ້າຊົມພູ) ຊຶ່ງເປັນຫຼານຂອງເຈົ້າສຸຣິຍະວົງສາທີ່ພຳນັກຢູ່ເມືອງເວ້
- ກຸ່ມຂອງເຈົ້າໜໍ່ກະສັດ (ລູກຂອງເຈົ້າຍິງສຸມັງຄະລາ ຫຼານເຈົ້າສຸຣິຍະວົງສາ) ທີ່ຕັ້ງໝັ້ນຢູ່ເມືອງໂຂງທີ່ມີພະຍອດແກ້ວສະໜັບສະໜູນ.

ບັນດາກຸ່ມສັກດິນາດັ່ງກ່າວນີ້ ຕ່າງກໍມີຈຸດປະສົງເປົ້າໝາຍຂອງຕົນ ເພື່ອຊິງເອົາທ່າໄດ້ປຽບທາງກຳລັງດ້ວຍການກໍ່ສ້າງ ແລະ ປັບປຸງກຳລັງທາງດ້ານການທະຫານພໍໃຜພໍລາວ ເພື່ອໂຄ່ນລົ້ມ ເຈົ້າແຜ່ນດິນຫຼວງເມືອງຈັນ.

ຝ່າຍພະຍາຫຼວງເມືອງຈັນ ໃນຖານະທີ່ເປັນເຈົ້າແຜ່ນດິນ ທີ່ປົກຄອງອານາຈັກລາວລ້ານຊ້າງ ເຖິງວ່າຈະມີອຳນາດເດັດຂາດໃນການປົກຄອງ ແຕ່ກໍບໍ່ໄດ້ຮັບການຮ່ວມມື ຈາກເສນາມຸນຕີ ແລະ ປະຊາຊົນ; ຊ້ຳບໍ່ໜຳຍັງຖືກຕໍ່ຕ້ານຈາກເສນາມຸນຕີອີກ. ການຂັດແຍ່ງດັ່ງກ່າວນີ້ ໄດ້ເຮັດໃຫ້ນະຄອນຫຼວງວຽງຈັນເກີດມີສະພາບການປັ່ນປ່ວນພາຍໃນ ປະກອບກັບການເຄື່ອນຍ້າຍໜີອອກຈາກເມືອງວຽງຈັນ ໄປຕັ້ງຖິ່ນຖານຢູ່ແຫ່ງໃໝ່ ຂອງປະຊາຊົນເປັນຈຳນວນຫຼວງຫຼາຍ. ຈາກສະພາບການດັ່ງກ່າວນີ້ ໄດ້ກາຍເປັນເງື່ອນໄຂອັນດີ ໃຫ້ແກ່ບັນດາກຸ່ມສັກດິນາທີ່ຕໍ່ຕ້ານກັບພະຍາຫຼວງເມືອງຈັນ ດຳເນີນການ ເຄື່ອນໄຫວ ດ້ວຍການນຳເອົາກຳລັງມາບຸກຕີເມືອງວຽງຈັນ ເຊັ່ນ:

- ກຸ່ມພະເຈົ້າອົ່ງຫຸ່ ທີ່ໄດ້ຮັບການສະໜັບສະໜູນຈາກເສນາມຸນຕີຈຳນວນໜຶ່ງ ໄດ້ຍົກກຳລັງພົນມາຈາກເມືອງພານພູຊົນ[34] ມາຍຶດເອົາເມືອງວຽງຈັນແບບສາຍຟ້າແມບ ໂດຍທີ່ພະຍາຫຼວງເມືອງຈັນບໍ່ທັນຮູ້ມາກ່ອນ. ກອງທະຫານຂອງພະຍາເມືອງຈັນບໍ່ສາມາດຕ້ານທານໄດ້ ແລະ ພະຍາເມືອງຈັນ ເມື່ອເຫັນກອງທະຫານຂອງຕົນທີ່ຈະຕ້ານທານບໍ່ໄຫວແລ້ວ ກໍເລີຍກົ້ນຢາຕາຍຢູ່ໃນພະລາຊະວັງ. ຈາກນັ້ນ,

[34] ເມືອງພານພູຊົນ ປັດຈຸບັນມີທີ່ຕັ້ງຢູ່ໃນເຂດ ເມືອງບ້ານຜົ ແຂວງອຸດອມ ປະເທດໄທ ອ້າງໃນສີລາວິຣະວົງ. ພົງສາວະ ດານລາວ. ປີ ຄສ 2001:105

ເສນາມຸນຕີ ແລະ ປະຊາຊົນກໍໄດ້ຈັດພິທີລາຊາພິເສກເຈົ້າອົ່ງຫູ່ເປັນເຈົ້າແຜ່ນດິນອານາຈັກລາວລ້ານຊ້າງຕາມປະເພນີ.

- ກຸ່ມເຈົ້ານັນທະລາດ ທີ່ເປັນໂອລົດຂອງເຈົ້າປຸ ເຊື້ອສາຍຂອງພະເຈົ້າສຸລິຍະວົງສາທີ່ປົກຄອງຢູ່ເມືອງສີໂຄດຕະບອງ ເມື່ອຮູ້ຂ່າວວ່າເຈົ້າອົ່ງຫູ່ຂຶ້ນເປັນເຈົ້າແຜ່ນດິນກະສັດກໍຍົກກຳລັງມາບຸກຕີຍຶດເອົາລາຊະວັງ ແລະ ຈັບເອົາເຈົ້າອົ່ງຫູ່ໄປປະຫານຊີວິດ ແລ້ວສະຖາປະນາຕົນເອງຂຶ້ນເປັນເຈົ້າແຜ່ນດິນແຫ່ງອານາຈັກລາວລ້ານຊ້າງ.

- ເຈົ້າໄຊອົ່ງເວ້ ລູກຂອງເຈົ້າຊົມພູ ແລະ ເປັນຫຼານຂອງພະເຈົ້າສຸລິຍະວົງສາທີ່ອາໄສຢູ່ເມືອງເວ້ ເມື່ອໄດ້ຂ່າວວ່າພະເຈົ້າສຸລິຍະວົງສາສິ້ນພະຊົນແລ້ວກໍວາງແຜນເພື່ອມາປົກຄອງອານາຈັກລ້ານຊ້າງ ຈາກພະຍາຫຼວງເມືອງຈັນ ດ້ວຍການຍົກກຳລັງເຂົ້າສູ່ແດນອານາຈັກລ້ານຊ້າງທາງພາກເໜືອເຂດສິບສອງຈຸໄທ, ຫົວພັນທັງຫ້າທັງຫົກ ເພື່ອເຕົ້າໂຮມກຳລັງ ແລ້ວຍັບເຂົ້າມາຕັ້ງໝັ້ນຢູ່ເມືອງພວນຊຽງຂວາງ. ແຕ່ວ່າໃນເວລານັ້ນ ສະພາບການຢູ່ໃນເມືອງວຽງຈັນໄດ້ປ່ຽນແປງໄປ ເຈົ້າໄຊອົ່ງເວ້ ຈຶ່ງໄດ້ຊັ່ງຊາກຳລັງເຫັນວ່າຝ່າຍຕົນມີກຳລັງເໜືອກວ່າ ຈຶ່ງຮີບຍົກກຳລັງຈາກເມືອງພວນມຸ່ງໜ້າສູ່ວຽງຈັນທາງດ້ານທິດຕາເວັນອອກ. ຝ່າຍເຈົ້ານັນທະລາດເມື່ອຮູ້ຂ່າວກໍຍົກກຳລັງອອກມາຕ້ານທານ; ທັງສອງຝ່າຍຕໍ່ສູ້ກັນຢ່າງດຸເດືອດເຈົ້ານັນ ທະລາດແຫ່ງເມືອງວຽງຈັນ ເມື່ອເຫັນວ່າກຳລັງຂອງຕົນມີໜ້ອຍກໍຖອຍເຂົ້າໃນກຳແພງເມືອງ. ສຸດທ້າຍກໍ ຖືກກອງທະຫານຂອງເຈົ້າໄຊອົ່ງເວ້ຈັບໄດ້ ແລະ ຖືກປະຫານຊີວິດໃນໄລຍະຕໍ່ມາ. ຈາກນັ້ນເຈົ້າໄຊອົ່ງເວ້ ກໍປະກາດຕົນເອງເປັນພະເຈົ້າແຜ່ນດິນແຫ່ງອານາຈັກລ້ານຊ້າງ.

ເວົ້າລວມແລ້ວ ສະພາບຂອງອານາຈັກລາວລ້ານຊ້າງ ນັບແຕ່ການສິ້ນພະຊົນຂອງພະເຈົ້າສຸລິຍະວົງສາ ປີ ຄສ 1695 ຈົນຮອດ ປີ ຄສ 1700 ແມ່ນເຕັມໄປດ້ວຍຂໍ້ຂັດແຍ່ງພາຍໃນຂອງກຸ່ມສັກດິນາປົກຄອງດ້ວຍກັນເພື່ອຍາດແຍ່ງຊີ່ງກັນຂຶ້ນປົກຄອງ. ຜົນຂອງການຂັດແຍ່ງ ແລະ ຊີ່ງກັນຂຶ້ນປົກຄອງນັ້ນ ໄດ້ມີສ່ວນເຮັດໃຫ້ອານາຈັກລ້ານຊ້າງ ທີ່ເຄີຍຮຸ່ງເຮືອງເປັນເອກະພາບ ແລະ ກ້ວາງໃຫຍ່ໄພສານມາ ແຕ່ກ່ອນໄດ້ແຍກອອກເປັນຫຼາຍອານາຈັກປົກຄອງພໍໃຜພໍລາວ.

1.2.3.2 ການແຍກຕົວອອກເປັນຫຼາຍອານາຈັກຂອງອານາຈັກລ້ານຊ້າງ

ກ. ການແຍກຕົວຂອງຫຼວງພະບາງ

ກ້າວເຂົ້າສູ່ທ້າຍ ປີ ຄສ 1699 ຄວາມຂັດແຍ່ງພາຍໃນຂອງສັກດິນາລາວລ້ານຊ້າງໄດ້ກ້າວເຂົ້າສູ່ຄວາມເຄັ່ງຕຶງ ໂດຍສະເພາະ ແມ່ນຄວາມຂັດແຍ່ງພາຍໃນ ລະຫວ່າງ ເຊື້ອສາຍ ຂອງພະເຈົ້າສຸລິຍະວົງສາເອງ ເພື່ອຍາດຊີ່ງກັນຂຶ້ນກຳອຳນາດທີ່ກະຈາຍກັນຢູ່ໃນຫົວເມືອງຕ່າງໆ.

ທາງພາກເໜືອ ໂດຍມີເຈົ້າກິ່ງກິດສະຣາດ ແລະ ເຈົ້າອິນທະໂສມ ເຊິ່ງເປັນລູກຂອງ ເຈົ້າລາຊະບຸດ ທີ່ອົບພະຍົບລົບໜີໄປຢູ່ໄປອາໄສຢູ່ເມືອງພົງເມືອງລາໃນສະໄໝການປົກຄອງຂອງພະຍາຫຼວງເມືອງຈັນໃນເຂດສິບສອງປັນນາ ໄດ້ນຳເອົາກຳລັງໄພ່ພົນຈາກເມືອງຊຽງຮຸ້ງ ມາບຸກຕີເອົາຫຼວງພະບາງ ເຮັດໃຫ້ທ້າວລອງເຈົ້າເມືອງຫຼວງພະບາງສູ້ບໍ່ໄດ້ແລ້ວໜີມາຢູ່ວຽງຈັນ. ຈາກນັ້ນ, ເຈົ້າກິ່ງກິດສະຣາດ ກໍປະກາດຕົນຂຶ້ນເປັນເຈົ້າຊີວິດແຫ່ງເມືອງຫຼວງພະບາງ ໃນປີ ຄສ 1705 ແລ້ວດຳເນີນການປັບປຸງ ແລະ ຈັດລະບຽບການປົກຄອງອານາຈັກຂອງຕົນຄືນໃໝ່. ປີ ຄສ 1706 ເຈົ້າກິ່ງກິດສະລາດ ໄດ້ນຳເອົາກຳລັງໄພ່ພົນ ຈາກຫຼວງພະບາງຍົກທັບລົງມາຕີພະເຈົ້າໄຊອົ່ງເວ້ ທີ່ວຽງຈັນ ການຕໍ່ສູ້ເປັນໄປຢ່າງດຸເດືອດຕ່າງຝ່າຍ ຕ່າງກໍມີກຳລັງພໍທີ່ຈະສູ້ຢັນກັນ ເພື່ອຊີ່ງເອົາທ່າຄວາມໄດ້ປຽບຕໍ່ໄປ ໂດຍບໍ່ມີຝ່າຍໃດຍິນຍອມກັນ. ກຸ່ມທີ່ວິຕົກກັງວົນວ່າ ຕົນເອງມີກຳລັງໜ້ອຍກວ່າ ກໍຕ້ອງຂົນຂວາຍຍື່ນມືໄປຂໍຄວາມຊ່ວຍເຫຼືອຈາກ ສັກດິນາອ້ອມຂ້າງ ເຊັ່ນ ຝ່າຍວຽງຈັນໄປຂໍຄວາມຊ່ວຍເຫຼືອຈາກສັກດິນາສະຫຍາມ. ສັກດິນາສະຫຍາມ ກໍຖືເອົາກາລະໂອກາດນີ້ຕັດຮອນກຳລັງຂອງສັກດິນາລ້ານຊ້າງ ເພື່ອຜັນແຍກສັກດິນາລ້ານຊ້າງ ອອກຈາກກັນດ້ວຍການໄກ່ເກ່ຍ ໃຫ້ແຕ່ລະຝ່າຍຕົກລົງເຈລະຈາດ້ວຍວິທີ

ການແບ່ງເຂດປົກຄອງ ຄື ແບ່ງແຜ່ນດິນລ້ານຊ້າງອອກເປັນສອງອານາຈັກ ຄື ອານາຈັກລ້ານຊ້າງ ຫຼວງພະບາງ ແລະ ອານາຈັກລ້ານຊ້າງວຽງຈັນ ຢ່າງສົມບູນ ໃນປີ ຄສ 1707 ໂດຍທິດໃຕ້ມີສາຍນ້ຳເຫືອງ ເປັນເສັ້ນແບ່ງ ເຂດແດນ ຂຶ້ນເມືອຈົນຮອດຜາໄດຜາດ່າງ; ທິດເໜືອຮອດສິບສອງປັນນາຕໍ່ແດນຈີນ ແລະ ຫວຽດນາມ. ທິດຕາເວັນຕົກສຸງເໜືອຕໍ່ແດນພະມ້າ ແລະ ທິດຕາເວັນອອກສຸງເໜືອກວມເອົາ ສິບສອງຈຸໄທ. ສ່ວນດິນແດນ ຂອງພະເຈົ້າໄຊອົງເວ້ ມີເຂດແດນແຕ່ປາກນ້ຳເຫືອງລົງມາ; ທິດຕາເວັນ ອອກຕິດກັບສາຍພູແດນຫວຽດ ນາມກວມເອົາເຂດແຄວ້ນຊຽງຂວາງ, ທິດໃຕ້ຮອດຫຼີ່ຜີ ກວມເຖິງ ດິນແດນສອງຝັ່ງແມ່ນ້ຳຂອງ ແລະ ສາຂາຂອງທັງສອງຝັ່ງ. ທິດຕາເວັນຕົກຕິດກັບສາຍພູພະຍາພໍ່ ພະຍາໄຟ[35].

ຂ. ການແຍກຕົວຂອງຈຳປາສັກ

ການແຍກຕົວຂອງອານາຈັກລ້ານຊ້າງຈຳປາສັກ ມີຈຸດເລີ່ມຕົ້ນ ມາຕັ້ງແຕ່ພາຍຫຼັງການ ສິ້ນພະຊົນ ຂອງພະເຈົ້າສຸລິຍະວົງສາທຳມິກະຣາດ. ໂດຍສະເພາະ ພາຍຫຼັງທີ່ພະຍາເມືອງຈັນ ອັກຄະມະຫາເສນາບໍດີຝ່າຍຂວາ ໄດ້ຂຶ້ນກຳອຳນາດ, ເຮັດໃຫ້ນຳໄປສູ່ການເກີດຂໍ້ຂັດແຍ່ງ ຊຶ່ງຜົນ ຂອງການຂັດແຍ່ງນັ້ນເຮັດໃຫ້ເຈົ້າຍິງສຸມັງຄະລາລູກສາວ ຂອງພະເຈົ້າສຸລິຍະວົງສາ ຕ້ອງໜີຈາກ ວຽງຈັນໄປຢູ່ວັດໂພນສະເມັກນຳ ພະຄູຍອດແກ້ວກ່ອນຈະໄປພູສະຫຼໍ ແລະ ຈຳປາສັກ. ຕໍ່ມາ ໃນປີ ຄສ 1709 ນະຄອນຈຳປາສັກໄດ້ເກີດມີຄວາມວຸ້ນວາຍ ແຕ່ດ້ວຍຄວາມເຫຼື້ອມໃສ ຕໍ່ກັບພຣະຄູຍອດແກ້ວ ບາງແພງເຈົ້າເມືອງຈຳປາສັກ ຈຶ່ງໄດ້ມອບເມືອງໃຫ້ພະຄູຍອດແກ້ວປົກຄອງ. ແຕ່ກິດຈະການບາງ ປົກຄອງ ບາງຢ່າງທາງການເມືອງບໍ່ສາມາດທີ່ຈະອະນຸຍາດໃຫ້ພະສົງເຂົ້າດຳເນີນກິດຈະການໄດ້ ເຊັ່ນ: ການຕັດສິນໃສ່ໂທດຜູ້ກະທຳຜິດ. ທ່ານພະຄູຍອດແກ້ວ ຈຶ່ງໄດ້ແຕ່ງແສນພະຍາມາເຊີນເອົາເຈົ້າໜໍ່ ກະສັດ ເຊິ່ງເປັນລູກຊາຍຂອງເຈົ້າຍິງສຸມັງຄະລາທີ່ອາໄສຢູ່ໃນເຂດພື້ນທີ່ພູສະຫຼໍ. ແລ້ວຈາກນັ້ນກໍໄດ້ ເຮັດລາຊາພິເສກເຈົ້າໜໍ່ກະສັດຂຶ້ນເປັນກະສັດແຫ່ງອານາຈັກລ້ານຊ້າງຈຳປາສັກ ຖວາຍພະນາມວ່າ "ເຈົ້າສ້ອຍສີສະມຸດພຸດທັງກູນ" ແລະ ໄດ້ປະກາດແຍກຕົວອອກຈາກອານາຈັກລ້ານຊ້າງວຽງຈັນ ໃນປີ ຄສ 1713 ໂດຍມີ ເຂດ ແດນຟາກນ້ຳຂອງທາງຝັ່ງຂວານັບແຕ່ເມືອງມຸກດາຫານ.

ການແຍກຕົວອອກເປັນຫຼາຍອານາຈັກຂອງລາວລ້ານຊ້າງນັ້ນ ບໍ່ມີຜົນດີອັນໃດຕໍ່ກັບຊົນຊັ້ນ ສັກດິນາລາວທີ່ປົກຄອງໃນແຕ່ລະອານາຈັກໃນເວລານັ້ນ ເວົ້າລວມກໍຄືປະຊາຊົນລາວຊາວລ້ານຊ້າງ ທັງໝົດ. ຊ້ຳບໍ່ໜຳຍັ້ງເຮັດໃຫ້ຂໍ້ຂັດແຍ່ງພາຍໃນຂອງສັກດິນາລາວ ໃນແຕ່ລະອານາຈັກເພີ່ມທະວີຂຶ້ນ. ສິ່ງສຳຄັນຂອງຜົນທີ່ເກີດຈາກຄວາມຂັດແຍ່ງ ແລະ ການແຍກຕົວອອກເປັນຫຼາຍອານາຈັກນີ້ໄດ້ກາຍ ເປັນຜົນດີໃຫ້ແກ່ສັກດິນາອ້ອມຂ້າງ ໂດຍສະເພາະ ພວກສັກດິນາສະຫຍາມ ທີ່ກຳລັງຂະຫຍາຍອານາ ເຂດ ແລະ ແຜ່ອິດທິພົນໃນເວລານັ້ນ ສວຍໂອກາດໂດຍການໃຫ້ການສະໜັບສະໜູນຝ່າຍໜຶ່ງ ໃຫ້ຍົກ ກຳລັງມາໂຈມຕີອີກຝ່າຍໜຶ່ງ ໂດຍມີຈຸດປະສົງແນໃສ່ເຮັດໃຫ້ສັກດິນາອານາຈັກລ້ານຊ້າງທີ່ກຳລັງອ່ອນ ເພຍຢູ່ນັ້ນມີຄວາມອ່ອນເພຍລົງອີກ ເພື່ອຕົນຈະໄດ້ຄອບຄອງ ຊຶ່ງສະແດງອອກຢ່າງຈະແຈ້ງ ໃນປີ ຄສ 1779 ອານາຈັກລາວລ້ານຊ້າງທັງສາມອານາຈັກ ໄດ້ຖືກກອງທັບຂອງສັກດິນາຫຍາມເຂົ້າຮຸກຮານ ແລະ ຄອບຄອງ.

1.2.4 ສັກດິນາສະຫຍາມຮຸກຮານ ແລະ ຄອບຄອງລາວ

1.2.4.1 ສະພາບຂອງອານາຈັກລາວລ້ານຊ້າງກ່ອນສັກດິນາສະຫຍາມຮຸກຮານ

ຫຼັງຈາກທີ່ອານາຈັກລາວລ້ານຊ້າງຖືກແຕກແຍກ ແລະ ຕັດແບ່ງອອກເປັນສາມອານາຈັກ ໃນປີ ຄສ 1713 ແລ້ວ ສັກດິນາລາວທີ່ປົກຄອງໃນແຕ່ລະອານາຈັກຕ່າງກໍຈັດການດຳເນີນການປົກຄອງ

[35] ອ້າງໃນ ສຸເນດ ໂພທິສານ. ປະຫວັດສາດລາວ ປີ ຄສ 2000 : 302

ພໍ່ໃຜພໍ່ລາວພາຍໃຕ້ຂໍ້ຂັດແຍ່ງພາຍໃນກົ່ວດຽວກັນ ແລະ ຂໍ້ຂັດແຍ່ງ ລະຫວ່າງກົ່ວ. ບັນດາຂໍ້ຂັດແຍ່ງ ດັ່ງກ່າວນັ້ນ ໄດ້ກາຍເປັນໜຶ່ງໃນຫຼາຍປັດໄຈ ທີ່ເຮັດໃຫ້ອານາຈັກລາວລ້ານຊ້າງ ຕົ້ວເປັນເປົ້າໝາຍ ຮຸກຮານຂອງສັກດິນາສະຫຍາມໃນເວລາຕໍ່ມາ.

1) ສະພາບອານາຈັກລ້ານຊ້າງຫຼວງພະບາງ

ພາຍຫຼັງທີ່ປະກາດແຍກຕົ້ວອອກຈາກວຽງຈັນ ເປັນອານາຈັກໜຶ່ງແລ້ວ ເຈົ້ານົ່ງກິດສະລາດ ກໍ ປະກາດຕົ້ນເອງຂຶ້ນເປັນກະສັດປົກຄອງເມືອງຫຼວງພະບາງ ດຳເນີນການປັບປຸງການປົກຄອງໃນເມືອງ ຫຼວງພະບາງຄືນໃໝ່. ແຕ່ວ່າສະພາບຂໍ້ຂັດແຍ່ງ ລະຫວ່າງກຸ່ມສັກດິນາພາຍໃນຂອງອານາຈັກລ້ານຊ້າງ ຫຼວງພະບາງ ຍັງສືບຕໍ່ຄົ້ງຕົ້ວເລື້ອຍມາ ໂດຍສະເພາະ ການຍາດແຍ່ງຊີ້ງອຳນາດກັນຂຶ້ນປົກຄອງ ອານາຈັກ ເຊັ່ນ:

- ການຍາດຊີ້ງອຳນາດຂອງເຈົ້າອິນທະໂສມ ຊຶ່ງເປັນນ້ອງຊາຍຂອງເຈົ້ານົ່ງກິດສະລາດ ທີ່ໜີ ໄປຢູ່ເມືອງແພ່ໄດ້ຂໍກຳລັງຈາກເມືອງພົ້ງ ແລະ ເມືອງລາ ລົ້ງມາຍຶດເອົາເມືອງຫຼວງພະບາງ ຈາກເຈົ້າອົ້ງຄຳ ຜູ້ທີ່ສືບທອດບັນລັງອານາຈັກຫຼວງພະບາງຈາກເຈົ້ານົ່ງກິດສະລາດ. ແຕ່ເຈົ້າອົ້ງຄຳເຫັນວ່າ ເປັນຍາດ ພີ່ນ້ອງກັນ ຈົ່ງໄດ້ແຕ່ງເສນາບໍດີໄປເຊີນເອົາເຈົ້າອິນທະໂສມ ເຂົ້າມາຮັບລາຊະການຢູ່ນຳກັນແບບສັນຕິ. ແຕ່ເຈົ້າອິນທະໂສມບໍ່ຍອມ. ດັ່ງນັ້ນ, ມາ ໃນປີ ຄສ 1723 ສວຍໂອກາດທີ່ເຈົ້າອົ້ງຄຳອອກໄປປະຕິ ບັດພາລະກິດຂ້າງນອກ, ເຈົ້າອິນທະໂສມກໍໄດ້ອັດປະຕູເມືອງ ແລ້ວປະກາດຕົ້ນເອງຂຶ້ນເປັນກະສັດ ປົກຄອງອານາຈັກຫຼວງພະບາງແທນ. ຝ່າຍເຈົ້າອົ້ງຄຳ ເມື່ອຮູ້ວ່າຖືກຍາດແຍ່ງບັນລັງແລ້ວ ກໍໄດ້ໜີໄປ ບອດຢູ່ອານາຈັກລ້ານນາຊຽງໃໝ່.

- ການຍາດແຍ່ງຊີ້ງອຳນາດກັນຂອງເຈົ້າໄຊຕິກະ ກັບເຈົ້າສຸລິຍະວົ້ງ ຊຶ່ງເປັນອ້າຍນ້ອງດຽວກັນ, ສຸດທ້າຍເຈົ້າໄຊຕິກະ ກໍໄດ້ມອບລາຊະສົມບັດໃຫ້ເຈົ້າສຸລິຍະວົ້ງປົກຄອງສືບແທນຕໍ່ມາ.

ໃນສະໄໝການປົກຄອງຂອງເຈົ້າສຸລິຍະວົ້ງ ແຫ່ງອານາຈັກຫຼວງພະບາງນີ້ ໄດ້ມີການຍົກ ກຳລັງທັບລົ້ງມາບຸກຕີອານາຈັກລ້ານຊ້າງວຽງຈັນ ແຕ່ບໍ່ສາມາດເອົາຊະນະກຳລັງທັບອານາຈັກວຽງຈັນ ຂອງເຈົ້າສິລິບຸນຍະສານໄດ້. ເພາະໃນເວລານັ້ນ ເຈົ້າສິລິບຸນຍະສານໄດ້ຮັບການຊ່ວຍເຫຼືອຈາກກຳລັງ ທັບຂອງພະມ້າ ແລະ ພະມ້າກໍໄດ້ນຳເອົາກຳລັງມາບຸກຕີຫຼວງພະບາງ ເຮັດໃຫ້ເຈົ້າສຸລິຍະວົ້ງທີ່ຕັ້ງທັບ ປິດລ້ອມວຽງຈັນ ໃນຂະນະນັ້ນ ຕ້ອງນຳກຳລັງກັບມາຕໍ່ຕ້ານສັກດິນາພະມ້າ ແຕ່ບໍ່ສາມາດຕໍ່ສູ້ໄດ້ ຈົ່ງໄດ້ ຍອມອ່ອນນ້ອມສົ່ງສ່ວຍໃຫ້ແກ່ພະມ້າ. ແຕ່ວ່າ ໃນປີ ຄສ 1774 ເຈົ້າສຸລິຍະວົ້ງແຫ່ງອານາຈັກລ້ານຊ້າງ ຫຼວງພະບາງ ກໍໄດ້ໄປຜູກເປັນສຳພັນທະມິດ ກັບພະເຈົ້າຕາກສິນ ສັກດິນາສະຫຍາມແຫ່ງກຸງທົ່ນບຸລີ ດ້ວຍການເອົາໃຈອອກຫ່າງຈາກພະມ້າ. ຈາກນັ້ນຕໍ່ມາ ກໍຕົ້ກເປັນເມືອງຂຶ້ນຂອງສັກດິນາສະຫຍາມ ຫຼັງຈາກທີ່ສະຫຍາມຍົກທັບຫຼວງມາຮຸກຮານບຸງດຍຶດເອົາອານາຈັກລ້ານຊ້າງຈຳປາສັກ ໃນປີ ຄສ 1778 ແລະ ອານາຈັກລ້ານຊ້າງວຽງຈັນ ໃນປີ ຄສ 1779.

2) ສະພາບອານາຈັກລ້ານຊ້າງວຽງຈັນ

ສະຖານະການທົ່ວໄປ ຂອງອານາຈັກລ້ານຊ້າງວຽງຈັນ ພາຍຫຼັງການແຍກຕົ້ວອອກ ຂອງ ອານາຈັກຫຼວງພະບາງ ແລະ ຈຳປາສັກແລ້ວ ກໍຍັງມີສະຖານະພາບຢູ່ໃນຄວາມບໍ່ສະຫງົ່ບ. ພາຍໃນ ຊົນຊັ້ນປົກຄອງທີ່ກຳອຳນາດ ກໍຍັງສືບຕໍ່ມີການຂັດແຍ່ງກັນປະກອບກັບການຂັດແຍ່ງ ລະຫວ່າງ ກຸ່ມ ສັກດິນາລາວດ້ວຍກັນ. ໂດຍສະເພາະໃນສະໄໝການປົກຄອງຂອງພະເຈົ້າສິລິບຸນຍະສານ ຄື: ເລີ່ມແຕ່ ປີ ຄສ 1730 ມາພາຍໃນເມືອງວຽງຈັນ ໄດ້ເກີດມີຄວາມປັ່ນປ່ວນທາງດ້ານການເມືອງ ຈົນນຳໄປສູ່ ສົ້ງຄາມກາງເມືອງເກີດຂຶ້ນຢ່າງລຸນຕິດ ແລະ ໃນທີ່ສຸດຕ້ອງສູນເສຍອານາຈັກໃຫ້ແກ່ສັກດິນາສະຫຍາມ ໃນໄລຍະຕໍ່ມາ ເຊັ່ນ:

ເຫດການທີ່ເມືອງນະຄອນ:

ໃນປີ ຄສ 1735 ທ້າວກູ່ແກ້ວ ໂອລົດຂອງພະບໍລົມຣາຊາເຈົ້າເມືອງນະຄອນ ທີ່ໜີໄປຢູ່ຈຳປາສັກ ເມື່ອຮູ້ຂ່າວວ່າອ້າຍເຂີຍຕົນເອງໄດ້ເປັນເຈົ້າເມືອງ ກໍມີຄວາມເສຍໃຈ ແລ້ວລະດົມເອົາກຳລັງໄພ່ພົນໃນເຂດເຊກະຕາກ, ເມືອງວັງ, ຄຳເກີດ, ຄຳມ່ວນເຂົ້າເປັນພັກພວກມາຕັ້ງທັບຂັດຂວາງ. ທ້າວຄຳສິງ ເຈົ້າເມືອງນະຄອນຜູ້ເປັນອ້າຍເຂີຍ ບໍ່ສາມາດປາບປາມໄດ້ ຈຶ່ງໄປຂໍກຳລັງຈາກເຈົ້າຊີວິດແຫ່ງອານາຈັກອານາມ ມາຊ່ວຍແຕ່ຖືກກຳລັງຂອງທ້າວກູ່ແກ້ວອອກໄປຮັບຕ້ອນມາເປັນພວກແລ້ວນຳກຳລັງທະຫານອານາມ ດັ່ງກ່າວຈຳນວນ 6000 ຄົນ ພ້ອມທະຫານລາວ 3000 ຄົນ ຍົກມາຕີເມືອງນະຄອນ. ສຸດທ້າຍ ກໍຖືກກອງກຳລັງທະຫານ ທີ່ນຳພາໂດຍພະຍາຊຸງສາຈາກເມືອງວຽງຈັນ ລົງມາສົມທົບກັບກຳລັງຂອງເຈົ້າເມືອງນະຄອນທຳການຕີຕໍ່ຕ້ານຄືນ ເຮັດໃຫ້ທະຫານອານາມຖືກຂ້າຕາຍຢ່າງຫຼວງຫຼາຍ. ສ່ວນທ້າວກູ່ແກ້ວ ໄດ້ຖືກພະຍາຊຸງສາຈັບໄດ້ ແລະ ໄດ້ທຳການສຶກສາອົບຮົມ ແລ້ວແຕ່ງຕັ້ງໃຫ້ເປັນເຈົ້າປົກຄອງເມືອງນະຄອນ.

ເຫດການພຣະວໍຣະປິຕາ:

ປີ ຄສ 1759 ພຣະວໍຣະປິຕາ ເສນາບໍດີຜູ້ໃຫຍ່ໃນກົງຈັກການປົກຄອງແຫ່ງອານາຈັກລ້ານຊ້າງວຽງຈັນໄດ້ເກີດມີຄວາມຂັດແຍ່ງກັບພະເຈົ້າສິລິບຸນຍະສານ. ຈາກນັ້ນ, ໄດ້ນຳເອົາກຳລັງໄພ່ພົນພ້ອມດ້ວຍຍາດຕິພີ່ນ້ອງເປັນຈຳນວນຫຼວງຫຼາຍໜີອອກຈາກເມືອງວຽງຈັນໄປຕັ້ງແຂງເມືອງຢູ່ທີ່ໜອງບົວລຳພູ ແລ້ວປະກາດຕົນເປັນອິດສະຫຼະບໍ່ຂຶ້ນກັບວຽງຈັນ. ຝ່າຍພະເຈົ້າສິລິບຸນຍະສານ ເມື່ອບໍ່ສາມາດປາບປາມຂະບວນຂອງພຣະວໍຣະປິຕາໄດ້ ຈຶ່ງມີຈົດໝາຍໃຫ້ເຈົ້າເມືອງນະຄອນລາຊະສີມາຍົກກຳລັງທັບມາສົມທົບຕີຂະໜາບ. ກອງທະຫານຂອງພຣະວໍຣະປິຕາບໍ່ສາມາດຕ້ານທານໄດ້ ຈຶ່ງໄດ້ອົບພະຍົບໜີໄປຢູ່ບ້ານດອນມົດແດງໃນເຂດລ້ອງແມ່ນ້ຳມູນ ແລະ ໄປຂໍອາໄສຢູ່ນຳເຈົ້າໄຊຍະກຸມມານແຫ່ງອານາຈັກຈຳປາສັກ ຊຶ່ງຕໍ່ມາໃນປີ ຄສ 1777 ໄດ້ເກີດມີຄວາມເຂົ້າໃຈຜິດກັນແລ້ວພຣະວໍຣະປິຕາ ໄດ້ກັບຄືນມາຕັ້ງຢູ່ບ້ານດອນມົດແດງຄືເກົ່າ.

ດ້ວຍຄວາມໂດດດ່ຽວ ແລະ ຢ້ານກົວ ພຣະວໍຣະປິຕາ ໄດ້ແຕ່ງສານໄປຂໍຂຶ້ນກັບສັກດິນາສະຫຍາມແຫ່ງກຸງທົ່ນບູລີໂດຍກ່າວອ້າວ່າ ເຈົ້າສິລິບຸນຍະສານເປັນໃຈກັບພະມ້າ. ຝ່າຍເຈົ້າສິລິບຸນຍະສານເມື່ອຮູ້ຂ່າວ ກໍຖືວ່າພຣະວໍຣະປິຕາເປັນກະບົດຕໍ່ແຜ່ນດິນອານາຈັກລ້ານຊ້າງ ທີ່ຮ້າຍແຮງທີ່ສຸດ ຈຶ່ງໄດ້ນຳກຳລັງລົງມາປາບແລ້ວ ຈັບພຣະວໍຣະປິຕາໄປປະຫານຊີວິດ. ແຕ່ທ້າວກ່ຳຜູ້ເປັນລູກໄດ້ລົບໜີໄປບອກພະເຈົ້າກຸງທົ່ນບູລີແລ້ວຂໍໃຫ້ສະຫຍາມນຳເອົາກຳລັງຂຶ້ນມາຊ່ວຍ. ໂດຍປະຕິບັດຕາມແນວຄິດຂະຫຍາຍອານາເຂດຂອງສັກດິນາສະຫຍາມ ພະຍາຕາກສິນກະສັດສະຫຍາມໃນເວລານັ້ນ ຈຶ່ງສວຍເອົາກາລະໂອກາດນີ້ຍົກກຳລັງທັບຂະໜາດໃຫຍ່ຂຶ້ນມາບຸກຕີອານາຈັກລ້ານຊ້າງ.

3) ສະພາບອານາຈັກລ້ານຊ້າງຈຳປາສັກ

ຫຼັງຈາກທີ່ປະກາດແຍກຕົວອອກຈາກວຽງຈັນ ແລະ ເພື່ອຮັບປະກັນຄວາມເປັນເອກະລາດຂອງອານາຈັກ ເຈົ້າໜໍ່ກະສັດເຊິ່ງເປັນເຈົ້າປົກຄອງອານາຈັກຈຳປາສັກ ໃນເວລານັ້ນຕ່າງກໍຟ້າວຮີບຮ້ອນປັບປຸງກຳລັງ ແລະ ອຳນາດການປົກຄອງຄືນໃໝ່ດ້ວຍການຜູກສຳພັນທະໄມຕີກັບສັກດິນາ ອານາຈັກໃກ້ຄຽງ ໂດຍສະເພາະ ແມ່ນອານາຈັກກຳປູເຈຍ ແລະ ກໍໄດ້ຮັບການຕອບຮັບຈາກເຈົ້າຟ້າແກ້ວສັກດິນາແຄວ້ນອຸດົງມີໄຊ ລາຊະທານີແຫ່ງລາຊະອານາຈັກກຳປູເຈຍເປັນຢ່າງດີ.

1.2.4.2 ສັກດິນາສະຫຍາມຮຸກຮານອານາຈັກລາວລ້ານຊ້າງ

ການຮຸກຮານອານາຈັກລາວລ້ານຊ້າງ ຂອງສັກດິນາສະຫຍາມນັ້ນມາຈາກປັດໄຈໃນຕົວ ຂອງສັກດິນາສະຫຍາມ ຄື: ຄວາມຕ້ອງການອຳນາດ ແລະ ເປັນໃຫຍ່ໃນຂົງເຂດນີ້ແຂ່ງຂັນກັນກັບສັກດິນາພະມ້າ. ໂດຍສະເພາະ ມາໃນຕອນທ້າຍຂອງສະຕະວັດທີ XVIII ຫຼັງຈາກທີ່ສະຫຍາມຫຼຸດພົ້ນອອກຈາກການເປັນເມືອງສ່ວຍຂອງສັກດິນາພະມ້າ ແລ້ວສັກດິນາສະຫຍາມກໍປັບປຸງກຳລັງ ແລະ ດຳເນີນການປາບປາມບັນດາຫົວເມືອງ ທີ່ເອກະລາດແລ້ວເຕົ້າໂຮມເຂົ້າກັນເປັນອານາຈັກສະຫຍາມ. ຫຼັງຈາກນັ້ນ, ພະຍາຕາກສິນ ກໍວາງເປົ້າໝາຍຂະຫຍາຍອານາເຂດແຜ່ອິດທິພົນ ດ້ວຍການເຂົ້າໄປຍຶດເອົາດິນແດນບາງສ່ວນຂອງອານາຈັກມອນ, ມາລາຍູ ແລະ ອານາຈັກລ້ານນາ.

ສ່ວນອານາຈັກລາວລ້ານຊ້າງທັງສາມອານາຈັກ ກໍແມ່ນໜຶ່ງໃນເປົ້າໝາຍແຫ່ງການຄອບຄອງຂອງສັກດິນາສະຫຍາມ ຕ່າງແຕ່ການທີ່ຈະເຂົ້າຮອບຮອມເອົາອານາຈັກລາວລ້ານຊ້າງໃນເວລານັ້ນ ພະຍາຕາກສິນພິຈາລະນາ ເຫັນວ່າ ມັນບໍ່ເປັນເລື່ອງງ່າຍພໍທີ່ຈະຄອບຄອງໄດ້ຄືກັນກັບຫົວເມືອງອື່ນໆ ໃນພາກພື້ນແຫ່ງນີ້. ອີກດ້ານໜຶ່ງອານາຈັກລາວລ້ານຊ້າງຫຼວງພະບາງ ກໍຄືອານາຈັກລາວລ້ານຊ້າງວຽງຈັນຕ່າງກໍມີສາຍພົວພັນທີ່ດີກັບສະຫຍາມຕໍ່ກັນມາແຕ່ດົນນານ ເຖິງແມ່ນວ່າການພົວພັນກັນໃນບາງຊ່ວງຈະຢຸດຕິລົງກໍຕາມ. ແຕ່ດ້ວຍຄວາມອາຄາດແຄ້ນຂອງສັກດິນາສະຫຍາມທີ່ມີຕໍ່ອານາຈັກລາວລ້ານຊ້າງວຽງຈັນສະໄໝພະຍາຕາກຍົກທັບໄປຕີຊຽງໃໝ່ ແລະ ໄດ້ຂໍກຳລັງຈາກວຽງຈັນໄປຊ່ວຍ ແຕ່ຖືກວຽງຈັນປະຕິເສດ ເນື່ອງຈາກອານາຈັກລາວລ້ານຊ້າງວຽງຈັນໃນເວລານັ້ນ ບໍ່ມີຄວາມພ້ອມທາງດ້ານອາວຸດ. ບັນຫາດັ່ງກ່າວນີ້ ທັງສອງຝ່າຍກໍໄດ້ມີການຕົກລົງເຈລະຈາຕໍ່ຮອງກັນເປັນທີ່ຮຽບຮ້ອຍແລ້ວ ປະກອບກັບລາວລ້ານຊ້າງ ເປັນເປົ້າໝາຍຫຼັກທີ່ສັກດິນາສະຫຍາມ ຕ້ອງການດຶງມາໄວ້ເປັນກຳລັງ ແລະ ໃນຂະນະດຽວກັນ ລາວລ້ານຊ້າງ ກໍເປັນເປົ້າໝາຍຂອງສັກດິນາພະມ້າເໝືອນກັນ. ຫາກສັກດິນາສະຫຍາມໄດ້ຄອບຄອງລາວລ້ານຊ້າງ ກໍໝາຍເຖິງການມີໄຊຊະນະຕໍ່ອີກຝ່າຍໜຶ່ງ. ດັ່ງນັ້ນ, ໂດຍສວຍໃຊ້ ຄວາມຂັດແຍ່ງພາຍໃນຂອງອານາຈັກລາວລ້ານຊ້າງມາເປັນຂໍ້ອ້າງ ຈຶ່ງຈັດກຳລັງຍົກທັບຂຶ້ນມາບຸກຕີອານາຈັກລາວລ້ານຊ້າງ ໃນປີ ຄສ 1776.

1) ສະຫຍາມຮຸກຮານ ແລະ ຍຶດຄອງຈຳປາສັກ

ການເປີດສາກເລີ່ມຕົ້ນ ໃຫ້ແກ່ສົງຄາມຮຸກຮານອານາຈັກລາວລ້ານຊ້າງ ຂອງສັກດິນາສະຫຍາມ ແມ່ນການນຳເອົາກອງທັບມາຮຸກຮານເຂົ້າອານາຈັກຈຳປາສັກ ໃນປີ ຄສ 1776. ສວຍໂອກາດທີ່ອານາຈັກລາວລ້ານຊ້າງກຳລັງ ມີຄວາມຂັດແຍ່ງພາຍໃນ ປະກອບກັບແນວຄິດຢາກແຄ້ນສັກດິນາລາວ ແລະ ແນວຄິດຂະຫຍາຍອານາເຂດຂອງສັກດິນາສະຫຍາມ ທີ່ຕ້ອງການຄວາມເປັນໃຫຍ່ໃນຂົງເຂດນີ້ສົມທົບກັບການຮ້ອງຂໍກຳລັງຊ່ວຍເຫຼືອຂອງພັກພວກພະວໍລະວົງສາ ໂດຍສະເພາະ ທ້າວກ່ຳທີ່ໄດ້ມີສານເຖິງທຸງທົນບູລີໃຫ້ເອົາກຳລັງມາຊ່ວຍ. ດັ່ງນັ້ນ, ພະຍາຕາກສິນ ຈຶ່ງເຫັນເປັນໂອກາດເໝາະສົມ ແລ້ວສັ່ງໃຫ້ຈັດກຳລັງຍົກພົນຂຶ້ນມາຕີອານາຈັກລ້ານຊ້າງໃນສອງປີກ ຄື: ປີກທີໜຶ່ງ ນຳພາໂດຍພະຍາມະຫາກະສັດເສິກ ເຄື່ອນກຳລັງທັບມາທາງປີກປະກອບມີກຳລັງພົນ 20.000 ຄົນ. ປີກທີສອງ ນຳພາໂດຍພະຍາສຸລະສີ ນ້ອງຊາຍຂອງພະມະຫາກະສັດເສິກນຳກຳລັງພົນເຄື່ອນທັບມາທາງກຳປູເຈຍ ຕາມລຳແມ່ນ້ຳຂອງ ດ້ວຍການເກນເອົາກຳລັງພົນຮົບຈາກກຳປູເຈຍມາເພີ່ມຕື່ມໄດ້ເຖິງ 10.000 ກວ່າຄົນ.

ກອງກຳລັງທະຫານ ຂອງສັກດິນາສະຫຍາມ ທີ່ຮຸກຮານເຂົ້າຕີອານາຈັກລາວລ້ານຊ້າງທາງທິດໃຕ້ຄັ້ງນີ້ ນອກຈາກທະຫານທີ່ເປັນຄົນສະຫຍາມແລ້ວ ຍັງປະກອບດ້ວຍທະຫານທີ່ເປັນຊະເລີຍເສິກທີ່ໄດ້ ມາຈາກສົງຄາມ ເຊັ່ນ: ຊາວມອນ, ຊາວລາວເຜົ່າໄຕໂມ ທີ່ພະຍາຕາກສິນກວາດຕ້ອນມາຈາກພະມ້າ ປະກອບກັບກອງທະຫານຮັບຈ້າງຂອງຊາວຕາເວັນຕົກທີ່ມີອາວຸດທັນສະໄໝ.ດັ່ງນັ້ນ,ດ້ວຍກຳລັງພົນທີ່ເໜືອກວ່າ ປະກອບກັບອາວຸດທັນສະໄໝ ຈຶ່ງເຮັດການນຳທັບບຸກຕີເຂົ້າຍຶດເອົາຫົວເມືອງຕ່າງໆ ຂອງ

ລາວທີ່ຕັ້ງຢູ່ຕັ້ງແຕ່ເມືອງນະຄອນລາຊະສີມາ ຈົນຮອດຈຳປາສັກ ແລະ ຫົວເມືອງຕ່າງໆທາງທິດໃຕ້ ຂອງຈຳປາສັກໄດ້ຢ່າງງ່າຍດາຍ. ຈາກນັ້ນ, ກຳລັງໄດ້ເອົາກຳລັງປິດລ້ອມເມືອງຈຳປາສັກ ບັງຄັບໃຫ້ເຈົ້າ ອົງຫຼວງ ເຈົ້າປົກຄອງນະຄອນຈຳປາສັກ ຍອມເປັນເມືອງສ່ວຍຂອງສະຫຍາມ ໃນປີ ຄສ 1776.

2) ການຮຸກຮານ ແລະ ຍຶດຄອງວຽງຈັນ

ຫຼັງຈາກທີ່ກອງທະຫານຫຼວງຂອງສະຫຍາມ ສຳເລັດໃນການຍຶດເອົາອານາຈັກຈຳປາສັກ ໄດ້ແລ້ວ ພະຍາຕາກສິນກະສັດສະຫຍາມ ກໍອອກຄຳສັ່ງໃຫ້ກະກຽມກຳລັງ ເພື່ອຍົກທັບບຸກຍຶດເອົາ ອານາຈັກລ້ານຊ້າງວຽງຈັນ ເຊັ່ນ:

- ໃຫ້ກອງທັບຫຼວງ ທີ່ນຳພາໂດຍພະຍາມະຫາກະສັດເສິກຖອຍທັບ ມາຕັ້ງຢູ່ນະຄອນ ລາຊະສີມາ ແລ້ວໃຫ້ເຈົ້າໄຊຍະກຸມມານເກັບເກນກຳລັງພົນໃນເຂດຈຳປາສັກພ້ອມສະບຽງອາຫານໄວ້ ລໍຖ້າສົມທົບກັບກອງທັບພະຍາສຸລະສີ ທີ່ຍົກມາຈາກກຳປູເຈຍ.

- ໃຫ້ກອງທັບພະຍາສຸລະສີ ຖອຍໄປຕັ້ງທີ່ກຳປູເຈຍໃນເຂດເມືອງປະພານເພັດບັງຄັບໃຫ້ພະ ຣາມຣາຊາເຈົ້າເມືອງປະພານເພັດດຳເນີນການ ເກັບເກນເອົາປະຊາຊົນກຳປູເຈຍ[36] ມາເປັນກຳລັງ ພ້ອມດ້ວຍສະບຽງອາຫານ ແລ້ວເຄື່ອນທັບຂຶ້ນມາຕາມລຳແມ່ນ້ຳຂອງ.

ຫຼັງຈາກທີ່ມີການກະກຽມກຳລັງຮຽບຮ້ອຍແລ້ວ ມາ ໃນປີ ຄສ 1778 ພະຍາຕາກສິນ ກໍສັ່ງການ ເຄື່ອນທັບຄັ້ງໃຫຍ່ ບຸກໂຈມຕີເຂົ້າອານາຈັກລ້ານຊ້າງວຽງຈັນ ພ້ອມທັງສົ່ງໃບບອກໃຫ້ຝ່າຍເຈົ້າ ສຸລິຍະວົງ ແຫ່ງອານາຈັກຫຼວງພຣະບາງຍົກທັບມາຕີຂະໜາບຫຼັງ ໂດຍແບ່ງເປັນ ປີກ ດັ່ງນີ້: ປີກທີໜຶ່ງ ບັນຊາໂດຍ ພະຍາມະຫາກະສັດເສິກ ນຳທັບຈາກນະຄອນລາຊະສີມາບຸກຕີເຂົ້າມາທາງເມືອງ ໜອງບົວ, ພູຂຽວ, ພູວຽງ ແລະ ນະຄອນພະນົມ. ຈາກນັ້ນ, ກໍສືບຕໍ່ບຸກຕີຂຶ້ນມາຕາມສອງຝັ່ງແມ່ນ້ຳຂອງ ຈົນຮອດໜອງຄາຍ. ສ່ວນປີກທີສອງບັນຊາໂດຍພະຍາລາຊະສີ ເຄື່ອນທັບບຸກຍຶດເອົາຫົວເມືອງລາວ ຕາມແຄມແມ່ນ້ຳຂອງແລ້ວ ມາສົມທົບກັບກອງທັບປີກຂອງພະຍາມະຫາກະສັດເສິກ ທີ່ໜອງຄາຍຊຶ່ງ ລວມມີຈຳນວນພົນຮົບທັງໝົດ 40.000 ກວ່າຄົນ.

ພາຍຫຼັງທີ່ກອງທັບສະຫຍາມຍຶດເມືອງໜອງຄາຍໄດ້ແລ້ວ ພວກເຂົາກໍທຳການບຸກໂຈມຕີ ວຽງຄຸກ ແລະ ວຽງພະໂຄ ແຕ່ກໍຖືກກອງທະຫານຊາວເມືອງທັງສອງ ທຳການຕໍ່ຕ້ານຄືນຢ່າງ ໜຽວແໜ້ນ ແລະ ສາມາດຮັກສາຕົວເມືອງໄວ້ໄດ້. ເມື່ອເປັນເຊັ່ນນັ້ນ, ສັກດິນາສະຫຍາມຈຶ່ງທຳການ ປິດລ້ອມຕົວເມືອງວຽງພະໂຄ ແລະ ວຽງຄຸກ ເຮັດໃຫ້ສອງຕົວເມືອງຖືກຕັດຂາດຈາກວຽງຈັນ. ແຕ່ແຜນ ການປິດລ້ອມເມືອງດັ່ງກ່າວ ບໍ່ປະສົບຜົນສຳເລັດ. ຊ້ຳບໍ່ໜ້ຳຍັງເຮັດໃຫ້ທະຫານຂອງຕົນຖືກບາດ ເຈັບ ແລະ ລົ້ມຕາຍໄປໃນແຕ່ລະວັນ ຈຶ່ງໄດ້ຫາອຸບາຍຫຼອກໃຫ້ປະຊາຊົນເມືອງພະໂຄ ແລະ ວຽງຄຸກ ແຕກຕື່ນເສຍຂວັນ ດ້ວຍການຈັບເອົາປະຊາຊົນເມືອງໜອງຄາຍຈຳນວນຫຼວງຫຼາຍ ມາຕັດຄໍ ເອົາຫົວ ໃສ່ເຮືອ ແລ້ວບັງຄັບໃຫ້ແມ່ຍິງໜອງຄາຍພາຍເຮືອເລາะປ່າວຮ້ອງຂາຍຫົວຄົນຢູ່ຕາມທ່າເຮືອ ຂອງທັງ ສອງເມືອງ. ເຫດການດັ່ງກ່າວນີ້, ເຮັດໃຫ້ປະຊາຊົນພາກັນແຕກຕື່ນ ແລະ ພາກັນອົບພະຍົບ ໜີອອກ ຈາກຕົວເມືອງ ສົມທົບກັບການຍິງຖະຫຼົ່ມດ້ວຍປືນໃຫຍ່ຂອງກອງທັບສະຫຍາມ ເຂົ້າໄປໃນວຽງ ຍິ່ງເຮັດ ໃຫ້ປະຊາຊົນແຕກຕື່ນບໍ່ຄິດຢາກສູ້ອີກຕໍ່ໄປ ເປັນເຫດເຮັດໃຫ້ພາກັນຖອຍໜີມາຢູ່ວຽງພັນພ້າວ ແລະ ວຽງຈັນ.

ພາຍຫຼັງທີ່ຍຶດຕົວເມືອງພັນພ້າວໄດ້ແລ້ວສັກດິນາສະຫຍາມ ກໍເປີກສາກຸກໂຈມຕີເຂົ້າໃສ່ ຕົວເມືອງວຽງຈັນ ແຕ່ກໍຖືກກອງທັບຂອງປະຊາຊົນຊາວນະຄອນວຽງຈັນ ທຳການຕໍ່ຕ້ານຄືນ ຢ່າງ ແຂງແຮງ. ເມື່ອບໍ່ສາມາດຍຶດຕົວເມືອງໄດ້ ຫຼັງຈາກທຳການປິດລ້ອມຕົວເມືອງວຽງຈັນ ເປັນເວລາ

[36] ຂະບວນການເກັບເກນກຳລັງໃນເຂດເມືອງປະພານເພັດ ຂອງກຳປູເຈຍນັ້ນ ໄດ້ຖືກປະຊາຊົນທຳການຕໍ່ຕ້ານຄືນຈົນເຖິງຂັ້ນຈັບເຈົ້ານາຍໃນເມືອງມາ ຂ້າຖິ້ມ ເນື່ອງຈາກວ່າຊາວກຳປູເຈຍບໍ່ພໍໃຈໃນການທີ່ຈະມາເປັນທະຫານເພື່ອຂ້າຄົນລາວ.

ສີ່ເດືອນແລ້ວ ແມ່ທັບສະຫຍາມຈຶ່ງຫັນມາໃຊ້ກົນອຸບາຍຄືກັນກັບຢູ່ວຽງພະໂຄ ແລະ ວຽງຄຸກ ດ້ວຍການຕັດຫົວຂອງປະຊາຊົນ ເມືອງຊາຍຟອງໃສ່ເຮືອ ແລ້ວບັງຄັບໃຫ້ແມ່ຍິງເມືອງຊາຍຟອງ ພາຍເຮືອຂຶ້ນມາຕາມແຄມນ້ຳ ຂອງປ່າວຮ້ອງຂາຍຫົວຄົນ. ປະຊາຊົນຊາວວຽງຈັນເຫັນເຫດການໂຫດຮ້າຍນີ້ ກໍພາກັນຕົກໃຈເກີດຄວາມຢ້ານກົວ ແລະ ແຕກຕື່ນ. ແມ່ທັບສະຫຍາມ ເຫັນສະພາບການເປັນແນວນັ້ນ ຈຶ່ງສັ່ງລະດົມກຳລັງບຸກໂຈມຕີໃນທຸກດ້ານ ແຕ່ກໍຖືກກອງທັບ ແລະ ປະຊາຊົນວຽງຈັນໃຕ້ການນຳພາຂອງພະເຈົ້ານັນທະເສນ ທຳການຕໍ່ຕ້ານຄືນຢ່າງອົງອາດກ້າຫານ. ແຕ່ພາຍຫຼັງຮູ້ຂ່າວວ່າ ພໍ່ຂອງຕົນ ໜີອອກຈາກເມືອງໄປແລ້ວ ກໍຂາດກຳລັງໃຈ ສົມທົບກັບຂ່າວການຍົກທັບມາຂອງກອງທັບລາວເມືອງບ່ານ, ແພ່, ຊຽງໃໝ່ ແລະ ຫຼວງພະບາງເຄື່ອນທັບບຸກຕີຂະໜາບດ້ານຫຼັງ ກຳລັງຂອງທະຫານ ແລະ ປະຊາຊົນວຽງຈັນບໍ່ສາມາດຕ້ານທານໄດ້. ດັ່ງນັ້ນ, ມາໃນເດືອນສິບແຮມສາມຄ่ำ ປີ ຄສ 1779 ເຈົ້ານັນທະເສນ ຈຶ່ງຕັດສິນໃຈເປີດປະຕູວຽງທຸກດ້ານ ພ້ອມທັງສັ່ງທະຫານວາງອາວຸດປ່ອຍໃຫ້ທະຫານສະຫຍາມ ເຂົ້າຍຶດເອົາຕົວເມືອງວຽງຈັນໄດ້ຢ່າງງ່າຍດາຍ.

1.2.4.3 ການຍຶດຄອງລ້ານຊ້າງຂອງສັກດິນາສະຫຍາມ

ກ. ການຈັດການປົກຄອງ

ຫຼັງຈາກທີ່ສັກດິນາສະຫຍາມ ສຳເລັດຍຶດຄອງລາວລ້ານຊ້າງ ໃນປີ ຄສ 1779 ແລ້ວສັກດິນາສະຫຍາມ ກໍດຳເນີນການຈັດການປົກຄອງອານາຈັກລາວລ້ານຊ້າງ ດ້ວຍຍຸດໂທບາຍທີ່ແນບນຽນທີ່ສຸດ ເພື່ອແນໃສ່ເຮັດໃຫ້ອານາຈັກລາວລ້ານຊ້າງຂຶ້ນກັບສະຫຍາມແບບຕະຫຼອດການ ເຊັ່ນ:

1) ໂຄງສ້າງການປົກຄອງ

ເພື່ອປະຕິບັດຍຸດທະສາດກືນກິນ ອານາຈັກລາວລ້ານຊ້າງແບບແນບນຽນໃນເບື້ອງຕົ້ນ ຂອງການຄອບຄອງລາວນັ້ນ ສັກດິນາສະຫຍາມຍັງຮັກສາຮູບແບບໂຄງສ້າງການຈັດຕັ້ງການປົກຄອງຕາມແບບດັ້ງເດີມຂອງລາວໃນແຕ່ລະອານາຈັກໄວ້ ໂດຍສະເພາະຖານະຕຳແໜ່ງການປົກຄອງ. ແຕ່ພວກເຂົາກໍໄດ້ກຳນົດຖານະ ຂອງແຕ່ລະອານາຈັກໃຫ້ແຕກຕ່າງກັນ ເພື່ອບໍ່ໃຫ້ມີການຮວມຕົວກັນ ເຊັ່ນ: ອານາຈັກລ້ານຊ້າງຫຼວງພະບາງ ແລະ ອານາຈັກລ້ານຊ້າງວຽງຈັນໃຫ້ມີຖານະເປັນປະເທດສະລາດ. ອານາຈັກຈຳປາສັກ ໃຫ້ເປັນນະຄອນໜຶ່ງຂຶ້ນກັບບາງກອກໂດຍກົງ.

ສ່ວນດ້ານການຈັດຕັ້ງກອງທັບນັ້ນ ແມ່ນເປັນສິດເດັດຂາດຂອງຂ້າຫຼວງສະຫຍາມ ເປັນຜູ້ຈັດຕັ້ງ ໂດຍກົງ ຊຶ່ງໃນແຕ່ລະປີສັກດິນາສະຫຍາມຈະສົ່ງຂ້າຫຼວງມາສຳຫຼວດຈຳນວນປະຊາກອນທີ່ເປັນຊາຍສະກັນຜູ້ທີ່ຈະສາມາດເປັນທະຫານໄດ້.

2) ວິທີການປົກຄອງ

ເພື່ອຮັກສາໄວ້ເຊິ່ງອຳນາດໃນຫົວເມືອງທີ່ເປັນປະເທດສະລາດ ທີ່ແນໃສ່ແບ່ງແຍກ ເພື່ອປົກຄອງນັ້ນ, ສັກດິນາສະຫຍາມໄດ້ກຳນົດນະໂຍບາຍການປົກຄອງຕໍ່ຫົວເມືອງລາວດັ່ງນີ້: ກຳນົດໃຫ້ກະສັດ ທ້າວສາມອານາຈັກມີສິດຈັດການການປົກຄອງພາຍໃນຫົວເມືອງທີ່ຂຶ້ນກັບອານາຈັກຕົນ, ແຕ່ຕ້ອງຜ່ານການເຫັນດີຈາກສັກດິນາສະຫຍາມ. ກຳນົດໃຫ້ກະສັດຫຼວງພະບາງ, ວຽງຈັນ ແລະ ຈຳປາສັກ ສົ່ງບຸດຫຼານເຊື້ອສາຍຂອງຕົນ ມາເປັນຕົວປະກັນທີ່ກຸງເທບ. ກຳນົດໃຫ້ເຈົ້າ ແລະ ຂຸນນາງລາວ ແຕ່ລະອານາຈັກຕິດຕາມດູແລການປະພຶດກັນເອງ ຫາກມີການເຄື່ອນໄຫວທີ່ບໍ່ດີໃຫ້ລາຍງານຕໍ່ບາງກອກ. ທັງໝົດນີ້ ກໍເພື່ອແນໃສ່ເຮັດໃຫ້ສັກດິນາລາວລ້ານຊ້າງ ເກີດມີຄວາມຄິດອາດລະແວງສົງເຊິ່ງກັນ ແລະ ກັນ.

3) ສິດອຳນາດ

ເຖິງແມ່ນວ່າ ສັກດິນາສະຫຍາມ ຈະຮັກສາໂຄງສ້າງການປົກຄອງແບບເດີມໄວ້ ແຕ່ໃນດ້ານສິດອຳນາດສ່ວນຫຼາຍແລ້ວ ແມ່ນສັກດິນາສະຫຍາມເປັນຜູ້ກຳນົດ ເຊັ່ນ: ກຳນົດແຕ່ງຕັ້ງ ແລະ ປົດຕຳແໜ່ງເຈົ້າຜູ້ປົກຄອງ ແລະ ຊຸນນາງລາວໃນຂັ້ນອາຍາສີ່ຂອງອານາຈັກລ້ານຊ້າງຕາມໃຈມັກຂອງພວກເຂົາ. ສ່ວນເຈົ້າເມືອງ ຫຼື ກະສັດລາວຈະມີສິດແຕ່ງຕັ້ງ ຫຼື ຈັດການຕຳແໜ່ງໃນຂັ້ນທີ່ຕ່ຳກວ່ານັ້ນລົງມາ ແລະ ມີສິດກຳນົດ ຫຼື ປ່ຽນແປງທຳນຽມການເກັບພາສີພາຍໃນເມືອງຂອງຕົນເອງສະເພາະ.

4) ການລົງໂທດ

ສັກດິນາສະຫຍາມໄດ້ກຳນົດບົດລົງໂທດຕໍ່ເຈົ້າ ແລະ ຊຸນນາງລາວຜູ້ທີ່ມີຄວາມຜິດໃນຖານະທີ່ບໍ່ປະຕິບັດຕາມນະໂຍບາຍການປົກຄອງຂອງສັກດິນາສະຫຍາມ ຫຼື ຫາກມີໃຈແຍກຕົວອອກຈາກສະຫຍາມ ຈະຕ້ອງໄດ້ຖືກລົງໂທດຕັ້ງແຕ່ຂັ້ນປະຫານຊີວິດລົງມາ ແລ້ວແຕ່ກໍລະນີຄວາມຜິດ ແລະ ປັດໄຈແວດລ້ອມອື່ນໆ.

ຂ. ການເກັບສ່ວຍຂອງສັກດິນາສະຫຍາມ

ໄປຄຽງຄູ່ກັບການຈັດການດ້ານການປົກຄອງນັ້ນ ສັກດິນາສະຫຍາມຍັງໄດ້ກຳນົດນະໂຍບາຍໃນດ້ານອື່ນໆອີກ ທີ່ບົ່ງບອກໃຫ້ເຫັນເຖິງການກົດຂີ່ຂູດຮີດຄົນລາວ ເຊັ່ນ:

1) ການສົ່ງເຄື່ອງບັນນາການ:

ເຄື່ອງບັນນາການ ເປັນເຄື່ອງໝາຍທີ່ສຳຄັນທີ່ສຸດໃນສັງຄົມສະໄໝສັກດິນາພູຮານ ເພາະມັນບົ່ງບອກເຖິງອຳນາດຂອງລັດໜຶ່ງ ທີ່ມີຢູ່ເໜືອດິນແດນຂອງອີກລັດໜຶ່ງ. ໃນນັ້ນ, ລາວກໍເປັນປະເທດໜຶ່ງທີ່ສັກດິນາສະຫຍາມຖືວ່າ ເປັນປະເທດສະລາດໜຶ່ງທີ່ຕ້ອງໄດ້ສົ່ງເຄື່ອງລາຊະບັນນາການມາຖະຫວາຍ.

2) ການສົ່ງສ່ວຍ:

ການເກັບສ່ວຍ ເປັນລະບົບພາສີແບບໜຶ່ງ ທີ່ສັກດິນາສະຫຍາມໃຊ້ກັນມາເປັນເວລານານ ໂດຍສະເພາະພາຍຫຼັງທີ່ສັກດິນາສະຫຍາມສຳເລັດໃນການຄອບຄອງລາວລ້ານຊ້າງ; ການເກັບສ່ວຍແມ່ນເປັນ ພາລະກິດທີ່ສຳຄັນທີ່ສຸດໃນນະໂຍບາຍປົກຄອງ ຂອງສັກດິນາສະຫຍາມທີ່ມີຕໍ່ຊາວລາວ. ເຫດຜົນ ກໍເພາະວ່າ ການເກັບສ່ວຍເປັນຜົນປະໂຫຍດ ທີ່ສັກດິນາສະຫຍາມໄດ້ຮັບເປັນຈຳນວນຫຼວງຫຼາຍ

ຈາກການປົກຄອງຫົວເມືອງລາວຕ່າງໆ. ລະບົບການເກັບສ່ວຍ ທີ່ສັກດິນາສະຫຍາມກຳນົດຕໍ່ຫົວເມືອງລາວຕ່າງໆ ປະກອບມີດັ່ງນີ້:

- ສ່ວຍເປັນເງິນ: ໃນປີຄສ1827ສັກດິນາສະຫຍາມໄດ້ກຳນົດໃຫ້ຄົນລາວຜູ້ໜຶ່ງຕ້ອງເສຍສ່ວຍໃນສອງອັດຕາຄື: ອັດຕາ 7 ບາດ ແລະ 4 ບາດ. ແຕ່ມາ ໃນປີ ຄສ 1828 ໄດ້ກຳນົດເສຍ ໃນອັດຕາແບບດຽວກັນ ຄື ຜູ້ລະ 4 ບາດ.

- ສ່ວຍເປັນຄຳ: ສັກດິນາສະຫຍາມບັງຄັບໃຫ້ຄົນລາວຕ້ອງເສຍສ່ວຍເປັນຄຳໂດຍ ມີອັດຕາຄ່າເສຍສ່ວຍ 8 ຄົນ ຕໍ່ 1 ຕຳລຶງ ຫຼື ຜູ້ລະ 2 ສະລຶງ.

- ເສຍສ່ວຍເປັນໝາກແໜ່ງ: ຄົນລາວຜູ້ໜຶ່ງຈະຕ້ອງເສຍສ່ວຍໝາກແໜ່ງ ໃຫ້ສັກດິນາສະຫຍາມຜູ້ລະ 12 ກິໂລ ຫຼື 5 ຄົນໃດ ຕ້ອງເສຍສ່ວຍໝາກແໜ່ງ 1 ຫາບ ເຊິ່ງຫາບໜຶ່ງເທົ່າກັບ 60 ກິໂລ.

- ເສຍສ່ວຍຄັ່ງ: ຄົນລາວຜູ້ໜຶ່ງຈະຕ້ອງເສຍສ່ວຍຄັ່ງໃຫ້ສັກດິນາສະຫຍາມຜູ້ລະ 12 ກິໂລ ຫຼື 5 ຄົນໃດ ຕ້ອງເສຍສ່ວຍຄັ່ງ 1 ຫາບ .

- ເສຍສ່ວຍປ່ານ: ສັກດິນາສະຫຍາມ ໄດ້ກຳນົດໃຫ້ຄົນລາວຕ້ອງເສຍສ່ວຍປ່ານໃຫ້ສັກດິນາສະຫຍາມໃນແຕ່ລະປີຄື ຜູ້ລະ 30 ກິໂລຕໍ່ປີ ຫຼື 2 ຄົນຕໍ່ 1 ຫາບ.

- ເສຍສ່ວຍຜ້າຂາວ: ສັກດິນາສະຫຍາມ ໄດ້ກຳນົດໃຫ້ຄົນລາວຕ້ອງເສຍສ່ວຍຜ້າຂາວ ໃຫ້ສັກດິນາສະຫຍາມໃນແຕ່ລະປີ ຄື 6 ສືນຕໍ່ຄົນ.

1.2.5 ການຕໍ່ສູ້ຂອງປະຊາຊົນລາວຕ້ານສັກດິນາສະຫຍາມ

ໃນຕະຫຼອດທີ່ສັກດິນາສະຫຍາມຍຶດຄອງລ້ານຊ້າງນັ້ນ ປະຊາຊົນລາວ ໄດ້ຖືກກົດຂີ່ຂູດຮີດຢ່າງໜັກໜ່ວງ ບໍ່ວ່າຈະເປັນກຸ່ມຄົນທີ່ຍັງອາໄສໃນຖິ່ນເດີມ ແລະ ກຸ່ມຄົນທີ່ຖືກກວາດຕ້ອນໄປ ໂດຍສະເພາະ ກຸ່ມຄົນລາວທີ່ຖືກກວາດຕ້ອນໄປ ໄດ້ຖືກບັງຄັບໃຫ້ຂຸດຄອງອ້ອມບາງກອກ ແລະ ວຸງກສັບພະທຸກອື່ນໆ; ຜູ້ທີ່ເປັນນາຍຊ່າງ ກໍຖືກບັງຄັບໃຫ້ສ້າງຫໍໂຮງ, ພະລາຊະວັງໃຫ້ແກ່ສັກດິນາ, ຊຸນນາງສະຫຍາມ. ເວົ້າລວມແລ້ວ ຄົນລາວເຫຼົ່ານັ້ນ ໄດ້ຖືກບັງຄັບໃຫ້ເປັນທາດຮັບໃຊ້ສັກດິນາສະຫຍາມ. ດັ່ງນັ້ນ, ໃນຕະຫຼອດທີ່ ສັກດິນາສະຫຍາມປົກຄອງນັ້ນ ປະຊາຊົນລາວ ກໍໄດ້ດຳເນີນການເຄື່ອນໄຫວຕໍ່ຕ້ານໂດຍຕະຫຼອດ ເປັນຕົ້ນຂະບວນການຕໍ່ຕ້ານສະຫຍາມຂອງຊາວຈຳປາສັກ ທີ່ນຳພາໂດຍເຈົ້າໂອ, ເຈົ້າອິນ ໃນປີ ຄສ 1780 -1782 ໃນນັ້ນຂະບວນການທີ່ເດັ່ນ ກໍຄືຂະບວນການທີ່ນຳພາໂດຍເຈົ້າ ອະນຸວົງ ປີ ຄສ 1826-1829" ຊຶ່ງຈະຂໍນຳສະເໜີ ໃນລຸ່ມນີ້:

1.2.5.1 ຂະບວນການຕໍ່ສູ້ຂອງຊາວຈຳປາສັກຕ້ານສັກດິນາສະຫຍາມ

1) ຂະບວນການຕໍ່ສູ້ຂອງເຈົ້າອິນເຈົ້າໂອ

ການຕໍ່ຕ້ານອຳນາດການປົກຄອງສະຫຍາມຂອງປະຊາຊົນລາວທາງພາກໃຕ້ນັ້ນ ເລີ່ມຕົ້ນມາຕັ້ງແຕ່ເວລາທີ່ສັກດິນາສະຫຍາມ ດຳເນີນການຮຸກຮານອານາຈັກລາວລ້ານຊ້າງ ໃນປີ ຄສ 1777. ແຕ່ພາຍຫຼັງທີ່ສະຫຍາມປົກຄອງແລ້ວ ຂະບວນການຕໍ່ຕ້ານສັກດິນາສະຫຍາມຂອງຊາວລາວທາງ ພາກໃຕ້ ກໍໄດ້ສືບ ຕໍ່ດຳເນີນໃນຫຼາຍຮູບການໂດຍສະເພາະຂະບວນການຕໍ່ສູ້ຂອງປະຊາຊົນຈຳປາສັກ ໃຕ້ການນຳພາຂອງເຈົ້າໂອ ແລະ ເຈົ້າອິນ.

ເຈົ້າໂອ ແລະ ເຈົ້າອິນ ເປັນໂອລົດຂອງເຈົ້າອຸປະຣາດທຳມະເທໂວແຫ່ງເມືອງຈຳປາສັກ ແລະ ໄດ້ເຂົ້າຮ່ວມກັບບິດາ ແລະ ພະຍານາງລອງນຳກອງທະຫານຕໍ່ສູ້ຕ້ານກັບກອງທັບສັກດິນາສະຫຍາມ ຂອງພະຍາຈັກກີ ແລະ ພະຍາສຸລະສີທີ່ຮຸກຮານລາວ. ແຕ່ພາຍຫຼັງທີ່ສະຫຍາມດຳເນີນການປົກຄອງລາວ ແລ້ວເຈົ້າໂອ ແລະ ເຈົ້າອິນ ກໍໄດ້ສືບຕໍ່ນຳເອົາກຳລັງທະຫານອອກມາທຳການຕໍ່ສູ້ຕ້ານຄືນໃນເຂດຈຳປາສັກແຕ່ດ້ວຍກຳລັງໜ້ອຍກວ່າຈຶ່ງປະລາໄຊ. ຫຼັງຈາກນັ້ນ, ເຈົ້າໂອ ແລະ ເຈົ້າອິນ ກໍໜີໄປຕັ້ງທັບຢູ່ເມືອງ ອັດຕະປືທຳການສະສົມ ແລະ ປັບປຸງກຳລັງໃຫ້ມີຄວາມເຂັ້ມແຂງ ດ້ວຍການປຸກລະດົມຂົນຂວາຍເອົາປະຊາຊົນລາວບັນດາເຜົ່າໃນເຂດອັດຕະປື, ແສນປາງ ແລະ ກອນຕູມ ໃຫ້ຮ່ວມກັນ ລຸກຂຶ້ນຕໍ່ສູ້ເພື່ອຕີຕ້ານ ກຳລັງຂອງສັກດິນາສະຫຍາມ ແລະ ຂັບໄລ່ເຈົ້າໄຊຍະກຸມມານໃຫ້ອອກໄປຈາກນະຄອນຈຳປາສັກ.

ດ້ວຍນ້ຳໃຈຮັກຊາດ ຂະບວນການການຕໍ່ສູ້ໃຕ້ການນຳພາຂອງເຈົ້າໂອ ແລະ ເຈົ້າອິນ ໄດ້ເຮັດໃຫ້ກອງທະຫານ ຂອງເຈົ້າໄຊຍະກຸມມານແຫ່ງເມືອງຈຳປາສັກທີ່ຍົກມາປາບປາມນັ້ນ ຕ້ອງປະລາໄຊກັບໄປ. ສຸດທ້າຍເຈົ້າໄຊຍະກຸມມານ ຈຳຕ້ອງໄດ້ຂໍກຳລັງຂອງສັກດິນາສະຫຍາມ ຈາກນະຄອນລາຊະສີມາມາຊ່ວຍ. ມາ ໃນປີ ຄສ 1782 ສັກດິນາສະຫຍາມສົມທົບກັບກຳລັງ ຂອງ ຈຳປາສັກໄດ້ຍົກທັບມາບຸກຕີກອງທະຫານຂອງເຈົ້າໂອ ແລະ ເຈົ້າອິນທີ່ອັດຕະປື. ເຈົ້າໂອ ແລະ ເຈົ້າອິນ ໄດ້ນຳພາກຳລັງຕໍ່ຕ້ານຢ່າງອົງອາດກ້າຫານ ແຕ່ດ້ວຍກຳລັງຂອງ ສັກດິນາສະຫຍາມຫຼາຍ ກວ່າປະກອບກັບອາວຸດກໍທັນສະໄໝກວ່າ ຈຶ່ງເຮັດໃຫ້ກອງທະຫານທີ່ນຳພາໂດຍເຈົ້າໂອ ແລະ ເຈົ້າອິນບໍ່ສາມາດຕໍ່ຕ້ານໄດ້. ເຈົ້າໂອພ້ອມດ້ວຍທະຫານຈຳນວນໜຶ່ງຖືກສັກດິນາສະຫຍາມຈັບໄດ້ ແລະ ຖືກປະຫານຊີວິດ. ສ່ວນເຈົ້າອິນ ໄດ້ນຳພາກຳລັງ ທະຫານສືບຕໍ່ ຕໍ່ສູ້ຈົນເສຍຊີວິດໃນສະໜາມຮົບ ຂະບວນການຕໍ່ສູ້ຈຶ່ງອ່ອນກຳລັງລົງ.

ເຖິງຢ່າງໃດກໍຕາມ, ວິລະກຳແຫ່ງການຕໍ່ສູ້ຂອງຊາວເມືອງອັດຕະປື ໃຕ້ການນຳພາຂອງ ເຈົ້າໂອ ແລະ ເຈົ້າອິນໄດ້ກາຍເປັນບົດເລື່ອງຕຳນານບອກເລົ່າ ຂອງຊາວເມືອງອັດຕະປື ແບບປາກຕໍ່ປາກ ສືບຕໍ່ກັນມາຈົນຮອດປັດຈຸບັນ.

2) ຂະບວນການຕໍ່ສູ້ຂອງອ້າຍຊ້າງແກ້ວ

ຫຼັງຈາກທີ່ຂະບວນການຕໍ່ສູ້ ຂອງປະຊາຊົນລາວທາງພາກໃຕ້ ໃຕ້ການນຳພາຂອງ ເຈົ້າໂອ ແລະ ເຈົ້າອິນ ຖືກສັກດິນາສະຫຍາມປາບປາມລົງ ໃນປີ ຄສ 1782 ແລ້ວ ຊ້າງແກ້ວ ກໍໄດ້ເຕົ້າໂຮມເອົາ ທະຫານຂອງເຈົ້າໂອ ແລະ ເຈົ້າອິນທີ່ແຕກພ່າຍນັ້ນມາຮ່ວມກັບກຳລັງຂອງຕົນເພື່ອຕໍ່ສູ້ຕ້ານກັບສັກດິນາ ສະຫຍາມ. ຕາມການບອກເລົ່າໃນປະຫວັດສາດໃຫ້ຮູ້ວ່າ ຊ້າງແກ້ວເປັນຄົນທີ່ມີຄວາມຮູ້ທາງ ດ້ານວິຊາ ອາຄົມ ແລະ ເປັນຜູ້ທີ່ມີຜູ້ຄົນນັບຖືເປັນຈຳນວນຫຼວງຫຼາຍ. ດ້ວຍຄວາມບໍ່ພໍໃຈຕໍ່ກັບສັກດິນາ ສະຫຍາມ ທີ່ທຳການກົດຂີ່ຂົ່ມເຫັງປະຊາຊົນລາວ ແລະ ບັງຄັບໃຫ້ຄົນລາວຕ້ອງເຮັດວຽກທຸກສິ່ງຢ່າງ ເພື່ອຮັບໃຊ້ ສັກດິນາສະຫຍາມນັ້ນ; ອ້າຍຊ້າງແກ້ວ ຈຶ່ງໄດ້ເຕົ້າໂຮມກຳລັງ ແລ້ວຈັດຕັ້ງເປັນຂະບວນການຕໍ່ສູ້ຕ້ານ ສັກດິນາສະຫຍາມຂຶ້ນໂດຍກຳນົດເອົາເຂດພື້ນທີ່ເມືອງໂຂງເປັນຖານທີ່ໝັ້ນຕ້ານ ສັກດິນາສະຫຍາມ ແລະ ຈຳປາສັກ.

ມາ ໃນປີ ຄສ 1791 ໂດຍຖືເອົາກາລະໂອກາດອັນດີ ໃນເວລາທີ່ເຈົ້າໄຊຍະກຸມມານ ແຫ່ງ ຈຳປາສັກ ກຳລັງປ່ວຍໜັກ ປະກອບກັບພາຍໃນສັກດິນາຈຳປາສັກ ກໍມີການຂັດແຍ່ງກັນເພື່ອຂຶ້ນ ກຳອຳນາດອ້າຍຊ້າງແກ້ວກໍຍົກກຳລັງມາປິດລ້ອມຈຳປາສັກ. ຝ່າຍເຈົ້າໄຊຍະກຸມມານ ພໍຮູ້ຂ່າວກໍເກີດ ຄວາມກັງວົນ ອັນໄດ້ເຮັດໃຫ້ອາການປ່ວຍນັ້ນເພີ່ມໜັກຂຶ້ນຈົນເຖິງແກ່ຄວາມຕາຍ. ແລ້ວອ້າຍຊ້າງແກ້ວ ກໍປະກາດຕົນ ເອງເປັນເຈົ້າປົກຄອງນະຄອນຈຳປາສັກ ແລະ ປະກາດບໍ່ຍອມ ຂຶ້ນກັບບາງກອກຕໍ່ໄປ.

ແຕ່ດ້ວຍປະສົບການໃນການປົກຄອງບໍ່ສູງ ປະກອບກັບສັກດິນາທ້ອງຖິ່ນພາຍໃນນະຄອນ ຈຳປາສັກຈຳນວນໜຶ່ງທີ່ເປັນລູກແຫ້ງຕີນມືຂອງສັກດິນາສະຫຍາມຍັງຄົງສືບຕໍ່ເຄື່ອນໄຫວ ໂດຍສະເພາະ ທ້າວຄຳຜົງ ແລະ ທິດພົມ ເຊິ່ງເປັນລູກຂອງພຣະວໍຣະປີຕາຜູ້ກະບົດຊາດ ໃນການແກ່ດຶງເອົາສັກດິນາ ສະຫຍາມເຂົ້າມາມ້າງເພອອານາຈັກລາວລ້ານຊ້າງສະໄໝການປົກຄອງຂອງ ພະເຈົ້າສິຣິບຸນຍະສານ. ທ້າວຄຳຜົງ ແລະ ທິດພົມ ຈຶ່ງໄດ້ສົ່ງສານລັບໄປໃຫ້ພະຍາທອງອິນ ເຈົ້າເມືອງນະຄອນລາຊະສີມາ ສົ່ງຂ່າວໃຫ້ບາງກອກຮູ້. ຈາກນັ້ນສັກດິນາສະຫຍາມ ກໍສັ່ງໃຫ້ເຈົ້າເມືອງນະຄອນລາຊະສີມາຍົກເອົາ ກຳລັງມາສົມທົບ. ກອງທະຫານຂອງອ້າຍຊ້າງແກ້ວ ໄດ້ທຳການຕໍ່ສູ້ຢ່າງອົງອາດກ້າຫານຈົນເກືອບ ຈະໄດ້ຮັບໄຊຊະນະຢູ່ແລ້ວໃນສະໜາມຮົບດອນຕະນະເຂດລ້ອງນ້ຳມູນ ແຕ່ພໍດີກອງທັບຫຼວງຂອງສະ ຫຍາມຈາກບາງກອກ ທີ່ມີອາວຸດທັນສະໄໝກວ່າເດີນທາງມາເຖິງ ແລະ ສາມາດຕີເອົາຊະນະກອງ ທັບຂອງອ້າຍຊ້າງແກ້ວໄດ້. ຢ່າງໃດກໍຕາມ, ອ້າຍຊ້າງແກ້ວພ້ອມດ້ວຍທະຫານກໍໄດ້ຕໍ່ສູ້ ຢ່າງອົງອາດ ກ້າຫານ ແຕ່ຍ້ອນກຳລັງ ແລະ ອາວຸດ ໜ້ອຍກວ່າເປັນເຫດເຮັດໃຫ້ການຕໍ່ສູ້ບໍ່ໄດ້ຮັບໄຊຊະນະ, ສ່ວນ ອ້າຍຊ້າງແກ້ວເອງ ກໍເສຍຊີວິດຄາສະໜາມຮົບ.

ຫຼັງຈາກ ພວກສັກດິນາສະຫຍາມ ທຳການປາບປາມຂະບວນການຕໍ່ສູ້ຂອງ ປະຊາຊົນລາວ ທາງ ພາກໃຕ້ລົງແລ້ວພວກສັກດິນາສະຫຍາມ ກໍສືບຕໍ່ທຳການປາບປາມເຂັ່ນຂ້າ ແລະ ໄລ່ຈັບເອົາຊົນເຜົ່າ ໃນຕະກຸນມອນຂອມ ທີ່ດຳລົງຊີວິດໃນພາກໃຕ້ຂອງປະເທດລາວ ໂດຍສະເພາະແມ່ນຊົນເຜົ່າກະເສີ, ກະຕາງ, ລະແວ, ລະເວນ ແລະ ເຜົ່າອື່ນໆ ມາເປັນຂ້ອຍຂ້າ.

1.2.5.2 ການເຄື່ອນໄຫວຕໍ່ຕ້ານສັກດິນາສະຫຍາມຂອງເຈົ້ານັນທະເສນແຫ່ງວຽງຈັນ

ຫຼັງຈາກທີ່ເຈົ້ານັນທະເສນ ຖືກສັກດິນາສະຫຍາມແຕ່ງຕັ້ງໃຫ້ກັບຄືນມາປົກຄອງອານາຈັກລາວ ລ້ານຊ້າງວຽງຈັນແທນພະເຈົ້າສິຣິບຸນຍະສານຜູ້ເປັນບິດາແລ້ວ ພະອົງກໍໄດ້ວາງແຜນການກອບກູ້ຄວາມ

ເປັນເອກະລາດຂອງອານາຈັກລາວລ້ານຊ້າງ. ແຜນການທຳອິດທີ່ເຈົ້ານັນທະເສນ ວາງອອກກໍຄື ການເຮັດໃຫ້ສັກດິນາສະຫຍາມມີຄວາມເຊື່ອໝັ້ນວ່າ ຍັງເປັນຜູ້ຈົງຮັກພັກດີ ດ້ວຍການສົ່ງເຈົ້າອິນ, ເຈົ້າພົມ ແລະ ເຈົ້ານ້ອງລົງໄປບາງກອກ ພ້ອມທັງແຕ່ງຕັ້ງເຈົ້າແກ້ວເປັນມະຫາອຸປະຣາດ. ແຜນການທີສອງແມ່ນ ພາລະກິດສາມຢ່າງທີ່ຕ້ອງປະຕິບັດຢ່າງໜັກໜ່ວງໃນການກອບກູ້ ເອກະລາດ ຊຶ່ງໄດ້ແກ່:

1) **ການບູລະນະສ້າງສາປົວແປງອານາຈັກຄືນໃໝ່**

ການຟື້ນຟູ, ການສ້າງສາ ແລະ ການຈັດການປົກຄອງບ້ານເມືອງຄືນໃໝ່ ຖືວ່າເປັນໜຶ່ງ ໃນບັນດາວຽກງານທີ່ສຳຄັນ ໃນການກະກຽມການກອບກູ້ຄວາມເປັນເອກະລາດແຫ່ງຊາດ. ສິ່ງທຳອິດ ທີ່ເຈົ້ານັນ ທະເສນປະຕິບັດ ແມ່ນການສ້ອມແປງຫໍຣິບ ແລະ ກຳແພງເມືອງ, ການປົວແປງເມືອງ ຂອບດ່ານ ໂດຍສະເພາະ ເມືອງທີ່ຢູ່ທາງດ້ານທິດຕາເວັນຕົກ ເຊັ່ນ ເມືອງພູຊຽວ ແລະ ການແຕ່ງຕັ້ງຜູ້ທີ່ ໃກ້ຊິດໄປປົກຄອງ ເມືອງຕ່າງໆ.

2) **ການສ້າງຄວາມເປັນເອກະພາບໃນແຜ່ນດິນລາວລ້ານຊ້າງ**

ເຈົ້ານັນທະເສນ ໄດ້ພິຈາລະນາວ່າ ການທີ່ຈະກອບກູ້ເອກະລາດຄືນມາໃຫ້ສຳເລັດນັ້ນ ຖ້າມີ ແຕ່ເມືອງວຽງຈັນບໍ່ສາມາດເຮັດໄດ້. ສະນັ້ນ, ຕ້ອງທ້ອນໂຮມຫົວເມືອງລາວໃຫ້ເປັນເອກະພາບ ເຊິ່ງ ເປັນ ວຽກທີ່ຫຍຸ້ງຍາກທີ່ສຸດ. ແຜນການຂັ້ນຕົ້ນທີ່ເຈົ້ານັນທະເສນກຳນົດໄວ້ທຳອິດ ແມ່ນການທ້ອນໂຮມ ເອົາແຄວ້ນພວນຊຽງຂວາງ, ຫົວພັນ ແລະ ສິບສອງຈຸໄທ; ແຜນການທີສອງ ແມ່ນການທ້ອນໂຮມເອົາ ຫຼວງພະບາງ ແລະ ແຜນການທີສາມ ແມ່ນການທ້ອນໂຮມເອົາຈຳປາສັກ. ແຜນການທ້ອນໂຮມຫົວ ເມືອງລາວ ຂອງເຈົ້ານັນທະເສນ ຖືກດຳເນີນໄປດ້ວຍດີຄືສາມາດທ້ອນໂຮມເອົາອານາຈັກຫຼວງພະ ບາງ, ແຄວ້ນພວນຊຽງຂວາງ, ຫົວພັນ ແລະ ສິບສອງຈຸໄທ ແລະ ກຳລັງຈະປະສົບຜົນສຳເລັດລົງຢູ່ແລ້ວ ແຕ່ຕ້ອງກັບມາຢຸດສະງັກລົງ ຍ້ອນກອງທັບຫຼວງຂອງສະຫຍາມຖືກປະລາໄຊໃຫ້ພະມ້າ ຢູ່ເມືອງ ທະວາຍ ປະກອບກັບຂ່າວຜົນ ສຳເລັດໃນການເຮັດສົງຄາມຕ້ານສັກດິນາດາຍວຽດຂອງເຈົ້າ ນັນທະເສນ ຊຶ່ງເຮັດໃຫ້ຂອບເຂດຊາຍແດນອານາຈັກລ້ານຊ້າງວຽງຈັນຂະຫຍາຍກວ້າງອອກ ຈຶ່ງເຮັດໃຫ້ສັກດິນາ ສະຫຍາມເກີດຄວາມບໍ່ພໍໃຈ ແລະ ລະແວງສົງໄສ. ໂດຍສະເພາະການທ້ອນໂຮມ ເອົາຫຼວງພະບາງ, ຊຽງຂວາງ, ຫົວພັນ ແລະ ສິບສອງຈຸໄທເຂົ້າ ກັນນັ້ນຖືວ່າເປັນການຜິດ ແລະ ຝ່າຝືນຄຳສັ່ງຂອງບາງກອກ. ໃນທີ່ສຸດເຈົ້ານັນທະເສນ ກໍຖືກກ່າວຟ້ອງວ່າສົມທົບກັບພະບໍຣົມມະລາຊາ ເຈົ້າເມືອງນະຄອນພະນົມ ຄົບຄິດກັນກະບົດ ແລະ ຖືກເອີ້ນລົງໄປບາງກອກ ເພື່ອສອບສວນຄະດີ. ໂດຍເຊື່ອໝັ້ນວ່າ ແຜນການ ກອບກູ້ເອກະລາດ ຍັງຖືກເກັບຮັກສາໄວ້ເປັນຢ່າງດີ ເຈົ້ານັນທະເສນຈຶ່ງຕັດສິນໃຈລົງໄປບາງກອກ ແລະ ພະອົງພ້ອມດ້ວຍພະບໍຣົມມະຣາຊາກໍຖືກ ສັກດິນາສະຫຍາມຈັບເປັນຂະເລີຍໃນຂໍ້ຫາວ່າ "ກະບົດ" ແລະ ຖືກບັງຄັບໃຫ້ຍອມຮັບສາລະພາບວ່າ ໄດ້ວາງແຜນການ ກອບກູ້ເອກະລາດມີໂທດເຖິງຂັ້ນ ປະຫານຊີວິດ ດ້ວຍການຖືກທໍລະມານໃນຄຸກຈົນ ເຖິງແກ່ມໍລະນະກຳ ໃນປີ ຄສ 1796.

3) **ການປະຕິບັດນະໂຍບາຍເອົາໃຈສັກດິນາສະຫຍາມ**

ການເອົາໃຈສັກດິນາສະຫຍາມ ເປັນໜຶ່ງໃນແຜນການກອບກູ້ເອກະລາດ ເພື່ອປິດບັງບໍ່ໃຫ້ ສັກດິນາສະຫຍາມຮູ້ ຊຶ່ງເຈົ້ານັນທະເສນໄດ້ດຳເນີນການປະຕິບັດໃນຫຼາຍຮູບການ ເຊັ່ນ: ການສະແດງ ຄວາມຈົງຮັກພັກດີ ດ້ວຍການສົ່ງກຳລັງໄປຊ່ວຍສັກດິນາສະຫຍາມ ປາບປາມຫົວເມືອງຕ່າງໆ ທີ່ແຂງຂໍ້, ການສົ່ງສ່ວຍຢ່າງເປັນປະຈຳ ແລະ ການປະຕິບັດນະໂຍບາຍຕ່າງໆ ທີ່ສັກດິນາສະຫຍາມກຳນົດ ອອກມາ.

ເຖິງແມ່ນວ່າ ການຕໍ່ສູ້ ເພື່ອຄວາມເປັນເອກະລາດຂອງຊາວລາວ ພາຍໃຕ້ການນຳພາຂອງ ເຈົ້ານັນທະເສນ ແລະ ພະບໍຣົມມະຣາຊາ ຈະບໍ່ໄດ້ຮັບໄຊຊະນະກໍຕາມ ແຕ່ມັນກໍໄດ້ສະແດງໃຫ້ເຫັນເຖິງ

ມູນເຊື້ອຮັກຊາດຮັກຄວາມເປັນເອກະລາດ ແລະ ການຕໍ່ສູ້ບໍ່ຍອມຈຳນົນ ຂອງປະຊາຊົນລາວ. ໂດຍສະເພາະ ປະຊາຊົນລາວໃນສອງຝັ່ງຂອງທີ່ຕໍ່ສູ້ຄຽງບ່າຄຽງໄຫຼ່ກັນ ຕ້ານສັກດິນາສະຫຍາມ ຜູ້ຮຸກຮານ ເພື່ອຄວາມເປັນເອກະລາດຂອງຊາວລາວ ພາຍໃຕ້ການນຳພາຂອງເຈົ້າ ນັນທະເສນ ທີ່ວຽງຈັນ ແລະ ພະບໍຣົມມະຣາຊາ ພົມມາ ທີ່ນະຄອນພະນົມ. ການຕໍ່ສູ້ຄັ້ງນີ້ ເຮັດໃຫ້ປະຊາຊົນລາວ ທັງສອງຝັ່ງຂອງມີ ຄວາມຕື່ນຕົວສູງຂຶ້ນທັງເປັນການເສີມຂະຫຍາຍນ້ຳໃຈຮັກຊາດ, ຄຽດແຄ້ນສັກດິນາ ສະຫຍາມຜູ້ກະທຳຍ່ຳຕາມ ແລະ ຈະກາຍເປັນພະລັງແຫ່ງຄວາມຄຽດແຄ້ນນີ້ຕໍ່ກັບສັກດິນາສະຫຍາມ ຕະຫຼອດໄປຈົນກວ່າຈະໄດ້ຮັບໄຊຊະນະ.

1.2.6 ເຈົ້າອະນຸວົງກັບການນຳພາປະຊາຊົນລາວຕ້ານສັກດິນາສະຫຍາມ

1.2.6.1 ປະຫວັດຂອງພະເຈົ້າອະນຸວົງ

ສົມເດັດພະເຈົ້າອະນຸວົງເປັນລາຊະບຸດຂອງ ເຈົ້າສິຣິບຸນຍະສານ, ເປັນພະອະນຸຊາຂອງ ເຈົ້ານັນທະເສນ ແລະ ເຈົ້າອິນທະວົງ. ພະອົງເກີດປີກຸນ ຈຸລະສັກກະລາດ 1129 ປີ ຄສ 1767 ທີ່ ພະລາຊະວັງນະຄອນວຽງຈັນ. ປີ ຄສ 1779 ພະອົງໄດ້ຖືກສັກດິນາສະຫຍາມຈັບໄປເປັນຕົວປະກັນ ທີ່ບາງກອກ ພ້ອມດ້ວຍອ້າຍ, ນ້ອງສາວ ແລະ ບຸກຄົນອື່ນໆ ໃນພະລາຊະວັງ. ໃນເວລາທີ່ດຳລົງຊີວິດ ຢູ່ບາງກອກພະອົງ ໄດ້ເຫັນການກະທຳທີ່ບໍ່ດີຂອງສັກດິນາສະຫຍາມທີ່ມີຕໍ່ປະຊາຊົນລາວ ພະອົງຍິ່ງມີ ຄວາມຄຽດແຄ້ນ ແລະ ກໍໄດ້ພະຍາຍາມເຝິກຝົນຕົນເອງ ໃຫ້ເຂັ້ມແຂງດ້ວຍການຊອກຫາທຸກວິທີທາງ ເພື່ອກູ້ຊາດ. ສິ່ງສຳຄັນທຳອິດໃນເວລາຢູ່ບາງກອກ ຄືເຮັດໃຫ້ສັກດິນາສະຫຍາມເຊື່ອໃຈ ເພື່ອປິດບັງ ແຜນການກູ້ຊາດ ເຊັ່ນ: ໃນປີ ຄສ 1799-1804 ເຈົ້າອະນຸວົງໄດ້ຍົກທັບໄປຊ່ວຍສັກດິນາສະຫຍາມ ໃນການຕີເອົາຊຽງໃໝ່ ແລະ ຊຽງແສນ ຄືນຈາກພະມ້າ. ປີ ຄສ 1805 ໄດ້ຍົກທັບຈາກວຽງຈັນ ໄປສົມທົບ ກັບກອງທັບຫົວເມືອງຝ່າຍເໜືອ ປະກອບມີລຳປາງ, ຊຽງໃໝ່, ແພ່ ແລະ ຫຼວງພະບາງ ໄປຕີເອົາເມືອງ ຊຽງຕຸງອອກຈາກສັກດິນາພະມ້າ. ກອງທັບຂອງເຈົ້າອະນຸວົງ ແລະ ກອງທັ້ງຫົວເມືອງຝ່າຍເໜືອ ສາມາດ ຍຶດເອົາເມືອງນ້ອຍໃຫຍ່ໃນເຂດຊຽງຕຸງໄດ້ເຖິງ 50 ກວ່າເມືອງ ພ້ອມດ້ວຍ ເມືອງຊຽງຕຸງ.

ໃນເວລາທີ່ ເຈົ້າອິນທະວົງ ຜູ້ເປັນອ້າຍຂຶ້ນເປັນກະສັດປົກຄອງອານາຈັກລ້ານຊ້າງວຽງຈັນນັ້ນມາ ໃນປີ ຄສ 1795 ພະເຈົ້າອະນຸວົງ ກໍໄດ້ຖືກສັກດິນາສະຫຍາມແຕ່ງຕັ້ງໃຫ້ມາດຳລົງຕຳແໜ່ງ ເປັນມະຫາ ອຸປະຣາດ. ແຕ່ພາຍຫຼັງການສິ້ນພະຊົນຂອງເຈົ້າອິນທະວົງແລ້ວມາ ໃນປີ ຄສ 1805 ພະເຈົ້າອະນຸວົງ ກໍໄດ້ຖືກແຕ່ງຕັ້ງຈາກສັກດິນາສະຫຍາມ ໃຫ້ຂຶ້ນເປັນກະສັດປົກຄອງອານາຈັກລາວລ້ານຊ້າງວຽງຈັນ. ຫຼັງຈາກ ຂຶ້ນເປັນກະສັດປົກຄອງແລ້ວ, ພະເຈົ້າອະນຸວົງໄດ້ດຳເນີນພາລະກິດຫຼາຍຢ່າງ ເພື່ອສ້າງຄວາມ ພ້ອມໃຫ້ແກ່ການຕໍ່ສູ້ກູ້ຊາດອອກຈາກການຕົກເປັນຫົວເມືອງຂຶ້ນຂອງສະຫຍາມ. ພາລະກິດທຳອິດ ຄື :

1) ການສ້າງສາຍສຳພັນກັບອານາຈັກອ້ອມຂ້າງ

ພະອົງໄດ້ສາຍພົວພັນກັບຫວຽດນາມ ດ້ວຍການສົ່ງທູດໄປເມືອງເວ້ ນະຄອນຫຼວງຂອງ ຫວຽດນາມເຖິງ 4 ຄັ້ງຄື: ຄັ້ງທີໜຶ່ງ ໃນປີ ຄສ 1805, ຄັ້ງທີສອງ ໃນປີ ຄສ 1811, ຄັ້ງທີສາມ ໃນປີ ຄສ 1814 ແລະ ຄັ້ງທີສີ່ ໃນປີ ຄສ 1817. ປີ ຄສ 1818 ພະເຈົ້າອະນຸວົງໄດ້ສົ່ງທູດໄປຫາເຈົ້າຊີວິດຫຼວງພະ ບາງ ເພື່ອການທ້ອນໂຮມລາວເຂົ້າເປັນອັນໜຶ່ງອັນດຽວໃນຄັ້ງນີ້, ໄດ້ສົ່ງສະໜຸ່ງຊ້າງໄປເປັນຂອງຂວັນ. ຫຼັງຈາກສຳເລັດແລ້ວ ພະເຈົ້າອະນຸວົງຈະຂໍອອກບວດເປັນພະສົງເລີຍ. ມາ ໃນປີ ຄສ 1821 ພະເຈົ້າ ອະນຸວົງ ໄດ້ສົ່ງທູດໄປຫາເຈົ້າຊີວິດຫຼວງພະບາງ ພ້ອມດ້ວຍຂອງຂວັນເປັນເຮືອຊ່ວງຟອກຄຳ ແລະ ເຄື່ອງອື່ນໆ.

2) ການປັບປຸງ ແລະ ປ່ຽນແປງອານາຈັກ

ພາຍຫຼັງທີ່ຂຶ້ນເປັນກະສັດປົກຄອງແລ້ວ ພະເຈົ້າອະນຸວົງກໍໄດ້ເລັ່ງໃສ່ບູລະນະປະຕິສັງ ວັດວາອາຮາມຕ່າງໆ ເພື່ອໃຫ້ເປັນສະຖານທີ່ການສຶກສາ ແລະ ເປັນສູນເຕົ້າໂຮມ ຄວາມສາມັກຄີ ຂອງປະຊົນພາຍໃນອານາຈັກ ເຊັ່ນ: ປີ ຄສ 1806 ເຈົ້າອະນຸວົງພ້ອມດ້ວຍເຈົ້າເມືອງ ນະຄອນພະນົມ ແລະ ເຈົ້າເມືອງມຸກດາຫານ ໄປໄຫວ້ພຣະທາດພະນົມ. ປີ ຄສ 1807 ເຈົ້າອະນຸວົງ ພ້ອມດ້ວຍເຈົ້າເມືອງ ນະຄອນພະນົມ ແລະ ເຈົ້າເມືອງມຸກດາຫານໄປໄຫວ້ພຣະທາດພະນົມ. ປີ ຄສ 1809 ເຈົ້າອະນຸວົງພ້ອມ ດ້ວຍເຈົ້ານາຫໍພຣະແກ້ວ. ປີ ຄສ 1810 ເຈົ້າອະນຸວົງ ພ້ອມດ້ວຍປະຊາຊົນໄດ້ສ້າງຫໍພຣະແກ້ວຢູ່ ບ້ານສີຊຽງໃໝ່ ແລະ ສ້າງຂົວແມ່ນ້ຳຂອງຢູ່ທ່າວັດອຸບມຸງກັ້ງກັນຂ້າມກັບວັດຊ້າງເຜືອກ ສີຊຽງໃໝ່ ແລະ ທຳການສະເຫຼີມ ສະຫຼອງ ໃນປີ ຄສ 1812. ປີ ຄສ 1811 ເຈົ້າອະນຸວົງໄດ້ທຳການປັບປຸງກົງຈັກການ ປົກຄອງໃນເຂດຫົວພັນທັງຫ້າທັງຫົກ. ປີ ຄສ 1812 ເຈົ້າອະນຸວົງ ພ້ອມດ້ວຍເຈົ້າເມືອງນະຄອນພະນົມ ແລະ ເຈົ້າເມືອງມຸກດາຫານໄປໄຫວ້ພຣະທາດພະນົມ. ປີ ຄສ 1813 ເຈົ້າອະນຸວົງໄດ້ຈັດການເຕົ້າ ໂຮມພະສົງທົ່ວອານາຈັກລ້ານຊ້າງ ເພື່ອປັບປຸງພຣະໄຕປິດົກ ຊຶ່ງເປັນການຈັດຄັ້ງທີ 3 ຫຼັງຈາກຄັ້ງທີ 1 ຈັດຂຶ້ນໃນສະໄໝພະເຈົ້າຟ້າງຸ່ມ ປີ ຄສ 1359 ແລະ ຄັ້ງທີ 2 ຈັດຂຶ້ນໃນສະໄໝພະເຈົ້າໂພທິສາຣາດ ປີ ຄສ 1523. ປີ ຄສ 1818 ເຈົ້າອະນຸວົງ ພ້ອມດ້ວຍປະຊາຊົນສ້າງວັດສີສະເກດ ແລະ ໄດ້ທຳການສະເຫຼີມ ສະຫຼອງ ໃນປີ ຄສ 1824.

ພາລະກິດໃນການຕໍ່ສູ້:

ປີ ຄສ 1825 ໂດຍສືບຕໍ່ພາລະກິດຂອງຜູ້ເປັນອ້າຍ ພະອົງກໍໄດ້ນຳພາປະຊາຊົນລາວລ້ານຊ້າງ ດຳເນີນການກູ້ຊາດຕ້ານສັກດິນາສະຫຍາມ ແລະ ໄດ້ທຳການເຄື່ອນທັບໃນຕົ້ນ ປີ ຄສ 1827 ໂດຍແບ່ງ ອອກເປັນສາມປີກ ຄື: ປີກທີ 1, ທີ 2 ອອກຈາກວຽງຈັນ ແລະ ປີກທີ 3 ເຄື່ອນທັບອອກຈາກຈຳປາສັກເພື່ອ ກວາດຕ້ອນເອົາຄອບຄົວຄົນລາວກັບຄືນວຽງຈັນ. ໃນຂະນະທີ່ກອງທັບລ້ານຊ້າງພວມເຄື່ອນໄຫວອົບ ພະຍົບ ຄອບຄົວຊາວລາວກັບຄືນມານັ້ນກໍຖືກກອງທັບສະຫຍາມ ທີ່ເຄື່ອນອອກມາຈາກກຸງເທບ ແລະ ຈາກພະຕະບອງບຸກຕີຢ່າງຂະໜາດໃຫຍ່. ກອງທະຫານລ້ານຊ້າງໄດ້ທຳການຕໍ່ສູ້ຢ່າງອົງອາດກ້າຫານ ແຕ່ກໍບໍ່ສາມາດສະກັດກັ້ນກອງທັບສະຫຍາມທີ່ມີກຳລັງພົນຫຼວງຫຼາຍ ແລະ ອາວຸດທີ່ທັນສະໄໝກວ່າ. ກອງທັບລ້ານຊ້າງຈຶ່ງໄດ້ຖອຍທັບກັບຄືນ ເພື່ອຮັກສາກຳລັງ ແລະ ປ້ອງກັນວຽງຈັນໄວ້. ແຕ່ເມື່ອຊັ່ງຊາກຳ ລັງເຫັນວ່າ ຈະຕ້ານທານກອງທັບສັກດິນາສະຫຍາມບໍ່ໄດ້, ພະເຈົ້າອະນຸວົງ ຈຶ່ງໄດ້ພາຄອບຄົວໜີໄປຢູ່ ເມືອງວິນ ຫວຽດນາມ ເພື່ອປັບປຸງກຳລັງຕໍ່ສູ້ອີກຄັ້ງໜຶ່ງ. ຫຼັງຈາກປັບປຸງກຳລັງຢູ່ອານາມໄດ້ປີໜຶ່ງ ຈຶ່ງໄດ້ກັບຄືນມາວຽງຈັນ ເພື່ອຍຶດເອົາ ເມືອງວຽງຈັນຄືນ. ແຕ່ບໍ່ສາມາດດຳເນີນຕາມແຜນການໄດ້ສຳ ເລັດເນື່ອງຈາກຂາດກຳລັງຄົນ. ສະນັ້ນ, ພະເຈົ້າອະນຸວົງຈຶ່ງໄດ້ຕັດສິນໃຈໜີອອກຈາກນະຄອນວຽງຈັນ ອີກຄັ້ງໜຶ່ງເພື່ອໄປປັບປຸງກຳລັງພົນຄືນໃໝ່. ແຕ່ວ່າ ການໜີອອກຈາກນະຄອນວຽງຈັນຂອງພະເຈົ້າອະ ນຸວົງໃນຄັ້ງນີ້ ບໍ່ປະສົບຜົນສຳເລັດ ຄື: ມາຮອດ ວັນທີ 19 ທັນວາ ປີ ຄສ 1828 ພະເຈົ້າອະນຸວົງໄດ້ຖືກ ກອງທະຫານສັກດິນາສະຫຍາມຂອງພະຍາບໍດິນ ແລະ ພະຍາລັບແລ[37] ແຫ່ງເມືອງນ່ານ ທຳການຈັບ ໄດ້ຢູ່ທີ່ຊາຍແດນເມືອງພວນ. ແລ້ວພະອົງພ້ອມດ້ວຍຄອບຄົວ ກໍໄດ້ຖືກກອງທະຫານສັກດິນາສະຫຍາມ ນຳສົ່ງລົງໄປບາງກອກ.

ເລີ່ມຕັ້ງແຕ່ວັນທີ 15 ມັງກອນ ປີ ຄສ 1829 ມາ ພະອົງ ໄດ້ຖືກສັກດິນາສະຫຍາມນຳໄປລົງໂທດ ປະຈານດ້ວຍການທໍລະມານຢ່າງໜັກໜ່ວງ ເຊັ່ນ: ຖືກເອົາເຫຼັກແຫຼໄຟມາເຈາະຕາທັ້ງສອງເບື້ອງ,

[37] ພະຍາເມືອງລັບແລ ຕໍ່ມາໄດ້ຮັບນາມມະຍົດເປັນ ພະຍາອະນຸວົງ ແລະ ຖືກແຕ່ງຕັ້ງໃຫ້ເປັນເຈົ້າເມືອງຊຽງຄານ, ທີ່ມາ : ມະຍຸຣີ ແລະ ເພັຍພັນ ເທ່ຈຳສີວັດທະນາ. ເຈົ້າອະນຸວົງ (ປີ ຄສ 1767-1829) ປະຊາຊົນລາວ ແລະ ອາຊີອາຄະເນ. ນະຄອນຫຼວງວຽງຈັນ. ພິມຄັ້ງທີ ສອງ. ໂຮງພິມແຫ່ງລັດ ປີ ຄສ 2010: 129

ບໍ່ໃຫ້ກິນອາຫານ ແລະ ນ້ຳ.... ມາໃນວັນທີ 25 ມັງກອນ ປີ ຄສ 1829 ພະອົງ ໄດ້ຖືກນຳໄປແຂວນໄວ້ໃນກົງເຫຼັກເທິງຕໍ່ໜ້ານ້ຳເຈົ້າພະຍາ ທີ່ທ່າຣາຊີນີ ບາງກອກ ໃກ້ກັບວັດສະເກດໃນປັດຈຸບັນນີ້ ແລະ ມາຮອດກາງຄືນຂອງວັນທີ 25 ຕໍ່ໃສ່ວັນທີ 26 ມັງກອນ ປີ ຄສ 1829 ສົມເດັດພະເຈົ້າອະນຸວົງ ກໍໄດ້ສິ້ນພະຊົນ ດ້ວຍການທໍລະມານໃນກົງເຫຼັກນະສະຖານທີ່ແຫ່ງນັ້ນ. ລວມພະຊົນອາຍຸຂອງພະອົງໄດ້ 62 ປີພໍດີ.

1.2.6.2 ການປັບປຸງອານາຈັກຂອງພະເຈົ້າອະນຸວົງ

ກ. ການປັບປຸງລະບົບການປົກຄອງ

ຫຼັງຈາກທີ່ເຈົ້າອະນຸວົງ ໄດ້ຂຶ້ນເປັນກະສັດປົກຄອງອານາຈັກລາວລ້ານຊ້າງວຽງຈັນ ໃນປີ ຄສ 1805 ແລ້ວ ພະອົງ ກໍໄດ້ມີແຜນການປັບປຸງກົງຈັກການປົກຄອງຂອງອານາຈັກຄືນໃໝ່ ເພື່ອເຮັດໃຫ້ອຳນາດ ສັກດິນາລ້ານຊ້າງເຂັ້ມແຂງ ແລະ ກັບຄືນສູ່ສະພາບປົກກະຕິ ເຊັ່ນ:

1) ວຽກງານພາຍໃນ

ເຈົ້າອະນຸວົງ ໄດ້ມີການປັບປຸງອຳນາດສັກດິນາໃຫ້ລວມສູນຄືນໃໝ່ ໂດຍສະເພາະ ອຳນາດບໍລິຫານ ສ່ວນກາງ ຄື ອຳນາດຝ່າຍເຈົ້າ ແລະ ອຳນາດຝ່າຍເສນາອາມາດ. ອຳນາດຝ່າຍເຈົ້າ ໄດ້ມີການຈັດສັນ ຕຳແໜ່ງຄືນໃໝ່ ເຊັ່ນ:

- ຕຳແໜ່ງມະຫາອຸປະລາດ ເຈົ້າຕິດສະ
- ຕຳແໜ່ງເຈົ້າສຸດທິສານ ເຈົ້າໂປ້
- ຕຳແໜ່ງລາຊະວົງ ເຈົ້າເຫງົ້າ
- ຕຳແໜ່ງລາຊະບຸດ ເຈົ້າໄຍ້

ສະເພາະ "ຕຳແໜ່ງສຸດທິສານ" ເປັນຕຳແໜ່ງໃໝ່ ເປັນຕຳແໜ່ງທີ່ມີຊັ້ນສູງສຸດ ທາງການທະຫານ ແລະ ການປົກຄອງ (ແຕ່ກ່ອນຕຳແໜ່ງດັ່ງກ່າວນີ້ ມີແຕ່ເຈົ້າຊີວິດເທົ່ານັ້ນ). ອຳນາດຝ່າຍເສນາອາມາດ ໄດ້ມີການປັບປຸງ ແລະ ຊັບຊ້ອນບຸກຄົນເຂົ້າດຳລົງຕຳແໜ່ງສຳຄັນຄືນໃໝ່ :

- ໃຫ້ ເພຍເມືອງຈັນ ວ່າລາຊະການ ຝ່າຍເໜືອ
- ໃຫ້ ເພຍເມືອງແສນ ວ່າລາຊະການ ຝ່າຍໃຕ້
- ໃຫ້ ກວານວຽງ ວ່າລາຊະການ ກົມເມືອງ
- ໃຫ້ ກວານວັງ ວ່າລາຊະການ ກົມວັງ
- ໃຫ້ ກວານໂຍ ວ່າລາຊະການ ກົມນາ
- ໃຫ້ ກວານຄັງ ວ່າລາຊະການ ກົມຄັງ
- ໃຫ້ ຊານົນວ່າລາຊະການກົມພະສັດສະດີ (ບັນຊີເມືອງ)

ຫຼັງຈາກສຳເລັດ ໃນການປັບປຸງອຳນາດຊັ້ນສູນກາງແລ້ວ ເຈົ້າອະນຸວົງກໍໄດ້ທຳການປັບປຸງກົງຈັກພາຍໃນຂອງຫົວເມືອງທ້ອງຖິ່ນ ໃຫ້ເຂັ້ມແຂງແບບສັນຕິ ແລະ ຄ່ອງແຄ້ວ ເພື່ອກຽມພ້ອມເຕົ້າໂຮມຊາດ ຄືນໃໝ່ ເຊັ່ນ: ແຕ່ງຕັ້ງເຈົ້ານ້ອຍເປັນເຈົ້າເມືອງພວນ ຊຶ່ງເປັນເມືອງທີ່ມີບັນຫາຫຼາຍຢ່າງເກີດຂຶ້ນ ແຕ່ເຈົ້າອະນຸວົງ ກໍພະຍາຍາມແກ້ໄຂໄດ້ຢ່າງສຳເລັດຜົນໂດຍສັນຕິວິທີ. ນອກຈາກນີ້, ກໍປັບປຸງຄວາມສາມັກຄີພາຍໃນ ກໍຄືລະຫວ່າງອານາຈັກລາວລ້ານຊ້າງດ້ວຍກັນ ໂດຍການສ້າງສາຍສຳພັນອັນດີລະຫວ່າງວຽງຈັນ-ຫຼວງພະບາງ ໂດຍສະເພາະເຈົ້າມັນທາຕຸລາດໃຫ້ລືມຄວາມອາຄາດບາດໝາງ ແລະ ຫັນມາເຕົ້າໂຮມກັນ ເພື່ອຄວາມເປັນຊາດ. ສ່ວນຈຳປາສັກນັ້ນເຈົ້າອະນຸວົງກໍພະຍາຍາມຊອກໂອກາດເພື່ອທ້ອນໂຮມໃຫ້ເຂົ້າ ກັບວຽງຈັນໂດຍສັນຕິວິທີ. ຈົນເປັນຜົນສຳເລັດແລ້ວຈຶ່ງສົ່ງເຈົ້າລາຊະບຸດ ໄຍ້ໄປປົກຄອງ. ດຳເນີນການຜູກແຂ້ນຄວາມສາມັກຄີຮັກແພງ ແລະ ໃກ້ສິດຕິດແໜດກັບຫົວເມືອງທີ່ຢູ່

ພາຍໃນອານາຈັກລ້ານຊ້າງ ຢ່າງເປັນປົກກະຕິ ແລະ ປະຈຳ ດ້ວຍການພົບປະກັບເຈົ້າເມືອງເຫຼົ່ານັ້ນຢູ່ວັດ ສີສະເກດ ແລະ ສາບານຕົວວ່າຈະຈົງຮັກພັກດີຕໍ່ອານາຈັກລ້ານຊ້າງ.

2) **ວຽກນະໂຍບາຍພາຍນອກ**

ດຳເນີນການສ້າງສາຍສຳພັນອັນດີກັບອານາຈັກໃກ້ຄຽງ ເຊັ່ນ ພະອົງໄດ້ຜູກຄວາມສາມັກຄີ ກັບອານາຈັກອານາມ ດ້ວຍການສົ່ງກອງທັບລ້ານຊ້າງໄປປະກອບສ່ວນຊ່ວຍສັກດິນາອານາມ ໃນການ ປາບປາມພວກທີ່ເປັນປໍລະປັກ. ປີ ຄສ 1800-1802 ເຈົ້າອະນຸວົງສົ່ງກອງທັບລາວລ້ານຊ້າງ ໄປຊ່ວຍ ຫງຽນອັນປາບ "ໄຕຊອນ".

ສ່ວນກັບສັກດິນາສະຫຍາມນັ້ນ ພະອົງກໍໄດ້ດຳເນີນນະໂຍບາຍເອົາໃຈສັກດິນາສະຫຍາມ ເພື່ອປິດບັງແຜນການກູ້ເອກະລາດ ເຊັ່ນ: ພະເຈົ້າອະນຸວົງໄດ້ໃຫ້ຄວາມໃກ້ຊິດຕິດແທດສະໜິດສະໜົມ ຮັກແພງກັບຣາຊະວົງຈັກກີ ໂດຍສະເພາະຣັດຊະການທີ 2 ແລະ ທີ 3. ຕົວຢ່າງ: ປີ ຄສ 1805, 1812 ແລະ ປີ ຄສ 1816 ເຈົ້າອະນຸວົງ ໄດ້ສົ່ງຊ້າງດ່າງລັກສະນະພິເສດ ລົງໄປໃຫ້ເຈົ້າຊີວິດສະຫຍາມ. ນອກຈາກນີ້, ໃນດ້ານການປະຕິບັດທຳນຽມຂອງຫົວເມືອງສ່ວຍ ພະອົງກໍໄດ້ປະຕິບັດໃນແຕ່ລະປີບໍ່ໄດ້ ຂາດ ແລະ ສົ່ງເຄື່ອງບັນນາການໄປໃຫ້ບາງກອກບໍ່ໄດ້ຂາດ ພ້ອມທັງເກັບເກນແຮງງານໄປເຮັດວຽກທີ່ ບາງກອກຕາມທີ່ພວກສັກດິນາສະຫຍາມຕ້ອງການ.

ຂ. ການບູລະນະສ້າງສາປະເທດຊາດ

1) ການປົວແປງອານາຈັກ

ໄປຄຽງຄູ່ກັບການປັບປຸງກົງຈັກການປົກຄອງ ແລະ ປັບປຸງຄວາມສາມັກຄີພາຍໃນຊາດ ໂດຍສະເພາະ ລະຫວ່າງ ອານາຈັກວຽງຈັນກັບຫຼວງພະບາງ, ວຽງຈັນກັບເມືອງພວນ ແລະ ວຽງຈັນ ກັບຈຳປາສັກແລ້ວ. ພະເຈົ້າອະນຸວົງ ຍັງໄດ້ທຳການຟື້ນຟູ ແລະ ບູລະນະສ້າງສາອານາຈັກໃຫ້ເຂັ້ມ ແຂງຄືນໃໝ່ ເຊັ່ນ: ປັບປຸງບູລະນະກຳແພງເມືອງ, ສ້າງພະລາຊະວັງ, ຫໍໂຮງ, ວັດວາອາຮາມ[38], ໃນຂະນະດຽວກັນນັ້ນ, ກໍໄດ້ເອົາໃຈໃສ່ພັດທະນາວຽກງານຄົມມະນາຄົມ ໃຫ້ມີການໄປຫາສູ່ກັນໄດ້ຢ່າງ ສະດວກໃນແຕ່ລະ ຫົວເມືອງ ເຊັ່ນ: ໃຫ້ມີການຕໍ່ເຮືອ, ເຮັດລໍ້, ເຮັດກວຽນ ແລະ ໄດ້ສ້າງຂົວຂ້າມນ້ຳຂອງ ລະຫວ່າງວຽງຈັນ-ສີຊຽງໃໝ່ ຂຶ້ນ ໃນປີ ຄສ 1810.

2) ການປັບປຸງດ້ານເສດຖະກິດ

ພະເຈົ້າອະນຸວົງ ໄດ້ຖືເອົາວຽກງານເສດຖະກິດເປັນໃຈກາງໃນການດຳເນີນການກອບກູ້ຊາດ ໃຫ້ສຳເລັດນັ້ນ, ກ່ອນອື່ນຕ້ອງມີສະບຽງອາຫານການກິນໃຫ້ພຽງພໍ. ດັ່ງນັ້ນ, ພະອົງຈຶ່ງ ໄດ້ມີແຜນການ ສົ່ງເສີມໃຫ້ປະຊາຊົນທຳການຜະລິດດ້ວຍການເຮັດໄຮ່ ແລະ ເຮັດນາ ເພື່ອແນໃສ່ໃຫ້ທຸກຄົນກຸ້ມຕົນເອງ ແລະ ເສຍພາສີເຂົ້າຄັງຫຼວງ ເພື່ອແຮໄວ້ໃນຍາມສຸກເສີນ.

3) ການປັບປຸງດ້ານວັດທະນະທຳ - ສັງຄົມ

ພະອົງ ໄດ້ພະຍາຍາມເຮັດໃຫ້ປະຊາຊົນ ແລະ ບ້ານເມືອງມີຄວາມສະຫງົບດ້ວຍການກຳນົດ ເອົາ "ຄວາມສະຫງົບສຸກຂອງປະຊາຊົນເປັນບັນຫາສຳຄັນ ແລະ ໃຈກາງ" ເຊັ່ນ: ພະອົງໄດ້ອອກຄຳສັ່ງ ໃຫ້ຂັດຂວາງ ການຂົ້ນທະບຽນຄົນລາວ ໂດຍການສັກເລກຂອງສັກດິນາສະຫຍາມ ທີ່ແຜ່ເຂົ້າມາໃນດິນ ແດນຫົວເມືອງຂອງວຽງຈັນ. ສົ່ງເສີມ ແລະ ບູລະນະສ້ອມແປງວັດວາອາຮາມຄືນໃໝ່ ເພື່ອໃຫ້ເປັນ ສະຖານທີ່ສຶກສາຮ່ຳຮຽນວິຊາຄວາມຮູ້, ເປັນບ່ອນອົບຮົມສັ່ງສອນ ແລະ ປະຕິບັດຮີດຄອງປະເພນີອັນດີ

[38] ວັດສີສະເກດ, ວັດສີບຸນເຮືອງ (ໜອງຄາຍ) ...

ງາມຂອງຊາດ. ນອກຈາກນັ້ນ, ຍັງສົ່ງເສີມຂະຫຍາຍການແຕ່ງການກອນ, ກະວີຕ່າງໆ ເພື່ອເປັນການປຸກລະດົມຈິດໃຈຮັກຊາດຂອງປະຊາຊົນໃຫ້ລຸກຂຶ້ນຕ້ານສັກດິນາສະຫຍາມ.

1.2.6.3 ພະເຈົ້າອະນຸວົງນຳພາປະຊາຊົນຕໍ່ສູ້ກູ້ເອກະລາດຈາກສັກດິນາສະຫຍາມ

ກ. ການວາງແຜນເພື່ອຕໍ່ສູ້

ຫຼັງຈາກທີ່ພະເຈົ້າອະນຸວົງສຳເລັດໃນການປັບປຸງ ແລະ ຟື້ນຟູອານາຈັກເພື່ອກຽມຄວາມພ້ອມໃນການກອບກູ້ເອກະລາດແລ້ວ ພະອົງຍັງໄດ້ຫາວິທີສົ່ງເຈົ້າລາຊະບຸດ ໂຍ້ໄປປົກຄອງຈຳປາສັກ ໃນປີ ຄສ 1822 ແລະ ດຳເນີນການເກ້ຍກ່ອມກະສັດຫຼວງພະບາງໃຫ້ຮ່ວມມືກັນ ເພື່ອກອບກູ້ເອກະລາດ, ອິດສະຫຼະພາບຄືນມາ.

ສວຍໂອກາດທີ່ສະຖານະການຢູ່ສະຫຍາມກຳລັງມີການປ່ຽນແປງ ຄື ໃນເວລານັ້ນ ກະສັດສະຫຍາມ ລາຊະການທີສອງພະພຸດທະເລີດຫ້ານະພາໄລ[39] ໄດ້ສິ້ນພະຊົນ ແລະ ມີການຊ່ວງຊິງບັນລັງຢູ່ກຸງເທບ. ມາ ໃນປີ ຄສ 1825 ເຈົ້າອະນຸວົງ ຈຶ່ງໄດ້ຮີບຮ້ອນກະກຽມການລຸກຮືຂຶ້ນກອບກູ້ເອກະລາດ, ອິດສະຫຼະພາບຢ່າງຈິງຈັງ ດ້ວຍການຍົກເອົ້ນເສນາອາມາດ, ຂຸນນາງໃຫຍ່ນ້ອຍທີ່ສຳຄັນ ເຊັ່ນ: ເຈົ້າມະຫາອຸປະຣາດຕິດສະ, ເຈົ້າຣາຊະວົງເຫງົ້າ, ເຈົ້າຣາຊະບຸດໂຍ້ກັບເຈົ້າລູກຫຼານຜູ້ໃຫຍ່ອື່ນໆ ພ້ອມດ້ວຍເຈົ້າປົກຄອງຫົວເມືອງຕ່າງໆ ແລະ ນາຍທະຫານທີ່ໃກ້ຊິດມາປຶກສາຫາລືກັນ ຢູ່ໃນພະຣາຊະວັງນະຄອນວຽງຈັນ.

ຜ່ານການຫາລື ໄດ້ພິຈາລະນາຊັ່ງຊາສະພາບການ ແລະ ຕົກລົງເຫັນດີ ເປັນເອກະພາບກັນປະກາດລາວເປັນເອກະລາດ ບໍ່ຍອມຂຶ້ນກັບສັກດິນາສະຫຍາມອີກຕໍ່ໄປ ດ້ວຍການຈັດຕັ້ງກອງທັບຂັບໄລ່ສັກດິນາສະຫຍາມ ອອກຈາກຜືນແຜ່ນດິນລາວໃຫ້ໝົດ. ເພື່ອເຮັດໃຫ້ແຜນການຕໍ່ສູ້ກູ້ຊາດເປັນຜົນສຳເລັດ ໄດ້ຕົກລົງຈັດຕັ້ງກຳລັງອອກເປັນ 3 ກອງທັບໃຫຍ່ ຄື:

- ກອງທັບຫຼວງ ແມ່ນເຈົ້າອະນຸວົງເປັນແມ່ທັບ ໂດຍມີເຈົ້າຣາຊະວົງເຫງົ້າ ແລະ ແມ່ທັບນາຍກອງທີ່ເກັ່ງກ້າເປັນຜູ້ຊ່ວຍ ມີກຳລັງພົນທັງໝົດ 9000 ຄົນ ຊ້າງ 400 ໂຕ ແລະ ມ້າ 200 ໂຕ.
- ກອງທັບທີສອງ ນຳພາໂດຍເຈົ້າຣາຊະບຸດໂຍ້ ເຈົ້ານະຄອນຈຳປາສັກ ປະກອບມີທະຫານ 2000 ຄົນ
- ກອງທັບທີສາມ ນຳພາໂດຍອຸປະຣາດຕິດສະ ປະກອບມີທະຫານ 3000 ຄົນ ຊ້າງ 100 ໂຕ ແລະ ມ້າ 40 ໂຕ.

ຂ. ການດຳເນີນສົງຄາມກອບກູ້ເອກະລາດ

1) ການເຄື່ອນກຳລັງພົນ

ຫຼັງຈາກທີ່ພະເຈົ້າອະນຸວົງ ໄດ້ສຳເລັດໃນການປະຊຸມປຶກສາຫາລືກັບເສນາອາມາດ ກ່ຽວກັບການກອບກູ້ເອກະລາດຈາກສັກດິນາສະຫຍາມແລ້ວ ມາໃນທ້າຍ ປີ ຄສ 1825 ເຈົ້າອະນຸວົງ ກໍໄດ້ສັ່ງໃຫ້ມີການເຄື່ອນພົນ ຄື:

- ໃຫ້ເຈົ້າອຸປະຣາດຕິດສະ ນຳກຳລັງຍົກທັບອອກໄປຂັບໄລ່ກອງທັບສະຫຍາມ ທີ່ມາທຳການສັກເລກອອກຈາກຫົວເມືອງໃນທິດຕາເວັນອອກສຽງເໜືອ ຄື ຢູ່ກາລະສິນ, ຮ້ອຍເອັດ, ຂອນແກ່ນ, ຊົນນະບົດ, ສຸວັນນະພູມ...ແລ້ວນຳເອົາຄອບຄົວຄົນລາວກັບຄືນມາວຽງຈັນ.
- ໃຫ້ເຈົ້າຣາຊະບຸດໂຍ້ ເຄື່ອນກຳລັງອອກຈາກເມືອງຈຳປາສັກ ໄປຂັບໄລ່ສັກດິນາສະຫຍາມ ອອກຈາກຫົວເມືອງທາງທິດຕາເວັນອອກ ເຊັ່ນ: ເຂັມມະລາດ, ອຸບົນ, ສີສະເກດ, ເດດອຸດົມ,


[39] ພະນັ່ງເກົ້າ ໄດ້ຂຶ້ນສະເຫວີຍລາດແທນ.

ຍະໂສທອນ ແລະ ອື່ນໆ ແລ້ວໃຫ້ອົບພະຍົບຄອບຄົວມາວຽງຈັນ ແລະ ຈັ່ງໄວ້ປ້ອງກັນເມືອງຈຳນວນໜຶ່ງ. ຫາກສຳເລັດແລ້ວ ໃຫ້ຮີບຍົກທັບໄປຊ່ວຍຕີນະຄອນຣາຊະສີມາຕາມແຜນທີ່ກຳນົດໄວ້.

- ໃຫ້ເຈົ້າໜໍ່ຄຳ ຜູ້ເປັນຫຼານຊາຍຍົກທັບໄປທາງພາກເໜືອຂັບໄລ່ຕໍ່ແທນສັກດິນາສະຫຍາມ ອອກຈາກຫົວເມືອງລາວທາງຝ່າຍເໜືອ ແລ້ວເກັບເກນຄົນມາຊ່ວຍວຽງຈັນເພື່ອເປັນກຳລັງເສີມ.

ສ່ວນກອງທັບຫຼວງຂອງເຈົ້າອະນຸວົງ ໄດ້ຍົກພົ້ນຂ້າມນ້ຳຂອງໄປຕັ້ງທັບ ຢູ່ເມືອງພັນພ້າວ ໃນທ້າຍ ປີ ຄສ 1825 ເພື່ອທຳການເຝິກຊ້ອມກຳລັງຢູ່ທີ່ນັ້ນ. ພໍມາຮອດເດືອນຍີ່ ແຮມ 13 ຄ่ຳ ປີຈໍ ຈ.ສ 1188 (ພ.ສ 2369) ກົງກັບ ປີ ຄສ 1826 ເຈົ້າອະນຸວົງໄດ້ ສັ່ງໃຫ້ເຈົ້າຣາຊະວົງ ຄຸມທະຫານ 5000 ຄົນ ເປັນ ກອງທັບໜ້າເຄື່ອນທັບລົງໄປໂຄຣາດກ່ອນ. ສ່ວນກອງທັບຫຼວງທີ່ນຳພາໂດຍເຈົ້າອະນຸວົງໄດ້ເດີນທາງລົງໄປຕາມຫຼັງໃນສາມວັນຕໍ່ມາ ແລະ ເດີນທາງມາຮອດນະຄອນຣາຊະສີມາໃນເດືອນສາມ ແຮມ 6 ຄ่ຳ ແລ້ວຕັ້ງຄ້າຍຢູ່ທີ່ນັ້ນເຊິ່ງລວມມີກຳລັງພົນທັງໝົດ 20.000 ຄົນ[40].

ແຜນທີ 2: ການເຄື່ອນທັບກອບກູ້ເອກະລາດພາຍໃຕ້ການນຳພາຂອງເຈົ້າອະນຸວົງ



[40] ອ້າງໃນ ສຸເມດໂພທິສານ. ເລື່ອງເດີມ. 2000:403 ແຕ່ບາງເອກະສານບອກວ່າ ມີ 14.000 ຄົນ

2) ການສູ້ຮົບ

ເມື່ອສັກດິນາສະຫຍາມຮູ້ຂ່າວການເຄື່ອນທັບຂອງກອງທັບລາວ, ຫຼັງຈາກທີ່ກອງທະຫານ ຂອງ ເຈົ້າອຸປະຣາດຕິດສະຂັບໄລ່ ສະຫຍາມອອກຈາກຫົວເມືອງຝ່າຍຕາເວັນອອກແລ້ວ ສັກດິນາສະຫຍາມ ກໍໄດ້ວາງແຜນ ແລະ ຍົກກອງທັບຂຶ້ນມາປາບປາມ. ໃນຂະນະທີ່ກອງທັບ ລາວລ້ານຊ້າງ ພວມເຄື່ອນໄຫວ ອົບພະຍົບເອົາຄອບຄົວຊາວລາວກັບຄືນມານັ້ນ, ກອງທັບສະຫຍາມ ໄດ້ເຄື່ອນອອກມາຈາກກຸງເທບ ແລະ ຈາກພະຕະບອງຢ່າງຂະໜາດໃຫຍ່. ກອງທັບສະຫຍາມທີ່ຍົກມາຕີເວລານັ້ນມີຈຳນວນພົນ ລວມ ເຖິງ 160.000 ຄົນ ປະກອບດ້ວຍອາວຸດປືນຄົບມື, ມີທັ້ງປືນໃຫຍ່ ແລະ ປືນນ້ອຍຢ່າງມະຫາສານ, ມີທັ້ງກອງທະຫານຮັບຈ້າງຕ່າງຊາດ ເຊັ່ນ: ອັງກິດ, ຂະແມ, ມອນ. ໂດຍຈັດທັບອອກເປັນ 3 ກອງທັບໃຫຍ່ ຄື: ກອງທັບທີໜຶ່ງນຳພາໂດຍ ພະຍາອະໄພພູທອນ; ກອງທັບທີສອງ ນຳພາໂດຍຮອງເຈົ້າຊີວິດ ສະຫຍາມບຸກຕີເຂົ້າມາທາງນະຄອນ ຣາຊະສີມາ, ໜອງບົວລຳພູມຸ່ງໜ້າສູ່ວຽງຈັນ ແລະ ກອງທັບທີສາມ ນຳພາໂດຍກົມໝື່ນສຸລິນ ທອນເທຣະ ບຸກຕີມາທາງຈຳປາສັກເຂົ້າສູ່ວຽງຈັນ. ກອງທັບລາວລ້ານຊ້າງ ກໍໄດ້ດຳເນີນການຕໍ່ສູ້ຕ້ານຄືນຢ່າງອົງ ອາດໃນຫຼາຍບັ້ນຮົບເຊັ່ນ:

ບັ້ນຮົບທົ່ງສຳລິດ: ເປັນຈຸດເລີ່ມຕົ້ນຂອງການປະທະກຳລັງກັນ ຂອງກອງທັບລາວກັບກອງທັບ ສັກດິນາສະຫຍາມ ໂດຍມີເຈົ້າເມືອງຣາຊະສີມາຮູ້ເຫັນເປັນໃຈ ກັບສະຫຍາມທຳການວາງແຜນການ ຊ້ອນການຕໍ່ສູ້ກັບກອງທັບວຽງຈັນ ດ້ວຍການສັ່ງໃຫ້ພະຍາປະລັດເມືອງຣາຊະສີມາເຂົ້າມາຂໍອ່ອນນ້ອມ ແລະ ຂໍເປັນຜູ້ຄວບຄຸມກຳລັງຄອບຄົວລາວມາວຽງຈັນ. ແຕ່ພໍເດີນທາງມາຮອດທົ່ງສຳລິດກໍທຳການ ຢຸດພັກ ແລ້ວພະພິມຍົກກະບັດ ກຳຫາວິທີການເບື່ອເມົາກຳລັງຝ່າຍວຽງຈັນ ເພື່ອໃຫ້ກອງທະຫານ 9000 ຄົນ ຂອງພະຍານະຄອນຣາຊະສີມາທີ່ສຸ່ມກຳລັງໃນປ່າເຂົ້າບຸກຕີຍາດເອົາຄອບຄົວຄົນລາວທີ່ ເຄື່ອນຍ້າຍມານັ້ນໄດ້ໂດຍງ່າຍ. ຝ່າຍເຈົ້າອະນຸວົງ ເມື່ອຮູ້ຂ່າວກໍແຕ່ງໃຫ້ຕຳຫຼວດໜ້າ 40 ຄົນຂີ່ມ້າໄປ ສືບເບິ່ງເຫດການ ແລະ ໄດ້ຖືກກອງທະຫານພະຍາຣາຊະສີມາ ຍິງເສຍຊີວິດຫຼາຍຄົນ. ຈາກນັ້ນເຈົ້າ ອະນຸວົງຈຶ່ງໄດ້ແຕ່ງໃຫ້ເຈົ້າສຸດທິສານ ແລະ ເຈົ້າປານນຳກຳລັງຄຸມທະຫານ 3600 ຄົນໄປປາບ. ແຕ່ ເນື່ອງຈາກຝ່າຍສະຫຍາມມີກຳລັງພົນ ແລະ ອາວຸດທີ່ທັນສະໄໝກວ່າກວ່າຈຶ່ງເຮັດກອງທະຫານລາວ ຖືກຍິງຕາຍເປັນຈຳນວນຫຼວງ ຫຼາຍ. ປະກອບກັບການລາຍງານຂອງເຈົ້າຣາຊະວົງທີ່ສືບຮູ້ວ່າ ສັກດິນາ ສະຫຍາມໄດ້ນຳເອົາກຳລັງຂຶ້ນມາຕີລາວໃນຫຼາຍທາງ ເຈົ້າອະນຸວົງຈຶ່ງໄດ້ສັ່ງໃຫ້ຖອຍທັບຄືນມາຕັ້ງຢູ່ ໜອງບົວລຳພູ ແລະ ເຫັນດີໃຫ້ແຍກກຳລັງກັນອອກໄປຕໍ່ສູ້ໃນຫຼາຍທາງ.

ບັ້ນຮົບໜອງບົວລຳພູ: ຫຼັງຈາກທີ່ຕົກລົງກັນແລ້ວ ເຈົ້າອະນຸວົງກໍໄດ້ສັ່ງໃຫ້ເຈົ້າຣາຊະວົງ ຍົກຂຶ້ນໄປທາງເມືອງຫຼົ່ມສັກ ແລະ ໄປຕັ້ງຄ້າຍຢູ່ເມືອງຫຼົ່ມສັກ. ຈາກນັ້ນໃຫ້ດຳເນີນການອົບພະຍົບເອົາ ຄອບຄົວໃນເຂດນັ້ນກັບຄືນມາວຽງຈັນ. ສ່ວນເຈົ້າສຸດທິສານໃຫ້ໄປຕັ້ງໝັ້ນຢູ່ເມືອງພູຂຽວ. ເຈົ້າອະນຸວົງ ເອງ ພ້ອມດ້ວຍນາຍທະຫານ ໄດ້ນຳພາທັບຫຼວງຈາກໂຄຣາດມາຕັ້ງຢູ່ເມືອງໜອງບົວລຳພູ ແລ້ວໃຫ້ ພະຍານະລິນ ພ້ອມດ້ວຍທະຫານ 3000 ຄົນເປັນຜູ້ຮັກສາຄ້າຍ. ສ່ວນພະອົງໄດ້ນຳພາກຳລັງໄປ ຕັ້ງຄ້າຍຢູ່ຮ່ອມພູເຂົ້າສານ ໂດຍມີພະຍາສຸໂພ ແລະ ຊານົນຄຸມທະຫານ 20.000 ຄົນປະຈຳການ. ມາຮອດວັນທີ 1 ພຶດສະພາ ປີ ຄສ 1827 ບັ້ນຮົບໜອງບົວລຳພູໄດ້ຖືກກອງທະຫານສັກດິນາສະຫຍາມ ຮ່ວມກັບກອງທັບມອນ 30.000 ຄົນທີ່ມີອາວຸດປືນຄົບມື ທຳການປິດລ້ອມ ແລະ ບຸກໂຈມຕີເປັນເວລາ 6 ວັນ ມາຮອດວັນທີ 7 ພຶດສະພາ ບັ້ນຮົບໜອງບົວລຳພູ ໄດ້ຖືກກອງທັບສັກດິນາສະຫຍາມ. ພະຍານາ ລິນພ້ອມດ້ວຍທະຫານລາວລ້ານຊ້າງ ໄດ້ທຳການຕໍ່ສູ້ຕ້ານຄືນຢ່າງອົງອາດກ້າຫານ ແຕ່ຍ້ອນກອງ ທັບສະຫຍາມທີ່ມີກຳລັງພົນຫຼວງຫຼາຍ ແລະ ອາວຸດທັນສະໄໝກວ່າ ແມ່ທັບລາວລ້ານຊ້າງຫຼາຍຄົນ ໄດ້ເສຍສະຫຼະຊີວິດຢ່າງວິລະຊົນ ເຊັ່ນ: ພະຍານະລິນ ແມ່ທັບລ້ານຊ້າງທີ່ບັນຊາການຮົບທີ່ໜອງບົວ ລຳພູ ໄດ້ສູ້ຮົບຈົນເຖິງວິນາທີສຸດທ້າຍ ແລະ ຖືກກອງທັບສະຫຍາມຈັບໄດ້ແລ້ວຖືກບັງຄັບໃຫ້ຍອມ

ຈຳນົນ ແຕ່ດ້ວຍຈິດໃຈຮັກຊາດບໍ່ຍອມຈຳນົນຈຶ່ງຖືກສັກດີນາມຳ ໄປລົງໂທດປະຫານຊີວິດ ດ້ວຍການເອົາຊ້າງແທງແລ້ວຕັດອອກເປັນ 4 ຕ່ອນກ່ອນຈະເສຍຊີວິດ[41] .

ບັ້ນຮົບທົ່ງສົ້ມປ່ອຍ ແລະ ພູເຂົ້າສານ: ຫຼັງຈາກທີ່ເສຍບັ້ນຮົບໜອງບົວລຳພູໃຫ້ສັກດີນາສະຫຍາມແລ້ວ ກອງທັບລາວກໍໄດ້ຖອຍມາເຕົ້າໂຮມກັນຢູ່ທີ່ຄ້າຍທົ່ງສົ້ມປ່ອຍ ແລະ ພູເຂົ້າສານ. ບັ້ນຮົບທົ່ງສົ້ມປ່ອຍ ແລະ ພູເຂົ້າສານຖືວ່າ ເປັນສະໜາມຮົບໃນການຕັດສິນສົງຄາມ ປີ ຄສ 1827 ກໍວ່າໄດ້ ເພາະວ່າ ສອງຄ້າຍນີ້ ຖືກຈັດຕັ້ງໃຫ້ເປັນດ່ານຮົບສຸດທ້າຍ ໃນການປ້ອງກັນບໍ່ໃຫ້ສັດຕູເຂົ້າມາສູ່ເມືອງວຽງຈັນໄດ້. ພາຍຫຼັງທີ່ກອງທັບສະຫຍາມທຳລາຍບັ້ນຮົບໜອງບົວລຳພູແລ້ວ ພວກເຂົາກໍໄດ້ເຄື່ອນທັບມາບຸກໂຈມຕີກອງທະຫານລາວລ້ານຊ້າງທີ່ທົ່ງສົ້ມປ່ອຍ ແລະ ພູເຂົ້າສານ. ກອງທັບລາວໄດ້ທຳການຕໍ່ຕ້ານຄືນຢ່າງອົງອາດກ້າຫານ ແລະ ທຳການປິດລ້ອມກອງທັບສະຫຍາມ ເປັນເວລາຫຼາຍວັນເກືອບຈະໄດ້ຮັບໄຊຊະນະຢູ່ແລ້ວ. ແຕ່ເນື່ອງຈາກວ່າກອງທະຫານສັກດີນາສະຫຍາມ ມີກຳລັງພົນຫຼາຍພ້ອມດ້ວຍອາວຸດປືນທີ່ທັນສະໄໝກວ່າ ຈຶ່ງເຮັດໃຫ້ກອງທັບລາວລ້ານຊ້າງໃນທົ່ງສົ້ມປ່ອຍ ແລະ ພູເຂົ້າສານ ຖືກປະລາໄຊ. ຫຼັງຈາກນັ້ນ 5 ວັນຕໍ່ມາກອງທັບສະຫຍາມ ກໍເຂົ້າຍຶດຕົວເມືອງວຽງຈັນໄດ້ສຳເລັດ.

ສ່ວນກອງທະຫານລາວລ້ານຊ້າງ ທີ່ຖອຍທັບໄປທາງສະຫົນນະຄອນ ກໍໄດ້ທຳການປັບປຸງກຳລັງ ແລະ ຕໍ່ສູ້ກັບສະຫຍາມໃນເຂດບ້ານເພັນ, ຫ້ວຍຫວາ ແລະ ໃນທີ່ສຸດກໍຖືກສັກດີນາສະຫຍາມຈັບໄດ້ ແລ້ວນຳເອົາໄປທໍລະມານປະຫານຊີວິດຢູ່ທີ່ໜອງຊາຍຂາວ.

3) ການບຸກຍຶດວຽງຈັນ

ຫຼັງຈາກທີ່ຄ້າຍພູເຂົ້າສານຖືກຕີແຕກແລ້ວ ເຈົ້າອະນຸວົງໄດ້ຊັ່ງຊາກຳລັງ ແລະ ອາວຸດ ເຫັນວ່າຈະຕ້ານທານກອງທັບສະຫຍາມບໍ່ໄດ້,ເຈົ້າອະນຸວົງຈຶ່ງໄດ້ພາຄອບຄົວໜີໄປຢູ່ຫວຽດນາມ (ເມືອງວິນ) ເພື່ອປັບປຸງກຳລັງແລ້ວກັບມາຕໍ່ສູ້ອີກຄັ້ງໃໝ່. ສ່ວນກອງທັບສະຫຍາມ ຫຼັງຈາກທີ່ສຳເລັດໃນການຍຶດຄ້າຍທະຫານລາວໄດ້ທີ່ທົ່ງສົ້ມປ່ອຍ ແລະ ພູເຂົ້າສານ ໃນວັນທີ 25 ພຶດສະພາ 1827 ແລ້ວ ອີກ 5 ວັນຕໍ່ມາກອງທັບສະຫຍາມ ກໍເດີນທາງເຂົ້າຍຶດຕົວເມືອງວຽງຈັນໄດ້ສຳເລັດໃນວັນທີ 30 ພຶດສະພາ ຄສ 1827.

ພາຍຫຼັງທີ່ບຸກຍຶດເອົານະຄອນວຽງຈັນໄດ້ແລ້ວພວກເຂົາກໍດຳເນີນການປຸ້ນສະດົມ ຍຶດເອົາເງິນ, ຄຳ, ຊັບສົມບັດ, ພະພຸດທະຮູບອົງສຳຄັນ ເຊັ່ນ: ພະສຸກ, ພະໃສ, ພະເສີມ, ພະແຊກຄຳ, ພະແກ່ນຈັນ, ພະເງິນຫຼໍ່, ພະເງິນບຸ, ພະສັນສົ້ມ, ພະນາກສະຫວາດ, ພະສົ່ງນ້ຳ, ພະນາກປົກສິລາ, ຕັດຕົ້ນໄມ້ກິນໝາກ, ທຳລາຍກຳແພງເມືອງວຽງຈັນ. ຈາກນັ້ນ, ພວກເຂົາກໍທຳການຈັບກຸມກວາດຕ້ອນຊາວວຽງຈັນໄປບາງກອກ ແລະ ກ່ອນຈາກໄປພວກເຂົາກໍທຳການຈູດເຜົາຕົວເມືອງ ວຽງຈັນຈົນຮາບກ້ຽງ.


ຄ. ການສືບຕໍ່ ຕໍ່ສູ້ຕ້ານສັກດີນາສະຫຍາມຄັ້ງທີສອງຂອງເຈົ້າອະນຸວົງ

ພາຍຫຼັງທີ່ໄປຕັ້ງທັບຢູ່ອານາມ ເພື່ອປັບປຸງກຳລັງຄືນໃໝ່ ພະເຈົ້າອະນຸວົງ ແລະ ເຈົ້າລາຊະວົງ ພ້ອມດ້ວຍນາຍທະຫານຈຳນວນໜຶ່ງ ໄດ້ນຳພາປະຊາຊົນສ້າງເຂດທີ່ໝັ້ນຂຶ້ນ ໃນເຂດມະຫາໄຊກອງແກ້ວ. ມາ ໃນປີ ຄສ 1828 ພະວົງ ແລະ ເຈົ້າລາຊະວົງ ກໍໄດ້ນຳກຳລັງ ກັບຄືນມາວຽງຈັນ ເພື່ອສົມທົບກັບນາຍທະຫານລ້ານຊ້າງທີ່ຄອຍດັກສະກັດລັດຕໍ່ສູ້ກັບສະຫຍາມ ແລະ ທຳການຍຶດເອົາຕົວເມືອງວຽງຈັນ ຄືນໃນເດືອນ 8 ແຮມ 7 ຄ່ຳໄດ້ສຳເລັດ.


ຈາກນັ້ນ, ພະວົງກໍໄດ້ປຶກສາຫາລື ກັບແມ່ທັບນາຍກອງວາງແຜນການ ແລະ ຈັດຕັ້ງກຳລັງຂັບໄລ່ພວກສັກດີນາສະຫຍາມອອກຈາກເຜິ່ນແຜ່ນດິນອານາຈັກລາວລ້ານຊ້າງອີກເທື່ອໃໝ່. ແຕ່ວ່າການ

[41] ຄັດຈາກບົດບັນທຶກຂອງສະຫຍາມ ວັນທີ 16 ມີຖຸນາ 1827 ອ້າງໃນ ມະຍຸລີ ແລະ ເພັຍພັນ ເພງົ້າສີວັດທະນາ. ເຈົ້າອະນຸວົງ 1767-1829 ປະຊາຊົນລາວ ແລະ ອາຊີອາຄະເນ. ວຽງຈັນ 2010 : 113

ຕໍ່ສູ້ຄັ້ງນີ້ ກໍ່ບໍ່ສາມາດດຳເນີນຕາມແຜນການໄດ້ສຳເລັດ ເນື່ອງຈາກຂາດກຳລັງຄົນ ແລະ ອາວຸດ. ເມື່ອ ພິຈາ ລະນາເຫັນວ່າ ການເຮັດສົງຄາມແບບປະເຊີນໜ້າກັບສະຫຍາມ ແມ່ນຕົກຢູ່ໃນທ່າຖືກເສຍປຽບ ຫຼາຍ. ສະນັ້ນ, ເຈົ້າອະນຸວົງຈຶ່ງທຳການຕໍ່ສູ້ແບບບ້ານຮ້າງເຮືອນເປົ່າ ຄື: ໄດ້ສັ່ງ ໃຫ້ທຳການຊຸກເຊື່ອງ ເຄື່ອງຂອງທີ່ມີຄ່າ ແລ້ວຕັດສິນໃຈໜີອອກຈາກຕົວເມືອງວຽງຈັນອີກຄັ້ງໃໝ່, ແຕ່ພະວົງ ພ້ອມດ້ວຍ ຄອບຄົວ ໄດ້ຖືກກອງທັບສັກດິນາສະຫຍາມນຳຈັບຕົວໄດ້ ຢູ່ແດນເມືອງພວນ. ຈາກນັ້ນ, ພະວົງ ພ້ອມ ຄອບຄົວໄດ້ຖືກ ຄຸມຕົວລົງໄປກຸງເທບ ແລະ ພະວົງໄດ້ຖືກທໍລະມານຈົນສິ້ນພະຊົນ ໃນປີ ຄສ 1829. ໃນຂະນະດຽວກັນ ຕົວເມືອງວຽງຈັນ ທີ່ເປັນສູນກາງຂອງອານາຈັກລ້ານຊ້າງ ທີ່ເຕັມໄປດ້ວຍອາຄານ ທີ່ງົດງາມ ແລະ ອຸດົມສົມບູນໄປດ້ວຍພຶດພັນທັນຍາຫານ ກໍ່ຖືກຈູດເຜົາລົງຢ່າງຮາບກ້ຽງ.



ຮູບທີ 14 : ຫໍພະແກ້ວ



ຮູບທີ 15 : ວັດກາງ (ໂຮງແຮມລ້ານຊ້າງ)

ທີ່ສັກດິນາສະຫຍາມ ລາຊະການທີ 3 ທຳລາຍ ໃນປີ ຄສ 1828[42]

ງ. ສາເຫດການປະລາໄຊຂອງຂະບວນການຕໍ່ສູ້ກູ້ຊາດ

ຂະບວນການຕໍ່ສູ້ ໃຕ້ການນຳພາຂອງເຈົ້າອະນຸວົງ ທີ່ເປັນຂະບວນການໃຫຍ່, ມີລັກສະນະ ກ້ວາງຂວາງເຕົ້າໂຮມເອົາໝົດທຸກພາກສ່ວນ ແລະ ມີການວາງແຜນການຕໍ່ສູ້ຢ່າງລະອຽດ ແຕ່ກໍ່ບໍ່ ສາມາດເອົາຊະນະກອງທັບສະຫຍາມໄດ້ນັ້ນແມ່ນມາຈາກຫຼາຍສາເຫດດັ່ງນີ້:

1) ກຳລັງ

ຝ່າຍສະຫຍາມ ມີກຳລັງທະຫານທີ່ຫຼາຍກວ່າ ຊຶ່ງກອງທະຫານນັ້ນ ນອກຈາກກອງທະຫານ ສະຫຍາມແລ້ວ ຍັງປະກອບມີ ກອງທະຫານຮັບຈ້າງຕ່າງຊາດປະກອບອີກ ເຊັ່ນ: ອັງກິດ, ຂະແມ, ມອນ. ສ່ວນຝ່າຍ ລາວລ້ານຊ້າງນັ້ນມີກຳລັງໜ້ອຍ.

2) ອາວຸດ

ຝ່າຍສະຫຍາມ ມີອາວຸດຫຼາຍ ແລະ ທັນສະໄໝກວ່າ ໂດຍຜ່ານການຊື້ມາຈາກພໍ່ຄ້າ ຊາວ ຕາເວັນຕົກ, ບໍ່ວ່າຈະເປັນປືນໃຫຍ່ ແລະ ປືນນ້ອຍ ປະກອບກັບທະຫານກໍ່ມີຄວາມສາມາດ, ໃນການ ນຳໃຊ້ ອາວຸດເປັນຢ່າງດີ ເພາະມີການຝຶກແອບມາແຕ່ດົນນານແລ້ວ. ສ່ວນອາວຸດຂອງຝ່າຍ ລາວນັ້ນ ສ່ວນຫຼາຍເປັນອາວຸດແບບພື້ນເມືອງ ເຖິງວ່າມີປືນແຕ່ກໍ່ມີໜ້ອຍ ແລະ ຈຳກັດອີກດ້ວຍ.

[42] ທີ່ສັກດິນາສະຫຍາມ ລາຊະການທີ 3 ທຳລາຍ ໃນປີ ຄສ 1828

3) ການຕີລາຄາສະພາບການບໍ່ທັນລະອຽດ

ໂດຍພາບລວມແລ້ວ ເຖິງແມ່ນວ່າ ເຈົ້າອະນຸວົງໄດ້ມີການກະກຽມແຜນການໄວ້ຂ້ອນຂ້າງຈະມີຄວາມຊັດເຈນພໍສົມຄວນ, ໃນການຊັ່ງຊາສະພາບການວ່າ ມີຜົນດີຕໍ່ກັບການກູ້ຊາດໃນຄັ້ງນີ້. ແຕ່ວ່າ ພະອົງ ກໍຍັງບໍ່ທັນກຳນົດໄດ້ໝົດເທື່ອ ບັນດາຂໍ້ສະດວກຂອງສັກດິນາສະຫຍາມ ພວກເຮົາສ່ວນໃຫຍ່ເຫັນແຕ່ດ້ານອ່ອນຂອງສັກດິນາສະຫຍາມ ແລະ ເຫັນແຕ່ດ້ານແຂງຂອງຕົນເອງຈົນເກີນໄປ ຈຶ່ງຕີລາຄາວ່າ ສະພາບແວດລ້ອມອຳນວຍຄວາມສະດວກໃຫ້ແລ້ວ.

4) ຄວາມເປັນເອກະພາບພາຍໃນ

ຄວາມສາມັກຄີພາຍໃນເປັນປັດໄຈສຳຄັນ ໃນພາລະກິດແຫ່ງການຕໍ່ສູ້ກູ້ຊາດ ແຕ່ໃນຂະບວນການຕໍ່ສູ້ຕ້ານສັກດິນາສະຫຍາມ ເບິ່ງໂດຍພາບລວມແລ້ວຄືວ່າມີຄວາມສາມັກຄີກັນດີ. ແຕ່ຄວາມສາມັກຄີ ດັ່ງກ່າວນັ້ນ ຍັງບໍ່ທັນແໜ້ນແກ່ນ ໂດຍສະເພາະສັກດິນາຫຼວງພະບາງເຖິງວ່າຈະຮ່ວມມືກັບເຈົ້າອະນຸວົງແຫ່ງວຽງຈັນ ແຕ່ກໍບໍ່ທັນສຸດກຳສຸດປາຍ ເພາະຍັງມີຄວາມລະແວງ. ດັ່ງນັ້ນ, ເມື່ອເຫັນທ່າວ່າ ເຈົ້າອະນຸວົງ ຈະປະລາໄຊແລ້ວ ເຈົ້າມັນຫາຕຸລາດແຫ່ງຫຼວງພະບາງ ກໍເອົາໃຈອອກຫ່າງ ບໍ່ຍອມໃຫ້ການຮ່ວມມືກັບ ເຈົ້າອະນຸວົງໃນການຕໍ່ສູ້ກັບສະຫຍາມ.

ຈ. ຄວາມພາຍປະຫວັດສາດຂອງຂະບວນການຕໍ່ສູ້ກູ້ຊາດ

ເຖິງແມ່ນວ່າ ຂະບວນການຕໍ່ສູ້ຂອງປະຊາຊົນລາວຕ້ານສັກດິນາສະຫຍາມ ໃຕ້ການນຳພາຂອງພະເຈົ້າອະນຸວົງ ຈະບໍ່ປະສົບຜົນສຳເລັດກໍຕາມ. ແຕ່ມັນກໍໄດ້ກາຍເປັນແວ່ນແຍງ ແລະ ເປັນບົດຮຽນອັນປະເສີດໃຫ້ແກ່ຄົນລາວໃນໄລຍະຕໍ່ມາ ໃຫ້ເຫັນໄດ້ກ່ຽວກັບມູນເຊື້ອຕໍ່ສູ້ອັນອົງອາດກ້າຫານ ບໍ່ຍອມຈຳນົນຕໍ່ສັດຕູຂອງບັນພະບຸລຸດ ທີ່ໄດ້ຮ່ວມກັນສ້າງວິລະກຳອັນລ້ຳເລີດ ໃນການຕໍ່ຕ້ານກັບສັກດິນາສະຫຍາມ ເພື່ອຄວາມເປັນອິດສະຫຼະພາບ ແລະ ຄວາມເປັນເອກະລາດ ຂອງຊາດ.

ບົດຮຽນການຕໍ່ສູ້ຕ້ານສັກດິນາສະຫຍາມ ໄດ້ເຮັດໃຫ້ຄົນລາວ-ຊາວລາວມີຄວາມຄຽດແຄ້ນຕໍ່ສັກດິນາສະຫຍາມຢ່າງເຂັ້ມຂຸ້ນ ແລະ ເພີ່ມທະວີ. ປະຊາຊົນລາວໄດ້ຈົດຈຳບົ່ໃຈຮັກຊາດ ແລະ ວິລະກຳແຫ່ງການຕໍ່ສູ້ໃນສະໄໝພະເຈົ້າອະນຸວົງໄວ້ຢ່າງບໍ່ມີວັນລືມຈົນມາຮອດປັດຈຸບັນ. ບົດຮຽນການຕໍ່ສູ້ຂອງພະເຈົ້າອະນຸວົງໄດ້ກາຍເປັນ ແບບຢ່າງແຫ່ງນ້ຳໃຈຮັກຊາດອັນດີງາມ ເຖິງແມ່ນວ່າເພິ່ນຈະຖືກບັງຄັບໃຫ້ໄປສະຫຍາມແຕ່ຄາວຍັງນ້ອຍ ແລະ ຖືກສັ່ງສອນໃຫ້ເປັນຄົນລືມຊາດກໍຕາມ ແຕ່ເພິ່ນກັບກາຍເປັນບຸກຄົນທີ່ມີຄວາມຮັກຊາດຢ່າງດູດດື່ມ; ເພິ່ນໄດ້ນຳພາປະຊາຊົນຕໍ່ສູ້ຢ່າງບໍ່ຮູ້ອິດຮູ້ເມື່ອຍຈົນສາມາດທ້ອນໂຮມ ແຜ່ນດິນລາວອັນກວ້າງໃຫຍ່ໄພສານ ໃຫ້ເປັນເອກະພາບເຊິ່ງລວມມີຫົວເມືອງລາວທັງໝົດ 165 ຫົວເມືອງ[43].

ຄຽງຂ້າງກັບວິລະກຳຂອງເຈົ້າອະນຸວົງ ກໍຍັງມີບັນດາແມ່ທັບນາຍກອງອີກຫຼາຍທ່ານ ທີ່ສ້າງວິລະກຳອັນລ້ຳເລີດໃນສົງຄາມຕໍ່ສູ້ກູ້ຊາດ ຕ້ານສັກດິນາສະຫຍາມຜູ້ຮຸກຮານ ແລະ ຄອບຄອງ ເຊັ່ນ: ເຈົ້າສຸດທິສານ, ເຈົ້າຣາຊະວົງ, ເຈົ້າຣາຊະບຸດ, ພະຍານະລິນເຈົ້າເມືອງສີ່ມຸມ, ພະຍາໄກສົງຄາມ, ເຈົ້າເມືອງຂຸຂັນ ແລະ ອື່ນໆ ຕະຫຼອດຮອດທະຫານ ແລະ ປະຊາຊົນລາວອີກເປັນຈຳນວນຫຼວງຫຼາຍທີ່ໄດ້ປະກອບ ສ່ວນຢ່າງອົງອາດກ້າຫານກາຍ ເປັນແບບຢ່າງອັນດີງາມໃຫ້ແກ່ລູກຫຼານລາວໃນຍຸກຕໍ່ມາໄດ້ຮຳຮຽນເອົາ.

ສົງຄາມທີ່ເກີດຂຶ້ນໃນສະໄໝການປົກຄອງຂອງພະເຈົ້າອະນຸວົງໃນຄັ້ງນີ້ ເປັນສົງຄາມຕໍ່ສູ້ເພື່ອຄວາມເປັນເອກະລາດແຫ່ງຊາດ ແລະ ເປັນສົງຄາມທີ່ເປັນທຳ ເພາະມັນແມ່ນສົງຄາມຕ້ານພວກ ສັ

[43] ອ້າງໃນ ສຸເນດ ໂພທິສານ. ປະຫວັດສາດລາວດຶກດຳບັນ-ປັດຈຸບັນ. 2000 : 445

ກດິນາສະຫຍາມຜູ້ຮຸກຮານທີ່ກົດຂີ່ຂູດຮີດ. ຂະບວນການຕໍ່ສູ້ໃນຄັ້ງນີ້ ເຖິງວ່າຈະປະລາໄຊ ແລະ ຜູ້ນຳ ຈະຖືກສັກດິນາສະຫຍາມຈັບໄດ້ ແລະ ນຳໄປທໍລະມານຢ່າງໂຫດຮ້າຍ ເພື່ອຫວັງດັບມອດຈິດໃຈ ຮັກຊາດຂອງຄົນລາວໃຫ້ໝົດໄປ ແຕ່ພວກເພິ່ນກໍບໍ່ຍອມຈຳນົນ. ຈຳນວນໜຶ່ງກໍຊອກຫາວິທີ ເພື່ອຫຼົບໜີ ແລ້ວທ້ອນກຳລັງກັບມາຕໍ່ສູ້ອີກຄັ້ງໃໝ່.

ເວົ້າລວມແລ້ວ ຂະບວນການຕໍ່ສູ້ ຂອງປະຊາຊົນລາວຕ້ານສັກດິນາສະຫຍາມຜູ້ຄອບຄອງ ເຖິງວ່າບໍ່ໄດ້ຮັບໄຊຊະນະກໍຕາມ ແຕ່ມັນກໍໄດ້ມີຄວາມໝາຍອັນໃຫຍ່ຫຼວງ ໃນປະຫວັດສາດການຕໍ່ສູ້ ຂອງຊາດລາວ ເຮັດໃຫ້ຄົນລາວໃນຍຸກຕໍ່ມາໄດ້ສຶກສາຮ່ຳຮຽນເອົາເປັນແບບຢ່າງ ແລະ ນຳມາປະຕິບັດ.

1.2.7 ການຈັດການປົກຄອງລາວຂອງສັກດິນາສະຫຍາມ ຄສ 1829-1893

ອານາຈັກລາວລ້ານຊ້າງແຕ່ ປີ ຄສ 1829-1893 ໃນຊ່ວງທີ່ອານາຈັກລາວລ້ານຊ້າງປ່ຽນ ສະຖານະພາບຈາກເມືອງສະຖາດມາ ເປັນເມືອງຂຶ້ນຂອງສັກດິນາສະຫຍາມໂດຍກົງ ແລະ ກໍເປັນຊ່ວງ ທີ່ອານາຈັກລາວລ້ານຊ້າງຖືກທຳລາຍຢ່າງໜັກໜ່ວງຈາກການກະທຳຂອງສັກດິນາສະຫຍາມ ຊຶ່ງຄົນ ລາວໃນຍຸກປັດຈຸບັນບໍ່ສາມາດລືມ ແລະ ອະໄພໃຫ້ໄດ້. ຮູບແບບການປົກຄອງທີ່ສັກດິນາສະຫຍາມ ຈັດການປົກຄອງ ໃນດິນແດນລາວ ຊ່ວງນີ້ສາມາດແຍກອອກເປັນໄລຍະດັ່ງນີ້ :

1.2.7.1 ການຈັດການປົກຄອງແບບເມືອງຂຶ້ນໄລຍະທີໜຶ່ງ

ການຈັດການປົກຄອງແບບເມືອງຂຶ້ນໄລຍະທີໜຶ່ງ ເລີ່ມແຕ່ ປີ ຄສ 1829 -1889 ຫຼັງຈາກ ທີ່ສັກດິນາສະຫຍາມສຳເລັດໃນການປາບປາມຂະບວນການກູ້ຊາດຂອງປະຊາຊົນລາວ ໂດຍສະເພາະ ຂະບວນການຕໍ່ສູ້ໃຕ້ການນຳພາຂອງເຈົ້າອະນຸວົງ, ສັກດິນາສະຫຍາມ ກໍໄດ້ດຳເນີນການຈັດການປົກ ຄອງລາວຄືນໃໝ່ ໂດຍແນໃສ່ເຮັດໃຫ້ລາວລ້ານຊ້າງ ກາຍເປັນຫົວເມືອງຂຶ້ນໂດຍກົງຄື:

- ລົບລ້າງກົງຈັກການປົກຄອງເກົ່າ ແລ້ວສ້າງຕັ້ງກົງຈັກການປົກຄອງໃໝ່ ຂອງພວກເຂົາຂຶ້ນ ແທນແບບຣັດກຸມ.
- ສືບຕໍ່ດຳເນີນການຜັນແຍກລາວລ້ານຊ້າງ ອອກເປັນພາກສ່ວນ ຄື: ເຮັດໃຫ້ວຽງຈັນກາຍເປັນ ເມືອງຮ້າງ, ບັງຄັບໃຫ້ຫົວເມືອງທີ່ຂຶ້ນກັບວຽງຈັນ ໃຫ້ຂຶ້ນກັບບາງກອກໂດຍກົງ ແລະໃນຂະນະດຽວກັນ ກໍຫຼຸດຖານະເມືອງຫຼວງພະບາງລົງຈາກເມືອງສ່ວຍ ໃຫ້ມາເປັນເມືອງຂຶ້ນໂດຍກົງ.
- ດຳເນີນການປາບປາມ, ຈັບກຸມ, ເກັບເກນ ແລະ ກວາດຕ້ອນເອົາຄົນລາວໄປໄວ້ທີ່ບາງກອກ.

ເພື່ອປະຕິບັດນະໂຍບາຍຄອບຄອງລາວລ້ານຊ້າງໂດຍກົງ ແລະ ຕະຫຼອດການນັ້ນ ສັກດິນາສະຫຍາມ ໄດ້ຈັດການປົກຄອງອານາຈັກລາວລ້ານຊ້າງຢ່າງຮັດກຸມ ດ້ວຍການແບ່ງອານາຈັກ ລາວລ້ານຊ້າງອອກເປັນ 3 ເຂດປົກຄອງ ຄື:

- ຫົວເມືອງລາວເຂດຕາເວັນອອກສ່ຽງເໜືອ ມີສູນກາງຢູ່ໜອງຄາຍ[44]
- ຫົວເມືອງລາວທາງພາກຕາເວັນອອກ ມີສູນກາງຢູ່ຈຳປາສັກ[45]
- ຫົວເມືອງລາວຝ່າຍເໜືອ ມີສູນກາງຢູ່ຫຼວງພະບາງ[46] ຊຶ່ງໃນແຕ່ລະເຂດນັ້ນ ຈະມີຂ້າຫຼວງ ສະຫຍາມ ປະຈຳຢູ່ ແລະ ປົກຄອງໂດຍກົງ.

1.2.7.2 ການຈັດການປົກຄອງແບບເມືອງຂຶ້ນໄລຍະທີສອງ

ມາຮອດປີ ຄສ 1890 ສັກດິນາສະຫຍາມໄດ້ດຳເນີນການປັບປຸງກົງຈັກການປົກຄອງໃນລາວ

---

[44] ຫົວເມືອງທີ່ຂຶ້ນກັບມີ: ຊຽງຂວາງ; ບໍລິຄັນ; ໂພນພີໄສ; ນະຄອນພະນົມ; ທ່າອຸເທນ; ໄຊບູຣີ; ສະກົນນະຄອນ; ກະມຸທາໄສ; ນູຣີຣຳ; ໜອງຫານ; ຄຳເກີດ; ຄຳມ່ວນ; ມຸກດາຫານ; ຂອນແກ່ນຫຼົ້ມສົ້ວ ແລະ ໜອງຄາຍ.

[45] ຫົວເມືອງທີ່ຂຶ້ນກັບມີ: ຊຽງແຕງ; ຄຳທອງໃຫ່ຍ; ແສນປາງ; ສີທັນດອນ; ສາລະວັນ; ອັດຕະປື; ສຸລິນ; ສັງຂະ; ສຸຂັນ; ເດດ ອຸດົມ; ສີສະເກດ; ອຸບົນ; ຍະໂສທອນ; ເຂັ້ມມະລາດ; ກະມາລາໄສ; ກາລະສິນ; ພູແດນຊ້າງ; ສຸວັນນະພູມ; ເຮືອຍເຮັດ ແລະ ມະຫາສາລະຄາມ.

[46] ຫົວເມືອງທີ່ຂຶ້ນກັບມີ: ຫຼວງພະບາງ; ສິບສອງປັນນາ; ສິບສອງຈຸໄທ ແລະ ຫົວພັນທ້າວຫົ້ວ

ຄືນໃໝ່ (ຍົກເວັ້ນແຕ່ຫຼວງພະບາງເພາະໄດ້ປັບປຸງ ໃນປີ ຄສ 1889) ດ້ວຍການໂຮມເອົາຫົວເມືອງລາວ ຕ່າງໆເຂົ້າກັນແລ້ວ ແບ່ງອອກເປັນ 4 ກອງໃຫ່ຍ ໂດຍມີຂ້າຫຼວງສະຫຍາມປະຈຳຢູ່ແຕ່ລະສູນກາງ ຄື:

- ຫົວເມືອງຝ່າຍຕາເວັນອອກມີ 37 ຫົວເມືອງ ເຊິ່ງປະກອບມີຫົວເມືອງເອກ 11 ຫົວ ເມືອງ ແລະ ຫົວເມືອງໂທ, ຕີ ແລະ ຈັດຕະວາ ທີ່ຂຶ້ນກັບອີກ 26 ຫົວເມືອງ ໂດຍມີເມືອງຈຳປາສັກເປັນ ສູນກາງ.
- ຫົວເມືອງຝ່າຍຕາເວັນອອກສ່ຽງເໜືອມີ 41 ຫົວເມືອງເຊິ່ງປະກອບມີຫົວເມືອງເອກ 12 ຫົວເມືອງ ແລະຫົວເມືອງໂທ, ຕີ, ຈັດຕະວາທີ່ຂຶ້ນກັບອີກ29ຫົວເມືອງ ໂດຍມີສູນກາງຢູ່ອຸບົນລາຊະທານີ.
- ຫົວເມືອງຝ່າຍເໜືອ ມີ 52 ຫົວເມືອງ ເຊິ່ງປະກອບມີຫົວເມືອງເອກ 16 ຫົວເມືອງ ແລະ ຫົວເມືອງໂທ, ຕີ, ຈັດຕະວາທີ່ຂຶ້ນກັບອີກ 36 ຫົວເມືອງ ໂດຍມີສູນກາງຢູ່ໜອງຄາຍ.
- ຫົວເມືອງລາວຝ່າຍກາງມີ 14 ຫົວເມືອງ ເຊິ່ງປະກອບມີຫົວເມືອງເອກ 3 ຫົວເມືອງ ແລະ ຫົວເມືອງໂທ, ຕີ, ຈັດຕະວາທີ່ຂຶ້ນກັບອີກ 12 ຫົວເມືອງ ໂດຍສູນກາງຢູ່ນະຄອນຣາຊະສີມາ.

1.2.7.3 ການຈັດການປົກຄອງແບບເມືອງຂຶ້ນໄລຍະທີສາມ

ຫຼັງຈາກທີ່ສັກດິນາສະຫຍາມສຳເລັດໃນການປັບປຸງອຳນາດການປົກຄອງ ໃນປີ ຄສ 1890 ມາບໍ່ຮອດປີ ສະຖານະການໃນຫົວເມືອງລາວຕ່າງໆ ທີ່ສະຫຍາມປົກຄອງໄດ້ມີການປ່ຽນແປງ ໂດຍ ສະເພາະ ແມ່ນໄດ້ມີຂະບວນການຕໍ່ຕ້ານສັກດິນາສະຫຍາມ ໃນການກວາດຕ້ອນຄົນລາວ. ປະຊາຊົນ ຄົນລາວ ໄດ້ສວຍໃຊ້ສະພາບການທີ່ສັບສົນ ແລະ ເຕັ່ງຕຶງລະຫວ່າງສະຫຍາມກັບຝຣັ່ງ, ເພື່ອປຸກລະ ດົມຈິດໃຈ ຮັກຊາດ, ເພື່ອກະກຽມຍາດເອົາເອກະລາດແຫ່ງຊາດ. ການປ່ຽນແປງໃນຫົວເມືອງດັ່ງກ່າວນີ້ ແມ່ນມີຜົນດີໃຫ້ແກ່ຝຣັ່ງ ທີ່ກຳລັງຂະຫຍາຍອຳນາດເຂົ້າມາໃນແຫຼມອິນດູຈີນ.

ດັ່ງນັ້ນ, ມາ ໃນປີ ຄສ 1891 ອັງກິດໄດ້ສະເໜີໃຫ້ສັກດິນາສະຫຍາມຕ້ອງເຮັ່ງຮີບປັບປຸງ ການປົກ ຄອງໃນຫົວເມືອງລາວຄືນໃໝ່ໃຫ້ເຄັ່ງຄັດກວ່າເກົ່າອີກ. ການຈັດການປົກຄອງຄັ້ງນີ້ ເຈົ້າຊີວິດ ສະຫຍາມ ໄດ້ຄັດເລືອກເອົາບຸກຄົນທີ່ໄວ້ເນື້ອເຊື່ອໃຈທີ່ສຸດ ໄປປົກຄອງ ແລະ ທຳການແບ່ງຫົວເມືອງ ລາວ ອອກເປັນ 4 ເຂດໃຫ່ຍຄື :

1) ຫົວເມືອງລາວກາວ

ແມ່ນເຕົ້າໂຮມເອົາຫົວເມືອງລາວຝ່າຍຕາເວັນອອກ ແລະ ຕາເວັນອອກສ່ຽງເໜືອ ທີ່ແບ່ງໄວ້ ໃນປີ ຄສ 1890 ມາຮວມເຂົ້າກັນເອີ້ນວ່າ ຫົວເມືອງລາວກາວປະກອບມີ 78 ຫົວເມືອງ ເຊິ່ງໃນນັ້ນ ມີເມືອງເອກ 33 ຫົວເມືອງ ແລະ ຫົວເມືອງຂຶ້ນກັບເມືອງເອກແຕ່ລະເມືອງອີກ 55 ຫົວເມືອງ ໂດຍມີ ສຳນັກລາຊະ ການຢູ່ອຸບົນລາຊະທານີ.

2) ຫົວເມືອງລາວພວນ

ເປັນຫົວເມືອງ ທີ່ປ່ຽນຊື່ມາຈາກຫົວເມືອງລາວຝ່າຍເໜືອ ທີ່ກຳນົດໄວ້ ໃນປີ ຄສ 1890 ມາ ເປັນຫົວເມືອງລາວພວນ ປະກອບມີ 52 ຫົວເມືອງ ເຊິ່ງໃນນັ້ນມີເມືອງເອກ 16 ຫົວເມືອງ ແລະ ຫົວເມືອງ ຂຶ້ນກັບເມືອງເອກແຕ່ລະເມືອງອີກ 36 ຫົວເມືອງ ໂດຍມີສຳນັກລາຊະການຢູ່ໜອງຄາຍ.

3) ຫົວເມືອງລາວກາງ

ເປັນຫົວເມືອງ ທີ່ປ່ຽນຊື່ມາຈາກຫົວເມືອງລາວຝ່າຍກາງ ທີ່ກຳນົດໄວ້ ໃນປີ ຄສ 1890 ມາ ເປັນຫົວເມືອງລາວກາງປະກອບມີ 15 ຫົວເມືອງ ຊຶ່ງໃນນັ້ນມີເມືອງເອກ 3 ຫົວເມືອງ ແລະ ຫົວເມືອງ ຂຶ້ນກັບ ເມືອງເອກແຕ່ລະເມືອງອີກ 12 ຫົວເມືອງ ໂດຍມີສຳນັກລາຊະການຢູ່ນະຄອນລາຊະສີມາ.

4) **ຫົວເມືອງລາວພຸງຂາວ**

ເປັນຫົວເມືອງ ທີ່ປ່ຽນຊື່ມາຈາກອານາຈັກລ້ານຊ້າງຮົ່ມຂາວຫຼວງພະບາງ ມາເປັນຫົວເມືອງລາວພຸງຂາວປະກອບມີ4ເມືອງເອກແລະຫົວເມືອງຂຶ້ນກັບອີກ ໂດຍມີສຳນັກລາຊະການຢູ່ຫຼວງພະບາງ.

ນອກຈາກນີ້ ສັກດິນາສະຫຍາມຍັງເອົາລ້ານນາເປັນເມືອງໜຶ່ງ ຄືກັບລ້ານຊ້າງແລ້ວ ເອີ້ນວ່າ: "ລາວພຸງດຳ" ມີສຳນັກງານລາຊະການຢູ່ຊຽງໃໝ່. ພາຍໃຕ້ການປັບປຸງການປົກຄອງລາວຂອງສັກດິນາສະຫຍາມໃນຄັ້ງນີ້ ໄດ້ເຮັດໃຫ້ອຳນາດຂ້າຫຼວງໃຫຍ່ຂອງສະຫຍາມໃນລາວ ທຳການປົກຄອງລາວຢ່າງໂຫດຮ້າຍທີ່ສຸດ ໂດຍສະເພາະພະເຈົ້ານ້ອງຍາເທີ ທັງ 3 ຄົນ ທີ່ເປັນຂ້າຫຼວງໃນສາມຫົວເມືອງ ຄື: ລາວກາວ, ລາວພວນ ແລະ ລາວກາງ ມີສິດເດັດຂາດໃນການຕັດສິນຄົນລາວ ໂດຍບໍ່ຕ້ອງຂໍອະນຸຍາດຈາກບາງກອກອີກ. ນອກຈາກນີ້, ສັກດິນາສະຫຍາມ ຍັງດຳເນີນການເກັບກວາດເອົານາຍຊ່າງ, ນັກສິລະປະກຳ, ເກັບກວ.ດເອົາຕຳນານອັນນະກຳ, ຕຳລາຍາພື້ນເມືອງ, ພື້ນອັນນະຄະດີຕ່າງໆ ແລະ ກຳລັງແຮງງານຂອງລາວໄປສະຫຍາມ.

1.2.7.4 ການກົດຂີ່ຂູດຮີດຂອງສັກດິນາສະຫຍາມຕໍ່ລາວ

ອານາຈັກລາວລ້ານຊ້າງ ພາຍຫຼັງທີ່ສູນເສຍເອກະລາດ ແລະ ຕົກເປັນເມືອງຂຶ້ນໂດຍກົງ ຂອງສັກດິນາສະຫຍາມແລ້ວ ແມ່ນຕົກຢູ່ໃນສະຖານະພາບທີ່ລຳບາກ, ຝືດເຄືອງ ແລະ ຖືກກົດໜ່ວງຖ່ວງດຶງ ໃຫ້ຂະຫຍາຍຕົວຊ້າໃນແຕ່ລະດ້ານ ເຊັ່ນ:

ກ. ການກົດຂີ່ຂູດຮີດດ້ານເສດຖະກິດ

ເປັນນະໂຍບາຍທີ່ສັກດິນາສະຫຍາມປະຕິບັດຕໍ່ປະຊາຊົນລາວ ຊຶ່ງສະແດງອອກ ຢ່າງຊັດເຈນທີ່ສຸດ ສ່ວນຫຼາຍແມ່ນນະໂຍບາຍກ່ຽວກັບບັນນາການ ແລະ ການເສຍສ່ວຍ:

ການເສຍສ່ວຍ:

ການເກັບສ່ວຍຈາກຄົນລາວ ເປັນນະໂຍບາຍຫຼັກຂອງສັກດິນາສະຫຍາມ ທີ່ແນໃສ່ກົດຂີ່ຂູດຮີດຄົນລາວຢ່າງໜັກໜ່ວງ. ຈາກຫຼັກຖານໃນຈົດໝາຍເຫດຂອງສັກດິນາສະຫຍາມ ໄດ້ບອກໄວ້ວ່າ ສິ່ງທີ່ສັກດິນາສະຫຍາມໄດ້ຮັບຜົນປະໂຫຍດຫຼາຍທີ່ສຸດຈາກການປົກຄອງລາວ ແມ່ນການເກັບສ່ວຍ. ລະບົບການເກັບສ່ວຍຈາກຫົວເມືອງລາວນັ້ນ ແມ່ນສັກດິນາສະຫຍາມເປັນຜູ້ກຳນົດໂດຍກົງ ແລະ ກຳພິຈາລະນາຈາກຄວາມອຸດົມສົມບູນ ແລະ ຊັບພະຍາກອນຂອງເມືອງນັ້ນໆ ເປັນຫຼັກເຊັ່ນ:

ການເສຍສ່ວຍຂອງອານາຈັກຈຳປາສັກ: ສັກດິນາສະຫຍາມໄດ້ບັງຄັບໃຫ້ອານາຈັກຈຳ ປາສັກ ຕ້ອງເສຍສ່ວຍ ໃຫ້ສັກດິນາສະຫຍາມ ປີລະ 100 ຊັ່ງ, ຄ່າສ່ວຍຫົວຄົນ: ຊາຍສະກັນ ຄົນລະ 4 ບາດ 1 ສະລຶງ ແລະ ຊາຍຊະລາ ຫຼື ພີການ ຕ້ອງເສຍສ່ວຍ 2 ບາດ 1 ສະລຶງ.ໂດຍທົ່ວໄປແລ້ວ, ສ່ວຍທີ່ສັກດິນາສະຫຍາມກຳນົດເກັບຈາກລ້ານຊ້າງນັ້ນ ມີເຖິງ 10 ຊະນິດ ແລະ ກຳນົດໃຫ້ແຕ່ລະເມືອງເສຍສ່ວຍຢ່າງຕ່ຳ ບໍ່ໜຸດ 5 ຊະນິດ ຕົວຢ່າງ:

ຕາລາງທີ 3: ການເສຍສ່ວຍຂອງຊາວລ້ານຊ້າງໃຫ້ສັກດິນາສະຫຍາມ

ລຳດັບ	ລາຍການສ່ວຍ	ອັດຕາເສຍສ່ວຍຕໍ່ຄົນຕໍ່ປີ	ໝາຍເຫດ
1	ພາສີຫົວຄົນ	4 ບາດ	
2	ຄຳຜົ້ງ	2 ສະລຶງ	
3	ໝາກແໜ່ງ	12 ກິໂລ	
4	ຄັ່ງ	12 ກິໂລ	
5	ປ່ານ	30 ກິໂລ	
6	ຜ້າຂາວ	4.6 ຜືນ	
7	ຂີ້ເຜິ້ງ	2.4 ກິໂລ	
8	ເສັ້ນໄໝ	0.6 ກິໂລ	
9	ງາຊ້າງ	2.4 ກິໂລ	
10	ໄມ້ສັກ	2 ຕົ້ນ	

ໃນຈົດໝາຍເຫດລາຊະການທີ 3 ໄດ້ບອກວ່າສ່ວຍທີ່ສັກດິນາສະຫຍາມ ໄດ້ຈາກອານາ ຈັກ ລາວລ້ານຊ້າງນັ້ນ ປະກອບ ມີ 4 ປະເພດ ຄື :

- ສ່ວຍທີ່ໄດ້ຈາກການເກັບພາສີສິນຄ້າ ແມ່ນເກັບຕາມຂະໜາດຂອງສິນຄ້າຄື: 10%. ລາຍຮັບ ທີ່ໄດ້ຈາກການເກັບສ່ວຍປະເພດນີ້ສັກດິນາສະຫຍາມ ໄດ້ມອບໃຫ້ເຈົ້ານະຄອນຈຳປາສັກ ແລະ ຫົວ ເມືອງຂຶ້ນທັງໝົດຕ້ອງປະຕິບັດຕາມຢ່າງເຂັ້ມງວດ.
- ສ່ວຍທີ່ໄດ້ຈາກການເກັບຄ່າອາກອນຕ່າງໆ ເຊັ່ນ ອາກອນດິນນາ, ອາກອນຕົ້ນໄມ້ ແລະ ອາກອນການປະກອບອາຊີບຕ່າງໆ ເຊັ່ນ: ອາກອນດິນນາ ໄຮ່ລະ 25 ສະຕາງ , ຄ່າອາກອນ ຕົ້ນໄມ້ ກິນໝາກ 1 ຕົ້ນຕໍ່ 1 ບາດ.
- ສ່ວຍທີ່ໄດ້ຈາກການເກັບພາສີຕ່າງໆ ໂດຍສະເພາະ ພາສີຫົວຄົນ, ພາສີຜົນຜະລິດ, ພາສີ ແຮ່ທາດ ແລະ ອື່ນໆ. ແຕ່ວ່າການເກັບສ່ວຍຈະເກັບເປັນວັດຖຸເທົ່ານັ້ນ ຕົວຢ່າງ: ການເສຍພາສີ ແຮ່ຄຳ ຂອງເມືອງອັດຕະປື ຕ້ອງເສຍເປັນຄຳແທ່ງ ແລະ ພາສີເຂົ້າຕ້ອງເສຍເປັນເຂົ້າ.
- ສ່ວຍທີ່ໄດ້ຈາກການປັບໄໝຄະດີຄວາມຕ່າງໆ ແລະ ຄະດີທີ່ຄົນລາວກະທຳຄວາມຜິດ ຕໍ່ ກົດໝາຍ ຫຼື ຄຳສັ່ງຂອງສັກດິນາສະຫຍາມ[47].

ສະຫຼຸບແລ້ວ ນະໂຍບາຍການເກັບສ່ວຍທີ່ສັກດິນາສະຫຍາມ ມີຕໍ່ປະຊາຊົນລາວນັ້ນ ແມ່ນ ໜັກໜ່ວງທີ່ສຸດ. ແຕ່ລະປີຄົນລາວຕ້ອງຖືກສັກດິນາສະຫຍາມກົດຂີ່ຂູດຮີດ ຢ່າງຫຼີກລ່ຽງບໍ່ໄດ້.

[47] ທີ່ມາຂອງຂໍ້ມູນ: ຈົດໝາຍເຫດລາຊະການທີ 3 ເລກທີ 14 ອ້າງໃນ ສຸວິດ ທິຣະສາສະວັດ .ເລື່ອງເດີມ. ໜ້າ 74,75 : 2543

ตาลางที.4.: ภาษแบ่งผืนปะโทยดจากภส่วยของสักดินาสะหยาม[48]

สะไหมภาษปีกถอง		ชะนิดส่วย		
ถส 1831	ลาชะภาษที 3	เงิน	พะลาชะอังฆวง	พะลาชะอังบ่อม
			319 ชั่ง 9 ตำลึง 1 บาด	106 ชั่ง 9 ตำลึง 3 บาด
ถส 1851	ลาชะภาษที 4	ถำ	พะบ่ธิมมะหาธาชะอัง	พะบ่ธิมธาชะอัง
			31 ชั่ง 11 ตำลึง 2 บาด 2 สะลึง	6 ชั่ง 14 ตำลึง 1 บาด

ภาษสิ่งบันนาภาษ:

ในไลยะทำอิดนั้นสักดินาบางภอกได้ภำนิดให้สักดินาลาวทัง 3 ภาษาจักต้อง สิ่งเถื่องลาชะบันนาภาษ ถวายเจ้าแผ่นดินบางภอกในทุกๆ สามปี. ต่อย่าง: ภาษสิ่งเถื่องบันนาภาษให้บางภอก 3 ปี ต่ถัง้ของอาษาจักจำปาสัก ปะภอบมี: ต้นไม้ถำ 1 ต้น ผัก 10 บาด, ต้นไม้เงิน 1 ต้น ผัก 10 บาด, ๆาช้างผัก 2 หาบ, นำละมาด ผัก 2 ชั่งจิม และ ผาภแผ่ง ผัก 4 หาบ. แต่อ่านับแต่ ปี ถส 1856 เป็นต้นมา สักดินาสะหยามได้ภำนิดให้สักดินาลาวล้านช้าง นำเถื่องบันนาภามมาถะหวายสักดินาสะหยามปีละถัง เซิ่งสิ่งของที่นำมาถะหวายปะภอบ มีดังนี้:

ตาลางที 5: ภาษสิ่งบันนาภาษของลาวให้สักดินาสะหยาม

ลำดับ	ลายภาษ	นำ้หนัก	หมายเหด
1	ต้นดอกไม้ถำ 1 ต้น	2 ตำลึง	เท่ากับ 8 บาด
2	ต้นดอกไม้เงิน 1 ต้น	2 ตำลึง	
3	ถัง	100 หาบ	
4	ยาม	2 หาบ	
5	ถำผึง	8 ตำลึง	
6	ถำพอม	4 ตำลึง	ถำที่เธ็ดเป็นเส้นถ้ายถือเชือภ
7	ดาบ	100 เหั้ม	
8	สูม	100 เหั้ม	
9	ชะมิดชูง	100 ซ่	
10	เงินพอม	4 ตำลึง	
11	จามะลิ[49]	100 พอง	

[48] ที่มาข้อมูล: จดหมายเหด ลาชะภาษที 3 จ.ส 1193 เลภที 17 ,21 และ จดหมายเหด ลาชะภาษที 4 จส 1213 เลภที 117 อ้างใน สุจิด ทิธะลาสะวัด.

ນອກຈາກນີ້, ຍັງມີສິ່ງຂອງອີກຫຼາຍລາຍການມາຖະຫວາຍ ເຊັ່ນ: ມ້າຜູ້ຕອນສີນາ ສູງ 153 ຊັ່ງຕີແມັດ, ລາຜູ້ຕອນ 4 ໂຕ, ຜ້າຈຸ່ມ 10 ຜືນ, ຜ້າພົມ 5 ຜືນ, ເຮືອ 1 ລຳ ແລະ ມ້າທີ່ເຝິກແອບແລ້ວອີກ 2 ໂຕ[49]. ນອກຈາກນະໂຍບາຍການເສຍສ່ວຍ ແລະ ບັນນາການແລ້ວ, ສັກດິນາສະຫຍາມຍັງວາງນະໂຍບາຍທີ່ແນໃສ່ກີດຂວາງ ແລະ ສະກັດກັ້ນການຂະຫຍາຍຕົວ ທາງດ້ານເສດຖະກິດຂອງຄົນລາວ, ບໍ່ວ່າຈະເປັນການຜະລິດໃນຂະແໜງການຫັດຖະກຳ ກໍຄືຂະແໜງການຜະລິດອື່ນໆ ເຊັ່ນ: ການຄ້າຂາຍແລກປ່ຽນ. ຕາມການບັນທຶກຂອງຊາວຕ່າງດ້າວບອກວ່າການຄ້າໃນດິນແດນລ້ານຊ້າງຊ່ວງນີ້ ມີການຂະຫຍາຍຕົວພໍສົມຄວນ, ແຕ່ກຸ່ມທີ່ເຮັດການຄ້າສ່ວນຫຼາຍ ເປັນພວກພໍ່ຄ້າຈາກສະຫຍາມ ແລະ ຊາວຕ່າງດ້າວ ສ່ວນພໍ່ຄ້າ ທີ່ເປັນຄົນລາວໃນສອງຟາກຝັ່ງແມ່ນ້ຳຂອງນັ້ນມີໜ້ອຍ ເພາະຖືກຈຳກັດສິດຜົນປະໂຫຍດໃນຫຼາຍດ້ານຈາກສັກດິນາສະຫຍາມ ໂດຍສະເພາະການເສຍພາສີແມ່ນໜັກໜ່ວງ.

1.2.7.5 ການກົດຂີ່ຂູດຮີດດ້ານສັງຄົມວັດທະນະທຳ

ນອກຈາກຖືກສັກດິນາສະຫຍາມກົດຂີ່ຂູດຮີດ ທາງດ້ານເສດຖະກິດແລ້ວ ຄົນລາວ ຍັງຖືກກົດຂີ່ຂູດຮີດ ທາງດ້ານຈິດໃຈຢ່າງຮ້າຍແຮງຈາກນະໂຍບາຍປົກຄອງຂອງສັກດິນາສະຫຍາມ ທີ່ຝັງໜັກທຳມະຊາດທີ່ສຸດເພື່ອແນໃສ່ລົບລ້າງຊາດລາວ ແລະ ຄົນລາວພາຍໃຕ້ "ນະໂຍບາຍການສັກເລກ" ດ້ວຍການບັງຄັບ ເພື່ອບ່ຽງບອກຖານະໃນການກາຍເປັນເມືອງສ່ວຍຢ່າງແທ້ຈິງ. ນອກຈາກນີ້, ພວກສັກດິນາສະຫຍາມຍັງດຳເນີນນະໂຍບາຍດັບມອດ ແລະ ທຳລາຍຮີດຄອງປະເພນີ, ວັດທະນະທຳລາວ ດ້ວຍການອອກ ກົດໝາຍບັງຄັບ "ບໍ່ໃຫ້ຄົນລາວເປົ່າແຄນ" ໃນປີ ຄສ 1865 ຊຶ່ງເປັນນະໂຍບາຍບີບບັງຄັບທີ່ໂຮ້ມະນຸດສະທຳທີ່ສຸດ ທີ່ສັກດິນາສະຫຍາມກະທຳຕໍ່ກັບຄົນລາວ ແລະ ຊາດລາວ.

1.3 ປະຫວັດສາດລາວສະໄໝໃໝ່

1.3.1 ການຮຸກຮານ ແລະ ຄອບຄອງລາວຂອງຈັກກະພັດຝຣັ່ງ

1.3.1.1 ກົນອຸບາຍແຊກແຊງລາວຂອງຈັກກະພັດຝຣັ່ງ

ໃນທ້າຍສະຕະວັດທີ19 ອັງກິດ ແລະ ຝຣັ່ງໄດ້ກາຍເປັນຈັກກະພັດ ທີ່ຍິ່ງໃຫຍ່ເຂັ້ມແຂງກ່ອນໝູ່, ພວກເຂົາແຂ່ງຂັນກັນຍາດແຍ່ງຕະຫຼາດ ແລະ ເຮັດສົງຄາມລ່າເມືອງຂຶ້ນໃນທົ່ວໂລກ, ຫຼາຍຂົງເຂດ ໃນທະວີບອາຊີ ລວມທັງອາຊີອາຄະເນ ແມ່ນເປົ້າໝາຍໃນການແຊກແຊງຂອງຈັກກະພັດຝຣັ່ງ ແລະ ອັງກິດ ເຊັ່ນດຽວກັນ. ຈັກກະພັດຝຣັ່ງ ພາຍຫຼັງປະລາໄຊໃຫ້ຈັກກະພັດອັງກິດໃນການຍາດແຍ່ງປະເທດອິນເດຍ ໃນປີ ຄສ 1753 - ປີ ຄສ 1763. ແລ້ວພວກເຂົາໄດ້ຕັດສິນໃຈຮຸກຮານອາຊີອາຄະເນ ທາງທິດຕາເວັນອອກເຊັ່ນ:ຢຶດໄຊ່ງ່ອນໃນຕົ້ນປີຄສ 1859ແລະ ສາມາດຢຶດຫວຽດນາມໄດ້ສົມບູນໃນປີ ຄສ 1884, ຢຶດເອົາກຳປູເຈຍ ປີ ຄສ 1867 ສຳລັບປະເທດລາວໃນໄລຍະນີ້ຍັງຕົກເປັນເມືອງຂຶ້ນ ຂອງ ສະຫຍາມ, ປະຊາຊົນລາວບັນດາເຜົ່າຢູ່ໃນສະພາບເສຍບ້ານເສຍເມືອງ, ບ້ານແຕກສາຍແຮກຂາດ, ພວກຝຣັ່ງແຊກແຊງລາວດ້ວຍຮູບການສົ່ງນັກສຳຫຼວດຫຼາຍຄະນະເຊັ່ນ: ປີ ຄສ 1861 ໄດ້ສົ່ງຄະນະສຳຫຼວດນຳໂດຍ ຮັງລີມູໂອ, ປີ ຄສ 1865 ນຳໂດຍ ດູດາ ເດີລາເງ. ພາຍຫຼັງ ດູດາ ເດີລາເງ ເສຍຊີວິດ ແລ້ວກໍແມ່ນ ຝຣັ່ງ ຊີການີເຍ ເປັນຜູ້ສືບທອດຕໍ່, ບັນດານັກສຳຫຼວດເຫຼົ່ານີ້ໄດ້ເກັບກຳສະພາບການບ້ານເມືອງ, ວັດທະນະທຳ-ສັງຄົມ, ແຫຼ່ງຊັບພະຍາກອນທຳມະຊາດ, ຕະຫຼາດຈຳໜ່າຍສິນຄ້າ, ແຕ້ມແຜນທີ່ ແລະ ອື່ນໆ. ປີ ຄສ 1875 - ປີ ຄສ 1877 ຝຣັ່ງໄດ້ສົ່ງຄະນະຂອງ ຈູລິດ ອາກມັງ ເຂົ້າມາສຳຫຼວດທາງພາກກາງ ແລະ ພາກໃຕ້ຂອງລາວເພື່ອຊອກຫາຂໍ້ມູນສາຍພົວພັນລະຫວ່າງລາວ ກັບ ຫວຽດນາມ ແລະ ລາວກັບກຳປູເຈຍ ເປັນບ່ອນອີງໃນການອ້າງກຳມະສິດຄອບຄອງແຜ່ນດິນລາວ[50]

[49] ຈົດໝາຍລາຊະການທີ 4 ຈສ 1214 ເລກທີ 23 . ອ້າງໃນ ປະຫວັດສາດລາວ 1779-1975 ສຸວິດ ທິຣະສາສະວັດ 2543.
[50] ສຸເນດ. ເລື່ອງເດີມ 2000: 470

ຫຼັງຈາກນັ້ນ ຝຣັ່ງໄດ້ໃຊ້ກຳລັງໜູນໜີບ ແລະ ອ້າງສິດຂອງຕົນໃນການປົກຄອງດິນແດນທີ່ຂຶ້ນກັບ ອານາມທີ່ຝຣັ່ງເຊັນກັບອານາມ ໃນປີ ຄສ 1884 ເພື່ອເຈລະຈາກັບສະຫຍາມໃນການສ້າງຕັ້ງກົງສູນ ຢູ່ ຫຼວງພະບາງ, ມາເຖິງວັນທີ 24 ກໍລະກົດ ປີ ຄສ 1886 ສະຫຍາມ ຍອມເຊັນສັນຍາໃຫ້ຝຣັ່ງຕັ້ງກົງສູນ ຢູ່ຫຼວງພະບາງ ໂດຍແມ່ນ ໂອກຸດປາວີ ເປັນຫົວໜ້າກົງສູນ. ຈາກນັ້ນ, ປາວີ ກໍດຳເນີນກົນອຸບາຍຕ່າງໆ ເພື່ອດຶງດູດສັກດິນາລາວ ແລະ ສ້າງເງື່ອນໄຂຕ່າງໆ ໃນການຢຶດຄອງລາວ, ດ້ວຍເຫດນັ້ນມາເຖິງວັນທີ 13 ມີຖຸນາ ປີ ຄສ 1887 ເຈົ້າຊີວິດອຸ່ນຄຳ ຈຶ່ງຕົກລົງມອບອຳນາດການປົກຄອງຂອງລາວໃຫ້ແກ່ ຝຣັ່ງ. ເຖິງວ່າ ພວກສະຫຍາມບໍ່ຍອມຮັບຮູ້ການມອບອຳນາດການປົກ ຂອງເຈົ້າຊີວິດຫຼວງພະບາງໃຫ້ແກ່ ຝຣັ່ງກໍຕາມ, ຝຣັ່ງໄດ້ດຳເນີນການເກາະຜິດກັບສະຫຍາມ ດ້ວຍການສົ່ງທະຫານເຂົ້າມາບຸກຢຶດເອົາ ຝັ່ງຊ້າຍແມ່ນ້ຳຂອງ ແລະ ມີການປະທະກັນຫຼາຍແຫ່ງໃນແຜ່ນດິນລາວ ໄດ້ສ້າງຄວາມເສຍຫາຍໃຫ້ ແກ່ທັງສອງຝ່າຍ. ວັນທີ 20 ກໍລະກົດ ປີ ຄສ 1893 ຝຣັ່ງໄດ້ສົ່ງເຮືອຮົບຫຼາຍລຳເຂົ້າປິດອ່າວສະຫຍາມ ເພື່ອນາບຂູ່ບັງຄັບໃຫ້ສະຫຍາມ ຮັບຮູ້ການປົກຄອງຂອງຝຣັ່ງ ຢູ່ຝັ່ງຊ້າຍແມ່ນ້ຳຂອງ. ມາເຖິງ ວັນທີ 3 ຕຸລາ ປີ ຄສ 1893 ສົນທິສັນຍາຝຣັ່ງ-ສະຫຍາມ ຈຶ່ງໄດ້ເຊັນກັນສົນທິສັນຍາດັ່ງກ່າວລັດຖະບານສະ ຫຍາມຍອມຮັບຮູ້ການປົກຄອງຂອງຝຣັ່ງຢູ່ຝັ່ງຊ້າຍແມ່ນ້ຳຂອງ, ສ່ວນດິນແດນຝັ່ງຂວາແມ່ນ້ຳຂອງຕົກ ເປັນຂອງສະຫຍາມ ຕໍ່ມາຈົນເຖິງທຸກວັນນີ້ ຍົກເວັ້ນແຂວງໄຊຍະບູລີ ແລະ ຈຳປາສັກ.

1.3.1.2 ການຕັດແບ່ງດິນແດນລາວຂອງຈັກກະພັດຝຣັ່ງ ແລະ ສັກດິນາສະຫຍາມ

ສົນທິສັນຍາ ວັນທີ 3 ເດືອນ ຕຸລາ ປີ ຄສ 1893 ໄດ້ສ້າງຄວາມພໍໃຈ ໃຫ້ແກ່ສັກດິນາສະຫຍາມ ແລະ ພວກລ່າເມືອງຂຶ້ນຝຣັ່ງເປັນຢ່າງຍິ່ງ ແຕ່ມັນແມ່ນການສູນເສຍຄັ້ງໃຫຍ່ຫຼວງໃນໜ້າປະຫວັດສາດ ຂອງຊາດລາວ, ແຜ່ນດິນທີ່ກວ້າງໃຫຍ່ໄພສານ ໃນເມື່ອກ່ອນໄດ້ຖືກຕັດແບ່ງເປັນ 2 ຕອນ, ປະຊາຊົນລາວ ທີ່ຢູ່ສອງຝາກຝັ່ງຂອງ ກໍຖືກແບ່ງເປັນຄົນລະເຊື້ອຊາດຈົນເຖິງທຸກວັນນີ້. ພາຍຫຼັງຝຣັ່ງ ໄດ້ຄອບຄອງລາວ ໂດຍສົມບູນແລ້ວ ພວກເຂົາຍັງໄດ້ສືບຕໍ່ຕັດແບ່ງດິນລາວ ຄື:

ຊາຍແດນທາງພາກຕາເວັນຕົກ:


ສົນທິສັນຍາວັນທີ 3 ຕຸລາ ປີ ຄສ 1893 ລະຫວ່າງຝຣັ່ງກັບສະຫຍາມ ໄດ້ລ່ວງລະເມີດສິດທິ ຂອງປະຊາຊົນລາວ. ສະນັ້ນ, ປະຊາຊົນລາວ ຈຶ່ງໄດ້ທຳການຕໍ່ຕ້ານ, ປະທ້ວງຝຣັ່ງ ແລະ ສະຫຍາມດ້ວຍ ຫຼາຍຮູບການເຮັດໃຫ້ຝຣັ່ງ ແລະ ສະຫຍາມຈຳປັນຕ້ອງເຈລະຈາແບ່ງປັນດິນແດນກັນຄືນໃໝ່ ໃນວັນທີ 13 ກຸມພາ ປີ ຄສ 1904 ສະຫຍາມໄດ້ຍົກເອົາດິນແດນຝັ່ງຂວາຂອງ ແຂວງຫຼວງພະບາງ, ແຂວງ ໄຊຍະບູລີ ແລະ ຝັ່ງຂວາແຂວງຈຳປາສັກໃຫ້ແກ່ຝຣັ່ງ. ແຕ່ສົນທິສັນຍາດັ່ງກ່າວຝຣັ່ງ ຕ້ອງຍົກດິນແດນ ເມືອງດ່ານຊ້າຍໃຫ້ແກ່ສະຫຍາມ ເພື່ອແລກປ່ຽນເອົາແຂວງສຽມລຽບ, ສີໂສພົນ, ພະຕະບອງ, ພະນົມນົກ... ຂອງກຳປູເຈຍ. ສັນຍາ ໃນປີ ຄສ 1904 - ປີ ຄສ 1907 ໄດ້ກາຍເປັນບັນທັດຂີດເສັ້ນຊາຍ ແດນລາວທາງພາກຕາເວັນຕົກຈົນເຖິງປັດຈຸບັນນີ້. ສົນທິສັນຍາດັ່ງກ່າວ ໄດ້ເຮັດໃຫ້ປະຊາຊົນລາວສູນ ເສຍດິນແດນຝັ່ງຂວາແມ່ນ້ຳຂອງເກືອບໝົດໃຫ້ແກ່ສະຫຍາມ ຄື: ຈັງວັດເລີຍ, ເພັດຊະບູນ, ໜອງຄາຍ, ອຸດອນ, ຂອນແກ່ນ, ນະຄອນພະນົມ, ສະກົນນະຄອນ, ມະຫາສາລະຄາມ, ກາລະສິນ,ໄຊຍະພູມ, ຮ້ອຍເອັດ, ຣາຊະສີມາ, ບູລີລຳ, ສຸລິນ, ສີສະເກດ, ອຸບົນລາຊະທານີ ແລະ ອື່ນໆ

ຊາຍແດນທາງພາກເໜືອ:

ພາຍຫຼັງສົງຄາມລະຫວ່າງຈີນ ກັບ ຍີ່ປຸ່ນສິ້ນສຸດລົງ, ຝຣັ່ງກໍຊຸ້ນຊ້ຽວເຈລະຈາກັບຈີນ ກ່ຽວກັບ ບັນຫາການເມືອງ, ເສດຖະກິດ ແລະ ການກຳນົດຊາຍແດນ. ການເຈລະຈາສຳເລັດລົງວັນທີ 20 ມີຖຸນາ 1895 ຊຶ່ງມີເນື້ອໃນ ດັ່ງນີ້: ຝຣັ່ງມີສິດຕັ້ງກົງສູນ, ບໍລິສັດການຄ້າ, ບໍລິສັດຂຸດຄົ້ນບໍ່ແຮ່ ແລະ ເຄື່ອນໄຫວ ທຸລະກິດຕ່າງໆ ຢູ່ບາງແຂວງຂອງຈີນ ເຊັ່ນ ຊຽງໄຮ, ຫງຸນສິນ, ກວາງຕຸ້ງ... ແຕ່ໃນນັ້ນຝຣັ່ງ ໄດ້ຍົກດິນ

ແດນລາວເຂດສິບສອງພັນນາລີ ໃຫ້ແກ່ຈີນ ໂດຍກຳນົດເອົາທ່ານ້ຳອໍ ເປັນເຂດແດນລາວ-ຈີນ. ສະນັ້ນ, ຈຶ່ງເຮັດໃຫ້ປະຊາຊົນລາວສູນເສຍສິບສອງພັນນາລີ ຈົນເທົ້າທຸກວັນນີ້.

ແຜນວາດທີ 1 ການແບ່ງເຂດແດນລະຫວ່າງສະຫຍາມກັບຝຣັ່ງ ໃນປີ 1893



ຊາຍແດນທາງພາກຕາເວັນຕົກສ່ຽງເໜືອ:

ໃນວັນທີ 20 ເມສາ ປີ ຄສ 1904 ຝຣັ່ງ ແລະ ອັງກິດໄດ້ເຈລະຈາ ແລະ ຕົກລົງກັນວ່າ: ບໍ່ໃຫ້ອັງກິດ ຍຶດເອົາສະຫຍາມເປັນເມືອງຂຶ້ນ, ໃຫ້ສະຫຍາມເປັນລັດກັນຊົນລະຫວ່າງຝຣັ່ງ ກັບ ອັງກິດ ແລະ ໄດ້ກຳນົດຊາຍແດນລາວ-ມຽນມ້າ ໂດຍຖືເອົາຄອງນ້ຳເລີກ ຂອງແມ່ນ້ຳຂອງ ເປັນເສັ້ນແບ່ງເຂດ ແດນສັນຍານີ້ມີຜົນບັງຄັບຈົນຮອດທຸກວັນນີ້.

ຊາຍແດນທາງພາກຕາເວັນອອກ ແລະ ພາກໃຕ້:

ປີ ຄສ 1899 ຝຣັ່ງໄດ້ຈັດໃຫ້ລາວເປັນແຄ້ວນໜຶ່ງທີ່ຂຶ້ນກັບ "ສະຫະພັນອິນດູຈີນ" ຊຶ່ງລວມມີ 5 ແຄ້ວນ ຄື: ແຄ້ວນຕັງແກ້ງ, ອານາມ, ໂກແຊງຊິນ, ກຳປູເຈຍ ແລະ ແຄ້ວນລາວ. ພວກຝຣັ່ງໄດ້ຕັດ ແບ່ງດິນແດນລາວຕາມໃຈຊອບ ເພື່ອສະດວກໃນການປົກຄອງຂອງເຂົາ ເປັນຕົ້ນໄດ້ຕັດແບ່ງດິນລາວ ໃນເຂດສົບໂມ້, ເມືອງແສນ, ເມືອງກະຢາ, ເມືອງກອນກວາງ, ເມືອງໄລ່, ເມືອງລ້າ ແລະ ແຖງ ໄປຂຶ້ນກັບແຄ້ວນຕັງແກ້ງ. ເອົາແຂວງຢາລາຍກັງຕຸມ ຂຶ້ນກັບແຄ້ວນອານາມ, ເອົາແຂວງ ຊຽງແຕງ ຂຶ້ນກັບ ກຳປູເຈຍ. ເຖິງວ່າ ເປັນການກຳນົດຊາຍແດນ ເພື່ອແບ່ງແຄ້ວນກໍຕາມແຕ່ມັນໄດ້ກາຍເປັນເສັ້ນຊາຍແດນ ຖາວອນ ແລະ ເຮັດໃຫ້ປະຊາ ຊົນລາວສູນເສຍບັນດາດິນແດນທີ່ໄດ້ກ່າວມາແລ້ວ ຈົນເຖິງປັດຈຸບັນ.

1.3.1.3 ການຈັດການປົກຄອງລາວຂອງຈັກກະພັດຝຣັ່ງ

ປະເທດລາວຕົກເປັນເມືອງຂຶ້ນຂອງຝຣັ່ງ ນັບແຕ່ປີ ຄສ 1893 - ປີ ຄສ 1954 ສາມາດແບ່ງ ອອກເປັນ 2 ໄລຍະສຳຄັນ ດັ່ງຕໍ່ໄປນີ້:

ກ. ໄລຍະທີ 1: ແຕ່ປີ ຄສ 1893-1945

ແມ່ນໄລຍະທີ່ຈັກກະພັດຝຣັ່ງເຂົ້າຮຸກຮານລາວເທື່ອທີໜຶ່ງ ເຊິ່ງສາມາດແບ່ງເປັນໄລຍະຍ່ອຍຕື່ມອີກ ຄື:

- ແຕ່ປີ ຄສ 1893 - ປີ ຄສ 1895 ແມ່ນໄລຍະທີ່ຝຣັ່ງປະຕິບັດຍຸດໂທບາຍ "ເອົາໃຈສັກດິນາລາວ" ໃນຕອນຕົ້ນຝຣັ່ງ ໄດ້ຮັກສາຮູບການປົກຄອງດັ້ງເດີມໄວ້, ມີເຈົ້າຊີວິດ, ຫໍປະສາດ, ຫໍສະໜາມຫຼວງ, ລະບົບຂ້າລາຊະການຄົບຊຸດ ເຊັ່ນ: ເຈົ້າອຸປະຣາດ, ເຈົ້າຣາຊະວົງ, ເຈົ້າຣາຊະບຸດ, ເຈົ້າຣາຊະສຳພັນທະວົງ, ເຈົ້າລາຊະພາຄີໃນ, ເຈົ້າກົມມະຊຸນ, ເຈົ້າກົມພະຄັງ...

- ແຕ່ ປີ ຄສ 1895 - ປີ ຄສ 1899 ຝຣັ່ງໄດ້ເລີ່ມປ່ຽນແປງການປົກຄອງຢູ່ລາວ ຄື: ປະກາດລົບລ້າງກົດໝາຍເກົ່າຂອງສັກດິນາບາງສະບັບ ທີ່ຂັດກັບການປົກຄອງຂອງພວກເຂົາ, ຈາກນັ້ນຝຣັ່ງໄດ້ແບ່ງປະເທດລາວ ອອກເປັນ 2 ເຂດ ດັ່ງນີ້:

ເຂດເໜືອ: ໝາຍເຖິງ ຂອບເຂດອານາຈັກຫຼວງພະບາງໃນເມື່ອກ່ອນ ພວກເຂົາໄດ້ຈັດເປັນເຂດອາລັກຂາຂອງພວກຝຣັ່ງ ຊຶ່ງມີເຈົ້າຊີວິດສັກກະລິນເປັນຜູ້ປົກຄອງ. ແຕ່ຕ້ອງຢູ່ໃຕ້ອຳນາດ ຂອງ ບຣຸໂຍດ (Boul loche) ຜູ້ສຳເລັດລາຊະການປະຈຳລາວທີ່ມາແທນປາວີ.

ເຂດໃຕ້: ນັບແຕ່ວຽງຈັນຮອດຊາຍແດນກຳປູເຈຍ ແມ່ນຈັດເປັນເຂດເມືອງຂຶ້ນໂດຍກົງ.

- ແຕ່ປີ ຄສ 1899 - ປີ ຄສ 1941 ແມ່ນ ໄລຍະທີ່ຈັກກະພັດຝຣັ່ງໄດ້ຈັດປະເທດລາວເຂົ້າໃນແຄ້ວທີ 5 ຂອງສະຫະພັນອິນດູຈີນຝຣັ່ງເສດໃນວັນທີ 19 ສິງຫາ ປີ ຄສ 1899, ໄລຍະນີ້ປະຊາຊົນລາວໄດ້ຕໍ່ສູ້ທວງ ໃຫ້ຝຣັ່ງທ້ອນໂຮມປະເທດລາວ ໃຫ້ເປັນເອກະພາບໂດຍເອົານະຄອນວຽງຈັນ ເປັນນະຄອນຫຼວງ ໃນປັດຈຸບັນນີ້ຝຣັ່ງໄດ້ທ້ອນໂຮມເອົາ 2 ເຂດ ຄື: ພາກໃຕ້ ແລະ ພາກເໜືອເຂົ້າກັນ ແລະ ເອົານະຄອນ ວຽງຈັນເປັນນະຄອນຫຼວງຂອງປະເທດ. ສ່ວນແຂວງຫຼວງພະບາງ ຖືເປັນເຂດອາລັກຂາ ຂອງຝຣັ່ງ, ແຕ່ກໍຍັງໃຫ້ສິດພິເສດແກ່ເຈົ້າຊີວິດ.

- ແຕ່ປີ ຄສ 1941 ຫາ ເດືອນຕຸລາ ປີ ຄສ 1945 ແມ່ນ ໄລຍະຟາດຊິດຍີ່ປຸ່ນໄດ້ແຊກແຊງ ເຂົ້າອິນດູຈີນ ກໍຄືລາວເຮັດໃຫ້ປະຊາຊົນລາວບັນດາເຜົ່າຕົກຢູ່ໃຕ້ 2 ແອກປົກຄອງ ຄື: ແອກປົກຄອງຂອງຟາດຊິດຍີ່ປຸ່ນ ແລະ ຝຣັ່ງ ຊຶ່ງເປັນໄລຍະທີ່ປະຊາຊົນລາວບັນດາເຜົ່າຖືກກົດຂີ່ຂູດຮີດຢ່າງໜັກໜ່ວງກວ່າເກົ່າ.

- ແຕ່ເດືອນສິງຫາ -12 ຕຸລາ ປີ ຄສ 1945 ແມ່ນໄລຍະທີ່ປະຊາຊົນລາວບັນດາເຜົ່າ ລຸກຮືຂຶ້ນຢຶດອຳນາດການປົກຄອງ ຈາກພວກຍີ່ປຸ່ນ, ຝຣັ່ງ ແລະ ປະກາດເອກະລາດ.

ຂ.ໄລຍະທີ 2: ແຕ່ປີ ຄສ 1946-1954 ແມ່ນໄລຍະທີ່ຈັກກະພັດຝຣັ່ງເຂົ້າຮຸກຮານລາວເທື່ອທີສອງ ແລະ ການພັງທະລາຍ ຂອງລະບອບລ່າເມືອງຂຶ້ນແບບເກົ່າຢູ່ລາວ.

1.3.1.4 ສະພາບເສດຖະກິດ ໃນສະໄໝຝຣັ່ງ

ໃນໄລຍະທີ່ຝຣັ່ງຢຶດຄອງລາວ ພວກເຂົາບໍ່ຍອມລົງທຶນສ້າງສາພັດທະນາປະເທດລາວພໍເທົ່າໃດເນື່ອງຈາກວ່າ ພວກເຂົາຕ້ອງການກົດໜ່ວງທ່ວງດຶງ ໃຫ້ປະເທດລາວຈົມຢູ່ໃນສະພາບຄວາມຫຼ້າຫຼັງຄືແຕ່ກ່ອນ ພວກເຂົາຖືວ່າ ລາວເປັນປ້ອມດ່ານໜ້າຂອງ "ສະຫະພັນອິນດູຈີນຝຣັ່ງ" ກຽມພ້ອມສູ້ຍັນກັບຈັກກະພັດອັງກິດ ທີ່ຈະມາຈາກສະຫຍາມ. ດັ່ງນັ້ນ, ໃນດ້ານເສດຖະກິດພວກເຂົາ ຈຶ່ງສ້າງປະເທດລາວໃຫ້ກາຍເປັນພຽງຕະຫຼາດຈຳໜ່າຍສິນຄ້າ ແລະ ເປັນສາງຊັບພະຍາກອນທຳມະຊາດ ທີ່ແຮໄວ້ເພື່ອຂ້າງໜ້າ ພ້ອມກັນນັ້ນ ພວກເຂົາກົດຂີ່ຂູດຮີດປະຊາຊົນລາວ ຢ່າງໜັກໜ່ວງກວ່າບ່ອນອື່ນໆ ໂດຍສະເພາະ ແມ່ນການຂູດຮີດແຮງງານ. ພວກເຂົາໄດ້ກຳນົດໃຫ້ພົນລະເມືອງລາວຜູ້ຊາຍອາຍຸ 18-60 ປີ ຕ້ອງໄປອອກແຮງງານຮັບໃຊ້ຝຣັ່ງຢ່າງໜ້ອຍ 100 ວັນຕໍ່ປີ. ນອກຈາກນັ້ນ ພວກເຂົາຍັງມີການ

ເກັບສ່ວຍ, ເກັບພາສີອາກອນຢ່າງໜັກໜ່ວງຊ້ຳ ນຳຄ່ວາມທຸກຍາກຂາດເຂີນມາໃຫ້ປະຊາຊົນລາວ ບັນດາເຜົ່າຢ່າງແສນສາຫັດ. ເຖິງຢ່າງໃດກໍຕາມ ເພື່ອສ້າງເງື່ອນສະດວກໃນການປົກຄອງ, ການສ້າງ ຮັ່ງຄູນມີ ໃຫ້ແກ່ພວກເຂົາຕ້ອງລົງທຶນໃນການພັດທະນາເສດຖະກິດສັງຄົມບາງດ້ານ ດັ່ງນີ້:

ກ. ການກະສິກຳ:

ພື້ນຖານເສດຖະກິດເປັນການກະສິກຳ ໂດຍສະເພາະ ແມ່ນການກະສິກຳຂະໜາດນ້ອຍ ເອກະເທດ ທີ່ອາໄສທຳມະຊາດເປັນຕົ້ນຕໍ ປະກອບເຄື່ອງມືການຜະລິດ ກໍຍັງແບບພື້ນບ້ານດັ້ງເດີມ. ການນຳໃຊ້ລະບົບຊົນລະປະທານເຂົ້າໃນການປູກຝັ່ງ ຫາກໍປະກົດຂຶ້ນຢູ່ໃນບາງບໍລິເວນເຮັດນາ, ສະນັ້ນ ການເຮັດນາສ່ວນຫຼາຍ ຈຶ່ງເຮັດພຽງເທື່ອດຽວໃນປີໜຶ່ງ. ຜົນເກັບກ່ຽວຂອງຊາວນາ ໃນແຕ່ລະເຮັກຕາ ໃດໃຫ້ຜົນພຽງແຕ່ 1,5 ຫາ 2 ໂຕນ. ຢູ່ໃນບໍລິເວນຊົນນະບົດ, ເປັນຕົ້ນບໍລິເວນເຂດຊົນເຜົ່າມີການ ປ່ຽນແປງ ຊຶ່ງສ່ວນຫຼາຍ ແມ່ນດຳລົງຊີວິດດ້ວຍການເຮັດໄຮ່ ທີ່ໃຫ້ຜົນຜະລິດພຽງແຕ່ປະມານ 0,8 ໂຕນ ຕໍ່ໜຶ່ງເຮັກຕາ.

ເວົ້າລວມແລ້ວ ການຜະລິດກະສິກຳຍັງມີລັກສະນະເພິ່ງຕົນເອງ, ກຸ້ມຕົນເອງໃນຄອບຄົວ, ກຳລັງແຮງງານການຜະລິດ ໃນທົ່ວປະເທດເກືອບວ່າ ແມ່ນແຮງງານແບບຫັດຖະກຳ ຊຶ່ງມີເຄື່ອງມືແບບ ປະຖົມປະຖານປະສິດທິພາບຂອງແຮງງານຍັງຕ່ຳ, ຊາວນາຜູ້ໜຶ່ງເຮັດວຽກໜຶ່ງປີຄິດສະເລ່ຍກໍອາດຈະ ມີລະຫວ່າງ100 ວັນ ລາຍຮັບຂອງຊາດທີ່ຊາວນາຜູ້ໜຶ່ງຜະລິດໃຫ້ສັງຄົມ ແຕ່ລະປີກໍພຽງແຕ່ກຸ້ມຕົນເອງ ແລະ ຕື່ມອີກ ½ ຄົນ (ເຄິ່ງຄົນ) ເທົ່ານັ້ນ. ກຳມະກອນຜູ້ໜຶ່ງເຮັດວຽກປີໜຶ່ງຄິດສະເລ່ຍບໍ່ເກີນ 200 ວັນ ສະເລ່ຍລາຍໄດ້ຂອງຊາດທີ່ກຳມະກອນຜູ້ນັ້ນຜະລິດອອກມາ ກໍພໍດີກຸ້ມແຕ່ໂຕຜູ້ຜະລິດ ແລະ ອີກຜູ້ໜຶ່ງ.

ຂ. ຫັດຖະກຳ -ອຸດສາຫະກຳ ແລະ ການຄ້າ

ປະຊາຊົນລາວມີມູນເຊື້ອດຸໝັ່ນຂະຫຍັນພຽນສະຫຼາດສະຫຼວຍ ແລະ ຫົວຄິດປະດິດສ້າງ ໃນການອອກແຮງງານ, ຜະລິດວັດຖຸສິ່ງຂອງຕ່າງໆ ໂດຍໄດ້ກໍ່ສ້າງ ແລະ ບຳລຸງຂະແໜງການຊ່າງ, ຫັດຖະກຳ ອັນລືຊື່ດ້ວຍຄວາມປານີດບັນຈົງສວຍງາມ ມາແຕ່ບູຮານນະການຫຼາຍດ້ານ ເຊັ່ນ ວິຊາການ ຕຳໜູກຳໄໝ, ການປັ້ນໜໍ້ຫຼໍ່ໄຫ, ການຈັກສານການເຮັດເຄື່ອງເຄືອບນ້ຳກ້ຽງ, ການແກະສະຫຼັກ, ຄວັດລາຍ, ການລະບາຍສີ, ຊ່າງເງິນ, ຊ່າງຄຳ ເປັນຕົ້ນ. ແຕ່ພວກຝຣັ່ງ ບໍ່ມີການສົ່ງເສີມຫຍັງຈັກແນວ, ການຫັດຖະກຳເກືອບທັງໝົດ ຍັງບໍ່ແຍກອອກຈາກກະສິກຳ. ສະນັ້ນ ມັນບໍ່ພຽງແຕ່ຍັງບໍ່ຂະຫຍາຍຕົວ ເທົ່ານັ້ນ ແຕ່ຍັງຖືກຈຳກັດຮັດແຄບເຂົ້າຕື່ມ ແລະ ມີຫຼາຍວິຊາຄ່ອຍໆ ຫາຍສາບສູນໄປ. ຍ້ອນພວກນາຍ ທຶນຝຣັ່ງ ນຳເອົາສິນຄ້າສຳເລັດຮູບເຂົ້າມາຂາຍຢ່າງອັ່ງອໍ ແລະ ຍ້ອນເຂົາເກນແຮງງານໄປໃຊ້ໃນທາງ ອັນຢ່າງເນື່ອງນິດ ລຸນຕິດ.

ທາງດ້ານອຸດສາຫະກຳ ພວກລ່າເມືອງຂຶ້ນຝຣັ່ງ ໄດ້ດຳເນີນນະໂຍບາຍເສດຖະກິດ ໂດຍແນ ໃສ່ເອົາ ປະເທດລາວເປັນຕະຫຼາດຈຳໜ່ວຍສິນຄ້າຂອງພວກເຂົາພຽງຢ່າງດຽວ. ດັ່ງນັ້ນ, ພວກເຂົາ ຈຶ່ງບໍ່ ມີແຜນການກໍ່ສ້າງອຸດສາຫະກຳຢູ່ໃນລາວ ທັງໆທີ່ປະເທດລາວມີຊັບພະຍາກອນ ດ້ານອຸດສາຫະກຳ ເປັນຈຳນວນຫຼວງຫຼາຍ. ຜ່ານການສຳຫຼວດໃນເບື້ອງຕົ້ນຂອງພວກຝຣັ່ງໃນຊຸມ ປີ ຄສ 1900 ພວກເຂົາ ໄດ້ເວົ້າວ່າ "ປະເທດລາວມີຖ່ານຫີນ, ເຫຼັກ, ທອງ, ຊີນ, ມາດ, ເງິນ ແລະ ຄຳຫຼາຍທີ່ສຸດ ຍັງມີເພັດພອຍ ແລະ ອາດມີທັງບໍ່ນ້ຳມັນນຳອີກ" ນອກນັ້ນ, ພວກເຂົາຍັງສຳຫຼວດພົບແຮ່ທາດອື່ນໆ ເຊັ່ນ ອັງຕີມວນ, ຕຸງສະແຕນ ເປັນຕົ້ນ. ພວກຝຣັ່ງໄດ້ຂຸດຄົ້ນບໍ່ໂລຫະພຽງແຕ່ສອງແຫ່ງ ຄື ບໍ່ກົ່ວໂພນຕ້ໍ ແລະ ຢູ່ບໍ່ແໜ່ງ ທີ່ຂຶ້ນກັບແຂວງຄຳມ່ວນຊຶ່ງມີສອງບໍລິສັດຈັດຕັ້ງການຂຸດຄົ້ນ ຄື "ບໍລິສັດ ສຳຫຼວດ ແລະ ຂຸດຄົ້ນແຮ່ຝຣັ່ງ" ຂຸດຄົ້ນຢູ່ໂພນຕ້ໍ ແຕ່ປີ ຄສ 1923 ເປັນຕົ້ນມາ. ໃນປີ ຄສ 1930 ພວກຝຣັ່ງໄດ້ເງິນຈາກການຂາຍກົ່ວ ເຖິງ 123 ລ້ານກີບ, ໃນປີ ຄສ 1937 ປະເທດລາວ ໄດ້ສົ່ງກົ່ວອອກຂາຍຕ່າງປະເທດ 939 ໃນຈຳນວນ

ຜົນຜະລິດກໍ່ວທັງໝົດຢູ່ອິນດູຈີນມີ 1602 ໂຕນ, ໃນປີ ຄສ 1938 ປະລິມານການຜະລິດກໍ່ວຢູ່ລາວ ເພີ່ມຂຶ້ນເປັນ 950 ໂຕນ .

ຂະແໜງອຸດສາຫະກຳປຸງແຕ່ງ ເຊັ່ນ: ໂຮງເລື່ອຍ ແມ່ນປະເພດເຄື່ອງອຸດສາຫະກຳ ແລະ ເຄື່ອງຫັດຖະກຳ ຊຶ່ງມີໜ້ອຍທີ່ສຸດ ຄື ຢູ່ຄົງເຊໂດນ ແລະ ສະຫວັນນະເຂດ, ໂຮງສີເຂົ້າປະເພດເຄື່ອງ ອຸດສາຫະກຳ ແລະ ເຄື່ອງຫັດຖະກຳ. ສ່ວນໄຟຟ້າ, ນ້ຳປະປາ ມີແຕ່ສະເພາະຢູ່ໃນຕົວເມືອງໃຫຍ່ ທີ່ແມ່ໃສ່ ຮັບໃຊ້ຊີວິດການເປັນຢູ່ສ່ວນຕົວຂອງພວກເຂົາເທົ່ານັ້ນ.

ດ້ານການຄ້າ ຊຶ່ງເມື່ອກ່ອນການພົວພັນການຄ້າຂາຍ ແມ່ນຕິດຕໍ່ກັບບາງກອກຫຼາຍກ່ວາເພີ່ນ, ເມື່ອຝຣັ່ງເຂົ້າມາປົກຄອງພວກເຂົາ ໄດ້ວາງລະບຽບພາສີ, ການກວດກາດ່ານລະຫວ່າງຂາຍແດນລາວ-ສະຫຍາມ ແລະ ໄດ້ວາງລະບົບຄົມມະນາຄົມ ເພື່ອສະກັດກັ້ນການແລກປ່ຽນລາວ-ສະຫຍາມ, ບັງຄັບ ໃຫ້ຄ້າຂາຍກັບແຄ້ວນອື່ນໆຂອງອິນດູຈີນ. ການສົ່ງສິນຄ້າ ລະຫວ່າງ ວຽງຈັນ-ບາງກອກ ຈະຕ້ອງ ໃຊ້ເວລາປະມານ 40 ມື້ (ທາງກວຽນແລະທາງເຮືອ) ແລະ ສິ້ນເປືອງປະມານ 150 ຫາ 200 ກີບຕໍ່ສິນຄ້າ 1 ໂຕນ. ການຄ້າຂາອອກຂອງລາວ (ບໍ່ນັບແຮ່ຈ່ານ) ປີ ຄສ 1898 ໄດ້ມີເຖິງ 1.245.000 ຝຣັ່ງ ຫຼື ປະມານ 462.000 ກີບ ຊຶ່ງມີຕົວເລກທີ່ທາງການໄດ້ຮັບແຈ້ງການຄ້າແນ່. ນະໂຍບາຍທາງດ້ານເສດ ຖະກິດຂອງພວກລ່າເມືອງຂຶ້ນຝຣັ່ງ ໄດ້ເຮັດໃຫ້ເສດຖະກິດການຕະຫຼາດ ທີ່ໄດ້ສູນຫາຍຈາກສັງຄົມ ລາວໃນໄລຍະໜຶ່ງ ໄດ້ປະກົດຄືນມາໃໝ່ອີກຍ້ອນວ່າ ການຄ້າເຄື່ອງປ່າຂອງນາ ແລະ ຜົນຜະລິດຕ່າງໆ ໄດ້ຂະຫຍາຍຕົວ, ຕົວເມືອງໃຫຍ່ໄດ້ຮັບການຟື້ນຟູຄືນໃໝ່ ມັນໄດ້ກາຍເປັນສູນກາງການປົກຄອງ ແລະ ການຄ້າຂາຍຂອງພວກເຂົາ. ໄດ້ມີຕະຫຼາດປະກົດຕົວຂຶ້ນ ແລະ ໄດ້ຂະຫຍາຍຕົວມາເປັນລຳດັບຕາມ ກົດເກນການຂະຫຍາຍຕົວ ຂອງລະບອບທຶນນິຍົມທີ່ປະຕິບັດຕໍ່ປະເທດເມືອງຂຶ້ນ.

ຄ. ຄົມມະນາຄົມ-ຂົນສົ່ງ


ເພື່ອກອບໂກຍຊັບພະຍາກອນທຳມະຊາດ ແລະ ປາບປາມຂະບວນການຕໍ່ສູ້ ຂອງປະຊາຊົນ ລາວ, ຝຣັ່ງໄດ້ສ້າງເສັ້ນທາງເລກ 9 (ປີ ຄສ 1904), ທາງເລກທີ13 (ປີ ຄສ 1911), ທາງ ເລກທີ12 (ປີ ຄສ 1927), ທາງເລກທີ 6 ແລະ ເລກທີ7 (ປີ ຄສ 1930) ເສັ້ນທາງເຫຼົ່ານີ້ສ້າງຂຶ້ນດ້ວຍການບັງຄັບເກັບ ເກນແຮງງານຄົນລາວ (ລາວ. ສສ 1 ໜ້າ 50) ປີ ຄສ 1923 ຝຣັ່ງເລີ່ມມີການຂຸດຄົ້ນບໍ່ກ໋ວທີ່ໂພນຕ໋ວ, ປີ ຄສ 1933 ໄດ້ເລີ່ມຂຸດຄົ້ນບໍ່ແໜ່ງ ແຂວງ ຄຳມ່ວນ. ນອກນັ້ນ, ຍັງໄດ້ຂຸດຄົ້ນເອົາເຄື່ອງປ່າຂອງດົງ, ໄມ້ທ່ອນຂອງລາວອອກຂາຍ ເພື່ອສ້າງຮັ່ງຄຸມມີໃຫ້ແກ່ພວກເຂົາ[51].

ງ. ດ້ານງົບປະມານການເງິນ:


ງົບປະມານປະຈຳປີ ທີ່ຈັກກະພັດຝຣັ່ງ ນຳມາບໍລິຫານກົງຈັກປົກຄອງລ່າເມືອງຂຶ້ນ ຂອງ ພວກເຂົາຢູ່ລາວສ່ວນໃຫຍ່ ແມ່ນໄດ້ມາຈາກການເກັບພາສີຈາກປະຊາຊົນ ລວມທັງພາສີທາງກົງ ແລະ ທາງອ້ອມ. ອີກສ່ວນໜຶ່ງໄດ້ມາຈາກການຂຸດຄົ້ນ ແລະ ການສົ່ງອອກຊັບພະຍາກອນທຳມະຊາດ ຂອງລາວ ງົບປະມານປະຈຳປີຂອງແຄ້ວນລາວ ໃນປີ ຄສ 1898 ແມ່ນ 142.770 ກີບ ແລະ ໃນປີ ຄສ 1900 ແມ່ນ 256.457 ກີບ. ນັບແຕ່ ປີ ຄສ 1899 ເປັນຕົ້ນມາພວກ ຝຣັ່ງໄດ້ບັງຄັບ ໃຫ້ແຕ່ລະ ແຄ້ວນໃນສະຫະພັນອິນດູຈີນຝຣັ່ງ ເກັບເງິນຈາກພາສີທາງອ້ອມ ເຂົ້າໄປເປັນງົບປະມານສ່ວນກາງ (ຂອງສະຫະພັນອິນດູຈີນຝຣັ່ງ) ສະເພາະແຄ້ວນລາວ ໃຫ້ສົ່ງເງິນພາສີທາງອ້ອມໃຫ້ໄດ້ເຖິງ 30-40% ຂອງງົບປະມານສ່ວນກາງ. ເວົ້າລວມພວກຝຣັ່ງໄດ້ໃຊ້ເງິນຂອງຄົນລາວເພື່ອບໍລິຫານຈັດການປົກຄອງ ຄົນລາວ, ແຕ່ພວກເຂົາ ກໍໂຄສະນາວ່າງົບປະມານ ແມ່ນເອົາມາຈາກປະເທດຝຣັ່ງ. ນອກຈາກ, ນັ້ນ ເພື່ອສະດວກໃນການບໍລິຫານຈັດການເສດຖະກິດ ພວກຝຣັ່ງໄດ້ນຳເອົາເງິນອິນດູຈີນ ລວມທັງເງິນເຈ້ຍ

[51] ເດຊານຸລາດ ແສນດວງເດດ. 2010

ແລະ ເງິນຫຼຽນ ມາໃຊ້ເປັນເງິນຕາແລກປ່ຽນຊື້ຂາຍຢູ່ໃນລາວ ທັ້ງໆທີ່ຊາວລາວ ກໍມີເງິນຕາເປັນຂອງຕົນເອງໃຊ້ແລກປ່ຽນຄ້າຂາຍ ມາແຕ່ສະໄໝບູຮານ ຊຶ່ງໃນທີ່ສຸດກໍຖືກປະປ່ອຍຖິ້ມ. ຕົວຢ່າງຮູບແບບເງິນທີ່ຝຣັ່ງນຳໃຊ້ໃນອິນດູຈີນກໍຄືໃນປະເທດລາວ.



ຮູບທີ 16 : ເງິນບີ ອິນດູຈີນ-ຝຣັ່ງເສດ ປີ ຄສ 1875-1951 ທີ່ເຮັດດ້ວຍທອງແດງ ແລະ ສັງກະສີ



ຮູບທີ 17 : ເງິນກີບໜ່ວຍໜາມ (10Cent-1Piastre) ສະໄໝ ອິນດູຈີນ-ຝຣັ່ງເສດ ປີ ຄສ 1879-1946
ທີ່ມາ: ຂໍ້ມູນຈາກອິນເຕີເນັດຂອງທະນາຄານແຫ່ງ ສປປ.ລາວ

1.3.1.5 ສະພາບສັງຄົມໃນສະໄໝຝຣັ່ງ

ພວກຝຣັ່ງ ໄດ້ນຳເອົາອັດທະນະທຳຕາເວັນຕົກມາເຜີຍແຜ່ ເພື່ອເຮັດໃຫ້ຄົນລາວລືມຊາດ, ລືມອັດທະນະທຳຂອງຕົນເອງ ໂດຍໂຄສ ະນາວ່າ ຝຣັ່ງເປັນປະເທດຈະເລີນສີວິໄລມີຄວາມເມດຕາ; ຢາກຊ່ວຍສ້າງປະເທດລາວ ໃຫ້ຈະເລີນເໝືອນກັນ. ສະນັ້ນ, ຄົນລາວຕ້ອງຮັບເອົາອັດທະນະທຳຂອງຝຣັ່ງທັງໝົດ, ພວກຝຣັ່ງໄດ້ສ້າງເສີມໂຮງໂສເພນີ, ໂຮງສູບຝິ່ນກິນກັນຊາ, ໂຮງການພະນັນ. ພວກຝຣັ່ງ ບໍ່ໄດ້ເອົາໃຈໃສ່ພັດທະນາການສຶກສາຂອງລາວ ປີ ຄສ 1902 ເປັນປີທຳອິດທີ່ພວກເຂົາເລີ່ມລົງທຶນໃສ່ການສຶກສາ ຄື: ສ້າງໂຮງຮຽນສອງຫ້ອງຢູ່ວຽງຈັນ ແລະ ຫຼວງພະບາງ, ປີ ຄສ 1915 ໂຮງຮຽນປະຖົມໄດ້ເພີ່ມຂຶ້ນ 12 ແຫ່ງ, ມາຮອດປີ ຄສ 1930 ມີໂຮງຮຽນ ເພີ່ມຂຶ້ນ 66 ບ່ອນ ສ່ວນໃຫຍ່ ແມ່ນໂຮງຮຽນມູນລະປະຖົມສຶກສາ 3 ປີ, ສ່ວນມັດທະຍົມສຶກສາມີຢູ່ທີ່ຮ່າໂນ້ຍ ແລະ ໄຊ່ງ່ອນ. ຜູ້ທີ່ເຂົ້າໂຮງຮຽນລ້ວນແຕ່ແມ່ນລູກຫຼານຂອງພວກຝຣັ່ງ, ຊຸນນາງ ແລະ ຂ້າລາຊະການຊັ້ນຜູ້ໃຫຍ່ທີ່ຮັບໃຊ້ໃຫ້ແກ່ຝຣັ່ງເທົ່ານັ້ນ. ໃນໄລຍະນີ້ປະຊາຊົນລາວກຶກໜັງສືເຖິງ 95% ແລະ ໃຊ້ພາສາຝຣັ່ງເປັນທາງການ, ຝຣັ່ງຍັງໄດ້ສະເໜີໃຫ້ລົບລ້າງຕົວໜັງສືລາວ ເພື່ອໃຫ້ເອົາຕົວໜັງສືລາແຕັງ ມາຂຽນແທນ ໂດຍອ້າງວ່າ ເປັນການສະດວກໃນການພິມໜັງສື ແລະ ເພື່ອກ້າວເຂົ້າສູ່ຄວາມຈະເລີນ ແຕ່ນັກປາດອາຈານລາວ ກໍບໍ່ຍິນຍອມ.

ດ້ານສາທາລະນະສຸກ: ພວກເຂົາເອົາໃຈໃສ່ໜ້ອຍສຸດ ໂດຍແບ່ງງົບປະມານຂອງແຄວ້ນລາວ ປະມານ 1 - 1,6%. ໃນປີ ຄສ 1900 ປະເທດລາວມີໂຮງໝໍ ພຽງແຫ່ງດຽວຢູ່ວຽງຈັນ, ປີ ຄສ 1938 ມີໂຮງໝໍໃຫຍ່ພຽງແຫ່ງດຽວຢູ່ວຽງຈັນ ແລະ ໂຮງໝໍນ້ອຍຢູ່ ຫຼວງພະບາງ, ຊຽງຂວາງ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ ຍ້ອນແນວນັ້ນ ພະຍາດຕິດແປດຕ່າງໆ ເຊັ່ນ: ອະຫິວາ, ໝາກສຸກ ໝາກໃສ, ກາລະໂລກ.. ຈຶ່ງລະບາດໃນທຸກປີ.

1.3.2 ການຕໍ່ສູ້ຂອງປະຊາຊົນລາວຕ້ານການປົກຄອງຂອງຝຣັ່ງ

1.3.2.1 ການຕໍ່ສູ້ຂອງປະຊາຊົນລາວຕ້ານຝຣັ່ງ

ປະຊາຊົນລາວບັນດາເຜົ່າ ນອກຈາກຈະບໍ່ພໍໃຈຕໍ່ການຕັດແບ່ງດິນແດນແລ້ວ, ຍັງຖືກກົດຂີ່ຂູດຮີດ ຢ່າງໜັກໜ່ວງທີ່ສຸດ ເປັນຕົ້ນ: ຖືກເກັບສ່ວຍ, ເກັບພາສີຕ່າງໆ, ຖືກບັງຄັບໄປອອກແຮງງານ ເປັນກຸລີ ເຮັດວຽກບໍ່ມີຄ່າຕອບແທນ ຫຼື ມີກໍບໍ່ສົມເຫດສົມຜົນ ພ້ອມດຽວກັນ ກໍຍັງຖືກລູກແຫຼ້ຕີນມືຜູ້ບອກໄດ້ໃຊ້ຟ້າ ຂອງພວກຝຣັ່ງທີ່ເປັນຄົນລາວກົດຂີ່ຕື່ມອີກ. ເຮັດໃຫ້ພວກເຂົາຕົກຢູ່ໃນຄວາມທຸກຍາກ ລຳບາກຂາດເຂີນ, ທົນທຸກທໍລະມານ, ເສດຖະກິດຂອງຊາດຖືກກົດໜ່ວງໃຫ້ຕົກຢູ່ໃນສະພາບດ້ອຍພັດ ທະນາຫຼ້າຫຼັງ ແລະ ຢ້ຳເທົ້າຢູ່ບ່ອນເກົ່າ. ດ້ວຍເຫດນັ້ນ ພວກເຂົາຈຶ່ງໄດ້ລຸກຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ ນັບແຕ່ພວກເຂົາໄດ້ກ້າວເຂົ້າມາຮຸກຮານ ແລະ ຍຶດຄອງລາວແຕ່ຫ້ວທີນັ້ນໂລດ.

ຂະບວນການຕໍ່ສູ້ ໄດ້ດຳເນີນໄປຫຼາຍຮູບຫຼາຍສີ ແລະ ເກີດຂຶ້ນໃນທຸກຂົງເຂດຂອງປະເທດ ລາວ ຄື: ຂະບວນການຕໍ່ສູ້ຢູ່ພາກກາງຂອງປະເທດລາວ ໃນປີ ຄສ 1901-1903 ນຳພາໂດຍພໍ່ກະດວດ ມີການເຄື່ອນໄຫວ ບຸກໂຈມຕີສັດຕູຢູ່ທີ່ເມືອງພີນ, ຈຳພອນ, ສອງຄອນ, ເຊໂປນ ແລະ ຕົວເມືອງ ສະຫວັນນະເຂດ ການຕໍ່ສູ້ຄັ້ງນີ້ສຸດທ້າຍໄດ້ເຮັດໃຫ້ພໍ່ກະດວດ ແລະ ກຳລັງຂອງເພິ່ນ 300 ຄົນຖືກຈັບ ແລະ ນຳໄປ ປະຫານຊີວິດ. ຢູ່ພາກໃຕ້ຂອງລາວມີຂະບວນການຕໍ່ສູ້ ຂອງປະຊາຊົນນຳພາໂດຍອ້ົງແກ້ວ ແລະ ອ້ົງກົມມະດຳ ປີ ຄສ 1901-1937 ໃນການຕໍ່ສູ້ຄັ້ງນີ້ ໄດ້ເຮັດໃຫ້ອ້ົງແກ້ວຖືກລອບສັ່ງຫານ ໃນຂະ ນະທີ່ກຳລັງເຈລະຈາຢູ່ວັດກາງໃນວັນທີ 15 ເດືອນ ພະຈິກ ປີ ຄສ 1910 ສ່ວນອ້ົງກົມມະດຳ ໄດ້ສືບຕໍ່ ນຳພາການຕໍ່ສູ້ຢູ່ແຂວງສາລະວັນ, ອັດຕະປື, ປາກເຊ ແລະ ແຂວງ ອື່ນໆ ໂດຍສະເພາະ ຢູ່ດ່ົງບໍລະເວນ. ສຸດທ້າຍອ້ົງກົມມະດຳ ກໍຖືກຂ້າຕາຍ ໃນເດືອນ 9 ປີ ຄສ 1936 ; ຢູ່ທາງພາກເໜືອຂອງລາວ ໄດ້ມີຂະບວນ ການຕໍ່ສູ້ຂອງຊົນເຜົ່າມົ້ງ ນຳພາໂດຍ ເຈົ້າຟ້າປາໄຈ ໃນປີ ຄສ 1918 - 1922 ສຸດທ້າຍ ເຈົ້າຟ້າປາໄຈ ຖືກສັດຕູລອບຄາດຕະກຳໃນເດືອນ ພະຈິກ ປີ ຄສ 1922.

ນອກຈາກນັ້ນ ຍັງມີຂະບວນການຕໍ່ສູ້ອື່ນໆອີກ ເຊັ່ນ ຂະບວນການຕໍ່ສູ້ຂອງປະຊາຊົນເມືອງສິງ ປີ ຄສ 1908, ຂະບວນການຕໍ່ສູ້ຂອງຊາວບ້ານຫ້ອມ, ຊາວບ້ານຫາດກັນຊາຢູ່ນະຄອນວຽງຈັນ ນຳພາ ໂດຍນາຍຄູຄຳ ໃນປີ ຄສ 1920 ....

ພາຍຫຼັງພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 3 ກຸມພາ ປີ ຄສ 1930 ແລ້ວ, ນັກກອມມູນິດລຸ້ນທຳອິດ ກໍໄດ້ເຄື່ອນໄຫວຢ່າງທໍລະຫົດອົດທົນ ແລະ ອ້ົງອາດກ້າແກ່ນຄຳຂວັນຊາດ, ປະຊາທິປະໄຕ, ອິດສາລະພາບ ແລະ ຕ້ານລັດທິລ່າເມືອງຂຶ້ນຝຣັ່ງ ໄດ້ກາຍເປັນຄັນທຸງຊີ້ນຳຂະບວນ ການຕໍ່ສູ້ຕ້ານລັດທິລ່າເມືອງຂຶ້ນຝຣັ່ງ ຍ້ອນແນວນັ້ນ ຈຶ່ງເກີດມີຂະບວນການຢູ່ຫຼາຍບ່ອນ ເຊັ່ນ: ການ ປະທ້ວງ, ນັດຢຸດງານ ແລະ ອື່ນໆ. ໃນປີ ຄສ 1930 ປະຊາຊົນວຽງຈັນໄດ້ບຸກເຂົ້າໂຮງການ ຕຳຫຼວດສັນ ຕິບານທວງໃຫ້ປ່ອຍຕົວຜູ້ຖືກຈັບກຸມ, ປີ ຄສ 1932-1933 ກຳມະກອນຢູ່ບໍ່ກົ່ວໂພນຕ້ົວ ແລະ ບໍ່ແໜ່ງໄດ້ ປະທ້ວງໃຫ້ຫຼຸດຜ່ອນໂມງເຮັດວຽກ, ເພີ່ມເງິນເດືອນ, ດັດແປງເງື່ອນໄຂເຮັດວຽກ ແລະ ປົວແປງຊີວິດ ການເປັນຢູ່ຂອງປະຊາຊົນ. ມາຮອດວັນທີ 6-7 ກັນຍາ ປີ ຄສ 1934 ກອງປະຊຸມ ໃຫຍ່ຜູ້ແທນໜ່ວຍ ພັກພື້ນຖານທົ່ວປະເທດ ໄດ້ໄຂຂຶ້ນຢູ່ດອນຊ້ົງຊູ້ ກອງປະຊຸມຄັ້ງນີ້ໄດ້ວາງແນວທາງການຕໍ່ສູ້ ແລະ

ຕ້ານລ້ຽງສ້າງຕັ້ງ "ອົງຄະນະພັກແຄ້ວນລາວ" ເພື່ອຊີ້ນຳການຕໍ່ສູ້ຂອງປະຊາຊົນລາວ ຕ້ານພວກລ່າເມືອງຂຶ້ນຝຣັ່ງ.

ວັນທີ 1 ກັນຍາ ປີ ຄສ 1939 ສົງຄາມໂລກຄັ້ງທີ 2ໄດ້ລະເບີດຂຶ້ນຢູ່ເອີລົບ ມາຮອດວັນທີ 14 ມີຖຸນາ ປີ ຄສ 1940 ຟາຊິດເຢຍລະມັນໄດ້ບຸກເຂົ້າຍັນດາປະເທດເອີລົບ ເຊັ່ນ ລຸກຊຳບວກ, ແບນຊິກ, ໂຮນລັ້ງ, ນອກແວ, ແດນມາກ.... ແລະ ຕີເຂົ້າຮອດນະຄອນຫຼວງປາຣີຂອງຝຣັ່ງ ໄດ້ເຮັດໃຫ້ກົງຈັກປົກຄອງ ຂອງຝຣັ່ງຢູ່ສູນກາງ ກໍຄືຫົວເມືອງຂຶ້ນອ່ອນເພຍເປັຍລ່ຍ ແລະ ຍອມຖອຍເທື່ອລະກ້າວ. ໃນທີ່ສຸດ ກໍຍອມໃຫ້ຟາຊິດຍີ່ປຸ່ນເຂົ້າມາຢຶດອິນດູຈີນໃນວັນທີ 23 ກໍລະກົດ ປີ ຄສ 1941 ມາຮອດ ເວລານີ້ປະຊາຊົນ ອິນດູຈີນເວົ້າລວມ, ເວົ້າສະເພາະປະຊາຊົນລາວ ໄດ້ຕົກຢູ່ພາຍໃຕ້ 2 ແອກປົກຄອງ: ລ່າເມືອງຂຶ້ນຝຣັ່ງ ແລະ ຟາຊິດຍີ່ປຸ່ນ.

ໃນຂະນະທີ່ ຝຣັ່ງຢູ່ອິນດູຈີນກຳລັງປະສົບກັບວິກິດການຄືແນວນັ້ນ, ວົງການກຳອຳນາດສະ ຫຍາມ ໄດ້ອາໄສສັນຍາການຄ້າສະຫຍາມ-ຍີ່ປຸ່ນ ລົງວັນທີ 12 ມີຖຸນາ ປີ ຄສ 1937, ສັນຍາ ມິດຕະພາບໄທ-ຍີ່ປຸ່ນ ເດືອນ ມີຖຸນາ ປີ ຄສ 1940 ("ສະຫຍາມ" ປ່ຽນຊື່ມາເປັນ "ໄທ" ໃນວັນທີ 24 ມີຖຸນາ ປີ ຄສ 1939) ແລະ ການສະໜັບສະໜູນຂອງຍີ່ປຸ່ນ ເພື່ອບຸດຢຶດເອົາດິນແດນປະເທດໃກ້ຄຽງ ຈົນເຮັດໃຫ້ສົງຄາມລະ ຫວ່າງສະຫຍາມກັບຝຣັ່ງເກີດຂຶ້ນ, ຍ້ອນຖືກກົດດັນຈາກຍີ່ປຸ່ນ ແລະ ເຢຍລະມັນ ຝຣັ່ງຈຳຍອມເຊັນສັນຍາຢູ່ໂຕກຽວໃນວັນທີ 9 ພຶດສະພາ ປີ ຄສ 1941 ໃນສັນຍານັ້ນ ຝຣັ່ງຍອມມອບ ແຂວງໄຊຍະບູລີ, ຈຳປາສັກ ແລະ ບາງແຂວງຂອງກຳປູເຈຍ ເນື້ອທີ່ 70.000 km2[52] ໃຫ້ແກ່ສະຫຍາມ. ພາຍໃຕ້ແອກ ປົກຄອງ ຂອງຝຣັ່ງ ແລະ ຍີ່ປຸ່ນເຖິງວ່າພວກເຂົາຈະມີຍຸດທະສາດ ແລະ ກົນອຸບາຍ ຂອງໃຜມັນ, ຕໍ່ພວກເຂົາກໍມີຄວາມເປັນເອກະພາບກັນບາງດ້ານ ຄື ຂຸດຄົ້ນຊັບພະຍາກອນຂອງອິນດູຈີນ ຈົນສຸດຄວາມສາມາດ, ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ປາບປາມທຳລາຍ ຂອງ ຂະບວນການປະຕິວັດຂອງ ປະຊາຊົນອິນດູຈີນ.

ສຳລັບຂະບວນການຕໍ່ສູ ຂອງປະຊາຊົນລາວຕ້ານແອກປົກຄອງ ຂອງພວກລ່າເມືອງຂຶ້ນຝຣັ່ງ ແລະ ຊຸນເສິກຍີ່ປຸ່ນ, ນອນຢູ່ໃນຂະບວນການຕໍ່ສູ້ລວມຂອງປະຊາຊົນສາມຊາດອິນດູຈີນ ພາຍໃຕ້ການ ນຳພາຂອງພັກກອມມູນິດອິນດູຈີນ ອັນໜຶ່ງອັນດຽວກັນໄດ້ຂະຫຍາຍຕົວເປັນລຳດັບ ປີ ຄສ 1942 ອົງການ ຈັດຕັ້ງມະຫາຊົນຕ່າງໆ ໄດ້ຮັບການຟື້ນຟູ ແລະ ນັບມື້ນັບໄດ້ຂະຫຍາຍຕົວຂຶ້ນຊັກໃຊ, ຊຶ່ງໃນນັ້ນ ອົງການຈັດຕັ້ງພັນທະມິດລາວເອກະລາດ ໄດ້ມີບົດບາດດຶງດູດກຳລັງສະໜັບສະໜູນໄດ້ຢ່າງໃຫຍ່ຫຼວງ. ພາຍໃຕ້ຄຳຂວັນ "ຕີຕ້ານຝຣັ່ງຂັບໄລ່ຍີ່ປຸ່ນ ຍາດເອົາເອກະລາດ" ຍ້ອນຂະບວນການປຸກລະດົມ ແລະ ໂຄສະນາເຜີຍແຜ່ໄປທົ່ວປວງຊົນ ຄຳຂວັນເຫຼົ່ານັ້ນ ໄດ້ແຜ່ລາມໄປໃນທົ່ວປະເທດຢ່າງໄວວາ. ນັບຕັ້ງ ແຕ່ຕົ້ນ ປີ ຄສ 1943 ຄະນະປະຈຳສູນກາງພັກກອມມູນິດອິນດູຈີນ ໄດ້ກຽມການລຸກຮື້ຂຶ້ນດ້ວຍກຳລັງ ປະກອບອາວຸດ, ຂະບວນການຕໍ່ຕ້ານພວກລ່າເມືອງຂຶ້ນ ແລະ ຕ້ານຟາຊິດໄດ້ຂະຫຍາຍໄປທົ່ວປວງຊົນ; ຊາວຜູ້ອອກແຮງງານ, ກຳມະກອນຊາວນາ, ຂ້າລາຊະການ, ນັກຮຽນນັກສຶກສາປັນຍາຊົນ, ນາຍທຶນ ນ້ອຍ ແລະ ຜູ້ກ້າວໜ້າໃນຊົນຊັ້ນສັກດິນາ ກໍໄດ້ເຄື່ອນໄຫວດ້ວຍຫຼາຍຮູບການເພື່ອປະທ້ວງແອກກົດ ຂີ່ຂູດຮີດ ແລະ ຄວາມບໍ່ຍຸດຕິທຳຂອງພວກຝຣັ່ງ ແລະ ຍີ່ປຸ່ນ. ຂະບວນການຕໍ່ສູ້ເຫຼົ່ານັ້ນໄດ້ເຕົ້າໂຮມ ກັນເຂົ້າ ແລະ ພາໄປເຖິງການກຳເນີດອົງການ "ແນວລາວອິດສະຫຼະ" ຊຶ່ງເປັນແນວໂຮມໜຶ່ງ ທີ່ມີບົດ ບາດອັນຕັ້ງໜ້າໃນພາລະກິດລວມຂອງປະຊາຊົນລາວນັ້ນ ແມ່ນການຕໍ່ສູ້ຍາດເອົາເອກະລາດ ແລະ ອິດສະຫຼະພາບມາສູ່ປະເທດຊາດ.

ໃນປີ ຄສ 1944 ບັນດາອົງການຈັດຕັ້ງມະຫາຊົນທີ່ຮັກຊາດ ໄດ້ເຕີບໃຫຍ່ຂະຫຍາຍຕົວ ຢູ່ຕາມທ້ອງຖິ່ນຕ່າງໆເຊັ່ນ ຢູ່ວຽງຈັນ, ປາກຊັນ, ທ່າແຂກ, ໂພນຕ້ອ, ບໍ່ແໜ່ງ, ສະຫວັນນະເຂດ, ປາກເຊ,

[52] ທອງສາ ໄຊຍະຄຳດີ ພ້ອມດ້ວຍຄະນະ, ປີ ຄສ 1989

ຫຼວງພະບາງ ແລະ ຊຳເໜືອ. ເພື່ອຍາດເອົາທ່າແຮງ ແລະ ປ້ອງກັນບໍ່ໃຫ້ຝຣັ່ງຕີກັບຫຼັງ, ໃນຄືນວັນທີ 8-9 ມີນາ ປີ ຄສ 1945 ກຳລັງຟາຊິດຍີ່ປຸ່ນ ໄດ້ລົງມືເຮັດລັດຖະປະຫານພວກຝຣັ່ງຈາກນັ້ນ ກໍວາງແອກຟາດຊິດຢູ່ລາວທັນທີ, ພ້ອມນັ້ນພວກເຂົາ ກໍໄດ້ດຳເນີນການກອບໂກຍເອົາຢາຝິ່ນ, ຄັ່ງ, ຍານ, ໝາກແໜ່ງ ອຶ່ນໆ ເກັບເກນສະບຽງອາຫານຢ່າງໜັກ, ເພີ່ມພາສີຂຶ້ນລົ້ນຝຣັ່ງ, ການເກັບເກນກຸລີຫຼາຍຂຶ້ນ, ຍ້ອນແນວນັ້ນ ປະຊາຊົນສ່ວນຫຼາຍຈຶ່ງເບື່ອໜ່າຍຕໍ່ອຳນາດການປົກຄອງຍີ່ປຸ່ນແລ້ວ ເຂົ້າຮ່ວມອົງການຈັດຕັ້ງກູ້ຊາດຫຼາຍຂຶ້ນ[53].

1.3.2.2 ການປະກາດເອກະລາດ ປີ ຄສ 1945

ພາຍຫຼັງ ກອງທັບແດງໂຊວຽດ ໄດ້ບຸກຕີບີດປ່ອຍເອົາບັນດາປະເທດເອີລົບຕາເວັນອອກ ອອກຈາກຟາຊິດແລ້ວ, ກໍສຸມກຳລັງບຸກໂຈມຕີເຂົ້າສູ່ແບກແລ້ງເຮືອນຮັງຂອງຟາຊິດເຢຍລະມັນ ສາມາດຍຶດເອົາແບກແລ້ງໄດ້ ມາເຖິງ ວັນທີ 7 ພຶດສະພາ ປີ ຄສ 1945 ເຢຍລະມັນໄດ້ຍອມຈຳນົນຕໍ່ຝ່າຍສຳພັນທະມິດ ເຊິ່ງເປັນການສິ້ນສຸດສົງຄາມໂລກຄັ້ງທີ II ຢູ່ເອີລົບ. ສ່ວນຢູ່ພາກຕາເວັນອອກ ຄື ຂົງເຂດອາຊີ ກຳລັງຟາຊິດຍີ່ປຸ່ນ ໄດ້ຖືກບຸກໂຈມຕີຢ່າງຂະໜາດໃຫຍ່ ຈາກຝ່າຍສຳພັນທະມິດ ເຮັດໃຫ້ພວກເຂົານັບມື້ປະລາໄຊ. ມາຮອດວັນທີ 6 ແລະ 9 ສິງຫາ ປີ ຄສ 1945 ອາເມຣິກາໄດ້ຖິ້ມລະເບີດປະລະມານູໃສ່ເກາະຮີໂລຊິມາ (Hiroshima) ແລະ ເກາະນາກາສະກີ (Nagasaki) ຂອງຍີ່ປຸ່ນ. ໃນວັນທີ 8 ສິງຫາ 1945ໂຊວຽດ ກໍໄດ້ປະກາດສົງຄາມກັບພວກຊຸນເສິກຍີ່ປຸ່ນ ແລ້ວດຳເນີນການບຸກໂຈມຕີໃສ່ກຳລັງກວນຕັງຂອງຍີ່ປຸ່ນ, ພ້ອງອາທິດດຽວກອງທະຫານຊັ້ນຢັ່ງມຂອງຍີ່ປຸ່ນ ກໍໄດ້ຍອມຈຳນົນຢ່າງບໍ່ມີເງື່ອນໄຂ, ໃນທີ່ສຸດ ມາຮອດວັນທີ 2 ກັນຍາ ປີ1945 ຟາຊິດຍີ່ປຸ່ນ ໄດ້ປະກາດຍອມຈຳນົນຢ່າງເປັນທາງການ ເຊິ່ງເປັນຂີດໝາຍແຫ່ງການສິ້ນສຸດຂອງສົງຄາມໂລກຄັ້ງທີ 2.

ຫຼັງຈາກຍີ່ປຸ່ນປະກາດຍອມຈຳນົນແລ້ວ, ອັງກິດ ແລະ ຈີນ(ຈຽງໄກເຊັກ) ໄດ້ໂຫລະເລກສັ່ງໃຫ້ທະຫານຍີ່ປຸ່ນຢູ່ອິນດູຈີນ ກໍຄືຢູ່ປະທດລາວຮັກສາສະພາບຄວາມສະຫງົບໄວ້ຄືເກົ່າ ລໍຖ້າພວກເຂົາລົງມາປົດອາວຸດ. ໃນເວລານີ້ແໝມນະໂຍບາຍຂອງພັກຄອມມູນິດອິນດູຈີນ ແມ່ນການລຸກຮືຂຶ້ນພາບດຽວໃນທົ່ວແຫຼມອິນດູຈີນຍາດເອົາເອກະລາດ ມາໃຫ້ແຕ່ລະປະເທດກ່ອນທີ່ພວກສຳພັນທະມິດ ແລະ ທະຫານແຕກທັບຂອງຝຣັ່ງຈະກັບຄືນ. ວັນທີ 19 ສິງຫາ 1945 ປະຊາຊົນຫວຽດນາມ ໄດ້ລຸກຮືຂຶ້ນຍຶດອຳນາດຍາດເອົາໄຊຊະນະຢ່າງສະຫງ່າງາມ ຊຶ່ງສົ່ງຜົນສະທ້ອນໂດຍກົງ ໃຫ້ແກ່ຂະບວນການລຸກຂຶ້ນໃນປະເທດລາວ.

ເດືອນ ສິງຫາ ປີ ຄສ 1945 ຢູ່ນະຄອນຫຼວງວຽງຈັນ ຂະບວນການຕໍ່ສູ້ໄດ້ລະເບີດຂຶ້ນ ເປັນບ່ອນທຳອິດຂອງປະເທດລາວ, ນັ້ນແມ່ນການລຸກຮືຂຶ້ນຂອງກຳມະກອນທໍ່ຜ້າ "ກາຟາ" ທວງໃຫ້ຍີ່ປຸ່ນມອບໂຮງງານໃຫ້ແກ່ລາວ, ມາຮອດວັນທີ 23 ສິງຫາ ປີ ຄສ 1945 ທີ່ນະຄອນຫຼວງວຽງຈັນ ມະຫາຊົນທຸກຊັ້ນຄົນທີ່ອາໄສຕົວເມືອງ ແລະ ນອກເມືອງຫຼາຍພັນຄົນ ໄດ້ມາໂຮມຊຸມນຸມມີຕິງຄັ້ງຍິ່ງໃຫຍ່ຢູ່ທີ່ສະໜາມກິລາເພື່ອສະແດງກຳລັງ ແລະ ອອກຖະແຫຼງການທວງໃຫ້ລົບລ້າງການປົກຄອງເກົ່າ ແລະ ສ້າງຕັ້ງອຳນາດ ການປົກຄອງໃໝ່ຂຶ້ນແທນ ທັງເປັນຂີດໝາຍແຫ່ງການຍຶດອຳນາດຂອງປະຊາຊົນລາວຈາກພວກຍີ່ປຸ່ນ. ໃນຄະນະດຽວກັນ ຢູ່ໃນຫຼາຍຕົວເມືອງໃຫຍ່ຂອງແຂວງຕ່າງໆ ກໍດຳເນີນການຍຶດອຳນາດໂຄ່ນລົ້ມ ອຳນາດການປົກຄອງເກົ່າ ເຊັ່ນ: ວັນທີ 20 ສິງຫາ ປີ ຄສ 1945 ຂະບວນການລຸກຮືຂຶ້ນຍຶດອຳນາດຢູ່ສະຫວັນນະເຂດ, ວັນທີ 21 ສິງຫາ ປີ ຄສ 1945 ການລຸກຮືຂຶ້ນຍຶດອຳນາດຂອງປະຊາຊົນທ່າແຂກ.

[53] ທອງສາ ໄຊຍະວົງຄຳດີ ພ້ອມຄະນະ,ປີ ຄສ 1989 ໜ້າ 144-150

ວັນທີ 1 ກັນຍາ ປີ ຄສ 1945 ເຈົ້າເພັດຊະຣາດ ໃນຖານະເປັນອຸປະຣາດ ທັງເປັນ ນາຍົກລັດຖະມົນຕີໄດ້ ອອກຖະແຫຼງການ ກ່ຽວກັບ ສິດອຳນາດອະທິປະໄຕ ແລະ ຜືນແຜນດິນອັນຄົບຖ້ວນຂອງຊາດລາວພ້ອມ ທັງປະກາດລົບລ້າງບັນດາສັນຍາ ແລະ ຂໍ້ຜູກມັດທາງການເມືອງທີ່ເຄີຍມີລະຫວ່າງລາວ ກັບ ຝຣັ່ງ. ມາຮອດວັນທີ 15 ກັນຍາ ປີ ຄສ 1945 ເຈົ້າເພັດຊະຣາດ ນາຍົກລັດຖະມົນຕີ ໄດ້ຕາງໜ້າໃຫ້ອຳນາດ ການປົກຄອງ ປະກາດການເຕົ້າໂຮມເອົາທຸກແຂວງຂອງປະເທດ ເຂົ້າເປັນຜືນແຜນດິນອັນດຽວກັນ ແລະ ຢູ່ໃຕ້ອຳນາດອັນດຽວຢ່າງເອກະພາບກັນ. ຈາກນັ້ນວັນທີ 10 ຕຸລາ ປີ ຄສ 1945 ກອງປະຊຸມ ຄະນະກຳມະການປະຊາຊົນໄດ້ຄົ້ນຄວ້າ ແລະ ຕົກລົງເລືອກຕັ້ງເອົາຄະນະລັດຖະບານລາວເອກະລາດ ມີລາຍຊື່ ດັ່ງນີ້:

1. ພະຍາ ຄຳມ້າວ ວິໄລເຈົ້າແຂວງວຽງຈັນ ເປັນນາຍົກລັດຖະມົນຕີ
2. ທ່ານ ກະຕ່າຍ ໂດນສະໂສລິດ ເປັນລັດຖະມົນຕີກະຊວງການຄັງ
3. ທ່ານ ຫຍຸຍ ອະໄພ ເປັນລັດຖະມົນຕີກະຊວງສຶກສາທິການ
4. ເຈົ້າ ສຸວັນນະພູມາ ເປັນລັດຖະມົນຕີກະຊວງໂຍທາທິການ
5. ພັນຕີ ສິງ ລັດຕະນະສະໄໝ ເປັນລັດຖະມົນຕີກະຊວງປ້ອງກັນຊາດ
6. ເຈົ້າ ສຸພານຸວົງ ເປັນລັດຖະມົນຕີກະຊວງການຕ່າງປະເທດ
7. ທ່ານ ອຸ່ນ ຊະນະນິກອນ ເປັນລັດຖະມົນຕີກະຊວງເສດຖະກິດ
8. ເພຍ ອຸ່ນເຮືອນ ເປັນລັດຖະມົນຕີຊ່ວຍກະຊວງມະຫາດໄທ ແລະ ຍຸຕິທຳ
9. ທ້າວ ເກື່ອງ ປະທຸມຊາດ ເປັນລັດຖະມົນຕີຊ່ວຍກະຊວງກະເສດ
10. ທ່ານ ທຳ ໄຊຍະສິດເສນາ ເປັນຮອງລັດຖະມົນຕີກະຊວງໂຄສ ະນາ
11. ເຈົ້າ ສົມສະໜິດ ເປັນຮອງລັດຖະມົນຕີກະຊວງມະຫາໄທ ແລະ ຍຸຕິທຳ

ວັນທີ 12 ຕຸລາ ປີ ຄສ 1945 ມວນຊົນຊາວນະຄອນຫຼວງວຽງຈັນ ແລະ ຈາກຕ່ວເມືອງຕ່າງໆ ໃນເຂດວຽງຈັນ ໄດ້ເຕົ້າໂຮມກັນຢ່າງໜາແໜ້ນຊຶ່ງມີມະຫາຊົນເຂົ້າຮ່ວມ ສອງໝື່ນກວ່າຄົນ ທີ່ຈັດຂຶ້ນ ຢູ່ເດີນກິລາວຽງຈັນ. ພິທີໄດ້ເລີ່ມເປີດຂຶ້ນ ໂດຍແມ່ນ ພະຍາ ຄຳມ້າວ ນາຍົກລັດຖະມົນຕີ ໄດ້ອ່ານບົດປາໄສທີ່ກ່າວເຖິງເຫດການປະຫວັດສາດ ອັນສຳຄັນຂອງຊາດຕໍ່ທີ່ຊຸມນຸມ.



ຮູບທີ 18: ເຈົ້າເພັດຊະຣາດ ປະມຸກລັດ ວັນທີ 10 ຕຸລາ ປີ ຄສ 1945

ຈາກນັ້ນ ທ່ານ ທຳ ໄຊຍະສິດ ເສນາ ຄະນະກຳມະການປະຊາຊົນ ໄດ້ອ່ານຄຳປະກາດເອກະລາດ ແລະ ອິດສາລະພາບແຫ່ງຊາດ, ປະກາດໂຮມຜົນແຜນດິນລາວ ເຂົ້າເປັນອັນອັນໜຶ່ງອັນດຽວກັນ, ຖະແຫຼງການກ່ຽວກັບການປ່ຽນແປງການປົກຄອງ, ປະກາດໃຊ້ລັດຖະທຳມະນູນຊົ່ວຄາວ ແລະ ປະກາດແຕ່ງຕັ້ງຄະນະລັດຖະບານຂອງປະເທດລາວເອກະລາດ. ສະພາປະຊາຊົນ ໄດ້ຮັບຮອງເອົາໂຄງປະກອບ ແລະ ລາຍຊື່ບຸກຄົນທີ່ສຳຄັນໃນລັດຖະບານ ຕາມທີ່ຕົກລົງກັນໃນວັນທີ 10 ຕຸລາ ປີ ຄສ 1945 ຢ່າງເປັນທາງການ ໂດຍແມ່ນເຈົ້າເພັດຊະຣາດ ເປັນປະມຸກລັດ[54].

1.3.2.3 ການຕໍ່ສູ້ຕ້ານການກັບຄືນມາຮຸກຮານລາວຂອງຝຣັ່ງຄັ້ງໃໝ່

ກ. ການກັບຄືນມາຮຸກຮານລາວຄັ້ງໃໝ່ຂອງຈັກກະພັດຝຣັ່ງ

ສະພາບການພາຍໃນຂອງລາວ ພາຍຫຼັງປະກາດເອກະລາດແລ້ວ ມີຄວາມຫຍຸ້ງຍາກສັບສົນຫຼາຍ ເນື່ອງມາຈາກຜົນສະທ້ອນຂອງສົງຄາມໂລກຄັ້ງທີ 2 ໂດຍສະເພາະ ແມ່ນສັນຍາປົດສະດຳ ທີ່ໄດ້ກຳນົດວ່າ: ນັບແຕ່ເສັ້ນຂະໜານທີ 16 ອົງສາຂຶ້ນເໜືອ ມອບໃຫ້ກອງທັບຈຽງໄກເຊັກ ເປັນຜູ້ປົດອາວຸດທະຫານຍີ່ປຸ່ນ ເພື່ອປະຕິບັດຕາມສັນຍາ ວັນທີ 28 ສິງຫາ ປີ ຄສ 1945 ພວກຈຽງໄກເຊັກ ກໍເຂົ້າມາປົດອາວຸດທະຫານຍີ່ປຸ່ນຢູ່ລາວ, ມາເຖິງວັນທີ 4 ມັງກອນ ປີ ຄສ 1946 ພວກເຂົາໄດ້ຕົກລົງໃຫ້ທະຫານຝຣັ່ງເຂົ້າມາປ່ຽນແທນ. ວັນທີ 7 ກັນຍາ ປີ ຄສ 1945 ຢູ່ພາກໃຕ້ຂອງລາວກອງທະຫານອັງກິດກໍ ເຄື່ອນທັບເຂົ້າມາຕິນແດນລາວ ໂດຍອ້າງວ່າ ຈະເຂົ້າມາປົດອາວຸດທະຫານຍີ່ປຸ່ນຕາມຂໍ້ກຳນົດຂອງສັນຍາປົດສະດາມ. ສຳລັບອຳນາດການປົກຄອງໃໝ່ໃນເວລາດຽວກັນນີ້ ກຳລັງປະຕິວັດຍັງອ່ອນນ້ອຍມີຢູ່ບາງຕົວເມືອງໃຫຍ່ເທົ່ານັ້ນ, ກຳລັງປະກອບອາວຸດຫາກໍໄດ້ຮັບການສ້າງຕັ້ງຂຶ້ນ, ເສດຖະກິດຂອງລາວທີ່ທຸກຍາກກ້ຳກຶ່ງຢູ່ແລ້ວ ຊ້ຳພັດຖືກພວກຝຣັ່ງ ແລະ ຍີ່ປຸ່ນກອບໂກຍທຳລາຍຕື່ມອີກ, ການຜະລິດເວົ້າລວມຖືກຢຸດສະງັກ, ໂຮງຈັກໂຮງງານຊຸດໂຊມຂາດວັດຖຸດິບ, ຂາດແຮງງານ, ຄວາມອຶດຫິວ ແລະ ໂລກລະບາດຂົ່ມຂູ່ຢ່າງໜັກໜ່ວງ, ການຄົມມະນາຄົມລະຫວ່າງແຂວງ, ເມືອງ ແລະ ທ້ອງຖິ່ນຖືກຕັດຂາດ. ໃນສະພາບການດັ່ງກ່າວ, ການປົກປັກຮັກສາຄວາມເປັນເອກະລາດ ແລະ ອຳນາດການປົກຄອງໃໝ່ ແມ່ນບໍ່ຕ່າງຫຍັງກັບການຮັກສາບ້ານບໍ່ມີຮົ້ວ. ຍ້ອນແນວນັ້ນ ບັນຫາຕົ້ນຕໍ ແລະ ຮີບດ່ວນຂອງອຳນາດການປົກຄອງໃໝ່ຄື:ປະກາດສິດເສລີພາບ ປະຊາທິປະໄຕຂອງປະຊາຊົນ, ຈັດຕັ້ງກອງໂຄສະນາປະກອບອາວຸດ ແລະ ສົ່ງໄປຕາມທ້ອງຖິ່ນຕ່າງໆ ເພື່ອຊ່ວຍປະຊາຊົນຍາດເອົາສິດ ເປັນເຈົ້າ, ຮຽກຮ້ອງປະຊາຊົນບໍ່ໄປເປັນທະຫານໃຫ້ຝຣັ່ງ, ບໍ່ໃຫ້ລ້ຽງເກືອສັດຕູ, ຈັດຕັ້ງຄຸ້ມຄອງຕົວ ເມືອງຮັກສາຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ. ເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານການເງິນລັດຖະບານລາວອິດສະຫຼະໄດ້ລະດົມປະຊາຊົນໃຫ້ປະກອບຊັບສິນເງິນຄຳຢ່າງສະໝັກໃຈ ແລະ ຈັດພິມຈຳໜ່າຍເງິນ "ກີບໃໝ່" ຂອງອຳນາດການປົກຄອງປະຕິວັດ, ຊຸ້ນຊຸ້ງສ້າງຕັ້ງກຳລັງປະກອບອາວຸດຂອງລາວສົມທົບກັບກອງປະກອບອາວຸດຂອງຄົນຫວຽດນາມຢູ່ລາວ.

ໃນເດືອນ ມີນາ ປີ ຄສ 1946 ຈັກກະພັດຝຣັ່ງ ໄດ້ເປີດການບຸກໂຈມຕີເຂົ້າລາວດ້ວຍກຳລັງອາວຸດ ໂດຍສົມທົບກັບກອງທະຫານໂດດຈ້ອງ (ກອມມັງໂດ) ແລະ ກອງທະຫານແຕກທັບໃນເມື່ອກ່ອນທີ່ລີ້ຊ່ອນຢູ່ຕາມເຂດຊົນນະບົດຂອງລາວ ພ້ອມນັ້ນພວກເຂົາໄດ້ເຄື່ອນທັບເຂົ້າລາວ ຄື: ເຄື່ອນມາຈາກເຂດຢູນານ (ຈີນ) ເຂົ້າພາກເໜືອລາວ, ເຄື່ອນມາຈາກກຳປູເຈຍເຂົ້າພາກໃຕ້ຂອງລາວ ແລະ ເຄື່ອນມາຈາກພາກກາງຫວຽດນາມ ເຂົ້າພາກກາງຂອງລາວ. ດ້ວຍນ້ຳໃຈຮັກຊາດອັນແຮງກ້າ ແລະ ຄວາມຫຼຸດແຄ້ນສັດຕູ ກອງທະຫານ ແລະ ປະຊາຊົນໄດ້ດຳເນີນການສູ້ຮົບຢ່າງອົງອາດກ້າແກ່ນ ເພື່ອສະກັດກັ້ນຕ້ານຢັນການບຸກລຸກຂອງສັດຕູ, ເຮັດໃຫ້ສັດຕູໄດ້ຮັບຄວາມເສຍຫາຍບໍ່ໜ້ອຍ, ທະຫານ ແລະ ປະຊາຊົນທ່າແຂກ, ສະຫວັນນະເຂດ ໄດ້ສູ້ຮົບຢ່າງອົງອາດກ້າຫານ ເພື່ອປົກປັກຮັກສາຕົວເມືອງທ່າແຂກ ຊຶ່ງເປັນ

[54] ທອງສຸກ ໄຊຍະວົງຄຳດີ ພ້ອມຄະນະ,ປີ ຄສ 1989 ໜ້າ 152-167.

ຈຸດຍຸດທະສາດສຳຄັນ ຂອງການປະຕິວັດໃນເວລານັ້ນ, ຈົນສັດຕູຈຳຕ້ອງລະດົມກຳລັງທະຫານຂອງ ພວກເຂົາເປັນພັນໆຄົນ ໂດຍມີເຮືອບິນ, ລົດຕັງ ແລະ ປືນໃຫຍ່ຊ່ວຍໜູນຈຶ່ງສາມາດ ຢຶດເອົາຕົວເມືອງ ໄດ້. ໃນການຕີຢຶດເອົາຕົວເມືອງທ່າແຂກ ວັນທີ 21 ມີນາ ປີ ຄສ 1946 ພວກເຂົາໄດ້ສັ່ງທານປະຊາຊົນ ລາວທັງຜູ້ໃຫຍ່ ແລະ ເດັກນ້ອຍຫຼາຍພັນຄົນຢ່າງໂຫດຫ້ຽມທີ່ສຸດ. ດັ່ງນັ້ນ,ວັນທີ 21 ມີນາ ຈຶ່ງກາຍເປັນ ວັນຍຸດແຄ້ນຂອງປະຊາຊົນລາວຕໍ່ສັດຕູຜູ້ຮຸກຮານ. ວັນທີ 21 ເມສາ ສັດຕູໄດ້ເປີດປັ້ນບຸກໂຈມຕີຂະໜາດ ໃຫຍ່ເຂົ້າວຽງຈັນ, ກຳລັງປະກອບອາວຸດຂອງປະຊາຊົນ ໄດ້ສູ້ຮົບຢ່າງເດັດດ່ຽວ 3 ມື້ 3 ຄືນ ສັດຕູຈຶ່ງຢຶດ ໄດ້ໃນວັນທີ 24 ເມສາ ປີ ຄສ 1946 ແລະ ຢຶດຫຼວງພະບາງ ໃນວັນທີ 25 ພຶດສະ ພາ ປີ ຄສ 1946.

ຂ. ຈັກກະພັດຝຣັ່ງຟື້ນຟູແອກປົກຄອງລ່າເມືອງຂຶ້ນໃນລາວ

ຫຼັງຈາກຝຣັ່ງຢຶດຄອງປະເທດລາວ ໄດ້ທັງໝົດແລ້ວ, ພວກເຂົາໄດ້ຊຸ້ນຊັ້ງຈັບ ປຸງອຳນາດ ການປົກຄອງຕາມຮູບແບບເຊື່ອງຊ້ອນ ໝາຍຄວາມວ່າ ຄົນຝຣັ່ງ ຈະບໍ່ມາເປັນຜູ້ສຳເລັດລາຊະການ, ເຈົ້າແຂວງ, ເຈົ້າເມືອງຄືເມື່ອກ່ອນ, ເທື່ອນີ້ພວກຝຣັ່ງ ຈະມາເປັນທີ່ປຶກສາຂອງເຈົ້າຊີວິດ, ເຈົ້າແຂວງ, ເຈົ້າເມືອງ ເພື່ອບັນຊາຢູ່ເບື້ອງຫຼັງ ພວກເຂົາສວຍໃຊ້ເຈົ້າຊີວິດລາວ ແລະ ພວກປະຕິການທີ່ບອກໄດ້ ໃຊ້ຟັງໃນການຟື້ນຟູແອກປົກຄອງລາວ. ພ້ອມກັນນັ້ນ, ພວກເຂົາກໍປະຕິບັດກົນອຸບາຍຫຼອກລວງ ທາງດ້ານການເມືອງ ເຊັ່ນ: ວັນທີ 28 ກໍລະກົດ ປີ ຄສ 1946 ມີການເຊັນສັນຍາຮັບຮູ້ຄວາມເປັນ ເອກະລາດ ເອກະພາບ ແລະ ປົກຄອງຕົນເອງຂອງລາວຢູ່ໃນເຄືອສະຫະພັນອິນດູຈີນ ເຊິ່ງຢູ່ພາຍໃຕ້ ຄຳສັ່ງໂດຍຂອງລັດຖະບານຝຣັ່ງ. ເພື່ອຍາດແຍ່ງເອົາດິນແດນສອງແຂວງ ຄື ໄຊຍະບູລີ ແລະ ຈຳປາສັກ ທີ່ຝະລັ່ງຍອມເສຍໃຫ້ແກ່ໄທໃນເມື່ອກ່ອນຄືນມາ, ທັງເປັນການກອບກູ້ກຽດຂອງຕົນ ຝຣັ່ງ ໄດ້ສວຍໃຊ້ຖານະທີ່ຕົນ ມີອຳນາດຢັບຢັ້ງໄທ ທີ່ຕ້ອງການເຂົ້າເປັນສະມາຊິກອົງການສະຫະປະຊາຊາດ, ຍ້ອນແນວນັ້ນວັນທີ 27 ພະຈິກ ປີ ຄສ 1946 ລັດຖະບານໄທ ຈຶ່ງໄດ້ເຊັນສັນຍາສົ່ງດິນແດນທັງໝົດ ທີ່ຂຶ້ນກັບແຂວງໄຊຍະບູລີ ແລະ ຈຳປາສັກຄືນໃຫ້ລາວ. ເພື່ອແຕ້ມແຕ່ງໂສມໜ້າຂອງລັດທິລ່າເມືອງ ຂຶ້ນຝຣັ່ງຢູ່ລາວ 15 ມີນາ ປີ ຄສ 1947 ຝຣັ່ງໄດ້ບີ່ງຕົວ ເອົາ 44 ຄົນ ເພື່ອປະກອບເປັນສະພາຮ່າງລັດຖະ ທຳມະນູນ, ມາເຖິງວັນທີ11 ພຶດສະພາ ປີ ຄສ 1947 ລັດຖະທຳມະນູນໄດ້ປະກາດໃຊ້ຢ່າງເປັນທາງ ການ, ລົບລ້າງລັດຖະທຳມະນູນຂອງລັດຖະບານລາວອິດສະຫຼະ, ໃນລັດຖະທຳມະນູນໄດ້ບົ່ງໄວ້ວ່າ: ລາວ ແມ່ນລາຊະອານາຈັກສັງກັດເຄືອສະຫະພັນອິນດູຈີນ, ປົກຄອງແບບລາຊາທິປະໄຕມີເຈົ້າຊີວິດ ເປັນປະມຸກລັດ... ມາເຖິງເດືອນ ສິງຫາ ໄດ້ມີການເລືອກຕັ້ງສະມາຊິກສະພາປ່ຽນແທນສະພາຮ່າງ, ວັນທີ26ພະຈິກປີຄສ1947ໄດ້ໄຂກອງປະຊຸມສະພາຊຸດທຳອິດ,ກອງປະຊຸມນີ້ໄດ້ສ້າງຕັ້ງລັດຖະບານ ຫຸ່ນຂຶ້ນ. ດ້ວຍການປະຕິບັດກົນ ອຸບາຍອັນເລິກແລບດັ່ງກ່າວຂອງພວກລ່າເມືອງຂຶ້ນຝຣັ່ງໄດ້ເຮັດໃຫ້ ກົງຈັກປົກຄອງ ຂອງພວກເຂົາມີຄວາມສະຫງົບເທື່ອລະກ້າວ. ເຖິງຢ່າງໃດກໍຕາມ ພວກເຂົາກໍ່ບໍ່ສາມາດ ດັບມອດມານະຈິດຕໍ່ສູ້ເພື່ອຄວາມເປັນເອກະລາດ ແລະ ອິດສາລະພາບຂອງປະຊາຊົນລາວບັນດາ ເຜົ່ານັ້ນໄດ້.

ຄ. ການຕໍ່ສູ້ຂອງປະຊາຊົນລາວຕ້ານການປົກຄອງຂອງຝຣັ່ງໃນໄລຍະໃໝ່ ປີ ຄສ 1946-ປີ ຄສ 1954

ພາຍຫຼັງພວກລ່າເມືອງຂຶ້ນຝຣັ່ງ ໄດ້ໃຊ້ກຳລັງບຸກໂຈມຕີບຸງດຢຶດເອົາຕົວເມືອງຕ່າງໆໄດ້ໝົດ ແລ້ວ, ກຳລັງແນວລາວອິດສະຫຼະ ໄດ້ຫັນທິດທາງຕໍ່ສູ້ຍືດເຍື້ອຍາວນານໂດຍທັນທີ. ຢູ່ເຂດຊົນນະບົດ ກຳລັງອິດສະຫຼະໄດ້ເຄື່ອນໄຫວສະກັດລັດຕີກອງທະຫານຝຣັ່ງ ພ້ອມກັບການປຸກລະດົມນ້ຳໃຈຮຸງດ ແຄ້ນພວກລ່າເມືອງຂຶ້ນ, ເຂົາເຈົ້າໄດ້ມີການເຕົ້າໂຮມເອົາຜູ້ທີ່ມີນ້ຳໃຈຮັກຊາດຮຸງດແຄ້ນຝຣັ່ງ ເພື່ອສືບຕໍ່ ຕ້ານສັດຕູຂອງຊາດກອບກູ້ເອົາເອກະລາດມາສູ່ຊາດຕົນ. ຜ່ານການປຸກລະດົມຂົນຂວາຍຢ່າງກວ້າງ ຂວາງຂອງກຳລັງຮັກຊາດ, ປະຊາຊົນຈຳນວນຫຼວງຫຼາຍ ກໍໄດ້ໃຫ້ການສະໜັບສະໜູນ ແລະ ປະກອບ

ສ່ວນຊ່ວຍເຫຼືອທາງດ້ານສະບຽງອາຫານ, ອາວຸດ...ອັນເຮັດໃຫ້ກຳລັງຕໍ່ຕ້ານນັບມື້ເຕີບໃຫຍ່ເຂັ້ມແຂງ ຂຶ້ນເລື້ອຍໆ. ຂະບວນການຕໍ່ຕ້ານລ່າເມືອງຂຶ້ນຝຣັ່ງໄດ້ຮັບການກໍ່ຕັ້ງຂຶ້ນ ແລະ ເຄື່ອນໄຫວຢ່າງເປັນຂະ ບວນຟົດຟື້ນໃນທົ່ວປະເທດເຊັ່ນ: ຂະບວນການຕໍ່ຕ້ານເຂດຕາເວັນອອກສ່ຽງເໜືອເຄື່ອນໄຫວບໍລິເວນ ແຂວງຫົວພັນ, ຊຽງຂວາງ. ເຂດຕາເວັນຕົກສ່ຽງເໜືອເຄື່ອນໄຫວຢູ່ແຂວງຫຼວງນ້ຳທາ, ຫຼວງພະບາງ, ໄຊຍະບູລີ. ຂະບວນຢູ່ພາກກາງເຄື່ອນໄຫວຢູ່ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ. ຢູ່ ພາກໃຕ້ກໍມີຂະບວນການ ເຄື່ອນໄຫວຕໍ່ສູ້ຢູ່ທີ່ແຂວງຈຳປາສັກ, ສາລະວັນ, ອັດຕະປື. ພາກສ່ວນ ທີ່ຂ້າມ ໄປຢູ່ປະເທດໄທນັ້ນ ກໍໄດ້ພະຍາຍາມຕິດຕໍ່ເຕົ້າໂຮມເຄື່ອນໄຫວ ສ່ວນໃຫຍ່ເຄື່ອນໄຫວຢູ່ເຂດຈັງຫວັດ ທີ່ມີຊາຍແດນໃກ້ກັບລາວ ເຊັ່ນ ຈັງຫວັດເລີຍ, ໜອງຄາຍ, ອຸດອນ, ສະກົນນະຄອນ, ນະຄອນພະນົມ. ມາຮອດ ວັນທີ 20 ມັງກອນ ປີ ຄສ 1949 ຢູ່ເຂດທີ່ໝັ້ນຊຳເໜືອກຳລັງປະຕິວັດໄດ້ຈັດຕັ້ງກອງທະຫານ ຫຼວງຂຶ້ນເອີ້ນວ່າ "ກອງທັບລາວອິດສະຫຼະ" ໂດຍແມ່ນທ່ານໄກສອນ ພົມວິຫານ ເປັນຜູ້ບັນຊາ ສູງສຸດ. ໂດຍປະຕິບັດຕາມແຜນນະໂຍບາຍຂອງພັກ. ມາຮອດວັນທີ 13-15 ສິງຫາ ປີ ຄສ 1950 ກອງປະຊຸມໃຫ່ຍແນວລາວຕໍ່ຕ້ານໄດ້ໄຂຂຶ້ນຢູ່ແຂວງຫົວພັນ ຊຶ່ງມີຜູ້ແທນເຂົ້າຮ່ວມ 150 ຄົນ. ເປັນ ຕົວແທນຕ໋ວໃຫ້ແກ່ທຸກຊັ້ນຄົນ, ເຜດໄອ, ສາສະໜາຕັ້ງແຕ່ເຂດພູດອຍຮອດທົ່ງພຽງ.ກອງປະຊຸມໃຫຍ່ ປະຫວັດສາດນີ້ ໄດ້ວາງແນວທາງການປະຕິວັດອັນເປັນເອກະພາບໃຫ້ແກ່ການຕໍ່ສູ້ກູ້ຊາດ, ແນວທາງ ນັ້ນ ໄດ້ກຳນົດເປັນໂຄງການການເມືອງປະກອບມີ 12 ຂໍ້ ຊຶ່ງແນໃສ່ເພີ່ມທະວີຄວາມສາມັກຄີປອງຊົນ ທັ່ງຊາດ. ກອງປະຊຸມນີ້ ໄດ້ຕົກລົງສ້າງຕັ້ງແນວໂຮມແຫ່ງຊາດຂຶ້ນຊື່ວ່າ "ແນວລາວອິດສະຫຼະ" ໂດຍ ເລືອກເອົາເຈົ້າສຸພານຸວົງ ເປັນປະທານ. ກອງປະຊຸມນີ້ ໄດ້ຕົກລົງຈັດຕັ້ງລັດຖະບານລາວຕໍ່ຕ້ານຂຶ້ນ ໂດຍຄັດເລືອກເອົາເຈົ້າສຸພານຸວົງ ເປັນນາຍົກ ລັດຖະມົນຕີ ແລະ ລັດຖະມົນຕີວ່າ ການກະຊວງການ ຕ່າງປະເທດ. (ສຸເນດ ໂພທິສານ: 732-755). ນັບແຕ່ປີ ຄສ 1950 ເປັນຕົ້ນມາຈັກກະພັດອາເມຣິກາ ໄດ້ແຊກຊຶມ ເຂົ້າຮ່ວມມືກັບຈັກກະພັດຝຣັ່ງ ດຳເນີນສົງຄາມຮຸກຮານອິນດູຈີນ. ໃນປີ ຄສ 1953 ລັດຖະບານຝຣັ່ງໄດ້ປະຕິບັດຍຸດທະສາດ "ແຜນການນາວາ" ຮ່ວມມືກັບອາເມຣິກາເປົ້າໝາຍ ແມ່ນ ດັບສູນກຳລັງປະຕິວັດ ຄາດຄະເນວ່າຈະສຳເລັດພາຍໃນ 18 ເດືອນ. ເພື່ອໂຕ້ຕອບແຜນການດັ່ງກ່າວ ກອງທັບລາວອິດສະຫຼະ ໄດ້ເປີດສົງຄາມກອງໜອນ, ບຸກຕີສັດຕູຢ່າງລຽນຕິດ ສາມາດປົດປ່ອຍເອົາ ພາກສ່ວນໃຫຍ່ຂອງແຂວງຜົ້ງສາລີ ໃນເດືອນພະຈິກ ປີ ຄສ 1953. ທ້າຍເດືອນ ທັນວາ ປີ ຄສ 1953 ຕົວເມືອງທ່າແຂກໄດ້ຮັບການປົດປ່ອຍ ແລະ ຂະຫຍາຍ ເຂດປົດປ່ອຍໄປຮອດແຄມຂອງ. ຈາກນັ້ນສືບຕໍ່ຍຶດເອົາເມືອງ ຫີນບູນ, ເມືອງ ຄຳເກີດ, ເມືອງມະຫາໄຊ, ເມືອງເຊໂປນ, ເມືອງພິນ, ເມືອງເລົ່າງາມ, ອັດຕະປື, ສາລະວັນ ພາກສ່ວນໜຶ່ງຂອງແຂວງຈຳປາສັກ... ມາຮອດ ປີ ຄສ 1954 ກຳລັງປະຕິວັດລາວສາມາດປົດປ່ອຍດິນແດນໄດ້ກວ່າ ½ ຂອງເນື້ອທີ່ ທົ່ວປະເທດ. ຈາກໄຊຊະນະ ບັ້ນຮົບລະດູແລ້ງ ແລະ ໄຊຊະນະດ້ານບວນຟູໄດ້ ເປັນຜົນບັງຄັບໃຫ້ຈັກກະພັດລ່າເມືອງຂຶ້ນຝຣັ່ງ ຈຳຕ້ອງຍອມເຊັນສັນຍາເຊີແນວ ໃນວັນທີ 21 ກໍລະກົດ ປີ ຄສ 1954 ສັນຍາດັ່ງ ກ່າວໄດ້ຮັບຮູ້ ຄວາມເປັນເອກະລາດ ອຳນາດອະທິປະໄຕ ແລະ ຜືນແຜນດິນອັນຄົບຖ້ວນຂອງສາມຊາດອິນດູຈີນ ລາວ, ຫວຽດນາມ ແລະ ກຳປູເຈຍ[55].

1.3.3 ການແຊກແຊງ ແລະ ຄອບຄອງລາວ ຂອງອາເມຣິກາ

1.3.3.1 ການແຊກແຊງລາວຂອງອາເມຣິກາ

ຈັກກະພັດລ່າເມືອງຂຶ້ນຝຣັ່ງ ພວມກະກຽມຖອນອອກຈາກອິນດູຈີນນັ້ນ, ຈັກກະພັດອາເມຣິກາ ໄດ້ຊຸ້ນຊັ້ງປະຕິບັດແຜນການແຊກແຊງເຂົ້າແທນບ່ອນຝຣັ່ງຢູ່ອິນດູຈີນ ແນໃສ່ເອົາປະເທດໃນອິນດູຈີນ ເປັນຫົວເມືອງຂຶ້ນແບບໃໝ່ຂອງພວກເຂົາ. ສຳລັບປະເທດລາວ, ອາເມຣິກາໃຊ້ວິທີກຳເອົາພວກທີ່ນິຍົມ

[55] ທອງສາ ໄຊຍະວົງ ຄຳດີ ພ້ອມຄະນະ,ປີ ຄສ 1989 ໜ້າ 152-167

ອາເມຣິກາ, ບັງຄັບໜີບຮັດ, ປັດເຂ່ຍຜູ້ທີ່ມີທ່າອ່ຽງສັນຕິພາບເປັນກາງ ເຮັດໃຫ້ເກີດຄວາມວຸ້ນວາຍໃນວົງການການເມືອງລາວ, ໃນທີ່ສຸດລັດຖະບານສຸວັນນະພູມມາ ຈຶ່ງໄດ້ຍຸບຕົວລົງ ຈາກນັ້ນລັດຖະບານໃໝ່ທີ່ນິຍົມອາເມຣິກາ ກໍໄດ້ສ້າງຕັ້ງຂຶ້ນແທນໃນເດືອນພະຈິກ ປີ ຄສ 1954 ໂດຍແມ່ນກະຕ່າຍ ໂດນສະໂສລິດ ເປັນນາຍົກ. ຈາກນັ້ນ, ກະຕ່າຍກໍໄດ້ມີການສັບປ່ຽນ ເອົາບຸກຄົນທີ່ນິຍົມອາເມຣິກາເຂົ້າເຮັດວຽກໃນທົ່ວກົງຈັກໂດຍໄວ, ນະໂຍບາຍຂອງລັດຖະບານຊຸດນີ້ ແມ່ນອີງໃສ່ອາເມຣິກາ, ຍາດແຍ່ງເອົາການຊ່ວຍເຫຼືອຂອງອາເມຣິກາຢ່າງຮອບດ້ານ. ພ້ອມກັນນັ້ນ ກໍເຊັນສັນຍາກັບລາຊະອານາຈັກໄທ ໃນການປ້ອງກັນຊາຍແດນໄທ ອະນຸຍາດໃຫ້ລັດຖະບານລາຊະອານາຈັກລາວ ນຳເອົາສິນຄ້າຜ່ານໄທ ໂດຍບໍ່ໄດ້ຄິດໄລ່ພາສີ. ນອກນັ້ນອາເມຣິກາ ໄດ້ນຳເອົາປະເທດໄທເປັນແປ້ນຢັນ, ເປັນສາງຄົນ, ສາງອັດຖຸເພື່ອຮຸກຮານລາວທາງດ້ານທະຫານ, ການເມືອງ, ເສດຖະກິດ ແລະ ວັດທະນະທຳ. ວັນທີ 28 ກຸມພາ ປີ ຄສ 1955 ລັດຖະມົນຕີຕ່າງປະເທດຂອງອາເມຣິກາໄດ້ເຂົ້າມາລາວ ເພື່ອດຳເນີນການຊ່ວຍເຫຼືອທາງດ້ານງົບປະມານໃນການກໍ່ສ້າງກຳລັງການທະຫານ, ຕຳຫຼວດ, ກຳລັງໃຕ້ດິນ, ກໍ່ສ້າງປ່ຽນແປງເສັ້ນທາງຍຸດທະສາດ, ເດີ່ນບິນ, ບໍ່ດົນກະຕ່າຍກໍມີກຳລັງທະຫານເຖິງ 10 ກອງພັນມີທີ່ປຶກສາຄົນອາເມຣິກາ, ມີຍົນລຳລຽງ, ຍານພາຫະນະທາງບົກ, ອາວຸດຍຸດທະພັນ ແລະ ສະບຽງອາຫານຢ່າງຫຼວງຫຼາຍ ແລະ ກຽມພ້ອມເຮັດສົງຄາມຢ່າງເຕັມທີ່. ປີ ຄສ 1955 ອາເມຣິກາໄດ້ຊ່ວຍເຫຼືອລັດຖະບານລາຊະອານາຈັກ ເປັນເງິນ 48 ລ້ານໂດລາ ໃນນີ້ຊ່ວຍເຫຼືອທາງດ້ານເສດຖະກິດມີພຽງ 13 ລ້ານໂດລາ. ລັດຖະບານລາຊະອານາຈັກຍິ່ງຮັບເອົາການຊ່ວຍເຫຼືອ ກໍຍິ່ງຖືກອາເມລິກາຄອບງຳ ແລະ ບັນຊາຢ່າງຮອບດ້ານ.

1.3.3.2 ການຕໍ່ສູ້ຂອງປະຊາຊົນລາວຕ້ານການຮຸກຮານຂອງອາເມຣິກາ

ກ. ການຕໍ່ສູ້ຕ້ານການຮຸກຮານຂອງອາເມຣິກາ ປີ ຄສ 1954-1958

ນັບແຕ່ສັນຍາເຊີແນວ ໄດ້ມີຄຳສັ່ງຢຸດຍິງ 20 ໂມງ ຂອງວັນທີ 6 ສິງຫາ ປີ ຄສ 1954, ລັດຖະບານລາຊະອານາຈັກໃຕ້ການບັນຊາຂອງອາເມຣິກາ ໄດ້ສວຍໂອກາດສະພາບໂຍະຍານດັ່ງກ່າວ ດຳເນີນການບຸກໂຈມຕີເຂົ້າ 2 ແຂວງເຕົ້າໂຮມ ຊຳເໜືອ ແລະ ຜົ້ງສາລີຢ່າງຕໍ່ເນື່ອງ ຫວັງຈະດັບສູນກຳລັງປະຕິວັດລາວ ຢູ່ທີ່ນັ້ນ, ມາເຖິງເດືອນ ພຶດສະພາ ປີ ຄສ 1955 ພວກເຂົາໄດ້ສົ່ງທະຫານເຖິງ 11 ກອງພັນ ເທົ່າກັບ 2/3 ຂອງຈຳນວນພົນທັງໝົດ ບຸກໂຈມຕີຂະໜາດໃຫຍ່ບຽດຢຶດເອົາ 2 ແຂວງເຕົ້າໂຮມ. ຢູ່ແຂວງຕ່າງໆ ທີ່ເປັນເຂດກວດກາຂອງພວກເຂົາ, ພວກເຂົາໄດ້ດຳເນີນການກວດລ້າງ, ປາບປາມ, ແກ້ແຄ້ນ, ຈັບກຸມ ຄຸມຂັງນັກຮັກຊາດຫຼາຍພັນຄົນ ໂດຍສະເພາະ ຢູ່ເຂດທີ່ໝັ້ນເກົ່າ (ປະຫວັດສາດພັກໂດຍສັງເຂບ ປີ ຄສ 1997; 102 ມີ ເລົ່າງາມ, ປາກແຊງ, ເມືອງເຟືອງ, ລ່ອງຕອນ, ອັດຕະປື...)

ໃນສະພາບແວດລ້ອມດັ່ງກ່າວ ແລະ ຄວາມຮຽກຮ້ອງຕ້ອງການຂອງພັກໃນໄລຍະໃໝ່ ແລະ ອີງໃສ່ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ II ຂອງພັກກອມມູນິດອິນດູຈີນ, ນັກກອມມູນິດລາວຈຶ່ງໄດ້ຈັດຕັ້ງກອງປະຊຸມໃຫຍ່ ເພື່ອສ້າງຕັ້ງພັກຂອງຕົນຂຶ້ນໃນວັນທີ 22 ມີນາ ປີ ຄສ 1955 ຢູ່ທີ່ແຂວງຫົວພັນ ກອງປະຊຸມຄັ້ງນີ້ ເປັນຂີດໝາຍແຫ່ງການຂະຫຍາຍຕົວໃໝ່ ແລະ ເປັນບາດລ້ຽວທີ່ສຳຄັນໃນປະຫວັດສາດຂອງຊາດລາວ.

ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃໝ່ ແລະ ເປີດກວ້າງແນວໂຮມເອກະພາບແຫ່ງຊາດ, ແນວລາວອິດສະຫຼະ ໄດ້ຈັດຕັ້ງກອງປະຊຸມຂອງຕົນຂຶ້ນໃນວັນທີ 6 ມັງກອນ ປີ ຄສ 1956 ກອງປະຊຸມຄັ້ງນີ້ໄດ້ປ່ຽນຊື່"ແນວລາວ"ອິດສະຫຼະມາເປັນ"ແນວລາວຮັກຊາດ"ແນວໂຮມດັ່ງກ່າວມີໜ້າທີ່ເຕົ້າໂຮມທຸກທ່າອ່ຽງທີ່ຮັກຊາດ ແລະ ກ້າວໜ້າ ເພື່ອປະຕິບັດມະຕິຄຳສັ່ງຂອງພັກຢ່າງເປັນເຈົ້າການ ແລະ ມີຫົວຄິດປະດິດສ້າງເນື່ອງຈາກພັກຢູ່ໃນຖານະປິດລັບ, ແນວໂຮມຢູ່ໃນຖານະເປີດເຜີຍ. ໃນການຮັບມືກັບສະພາບການບຸກໂຈມຕີຂອງສັດຕູ, ພັກໄດ້ມີນະໂຍບາຍຢຶດໝັ້ນຕໍ່ສູ້ ດ້ວຍກຳລັງປະກອບ

ອາວຸດຢູ່ສອງແຂວງ ແລະ ຕໍ່ສູ້ທາງດ້ານການເມືອງໃນ 10 ແຂວງ ໂດຍປຸກລະດົມທຸກຊັ້ນຄົນເຂົ້າຮ່ວມ ແລະ ຍົກສູງຄັນທຸງ "ສັນຕິພາບ, ເປັນກາງ, ຄວາມຖືກຕ້ອງປອງດອງຊາດ" ຍ້ອນແນວນັ້ນ, ກຳລັງ ປະຕິວັດໄດ້ຂະຫຍາຍ ຕົວອອກໃນຂອບເຂດທົ່ວປະເທດ ທັງສືບຕໍ່ຄັບສູນສັດຕູທັງເຈລະຈາ. ຜ່ານ ການສູ້ຮົບເກືອບ 3 ປີ ກຳລັງປະຕິວັດບໍ່ພຽງແຕ່ປົກປັກຮັກສາ 2 ແຂວງເຕົ້າໂຮມໄດ້ຮັກສາໄວ້ຢ່າງໝັ້ນ ຄົງເທົ່ານັ້ນ ແຕ່ຍັງໄດ້ຮັບການປັບປຸງໃຫ້ເຂັ້ມແຂງຕື່ມອີກ, ປະຊາຊົນຢູ່ 10 ແຂວງໄດ້ໃຊ້ຫຼາຍຮູບການ ຕໍ່ສູ້ຕ້ານການກວດລ້າງ, ປາບປາມຂອງສັດຕູເພື່ອປ້ອງກັນຊີວິດ ແລະ ຊັບສິນຂອງຕົນ.

ຄຽງຄູ່ກັບການຕໍ່ສູ້ດ້ວຍກຳລັງອາວຸດ, ກຳລັງປະຕິວັດ ຍັງໄດ້ເລັ່ງທວງໃຫ້ລັດຖະບານລາຊະ ອານາຈັກ ຈິງໃຈປະຕິບັດຕາມສັນຍາເຊີແນວ ປີ ຄສ 1954; ເພື່ອປົດປັ່ງຊາວໂລກທາງສ່ຽງວິພາກ ວິຈານຂອງພາຍໃນ ແລະ ຕ່າງປະເທດ ລັດທະບານລາຊະອານາຈັກ ໄດ້ເຈລະຈາຄັ້ງທຳອິດກັບ ຝ່າຍແນວລາວຮັກຊາດໃນວັນທີ 6 ມັງກອນ ປີ ຄສ 1956 ທີ່ທົ່ງໄຫຫີນ, ສຸດທ້າຍຜົນຂອງການເຈລະຈາ ກໍຖືກລັດຖະບານລາຊະອານາຈັກປະຕິເສດ, ຄວາມເປັນຈິງການເຈລະຈາ ດຳເນີນໄປຫຼາຍຄັ້ງ ແຕ່ ບໍ່ສາມາດຕົກລົງກັນໄດ້ ເນື່ອງມາຈາກຄຳສະເໜີຂອງຝ່າຍວຽງຈັນ ຂັດກັບສິດຜົນປະໂຫຍດລວມ ຂອງຊາດ. ການເຈລະຈາດຳເນີນໄປເກືອບ 3 ປີ ຈຶ່ງຕົກລົງເຊັນສັນຍາສ້າງຕັ້ງລັດຖະບານປະສົມຮ່ວມ ກັນ ໃນວັນທີ 2 ພະຈິກ ປີ ຄສ 1957.



ຮູບທີ 19: ພິທີການເຊັນສັນຍາວຽງຈັນວັນທີ 2 ພະຈິກ ປີ ຄສ 1975

ມາຮອດວັນທີ 19 ເດືອນ ພະຈິກ ປີ ຄສ 1957 ສະພາຜູ້ແທນລາຊະດອນໄດ້ຮັບການຮັບຮອງເອົາ ຄະນະລັດຖະບານປະສົມແຫ່ງຊາດເທື່ອທຳອິດ ຢ່າງເປັນທາງການ, ຊຶ່ງປະກອບມີ 12 ທ່ານເຂົ້າຮ່ວມ ໂດຍແມ່ນ ທ່ານ ສຸວັນນະພູມາ ເປັນນາຍົກລັດຖະມົນຕີ, ໃນນີ້ມີຜູ້ແທນຂອງຝ່າຍ ແນວລາວຮັກຊາດ ເຂົ້າຮ່ວມ 2 ທ່ານ ຄື: ສະເດັດເຈົ້າສຸພານຸວົງ ແລະ ທ່ານ ພູມີ ວົງວິຈິດ. ເຖິງວ່າລັດຖະບານປະສົມ ສາມາດສ້າງຂຶ້ນໄດ້ ແຕ່ການປະຕິບັດງານຂອງລັດຖະບານປະສົມ ແມ່ນດຳເນີນໄປດ້ວຍຄວາມຫຍຸ້ງ ຍາກ ຍ້ອນອາເມຣິກາ ແລະ ລູກມື (ຝ່າຍວຽງຈັນ) ພະຍາຍາມຂັດຂວາງ ແລະ ທຳລາຍ, ເຮັດໃຫ້ລັດຖະ ບານປະສົມຊຸດທຳອິດຄົງຕົວໄດ້ພຽງ 8 ເດືອນກວ່າກໍຕ້ອງຍຸບເລີກໃນວັນທີ 22 ກໍລະກົດ ປີ ຄສ 1958.

ພາຍຫຼັງໂຄ່ນລົ້ມລັດຖະບານປະສົມໄດ້ແລ້ວ, ລັດຖະບານລາຊະອານາຈັກ ກໍໄດ້ອອກແຮງປາບ ປາມຄົນຝ່າຍປະເທດລາວ ແລະ ຜູ້ມີທ່າອ່ຽງເປັນກາງຮັກຊາດຢ່າງເປີດແປນ, ພວກເຂົາໄດ້ປິດລ້ອມ ກອງພັນທີ 1 ແລະ ກອງພັນທີ 2, ອອກຄຳສັ່ງໃຫ້ຕຳຫຼວດປິດລ້ອມເຮືອນພັກຂອງຜູ້ນຳ ແລະ

ພະນັກງານແນວລາວຮັກຊາດຢູ່ວຽງຈັນ. ຕໍ່ໜ້າສະພາບການດັ່ງກ່າວພັກປະຊາຊົນປະຕິວັດລາວ ໄດ້ເດັດດ່ຽວຫັນທິດຕໍ່ສູ້ຢ່າງທັນການປຸກລຸກທົ່ວປວງຊົນລຸກຮືຂຶ້ນ, ຂຸກຍູ້ການຕໍ່ສູ້ ທາງດ້ານການທະຫານ ແລະ ການເມືອງໃນຂອບເຂດທົ່ວປະເທດ.

ມາຮອດ ເດືອນພຶດສະພາ ປີ ຄສ 1959 ກອງພັນທີ 2 ຂອງຝ່າຍປະເທດລາວໄດ້ຜ່າວົງປິດລ້ອມ ຂອງສັດຕູຢູ່ທົ່ງໄຫຫີນໄປສູ່ເຂດປົດປ່ອຍ. ສ່ວນກອງພັນທີ1 ຢູ່ເມືອງຊຽງເງິນ ກໍໄດ້ຜ່າວົງປິດລ້ອມ ຂອງສັດຕູໄປຮອດເຂດປົດປ່ອຍ ໃນປີ ຄສ 1959 ເຊັ່ນກັນ.

ວັນທີ 9 ສິງຫາ ປີ ຄສ 1960 ກອງພັນທະຫານຮາບອາກາດທີ 2 ຂອງຝ່າຍລາຊະອານາຈັກ ຊຶ່ງນຳໂດຍຮ້ອຍເອກກອງແລ ໄດ້ເຮັດລັດຖະປະຫານຂຶ້ນທີ່ວຽງຈັນ. ຈາກນັ້ນ, ໄດ້ຮຽກຮ້ອງການ ຊ່ວຍເຫຼືອ-ຮ່ວມມືຈາກຝ່າຍປະເທດລາວ ເພື່ອປົກປັກຮັກສາພາກຜົນຂອງລັດຖະປະຫານ ແລະ ກໍໄດ້ຮັບການຮ່ວມມືເປັນຢ່າງດີ. ເຖິງຢ່າງໃດກໍຕາມ ໃນເວລານັ້ນກຳລັງປະຕິການຂວາຈັດ (ບຸນອຸ້ມ ນະຈຳປາສັກ ແລະ ພູມີ ໜໍ່ສະໜວັນ) ຊຶ່ງມີອາເມຣິກາ ແລະ ລູກມືໜູນຫຼັງນັ້ນມີກຳລັງທີ່ເຂັ້ມແຂງ ກວ່າຈຶ່ງເຮັດໃຫ້ກຳລັງລັດຖະປະຫານ ແລະ ແນວລາວຮັກຊາດ ຈຶ່ງບໍ່ສາມາດຮັກສາວຽງຈັນໄວ້ໄດ້. ກຳລັງລັດຖະປະຫານ ແລະ ແນວລາວຮັກຊາດ ໄດ້ຖອນອອກຈາກວຽງຈັນມຸ້ງໜ້າໄປປົດປ່ອຍຕົວເມືອງ ຊຽງຂວາງ ວັນທີ 1 ມັງກອນ ປີ ຄສ 1961, ຈາກນັ້ນກໍບຸກຕີປົດປ່ອຍແຂວງຫົວພັນ, ຜົ້ງສາລີ ແລະ ພາກສ່ວນໃຫຍ່ຂອງແຂວງຫຼວງພະບາງ ແລະ ບັນດາພາກກາງ ແລະ ພາກໃຕ້. ຮອດເດືອນ ພຶດສະພາ ປີ ຄສ 1961 ເຂດປົດປ່ອຍໄດ້ຕິດຈອດກັນແຕ່ເໜືອເຖິງໃຕ້ ກວມ 2/3 ຂອງເນື້ອທີ່ທົ່ວປະເທດ. ໄຊຊະ ນະດັ່ງກ່າວໄດ້ບີບບັງຄັບອາເມຣິກາ ແລະ ລູກມືຍອມເຈລະຈາ 3 ຝ່າຍທີ່ ຫີນເຫີບ ວັນທີ 3 ພຶດສະພາ ປີ ຄສ 1961 . ວັນທີ 16 ພຶດສະພາ ປີ ຄສ 1961 ໄດ້ເປີດກອງປະຊຸມສາກົນທີ່ເຊີແນວ (ປະເທດສະວິດ) ເພື່ອແກ້ໄຂບັນຫາລາວໂດຍມີ 14 ປະເທດເຂົ້າຮ່ວມ ຄື: ລາວ, ການາດາ, ກຳປູເຈຍ, ຈີນ, ໂຊວຽດ, ໄທ, ອັງກິດ, ອຽກລັງເໜືອ, ໂປໂລຍ, ພະມ້າ, ຫວຽດນາມໃຕ້, ສປຫວຽດນາມ, ອາເມຣິກາ ແລະ ອິນເດຍ. ມື້ຕໍ່ມາຄື ວັນທີ 17 ພຶດສະພາ ປີ ຄສ 1961 ໄດ້ເປີດກອງປະຊຸມ 3 ສະເດັດ (ເຈົ້າສຸພານຸວົງ, ເຈົ້າສຸວັນນະພູມາ ແລະ ບຸນອຸ້ມ) ຢູ່ທີ່ຊູຣິກ ປະເທດສະວິດ ກອງປະຊຸມນີ້ ໄດ້ຕົກລົງຈັດຕັ້ງລັດຖະບານ ປະສົມຊົ່ວຄາວຂຶ້ນ ໂດຍປະກອບດ້ວຍຜູ້ຕາງໜ້າຂອງ 3 ຝ່າຍຢ່າງສົມສ່ວນ. ມາຮອດວັນທີ 22 ມິຖຸນາ ປີ ຄສ 1962 ລັດຖະບານປະສົມຄັ້ງທີ 2 ໄດ້ຮັບຮອງຢ່າງເປັນທາງການ ແຕ່ຍັງບໍ່ທັນປະຕິບັດຕົວຈິງ ໄດ້ເທື່ອ.

ທ້າຍປີ ຄສ 1961 ລັດຖະບານລາຊະອານາຈັກລາວ ພາຍໃຕ້ການບັນຊາຂອງອາເມຣິກາ ໄດ້ ລວບລວມກຳລັງເປີດການໂຈມຕີເຂົ້າເຂດປົດປ່ອຍທາງພາກເໜືອຂອງລາວ ບຽດຢຶດເອົາ ຫຼວງນ້ຳທາ ເຊິ່ງເປັນເຂດທີ່ມີປະຊາຊົນໜາແໜ້ນ ແລະ ອຸດົມສົມບູນ. ກົນອຸບາຍຂອງພວກເຂົາ ແມ່ນຈະສ້າງບໍລິເວນ ນີ້ໃຫ້ເປັນກຸ່ມທີ່ຕັ້ງທີ່ເຂັ້ມແຂງ ເພື່ອຂົ່ມຂູ່ເຂດປົດປ່ອຍພາກເໜືອຂອງລາວ. ເລີ່ມແຕ່ຕົ້ນເດືອນ ກຸມພາ ປີ ຄສ 1962 ກຳລັງປະກອບອາວຸດປະຕິວັດ ໄດ້ເປີດບັ້ນຮົບບຸກໂຈມຕີແບບສາຍຟ້າແມບເຂົ້າ ໃສ່ທີ່ຕັ້ງ ຂອງສັດຕູຢູ່ຫຼວງນ້ຳທາ, ເຖິງວັນທີ 6 ພຶດສະພາ ປີ ຄສ 1962 ຢຶດເອົາທີ່ຕັ້ງຫຼວງນ້ຳທາໄດ້ ທັງໝົດ ແລະ ສືບຕໍ່ປົດປ່ອຍວຽງພູຄາ, ທ່າພະ, ເມືອງລອງ, ຊຽງກົກ....ຍ້ອນພວກເຂົາຖືກປະລາໄຊໜັກໜ່ວງ ຢ່າງຕໍ່ເນື່ອງໃນທຸກສະໜາມຮົບ ເປັນຕົ້ນແມ່ນບັ້ນຮົບຫຼວງນ້ຳທາ ແລະ ຍ້ອນຖືກທາງສົງກ່າວປະນາມ ຢ່າງແຂງແຮງຂອງພາຍໃນ ແລະ ຕ່າງປະເທດ,ຈັກກະພັດອາເມຣິກາ ແລະ ລູກມືຈຳຕ້ອງຍອມເຊັນ ສັນຍາເຊີແນວ ກ່ຽວກັບລາວ ໃນວັນທີ 23 ກໍລະກົດ ປີ ຄສ 1962 ຮັບຮູ້ຄວາມເປັນເອກະລາດ, ເປັນກາງ, ເອກະພາບ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລາວ. ຮັບຮູ້ລັດຖະບານປະສົມ ທີ່ໄດ້ສ້າງຕັ້ງຂຶ້ນໃນວັນທີ 12 ເດືອນ ມິຖຸນາ ປີ ຄສ 1962 ຕາມການຕົກລົງກອງປະຊຸມທັ້ງສາມຝ່າຍ (ຝ່າຍເປັນກາງ, ຝ່າຍວຽງຈັນ ແລະ ຝ່າຍແນວລາວຮັກຊາດ)

ມາເຖິງທ້າຍ ເດືອນ ມິຖຸນາ ປີ ຄສ 1963 ກຸ່ມຜຸຍ ຊະນະນິກອນ, ກຸປະສິດ ອະໄພ ໄດ້ໃຊ້ກຳລັງທະຫານ ຍຶດເອົາຄ້າຍທະຫານຈື່ນາຍໂມ້ ສົມທົບກັບກອງທະຫານຂອງ ພູມີ ໜໍ່ສະຫວັນ ກະກຽມການເຮັດລັດຖະປະຫານ ນາບຂູ່ລັດຖະບານປະສົມໂດຍສະເພາະນາບຂູ່ຝ່າຍກຳລັງຮັກຊາດ. ໃນຄືນວັນທີ 9 ເດືອນກັນຍາ ປີ ຄສ 1963 ພວກເຂົາໄດ້ໃຊ້ກອງທະຫານຮາບອາກາດຈຳນວນໜຶ່ງ, ລົດຫຸ້ມເກາະ, ລົດຕັ້ງເຂົ້າປິດລ້ອມ ແລະ ຍິງຖະຫຼຸ່ມເຂົ້າໃສ່ສຳນັກງານແນວລາວສ້າງຊາດ ໃນກາງຕົວເມືອງເມືອງວຽງຈັນ ເພື່ອເກາະຜິດກອງທະຫານຝ່າຍແນວລາວຮັກຊາດທີ່ເຂົ້າຮ່ວມ ຢູ່ວຽງຈັນ ຕາມສັນຍາ ແລະ ປິດລ້ອມເຮືອນພັກຂອງບັນດາລັດຖະມົນຕີ, ຮອງລັດຖະມົນຕີ, ພະນັກງານຝ່າຍ ແນວລາວ ຮັກຊາດ ແລະ ຝ່າຍເປັນກາງຈຳນວນໜຶ່ງ ການກະທຳຂອງອາເມຣິກາ ເປັນການລະເມີດສັນຍາເຊີແນວ ຢ່າງເປີດແປນ. ຈາກເຫດການດັ່ງກ່າວ ຜູ້ນຳແນວລາວຮັກຊາດ ຈຳຕ້ອງກັບຄືນສູ່ເຂດປົດປ່ອຍ ເຮັດໃຫ້ ລັດຖະບານປະສົມມີລັກສະນະອຳມະພາດ[56].

ພາຍຫຼັງ ລີນຄອນ ບີຈອນສັນ ຂຶ້ນເປັນປະທານາທິບໍດີ ສະຫະລັດອາເມຣິກາ ໃນວັນທີ 22 ພະຈິກ ປີ ຄສ 1963, ຈອນສັນ ກໍໄດ້ສືບຕໍ່ຂະຫຍາຍສົງຄາມໃນລາວ ໃຫ້ກາຍເປັນສົງຄາມພິເສດ ພວກເຂົາໄດ້ເພີ່ມທະວີການຊ່ວຍເຫຼືອລັດຖະບານລາຊະອານາຈັກ ທາງດ້ານເສດຖະກິດ, ການເງິນ, ການທະຫານ ເພື່ອຄວບຄຸມລາວຮອບດ້ານ. ທ້າຍປີ ຄສ 1963 ຈັກກະພັດອາເມຣິກາ ໄດ້ສົ່ງອາວຸດ ຍຸດທະພັນ ແລະ ອຸປະກອນສົງຄາມນັບເປັນໝື່ນໆໂຕນ ເຂົ້າມາລາວຢ່າງເປີດເຜີຍ, ການຊ່ວຍເຫຼືອໃນ ແຕ່ລະປີກໍເປັນກ້ອນເງິນທີ່ໃຫຍ່ທີ່ສຸດເຊິ່ງປະກອບດ້ວຍ: 50 ລ້ານໂດລາ ແມ່ນການຊ່ວຍເຫຼືອ ທາງ ດ້ານພົນລະເຮືອນ, 18 ລ້ານໂດລາ ແມ່ນການຊ່ວຍເຫຼືອຄ້ຳປະກັນເງິນກີບວຽງຈັນ ແລະ 300 ລ້ານ ໂດລາ ແມ່ນຊ່ວຍເຫຼືອທາງດ້ານການທະຫານ. ນອກນັ້ນຍັງຊ່ວຍເຫຼືອທາງລັບ ຫຼື ເອີ້ນວ່າ "ການຈັບຈ່າຍ ພິເສດ" ການຊ່ວຍເຫຼືອຂອງອາເມຣິກາກວມເຖິງ 95-97% ຂອງງົບປະມານຂອງອຳນາດການປົກຄອງ ທີ່ນິຍົມອາເມຣິກາຢູ່ໃນປະເທດລາວ.

ພາຍຫຼັງໄດ້ກະກຽມຮຽບຮ້ອຍແລ້ວ ໃນທ້າຍປີ ຄສ 1963 ສັດຕູໄດ້ລະດົມກຳລັງແຕ່ 10 ເຖິງ 30 ກອງພັນ ເພື່ອບຸກໂຈມຕີເຂົ້າເຂດບໍ່ເຫີນ (ທິດຕາເວັນອອກສ່ຽງເໜືອຂອງແຂວງຄຳມ່ວນ), ແຕ່ກຳ ລັງຮັກຊາດໄດ້ຕີຕ້ານຄືນ ແລະ ສາມາດບັງຄັບໃຫ້ສັດຕູຖອນຄືນ ໄປສູ່ຕົວເມືອງທ່າແຂກຄຽງຄູ່ກັນນັ້ນ ກຳລັງຮັກຊາດ ກໍໄດ້ໄຂບັ້ນຮົບຕໍ່ສູ້ຂັບໄລ່ກຳລັງຂອງ ພູມີໜໍ່ສະຫວັນ-ກອງແລ ແລະ ກຳລັງພິເສດ ຂອງວັງປາວໃຫ້ປາລາໄຊ ແລະ ແຕກໜີອອກຈາກເຂດທີ່ໝັ້ນຄັ່ງໄຊ, ໂພນສະຫວັນ, ຊຽງຂວາງ, ເມືອງຄຳ ແລະ ຈຸດຕ່າງໆອີກ. ໃນບັ້ນຮົບໃຫຍ່ຄັ້ງນີ້ຝ່າຍກາງກອງແລ ຍັງຮັກສາໄດ້ຈຸດສຳຄັນພຽງແຕ່ທ່າ ໂທມເທົ່ານັ້ນ. ນອກນັ້ນ, ຢູ່ໃຕ້ການຄວບຄຸມຂອງຝ່າຍແນວລາວຮັກຊາດ ແລະ ຝ່າຍທີ່ຮັກຊາດທັງໝົດ. ແຜນການຫວັງດັບສູນກຳລັງເປັນກາງຂອງ ທ່ານເດືອນ, ກອງສີ, ທຽບ ແມ່ນບໍ່ໄດ້ຮັບຜົນສຳເລັດກຳລັງ ດັ່ງກ່າວພັດໄດ້ຮັບການປັບປຸງ ແລະ ນັບມື້ນັບທັນເຂົ້າຮ່ວມສຳພັນກັບກຳລັງ ແນວລາວຮັກຊາດຢ່າງ ແໜ້ນແຟ້ນເຮັດໃຫ້ກຳລັງຮັກຊາດ ໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງຈາກປະຊາຊົນພາຍໃນ ແລະ ຕ່າງປະເທດ.

ນັບແຕ່ເດືອນພຶດສະພາ ປີ ຄສ 1964 ອາເມລິກາ ເລີ່ມໃຊ້ຍົນຍິງທຳລາຍເຂດປົດປ່ອຍ, ທ້າຍປີ ຄສ 1964 ພວກເຂົາໄດ້ເປີດບັ້ນຮົບ "ສາມສອນ" ເພື່ອຕີເຂົ້າທົ່ງໄຫຫີນ ແລະ "ສອນໄຊ1" ເພື່ອຕີເຂົ້າເສັ້ນທາງເລກ 9 ບຸກຢຶດເອົາເຂດປົດປ່ອຍພາກກາງຂອງລາວ ເພື່ອເຮັດໃຫ້ສະໜາມຮົບຕິດ ກັບສະໜາມຮົບພາກໃຕ້ຫວຽດນາມ. ນັບແຕ່ທ້າຍປີ ຄສ 1965-1968 ພວກເຂົາໄດ້ເປີດບັ້ນຮົບ ສອນໄຊ2, ບັ້ນຮົບ"ມັ່ງກອນ", ບັ້ນຮົບ "ໂຄດຕະບອງ" ບຸກຕີເຂົ້າເຂດປົດປ່ອຍພາກກາງ ແລະ ພາກໃຕ້ ພ້ອມນັ້ນພວກເຂົາຍັງເປີດບັ້ນຮົບ "ທະນົງກຽດ" ບຽດຢຶດພູກູດຈອມເຫຼັກ,... ທຸກໆ ການໂຈມຕີເຂົ້າ

[56] ເດຊາບຸລາດ ແສນດວງເດດ, 2005: 30-31)

ເຂດປົດປ່ອຍຫຼາຍບັ້ນແຕ່ ປີ ຄສ 1964-1968 ລ້ວນແຕ່ຖືກກອງທັບ ແລະ ປະຊາຊົນເຮົາຕີຕ້ານດ້ວຍ ຄວາມເດັດດ່ຽວໜຽວແໜ້ນ.

ວັນທີ 20 ມັງກອນ ປີ ຄສ 1969 ຣິຊາດ ນິກສັນ ຂຶ້ນເປັນປະທານາທິບໍດີ ສະຫະລັດອາເມຣິກາ ຕໍ່ກັບລາວເຮົາໄດ້ເຮັດໃຫ້ສົງຄາມພິເສດ ກາຍເປັນສົງຄາມພິເສດເພີ່ມທະວີ ດ້ວຍການເຂົ້າຮ່ວມນັບ ມື້ນັບຫຼາຍຂຶ້ນຂອງກອງທັບອາກາດອາເມຣິກາ ແລະ ລູກມື, ເປີດກວ້າງສົງຄາມອອກໄປທົ່ວອິນດູຈີນ, ເນື້ອແທ້ຂອງມັນ ແມ່ນເຮັດໃຫ້ສົງຄາມກາຍເປັນຂອງຄົນອິນດູຈີນ ຄື: "ໃຊ້ຄົນລາວຂ້າຄົນລາວ, ໃຊ້ຄົນ ອິນດູຈີນຂ້າຄົນອິນຈີນ". ຢູ່ລາວ ເຖິງເດືອນ ມີຖຸນາ ປີ ຄສ 1970, ຈັກກະພັດອາເມຣິກາຍັງສືບຕໍ່ເປີດ ບັ້ນຮົບຕໍ່ເນື່ອງກັນ ເຊັ່ນ: "ບັ້ນຮົບກັນຍາກຸງດ", ໃຊ້ 7 ກອງພັນຕີເຂົ້າທາງເມືອງພິນ, ຕາດໄຮ; "ບັ້ນຮົບ ສາມັກຄີ" ໃຊ້ 5 ກອງພັນມີທະຫານມ້າໄທ 1 ກອງພັນ ຕີເຂົ້າທິດຕາເວັນອອກສຽງໃຕ້ແຂວງ ວຽງຈັນ; "ບັ້ນຮົບທະນົງກຸງດ" ໃຊ້ 28 ກອງພັນຕີສຸມເຂົ້າໃສ່ແຂວງຊຽງຂວາງ; "ບັ້ນຮົບມັງກອນ", ໃຊ້ 11 ກອງພັນ ບຸກເຂົ້າບໍລິເວນປາກຊ່ອງ-ຍະເຟົ; "ບັ້ນຮົບຊີງໄຊ" ແລະ "ບັ້ນຮົບໄຊຍະວົງ" ໃຊ້ 6 ກອງພັນ ບຸກຕີ ຕາມແຖບລ່ອງແມ່ນ້ຳງຶມ-ພູເຂົາຄວາຍ ແລະ ອື່ນໆ . ແຕ່ເດືອນເມສາ ເຖິງເດືອນ ມີຖຸນາ ປີ ຄສ 1970 ກອງທັບປະຕິວັດສືບຕໍ່ປົດປ່ອຍປາກທາ, ຕັ້ງຫວາຍ, ຕົວເມືອງອັດຕະປື, ສາລະວັນ, ບ້ານໂຄກ, ເຮັດໃຫ້ ອາເມຣິກາ ສູນເສຍພື້ນທີ່ສຳຄັນໃນການຄວບຄຸມພູພຽງບໍລິເວນ ແລະ ຄວບຄຸມເສັ້ນ ທາງຕາມຊາຍ ແດນສາມປະເທດລາວ-ຫວຽດນາມ-ກຳປູເຈຍ.


ນັບແຕ່ ປີ ຄສ 1970-1972 ອາເມຣິກາ ໄດ້ເປີດບັ້ນຮົບຫຼາຍບັ້ນໃນປະເທດລາວ ເຊັ່ນ: ໄດ້ບຸກຕີເຂົ້າປາກຊ໋ອງ (ຫຼວງພະບາງ), ເມືອງພິນ (ສະຫວັນນະເຂດ) ແລະ ອັດຕະປື ຫວັງຢຶດເອົາທີ່ຕັ້ງ ທີ່ເສຍໄປນັ້ນຄືນ ແຕ່ພວກເຂົາໄດ້ຖືກກອງທັບ ແລະ ປະຊາຊົນລາວຕີໃຫ້ລ່າຖອຍໄປເຮັດໃຫ້ພວກເຂົາ ບໍ່ສາມາດເອົາໄຊຊະນະຝ່າຍແນວລາວຮັກຊາດໄດ້. ເດືອນກຸມພາ ປີ ຄສ 1971 ຈັກກະພັດອາເມຣິກາ ໄດ້ເປີດບັ້ນຮົບຄັ້ງໃໝ່ ທີ່ໃສ່ຊື່ວ່າ "ລາມເຊີນ 719" ຕີເຂົ້າບໍລິເວນເສັ້ນທາງເລກ 9 ໂດຍໃຊ້ກຳລັງ ທະຫານຫຼວງຂອງພວກຫຸ່ນໄຊ່ອນເປັນຫຼັກມີການສົມທົບຂອງກອງທະຫານຫຸ່ນລາວ ແລະ ການຊ່ວຍ ໜູນຢ່າງແຂງແຮງຂອງທະຫານລາບ ແລະ ກອງທະຫານອາກາດອາເມຣິກາ. ໃນບັ້ນຮົບນີ້ ພວກເຂົາ ໃຊ້ກຳລັງທະຫານເຖິງ 45.000 ຄົນພ້ອມດ້ວຍປືນໃຫຍ່ 3.000 ກະບອກ, ລົດຕັງ ແລະ ຍານເກາະ ຕ່າງໆ 1.100 ຄັນ, ເຮືອບິນສູ້ຮົບຊະນິດຕ່າງໆຂອງອາເມຣິກາ 1.500 ລຳ. ຜ່ານການສູ້ຮົບຢ່າງພິລະອາດ ຫານຕະຫຼອດ 43 ວັນ ແລະ ຄືນ, ກອງທັບ ແລະ ປະຊາຊົນລາວ ໄດ້ມີການປະສານສົມທົບກັບກອງທັບ ແລະ ປະຊາຊົນຫວຽດນາມ ໄດ້ທັບມ້າງບັ້ນຮົບ "ລາມເຊີນ 719" ຂອງ ພວກເຂົາແຕກກະທະລາຍໄປ. ສົມທົບກັບບັ້ນຮົບຕີສັດຕູຢູ່ທາງເລກ 9 ພາກໃຕ້ລາວ, ວັນທີ 13 ກຸມພາ ປີ ຄສ 1971 ກອງທະຫານ ປະຕິວັດຢູ່ຊຽງຂວາງໄດ້ບຸກຕີຖານທີ່ໝັ້ນກອງປຸ້ນວາງປາວ ຢູ່ຊຳທອງ-ລ່ອງແຈ້ງ; ວັນທີ 10 ມີນາ ກອງທະຫານປະຕິວັດສ້າງເຂດທີ່ໝັ້ນຍຸດທະສາດຢູ່ພາກໃຕ້ລາວ. ເດືອນ ມີນາ ປີ ຄສ 1971 ຈັກກະພັດ ອາເມຣິກາ ແລະ ລູກມືໄດ້ລວບລວມກຳລັງພິເສດວາງປາວ ແລະ ທະຫານໄທເລວຣັບຈ້າງເຖິງ 33 ກອງພັນ, ເປີດບັ້ນບຸກໂຈມຕີບຽດຢຶດເຂົ້າທົ່ງໄຫຫີນ, ເມືອງສຸຍ (ຊຽງຂວາງ). ແຕ່ພວກເຂົາຖືກກອງທັບ ແລະ ປະຊາຊົນລາວຕ້ານຄືນຢ່າງເດັດດ່ຽວ. ດ້ວຍການສູ້ຮົບ ອັນພິລາດອາດຫານ ເຖິງ ວັນທີ 5 ເມສາ ປີ ຄສ 1972 ກຳລັງປະຕິວັດຍາດໄດ້ ໄຊຊະນະອັນໃຫຍ່ຫຼວງ, ກູ້ເອົາເຂດທົ່ງໄຫຫີນຊຽງຂວາງ, ເມືອງສຸຍທັງໝົດຄືນມາ ແລະ ປົດປ່ອຍເຂດຊຳທອງໄດ້ຕື່ມ. ພ້ອມໆກັບໄຊຊະນະທົ່ງໄຫຫີນ ແລະ ຊຳທອງນັ້ນ, ກອງທັບ ແລະ ປະຊາຊົນລາວໄດ້ທັບມ້າງບັ້ນບຸກໂຈມຕີ ບຽດຢຶດຄັ້ງໃໝ່ຂອງທະຫານ ຫຸ່ນລາວ ແລະ ທະຫານໄທເລວຣັບ ຈ້າງເຂົ້າເຂດອັດຕະປື, ສາລະວັນ ແລະພູພຽງບໍລິເວນ. ປົກປັກ ຮັກສາເຂດປົດປ່ອຍພາກໃຕ້ລາວ, ທັງຮັກສາເສັ້ນທາງຍຸດທະສາດ "ໂຮ່ຈິມິນ" ໄວ້ໄດ້. ການປົກປັກ ຮັກສານີ້ ເປັນການປະຕິບັດພັນທະສາກົນອັນມີກຽດສະຫງ່າ ຂອງປະຊາຊົນລາວຕໍ່ການປະຕິວັດຂອງ ປະຊາຊົນສອງປະເທດຫວຽດນາມ.

ຜ່ານການຕໍ່ສູ້ຢ່າງດຸເດືອດຊັ້ງຊາດ ໄດ້ເຮັດໃຫ້ສົງຄາມພິເສດເພີ່ມທະວີຕາມທິດສະດີນິກເຊິນ ປາລາໄຊບາດກ້າວໜຶ່ງທີ່ສຳຄັນ. ກຳລັງປະຕິວັດໄດ້ເຕີບໃຫຍ່ຂະຫຍາຍຕົວຕື່ມອີກ, ເຂດປົດປ່ອຍ ໄດ້ຮັບການປົກປັກຮັກສາ ແລະ ເປີດກ້ວາງຕິດຈອດກັນແຕ່ເໜືອເຖິງໃຕ້ກາຍເອົາເຂດຍຸດທະສາດ ທີ່ ສຳຄັນຕ່າງໆ ພ້ອມທັ້ງໄດ້ຮັບການກໍ່ສ້າງໃນທຸກດ້ານເປັນຄືລັດໜຶ່ງ. ເພື່ອເຮັດໃຫ້ການ ຕໍ່ສູ້ກູ້ຊາດຕ້ານ ຈັກກະພັດອາເມລິກາ ຂອງປະຊາຊົນລາວ ກ້າວຂຶ້ນຍາດເອົາໄຊຊະນະໃໝ່ ທີ່ມີລັກສະນະຕັດສິນນັ້ນ, ກອງປະຊຸມໃຫຍ່ຄັ້ງທີ II ຂອງພັກ ໄດ້ໄຂຂຶ້ນໃນວັນທີ 3 ກຸມພາ ປີ ຄສ 1972 ທີ່ເມືອງວຽງໄຊແຂວງຫົວ ພັນ ມີຈຳນວນຜູ້ແທນເຂົ້າຮ່ວມ 125 ສະຫາຍທີ່ຕາງໜ້າສະມາຊິກພັກສອງໝື່ນກວ່າຄົນໃນທົ່ວປະເທດ.

ຄຽງຄູ່ກັບການຕໍ່ສູ້ ດ້ວຍກຳລັງປະກອບອາວຸດໃນສະໜາມຮົບຕ່າງໆນັ້ນ. ກຳລັງປະຕິວັດໄດ້ບຸກ ໂຈມຕີສັດຕູທາງດ້ານການເມືອງອີກ. ຍ້ອນຖືກປາລາໄຊຢ່າງລຸນຕິດຝ່າຍວຽງຈັນ ຈຳຕ້ອງຍອມເຈ ລະຈາກັບຝ່າຍແນວລາວຮັກຊາດທີ່ວຽງຈັນ ແລະ ໄດ້ຮັບການລົງນາມ ໃນສັນຍາວ່າດ້ວຍການຟື້ນຟູ ສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຂອງຊາດລາວເຮົາ ໃນວັນ ທີ 21 ກຸມພາ ປີ ຄສ 1973. ສັນຍານີ້ໄດ້ກຳນົດໃຫ້ຢຸດຕິສົງຄາມ, ເຮັດໃຫ້ວຽງຈັນ ແລະ ຫຼວງພະບາງເປັນນະຄອນກາງ, ຕົກລົງສ້າງຕັ້ງລັດຖະບານປະສົມຊື່ວ່າລາວ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ. ໃນວັນທີ 20 ສິງຫາ ປີ ຄສ 1973 ກຸ່ມຂວາຈັດ ໄດ້ກໍ່ລັດຖະປະຫານຂຶ້ນເພື່ອໂຄ່ນລົ້ມລັດຖະບານ ແລະ ລົບລ້າງສັນຍາວຽງຈັນ ແຕ່ກໍ່ບໍ່ສຳເລັດ. ການເຈລະຈາໄດ້ສືບຕໍ່, ມາຮອດວັນທີ 14 ກັນຍາ ປີ ຄສ 1973 ອະນຸສັນຍາກໍໄດ້ຮັບການລົງນາມ. ຈາກນັ້ນກໍ່ໄດ້ສ້າງຕັ້ງຄະນະປະສົມສູນກາງ ເພື່ອປະຕິບັດສັນຍາ, ຈັດຕັ້ງກອງທະຫານປະສົມ ແລະ ຕຳຫຼວດປະສົມຢູ່ສອງຕົວເມືອງເປັນກາງ (ວຽງຈັນ ແລະ ຫຼວງພະບາງ). ມາຮອດວັນທີ 5 ເດືອນ 4 ປີ ຄສ 1974 ລັດຖະບານປະສົມຊື່ວ່າລາວໂດຍແມ່ນ ເຈົ້າສຸວັນນະພູມມາ ເປັນນາຍົກ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ ໂດຍແມ່ນ ເຈົ້າສຸພານຸວົງ ເປັນປະທານ ກໍໄດ້ຮັບການສ້າງຕັ້ງຂຶ້ນ.

1.3.3.3 ການຢຶດອຳນາດ ປີ ຄສ 1975

ນັບແຕ່ນັ້ນມາ ຂະບວນການຕໍ່ສູ້ຂອງປະຊາຊົນລາວ ໄດ້ເປັນກະແສຟອງຟົດຟື້ນໃນທົ່ວ ປະເທດ ໃນວັນທີ 24 ທັນວາ ປີ ຄສ 1974 ປະຊາຊົນ ແລະ ທະຫານຝ່າຍຂວາກອງໜຶ່ງທີ່ເມືອງ ຫ້ວຍ ຊາຍ ໄດ້ລຸກຂຶ້ນປະກາດແຍກຕົວຈາກຝ່າຍວຽງຈັນ. ຕໍ່ມາວັນທີ 6 ມັງກອນ ປີ ຄສ 1975 ປະຊາຊົນ ເຂດໜອງບົກ ແຂວງຄຳມ່ວນ ກໍໄດ້ລຸກຮືຂຶ້ນຕໍ່ສູ້. ມາເຖິງເດືອນກຸມພາ ປີ ຄສ 1975 ການເດີນ ຂະບວນປະທ້ວງສະແດງກຳລັງ, ການໂຮມຊຸມນຸມມິດຕິງ, ການລຸກຮືຂຶ້ນຍາດເອົາສິດເປັນເຈົ້າຂອງ ມວນຊົນ ແລະ ການແຍກຕົວຂອງພວກນາຍ ແລະ ພົນທະຫານທີ່ຮັກຊາດຝ່າຍຂວາ ໄດ້ລະເບີດ ຂຶ້ນເກືອບທຸກທ້ອງຖິ່ນ. ດັ່ງນັ້ນ, ສູນກາງພັກໄດ້ວາງມະຕິ ກ່ຽວກັບ ການຢຶດອຳນາດອອກໂດຍໃຊ້ 3 ບາດຄ້ອນຍຸດທະສາດ ເຊັ່ນ: ບາດຄ້ອນທີ 1 ການລຸກຮືຂຶ້ນຢຶດອຳນາດການປົກຄອງຂອງມະຫາຊົນ, ບາດຄ້ອນທີ 2 ກອງທະຫານຂອງຝ່າຍຂວາ ແຍກຕົວອອກແລ້ວຮ່ວມມືກັບບັນດາກຳລັງຮັກຊາດ, ບາດຄ້ອນທີ 3 ໃຊ້ກຳລັງຂອງບັນດາກຳລັງປະກອບອາວຸດຮັກຊາດ ເປັນກຳລັງໜູນໜ່ວຍ (ຄະນະຊີ້ນຳ ຄົ້ນຄວ້າທິດສະດີ ແລະ ພຶດຕິກຳສູນກາງພັກ, ປີ ຄສ 1997:194)



ຮູບທີ 20 :ການເຕົ້າໂຮມຊຸມນຸມຂອງປະຊາຊົນລາວໃນການຢຶດອຳນາດທີ່ ນະຄອນຫຼວງວຽງຈັນ ວັນທີ 23 ສິງຫາ ປີ ຄສ 1975

ວັນທີ 23 ເດືອນ ສິງຫາ ປີ ຄສ 1975 ພິທີຢຶດອຳນາດບ່ອນສຸດທ້າຍ ໄດ້ໄຂຂຶ້ນທີ່ນະຄອນຫຼວງວຽງຈັນ ທ່າມກາງຊຸມນຸມຊົນ 2 ໝື່ນກວ່າຄົນ ໝາຍວ່າອຳນາດການປົກຄອງປະຕິການໄດ້ຖືກໂຄ່ນລົ້ມຢ່າງສິ້ນເຊີງ ແລະ ຕະຫຼອດການ.

1.4 ປະຫວັດສາດລາວສະໄໝປະຈຸບັນ

1.4.1 ການສ້າງຕັ້ງ ສປປ ລາວ

ພາຍຫຼັງໄດ້ມີການເລືອກຕັ້ງສະພາປະຊາຊົນ ແລະ ຄະນະກຳມະການທຸກຂັ້ນແລ້ວ, ມາຮອດ ວັນທີ 1-2 ເດືອນ ທັນວາ ປີ ຄສ 1975 ບັນດາຜູ້ຕ່າງໜ້າຂອງຜູ້ແທນປະຊາຊົນເຂດແຂວງໃນທົ່ວ ປະເທດ ໄດ້ໄຂກອງປະຊຸມຂຶ້ນທີ່ນະຄອນຫຼວງວຽງຈັນ. ກອງປະຊຸມໄດ້ຮັບຮອງໃບລາອອກລາຊະ ບັນລັງຂອງເຈົ້າຊີວິດ ສີສະຫວ່າງ ວັດທະນາ, ປະກາດຫຍຸບລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ, ລົ້ມລະຕີຮັບຮອງເອົາທຸງຊາດ, ເນື້ອຮ້ອງເພງຊາດໃໝ່, ພາສາສາດ ແລະ ປະກາດເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ແຕ່ງຕັ້ງ ເຈົ້າສຸພານຸວົງ ເປັນປະທານປະເທດ, ແຕ່ງຕັ້ງລັດຖະບານ ໂດຍແມ່ນທ່ານ ໄກສອນ ພົມວິຫານ ເປັນ ນາຍົກລັດຖະມົນຕີ, ແຕ່ງຕັ້ງສະພາປະຊາຊົນສູງສຸດໂດຍແມ່ນ ເຈົ້າ ສຸພານຸວົງ ເປັນປະທານ ແລະ ຜ່ານມະຕິອື່ນໆ ຈຳນວນໜຶ່ງອີກ.



ທ່ານ ສຸພານຸວົງ

ຮູບທີ 21: ທ່ານ ສຸພານຸວົງ
ປະທານປະເທດຄົນທຳອິດ ຂອງ ສປປ ລາວ



ທ່ານ ໄກສອນ ພົມວິຫານ

ຮູບທີ 22: ທ່ານ ໄກສອນ ພົມວິຫານ
ນາຍົກລັດຖະມົນຕີຄົນທຳອິດ ຂອງ ສປປ ລາວ

1.4.2 ການປົກປັກຮັກສາ ແລະ ສ້າງສາປະເທດຊາດ

ພາຍຫຼັງປະເທດຊາດ ໄດ້ຮັບການສະຖາປານາເປັນ ສປປ ລາວ ໃນປີ ຄສ 1975 ແລ້ວ, ຈຸດໝາຍຂອງປະເທດເຮົາ ແມ່ນກ້າວເດີນຕາມເສັ້ນທາງສັງຄົມນິຍົມ ເຊິ່ງເຮັດໃຫ້ລາວກາຍເປັນເປົ້າໝາຍໃນການມ້າງເພທຳລາຍຂອງຈັກກະພັດ ແລະ ພວກປະຕິການອື່ນໆ ທັງພາຍໃນ ແລະ ຕ່າງປະເທດ. ສຳລັບຈັກກະພັດອາເມລິກາ ພາຍຫຼັງປາລາໄຊ ແລະ ອອກຈາກລາວໄປແລ້ວ, ບໍ່ສາມາດໃຊ້ກຳລັງອັນໃຫຍ່ຫຼວງບຸກໂຈມຕີຢ່າງເປີດແປນຄືແຕ່ກ່ອນ ແຕ່ພວກເຂົາບໍ່ຍອມລົດລະຄວາມພະຍາຍາມມ້າງເພທຳລາຍລະບອບໃໝ່ໃຫ້ຕາຍຄາຮູ້ໂດຍການໃຊ້ເລ່ລ່ຽມອັນເລິກແລບ ແລະ ໂຫດຮ້າຍຫຼາຍປະການ. ພວກເຂົາໃຊ້ດິນໄຫເປັນແປັນຢັນ ສົ່ງພວກລູກມືກັບຄືນມາ ເພື່ອຟື້ນຟູຮາກຖານປະຕິການໃຕ້ດິນ, ກໍ່ຄວາມອຸ້ນວາຍມ້າງເພທຳລາຍ, ເຮັດໃຫ້ປະຊາຊົນໃນບາງບໍລິເວນ ບໍ່ມີຄວາມສະຫງົບໃນການທຳມາຫາກິນ, ດຳລົງຊີວິດ. ພວກເຂົາໄດ້ຕັ້ງໜ້າດຳເນີນສົງຄາມນັກສືບສອດແນມ, ສົງຄາມຈິດຕະສາດ, ໄດ້ຍົວະເຍົ້າແກ່ດຶງປະຊາຊົນ, ຫວັງແຍກປະຊາຊົນອອກຫ່າງການປະຕິວັດ, ແບ່ງແຍກພາຍໃນປະຊາຊົນລາວບັນດາເຜົ່າ, ແບ່ງແຍກປະເທດລາວກັບບັນດາປະເທດອ້າຍນ້ອງ ເປັນຕົ້ນແມ່ນແບ່ງແຍກລາວກັບ ຫວຽດນາມ, ທັງນີ້ແມ່ນແນໃສ່ປະຕິບັດເຈດຈຳນົງອັນມືດມົນຍາວນານຂອງພວກເຂົາ. ພວກເຂົາໄດ້ມ້າງເພທຳລາຍ ແລະ ປິດລ້ອມທາງດ້ານເສດຖະກິດ, ຫວັງເຮັດໃຫ້ການຄອງຊີບຂອງປະຊາຊົນຝືດເຄືອງອຸ້ນວາຍ, ເຮັດໃຫ້ປະຊາຊົນຂາດຄວາມເຊື່ອໝັ້ນຕໍ່ອຳນາດການປົກຄອງໃໝ່.

ຕໍ່ໜ້າສະພາບບັນຫາດັ່ງກ່າວການປົກປັກຮັກສາແລະສ້າງສາປະເທດຊາດໄດ້ເປັນ2ໜ້າທີ່ຍຸດທະສາດທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້. ເພື່ອປົກປັກຮັກສາລະບອບໃໝ່, ປົກປັກຮັກສາ ໝາກຜົນຂອງການປະຕິວັດມະຕິກອງປະຊຸມຄະນະບໍລິຫານງານສູນກາງພັກຄັ້ງທີ 3 (ສະໄໝທີສອງ) ໄດ້ວາງທິດທາງໜ້າທີ່ສະເພາະໜ້າຂອງການປະຕິວັດອອກຄື: "...ເພີ່ມທະວີຄວາມສາມັກຄີທົ່ວປວງຊົນທັງຊາດ, ສາມັກຄີບັນດາເຜົ່າບົນພື້ນຖານພັນທະພາບກຳມະກອນ-ຊາວນາ ໃຕ້ການນຳພາຂອງພັກ, ເສີມຂະຫຍາຍຖ່ວງທ່າບຸກ, ອອກແຮງເພີ່ມທະວີກຳລັງປະຕິວັດໃນທຸກດ້ານ, ອອກແຮງປັບປຸງອຳນາດການປົກຄອງປະຕິວັດໃຫ້ເຂັ້ມແຂງ, ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບຂອງບ້ານເມືອງໃຫ້ໝັ້ນຄົງ, ຜາບແພ້ທຸກການຮຸບາຍຕ່າງໂຈມຕີຂອງສັດຕູ, ອອກແຮງເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນເປັນປົກກະຕິ ແລະ ປົວແປງໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງໃນທຸກດ້ານ ແລະ ອື່ນໆສ້າງປະເທດລາວຕາມຄຳຂວັນສັນຕິພາບ, ເອກະລາດ, ປະຊາທິໄຕ, ເອກະພາບ ແລະ ສັງຄົມນິຍົມຕໍ່ມາ ມະຕິກອງປະຊຸມຄະນະບໍລິຫານງານສູນກາງພັກຄັ້ງທີ 4, ສະໄໝທີ II (ກຸມພາ 1977) ໄດ້ວາງທິດທາງໜ້າທີ່ຂອງການປະຕິວັດລາວໃນໄລຍະໃໝ່ຄື: "....ເພີ່ມທະວີຄວາມສາມັກຄີປວງຊົນ, ສາມັກຄີບັນດາເຜົ່າ, ກຳແໜ້ນ ແລະ ເພີ່ມທະວີຜະເດັດການກຳມະຊີບ, ປະຕິບັດ ແລະ ເສີມຂະຫຍາຍສິດເປັນເຈົ້າລວມໝູ່ຂອງປະຊາຊົນຜູ້ອອກແຮງງານ, ດຳເນີນການປະຕິວັດທັງ 3 ປະການໄປ ພ້ອມໆກັນ: ການປະຕິວັດທາງດ້ານການພົວພັນແຫ່ງການຜະລິດ, ການປະຕິວັດທາງດ້ານວິທະຍາສາດ-ເຕັກນິກ, ການປະຕິວັດທາງດ້ານແນວຄິດວັດທະນະທຳ. ໃນນັ້ນເອົາການປະຕິວັດທາງດ້ານເຕັກນິກເປັນຂໍ້ກຸນແຈຕົ້ນຕໍ ແລະ ເອົາການປະຕິວັດທາງດ້ານແນວຄິດ ແລະ ວັດທະນະທຳໄປກ່ອນ. ເຖິງວ່າສັດຕູຈະບຸກຕີໃສ່ ສປປ ລາວ ຢ່າງເບື່ອງນິດລຽນຕິດ ແລະ ຮອບດ້ານກໍຕາມ, ແຕ່ວ່າກອງທັບ ແລະ ປະຊາຊົນລາວກໍ່ໄດ້ເດັດດ່ຽວສາມັກຄີກັນຕໍ່ສູ້ຕີຢ່າງອົງອາດກ້າແກ່ນ. ສປປ ລາວ ໄດ້ສາມາດ ດຳລົງຄົງຕົວຢູ່ໄດ້ຢ່າງໝັ້ນຄົງ ແລະ ການປະຕິວັດລາວໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍແລ້ວ,ໜ້າທີ່ອັນຮີບດ່ວນຂອງພັກແລະລັດຖະບານອັນໜຶ່ງ ແມ່ນຕ້ອງໄດ້ອອກແຮງຟື້ນຟູ ແລະ ຂະຫຍາຍເສດຖະກິດ, ຂະຫຍາຍວັດທະນະທຳ, ຮໍາຮາດແຜສົງຄາມ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນເປັນປົກກະຕິ. ອຳນາດການປົກຄອງໃໝ່ ຖືວ່າ ໜ້າ

ທີ່ປະຕິວັດທາງດ້ານເສດຖະກິດການເງິນແມ່ນໃຫຍ່ຫຼວງ, ສັບສົນຫຍຸ້ງຍາກທີ່ສຸດ ຍ້ອນວ່າພື້ນຖານເສດຖະກິດຂອງລາວຍັງຫຼ້າຫຼັງໂພດ. ດັ່ງນັ້ນ, ຈຶ່ງໄດ້ປຸກລະດົມທົ່ວປວງຊົນຊຸກຍູ້ການຜະລິດ, ຟື້ນຟູ ແລະ ຂະຫຍາຍເສດຖະກິດ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າເປັນປົກກະຕິ ແລະ ໄດ້ຮັບການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ. ຂະຫຍາຍລັກສະນະອັນດີງາມທາງດ້ານວັດທະນະທຳທີ່ເປັນມູນເຊື້ອຂອງຊາດ, ກໍ່ສ້າງວັດທະນະທຳການສຶກສາ, ສາທາລະນະສຸກແຫ່ງຊາດ, ປະຊາທິປະໄຕ ແລະ ກ້າວໜ້າ.

ຕັ້ງແຕ່ປີຄສ1975ເປັນຕົ້ນມາອຳນາດການປົກຄອງໃໝ່ໄດ້ລະດົມຂົນຂວາຍແລະຈັດຕັ້ງນຳພາປະຊາຊົນທັງໃນຊົນນະບົດ ແລະ ຕົວເມືອງ, ບັນດາກຳລັງປະກອບອາວຸດສຳນັກງານອົງການ ແລະ ກຳລັງອື່ນໆ ສຸມເຂົ້າໃນການຊຸກຍູ້ການຜະລິດກະສິກຳຢ່າງແຂງແຮງ, ຂະຫຍາຍຊົນລະປະທານ ຟື້ນຟູນາເຮື້ອເປີດກວ້າງເນື້ອທີ່ນາໃໝ່, ເຮັດນາສອງລະດູ, ເພີ່ມທະວີການໃສ່ຝຸ່ນ, ເລືອກແນວເຂົ້າ ປູກຊຸກຍູ້ການລ້ຽງສັດ, ປູກຝັງ, ຕົ້ນໄມ້ກິນໝາກ ແລະ ອື່ນໆ ເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ. ແນໃສ່ການແກ້ບັນຫາອັນຮີບດ່ວນໃນຊີວິດການເປັນຢູ່ຂອງປະຊາຊົນ ແລະ ສ້າງພື້ນ ຖານໃຫ້ການຫັນ ປະເທດເປັນອຸດສາຫະກຳເທື່ອລະກ້າວ. ໃນໄລຍະຜ່ານມາ, ຊາວໄຮ່ນາບັນດາເຜົ່າສາມາດຍາດເອົາ ໄຊຊະນະໃນການຜະລິດເຂົ້າໄດ້ 700.000 ໂຕນ. ດ້ານອຸດສາຫະກຳ, ໂຮງຈັກໂຮງງານອຸດສາຫະກຳ ເກົ່າຫຼາຍແຫ່ງໄດ້ຮັບການຟື້ນຟູແລະຮັກສາລະດັບການຜະລິດຢ່າງເປັນປົກກະຕິ,ພ້ອມກັນນັ້ນກໍ່ໄດ້ຂະ ຫຍາຍຮາກຖານໃໝ່ຕື່ມຈຳນວນໜຶ່ງ ແລະ ໄດ້ເຮັດໃຫ້ການເຄື່ອນໄຫວຂອງອຸດສາຫະກຳເລີ່ມເຂົ້າຮັບ ໃຊ້ການຜະລິດທາງດ້ານກະສິກຳ. ບັນດາໂຮງງານຈຸດໜັກທີ່ສູນກາງຊຶ່ນຳລວມສູນນັ້ນໄດ້ມີໂຮງງານ ຜະລິດເກືອບ້ານບໍ່-ບ້ານເກິນ (ວຽງຈັນ), ໂຮງງານຜະລິດເຄື່ອງມືກະສິກຳ, ບັນດາໂຮງງານຕ່ຳແຜ່ນ, ຕົ້ນເຫຼົ້າ, ເຄື່ອງປະລາສະຕິກ.... ການຜະລິດແຮ່ກໍ່ວກໍໄດ້ຮັບການເອົາໃຈໃສ່ຟື້ນຟູເຊັ່ນດຽວກັນ, ການຈັດຕັ້ງຟື້ນຟູຊຸດຄົ້ນໄມ້. ນອກນັ້ນຍັງໄດ້ຂະຫຍາຍໂຮງງານໃໝ່ຈຳນວນໜຶ່ງເຊັ່ນໂຮງງານປຸງແຕ່ງ ອາຫານສັດ, ໂຮງງານຜະລິດຢາອັກແຊງ.

ດ້ານຄົມມະນາຄົມ ຮັກສາການຄົມມະນາຄົມທາງບົກ, ທາງນ້ຳ ແລະ ທາງອາກາດ, ຮັບປະ ກັນໃຫ້ແກ່ການແລກປ່ຽນຈໍລະຈອນສິນຄ້າ ແລະ ການໄປມາຂອງປະຊາຊົນໄດ້ສະດວກກວ່າເກົ່າ, ໄດ້ ສຸມກຳລັງສ້າງເສັ້ນທາງຈຳນວນໜຶ່ງອອກສູ່ທະເລໂດຍຜ່ານຫວຽດນາມ, ໄດ້ສ້າງທ່າສົ່ງນ້ຳສຳເລັດຊຶ່ງມີ ສະມັດຖະ ພາບກວ່າ 100.000 ໂຕນ.

ດ້ານການສຶກສາ, ວັດທະນະທຳ, ສາທາລະນະສຸກ ພັກ ແລະ ລັດໄດ້ຖືເປັນສຳຄັນກົດຈະການ ຂະຫຍາຍວັດທະນະທຳ, ການສຶກສາ ແລະ ເອົາໃຈໃສ່ຈັດຈໍ່ສຸຂະພາບຂອງປະຊາຊົນ. ພົ້ນສຳເລັດ ໃນການປະຕິບັດແຜນການ 3 ປີ ແຫ່ງລັດ (1978-1980): ໃນໄລຍະສອງປີ ແຫ່ງການທົດສອບ ຂອງລະບອບໃໝ່ນັ້ນ, ການປະຕິວັດລາວໄດ້ຮັບໄຊຊະນະອັນໃຫຍ່ຫຼວງ ແລະ ພວມຂະຫຍາຍຕົວ ຢ່າງສະດວກ. ພ້ອມກັນນັ້ນກໍມີຄວາມຮຽກຮ້ອງຕ້ອງການພາວະວິໄສໃໝ່ທີ່ຕັ້ງຂຶ້ນຢ່າງເຄັ່ງຮ້ອນທີ່ສຸດ ໃນທຸກຂົງເຂດພາຍໃນ ແລະ ຕ່າງປະເທດ. ດັ່ງນັ້ນ, ແຜນການ 3 ປີ (ປີ ຄສ 1978-1980) ຈຶ່ງໄດ້ວາງ ໜ້າທີ່ຕົ້ນຕໍທາງດ້ານເສດຖະກິດ ແລະ ດ້ານການສຶກສາວັດທະນະທຳໄວ້ດັ່ງນີ້:

- ດຳເນີນການປະຕິວັດສາມປະການໄປພ້ອມໆກັນ
- ອອກແຮງຟື້ນຟູ ແລະ ຂະຫຍາຍການຜະລິດ, ການຜະລິດກະສິກຳ ແລະ ປ່າໄມ້ສຸມໃສ່ແກ້ໄຂ ຄວາມຕ້ອງການທາງດ້ານສະບຽງອາຫານຢູ່ໃນປະເທດໃຫ້ໄດ້, ຂະຫຍາຍທັດຖະກຳ ແລະ ອຸດສາຫະ ກຳ, ເອົາການເຄື່ອນໄຫວຂອງອຸດສາຫະກຳເຂົ້າຮັບໃຊ້ການກະສິກຳ-ປ່າໄມ້ຢ່າງຕັ້ງໜ້າ. ການກໍ່ສ້າງ ຄົມມະນາຄົມ ແລະ ຂະຫຍາຍການຂົນສົ່ງຕາມສາຍທາງຍຸດທະສາດ ແລະ ເຂົ້າເລິກໃນບໍລິເວນ ຊົນນະບົດ, ປັບປຸງ ແລະ ເປີດກວ້າງເສັ້ນທາງອອກໄປສູ່ທະເລ ໂດຍຜ່ານດິນແດນ ຫວຽດນາມ.

- ເພີ່ມທະວີຈົງກາງການການຄ້າພາຍໃນ ແລະ ການຄ້າຕ່າງປະເທດຈັດຕັ້ງຮັບເອົາ ແລະ ນຳໃຊ້ ການຊ່ວຍເຫຼືອເປັນຢ່າງດີ

- ສຳເລັດການລົບລ້າງໄພບໍ່ຮູ້ໜັງສື ແລະ ຂະຫຍາຍການບຳລຸງວັດທະນະທຳ ການສຶກສາ ສາມັນ, ຕັ້ງໜ້າບຳລຸງກໍ່ສ້າງພະນັກງານ, ກຳມະກອນ, ຂະຫຍາຍຈົງກາງວັດທະນະທຳ, ຖະແຫຼ່ງຂ່າວ ແລະ ສາທາລະນະສຸກ ຜ່ານການສູ້ຊົນການປະຕິບັດແຜນການ 3 ປີແຫ່ງລັດ (ປີ ຄສ 1978-1980) ສາມາດ ຍາດໄດ້ໄຊຊະ ນະດັ່ງນີ້:

1) **ດ້ານການຜະລິດກະສິກຳ**

ສະເພາະ ໃນປີ ຄສ 1978 ຂະບວນເຮັດໄຮ່ເຮັດນາຂອງປະຊາຊົນ ແມ່ນເປັນຂະບວນ ຟົດຟື້ນ ແຕ່ວ່າພັດຖືກໄພນ້ຳຖ້ວມຄຸກຄາມຢ່າງຮຸນແຮງຢູ່ໃນຫຼາຍແຂວງ ເປັນຕົ້ນແມ່ນຢູ່ແຂວງຈຳປາສັກ, ຄຳມ່ວນ, ສະຫວັນນະເຂດ ແລະ ແຂວງວຽງຈັນ. ເຖິງວ່າຈະເກີດໄພນ້ຳຖ້ວມຢ່າງຮ້າຍແຮງ ໃນຫຼາຍ ແຂວງກໍຕາມ, ປະຊາຊົນລາວກໍ່ໄດ້ໃຊ້ທຸກວິທີທາງ ເພື່ອແກ້ໄຂການປູກຝັງ, ເຮັດໃຫ້ຜົນເກັບກ່ຽວ ທັນຍາຫານ ໃນປີ ຄສ 1978 ສາມາດໄດ້ເຖິງ 830.000 ໂຕນ.

ໃນປີ ຄສ 1979 ການເຮັດນາ ຊ້ຳພັດປະສົບກັບໄພແຫ້ງແລ້ງ, ແຕ່ວ່າຊາວໄຮ່ນາໄດ້ຮັບການ ຈັດຕັ້ງຄືນໃໝ່. ທັງໄດ້ເລີ່ມຕົ້ນນຳໃຊ້ບາງວິທີການເຕັກນິກສັບຊ້ອນໃໝ່, ຟື້ນຟູນາເຮື້ອເຖິງ 84.000 ກວ່າເຮັກຕາ, ຍອດຜະລິດຕະພັນການຜະລິດ ໃນປີ ຄສ 1979 ເພີ່ມຂຶ້ນຮອດ 920.000 ໂຕນ. ເນື້ອທີ່ໄດ້ ຮັບນ້ຳຈາກຊົນລະປະທານ, ກ່ອນປີ ຄສ 1978 ມີພຽງ 40.000 ເຮັກຕາ , ໃນປີ ຄສ 1978 ມີເຖິງ 82.000 ເຮັກຕາ ແລະ ປີ ຄສ 1979 ໄດ້ເພີ່ມຂຶ້ນປະມານ 15.000 ເຮັກຕາ. ໃນປີດຽວກັນນີ້ຂະບວນຫັນເປັນ ສະຫະກອນກະເສດ ແມ່ນຢູ່ໃນລະດັບສູງເມື່ອທຽບໃສ່ກັບເມື່ອກ່ອນ, ສະຫະກອນກະເສດຈັດຕັ້ງ ໄດ້ ເຖິງ 2.600 ກວ່າໜ່ວຍ.

ໃນປີ ຄສ 1980 ຈຳນວນສະຫະກອນກະເສດໃນທົ່ວປະເທດ ແມ່ນຫຼຸດລົງຫຼາຍສົມທຽບໃສ່ ປີ ຄສ 1979 ຄືມີແຕ່ 1.420 ແຫ່ງ ໝາຍວ່າຫຼຸດເກົ່າພັນກວ່າແຫ່ງ. ການລ້ຽງສັດຂອງຄອບຄົວໄດ້ມີການ ສົ່ງເສີມ, ການລ້ຽງສັດຂອງລວມໝູ່ ກໍ່ໄດ້ຮັບການສ້າງຂຶ້ນເທື່ອລະກ້າວ. ມີບາງບ່ອນໄດ້ນຳໃຊ້ວິທີການ ເຕັກນິກໃໝ່ເຂົ້າໃນການລ້ຽງສັດ, ການລ້ຽງປາກໍແຜ່ຂະຫຍາຍໃນຫຼາຍທ້ອງຖິ່ນ, ການກຳຈັດແກ້ໄຂ ພະຍາດ ແລະ ພະຍຸສັດໄດ້ຮັບການເອົາໃຈໃສ່ຂຶ້ນກວ່າເກົ່າ. ໃນຂົງເຂດອຸດສາຫະກຳ, ກໍ່ສ້າງພື້ນຖານ, ຄົ້ນມະນາຄົ້ນຂົ້ນສົ່ງ, ອຸດສາຫະກຳນ້ອຍ ແລະ ຫັດຖະກຳກໍ່ໄດ້ຮັບການຂະຫຍາຍຕົວຫຼາຍສົມຄວນ. ໂຮງງານອຸດສາຫະກຳເກົ່າຫຼາຍແຫ່ງໄດ້ຮັບການຟື້ນຟູ ແລະ ຍັງໄດ້ຂະຫຍາຍຮາກຖານໃໝ່ຕື່ມອີກ. ລັດໄດ້ເອົາໃຈໃສ່ຟື້ນຟູ ແລະ ສົ່ງເສີມການຂະຫຍາຍອຸດສາຫະກຳນ້ອຍ, ຫັດຖະກຳຂອງລວມໝູ່ ແລະ ຂອງປະຊາຊົນ. ຮາກຖານຫັດຖະກຳ ທີ່ຜະລິດເຄື່ອງໃຊ້ສອຍ ແລະ ສິນຄ້າ. ການຄົ້ນມະນາຄົ້ນໄດ້ຮັບ ການເປີດກວ້າງອອກຕື່ມລະບົບເສັ້ນທາງບົກ, ທາງອາກາດ ແລະ ທາງນ້ຳໄດ້ຮັບການປັບປຸງ ແລະ ຂະຫຍາຍຕົວ, ໄດ້ສ້າງທາງໃໝ່, ສ້ອມແປງທາງເກົ່າ 3.000 ກວ່າກິໂລແມັດ.

ວຽກງານການສຶກສາ, ວັດທະນະທຳ, ສາທາລະນະສຸກໄດ້ຂະຫຍາຍຕົວດ້ວຍຈັງຫວະໄວ, ຈຳນວນຄົນທີ່ຮຽນໜັງສືກວມ ¼ ຂອງພົນລະເມືອງ, ໄດ້ສຳເລັດການລົບລ້າງຄວາມບໍ່ຮູ້ໜັງສື 80% ຂອງເປົ້າໝາຍທີ່ຈະຕ້ອງລົບລ້າງຄວາມບໍ່ຮູ້ໜັງສືແລ້ວ. ການຮັກສາສຸຂະພາບ ຂອງປະຊາຊົນບັນດາ ເຜົ່າກໍ່ໄດ້ຮັບການເອົາໃຈໃສ່, ໂຮງໝໍຢູ່ສູນກາງ ແລະ ແຂວງຕ່າງໆ ໄດ້ມີເຖິງ 26 ແຫ່ງ, ໂຮງໝໍເມືອງ 100 ກວ່າແຫ່ງ, ໂຮງໝໍຕາແສງ 600 ແຫ່ງ. ພາຍຫຼັງ 5 ປີ ທີ່ປະຊາຊົນລາວໄດ້ມີການຕໍ່ສູ້ປົກປັກ ຮັກສາ ແລະ ສ້າງສາລະບອບໃໝ່ສັງຄົມນິຍົມ, ການປະຕິວັດລາວກໍຍິ່ງເຕີບໃຫຍ່ເຂັ້ມແຂງ, ເປັນພື້ນ ຖານຮອບດ້ານ ແລະ ໜັກແໜ້ນບັນດາປັດໄຈຕັດສິນໄຊຊະນະຂອງການປະຕິວັດໄດ້ຮັບການປັບປຸງ ແລະ ເສີມຂະຫຍາຍຂຶ້ນຕື່ມຢ່າງບໍ່ຢຸດຢັ້ງ. ສາມາດສະສົມບົດຮຽນທີ່ສຳຄັນໄດ້ຈຳນວນໜຶ່ງອັນໄດ້ສ້າງ

ຄວາມສາມາດທີ່ຈະວາງແຜນການຍາວນານ ສຳລັບການຂະຫຍາຍເສດຖະກິດ, ຂະຫຍາຍວັດທະນະທຳ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງໃຫ້ດີຂຶ້ນເປັນກ້າວໆ. ດັ່ງນັ້ນ ພັກ ແລະ ລັດຖະບານລາວ ຈຶ່ງໄດ້ວາງແຜນການ 5 ປີແຫ່ງລັດຄັ້ງທຳອິດອອກໃນເດືອນ ມັງກອນ ປີ ຄສ 1981 ໄດ້ສຳເລັດຜົນຢ່າງສະຫງ່າງາມ.

ທາງດ້ານການກະສິກຳ ບັນຫາກຸ້ມຕົນເອງສະບຽງອາຫານ ແມ່ນບັນຫາຮີບດ່ວນທີ່ຕ້ອງໄດ້ ປະຕິບັດ ແລະ ສາມາດຍາດໄດ້ໄຊຊະນະເປັນລຳດັບມາ. ໃນປີ ຄສ 1981 ການເກັບກ່ຽວເຂົ້າໄດ້ເຖິງ 1.154.000 ໂຕນ ປີ ຄສ 1982 ແມ່ນໄດ້ 1.092.400 ໂຕນ, ຜົນເກັບກ່ຽວພືດຕ່າງໆ ລ້ວນແຕ່ເພີ່ມຂຶ້ນ, ໃນປີ 1985 ແມ່ນໄດ້ເຖິງ 1.540.000 ໂຕນ, ເຂົ້າສາມາດເກັບກ່ຽວໄດ້ 1.428.046 ໂຕນ ທຽບໃສ່ ປີ ຄສ 1976 ການເກັບກ່ຽວ ແມ່ນໄດ້ເພີ່ມຂຶ້ນ 2 ເທື່ອກວ່າ. ການລ້ຽງສັດໄດ້ຄ່ອຍໆ ກາຍເປັນຂະແໜງ ການຜະລິດຕົ້ນຕໍຂະແໜງການໜຶ່ງ. ໃນປີ ຄສ 1981 ຈຳນວນງົວ, ຄວາຍມີ 1.334.000 ໂຕ, ປີ ຄສ 1985 ມີ 1.500.000 ໂຕ, ທຽບໃສ່ ປີ ຄສ 1976 ເພີ່ມຂຶ້ນ 1,76 ເທົ່າ.

2) ດ້ານອຸດສາຫະກຳ ພ້ອມກັບບາດກ້າວຂະຫຍາຍຕົວທາງດ້ານກະສິກຳ, ບັນດາຂະແໜງ ການອຸດສາຫະກຳ ແລະ ຫັດຖະກຳ ກໍ່ໄດ້ຮັບການຟື້ນຟູຂຶ້ນຕື່ມ. ດ້ວຍການໂອນມາເປັນກຳມະສິດ ຂອງລັດ, ວິສະຫະກິດຫຸ້ນສ່ວນລະຫວ່າງລັດກັບເອກະຊົນ ໄດ້ກາຍມາເປັນວິສະຫະກິດຂອງລັດ, ລັດ ໄດ້ຟື້ນຟູ, ເປີດກວ້າງ, ກໍ່ສ້າງວິສາຫະກິດທີ່ສຳຄັນຈຳນວນໜຶ່ງໃນຂະແໜງການຕ່າງໆ ຂຶ້ນໃໝ່ ເຊັ່ນ ຂະແໜງການໄຟຟ້າ, ກົນຈັກ, ອຸດສາຫະກຳຂຸດຄົ້ນບໍ່ແຮ່, ຜະລິດວັດສະດຸກໍ່ສ້າງ, ປຸງແຕ່ງເຄື່ອງປ່າ ຂອງນາ ແລະ ອື່ນໆ. ບໍ່ກໍ່ໂພນຕ້ອກໍ່ໄດ້ຮັບການປັບປຸງ ແລະ ເປີດກວ້າງແນໃສ່ ເຮັດໃຫ້ສະມັດຖະພາບ ຂອງການຜະລິດກໍ່ເພີ່ມຂຶ້ນໃນແຕ່ລະປີ, ຟື້ນຟູ ແລະ ຂະຫຍາຍໂຮງເລື່ອຍຈຳນວນໜຶ່ງຢູ່ແຂວງ ວຽງຈັນເຊັ່ນ ໂຮງເລື່ອຍໄມ້ທີ່ທັນສະໄໝ, ໂຮງງານຜະລິດດິນຈີ່, ດິນຂໍ, ສໍຂາວ, ນ້ຳປາ, ເຂົ້າຈີ່, ເຂົ້າໜົມ... ກໍໄດ້ຮັບການກໍ່ສ້າງຂຶ້ນຫຼາຍແຫ່ງ. ໄດ້ຟື້ນຟູໂຮງງານເບຍ, ໂຮງງານ ນ້ຳອັດລົມ, ສະບູ, ອົກຊີເຢັນ, ເຄື່ອງປາລະສະຕິກ, ຕົ້ມເຫຼົ້າ, ແປ້ງນົວ ແລະ ອື່ນໆ. ສ້າງໂຮງງານຊີມັງຢູ່ແຂວງ ວຽງຈັນ, ຫີນແກ້ວຢູ່ຫ້ວຍຊາຍ ,ດິນດາດ, ເຮັດແກ້ວຢູ່ວຽງຈັນ, ເກືອຢູ່ນ້ຳທາ, ເຫຼັກຖ່ານຫີນຢູ່ຊຽງຂວາງ, ໂຮງງານຜະລິດເກືອບ້ານບໍ-ບ້ານເກີນແຂວງວຽງຈັນ. ນອກຈາກນັ້ນຍັງມີການສົ່ງເສີມຢູ່ທ້ອງຖິ່ນເຊັ່ນ ຕີເຫຼັກ, ຕ່ຳໜາ, ຫຍິບແສ່ວ, ເຮັດເຄື່ອງຫວາຍ, ເຄື່ອງໄມ້, ຈັກສານ, ເຮັດສານ, ເຄື່ອງຄວດລາຍ, ເຄື່ອງ ສິລະປະກຳໄດ້ເຮັດໃຫ້ຜະລິດຕະພັນໃຊ້ສອຍເພີ່ມຂຶ້ນ ແລະ ກາຍເປັນສິນຄ້າຂາອອກຂອງປະເທດ.

3) ການຄົມມະນາຄົມຂົນສົ່ງ ໃນ 10 ປີທີ່ຜ່ານມາ ເສັ້ນທາງທີ່ຮັບປະກັນການຄົມມະນາຄົມ ທັງໝົດມີ 27.527 ກິໂລແມັດ, ເສັ້ນທາງທີ່ໄດ້ປູຢາງໃນທົ່ວປະເທດ. ຮອດ ປີ ຄສ 1985 ມີ 2.250 ກິໂລ ແມັດ, ສ້ອມແປງ ແລະ ກໍ່ສ້າງຂົວຕ່າງໆ ເຖິງ 377 ແຫ່ງ ໃນນັ້ນໄດ້ກໍ່ສ້າງສຳເລັດຂົວໃຫຍ່ 12 ແຫ່ງ.


4) ການຈໍລະຈອນແຈກຢາຍ ແມ່ນເປັນຕ່ອງໂສ້ຕົ້ນຕໍຂອງການຄ້າ. ລັດໄດ້ກຳເອົາວຽກນີ້ ເພື່ອເຮັດໃຫ້ສາຍໂສ້ແຫ່ງຊາດທັງໝົດເຄື່ອນໝູນ, ຊຸກຍູ້ການຜະລິດອຸດສາຫະກຳ ແລະ ກະສິກຳ, ຊຸກຍູ້ການດັດສ້າງ ແລະ ກໍ່ສ້າງເສດຖະກິດ.

5) ຜົນສຳເລັດທາງດ້ານການສຶກສາ, ວັດທະນະທຳ ແລະ ສາທາລະນະສຸກ ວຽກງານການ ສຶກສາໃນດ້ານຕ່າງໆ: ສາມັນສຶກສາ, ປະຊາກອນສຶກສາ ແລະ ບຳລຸງວັດທະນະທຳ, ການກໍ່ສ້າງ ແລະ ບຳລຸງຄູ, ອາຊີວະສຶກສາ ແລະ ມະຫາວິທະຍາໄລ ໄດ້ມີບົດບາດຂະຫຍາຍຕົວ. ລັດໄດ້ຍົກເລີກ ລະບອບການເສຍຄ່າຮຽນ, ໄດ້ສ້າງຕັ້ງລະບົບການສຶກສາໃຫ້ເປັນເອກະພາບໄດ້ຂະຫຍາຍໂຮງຮຽນ ແລະ ຫ້ອງຮຽນຢູ່ຊົນນະບົດຕື່ມອີກເພື່ອຮັບເອົາລູກຫຼານຂອງຊາວນາ, ຜູ້ອອກແຮງງານເຂົ້າຮຽນຢ່າງ ທົ່ວເຖິງໃນທ້ອງຖິ່ນຕ່າງໆ.

ໃນປີ ຄສ 1985 ຈຳນວນບ້ານທີ່ມີໂຮງຮຽນປະຖົມກວມ 65% ຈຳນວນຕາແສງ ທີ່ມີໂຮງຮຽນ ມັດທະຍົມກວມ 52,2% ແລະ ຈຳນວນເມືອງທີ່ມີໂຮງຮຽນອຸດົມກວມ 60,7%, ມາຮອດທ້າຍ ປີ ຄສ 1984 ທົ່ວປະເທດໄດ້ສຳເລັດການລົບລ້າງການຕົກໜັງສືໃນຂັ້ນພື້ນຖານ, ຈຳນວນນັກຮຽນສາມັນ ສຶກສາໄດ້ລື່ນຈາກ 340.000 ຄົນ, ເວລາປົດປ່ອຍໃໝ່ເພີ່ມຂຶ້ນເຖິງ 585.940 ຄົນ ໃນປີ ຄສ 1985, ຖັນແຖວຄູສາມັນສຶກສາໄດ້ເພີ່ມຂຶ້ນແຕ່ 12.181 ຄົນ ຂອງປີ ຄສ 1975 ເປັນ 23.886 ຄົນ ໃນປີ ຄສ 1985. ວຽກງານລ້ຽງເດັກ ແລະ ອະນຸບານສຶກສາ ໄດ້ເກີດຂຶ້ນພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍ ມາ ແລະ ພວມຂະຫຍາຍຕົວຢ່າງແຂງແຮງ. ກ່ຽວກັບການສຶກສາຊັ້ນສູງ ແລະ ອະຊີວະສຶກສາໃນທົ່ວ ປະເທດ ໄດ້ມີໂຮງຮຽນທັງໝົດ 31 ແຫ່ງຂອງ ສົກ ປີ ຄສ 1979 -1980 ແລະ ປີ ຄສ 1984-1985 ແມ່ນໄດ້ມີ ເຖິງ 112 ແຫ່ງ[57].

1.4.3 ການພັດທະນາປະເທດຕາມເສັ້ນທາງຈິນຕະນາການໃໝ່

ໃນໄລຍະ 10 ປີທຳອິດ ຂອງການສ້າງສາພັດທະນາປະເທດຊາດ (1975-1985) ກ້າວຂຶ້ນ ສູ່ສັງຄົມນິຍົມໂດຍກົງ ພັກປະຊາຊົນປະຕິວັດລາວ ໄດ້ຮ່ຳຮຽນເອົາຕົວແບບ ຂອງບັນດາປະເທດທີ່ໄປ ກ່ອນ, ໂດຍສະເພາະ ແມ່ນຕົວແບບຂອງສະຫະພາບໂຊວຽດ; ແຕ່ຍ້ອນຈຸດເລີ່ມຕົ້ນແຫ່ງການກ້າວຂຶ້ນ ຂອງປະເທດລາວຕ່ຳເກີນໄປ ຈຶ່ງໄດ້ປະສົບກັບຄວາມຫຍຸ້ງຍາກຫຼາຍປະການ, ເສດຖະກິດບໍ່ຂະຫຍາຍ ຕົວ, ຊີວິດການເປັນຢູ່ຂອງພະນັກງານ, ທະຫານ-ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າມີຄວາມຝືດ ເຄືອງ. ໂດຍເຫັນໄດ້ສະພາບຄວາມເປັນຈິງດັ່ງກ່າວ ພັກປະຊາຊົນປະຕິວັດລາວ ໄດ້ມີຄວາມສະຫຼຸ້ງໃຈ, ໄດ້ເລີ່ມລົງເລິກຄົ້ນຄວ້າຈຸດພິເສດ, ສະພາວະຄວາມເປັນຈິງຂອງປະເທດເຮົາ ສົມທົບກັບການຄົ້ນຄວ້າ ບົດຮຽນຂອງປະເທດເພື່ອນມິດ ແລະ ສາກົນ; ຊຶ່ງໄດ້ສ້າງຄວາມຮັບຮູ້ໃໝ່ກ້າວໄປເຖິງການດຳເນີນ ການປ່ຽນແປງໃໝ່.



ຮູບທີ 23: ກອງປະຊຸມໃຫຍ່ຄັ້ງທີ 4 ຂອງພັກ

ມາຮອດວັນທີ 13 ພະຈິກ ປີ ຄສ 1986 ກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກກໍໄດ້ໄຂຂຶ້ນ ຢູ່ ນະຄອນຫຼວງວຽງຈັນ, ກອງປະຊຸມຄັ້ງນີ້ ແມ່ນການປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ, ໄດ້ເນັ້ນ ໜັກເຖິງການປ່ຽນແປງໃໝ່ດ້ານຈິນຕະນາການ, ດັດແປງກົນໄກຄຸ້ມຄອງເສດຖະກິດ ແລະ ແບບແຜນວິທີເຮັດວຽກ. ສຳລັບການປ່ຽນແປງດ້ານເສດຖະກິດຕົ້ນຕໍ ແມ່ນປ່ຽນແປງໃໝ່ນະໂຍບາຍ ເສດຖະກິດ, ຫັນເສດຖະກິດທຳມະຊາດ ແລະ ເຄິ່ງທຳມະຊາດ, ເພິ່ງຕົນເອງກຸ້ມຕົນເອງ ໄປສູ່ ເສດຖະກິດສິນຄ້າ; ຂະຫຍາຍເສດຖະກິດຫຼາຍພາກສ່ວນ ດ້ວຍຫຼາຍຮູບແບບການກຳມະສິດ, ຫຼາຍ ຮູບການຈັດຕັ້ງການຜະ ລິດທຸລະກິດ, ເຊິ່ງໃນນັ້ນທຸກພາກສ່ວນເສດຖະກິດລ້ວນແຕ່ມີຄວາມສະເໝີ ພາບຕໍ່ໜ້າກົດໝາຍ; ປ່ຽນແປງໃໝ່ກົນໄກຄຸ້ມຄອງເສດຖະກິດ ດ້ວຍການຫັນປ່ຽນຈາກກົນໄກຄຸ້ມຄອງ

[57] ທອງສາ ໄຊຍະວົງຄຳດີ. ເລື່ອງເດີມ 1989: 464-482

ລວມສູນອາດຍາສິດ, ບໍລິຫານເກື້ອກູນໄປສູ່ການໄລ່ລ່ຽງທຸລະກິດ, ເປີດກວ້າງການພົວພັນຮ່ວມມື ກັບ ຕ່າງປະເທດ.

ສຳລັບການປ່ຽນແປງໃໝ່ທາງດ້ານຈິນຕະນາການ ແລະ ດ້ານຄວາມຮັບຮູ້ກ່ຽວກັບສັງຄົມ ນິຍົມນັ້ນ, ພັກເຮົາໄດ້ທົບທວນທິດສະດີ ແລະ ພຶດຕິກຳແຫ່ງການສ້າງສັງຄົມນິຍົມ ຢູ່ປະເທດເຮົາບົນ ຈິດໃຈກ້າເບິ່ງຄວາມຈິງ ແລະ ມີຄວາມເດັດດ່ຽວແກ້ໄຂທັດສະນະຮ້ອນຮົນຟ້າວຟັ່ງ; ໃນກອງປະຊຸມ ຄົນຄະນະສູນກາງພັກ ຄັ້ງທີ7 ສະໄໝທີ IV ໃນປີ ຄສ 1989 ພັກໄດ້ຄົ້ນຄວ້າ ແລະ ແລກປ່ຽນຄວາມຄິດ ເຫັນຫຼາຍບັນຫາທີ່ພົວພັນເຖິງທິດສະດີ ແລະ ພຶດຕິກຳເຊັ່ນບັນຫາກ່ຽວກັບລັກສະນະຂອງຍຸກສະໄໝ, ສາຍພົວພັນລະຫວ່າງການຕໍ່ສູ້ເພື່ອສັນຕິພາບກັບການຕໍ່ສູ້ປະຕິວັດ ແລະ ການຕໍ່ສູ້ຊົນຊັ້ນ, ຄວາມ ຮັບຮູ້ ກ່ຽວກັບ ລັດທິທຶນນິຍົມທັນສະໄໝ ແລະ ລັດທິຈັກກະພັດນິຍົມ, ຄວາມຮັບຮູ້ກ່ຽວກັບສັງຄົມນິຍົມ ແລະ ເສັ້ນທາງກ້າວຂຶ້ນສັງຄົມນິຍົມຍຸກປັດຈຸບັນ. ໃນກອງປະຊຸມ ໄດ້ເອກະພາບກັນຫຼາຍບັນຫາ ກ່ຽວກັບທິດສະດີ ແລະ ພຶດຕິກຳທີ່ພົວພັນເຖິງການປະຕິວັດປະເທດເຮົາ, ຊຶ່ງເປັນຂີດໝາຍທີ່ສຳຄັນ ໃນການປ່ຽນ ແປງໃໝ່ດ້ານຈິນຕະນາການ, ຄວາມຮັບຮູ້ໃນຂົງເຂດທິດສະດີ ແລະ ພຶດຕິກຳຂອງ ການປະຕິວັດປະເທດ ເຮົາໃນໄລຍະໃໝ່. ເພື່ອຮັບປະກັນໃຫ້ພາລະກິດປ່ຽນແປງໃໝ່ ກ້າວໄປສູ່ຈຸດ ໝາຍ, ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ8 ສະໄໝທີ IV ກໍໄດ້ວາງອອກ 6 ຫຼັກການ ຂອງການປ່ຽນແປງໃໝ່ ຊຶ່ງພັກເຮົາໄດ້ຢຶດໝັ້ນຈົນມາເຖິງປັດຈຸບັນ ດັ່ງນີ້:

ຫຼັກການທີໜຶ່ງ: ຢຶດໝັ້ນຈຸດໝາຍສັງຄົມນິຍົມ

ຫຼັກການທີສອງ: ຢຶດໝັ້ນລັດທິມາກ-ເລນິນແລະ ໝູນໃຊ້ຢ່າງປະດິດສ້າງ, ສອດຄ່ອງກັບຈຸດ ພິເສດຂອງປະເທດເຮົາ.

ຫຼັກການທີສາມ: ຢຶດໝັ້ນໃນການນຳພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນເອກະພາບ ພາຍໃນພັກ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະ ແນວທາງຂອງພັກ.

ຫຼັກການທີສີ່: ເສີມຂະຫຍາຍປະຊາທິປະໄຕ ແລະ ສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ, ສ້າງກຳລັງສາມັກຄີທົ່ວປວງຊົນ ແລະ ຄວາມເປັນເອກະພາບແໜ່ນຂອງຊາດລາວ.

ຫຼັກການທີຫ້າ: ເພີ່ມທະວີຄວາມສັກສິດຂອງລະບົບອຳນາດປະຊາທິປະໄຕ ປະຊາຊົນ, ອີງໃສ່ ກຳລັງແຮງຂອງປະຊາຊົນ ແລະ ເພື່ອປະຊາຊົນ, ຕ້ານປະກົດການພະຍາດອາດຍາສິດທຸກຮູບແບບ.

ຫຼັກການທີຫົກ: ເຊີດຊູຈິດໃຈເອກະລາດເປັນເຈົ້າຕົນເອງ, ສົມທົບກັບກຳລັງແຮງຂອງ ຍຸກ ສະໄໝ.

ຄຽງຄູ່ກັບ 6 ຫຼັກການ ພັກເຮົາໄດ້ຢ້ຳຕື່ມສິ່ງທີ່ຕ້ອງຕ້ານໃນຂະບວນວິວັດແຫ່ງການປ່ຽນແປງ ໃໝ່ ຄື: ຕ້ານແນວຄິດ ແລະ ທັດສະນະທີ່ຢາກປະລະຫຼັກໝັ້ນຊົນຊັ້ນ, ຕ້ານແນວຄິດຫຼາຍພັກຫຼາຍເຄົ້າ ແລະ ແນວຄິດເສລີປະຊາທິປະໄຕແບບນາຍທຶນ; ຕ້ານແນວຄິດ ແລະ ທັດສະນະທີ່ຢາກປະລະຫຼັກການ ລວມສູນປະຊາທິປະໄຕ, ຂາດລະບຽບວິໄນ, ອະນາທິປະໄຕ ແບບຊ້າຍຈັດ ແລະ ລັດທິສວຍໂອກາດ ຂວາຈັດ, ຕ້ານແບບແຜນອາດຍາສິດ, ຜະເດັດການດ້ານດຽວ, ທ່າງເທີນ ຈາກມະຫາຊົນ ແລະ ບໍ່ ຕິດແທດກັບຕົວຈິງ. ນັບແຕ່ ກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກ (ປີ 1986) ເປັນຕົ້ນມາ, ກອງປະຊຸມ ໃຫຍ່ຄັ້ງທີ V, VI, VII, VIII ແລະ IX ຂອງພັກໄດ້ສືບຕໍ່ນຳພາຜັນຂະຫຍາຍແນວທາງການ ປ່ຽນແປງໃໝ່ ພ້ອມທັງມີການກວດກາ, ສະຫຼຸບຕີລາຄາຖອດຖອນບົດຮຽນຈາກພຶດຕິກຳຕົວຈິງ ໃນ ແຕ່ລະໄລຍະ ຢ່າງເປັນລະບົບຕໍ່ເນື່ອງ, ເຮັດໃຫ້ແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກ ບໍລິບູນຂຶ້ນເລື້ອຍໆ.

1.4.3.1 ນະໂຍບາຍຈິນຕະນາການໃໝ່

ກ. ນະໂຍບາຍທາງດ້ານເສດຖະກິດ

ດ້ານເສດຖະກິດ ເປັນວຽກງານໜຶ່ງທີ່ສຳຄັນເພີ່ນໄດ້ເອົາໃຈໃສ່ ແກ້ໄຂຟື້ນຟູເສດຖະກິດ-ສັງຄົມຂອງຊາດ, ແກ້ໄຂຜົນຮ້າຍຂອງສົງຄາມ ແລະ ຜົນຮ້າຍຂອງລະບອບເກົ່າປະໄວ້, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ເຂົ້າສູ່ຄວາມສະຫງົບເປັນປົກກະຕິ. ການກະສິກຳ ເປັນຂະແໜງພື້ນຖານຂອງເສດຖະກິດແຫ່ງຊາດ ໄດ້ມີແຜນນະໂຍບາຍສ້າງເສດຖະກິດເອກະລາດ, ເປັນເຈົ້າຕົນເອງຕາມທິດສັງຄົມນິຍົມ ໄດ້ປຸກລະດົມປະຊາຊົນເຂົ້າຮ່ວມໃນການຜະລິດກະສິກຳ, ຟື້ນຟູນາເຮື້ອ, ຂ່າວນາໃໝ່ ຕ້ານໄພທຳມະຊາດຢ່າງເປັນຂະບວນກວ້າງຂວາງ ແລະ ພັດຟື້ນນຳໃຊ້ເຕັກນິກໃໝ່ເຂົ້າສູ່ການຜະລິດ, ສ້າງຊົນລະປະທານ, ເຮັດກະເສດສຸມ, ເຮັດນາແຊງ ຫັນເປັນສະຫະກອນກະເສດ ຊຶ່ງໄດ້ສ້າງພື້ນຖານຂະຫຍາຍການຜະລິດກະສິກຳ-ປ່າໄມ້ ແລະ ປະຕິບັດສິດ ເປັນເຈົ້າລວມໝູ່ຂອງຊາວກະສິກອນ, ຟື້ນຟູການຜະລິດຂອງໂຮງງານທັງໃຫຍ່ ແລະ ນ້ອຍ. ຟື້ນຟູ ແລະ ສ້ອມແປງຖະໜົນຫົນທາງ, ເປີດກວ້າງການພົວພັນເສດຖະກິດໃໝ່ ກັບພາຍນອກເປັນຕົ້ນ ກັບປະເທດອ້າຍນ້ອງ ແລະ ເພື່ອນມິດບົນພື້ນຖານແຫ່ງການເຄົາລົບເອກະລາດ ອະທິປະໄຕຂອງລາວ.

ຂ. ນະໂຍບາຍທາງດ້ານສັງຄົມ-ວັດທະນະທຳ

ດ້ານສັງຄົມ ແມ່ນໄດ້ຖືສຳຄັນ ແລະ ເອົາໃຈໃສ່ປະຕິບັດນະໂຍບາຍສາມັກຄີລະຫວ່າງຊົນເຜົ່າ, ຊັ້ນຄົນ, ເພດໄວ ແລະ ສາສະໜາໃນວົງຄະນະຍາດແຫ່ງຊາດບົນພື້ນຖານພັນທະພາບກຳມະກອນ-ຊາວນາໃຕ້ການນຳພາຂອງພັກ. ປະຕິບັດສິດເສລີພາບປະຊາທິປະໄຕຂອງພົນລະເມືອງລົບລ້າງຄວາມອາຄາດບາດໝາງລະຫວ່າງຊົນເຜົ່າ. ໄດ້ລົບລ້າງການກີກໜັງສື ແລະ ຈັດຕັ້ງບຳລຸງວັດທະນະທຳ ໃຫ້ແກ່ຖັນແຖວພະນັກງານ, ນັກຮົບ, ສ້າງເງື່ອນໄຂທຸກດ້ານ ເພື່ອຂະຫຍາຍເສດຖະກິດ, ວັດທະນະທຳ ແລະ ສັງຄົມ.

ວັດທະນະທຳ ພັກ-ລັດ ໄດ້ກຳຈັດຮ່ອງຮອຍສິ່ງເສດເຫຼືອ ຂອງວັດທະນະທຳປະຕິການເຊື່ອມຊາບ ຂອງລັດທິລ່າເມືອງຂຶ້ນ, ລົບລ້າງວັດທະນະທຳ ແລະ ຮີດຄອງປະເພນີອັນລ້າຫຼັງ, ເສີມຂະຫຍາຍສິລະປະວັດທະນະທຳອັນດີງາມຂອງຊາດ, ສາມັກຄີປະຊາຊົນບັນດາເຜົ່າຕ່າງໆ ສູ້ຊົນນຳເອົາເຜົ່າຕ່າງໆ ກ້າວຂຶ້ນທຽບທັນກັນປອງດອງກັນຢ່າງແທ້ຈິງຢູ່ໃນວົງຄານະຍາດຂອງຊາດລາວ ເຮັດໃຫ້ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳຂອງປະຊາຊົນແຕ່ລະເຜົ່າດີຂຶ້ນ.

ຄ. ນະໂຍບາຍດ້ານການສຶກສາ

ໃນປີ ຄສ 1986 ໃນກອງປະຊຸມໃຫຍ່ຄັ້ງທີ 4 ຂອງພັກ ປະຊາຊົນ ປະຕິວັດລາວ ພາຍໃຕ້ການນຳຂອງທ່ານ ໄກສອນ ພົມວິຫານ ກໍໄດ້ຕັດສິນໃຈປ່ຽນແປງຍຸດທະສາດໃນການພັດທະນາປະເທດຄັ້ງປະຫວັດສາດ ດ້ວຍການກ່ຽນແປງນະໂຍບາຍການພັດທະນາເສດຖະກິດ ຈາກລະບົບສັງຄົມນິຍົມໄປສູ່ລະບົບກົນໄກຕະຫຼາດ ຫຼື ເອີ້ນວ່າ ນະໂຍບາຍ "ຈິນຕະນາການໃໝ່" (New Thin king) ຈິນຕະນາ ການໃໝ່ບໍ່ພຽງແຕ່ປ່ຽນແປງນະໂຍບາຍ ໃນການພັດທະນາເສດຖະກິດຂອງປະເທດເທົ່ານັ້ນ ຍັງມີການປ່ຽນແປງທີ່ສຳຄັນຄືນະໂຍບາຍດ້ານການສຶກສາ ໂດຍສະເພາະການຍົກລະດັບຄຸນນະພາບການສຶກສາໃຫ້ສອດຄ່ອງ ແລະ ກ້າວທັນກັບການປ່ຽນແປງທາງດ້ານເສດຖະກິດ ແລະ ສັງຄົມ ຂອງປະເທດ. ການປະກາດໃຊ້ນະໂຍບາຍຈິນຕະນາການໃໝ່ ໃນປີ ຄສ 1986 ເປັນຕົ້ນມາ ແບ່ງໄລຍະການພັດທະນານະໂຍບາຍຈິນຕະນາການໃໝ່ ກັບ ການປ່ຽນແປງນະໂຍບາຍດ້ານເສດຖະກິດ ແລະ ການສຶກສາ ອອກເປັນ 2 ໄລຍະຄື:

ໄລຍະທີ 1 ຢູ່ລະຫວ່າງ ປີ ຄສ 1986-ປີ ຄສ 1992 ຫຼື ຈົນຕະນາການໃໝ່ຂອງໄກສອນ ພົມວິຫານ ຊຶ່ງ ເປັນຜູ້ນຳປະເທດໃນຖານະເປັນນາຍົກລັດຖະມົນຕີ ແລະ ເລຂາທິການໃຫຍ່ຂອງພັກ ປະຊາຊົນປະຕິວັດລາວ ແລະ ເປັນຜູ້ລິເລີ່ມນະໂຍບາຍຈົນຕະນາການໃໝ່ມາໃຊ້. ລັດຖະບານ ແລະ ພັກປະຊາຊົນ ປະຕິວັດລາວໄດ້ປະກາດຍຸດທະສາດ ແລະ ແຜນພັດທະນາການສຶກສາທີ່ສຳຄັນ 3 ຄັ້ງ ຄື:

- ຄັ້ງທີ 1 ຄື ນະໂຍບາຍການສຶກສາທີ່ປະກາດຕໍ່ກອງປະຊຸມໃຫຍ່ຂອງພັກປະຊາຊົນ ປະຕິວັດ ລາວ ໃນປີ ຄສ 1986 ໃນບົດລາຍງານທາງການເມືອງຂອງ ທ່ານໄກສອນ ພົມວິຫານ ຕໍ່ກອງປະຊຸມໃຫຍ່ ຂອງພັກໄດ້ລະບຸເຖິງແຜນການ ແລະ ຈຸດປະສົງທີ່ສຳຄັນໃນການພັດທະນາການສຶກສາຂອງລາວ ດັ່ງນີ:

- ດຳເນີນການປະຕິຮູບລະບົບສາມັນສຶກສາ ແລະ ອະຊີວະສຶກສາແນໃສ່ຍົກລະດັບຄຸນນະ ພາບ, ປະສິດທິຜົນຂອງຂະແໜງການສຶກສາໃຫ້ສູງຂຶ້ນ.

- ເນື້ອໃນຂອງການສຶກສາຄົນໃໝ່ທາງໃນດ້ານຄວາມຕື່ນຕົວທາງການເມືອງ ແລະ ການເຝິກ ຝົນ ຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ, ຄວາມຮູ້ດ້ານວັດທະນະທຳ, ອອກແຮງງານ ວິຊາສະເພາະ ວິຊາຊີບ, ປົກປັກຮັກສາປະເທດຊາດໂດຍ ໃຫ້ສອດຄ່ອງກັບແຕ່ລະຂະແໜງວິຊາຮຽນ ແລະ ຊັ້ນການ ສຶກສາ.

- ເພີ່ມທະວີຖັນແຖວຄູດ້ວຍວິທີສ້າງຢູ່ພາຍໃນປະເທດ ແລະ ຢູ່ຕ່າງປະເທດ.

- ເພີ່ມທະວີຮາກຖານວັດຖຸເຕັກນິກ ໃຫ້ຂະແໜງການສຶກສາ ໂດຍອີງໃສ່ຄວາມຮຽກຮ້ອງ ຕ້ອງການຂອງການຂະຫຍາຍເສດຖະກິດ-ສັງຄົມ ແລະ ຄວາມອາດສາມາດຂອງລັດ. ພວກເຮົາຈະກໍ່ ສ້າງໂຮງຮຽນສາມັນສຶກສາ, ອະຊີວະສຶກສາ, ຊັ້ນກາງ ແລະ ມະຫາວິທະຍາໄລຂຶ້ນເທື່ອລະກ້າວ.

- ຂະຫຍາຍການສຶກສາ ໃນເຂດຊົນເຜົ່າໃຫ້ສູງຂຶ້ນເທື່ອລະກ້າວ, ສ້າງບຳລຸງຖັນແຖວພະນັກ ງານ, ດູແລກຳມະກອນທີ່ເປັນຄົນເຜົ່າຕ່າງໆ ເຮັດໃຫ້ລະດັບການຂະຫຍາຍຕົວຂອງເຜົ່າຕ່າງໆ ທົ່ວ ປະເທດ ນັບມື້ນັບສະໜ່ຳສະເໝີກັນ.

- ດຳເນີນການສ້າງແຜນການໄລຍະຍາວ ກ່ຽວກັບ ການສ້າງບຳລຸງພະນັກງານກ່ຽວກັບການ ສ້າງຄົນໃໝ່ສັງຄົມນິຍົມ ໃຫ້ເປັນຕົ້ນຂຶ້ນເທື່ອລະກ້າວ.

- ຄັ້ງທີ 2 ຄື ຍຸດທະສາດການສຶກສາສຳລັບໄລຍະຕັ້ງແຕ່ ປີ ຄສ 1986 - ປີ ຄສ 2000 ໂດຍ ພາຍຫຼັງປະກາດນະໂຍບາຍ ແລະ ຄວາມມຸ້ງຫວັງທາງດ້ານການສຶກສາ ຕໍ່ກອງປະຊຸມໃຫຍ່ຂອງພັກ ໃນປີ ຄສ 1986 ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກພາຍໃຕ້ການຊີ້ນຳຂອງ ທ່ານ ໄກສອນ ພົມວິຫານ ໄດ້ມີມະຕິແຕ່ງຕັ້ງ "ກຸ່ມຍຸດທະສາດການສຶກສາ ສຳລັບຕັ້ງແຕ່ ປີ ຄສ 1986 - ປີ ຄສ 2000" ເພື່ອກຳນົດທິດທາງເປົ້າໝາຍ ແລະ ໜ້າທີ່ພື້ນຖານຂອງຍຸດທະສາດການສຶກສາພາຍ ໃຕ້ແນວທາງການສຶກສາຂອງພັກ ທີ່ວ່າ: ໃນປີ ຄສ 1987 ພວກເຮົາຍັງສືບຕໍ່ຖືເອົາວຽກງານການສຶກ ສາເປັນໜ້າທີ່ໃຈກາງຂອງການປະຕິວັດທາງດ້ານແນວຄິດ ແລະ ວັດທະນະທຳຕ້ອງເອົາໃຈໃສ່ ພາລະ ກິດການສຶກສາໃຫ້ຫຼາຍຂຶ້ນກວ່າເກົ່າ ແລະ ຕ້ອງລົງທຶນເຂົ້າໃສ່ວຽກງານນີ້ຢ່າງເໝາະສົມໂດຍໃຫ້ເຮັດ ຕັ້ງໂຄງການປະຕິຮູບການສຶກສາ ແລະ ການຈັດການເຝິກອົບຮົມ ພະນັກງານເພື່ອສ້າງຄົນໃໝ່ສັງຄົມ ນິຍົມ.

ໃນເດືອນ ມິຖຸນາ ປີ ຄສ 1987 ຄະນະບໍລິຫານສູນກາງພັກ ແລະ ສະພາລັດຖະມົນຕີ ໄດ້ລົງ ມະຕິຮັບເອົາ "ຍຸດທະສາດການສຶກສາສຳລັບໄລຍະຕັ້ງແຕ່ປີ ຄສ 2000" ເປັນແຜນການໄລຍະຍາວ ໃນການພັດທະນາການສຶກສາຂອງປະເທດໂດຍຍຸດທະສາດນີ້ມີຈຸດປະສົງ 5 ປະການ ດັ່ງນີ:

- ຈຸດປະສົງທີ 1 ຈັດຕັ້ງ ແລະ ຊຸກຍູ້ການຮ່ຳຮຽນ, ບຳລຸງວັດທະນະທຳຂອງພະນັກງານ ແລະ ປະຊາຊົນເຜົ່າຕ່າງໆໃຫ້ໄດ້ຢ່າງແຂງແຮງ. ຈຸດປະສົງ ແມ່ນສູ້ຊົນໃຫ້ສຳເລັດການສຶກສາຊັ້ນປະຖົມ ໂດຍທົ່ວໄປສຳລັບຊາວໜຸ່ມ ແລະ ເຍົາວະຊົນທີ່ມີອາຍຸແຕ່ 6 ຫາ 14 ປີ, ກຳມະກອນ, ພະນັກງານ

ຫຼັກແຫຼ່ງຮາກຖານ, ພະນັກງານຂັ້ນເມືອງ ແລະ ຊາວໜຸ່ມຜູ້ກ້າວໜ້າຕ້ອງໃຫ້ສຳເລັດການສຶກສາຊັ້ນມັດທະຍົມ. ພ້ອມກັນນັ້ນ ໃຫ້ສຳເລັດການສຶກສາຊັ້ນມັດທະຍົມ ແລະ ໃຫ້ສຳເລັດການລົບລ້າງການກືກໜັງສືຢ່າງສິ້ນເຊີງ.

- ຈຸດປະສົງທີ 2 ເອົາໃຈໃສ່ຂະຫຍາຍ ແລະ ຍົກຄຸນະພາບຂອງໂຮງຮຽນລ້ຽງເດັກ, ໂຮງຮຽນອະນຸບານ, ປະຕິຮູບ ແລະ ກໍ່ສ້າງໂຮງຮຽນສາມັນສຶກສາໃຫ້ມີລັກສະນະສຶກສາສາມັນ, ອອກແຮງງານ ເຕັກນິກ ແລະ ກະກຽມວິຊາຊີບເທື່ອລະກ້າວ ເຮັດໃຫ້ໂຮງຮຽນສາມັນຕິດພັນກັບລະບົບເສດຖະກິດ-ສັງຄົມຂອງປະເທດ ແລະ ຂອງແຕ່ລະທ້ອງຖິ່ນ.

- ຈຸດປະສົງທີ 3 ປະຕິຮູບວຽກງານອະຊີວະສຶກສາ ແລະ ມະຫາວິທະຍາໄລແນໃສ່ກໍ່ສ້າງກຳມະກອນເຕັກນິກ ແລະ ພະນັກງານວິທະຍາສາດເຕັກນິກທີ່ມີຄວາມສາມາດເຂົ້າຮ່ວມໃນການປະຕິບັດຈຸດໝາຍເສດຖະກິດ-ສັງຄົມໃນປະເທດລາວ.

- ຈຸດປະສົງທີ 4 ເອົາໃຈໃສ່ຂະຫຍາຍການສຶກສາໃນເຂດພູດອຍ, ເຂດຫ່າງໄກ, ຕັ້ງໜ້າກໍ່ສ້າງພະນັກງານຄຸ້ມຄອງການສຶກສາ ແລະ ຄູອາຈານທີ່ເປັນຄົນຊົນເຜົ່າ, ປະກອບສ່ວນກໍ່ສ້າງບັນດາຈຸດໃຈກາງເສດຖະກິດ-ວັດທະນະທຳໃໝ່.

- ຈຸດປະສົງທີ5ກໍ່ສ້າງແລະບຳລຸງພະນັກງານຄຸ້ມຄອງການສຶກສາແລະຄູ-ອາຈານໃຫ້ຄົບຊຸດ, ສົມສ່ວນລະຫວ່າງວິຊາສອນ, ທັງມີຄວາມຊື່ສັດຕໍ່ພັກ-ລັດ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ໜັກແໜ້ນ, ມີວິຊາສະເພາະເກັ່ງສາມາດເຮັດໜ້າທີ່ພັກ ແລະ ລັດມອບໝາຍໃຫ້.

- ຄັ້ງທີ 3 ຄືນະໂຍບາຍໃນການຈັດການສຶກສາຂອງຊາດທີ່ປະກາດໄວ້ໃນ ລັດຖະທຳມະນູນທີ່ປະກາດໃຊ້ໃນ ວັນທີ 15 ສິງຫາ ປີ ຄສ 1991 ໂດຍໃນໝວດທີ 2 ມາດຕາທີ 19 ຂອງລັດຖະທຳມະນູນສະບັບນີ້ໄດ້ລະບຸເຖິງນະໂຍບາຍໃນການຈັດການສຶກສາຂອງລັດໄວ້ ດັ່ງນີ້:

+ ມາດຕາທີ 19 ລັດເອົາໃຈໃສ່ຂະຫຍາຍການສຶກສາຕິດພັນ ກັບ ການກໍ່ສ້າງຄົນລຸ້ນໃໝ່ໃຫ້ເປັນພົນລະເມືອງດີ.ການເຄື່ອນໄຫວການສຶກສາ,ວັດທະນະທຳແລະວິທະຍາສາດຊຶ່ງແນໃສ່ຍົກລະດັບຄວາມຮູ້, ນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ, ປະຊາຊົນ, ນ້ຳໃຈສາມັກຄີປອງດອງບັນດາເຜົ່າ, ເຊີດຊູສະຕິເປັນເຈົ້າຂອງປະເທດຊາດ. ປະຕິບັດລະບອບການສຶກສາຂັ້ນປະຖົມແບບບັງຄັບ, ລັດອະນຸຍາດ ໃຫ້ເປີດໂຮງຮຽນເອກະຊົນທີ່ເຄື່ອນໄຫວຕາມຫຼັກສູດຂອງລັດ. ລັດ ແລະ ປະຊາຊົນສົມທົບກັນກໍ່ສ້າງໂຮງຮຽນທຸກຊັ້ນເຮັດໃຫ້ການສຶກສາຂະຫຍາຍຕົວເປັນລະບົບຄົບຖ້ວນ, ເອົາໃຈໃສ່ຂະຫຍາຍການສຶກສາຢູ່ເຂດຊົນເຜົ່າ ເມື່ອພິຈາລະນາຄວາມເຄື່ອນໄຫວທາງດ້ານການສຶກສາ ທີ່ເກີດຂຶ້ນໃນໄລຍະນີ້ ໂດຍການສຶກສາຈາກນະໂຍບາຍ ແລະ ແຜນໃນການພັດທະນາການສຶກສາ ຂອງລັດທັ້ງ 3 ຄັ້ງ ດັ່ງທີ່ກ່າວມາຂ້າງເທິງນັ້ນ ໂດຍສະເພາະ ເມື່ອນຳມາປຽບທຽບກັບນະໂຍບາຍການສຶກສາຂອງພັກ ໃນຊ່ວງກ່ອນການປະຕິຮູບເສດຖະກິດ ກໍຈະສັງເກດໄດ້ເຖິງຄວາມປ່ຽນແປງໃນທັດສະນະ ແລະ ຈຸດປະສົງໃນການພັດທະນາການສຶກສາ ທີ່ຫັນມາໃຫ້ຄວາມສຳຄັນ ກັບ ການຍົກລະດັບຄຸນນະພາບການສຶກ ສາ ຂອງປະຊາຊົນ ແລະ ການພັດທະນາການສຶກສາໃຫ້ສອດຄ່ອງກັບຄວາມປ່ຽນແປງກັບເສດຖະກິດ ແລະ ສັງຄົມຂອງປະເທດຫຼາຍຂຶ້ນ. ເຖິງຢ່າງໃດກໍຕາມຈາກການສຶກສາພົບວ່າໃນໄລຍະທຳອິດຂອງ "ຈິນຕະນາການໃໝ່" ພາຍໃຕ້ການນຳຂອງປະທານໄກສອນ ພົມວິຫານ ຫຼື ໃນໄລຍະກ່ອນ ປີ ຄສ 1990 ທິດທາງໂດຍລວມຂອງນະໂຍບາຍຂອງແນວທາງການຈັດການສຶກສາ ຍັງມີລັກສະນະດັ່ງເດີມ. ຈຸດມຸ່ງໝາຍຂອງນະໂຍບາຍການສຶກສາ ຍັງເວົ້າເຖິງການໃຫ້ຄວາມສຳຄັນກັບການ "ສ້າງຄົນສັງຄົມນິຍົມ". ແຕ່ໄລຍະຕໍ່ມາໂດຍສະເພາະ ປີ ຄສ 1990 ເປັນຕົ້ນມາເປັນໄລຍະເວລາທີ່ພັກ ແລະ ລັດຖະບານລາວໄດ້ຕັດສິນໃຈເດີນໜ້າບົນເສັ້ນທາງຂອງຈິນຕະນາການໃໝ່ຢ່າງຈິງຈັງຫຼາຍຂຶ້ນ. ນະໂຍບາຍການສຶກສາຂອງລາວກ້າວໄປສູ່ທິດທາງຂອງ "ແນວຄິດປະຕິຮູບ" ຫຼາຍຂຶ້ນເຊັ່ນກັນ. "ນະໂຍບາຍການສຶກສາ ປະກົດໃນລັດຖະທຳມະນູນ ເປັນສ່ວນໜຶ່ງທີ່ສະທ້ອນເຖິງຄວາມປ່ຽນແປງດັ່ງກ່າວ ຄື

"ການພັດທະນາຄົນລຸ້ນໃໝ່ໃຫ້ເປັນພົນລະເມືອງດີ" ລັດຖະທຳມະນູນສະບັບ ນີ້ຍັງລະບຸເຖິງການ ອະນຸຍາດ ໃຫ້ມີການຈັດການສຶກສາຂອງພາກເອກະຊົນ, ຄວບຄູ່ໄປກັບການສຶກສາຂອງລັດ ເພື່ອແບ່ງ ເບົາພາລະຂອງລັດ ແລະ ເພື່ອໃຫ້ການສຶກສາຂະຫຍາຍຕົວຢ່າງວ່ອງໄວ, ສອດຄ່ອງກັບຄວາມຕ້ອງ ການຂອງຜູ້ຮຽນຫຼາຍຂຶ້ນ. ສະແດງເຖິງການປ່ຽນແປງນະໂຍບາຍການສຶກສາຈາກໃນອະດີດທີ່ລັດເປັນ ຜູ້ດູແລການຈັດການສຶກສາແຕ່ພຽງຜູ້ດຽວ. ອັດຕາການເຂົ້າຮຽນໃນລະດັບອະນຸບານ ແລະ ສາມັນ ສຶກສາ ລະຫວ່າງ ປີ 1983-1989.

ຕາຕະລາງທີ 6: ການສຶກສາໂຮງຮຽນຕ່າງໆໃນລາວແຕ່ປີ1983-1989

ປີການສຶກສາ	ອະນຸບານ	ປະຖົມ	ມັດທະຍົມຕົ້ນ	ມັດທະຍົມປາຍ	ລວມ
1983-1984	13.269	481.871	64.500	17.492	599.132
1984-1985	16.137	495.375	69.226	20.093	600.831
1985-1986	26.143	561.806	82.077	27.681	697.707
1986-1987	27.298	558.852	82.077	30.317	705.440
1987-1988	22.621	571.630	92.487	31.380	718.118
1988-1989	28.167	563.734	93.745	31.891	717.537

ໄລຍະທີ 2 ພັກ ແລະ ລັດຖະບານພາຍໃຕ້ການນຳພາຂອງທ່ານໄກສອນ ພົມວິຫານ ໄດ້ ປະກາດ "ຍຸດທະສາດການສຶກສາຕັ້ງແຕ່ນີ້ເຖິງ ປີ ຄສ 2000" ເພື່ອເປັນແນວທາງໃນການພັດທະນາ ການສຶກສາ ໃນໄລຍະຍາວຂອງປະເທດ. ນັບແຕ່ ປີ ຄສ 1987 ແຕ່ເພື່ອໃຫ້ສອດຄ່ອງກັບສະພາບການ ຂອງການພັດທະນາເສດຖະກິດ ທີ່ປ່ຽນແປງໄປຢ່າງວ່ອງໄວ. ພາຍຫຼັງ ການປະກາດໃຊ້ນະໂຍບາຍ ຈີນຕະນາການໃໝ່. ດັ່ງນັ້ນ ປີ ຄສ 1993 ປີດຽວກັບທີ່ມີການປະກາດ "ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ, ສຳລັບ ປີ ຄສ 1993-ປີ ຄສ 2000" ພັກ ແລະ ລັດຖະບານພາຍໃຕ້ການນຳພາ ຂອງ ທ່ານ ຄຳໄຕ ສີພັນດອນ ໄດ້ສ້າງຕັ້ງແຜນຍຸດທະສາດໃນການພັດທະນາການສຶກສາໄລຍະຍາວຂຶ້ນ ໃໝ່. ໂດຍມີການປະຊຸມຄົບຄະນະ ຄັ້ງທີ 7 ສະໄໝທີ 5 ຂອງຄະນະບໍລິຫານງານສູນກາງພັກ ປະຊາຊົນປະຕິວັດ ລາວໃນວັນທີ 20 ກັນຍາ ປີ ຄສ 1993 ກອງປະຊຸມໄດ້ມີມະຕິ ໃຫ້ມີການປະຕິຮູບ ການພັດທະນາຊັບ ພະຍາກອນມະນຸດຄັ້ງໃຫຍ່ທີ່ສຸດຂອງປະເທດ. ນັບແຕ່ມີການປະກາດ ໃຊ້ ນະໂຍບາຍຈີນຕະນາການໃໝ່ ໂດຍຜ່ານແຜນການພັດທະນາຊັບພະຍາກອນມະນຸດ ໃນດ້ານຕ່າງໆ ລວມມີ 6 ດ້ານໄດ້ແກ່: ດ້ານການສ້າງກຳລັງຄົນ, ດ້ານພະນັກງານລັດຖະກອນ, ດ້ານການສຶກສາ, ດ້ານວັດທະນະທຳ, ດ້ານສາທາລະນະສຸກ ແລະ ດ້ານການພັດທະນາຊາວໜຸ່ມ. ໃນກອງປະຊຸມຜູ້ ບໍລິຫານການສຶກສາທົ່ວປະເທດ ໃນປີດຽວກັນ, ຍັງໄດ້ມີການກຳນົດທັດສະນະ ແລະ ແນວທາງ ນະໂຍບາຍໃນການຈັດການສຶກສາຂອງປະ ເທດໃນແຜນພັດທະນາການສຶກສາ ໄລຍະຍາວ ທີ່ເອີ້ນວ່າ "ແຜນພັດທະນາການສຶກສາໃນຕໍ່ໜ້າ ແລະ ຍາວນານ ແຕ່ນີ້ຮອດ ປີ ຄສ 2000" ຊຶ່ງໄດ້ຮັບການ ພັດທະນາ ແລະ ນຳມາໃຊ້ເປັນແຜນແມ່ບົດຂອງ ການພັດທະນາການສຶກສາໃນຍຸກຫຼັງທ່ານ ໄກສອນ ພົມວິຫານ ຊຶ່ງແຜນພັດທະນາການສຶກສາ.

ງ. ນະໂຍບາຍດ້ານສາທາລະນະສຸກ

ໃນການກໍ່ສ້າງສັງຄົມນິຍົມ ພັກ - ລັດຖະບານລາວບໍ່ພຽງແຕ່ໄດ້ເອົາໃຈໃສ່ ເຖິງການສ້າງ ສະຖິຕິຂອງຄົນເທົ່ານັ້ນຫາກຍັງເອົາໃຈໃສ່ການສ້າງຮ່າງກາຍ, ພະລະກຳລັງ ແລະ ສຸຂະພາບຂອງຄົນ ອີກດ້ວຍ. ວຽກງານສາທາລະນະສຸກ, ກິລາກາຍະກຳມີບົດບາດສຳຄັນທີ່ສຸດ ໃນການປົກປັກຮັກສາ ແລະ ເພີ່ມທະວີສຸຂະພາບຂອງປະຊາຊົນ ເຮັດໃຫ້ພະລະກຳລັງສົມບູນແຂງແຮງ. ວຽກງານສາທາ

ລະນະສຸກາລັດເຮົາ ໄດ້ກໍ່ສ້າງໂຮງໝໍໄດ້ອີກຫຼາຍແຫ່ງໃນຫຼາຍທ້ອງຖິ່ນ ໄດ້ມີຂະບວນການປຸກສ້າງ ສຸກສາລາຢູ່ຂັ້ນຕາແສງ, ມີຖ້ຽຢາປະຈຳບ້ານ ແລະ ຂະຫຍາຍອານາໄມສາມສະອາດ, ໄດ້ຂະຫຍາຍ ຈຳນວນແພດຊັ້ນສູງ, ຊັ້ນກາງ ແລະ ຊັ້ນຕົ້ນ ໃນປີ ຄສ 1985 ທຽບໃສ່ ປີ ຄສ 1980 ໄດ້ເພີ່ມຂຶ້ນ 59% ໃນປີ ຄສ 1985 ສາທາລະນະສຸກໄດ້ເອົາໃຈໃສ່ປັບປຸງ ແລະ ຂະຫຍາຍຕາໜ່າງສາທາ ລະນະສຸກລົງຮອດຮາກຖານໃນແຜນການ 5 ປີ. ຈຳນວນໂຮງໝໍນ້ອຍ, ສຸກສາລາຢູ່ຮາກຖານເພີ່ມຂຶ້ນ 2 ເທົ່າ. ຮອດ ປີ ຄສ 1990 ຈຳນວນພະນັກງານແພດເພີ່ມຂຶ້ນ 55% ໃນຈຳນວນພົນລະເມືອງ 10.000 ຄົນໃດ ຈະມີແພດຊັ້ນສູງ 3 ຄົນ, ຊັ້ນກາງ ແລະ ຊັ້ນຕົ້ນ 31 ຄົນ ,ຕຸ໊ງຄົນເຈັບ 31 ໜ່ວຍ, ຈະເພີ່ມການ ປັບປຸງແຕ່ງຢາພື້ນເມືອງແລະ ຊຸກຍຸ້ການສົມທົບຢາຫຼວງກັບຢາພື້ນເມືອງ ໃນການປິ່ນປົວພະຍາດໃຫ້ ກວ້າງຂວາງກວ່າເກົ່າ.ຈະຕ້ອງເອົາໃຈໃສ່ວຽກງານໂຄສະນາອົບຮົມປະຊາຊົນໃຫ້ປະຕິບັດການອານາໄມ ສາມສະອາດຕ້ານພະຍຸ ແລະ ພະຍາດຕິດແປດຕ່າງໆ[58].

1.4.3.2 ແນວທາງການຕ່າງປະເທດ

ນະໂຍບາຍແນວທາງຕ່າງປະເທດ ກ່ຽວກັບທິດທາງໜ້າທີ່ການຕ່າງປະເທດ, ກອງປະຊຸມ ໃຫຍ່ ຢືນຢັນສືບຕໍ່ຍຶດໝັ້ນ ແລະ ປະຕິບັດນະໂຍບາຍການຕ່າງປະເທດເອກະລາດ, ສັນຕິພາບ ແລະ ມິດຕະພາບຂອງພັກ ແລະ ລັດຖະບານລາວຖືເປັນສຳຄັນ ແລະ ເພີ່ມທະວີຢ່າງບໍ່ຢຸດຢັ້ງ ເພື່ອຮັດແໜ້ນ ຄວາມສາມັກຄີ ແລະ ເປີດກວ້າງການພົວພັນຮ່ວມມືຮອບດ້ານກັບຫວຽດນາມ, ກຳປູເຈຍ, ກັບສະຫະ ພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ. ພ້ອມກັນນັ້ນກໍສືບຕໍ່ຂະຫຍາຍ ການພົວ ພັນກັບທຸກປະເທດໃນໂລກ ໂດຍບໍ່ຈຳແນກລະບອບການເມືອງ ແລະ ສັງຄົມແຕກຕ່າງກັນບົນພື້ນຖານ ແຫ່ງການເຄົາລົບເອກະລາດ, ອະທິປະໄຕຂອງກັນ, ສະເໝີພາບຕ່າງຝ່າຍຕ່າງມີຜົນ. ແນໃສ່ສ້າງເງື່ອນ ໄຂສາກົນອັນສະດວກໃຫ້ແກ່ການປະຕິບັດສອງໜ້າທີ່ຍຸດທະສາດ, ພ້ອມກັນນັ້ນກໍເພື່ອເຮັດໃຫ້ຫຼ້ອນ ພັນທະສາກົນຂອງຕົນ.

[58] ເອກະສານກອງປະຊຸມໃຫຍ່ຄັ້ງທີ4 ຂອງພັກປະຊາຊົນປະຕິວັດລາວ1986; ໜ້າ121, 248, 273.

ຄຳຖາມ:

1. ການຂຶ້ນປະຫວັດສາດລາວມີພັດທະນາການໃນການຂຶ້ນມາແນວໃດ?
2. ຮ່ອງຮອຍຫຼັກຖານທາງບູຮານຄະດີທີ່ບົ່ງບອກເຖິງພັດທະນາການຊຸມຊົນໃນດິນແດນລາວ ມີແນວໃດແດ່ ?
3. ແນວຄິດກ່ຽວກັບຖິ່ນກຳເນີດຊາດລາວປະກອບມີແນວຄິດໃດແດ່ ?
4. ຈົ່ງອະທິບາຍຍຸດທະວິທີການສູ້ຮົບທີ່ພະເຈົ້າໄຊຍະເຊດຖາທິລາດນຳມາໃຊ້ໃນການຕີຕ້ານ ການຮຸກຮານຂອງສັກດິນາພະມ້າ?
5. ຈົ່ງປຽບທຽບ ແລະ ອະທິບາຍກ່ຽວກັບພັດທະນາການຂອງອານາຈັກລາວລ້ານຊ້າງໃນ ແຕ່ລະຊ່ວງ?
6. ເຈົ້າອະນຸວົງໄດ້ມີແຜນການເພື່ອກຽມຄວາມພ້ອມໃຫ້ແກ່ພາລະກິດການຕໍ່ສູ້ກູ້ຊາດ ຄື ແນວໃດ?
7. ຈົ່ງບອກເຖິງສາເຫດທີ່ປະລາໄຊ ແລະ ຄວາມໝາຍປະຫວັດສາດຂອງຂອງການຕໍ່ສູ້ກູ້ ເອກະ ລາດ ຂອງປະຊາຊົນພາຍໃຕ້ການນຳພາຂອງເຈົ້າອະນຸວົງ.
8. ຈົ່ງອະທິບາຍຫຍໍ້ກ່ຽວກັບການຮຸກຮານແລະການຄອບຄອງຂອງຝຣັ່ງ?
9. ເປັນຫຍັງອາເມຣິກາຈຶ່ງເຂົ້າແຊກແຊງແລະຮຸກຮານລາວຈົ່ງອະທິບາຍ?
10. ຈົ່ງອະທິບາຍສາມບາດກ້ອນຍຸດທະສາດທີ່ພັກນຳໃຊ້ເຂົ້າໃນການຍຶດອຳນາດ ປີ ຄສ 1975?
11. ພາຍຫຼັງປະເທດລາວໄດ້ຮັບການປົດປ່ອຍເປັນ ສປປລາວ ເພີ່ນໄດ້ມີການປົກປັກຮັກສາ ແລະ ສ້າງສາປະເທດຊາດຄືແນວໃດ? ເພີ່ນໄດ້ມີການພັດທະນາປະເທດຕາມເສັ້ນທາງ ຈິນຕະນາການໃໝ່ຄືແນວໃດ

ບົດທີ

2


ລັກສະນະທາງພາຍະພາບ ຂອງປະເທດລາວ

2.1 ທີ່ຕັ້ງ, ຂອບເຂດຊາຍແດນ, ຮູບຮ່າງ ແລະ ເນື້ອທີ່

2.1.1 ທີ່ຕັ້ງ ແລະ ຂອບເຂດຊາຍແດນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕັ້ງຢູ່ໃຈກາງຂອງແຫລມອິນດູຈີນ ຊຶ່ງແມ່ນຂົງເຂດໜຶ່ງທີ່ນອນໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ອີງຕາມຈຸດມາດຕະຖານ (ຈຸດພິກັດ) ດ້ານພູມີສາດໂລກ, ປະເທດລາວຕັ້ງຢູ່ເຟື້ອງໂລກເໜືອ ແລະ ຊີກໂລກຕາເວັນອອກ. ທິດເໜືອສຸດ ຢູ່ເຂດບ້ານລາມຖຸຍ, ເມືອງຍອດອູ (ແຂວງຜົ້ງສາລີ) ກົງກັບເສັ້ນຂະໜານທີ 22°30' ເໜືອ; ທິດໃຕ້ສຸດ ຢູ່ບ້ານ ຂີ້ນາກ, ເມືອງໂຂງ (ແຂວງຈຳປາສັກ) ກົງກັບເສັ້ນຂະໜານທີ 13°54' ເໜືອ; ທິດຕາເວັ້ນອອກສ່ຽງໃຕ້ ແມ່ນຢູ່ເຂດນ້ຳເຊຂະໜາມ (ແຂວງອັດຕະປື) ກົງກັບເສັ້ນແວງທີ 106°38' ຕາເວັ້ນອອກ; ທິດຕາເວັ້ນອອກສ່ຽງເໜືອແມ່ນຢູ່ເຂດນາປາວບ້ານເຕົາ (ແຂວງຫົວພັນ) ກົງກັບເສັ້ນແວງທີ 104°59' ຕາເວັ້ນອອກ, ທິດຕາເວັ້ນຕົກສຸດ ແມ່ນຢູ່ເຂດບ້ານຄອນ, ເມືອງຕົ້ນເຜິ້ງ (ແຂວງບໍ່ແກ້ວ) ກົງກັບເສັ້ນແວງທີ 100° 05' ຕາເວັ້ນອອກ[60]

ແຜນທີ 3: ແຜນທີ່ການເມືອງພາກພື້ນອາຊີຕາເວັ້ນອອກສ່ຽງໃຕ້



ເມື່ອເບິ່ງຕາມເຂດອາກາດຂອງໂລກ ແມ່ນນອນໃນເຂດອາກາດຮ້ອນຊຸ່ມມໍລະສຸມ, ປະເທດລາວ ເປັນປະເທດດຽວໃນຂົງເຂດນີ້ທີ່ບໍ່ມີຊາຍແດນຕິດກັບທະເລ ແຕ່ກໍມີຊາຍແດນຕິດກັບ 5 ປະເທດ ຄື:

- ພາກເໜືອຕິດກັບ ສ.ປ ຈີນ ມີຊາຍແດນຮ່ວມກັນຍາວ 505 ກມ
- ພາກໃຕ້ຕິດກັບ ລາຊະອານາຈັກກຳປູເຈຍ ມີຊາຍແດນຮ່ວມກັນຍາວ 535 ກມ

[60] ສູນສະຖິຕິແຫ່ງຊາດ. ສະຖິຕິ ປີ 2012. ກະຊວງແຜນການ ແລະການລົງທຶນ. ນະຄອນຫລວງວຽງຈັນ

- ພາກຕາເວັນອອກຕິດກັບ ສ.ສ ຫວຽດນາມ ມີຊາຍແດນຮ່ວມກັນຍາວ 2069 ກມ
- ພາກຕາເວັນຕົກຕິດກັບ ລາຊະອານາຈັກໄທ ມີຊາຍແດນຍາວ 1835 ກມ
- ພາກຕາເວັນຕົກສ່ຽງເໜືອຕິດກັບ ສະຫະພາບມຽນມ້າ ມີຊາຍແດນຮ່ວມກັນ 236 ກມ

ເວົ້າລວມແລ້ວ ທີ່ຕັ້ງທາງດ້ານພູມີສາດຂອງປະເທດລາວ ໄດ້ສ້າງເງື່ອນໄຂສະດວກຫລາຍປະການ ໃຫ້ແກ່ການພັດທະນາເສດຖະກິດ, ສັງຄົມຂອງລາວໃນອານາຄົດ ເນື່ອງຈາກວ່າ ເປັນປະເທດທີ່ຕັ້ງຢູ່ລະຫວ່າງກາງຂອງແຫລມອິນດູຈີນ ຊຶ່ງເປັນຈຸດເຊື່ອມຕໍ່ລະຫວ່າງທະວີບອາຊີ ກັບທະວີບມະຫາສະໝຸດ, ເປັນທາງຄົບລະຫວ່າງພາກພື້ນອາຊີຕາເວັນອອກ ກັບອາຊີຕາເວັນຕົກ, ອາຊີຕາເວັນອອກໃກ້ກັບ ອາຊີຕາເວັນອອກສ່ຽງໃຕ້ ພ້ອມກັນນັ້ນກໍມີຊາຍແດນຕິດກັບຫລາຍປະເທດ, ສ້າງເງື່ອນໄຂສະ ດວກໃຫ້ແກ່ການແລກປ່ຽນວັດທະນະທຳ, ສັງຄົມ, ຮ່ວມມືກັບເພື່ອນບ້ານໃກ້ຄຽງ ເປັນຕົ້ນແມ່ນການພົວພັນເຊິ່ງກັນ ແລະ ກັນທາງດ້ານເສດຖະກິດ.

2.1.2 ລັກສະນະຮູບຮ່າງ ແລະ ເນື້ອທີ່


ປະເທດລາວ ເປັນປະເທດທີ່ມີຮູບຮ່າງຍາວຢຽດຕາມລວງຂອງເສັ້ນແວງ, ຄວາມຍາວແຕ່ເໜືອເຖິງໃຕ້ປະມານ 1000 ກມ. ທາງພາກເໜືອ ກ້ວາງກ່ວາພາກສ່ວນອື່ນຂອງປະເທດ, ບ່ອນກ້ວາງສຸດ ກົງກັບເສັ້ນຂະໜານທີ 20° ເໜືອ ມີຄວາມກ້ວາງປະມານ 500 ກມ ແລະ ແຄບສຸດ ຢູ່ພາກກາງປະມານ 150 ກມ. ສ່ວນພາກໃຕ້ ຄ່ອຍໆກ້ວາງອອກໜ້ອຍໜຶ່ງ, ບ່ອນກ້ວາງສຸດກົງກັບເສັ້ນຂະໜານທີ 16° ເໜືອ ມີຄວາມກ້ວາງປະມານ 200 ກມ. ຍ້ອນປະເທດລາວມີຮູບຮ່າງຍາວຢຽດຕາມລວງຂອງເສັ້ນແວງຄືແນວນັ້ນ ຈຶ່ງເຮັດໃຫ້ມີຄວາມແຕກຕ່າງກັນທາງດ້ານສະພາບສິ່ງແວດລ້ອມທາງທຳມະຊາດ, ໂດຍສະເພາະແມ່ນພູມອາກາດ, ແມ່ນ້ຳລຳເຊ, ດິນ, ພືດ ແລະ ສັດ.

ເນື້ອທີ່ທັງໝົດຂອງ ສປປ ລາວ ມີປະມານ 236.800 ກມ² ຊຶ່ງເທົ່າກັບ 1/186 ຂອງເນື້ອທີ່ທະວີບອາຊີ ຖ້າທຽບໃສ່ທະວີບອື່ນໆ ໃນໂລກ ເຫັນວ່າມີເນື້ອທີ່ຢູ່ລະດັບກາງ, ແຕ່ຖ້າທຽບໃສ່ດ້ານຄວາມໜາແໜ້ນຂອງປະຊາກອນແລ້ວ ເຫັນວ່າປະເທດລາວເປັນປະເທດດຽວໃນອາຊີຕາເວັນອອກສ່ຽງໃຕ້ທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍັງວ່າງເປົ່າຫລາຍ, ເນື້ອທີ່ສ່ວນໃຫຍ່ຍັງບໍ່ທັນໄດ້ຮັບການຂຸດຄົ້ນ ແລະ ນຳໃຊ້ເທື່ອ.

2.2 ພູມສັນຖານ

ສປປ ລາວ ເປັນປະເທດທີ່ມີພູມສັນຖານຫລາກຫລາຍປະເພດ ເຊັ່ນ: ມີພູສູງທີ່ຄຽງຄູ່ກັບຮ່ອມ ພູເລີກ, ມີເທວ, ຜາຊັນ, ພູຕ່ຳ, ພູພຽງ, ທົ່ງພຽງ ສະຫລັບຊັບຊ້ອນກັນໄປ ຊຶ່ງໃນນັ້ນພູສູງ ແລະ ພູພຽງໄດ້ກວມເອົາເນື້ອທີ່ສ່ວນໃຫ່ຍ ຄື: ພູທີ່ມີລະດັບສູງແຕ່ 1,000 ມ ຂຶ້ນໄປກວມເຖິງ 30%, ພູຕ່ຳ ແລະ ພູພຽງ ແຕ່ 200 ຫາ 1000 ມ ກວມ 50%. ສ່ວນທົ່ງພຽງນັ້ນ ກວມພຽງແຕ່ 20% ຂອງເນື້ອທີ່ທົ່ວປະເທດເທົ່ານັ້ນ ຊຶ່ງໂດຍສ່ວນໃຫ່ຍແລ້ວ ປະກອບເປັນລ້ອງເປັນແລວທີ່ຍາວຢຽດ ລຽບຕາມແຄມແມ່ນ້ຳຂອງນັບຕັ້ງແຕ່ນະຄອນຫລວງວຽງຈັນ ໄປຮອດຊາຍແດນລາວ - ກຳປູເຈຍ.

ແຜນທີ 4: ພູມສັນຖານຂອງ ສປປ ລາວ



ເນື່ອງຈາກວ່າພູສູງສ່ວນຫລາຍໄດ້ເຕົ້າໂຮມກັນຢູ່ທາງພາກເໜືອ ແລະ ທາງພາກຕາເວັນ ອອກສ່ຽງເໜືອ. ດັ່ງນັ້ນຈຶ່ງເຮັດໃຫ້ພູມສັນຖານຂອງລາວມີລັກສະນະຫ່ຽງໄປທາງພາກໃຕ້ ແລະ ທາງພາກຕາເວັນຕົກ. ພູມສັນຖານຂອງ ສປປ ລາວ ສ່ວນໃຫຍ່ເປັນພູສັນຖານສູງ ຄືມີລະດັບສູງ ໂດຍສະເລ່ຍຕັ້ງແຕ່ 500 ຫາ 700 ມ ໂດຍອີງຕາມຮູບແບບຂອງພູມສັນຖານ, ໂຄງສ້າງທາງທໍລະນີ ແລະ ຂະບວນການປະກອບສ້າງທາງທໍລະນີສັນຖານ, ພູມສັນຖານຂອງ ສປປ ລາວ ແບ່ງອອກເປັນ ເຂດ ແລະ ປະເພດຕ່າງໆ ຕື່ນຕໍດັ່ງນີ້:

2.2.1 ພູ ແລະ ສາຍພູ

ເປັນພື້ນທີ່ທີ່ມີລະດັບສູງກ່ວາລະດັບນ້ຳທະເລໂດຍສະເລ່ຍແຕ່ 1000 ມ. ພື້ນທີ່ລັກສະນະນີ້ ມີຢູ່ພາກເໜືອຂອງປະເທດ ຊຶ່ງຈັດວ່າເຂດທີ່ມີພູມສັນຖານມີລັກສະນະສະຫລັບຊັບຊ້ອນ ແລະ ຕັດຜ່ານ ໄປມາໄດ້ຍາກ ແລະ ຍັງເປັນເຂດພູມສັນຖານສູງກ່ວາໝູ່ຢູ່ໃນລາວອີກດ້ວຍ. ເຂດດັ່ງກ່າວນີ້ ແບ່ງອອກ ເປັນເຂດຕ່າງໆ ດັ່ງນີ້:

- ເຂດຕາເວັນອອກ ແລະ ຕາເວັນອອກສ່ຽງໃຕ້: ເປັນບໍລິເວນດ້ານເໜືອຂອງສາຍພູຫລວງ ຊຶ່ງເຂດນີ້ກວມເອົາ ແຂວງຫົວພັນ, ເຂດຕາເວັນອອກຂອງ ແຂວງຊຽງຂວາງ ແລະ ເຂດຕາເວັນອອກ ຂອງ ແຂວງວຽງຈັນ. ພູສູງຢູ່ໃນເຂດນີ້ມີ ພູຊາວ, ພູສັນ, ພູເລີຍ, ພູສາມສຸມ ແລະ ພູເບ້ຍ ຊຶ່ງເປັນ ພູທີ່ມີຈອມສູງທີ່ສຸດໃນປະເທດຄື ມີຈອມສູງ 2,820 ມ.

- ເຂດຕາເວັນຕົກ: ກວມເອົາ ແຂວງຫລວງນ້ຳທາ, ຜົ້ງສາລີ, ໄຊຍະບູລີ, ອຸດົມໄຊ ແລະ ຫລວງພະບາງ. ພູທີ່ສຳຄັນຢູ່ໃນເຂດນີ້ມີ ພູສີງ, ພູຄຳ, ພູລາວປີ ແລະ ອື່ນໆ.

2.2.2 ພູພຽງ

ຄືພື້ນທີ່ຊຶ່ງສູງກ່ວາລະດັບນ້ຳທະເລແຕ່ 200 - 1000 ມ ຊຶ່ງປະກົດໃຫ້ເຫັນເປັນບໍລິເວນຕ່າງໆ ຕັ້ງແຕ່ແຂວງຊຽງຂວາງ ລົງໄປທາງໃຕ້ຂອງປະເທດ ໂດຍຂະໜານໄປຕາມແນວຂອງສາຍພູຫລວງ ແລະ ຄູ່ຂະໜານໄປກັບແມ່ນ້ຳຂອງ. ພູພຽງທີ່ສຳຄັນກໍ່ມີ ພູພຽງເມືອງພອນ, ພູພຽງນາກາຍ, ພູພຽງ ກະລຶມ, ພູພຽງຕະໂອ້ຍ, ພູພຽງບໍລິເວນ, ພູພຽງກະເສງ ແລະ ອື່ນໆ.

2.2.3 ທົ່ງພຽງ

ປະເທດເຮົາມີ 3 ທົ່ງພຽງໃຫຍ່ ແລະ ສຳຄັນ ຄື: ທົ່ງພຽງວຽງຈັນ, ທົ່ງພຽງສະຫວັນນະເຂດ ແລະ ທົ່ງພຽງຈຳປາສັກ, ທົ່ງພຽງສ່ວນຫລາຍເຕົ້າໂຮມຢູ່ລຽບຕາມແຄມແມ່ນ້ຳຂອງ ແກ່ຍາວຕັ້ງແຕ່ ພາກຕາເວັນອອກສ່ຽງໃຕ້ຂອງ ແຂວງໄຊຍະບູລີ ຈົນເຖິງຊາຍແດນລາວ - ກຳປູເຈຍ. ທົ່ງພຽງເຫລົ່ານີ້ ມີລັກສະນະສູງສະເລ່ຍ ແລະ ເນື້ອທີ່ຈະມີຄວາມແຕກຕ່າງກັນສົມຄວນ ເຊັ່ນວ່າ: ທົ່ງພຽງວຽງຈັນ ມີເນື້ອທີ່ປະມານ 400,000 ເຮັກຕາ, ລະດັບສູງສະເລ່ຍ 162 ແມັດ. ທົ່ງພຽງສະຫວັນນະເຂດ ມີ ເນື້ອທີ່ປະມານ 1,26 ລ້ານເຮັກຕາ, ລະດັບສູງສະເລ່ຍ 300 ແມັດ, ທົ່ງພຽງຈຳປາສັກ ມີເນື້ອທີ່ປະມານ 500,000 ເຮັກຕາ, ລະດັບສູງສະເລ່ຍ 135 ແມັດ. ສ່ວນດິນປູກຝັງ ແມ່ນປະກອບດ້ວຍດິນສັນດອນເກົ່າ, ດິນສັນດອນໃໝ່ຍ້ອນນ້ຳຂອງ ແລະ ສາຂາຂອງມັນນຳເອົາມາທັບຖົມໄວ້. ນອກນັ້ນກໍມີດິນໜອງ, ດິນຊາຍ...

2.3 ພູມອາກາດ

ຄວາມໝາຍຂອງພູມອາກາດ: ແມ່ນລັກສະນະຂອງອາກາດ ທີ່ເກີດຂຶ້ນໃນຊ່ວງໄລຍະເວລາ ຍາວນານ. ຫລື ອາດຈະເປັນໄລຍະ 1 ເດືອນ, 1 ປີ ຫລື ຫລາຍໆປີ. ດັ່ງນັ້ນ, ພູມອາກາດ ແມ່ນການ ລວບລວມສະພາບອາກາດ ຂອງໄລຍະສັ້ນໆໃດໜຶ່ງແລ້ວລວມເປັນພູມອາກາດ. ລັກສະນະຂອງ ອາກາດ ກໍຍັງໝາຍເຖິງການຜັນແປຂອງມູນສ່ວນຕ່າງໆ ໃນອາກາດທີ່ປະກອບເປັນພູມອາກາດ.

ສປປ ລາວ ເປັນປະເທດທີ່ຕັ້ງຢູ່ໃນເຂດອາກາດຮ້ອນ ແລະ ທັງໄດ້ຮັບແສງຕາເວັນຫລາຍ, ດັ່ງນັ້ນ ຈຶ່ງມີອຸນຫະພູມສູງໂດຍທົ່ວໄປ ຄື ສະເລ່ຍແລ້ວຢູ່ໃນລະຫວ່າງ 25°C - 26°C, ໃນນັ້ນ ສຳລັບເດືອນທີ່ໜາວກວ່າໝູ່ເຊັ່ນ ເດືອນທັນວາ - ມັງກອນ ມັນຈະຢູ່ລະຫວ່າງ 20°C - 21°C ແລະ ໃນເດືອນທີ່ຮ້ອນກວ່າໝູ່ຄື ເດືອນເມສາ - ພຶດສະພາ ມັນຈະປ່ຽນແປງແຕ່ 28°C - 30°C ຊຶ່ງໃນໄລຍະ ດັ່ງກ່າວອຸນຫະພູມຂອງບາງມື້ສາມາດຂຶ້ນໄປເຖິງ 40°C - 42°C. ນອກຈາກນັ້ນ, ເນື່ອງຈາກວ່າໄດ້ຮັບ ອິດທິພົນ ຂອງມໍລະສຸມຢູ່ ສປປ ລາວ ຈຶ່ງມີຝົນຕົກຫລາຍພໍສົມຄວນ ຄື ບໍ່ຕ່ຳກວ່າ 1000 ມມ/ປີ ແລະ ມີພຽງແຕ່ 2 ລະດູເທົ່ານັ້ນ ຄື: ລະດູແລ້ງ ແລະ ລະດູຝົນ.

ຕາຕະລາງທີ 7: ຮູບສະແດງການແບ່ງປັນລະດູການຢູ່ປະເທດລາວ



ແລ້ງ	ແລ້ງ	ແລ້ງ	ແລ້ງ	ແລ້ງ	ຝົນ	ຝົນ	ຝົນ	ຝົນ	ຝົນ	ແລ້ງ	ແລ້ງ
ມັງກອນ	ກຸມພາ	ມີນາ	ເມສາ	ພຶດສະພາ	ມິຖຸນາ	ກໍລະກົດ	ສິງຫາ	ກັນຍາ	ຕຸລາ	ພະຈິກ	ທັນວາ

2.3.1 ລະດູແລ້ງ

ເລີ່ມຕົ້ນແຕ່ເດືອນພະຈິກໄປຫາເດືອນມີນາ ຫລື ເດືອນເມສາ. ໃນລະຍະທີ່ທ້ອງຟ້າແຈ່ມໃສດີ ແລະ ອາກາດແຫ້ງ. ແຕ່ຢູ່ທາງພາກເໜືອບາງຄັ້ງກໍມີຝົນຝອຍ ຫລື ໝອກເົ້ວ. ພ້ອມກັບການເລີ່ມຕົ້ນ ຂອງລະດູແລ້ງນີ້ ອຸນຫະພູມກໍຄ່ອຍໆ ຫລຸດລົງ ແລະ ຈະລົງຕ່ຳທີ່ສຸດໃນເດືອນມັງກອນ. ຈາກນັ້ນມັນກໍ ຄ່ອຍໆ ເພີ່ມຂຶ້ນ ແລະ ອາກາດຮ້ອນເອົ້າທີ່ສຸດໃນເດືອນເມສາ ກ່ອນຝົນຕົກທ່າທຳອິດ.

2.3.2 ລະດູຝົນ

ເລີ່ມຕົ້ນແຕ່ເດືອນພຶດສະພາ ໄປຫາທ້າຍເດືອນຕຸລາ. ໃນລະຫວ່າງນີ້ອາກາດບໍ່ປົກກະຕິ ປານໃດ, ທ້ອງຟ້າມີເມກຫລາຍ, ມັກເກີດຟ້າຄະນອງ, ມີຝົນຕົກໜັກ ແລະ ບາງຄັ້ງກໍມີພາຍຸ. ໃນເວລາ ທີ່ມີຟ້າຄະນອງນັ້ນ ອາກາດຈະຮ້ອນອົບເອົ້າ. ແຕ່ພາຍຫລັງຝົນຕົກເຊົ່າແລ້ວ ທ້ອງຟ້າກໍແຈ່ມໃສຂຶ້ນ ແລະ ອາກາດກໍ່ເຢັນ ແລະ ຊຸ່ມຊື່ນດີ. ໃນລະດູຝົນນີ້ ເຖິງວ່າຈະໄດ້ຮັບອິດທິພົນຈາກມວນອາກາດ ຮ້ອນຊຸ່ມ ແລະ ລົມມໍລະສຸມຈາກມະຫາສະໝຸດອິນເດຍ ແລະ ມະຫາສະໝຸດປາຊີຟິກ ແຕ່ຢູ່ບາງເຂດກໍ່ ມັກເກີດພາວະຟ້າແລ້ງໃນຫາງລະດູຢູ່ເລື້ອຍໆ (ປະມານ 15-20 ວັນ) ຊຶ່ງເປັນຝົນສະທ້ອນບໍ່ໜ້ອຍ ຕໍ່ການຜະລິດກະສິກຳ.

ທັງ 2 ລະດູດັ່ງກ່າວນີ້ ມີລັກສະນະແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນ, ໂດຍສະເພາະແມ່ນ ລະຫວ່າງພາກເໜືອກັບພາກໃຕ້ຄື: ພາກເໜືອມີລະດູຝົນສັ້ນກວ່າ, ມີຝົນຕົກໜ້ອຍກວ່າ ແລະ ບໍ່ວ່າຢູ່ໃນ ລະດູໃດໆ ກໍມີອຸນຫະພູມຕ່ຳກວ່າຢູ່ພາກໃຕ້ ທັງມີອັດຕາຄວາມຜິດປ່ຽງຂອງອຸນຫະພູມປະຈຳປີ ຕ່ຳ ກວ່າພາກໃຕ້.

2.4 ຊັບພະຍາກອນທຳມະຊາດ

ປະເທດລາວນັບວ່າເປັນປະເທດທີ່ມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ທີ່ສຳຄັນ, ຊຶ່ງເປັນທີ່ຮູ້ກັນດີຄື: ຊັບພະຍາກອນນ້ຳ, ປ່າໄມ້, ແຮ່ທາດ, ຊັບພະຍາກອນດິນ ແລະ ອື່ນໆ. ໃນໄລຍະສາມທົດສະວັດທີ່ຜ່ານມາການພັດທະນາທາງເສດຖະກິດ ແລະ ສັງຄົມ ໄດ້ມີການ ຂະຫຍາຍຕົວ ໂດຍມີການນຳໃຊ້ຊັບພະຍາກອນເຫລົ່ານີ້ເປັນປັດໄຈພື້ນຖານອັນສຳຄັນ ຄືດັ່ງລຸ່ມນີ້:

2.4.1 ຊັບພະຍາກອນນ້ຳ

ໂລກຂອງເຮົາປະກອບຂຶ້ນດ້ວຍພື້ນດິນ ແລະ ພື້ນນ້ຳ ໂດຍສ່ວນທີ່ເປັນພື້ນນ້ຳນັ້ນມີຢູ່ປະມານ 75% ແລະ ພື້ນດິນ 25% ນ້ຳມີຄວາມສຳຄັນຢ່າງຍິ່ງກັບຊີວິດຂອງພືດ ແລະ ສັດທີ່ຢູ່ເທິງໜ້າໂລກ ລວມທັງມະນຸດເຮົາ.

ນ້ຳທີ່ມີຢູ່ໃນ ສປປ ລາວ ຍັງຄົງຢູ່ໃນສະພາບດີ ເພາະວ່າບໍ່ໄດ້ຖືກຜົນສະທ້ອນຂອງ ສິ່ງແວດລ້ອມເປັນພິດເທື່ອ. ສາຍນ້ຳຕົ້ນຕໍ ແມ່ນສາຍນ້ຳຂອງ ແລະ ປະກອບດ້ວຍສາຂາຂອງມັນອີກ 14 ສາຂາ.ແຫລ່ງນ້ຳເຫລົ່ານີ້ມີຄວາມສຳຄັນເປັນຢ່າງຍິ່ງແກ່ການດຳລົງຊີວິດຂອງຄົນລາວທັງມວນຄື:

ເປັນສິ່ງສຳຄັນ ທີ່ຄົນເຮົາໃຊ້ສຳລັບອຸປະໂພກ ແລະ ບໍລິໂພກ, ເປັນສິ່ງສຳຄັນແກ່ການກະສິກຳ, ແຫລ່ງ ນ້ຳ ເປັນທີ່ຢູ່ອາໄສຂອງປາ ແລະ ສັດນ້ຳອື່ນໆ ທີ່ຄົນເຮົາໃຊ້ເປັນອາຫານ, ເປັນສິ່ງສຳຄັນໃນການຜະລິດ ອຸດສາຫະກຳ, ເປັນແຫລ່ງພະລັງງານຈາກນ້ຳໃຊ້ສ້າງເຂື່ອນໄຟຟ້າອັນມະຫາສານ, ເປັນເສັ້ນທາງ ຄົມມະນາຄົມຂົນສົ່ງ ທີ່ສຳຄັນ ແລະ ນ້ຳຍັງເປັນແຫລ່ງທ່ອງທ່ຽວ ແລະ ອື່ນໆ ອີກ. ໃນປັດຈຸບັນ, ສາຍນ້ຳ ຈຳນວນໜຶ່ງກໍໄດ້ຖືກນຳມາໃຊ້ເຂົ້າໃນການຜະລິດກະແສໄຟຟ້າໄດ້ແລ້ວເຊັ່ນ: ນ້ຳງື່ມ, ເຊໂດນ, ເຊເສັດ, ນ້ຳເທີນ... ນອກຈາກສາຍນ້ຳຕ່າງໆນີ້ແລ້ວ ຍັງມີໜອງ ແລະ ບຶງ ຢູ່ ສປປ ລາວ ກໍມີຫລາຍເຊັ່ນດຽວກັນ ໃນທົ່ວປະເທດ ຊຶ່ງໃນນັ້ນມີຫລາຍກວ່າໜຶ່ງ ແມ່ນແຂວງສະຫວັນນະເຂດ ແລະ ແຂວງວຽງຈັນ.

ນ້ຳໃຕ້ດິນກໍເປັນພາກສ່ວນໜຶ່ງທີ່ສຳຄັນຂອງລະບົບນ້ຳທີ່ມີໃນ ສປປ ລາວ ມັນມີ ຄຸນປະໂຫຍດອັນໃຫຍ່ຫລວງສຳລັບຊີວິດຄວາມເປັນຢູ່ຂອງປວງຊົນລາວ ເພາະວ່າບໍ່ຕ່ຳກວ່າ 90% ຂອງພົນລະເມືອງລາວ ຍັງໃຊ້ນ້ຳສ້າງ, ນ້ຳບາດານ ຫລື ນ້ຳລິນຢູ່ຕາມທຳມະຊາດເພື່ອລ້ຽງຊີວິດ ປະຈຳວັນຂອງຕົນ, ໃນບາງເຂດ ນ້ຳໃຕ້ດິນໄດ້ໄຫລອອກມາສູ່ໜ້າດິນໃນພາວະນ້ຳຮ້ອນ ຊຶ່ງເພີ່ນ ສາມາດນຳໃຊ້ເຂົ້າໃນ ການປິ່ນປົວພະຍາດບາງຊະນິດໄດ້.

ແມ່ນ້ຳເຫລົ່ານີ້ຍັງໄດ້ສະໜອງນ້ຳໜ້າດິນຈຳນວນ 247 ຕື້ ມ^3 ຊຶ່ງເທົ່າກັບ 35% ຂອງ ຈຳນວນນ້ຳທີ່ໄຫລໃນອ່າງແມ່ນ້ຳຂອງ. ຊັບພະຍາກອນນ້ຳໜ້າດິນມີປະມານ 332,5 ກມ^3 ຫລື ຫລາຍກວ່າ 55,000 ມ^3/ຄົນ/ປີ. ເຖິງຢ່າງໃດກໍ່ຕາມທ່າແຮງ ແລະ ຊັບພະຍາກອນນ້ຳເຫລົ່ານີ້ ຍັງບໍ່ໄດ້ຮັບການຂຸດຄົ້ນມານຳໃຊ້ໃຫ້ໝົດເທື່ອ ແລະ ປັດຈຸບັນມີພຽງແຕ່ 2,8% ຂອງຊັບພະຍາກອນນ້ຳ ເຫລົ່ານີ້ໄດ້ຮັບການສຳຫລວດ ແລະ ການພັດທະນາເປັນໄຟຟ້ານ້ຳຕົກເຊິ່ງຍັງບໍ່ເຖິງ 10% ຂອງ ທ່າແຮງທັງໝົດທີ່ຄາດຄະເນມີຢູ່. ໃນປັດຈຸບັນຄວາມຕ້ອງການນ້ຳ ແລະ ການຊົມໃຊ້ນ້ຳຕໍ່ຫົວຄົນຢູ່ ສປປ ລາວ ຍັງຕ່ຳຢູ່. ໃນການພັດທະນາຊັບພະຍາກອນນ້ຳມີທ່າອ່ຽງເພີ່ມຂຶ້ນ. ໂດຍສະເພາະການ ພັດທະນາໄຟຟ້ານ້ຳຕົກ ແລະ ລະບົບຊົນລະປະທານ ການພັດທະນາຊັບພະຍາກອນແຫລ່ງນ້ຳຢູ່ໃນ ສປປ ລາວ ໄດ້ເປັນທັງການລະໂອກາດທີ່ດີ ແລະ ເປັນບັນຫາອັນທ້າທາຍຂອງການຄຸ້ມຄອງ ຊັບພະຍາກອນແຫລ່ງນ້ຳ ຊຶ່ງມີບົດບາດອັນສຳຄັນເພື່ອໃຫ້ມີຄວາມດຸ່ນດ່ຽງລະຫວ່າງການພັດທະນາ ເສດຖະກິດໄປພ້ອມກັບການພັດທະນາຊັບພະຍາກອນນ້ຳ.

2.4.2 ຊັບພະຍາກອນດິນ

ດິນ ແມ່ນຊັບພະຍາກອນທຳມະຊາດທີ່ມີຄວາມສຳຄັນຕໍ່ການຕັ້ງຖິ່ນຖານ ກໍຄືການດຳເນີນ ການຜະລິດກະສິກຳ ຊຶ່ງປະຊາຊົນລາວໄດ້ທຳການບຸກເບີກມາເປັນເວລາດົນນານແລ້ວ, ດິນເປັນ ມູນສ່ວນທີ່ປະກອບດ້ວຍບັນດາທາດຫລໍ່ລ້ຽງໃຫ້ແກ່ການມີຊີວິດຂອງພືດ ໂດຍສະເພາະແມ່ນທາດ ອາຊົດ, ໂປຕາຊຽມ, ຟົດຟາດຊຶ່ງເປັນທາດອາຫານຕົ້ນຕໍຂອງພືດຊະນິດຕ່າງໆ. ນອກຈາກນັ້ນ ຢູ່ໃນດິນ ຍັງມີແຮ່ທາດຊະນິດອື່ນໆ ບໍ່ວ່າຈະເປັນການເຮັດໄຮ່ເຮັດນາ ຫລື ປູກພືດຊະນິດໃດໆ ກໍຕາມແມ່ນ ລ້ວນແຕ່ມີຄວາມຈຳເປັນໃນການໃຊ້ດິນບໍ່ຫລາຍກໍໜ້ອຍ. ດິນ ແມ່ນປັດໄຈໜຶ່ງທີ່ຂາດບໍ່ໄດ້ສຳລັບ ຄວາມເປັນຢູ່ຂອງຄົນເຮົາ.

ໃນປັດຈຸບັນນີ້, ມີຄົນລາວເຖິງ 78,6% ຂອງຈຳນວນພົນລະເມືອງທີ່ເຮັດວຽກຕົວຈິງທາງ ເສດຖະກິດໂດຍສະເພາະແມ່ນຊາວກະສິກອນ ແລະ ໂຄງປະກອບດ້ານເສດຖະກິດຂອງຊາດກໍຖືເອົາ ການກະສິກຳ ແລະ ປ່າໄມ້ເປັນບາດກ້າວເລີ່ມຕົ້ນ. ດິນທີ່ມີຢູ່ໃນ ສປປ ລາວ ເປັນປະເພດດິນທີ່ກຳເນີດ ຂຶ້ນມາຕາມລັກສະນະທາງທໍລະນີສາດ ແລະ ໄດ້ຮັບຜົນກະທົບຈາກຫລາຍປັດໄຈທາງພູມສາດ ເປັນຕົ້ນແມ່ນ: ດ້ານພູມສັນຖານ, ດ້ານອາກາດ, ນ້ຳ, ຊີວະສາດ ແລະ ອື່ນໆ, ໂດຍລວມແລ້ວຢູ່ປະເທດ ລາວເພີ່ນແບ່ງດິນອອກເປັນ 3 ປະເພດຄື: ດິນສັນດອນ, ດິນພູດອຍ (ດິນແຟຣາລິດ) ແລະ ດິນພູໄຟ.

1) ດິນສັນດອນ ຫລື ດິນຂີ້ປ່ວງ:

ເປັນປະເພດດິນສັນດອນໃໝ່ ທີ່ຖືກກະແສນ້ຳນຳມາທັບຖົມເປັນປະຈຳທຸກປີ, ດິນປະເພດນີ້ ມີເນື້ອທີ່ປະມານ 1,2 ລ້ານເຮັກຕາ ຊຶ່ງສ່ວນໃຫຍ່ ແມ່ນເຕົ້າໂຮມກັນຢູ່ເຂດແຄມແມ່ນ້ຳຂອງເຊັ່ນ: ທົ່ງພຽງວຽງຈັນ, ທົ່ງພຽງສະຫວັນນະເຂດ, ທົ່ງພຽງຈຳປາສັກ. ນອກນັ້ນຍັງ ປາກົດຢູ່ຕາມເຂດທົ່ງພຽງຮ່ອມພູ, ຕີນພູ ແລະ ເຂດແຄມລ້ອງແມ່ນ້ຳສາຂາຕ່າງໆ. ດິນສັນດອນໃໝ່ ເປັນປະເພດດິນຝຸ່ນປ່າທີ່ມີ ລັກສະນະຟຸ່ຍ, ຊຶມຊັບນ້ຳໄດ້ດີ, ດິນສັນດອນເກົ່າກໍມີຫລາຍຢູ່ຕາມເຂດທົ່ງພຽງລຽບຕາມແຄມແມ່ນ້ຳ ສາຍຕ່າງໆ ແຕ່ຢູ່ຫ່າງໄກຈາກແຄມແມ່ນ້ຳ ຄື: ເລີ່ມແຕ່ເຂດຕາຝັ່ງສູງຂອງແມ່ນ້ຳທີ່ເປັນຂອບເຂດຂອງ ທົ່ງພຽງຕ່າງໆ ດິນສັນດອນເກົ່າມີລັກສະນະເປັນດິນຟຸ່ຍ ແຕ່ມັນແຈບແໜ້ນກວ່າດິນສັນດອນໃໝ່. ດິນ ສັນດອນເກົ່າຢູ່ບາງແຫ່ງໄດ້ຖືກເຊາະລ້າງ ແລະ ເຈືອປົນກັບຫີນໜາມໜໍ່, ບາງບ່ອນຖືກປະຊາຊົນ ນຳໃຊ້ຫລາຍກາຍເປັນດິນເຊື່ອມທາດ,ເນື້ອດິນສົ້ມ,ຊັ້ນດິນບາງແລະເປັນສີແດງຊ້ຳຫລືເປັນສີເຫລືອງ. ເວົ້າລວມແລ້ວ ດິນສັນດອນເປັນປະເພດດິນທີ່ມີຄວາມອຸດົມສົມບູນດ້ານທາດຫລໍ່ລ້ຽງແກ່ການ ຈະເລີນພັນຂອງພືດນາໆຊະນິດ ແລະ ເປັນດິນທີ່ສາມາດ ນຳໃຊ້ເຂົ້າໃນວຽກງານການປູກຝັງໄດ້ດີ ສົມຄວນ.

2) ດິນພູ (ດິນແຟຣາລິດ):

ເປັນປະເພດດິນທີ່ຢູ່ໃນເຂດພູມສັນຖານສູງແຕ່ 500 ແມັດຂຶ້ນໄປ, ຊຶ່ງສ່ວນຫລາຍ ເປັນ ປະເພດດິນທີ່ເຊື່ອມທາດໄດ້ງ່າຍ,ຖ້ານຳໃຊ້ຕ້ອງໄດ້ໃສ່ຝຸ່ນເພີ່ມເພາະເປັນປະເພດດິນຢູ່ໃນເຂດພູດອຍ ທີ່ຖືກ ເຊາະລ້າງຫລາຍ ເຮັດໃຫ້ດິນເຊື່ອມທາດໄວ ກາຍເປັນດິນສົ້ມ, ຊັ້ນດິນບາງ, ສ່ວນຫລາຍເປັນ ສີແດງຊ້ຳ (ສີກະເບົາ) ຫລື ສີສົ້ມ.

3). ດິນພູໄຟ (ດິນບາຊານ):

ມີຫລາຍຢູ່ທາງພາກໃຕ້ ໂດຍສະເພາະຢູ່ເຂດພູພຽງບໍລະເວນ ມີເນື້ອທີ່ປະມານ 650.000 ເຮັກຕາ. ດິນພູໄຟເປັນປະເພດດິນດີ ມີຄວາມອຸດົມສົມບູນດ້ວຍທາດຫລໍ່ລ້ຽງ, ຊັ້ນດິນໜາ, ດິນມີ ລັກສະນະຟຸ່ຍດີ, ສາມາດຮັກສາຄວາມຊຸ່ມໄດ້ດົນ, ເປັນປະເພດດິນທີ່ເໝາະສົມກັບການປູກພືດ ອຸດສາ ຫະກຳ ເຊັ່ນ: ຊາ, ກາເຟ, ໝາກແໜ່ງ ແລະ ອື່ນໆ ທີ່ໃຫ້ສະມັດຕະພາບ ແລະ ປະລິມານຫລາຍ.

ສັງລວມແລ້ວດິນຢູ່ປະເທດລາວລ້ວນແຕ່ເປັນດິນດີ ມີທາດຫລໍ່ລ້ຽງຫລາຍ ເໝາະສົມກັບ ການປູກ ພືດຫລາຍຊະນິດ ເຊັ່ນ: ພືດອຸດສາຫະກຳ, ພືດໃຫ້ໝາກ, ພືດທາດແປ້ງຊະນິດຕ່າງໆ. ເພື່ອ ເຮັດໃຫ້ດິນມີຄຸນປະໂຫຍດສູງສຸດ, ສາມາດນຳໃຊ້ໄດ້ຍາວນານ, ພວກເຮົາຄວນມີວິທີການນຳໃຊ້ດິນ ໃຫ້ຖືກຕ້ອງ ຄືນຳໃຊ້ຄຽງຄູ່ກັບການປົກປັກຮັກສາ ແລະ ຖະນຸບຳລຸງດິນຢູ່ສະເໝີ.

2.4.3 ຊັບພະຍາກອນອາກາດ

ຊັບພະຍາກອນອາກາດເປັນປັດໄຈຢ່າງໜຶ່ງໃນການດຳລົງຊີວິດຂອງຄົນ, ສັດ ແລະ ພືດ ແລະ ຍັງເປັນສ່ວນປະກອບທີ່ສຳຄັນຂອງໂລກ. ອາກາດຍັງປະກອບດ້ວຍມູນສ່ວນຕ່າງໆ ຄື: ຝຸ່ນລະອອງ, ທາດແຂງ ແລະ ທາດແຫລວ ໃນປະລິມານທີ່ແຕກຕ່າງກັນ. ປັດຈຸບັນອາກາດໃນຫລາຍຈຸດຂອງ ໂລກ ໂດຍສະເພາະຕົວເມືອງ ແມ່ນມີການປ່ຽນແປງຍ້ອນມີທາດມົນລະພິດອັນເປື້ອນ ແລະ ອັນຕະລາຍ ເຂົ້າໄປປະປົນຢູ່ເຊັ່ນ: ຂີ້ຝຸ່ນ, ທາດເຄມີ ຈາກຄວັນລົດ, ຄວັນຈາກໂຮງງານ, ຄວັນໄຟ ຊຶ່ງເປັນ ອັນຕະລາຍຕໍ່ສຸຂະພາບຂອງຄົນ. ນອກນີ້ ການເພີ່ມຂຶ້ນຂອງອັດຕາສ່ວນຂອງກາສເຮືອນແກ້ວໄດ້ ເຮັດໃຫ້ອຸນຫະພູມຂອງໂລກເພີ່ມຂຶ້ນ,ອາກາດມີການປ່ຽນແປງ,ລະດູການມີການປ່ຽນແປງຜິດປົກກະຕິ ຊຶ່ງແຕະຕ້ອງເຖິງລະບົບນິເວດຂອງໂລກ ຕໍ່ເສດຖະກິດ ແລະ ສັງຄົມ ເປັນຕົ້ນການຜະລິດກະສິກຳ ແລະ ກໍ່ໃຫ້ເກີດໄພພິບັດທາງທຳມະຊາດ.

ອາກາດຢູ່ ສປປ ລາວ ຍັງເປັນປະເທດທີ່ມີອາກາດດີສົມຄວນ ຖ້າທຽບໃສ່ຫລາຍປະເທດ ແລະ ໃນໂລກ, ຍ້ອນປະເທດລາວເປັນປະເທດດ້ອຍພັດທະນາ, ການພັດທະນາຍັງບໍ່ທັນຫລາຍ, ການ ຂະຫຍາຍຕົວທາງດ້ານອຸດສາຫະກຳຊ້າ ແລະ ການພັດທະນາໃນດ້ານອື່ນໆ ຍັງບໍ່ທັນຫລາຍ. ແຕ່ບັນຫາການ ປ່ຽນແປງດິນຟ້າອາກາດ ແມ່ນບັນຫາໃໝ່ສຳລັບປະເທດລາວເຮົາ, ຊຶ່ງມັນໄດ້ສົ່ງ ຜົນສະທ້ອນໃສ່ການຜະລິດກະສິກຳບໍ່ໜ້ອຍໃນແຕ່ລະປີ. ເຖິງຢ່າງໃດກໍດີ ປະເທດເຮົາຍັງມີອາກາດທີ່ ສົດໃສ ແລະ ຢູ່ໃນລະດັບດີ ຊຶ່ງສ້າງທ່າແຮງອັນມະຫາສານໃນການພັດທະນາການທ່ອງທ່ຽວ ແລະ ການພັກຜ່ອນ ຢ່ອນໃຈ. ນອກຈາກນັ້ນແລ້ວ ຍັງມີແສງຂອງດວງຕາເວັນ ແມ່ນປັດໄຈໜຶ່ງທີ່ສຳຄັນ ຕັດສິນແກ່ການຄົງຕົວ ແລະ ຂະຫຍາຍຕົວຂອງສິ່ງທີ່ມີຊີວິດຢູ່ເທິງໜ້າໂລກ ແລະ ທັງເປັນຊັບພະຍາກອນ ໜຶ່ງທີ່ນຳໃຊ້ໃນປັດຈຸບັນ ເປັນຕົ້ນແມ່ນພະລັງງານໃຫ້ແກ່ການເດີນເຄື່ອງຈັກປະເພດຕ່າງໆ.

2.4.4 ຊັບພະຍາກອນແຮ່ທາດ

ທາງດ້ານແຮ່ທາດນັ້ນກຳນົດວ່າ ພື້ນທໍລະນີຂອງ ສປປ ລາວ ເປັນຄັງສ່ວງອັນໜຶ່ງທີ່ສະສົມ ຊັບພະຍາກອນ ຊຶ່ງເປັນຫີນແຮ່ຊະນິດຕ່າງໆໄວ້ຢ່າງຫລວງຫລາຍ. ຕາມການສຳຫລວດ ແລະ ຂຸດຄົ້ນ ໃນເບື້ອງຕົ້ນ ເພີ່ນພົບວ່າມີທັງແຮ່ທີ່ເປັນໂລຫະ ແລະ ອະໂລຫະຫລາຍຊະນິດ ຊຶ່ງແຈກຢາຍຢູ່ທົ່ວ ປະເທດຄື: ກົ່ວ, ຊີນ, ເຫລັກ, ທອງແດງ, ຄຳ, ສັງກະສີ, ເງິນ, ຖ່ານຫີນ, ເກືອ ແລະ ອື່ນໆ ອີກ ຊຶ່ງລ້ວນແຕ່ເປັນປະໂຫຍດຢ່າງຫລວງຫລາຍໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມຂອງຊາດລາວ.

1) ຊັບພະຍາກອນປະເພດໂລຫະ.

ກ. ຄຳ (Au): ເປັນໂລຫະທີ່ອ່ອນໜຽວ, ທົນທານ ແລະ ຊ່ວນນຳໄຟຟ້າໄດ້ດີ ທັງເປັນປະເພດ ໂລຫະທີ່ນິຍົມໃຊ້ເປັນເຄື່ອງເອ້ຍ້ອງ ທີ່ງົດງາມ ເຫລື້ອມໃສ ມີລາຄາແພງ. ມີຢູ່ຫລາຍແຫ່ງໃນລາວ, ສ່ວນຫລາຍພົບເຫັນໃນລັກສະນະເປັນເມັດນ້ອຍໆ ເຈືອປົນຢູ່ຕາມດິນສັນດອນຂອງລ້ອງແມ່ນ້ຳຂອງ ແລະ ບາງສາຂາຂອງນ້ຳຂອງ. ນອກຈາກນັ້ນຍັງສັນນິຖານວ່າ ມີບໍ່ຄຳຊັບຊ້ອນໃນຊັ້ນຫີນກາວ ເຊັ່ນ: ຢູ່ທາງຕາເວັນອອກສ່ຽງໃຕ້ຂອງເມືອງຫວ້ຍຊາຍ, ຫລວງພະບາງ, ຊຽງຂວາງ, ເຂດຜົ້ງສາລີ, ເຂດເມືອງ ປາກລາຍ, ເຊໂປນ ສະຫວັນນະເຂດ, ຈຳປາສັກ ແລະ ອັດຕະປື.

ຂ. ເງິນ (AG): ເປັນໂລຫະທີ່ອ່ອນໜຽວ, ທົນທານ ມີສີຂາວ ເປັນປະເພດໂລຫະທີ່ນິຍົມກັນໃຊ້ ເປັນເຄື່ອງເອ້ຍ້ອງປະດັບ, ມີຄວາມງົດງາມ, ເຫລື້ອມໃສ, ມີລາຄາແພງ. ມີຢູ່ຫລາຍແຫ່ງໃນລາວ ເຊັ່ນ: ແຂວງຜົ້ງສາລີ, ຫລວງພະບາງ, ວຽງຈັນ, ຈຳປາສັກ ແລະ ອັດຕະປື.

ຄ. ທອງ (Cu): ເປັນໂລຫະທີ່ມີສີເຫລືອງແດງ, ພົບໃນທຳມະຊາດເປັນທາດສົດ ຫລື ອາດ ລວມຢູ່ໃນແຮ່ອື່ນ, ເປັນໂລຫະທີ່ອ່ອນໜຽວ, ທົນທານ. ທອງເປັນໂລຫະທີ່ສຳຄັນທີ່ໃຊ້ໃນອຸດສາຫະກຳ ການຜະ ລິດໄຟຟ້າ ແລະ ເອເລັກໂຕນິກ, ເຄື່ອງດົນຕີ, ອຸປະກອນຕູ້ເຢັນ, ເຄື່ອງປັບອາກາດ, ອຸປະກອນ ກ່ຽວກັບລົດຍົນ, ອາວຸດ , ຫລຽນກາຕ່າງໆ. ນອກນັ້ນ ຍັງໃຊ້ເຮັດບ່ວງ, ລ້ອມ, ມີດ, ເຄື່ອງມືການແພດ. ແຮ່ທອງບາງຊະນິດມີຄວາມງົດງາມຫລາຍ ສາມາດນຳມາເຮັດເຄື່ອງເອ້ປະດັບໄດ້ດ້ວຍ. ເພີ່ນໄດ້ ຄົ້ນພົບບໍ່ທອງຢູ່ຫລາຍແຂວງ ໂດຍສະເພາະຢູ່ ຫລວງພະບາງ, ຊຽງຂວາງ, ສະຫວັນນະເຂດ, ຈຳປາສັກ... ບໍ່ທອງເຫລົ່ານີ້ໄດ້ປະກອບສ້າງຂຶ້ນໃນຊັ້ນຫີນຊາ ໃນສະໄໝອິນໂດຊີນີອາດ.

ງ. ກົ່ວ (Sn): ເປັນໂລຫະທີ່ອ່ອນໜຽວ, ທົນທານ ໄດ້ນຳໃຊ້ຫລາຍໃນຂະແໜງອຸດສາຫະກຳ ເປັນຕົ້ນ ແມ່ນຜະລິດເຄື່ອງກົນຈັກ, ເຄື່ອງກໍ່ສ້າງ ແລະ ເຄື່ອງໃຊ້ສອຍປະຈຳວັນ ... ແຮ່ກົ່ວ ມີປະລິມານ ຫລາຍກວ່າໝູ່ ແມ່ນຢູ່ເຂດບໍ່ແໜ່ງ, ໂພນຕີ້ວ (ເຂດເໜືອງເມືອງທ່າແຂກ ແຂວງຄຳມ່ວນ) ຊຶ່ງໄດ້ສຳຫລວດ ແລະ ລົງມືຂຸດຄົ້ນໃນປີ 1923 ສະໄໝເປັນຫົວເມືອງຂຶ້ນຂອງຈັກກະພັດຝຣັ່ງ ແລະ ຖືກພວກ ລ່າເມືອງຂຶ້ນຝຣັ່ງຂຸດຄົ້ນເອົາໄປຢ່າງຫລວງຫລາຍ. ນອກນັ້ນ ຍັງພົບຢູ່ເຂດຫລວງນ້ຳທາ, ຊຽງຂວາງ, ສາລະວັນ, ຈຳປາສັກ ແລະ ອັດຕະປື.

ຈ. ຊີນ (Pb): ເປັນໂລຫະທີ່ອ່ອນໜຽວ ໄດ້ນຳໃຊ້ຫລາຍໃນຂະແໜງອຸດສະຫະກຳເປັນຕົ້ນແມ່ນ ຜະລິດໝໍ້ໄຟ, ລູກປືນ, ເຄື່ອງໃຊ້ສອຍປະຈຳວັນ... ເພີ່ນຄົ້ນພົບບໍ່ຊີນຢູ່ແຂວງຊຽງຂວາງ, ຫລວງພະບາງ, ແຂວງວຽງຈັນ, ເຊໂປນ

ສ. ສັງກະສີ (Zn): ເປັນໂລຫະທີ່ອ່ອນໜຽວ, ມີຄວາມທົນທານ ໄດ້ນຳໃຊ້ຫລາຍໃນ ອຸດສາຫະກຳຜະລິດເຄື່ອງກໍ່ສ້າງ ແລະ ເຄື່ອງໃຊ້ສອຍປະຈຳວັນ... ເພີ່ນຄົ້ນພົບຫລາຍຢູ່ ແຂວງຊຽງຂວາງ, ຫລວງພະບາງ, ວຽງຈັນ, ສະຫວັນນະເຂດ ແລະ ອັດຕະປື.

ຊ. ເຫລັກ (Fe): ເປັນໂລຫະທີ່ມີສີຂາວຄືເງິນ, ມີຄວາມໜຽວແໜ້ນ, ທົນທານ, ແຂງແກ່ນ ສາມາດຕີເປັນແຜ່ນ ແລະ ດຶງເປັນເສັ້ນໄດ້ດີ, ນຳໃຊ້ຫລາຍໃນທຸກຂົງເຂດວຽກງານເຊັ່ນ: ນຳໃຊ້ຫລາຍ ໃນອຸດສາຫະກຳຜະລິດເຄື່ອງກົນຈັກ, ເຄື່ອງກໍ່ສ້າງ, ອຸປະກອນໃຊ້ສອຍປະຈຳວັນ... ເປືອກໂລກ ຂອງເຮົາປະກອບດ້ວຍເຫລັກ 5,1 % ສະເພາະຢູ່ປະເທດລາວມີຫລາຍຢູ່ແຂວງຊຽງຂວາງ ເຊັ່ນ: ພູຍອນ, ພູຜາເຫລັກ. ແຮ່ເຫລັກຢູ່ເຂດນີ້ເປັນແຮ່ເຫລັກປະເພດເອມາຕິດ ຊຶ່ງບັນຈຸມູນສ່ວນທາດເຫລັກ ແຕ່ 65 - 75 %, ຊັ້ນເຫລັກຢູ່ຕື້ນ ສາມາດດຳເນີນການຂຸດຄົ້ນທາງແຈ້ງໄດ້. ນອກນັ້ນຍັງປາກົດຢູ່ ແຂວງຫົວພັນ, ຫລວງພະບາງ, ອັດຕະປື


2) ຊັບພະຍາກອນປະເພດອະໂລຫະ

ກ. ເກືອ: ມີຢູ່ເກືອບທຸກແຂວງໃນລາວ ເຊັ່ນ: ແຂວງຜົ້ງສາລີ, ອຸດົມໄຊ... ແຕ່ໃດໆມາ ປະຊາຊົນ ລາວເຄີຍຕັກເອົານ້ຳເຄັ່ມຈາກນ້ຳສ້າງມາຕົ້ມກັ່ນເອົາເກືອ ເພື່ອມາຮັບໃຊ້ໃນຊີວິດປະຈຳວັນ, ຮັບໃຊ້ໃນວຽກງານກະສິກຳ-ປຸງແຕ່ງ ແລະ ຮັບໃຊ້ໃນການປິ່ນປົວພະຍາດ. ນອກຈາກເກືອນ້ຳສ້າງ ແລ້ວຍັງມີເກືອຫາທີ່ເປັນບໍ່ມີຢູ່ເຂດຫລອງນ້ຳທາ, ເຂດທົ່ງພຽງວຽງຈັນ, ແຂວງສະຫວັນນະເຂດ, ອັດຕະປື...

ຂ. ປີລິດ (Fes2): ຈ່ານປີລິດ ເປັນໜຶ່ງໃນບັນດາວັດຖຸດິບພື້ນຖານເພື່ອປຸງແຕ່ງອາຊິດຊຸນ ຟູລິກ. ຈ່ານນີ້ມີຫລາຍສົມຄວນໃນປະເທດລາວ ໂດຍສະເພາະຢູ່ເຂດເມືອງຊຳເໜືອ ແຂວງຫົວພັນ, ເມືອງພູກູດ, ເມືອງສຸຍ ແຂວງຊຽງຂວາງ, ເຂດຕອນໃຕ້ລ້ອງນ້ຳຄານ ແຂວງຫລວງພະບາງ.

ຄ. ໂປຕາດ: ບໍ່ໂປຕາດມີຢູ່ແຂວງວຽງຈັນ, ນະຄອນຫລວງ ຊຶ່ງມີປະລິມານສະສົມເປັນຫລາຍ ລ້ານໂຕນ, ປັດຈຸບັນມີການສຳຫລວດເພື່ອຂຸດຄົ້ນມານຳໃຊ້.

ງ. ຖ່ານຟີດ (ຖ່ານດິນສໍດຳ): ຖ່ານຖ່ານຟີດນີ້ ມີຫລາຍຢູ່ແຂວງວຽງຈັນ ໂດຍສະເພາະ ຢູ່ເຂດ ເມືອງຊະນະຄາມ.



ຮູບທີ 24 : ຕົວຢ່າງຫີນ ແລະ ແຮ່ທາດບາງຊະນິດທີ່ພົບເຫັນທົ່ວໄປໃນ ສປປ ລາວ

ຊັບພະຍາກອນແຮ່ທາດ ເປັນຊັບພະຍາກອນໜຶ່ງ ທີ່ປະກອບສ່ວນໃຫ້ແກ່ການພັດທະນາ ເສດຖະກິດຂອງ ສປປ ລາວ, ໄດ້ມີການຄາດຄະເນວ່າ ມີແຮ່ຄຳຢູ່ 33 ລ້ານໂຕນ, 12 ລ້ານໂຕນ ເປັນຄຳທັບຖົມ, ທອງ 162 ລ້ານໂຕນ, ກົ່ວ 38 ລ້ານໂຕນ ແລະ ຖ່ານຫີນອີກ 7 ລ້ານໂຕນ ແລະ ອື່ນໆ. ຫລາຍສິບປີຜ່ານມາ, ຂະແໜງອຸດສາຫະກຳບໍ່ແຮ່ໄດ້ຂະຫຍາຍຕົວຢ່າງວ່ອງໄວ. ການຂຸດຄົ້ນແຮ່ທາດ ທັງໝົດໄດ້ເພີ່ມຂຶ້ນ ໃນໄລຍະປີ 2005-2008 ຍົກເວັ້ນແຕ່ ຄຳ, ເງິນ, ຊີນ ແລະ ກົ່ວ, (ຕະຕະລາງ 1) ຂະແໜງອຸດສາຫະກຳດັ່ງກ່າວ ໄດ້ປະກອບສ່ວນເຮັດໃຫ້ GDP ເພີ່ມຂຶ້ນ ຈາກຕ່ຳກວ່າ 1% ໃນປີ 2000 ມາຫລາຍກວ່າ 3% ໃນປີ 2005 ແລະ ຮອດ 8% ໃນປີ 2010. ນອກຈາກນີ້, ຂະແໜງອຸດສາຫະກຳບໍ່ແຮ່ ຍັງໄດ້ປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໃນເຂດຊົນນະບົດ.

ຕາລາງທີ 8: ແຮ່ທາດທີ່ໄດ້ຂຸດຄົ້ນໃນ ສປປ ລາວ ແຕ່ປີ 2005 - 2008

ແຮ່ທາດ	2005	2006	2007	2008
ຄຳ + ເງິນ (ໂຕນ)	10,15	12,65	9,09	5,81
ທອງ (ໂຕນ)	30.480	60.804	62.452	64.705
ທອງເຂັ້ມຂຸ້ນ (ໂຕນ)		746	3.358,81	107.430,48
ກົ່ວ (ໂຕນ)	240	809	1.109	260
ບາຣິດ (ໂຕນ)	8.600	6.500	10.000	1.000
ຖ່ານຫີນລິກໄນ (ໂຕນ)	358.637,88	319.242	681.715	600.000
ຫີນກາວ (ໂຕນ)	109.787	206.104	232.250	586.866
ຖ່ານຫີນແອັນທາຣາຊາຍ (ໂຕນ)		62.000	131.972	158.490
ຊີນ (ໂຕນ)	3.500	2.249	2.350	600
ສັງກະສີ (ໂຕນ)	8.000	4.000	12.116	6.079

ຫີນປູນ (ໂຕນ)	190.440	430.000	450.000	911.654
ຫີນ (ມ3)	58.719	900.150	943.000	214.772
ຊາຍ (ມ3)	160.136	900.000	920.000	208.608
ວັດສະດຸກໍ່ສ້າງ (ມ3)				70.210
ດິນ (ມ3)				4.012
ເຫລັກ (ໂຕນ)			20.000	36.218

ແຫລ່ງຂໍ້ມູນ: ກະຊວງພະລັງງານ ແລະ ບໍ່ແຮ່ ປີ 2008

2.4.5 ຊັບພະຍາກອນປ່າໄມ້

ປ່າໄມ້ ນັບວ່າເປັນສົມບັດອັນລ້ຳຄ່າຂອງ ສປປ ລາວ ຊຶ່ງປົກຄຸມພື້ນທີ່ປະມານ 41% ຂອງເນື້ອທີ່ທົ່ວປະເທດ, ປ່າໄມ້ໃນລາວປະກອບດ້ວຍໄມ້ນາໆຊະນິດ ແລະ ມີໄມ້ຢ່າງດີ ຊຶ່ງມີອາຍຸເກີນກວ່າ 100 ປີ ເປັນຈຳນວນຫລວງຫລາຍ. ນອກຈາກໄມ້ແລ້ວ ຢູ່ໃນປ່າຍັງມີເຄື່ອງປ່າຂອງດົງຢ່າງຫລວງຫລາຍ ຊຶ່ງໃນນັ້ນຫລາຍຊະນິດ ກໍເປັນອາຫານສຳຄັນຂອງຊາວລາວ ເຊັ່ນ: ໜໍ່ໄມ້, ໝາກໄມ້, ມັນຕ່າງໆ, ເຫັດ, ຕາວ, ຜັກ... ແລະ ຫລາຍຊະນິດກໍເປັນວັດຖຸດິບສຳລັບປຸງແຕ່ງຢາພື້ນເມືອງ. ນອກຈາກນັ້ນ ຢູ່ໃນປ່າກໍຍັງມີສັດປ່າຊະນິດຕ່າງໆ ອີກ ທີ່ມີຄຸນຄ່າລາຄາສູງ. ຊາວລາວໄດ້ອາໄສປ່າໄມ້ນີ້ ເພື່ອເປັນການດຳລົງຊີວິດຂອງຕົນຄື: ໃຊ້ໄມ້ເພື່ອເຮັດເຮືອນ, ເລົ້າເຂົ້າ, ພາຫະນະການຜະລິດ, ເຄື່ອງມືໃຊ້ສອຍ, ເຮັດຟືນ ແລະ ອື່ນໆ. ໃນປັດຈຸບັນ ລາຍໄດ້ແຫ່ງຊາດສ່ວນໜຶ່ງກໍແມ່ນໄດ້ຈາກປ່າໄມ້ນີ້ເອງ.

ຊັບພະຍາກອນປ່າໄມ້ ນອກຈາກທີ່ກ່າວມາຂ້າງເທິງນັ້ນແລ້ວ ມັນຍັງມີຄວາມສຳຄັນໃນການຊ່ວຍຄວບຄຸມການໄຫລຂອງນ້ຳ, ຊ່ວຍປ້ອງກັນໄພນ້ຳຖ້ວມ, ສາມາດກັກເກັບຮັກສາແຫລ່ງນ້ຳໄດ້ດີ, ຊ່ວຍຟື້ນຟູລະບົບນິເວດ ແລະ ສັດປ່າໃຫ້ມີຄວາມອຸດົມສົມບູນ. ປ່າໄມ້ໃນປະເທດລາວເພີ່ນໄດ້ຈັດແບ່ງອອກເປັນ 05 ລັກສະນະປະເພດປ່າ ຄືດັ່ງລຸ່ມນີ້:

1) ປ່າດົງດິບ: ເປັນປ່າຕຶບດົງໜາທີ່ປະກອບດ້ວຍຕົ້ນໄມ້ໃຫຍ່ ແລະ ສູງຫລາຍຊະນິດເຊັ່ນ: ໄມ້ຍາງ, ໄມ້ແຄນ, ໄມ້ຄະຍຸງ, ໄມ້ເປືອຍ.... ປ່າປະເພດດັ່ງກ່າວໄດ້ແບ່ງອອກເປັນ 3 ຊັ້ນ: ຊັ້ນຕົ້ນໄມ້ໃຫຍ່-ສູງ (ຊັ້ນເທິງ), ຊັ້ນຕົ້ນໄມ້ໃຫຍ່ປານກາງ (ຊັ້ນກາງ) ແລະ ຊັ້ນພື້ນປ່າ (ຊັ້ນດິນ) ຊຶ່ງແຕ່ລະຊັ້ນມີເຄືອເຂົາກ້ຽວຕິດຕໍ່ໃສ່ກັນ. ປ່າດົງດິບຢູ່ໃນລາວຖືກພົບເຫັນຢູ່ຫລາຍບ່ອນ. ໃນເຂດທົ່ງພຽງ ຫລື ຢູ່ຕາມແຄມແມ່ນ້ຳ, ປ່າປະເພດນີ້ມີຫລາຍຢູ່ແຂວງວຽງຈັນ, ຫລວງນ້ຳທາ, ບໍລິຄຳໄຊ, ຄຳມ່ວນ, ສາລະວັນ, ເຊກອງ ແລະ ຈຳປາສັກ. ນອກນັ້ນຍັງມີຢູ່ເຂດພູມສັນຖານສູງ ເຊັ່ນ: ເປີ້ນພູຫລວງ, ພູພຽງເມືອງພວນ ແລະ ເດັ່ນທີ່ສຸດ ແມ່ນເຂດພູພຽງຕ່າງໆທາງພາກໃຕ້.

2) ປ່າສົງ: ເປັນປ່າຕຶບປານກາງ ຫລື ເຕັ່ງຕຶບຊຶ່ງມີຫລາຍກວ່າໝູ່ໃນລາວຄື: ກວມເນື້ອທີ່ເຖິງເຄິ່ງໜຶ່ງຂອງເນື້ອທີ່ປ່າທັງໝົດ, ມີຢູ່ເກືອບທຸກໆ ແຂວງ ແຕ່ຫລາຍກວ່າໝູ່ ແມ່ນຢູ່ແຂວງຫລວງນ້ຳທາ, ໄຊຍະບູລີ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ ແລະ ສາລະວັນ. ປ່າສົງ ເປັນປ່າທີ່ມີລັກສະນະເຊື່ອມຕໍ່ລະຫວ່າງ ດົງກັບໂຄກ ແລະ ປະກອບດ້ວຍໄມ້ຊະນິດຕ່າງໆ ຊຶ່ງມີທັງຊະນິດໃບຫລົ່ນໃນລະດູແລ້ງ ແລະ ຊະນິດໃບຂຽວຕະຫລອດປີ, ດ້ວຍເຫດນີ້ເພີ່ນຈຶ່ງມັກເອີ້ນວ່າປ່າປະສົມ. ປ່າປະເພດນີ້ມີໄມ້ໃຫຍ່ ເຊັ່ນ: ໄມ້ແຕ້ຂ່າ, ໄມ້ແດງ, ໄມ້ດູ່, ໄມ້ເປືອຍ... ພິເສດ ປ່າສົງໃນເຂດທ້ອຍຊາຍ, ປາກລາຍ ແລະ ຫລວງພະບາງ ມີໄມ້ຈຳນວນຫລວງຫລາຍ.


3) ປ່າໂຄກ: ເປັນປ່າທ່ຽງທີ່ຂະຫຍາຍຕົວດີໃນເຂດທີ່ເປັນຫີນແຮ່, ມີຝົນຕົກບໍ່ຫລາຍປານໃດ ແລະ ມີລະດູແລ້ງແກ່ຍາວ ແຕ່ 6-7 ເດືອນ. ມັນປະກອບດ້ວຍໄມ້ນາໆ ຊະນິດ ຊຶ່ງສ່ວນຫລາຍ ມີໃບຫລົ່ນຕາມລະດູການ ແລະ ມີຄວາມທົນທານຕໍ່ຄວາມແຫ້ງແລ້ງ. ປ່າໂຄກ ມີໂຄງສ້າງເປັນຫລາຍ ຊັ້ນ ຄື: ຊັ້ນຕົ້ນໄມ້ໃຫຍ່ (ສູງບໍ່ກາຍ 20 ແມັດ, ລຳຕົ້ນຄົດໂງ, ມີງ່າຫລາຍ...), ຊັ້ນພຸ່ມໄມ້, ຊັ້ນຫຍ້າ ແລະ ເຄືອເຂົາຕ່າງໆ. ຕົ້ນໄມ້ໃຫຍ່ທີ່ມັກພົບເຫັນຢູ່ຕາມໂຄກນີ້ມີ: ໄມ້ສະແບງ, ໄມ້ກຸງ, ໄມ້ຊາດ, ໄມ້ເຊືອກ, ໄມ້ຈິກ, ໄມ້ຮັງ... ປ່າປະເພດນີ້ມີຫລາຍຢູ່ນະຄອນຫລວງວຽງຈັນ, ສະຫວັນນະເຂດ, ຈຳປາສັກ, ສາລະວັນ ແລະ ອັດຕະປື.

4) ປ່າໄມ້ໃບເຂັ້ມ: ໄມ້ໃບເຂັ້ມຢູ່ລາວລວມມີຊະນິດຕ່າງໆເຊັ່ນ: ໄມ້ແປກ, ໄມ້ຮົ້ງ, ໄມ້ສົນ... ໃນນັ້ນໄມ້ແປກ (ແປກແດງ, ແປກຄົວ) ກວມປະລິມານຫລາຍກວ່າໝູ່. ໄມ້ແປກ ມີຄວາມທົນທານ ຕໍ່ອາກາດໜາວ ແລະ ແຫ້ງແລ້ງ, ທົນທານຕໍ່ດິນທີ່ຂາດທາດບຳລຸງໄດ້ດີ. ເຂດທີ່ມີປ່າແປກຫລາຍກວ່າໝູ່ ແມ່ນແຂວງຫົວພັນ, ຊຽງຂວາງ, ຄຳມ່ວນ, ເຊກອງ, ສະຫວັນນະເຂດ, ພູພຽງຕະໂອ້ຍ, ພູພຽງບໍລະເວນ... ຢູ່ຕາມປ່າແປກນີ້ກໍມັກມີຕົ້ນໄມ້ໃບໃຫຍ່ປະປົນຢູ່ນຳ ຊຶ່ງສ່ວນຫລາຍແມ່ນ ໄມ້ດູ່ຕ່າງ ແລະ ໄມ້ກ່ຳ. ຢູ່ພື້ນປ່າແປກສ່ວນຫລາຍມັກມີຫຍ້າຄາ.

5) ປ່າຄັງ ແລະ ປ່າເລົ້າ: ຄັງຕ່າງກັບໂຄກຢູ່ບ່ອນວ່າມີຫຍ້າເປັນສ່ວນຫລາຍ. ຄັງມີຢູ່ທົ່ວໆ ໄປໃນປະເທດລາວ ຊຶ່ງຫລາຍກວ່າໝູ່ ແມ່ນຢູ່ເຂດຜົ້ງສາລີ, ຫລວງນ້ຳທາ, ອຸດົມໄຊ, ຫົວພັນ, ຫລວງພະບາງ, ຊຽງຂວາງ ແລະ ຈຳປາສັກ (ພູພຽງບໍລະເວນ). ຄັງເປັນພົມພືດີ່ເກີດທົດແທນປ່າໄມ້ ທີ່ຖືກຈູດເຜົ້າຫລາຍເທື່ອ. ຄັງມີ 3 ປະເພດຄື: ຄັງທີ່ມີຕົ້ນໄມ້ ແລະ ພຸ່ມໄມ້ປະປົນ, ຄັງຫຍ້າສູງ ຊຶ່ງມີແຕ່ຫຍ້າລ້ວນໆ (ຫຍ້າແຝກ, ຫຍ້າຄາ) ແລະ ຫຍ້າຫັ້ງ ຊຶ່ງມີຫຍ້າເກີດເປັນຍ່ອມໆ ແລະ ມັກມີກໍເລົ້າປະປົນຢູ່ນຳ. ສ່ວນປ່າເລົ້າກໍຄ້າຍຄືກັບຄັງ ຊຶ່ງຜັນແປມາຈາກປ່າທີ່ຖືກໄຟລາມເຜົ້າ ຫລາຍເທື່ອ, ແຕ່ມີລັກສະນະຂອງໄຮ່ຮົ້ວເຮື້ອຊຶ່ງປະກອບດ້ວຍກໍເລົ້າ, ຕົ້ນຫຍ້າຂີ້ວ, ຫຍ້າໜາດ, ຕົ້ນໜາມຫັນ, ອໍ້ລະນາດ... ຊຶ່ງເປັນພືດປະເພດ ທົນທານຕໍ່ຄວາມແຫ້ງແລ້ງ.

2.4.6 ຊັບພະຍາກອນສັດປ່າ ແລະ ສັດນ້ຳ

ສປປ ລາວ ເປັນເຂດໜຶ່ງຂອງໂລກ ທີ່ຍັງມີສັດປ່າ ແລະ ສັດນ້ຳຫລາຍ ຊຶ່ງໃນນັ້ນ ມີທັງສັດທີ່ ຍັງເຫລືອໜ້ອຍຢູ່ໃນໂລກເຊັ່ນ: ຊ້າງ, ເສືອ, ງົວບາ, ຄວາຍປ່າ, ເມີຍ, ເສົາຫລາ, ປາບຶກ, ປາຄ່າ ແລະ ອື່ນໆ. ທັງນີ້ຍ້ອນວ່າ ທຳມະຊາດຂອງລາວໂດຍທົ່ວໄປຍັງຖືກຮັກສາໄວ້ຕາມລັກສະນະອັນດັ່ງເດີມຂອງມັນຢູ່ ນັ້ນເອງ. ສັດປ່າ ແລະ ສັດນ້ຳທັງຫລາຍເຫລົ່ານີ້ ນອກຈາກຈະເປັນສິ່ງປະດັບໃຫ້ທຳມະຊາດມີຊີວິດຊີວາ ແລະ ເປັນລະບົບນິເວດອັນຄົບຖ້ວນ ແລ້ວມັນຍັງເປັນອາຫານທີ່ຊ່ວຍລ້ຽງປະຊາຊົນລາວມາຕັ້ງແຕ່ ເທິງນານ ແລະ ສິ້ນສ່ວນຂອງມັນຍັງເປັນສິນຄ້າ ແລະ ວັດຖຸດິບສຳລັບປຸງແຕ່ງຢາພື້ນເມືອງປະເພດ ຕ່າງໆອີກ.



ກ. ແຮດນໍດຽວ ຂ. ໝາຈອກ ຄ. ນົກຍຸງ

ງ. ງົວບາ ຈ. ປາຂ່າ ສ. ນົກກົກຄໍຄຳ

ຊ. ໝີຄວາຍ (ໝີດຳ) ຍ. ໝູງວງ ດ. ງົວປ່າ

ຮູບທີ 25 : ສ່ວນໜຶ່ງຂອງສັດປ່າ, ສັດນ້ຳທີ່ຫາຍາກຢູ່ ສປປ ລາວ

ແຫລ່ງຂໍ້ມູນ: ກະຊວງກະສິກຳ ແລະ ປ່າໄມ້, ກົມປ່າໄມ້ ກອງອະນຸລັກຊັບພະຍາກອນປ່າໄມ້, ສິກປີ 2002

ສັດປ່າຢູ່ ສປປ ລາວ ລວມມີທັງຈຳພວກທີ່ອາໄສຢູ່ຕາມດົງ, ປ່າປະສົມ, ໂຄກ ແລະ ຄັງສັດປ່າ ທີ່ອາໄສຢູ່ຕາມດົງທົ່ວໄປກໍມີສັດກິນໝາກໄມ້, ຈຳພວກສັດກັດແທ້ມ, ສັດເລືອຄານ ແລະ ນົກຕ່າງໆ. ນອກຈາກນັ້ນ ກໍຍັງມີສັດໃຫຍ່ຈຳພວກກິນຫຍ້າ, ກິນໃບໄມ້ ແລະ ສັດກິນຊີ້ນ. ສຳລັບສັດປ່າຈຳພວກທີ່ ອາໄສຢູ່ຕາມປ່າປະສົມ ແລະ ໂຄກ ກໍມີສັດຈຳພວກກິນຫຍ້າທີ່ແລ່ນໄວ ແລະ ຈຳພວກທີ່ມັກເຄື່ອນຍ້າຍ ໄປຢູ່ດົງໃນຍາມແລ້ງ ກໍ່ຍ້ອນວ່າຂາດອາຫານ ແລະ ຕ້ອງໜີໄຟໄໝ້ປ່າ.

ນອກຈາກນັ້ນກໍມີນົກເກືອບທຸກໆປະເພດ ແລະ ສັດກິນຊີ້ນ. ສ່ວນວ່າສັດຈຳພວກທີ່ອາໄສ ຢູ່ຕາມຄັ້ງ ເວົ້າລວມແລ້ວມີບໍ່ຫລາຍປານໃດ, ທົ່ວໄປມັກມີແຕ່ສັດຈຳພວກກິນຫຍ້າ, ສັດກິນຊີ້ນ ແລະ ສັດປີກບາງປະເພດ.

ສຳລັບສັດນ້ຳກໍມີຢ່າງຫລວງຫລາຍເຊັ່ນກັນ, ມີທັງຈຳພວກທີ່ອາໄສຢູ່ຕາມລຳນ້ຳ ຫລື ເຊ ຕ່າງໆ ແລະ ຈຳພວກທີ່ຢູ່ຕາມຫ້ວຍ, ຮ່ອງ, ຄອງ, ບຶງ ແລະ ທົ່ງນາ. ຈຳພວກທີ່ອາໄສຢູ່ຕາມລຳນ້ຳ ໄດ້ແກ່ປາກິນໄຄ ຊຶ່ງທັງໝົດລ້ວນແຕ່ເປັນປາເກັດເຊັ່ນ: ປາເອີນ, ປາພອນ, ປາຫວາ, ປານົກເຂົ້າ, ປາສະອີ, ປາເພ້ຍ, ປາແກງ.... ແລະ ປາກິນຊີ້ນ, ໝາກໄມ້ ແລະ ໃບໄມ້ເປັນອາຫານ ຊຶ່ງລວມມີທັງ ປາເກັດ ແລະ ປາໜັງ ເຊັ່ນ: ປາບຶກ, ປາຂ່າ, ປາເລີມ, ປາເຄິງ, ປາຄ້າວ, ປາຊວາຍ, ປາໂດ, ປາສູດ, ປາປາກ, ປາຕອງ ແລະ ອື່ນໆ.

ເວົ້າລວມແລ້ວ, ຊັບພະຍາກອນທຳມະຊາດຂອງລາວບໍ່ວ່າຊັບພະຍາກອນທີ່ຢູ່ໃຕ້ດິນ ຫລື ທີ່ຢູ່ເທິງໜ້າດິນກໍແມ່ນມີຢ່າງອຸດົມສົມບູນ. ແຕ່ໃນໄລຍະທີ່ຜ່ານມາ ສິ່ງເຫລົ່ານັ້ນໄດ້ຖືກຂຸດຄົ້ນ ຫລື

ນຳໃຊ້ຢ່າງຊະຊາຍອັນພາໃຫ້ເກີດຄວາມເສຍຫາຍຢ່າງຮ້າຍແຮງໂດຍສະເພາະພືດ ແລະ ສັດ. ຕາມທີ່ການສຳຫລວດມາແລ້ວນັ້ນ, ໃນປະຈຸບັນນີ້ ເນື້ອທີ່ປ່າໄມ້ທັງໝົດພຽງແຕ່ປະມານ 9,800,000 ເຮັກຕາ ຊຶ່ງເທົ່າກັບ 41,4% ຂອງເນື້ອທີ່ທັງໝົດປະເທດເທົ່ານັ້ນ ແລະ ພົບວ່າສັດປ່າ ແລະ ສັດນ້ຳໄດ້ຫລຸດຈຳນວນລົງຢ່າງໜ້າເປັນຫ່ວງ. ໃນນັ້ນສັດບາງປະເພດກຳສູນພັນໄປແລ້ວເຊັ່ນ: ແຮດ 2 ນໍ ຫລື ບາງປະເພດ ກຳລັງຈະສູນພັນໄປ ເຊັ່ນ: ແຮດນໍດຽວເປັນຕົ້ນ. ສັດບາງປະເພດໃກ້ຈະສູນພັນແລ້ວເຊັ່ນ: ງົວບາ, ເມີຍ, ມັ່ງ, ໄອງຊາຍ, ນົກຍູງ, ນົກຂຽນ, ນົກກາບບົວ, ປາບຶກ, ປາຂ່າ... ເປັນຕົ້ນ. ດ້ວຍເຫດນີ້ ການປົກປັກຮັກສາ ແລະ ເສີມສ້າງຊັບພະຍາກອນທຳມະຊາດຢູ່ໃນ ສປປ ລາວ ຈຶ່ງເປັນພາລະກິດໜຶ່ງທີ່ສຳຄັນ, ໜັກໜ່ວງ ແລະ ຮີບດ່ວນຂອງປວງຊົນລາວທັງຊາດ.

ຄຳຖາມ:

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວມີທີ່ຕັ້ງຢູ່ໃສ ແລະ ມີອານາເຂດຊາຍແດນຕິດກັບປະເທດໃດແດ່ ?
2. ປະເທດລາວມີເນື້ອທີ່ ແລະ ຮູບຮ່າງຄືແນວໃດ ?
3. ລັກສະນະທົ່ວໄປຂອງພູມສັນຖານຂອງລາວເປັນຄືແນວໃດ ?
4. ເພິ່ນແບ່ງພູມອາກາດຂອງລາວອອກເປັນຈັກລະດູ ແລະ ແຕ່ລະລະດູມີຄວາມແຕກຕ່າງກັນຄືແນວໃດ ?
5. ຊັບພະຍາກອນທຳມະຊາດຂອງລາວໂດຍລວມແລ້ວມີຈັກປະເພດ ? ຄືປະເພດໃດແດ່ ?
6. ຈົ່ງອະທິບາຍບົດບາດ ແລະ ຄວາມສຳຄັນຂອງດິນ ?
7. ລັກສະນະຂອງປ່າໄມ້ໃນລາວເປັນຄືແນວໃດ ?

ບົດທີ

3

ການແບ່ງເຂດພູມສາດຂອງປະເທດລາວ

3.1 ຄວາມໝາຍ, ຄວາມສຳຄັນຂອງການແບ່ງເຂດພູມສາດ

3.1.1 ຄວາມໝາຍ

ການແບ່ງເຂດພູມສາດໝາຍເຖິງ ການແບ່ງຜິວໂລກໃຫ້ມີຂະໜາດນ້ອຍລົງ ເພື່ອທຳການສຶກສາ ແລະ ທຳຄວາມເຂົ້າໃຈພື້ນທີ່ໂລກໃຫ້ງ່າຍຂຶ້ນ ໂດຍແມ່ນນັກພູມສາດເປັນຜູ້ຄິດຄົ້ນວິທີການສ້າງເຂດພູມສາດຂຶ້ນມາຢ່າງຫລາກຫລາຍ ແລະ ເປັນວິທະຍາສາດຫລາຍຂຶ້ນ ເພາະອາໄສເກນຕ່າງໆ ໃນລັກສະນະທີ່ທົດສອບໄດ້ ແລະ ມີຂໍ້ມູນທາງດ້ານປະລິມານທີ່ນຳມາໃຊ້ໃນການແບ່ງພື້ນທີ່ໂລກ ອອກເປັນສ່ວນຍ່ອຍໆ ໃນພື້ນທີ່ຕົວຈິງ ໂດຍອາໄສເຕັກນິກທາງ ພູມສາດເຂົ້າຊ່ວຍ ເຊັ່ນ: ພາບຖ່າຍທາງອາກາດ, ພາບຖ່າຍທາງດາວທຽມ ແລະ ລະບົບສາລະສົນເທດທາງພູມີສາດ ຊຶ່ງໝາຍເຖິງ ຂໍ້ມູນທາງພູມສາດທີ່ສະແດງອອກມາເປັນແຜນທີ່ ຊຶ່ງເປັນເຄື່ອງສະແດງລັກສະນະ, ຂະໜາດ ແລະ ຕຳແໜ່ງ ຂອງເຂດພູມສາດນັ້ນເອງ.

3.1.2 ຄວາມສຳຄັນ

ການແບ່ງເຂດພູມສາດມີຄວາມສຳຄັນ ຕໍ່ການຮຽນຮູ້ເຖິງຄວາມແຕກຕ່າງຂອງພື້ນທີ່ຕ່າງໆ ບົນໜ້າໂລກ ຊຶ່ງເປັນແນວທາງນຳໄປສູ່ຄວາມຮູ້ຄວາມເຂົ້າໃຈກ່ຽວກັບພື້ນທີ່ ຊຶ່ງແມ່ນເອກະລັກ ສະເພາະ ຕົວຂອງແຕ່ລະເຂດພູມສາດ ທີ່ເກີດຂຶ້ນຈາກລັກສະນະຄວາມແຕກຕ່າງຂອງອົງປະກອບ ທາງດ້ານກາຍະພາບ ພ້ອມທັງຄວາມແຕກຕ່າງຂອງການເຄື່ອນໄຫວຂອງມວນມະນຸດທາງດ້ານ ການເມືອງ, ວັດທະນະທຳ, ສາສະໜາ, ຄວາມເປັນຢູ່ ຫລື ວິຖີຊີວິດຂອງມະນຸດ. ເຂດພູມສາດ ຍັງມີຄວາມສຳຄັນຕໍ່ການຮຽນຮູ້ເຖິງຄວາມສຳພັນຂອງພື້ນທີ່, ທີ່ເກີດຈາກອົງປະກອບທາງດ້ານ ກາຍະພາບ ແລະ ດ້ານວັດທະນະທຳຂອງມະນຸດ. ນອກຈາກນັ້ນ, ເຂດພູມສາດຍັງເປັນປະໂຫຍດ ຕໍ່ຜູ້ທີ່ທຳໜ້າທີ່ຕັດສິນໃຈໃນເລື່ອງການເມືອງການປົກຄອງ ທີ່ຄວນຈະພັດທະນາໄປແນວໃດ? ໂດຍສະເພາະຍຸກໃນການພັດທະນາພື້ນທີ່ໃນປັດຈຸບັນ, ຂໍ້ມູນຂ່າວສານກ່ຽວກັບພູມສາດ ຫລື ສາລະສົນເທດທາງພູມສາດ ແລະ ເກນທີ່ໃຊ້ໃນການກຳນົດເຂດພູມສາດເປັນສິ່ງຈຳເປັນເບື້ອງຕົ້ນ ໃນການແກ້ໄຂບັນຫາທາງພື້ນທີ່ ຊຶ່ງວິທີການກຳນົດເຂດພູມສາດ ແລະ ການແກ້ໄຂປັບປຸງເຂດ ພູມສາດກາຍເປັນເລື່ອງຈຳເປັນໂດຍສະເພາະໃນກຸ່ມປະເທດທີ່ກຳລັງພັດທະນາ. ເຂດພູມສາດຈຶ່ງ ມີສ່ວນໃນການນຳສະເໜີແນວຄິດໃນການພັດທະນາພື້ນທີ່ ທີ່ຄວນພິຈາລະນາຂອງນັກວາງແຜນ ພັດທະນາໃນສະໄໝໃໝ່ ກໍຄືໃນຍຸກໂລກາພິວັດ. ດັ່ງນັ້ນ, ຊະນິດເຂດພູມສາດຕ່າງໆ ຈຶ່ງບໍ່ໄດ້ມີຄຸນຄ່າ ສະເພາະແຕ່ພຽງດ້ານວິຊາການ ເທົ່ານັ້ນ ແຕ່ສາມາດນຳໄປປະຍຸກໃຊ້ເພື່ອຊ່ວຍແກ້ໄຂບັນຫາທາງ ພື້ນທີ່ໃຫ້ແກ່ສັງຄົມ ໂດຍສະເພາະແມ່ນຕໍ່ການພັດທະນາທາງດ້ານເສດຖະກິດນັ້ນເອງ.

3.2 ແນວຄວາມຄິດ ແລະ ທິດສະດີການແບ່ງເຂດພູມສາດ

ເຂດພູມສາດໝາຍເຖິງພື້ນທີ່ ທີ່ສະແດງຄວາມເປັນເອກະພາບ ຫລື ຄວາມຄ້າຍຄືກັນຂອງ ສິ່ງວັດຖຸ ທີ່ເປັນທຳມະຊາດ ຫລື ມະນຸດສ້າງຂຶ້ນ ຊຶ່ງໃນຄວາມເປັນຈິງແລ້ວການກຳນົດເຂດພູມສາດ ໃດໜຶ່ງອາດສາມາດໃຫ້ຄວາມໝາຍໄປໄດ້ຫລາຍຢ່າງ, ແຕ່ກໍຂຶ້ນຢູ່ກັບສິ່ງທີ່ປາກົດຕົວພົ້ນເດັ່ນໃນພື້ນທີ່ ນັ້ນໆ. ເຂດພູມສາດ ຫລື ພວກເຮົາເອີ້ນວ່າພູມີພາກ ອາດເກີດຈາກຄຸນສົມບັດກໍຄືລັກສະນະທາງດ້ານ ກາຍະພາບຂອງພູມສາດ ຫລື ຂອງພື້ນທີ່ພຽງຢ່າງດຽວ ຫລື ຫລາຍຢ່າງ ຊຶ່ງນັກພູມສາດໄດ້ແບ່ງເຂດ ພູມສາດຂຶ້ນມາເພື່ອນຳໃຊ້ເຂົ້າໃນການສຶກສາ, ອະທິບາຍ, ພັນລະນາ, ວິເຄາະສະພາບແວດລ້ອມ ທາງດ້ານກາຍະພາບຂອງເຂດພູມີສາດ ຊຶ່ງກ່ຽວພັນກັບປາກົດການທາງດ້ານພູມສາດທຳມະຊາດ ຂອງໂລກ ແລະ ການເຄື່ອນໄຫວດຳລົງຊີວິດຂອງສິ່ງທີ່ມີຊີວິດທັງຫລາຍຢູ່ເທິງໜ້າໂລກນັ້ນເອງ. ດັ່ງນັ້ນ, ເຂດພູມສາດຈຶ່ງແມ່ນພູມີພາກ ຊຶ່ງໝາຍເຖິງສ່ວນໜຶ່ງຂອງພື້ນທີ່ໂລກ ທີ່ມີສິ່ງທີ່ມີຊີວິດທີ່

ຫລາກຫລາຍນັບທັງມະນຸດທີ່ອາໄສຢູ່ເປັນກຸ່ມ, ເປັນພວກທີ່ມີຄວາມແຕກຕ່າງກັນບໍ່ຫລາຍກໍໜ້ອຍບໍ່ວ່າ ທາງດ້ານຮ່າງກາຍ, ວາດດຳລົງຊີວິດ, ວັດທະນະທຳ, ຮີດຄອງປະເພນີ ລວມໄປເຖິງເສດຖະກິດ, ສັງຄົມ, ການເມືອງ, ສາສະໜາ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງມະນຸດ. ການແບ່ງເຂດພູມສາດ ຈຶ່ງແມ່ນເລີ່ມຕົ້ນດ້ວຍການສຶກສາທຳມະຊາດຂອງພື້ນທີ່ ຫລື ສິ່ງແວດລ້ອມທາງດ້ານກາຍະພາບຂອງ ເຂດນັ້ນເອງ. ນອກຈາກນັ້ນ, ເພີ່ນກໍຍັງສຶກສາສິ່ງທີ່ມວນມະນຸດສ້າງຂຶ້ນໃນພື້ນທີ່ຕ໊ວຈິງນຳອີກ. ທີ່ສຳຄັນ ເຂດພູມສາດ ຫລື ພູມີພາກເປັນໃຈກາງຂອງສາຂາວິຊາພູມີສາດ ທີ່ສາມາດໃຊ້ບັນຈຸ ແລະ ຮອງຮັບ ອົງປະກອບທາງພື້ນທີ່ນານາຊະນິດເຂົ້າໄວ້.ນອກຈາກນັ້ນເຂດພູມສາດຫລືພູມີພາກຍັງເປັນທັ້ງເຄື່ອງມື ແລະ ອຸປະກອນຂອງນັກພູມສາດ, ທັ້ງເປັນພື້ນທີ່ທີ່ໃຊ້ສຶກສາໃນວິທະຍາສາດສາຂານີ້ອີກດ້ວຍ.

ເມື່ອເຂດພູມີສາດຖືກແບ່ງຈາກປາກົດການທາງກາຍະພາບ ກໍຄືສິ່ງພົ້ນເດັ່ນຂອງສິ່ງທີ່ມີຊີວິດ ທັ້ງຫລາຍໃນພື້ນທີ່ຂອງໜ້າໂລກ ນັບແຕ່ພື້ນທີ່ຂະໜາດນ້ອຍໄປຮອດພື້ນທີ່ຂະໜາດໃຫຍ່ເຊັ່ນ: ເຂດ ລ້ອງນ້ຳ, ເຂດພາກເໜືອຂອງປະເທດ, ເຂດພາກກາງຂອງປະເທດ ຫລື ເຂດພາກໃຕ້ຂອງປະເທດ. ນອກຈາກນັ້ນ, ເຂດພູມສາດຍັງສາມາດລວມເອົາໝົດທັ້ງປະເທດ ຊຶ່ງຈັດເປັນພື້ນທີ່ ທີ່ລວມເອົາ ກິດຈະກຳທຸກຢ່າງເຂົ້າໄວ້ເຊັ່ນ: ປະເທດລາວ ແລະ ບັນດາປະເທດອື່ນໆ. ດັ່ງນັ້ນ, ຄວາມເຂົ້າໃຈໃນ ຄຳວ່າ ເຂດພູມສາດ ຫລື ພູມີພາກຈຶ່ງແຕກຕ່າງກັນຄືດັ່ງນີ້:

- ເດີບໄລ (De Blij, 1971) ມີຄວາມເຫັນວ່າ: ເຂດພູມີສາດຄືບໍລິເວນທີ່ມີທີ່ຕັ້ງທີ່ແນ່ນອນ ແລະ ມີເນື້ອທີ່ທີ່ປະກອບດ້ວຍຄວາມກວ້າງ, ຍາວ, ເລິກ ຊຶ່ງເປັນສິ່ງກຳນົດຂະໜາດພື້ນທີ່ ຊຶ່ງແມ່ນ ຂີດຈຳກັດທີ່ແຕກຕ່າງຈາກພື້ນທີ່ອື່ນ ໂດຍອາໄສເກນຕ່າງໆ ເປັນເຄື່ອງວັດແທກຄວາມແຕກຕ່າງ.

- ຮາຊອນ (Hartshorne,1939) ກ່າວວ່າ: ເຂດພູມີສາດຄືບໍລິເວນທີ່ມີຄວາມແຕກຕ່າງກັນ ຕາມເກນຕ່າງໆ ທີ່ປະກອບດ້ວຍປັດໄຈທາງດ້ານກາຍະພາບ ແລະ ທາງດ້ານວັດທະນະທຳ ຊຶ່ງ ນັກພູມສາດໄດ້ແບ່ງພື້ນທີ່ ຫລື ລວມພື້ນທີ່ເຂົ້າດ້ວຍກັນເພື່ອວັດຖຸປະສົງຕ່າງກັນ.

- ແມກໂດແນນ (McDonald, 1972) ຜູ້ຂຽນຕຳລາກ່ຽວກັບພູມີສາດກ່າວວ່າ: ເຂດພູມີສາດ ໝາຍເຖິງພື້ນທີ່ທີ່ມີຂອບເຂດບໍ່ຈຳກັດແຕ່ສາມາດກຳນົດໄດ້ດ້ວຍຄຸນສົມບັດຕັ້ງແຕ່ຢ່າງໜຶ່ງຂຶ້ນໄປ.

- ກູດດານ (Goodall, 1988) ເວົ້າວ່າ: ເຂດພູມີສາດຄືສ່ວນໜຶ່ງຂອງຜິວໂລກທີ່ມີຄຸນສົມບັດ ພາຍໃນພື້ນທີ່ຢ່າງເດັ່ນຊັດ ຊຶ່ງອາດຈະປະກອບດ້ວຍໂຄງສ້າງທາງກາຍະພາບ ແລະ ການພັດທະນາ ຂອງມະນຸດ ແລະ ເຮັດໃຫ້ບໍລິເວນນັ້ນມີຄວາມກົມກືນເປັນເອກະພາບ ແລະ ແຕກຕ່າງ ຈາກບໍລິເວນ ຮອບນອກ. ເກນທີ່ນຳມາໃຊ້ໃນການກຳນົດເຂດພູມີສາດມີເປັນຈຳນວນຫລວງຫລາຍ. ທັງນີ້ ແມ່ນ ຂຶ້ນກັບຈຸດປະສົງໃນການກຳນົດເຂດພູມີສາດຂຶ້ນມາ.

- ຮອນ ເຈນເຊັນ (Holt Jensen, 1988) ກ່າວວ່າ: ຄວາມຈິງຄຳວ່າ ເຂດພູມີສາດ ໃນພາສາ ອັງກິດ ແມ່ນ region ຫລື landscape ມັກໃຊ້ກັບພື້ນທີ່ຊຶ່ງກຳນົດຂຶ້ນຈາກເຂດປົກຄອງ ແຕ່ເຂດ ພູມີສາດຂອງວິຊາພູມີສາດ ແມ່ນກຳນົດຂຶ້ນໂດຍອີງໃສ່ວິທະຍາສາດ ໝາຍເຖິງພື້ນທີ່ສະເພາະແຫ່ງ ຫລື ຊະນິດ ພື້ນທີ່.

ໃນປັດຈຸບັນເຂດພູມສາດ ຄືໜ່ວຍພື້ນທີ່ມາດຕະຖານ ທີ່ໃຊ້ໃນການສຶກສາພູມີສາດ. ເປັນ ພື້ນທີ່ ທີ່ສະແດງຄວາມເປັນເອກະພາບຕາມເກນບາງຢ່າງທີ່ໃຊ້ກຳນົດຂະໜາດພື້ນທີ່ຂຶ້ນມາ. ທັງນີ້ ຂຶ້ນຢູ່ ກັບບັນຫາທີ່ເຮົາຈະພິຈາລະນາ. ບາງເຂດພູມີສາດເກີດຈາກເກນພຽງຢ່າງດຽວ ຫລື ຫລາຍຢ່າງ. ນັກພູມີສາດກຳນົດເຂດພູມີສາດຂຶ້ນມາເພື່ອສະດວກ ໃນການສຶກສາຫາຄວາມຮູ້ກ່ຽວກັບພື້ນທີ່ຕ່າງໆ ບົນໜ້າໂລກ ຊຶ່ງເປັນຂອບການສຶກສາເຫດການໃນປັດຈຸບັນ ກໍຄືໃນອະດີດຜ່ານມາ ຊ່ວຍໃຫ້ຜູ້ຮຽນ ສາມາດເຫັນໂລກໃນລັກສະນະປະສົມປະສານໃນພື້ນທີ່ຕ່າງໆ ຊຶ່ງເຮົາເອີ້ນວ່າ ລະບົບນິເວດ.

ດັ່ງນັ້ນ, ເຂດພູມີສາດຈຶ່ງແມ່ນສ່ວນໜຶ່ງຂອງພື້ນທີ່ໂລກທີ່ມີສິ່ງທີ່ມີຊີວິດອາໄສຢູ່ເປັນກຸ່ມ, ເປັນພວກ ຊຶ່ງມີຄວາມແຕກຕ່າງທາງດ້ານຈຳນວນໜ້ອຍຫລາຍຂອງແຕ່ລະກຸ່ມແຕກຕ່າງກັນ ແລະ ແຕ່ລະກຸ່ມ ກໍມີການກໍ່ຕົວຂຶ້ນເປັນສັງຄົມຈາກຄວາມສຳພັນຂອງມະນຸດໃນດ້ານຕ່າງໆ ຂອງຊີວິດ ຄື: ດ້ານເສດຖະກິດ, ສັງຄົມ, ການເມືອງ, ສາສະໜາ ແລະ ອື່ນໆ. ເຂດພູມີສາດເກີດຈາກຄວາມແຕກຕ່າງທາງກາຍະພາບທີ່ປາກົດໃນພື້ນທີ່ຕົວຈິງ. ທີ່ສຳຄັນທີ່ສຸດຄືເຂດພູມີສາດເປັນໃຈກາງຂອງສາຂາວິຊາພູມີສາດທີ່ສາມາດບັນຈຸ ແລະ ຮັບຮອງອົງປະກອບທາງພື້ນທີ່ນານາຊະນິດເຂົ້າໄວ້. ເຂດພູມີສາດເປັນທັງເຄື່ອງມື ພ້ອມທັງເປັນອຸປະກອນ ແລະ ເປັນພື້ນທີ່ທີ່ໃຊ້ສຶກສາໃນສາດຂອງສາຂານີ້.

3.2.1 ແນວຄວາມຄິດການແບ່ງເຂດພູມສາດລາວ

ແນວຄວາມຄິດການແບ່ງເຂດພູມສາດລາວ ແມ່ນກ່ຽວຂ້ອງກັບແນວຄວາມຄິດຕ່າງໆ ຄືດັ່ງນີ້:

3.2.1.1 ແນວຄວາມຄິດການຈັດການພື້ນທີ່ເພື່ອການພັດທະນາ

ເປັນແນວຄວາມຄິດທີ່ຍອມຮັບຄວາມແຕກຕ່າງ ລະຫວ່າງພື້ນທີ່ຕ່າງໆ ທີ່ເປັນຜົນສືບເນື່ອງມາຈາກຊັບພະຍາກອນທຳມະຊາດ ກໍຄືລັກສະນະທາງກາຍະພາບຂອງພື້ນທີ່ແຕ່ລະແຫ່ງທີ່ບໍ່ເໝືອນກັນ. ແນວຄວາມຄິດນີ້ ຈະເນັ້ນໃຫ້ຄວາມສຳຄັນໃນການສຶກສາກ່ຽວກັບຊັບພະຍາກອນທຳມະຊາດ ແລະ ລັກສະນະທາງກາຍະພາບໂດຍເລີ່ມຈາກລະດັບພາກ, ອະນຸພາກ ແລະ ລະດັບພື້ນທີ່ນ້ອຍລົງໄປຊຶ່ງມີປະໂຫຍດທຳໃຫ້ເກີດຄວາມເຂົ້າໃຈເຖິງຂໍ້ຈຳກັດທີ່ມີຢູ່ໃນແຕ່ລະເຂດພື້ນທີ່ຫລືພາກພື້ນເພື່ອມີການຈັດການກັບພື້ນທີ່ ແລະ ມີການວາງແຜນພັດທະນາພື້ນທີ່ນັ້ນໆ. ຕາມແນວຄວາມຄິດນີ້, ໃນປະເທດລາວມີທ່າອ່ຽງຈະເນັ້ນການປັບປຸງຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນການປັບປຸງດິນ ເພື່ອສ້າງຄວາມຈະເລີນເຕີບໂຕຂອງການຜະລິດທາງກະສິກຳໃຫ້ມີການລົງທຶນທາງເສດຖະກິດ ແລະ ສ້າງລາຍຮັບທີ່ກຸ້ມຄ່າ.

3.2.1.2 ແນວຄວາມຄິດສາເຫດຄວາມທຸກຍາກ

ແນວຄວາມຄິດນີ້ແຍກອອກເປັນສາຂາຕ່າງໆເຊັ່ນ:ບັນຫາທີ່ດິນ, ບັນຫາການ ຂູດຮີດທາງຊົນຊັ້ນ, ບັນຫາຄວາມເຊື່ອທີ່ກາຍເປັນວັດທະນະທຳ, ບັນຫາການຊົມລະປະທານ, ບັນຫາຄົນໄດ້ຮັບການສຶກສາຕ່ຳ, ບັນຫາສິ່ງກໍ່ສ້າງພື້ນຖານ ແລະ ອື່ນໆ. ແນວຄວາມຄິດນີ້ເປັນປະໂຫຍດຕໍ່ການປັບປຸງການພັດທະນາສາຂາຕ່າງໆ ແລະ ເປັນແນວຄວາມຄິດທີ່ມີຄວາມສຳພັນກັບໂຄງສ້າງເສດຖະກິດ ແລະ ສັງຄົມຂັ້ນພື້ນຖານທີ່ປະຊາກອນໃນພື້ນທີ່ໜຶ່ງໆ ໄດ້ຮັບຄວາມທຸກຍາກເຊັ່ນ: ໃນເຂດຊົນນະບົດລາວ ປະຊາກອນມີຄວາມທຸກຍາກ ໂດຍແມ່ນຜົນສືບເນື່ອງທີ່ເກີດມາຈາກບັນຫາຕ່າງໆ ຈາກອະດີດມາເຖິງປັດຈຸບັນ.

3.2.1.3 ແນວຄວາມຄິດຂອງບຸກຄົນ ຫລື ຄອບຄົວ

ແນວຄວາມຄິດນີ້ຈະໃຫ້ຄວາມສົນໃຈເປັນພິເສດໃນການແກ້ບັນຫາຄົນທຸກຍາກ ຫລື ຄອບຄົວທຸກຍາກເຊັ່ນ: ການບັນທຶກລາຍຊື່ຄົນທຸກຍາກ ຫລື ຄອບຄົວທຸກຍາກເພື່ອໃຊ້ເປັນເປົ້າໝາຍໃນການແກ້ບັນຫາ.ນອກຈາກນັ້ນ,ແນວຄວາມຄິດນີ້ຍັງເຊື່ອມໂຍງໄປສູ່ການກຳນົດກຸ່ມເປົ້າໝາຍປະເພດຕ່າງໆ ເຊັ່ນ: ແຮງງານແມ່ຍິງ, ຊົນເຜົ່າ, ເດັກນ້ອຍ, ເຍົາວະຊົນ ແລະ ອື່ນໆ. ແຕ່ສ່ວນຫລວງຫລາຍ ການແກ້ໄຂບັນຫາຄົນທຸກຍາກຍັງຈຳກັດ ເພາະໂຄງການຕ່າງໆ ທີ່ເປັນຂອງສາກົນ ຫລື ເປັນຂອງລັດຖະບານໃນປະເທດຕ່າງໆທີ່ເປັນປະເທດກຳລັງພັດທະນາ ຫລື ປະເທດດ້ອຍພັດທະນາ ກໍຍັງບໍ່ສາມາດຊ່ວຍເຫລືອໄດ້ພໍເທົ່າໃດ.

3.2.1.4 ແນວຄວາມຄິດກ່ຽວກັບລາຍໄດ້ຂອງບຸກຄົນ ຫລື ຄອບຄົວ

ສ່ວນສຳຄັນຂອງແນວຄວາມຄິດນີ້ ຢູ່ທີ່ການກຳນົດເສັ້ນວັດແທກຄວາມທຸກຍາກ ທີ່ໄດ້ມາຈາກການຄຳນວນມາດຕະຖານການຄອງຊີບສົມທົບກັບປັດໄຈຕ່າງໆທີ່ຈຳເປັນຊຶ່ງເປັນແນວຄວາມຄິດທີ່ນຳໃຊ້ຢ່າງແພ່ຫລາຍໃນເກືອບທຸກປະເທດ. ໂດຍທົ່ວໄປ, ເສັ້ນວັດແທກຄວາມທຸກຍາກ ແມ່ນຕ້ອງຄຳນຶງເຖິງສະພາບຂອງທ້ອງຖິ່ນຕ່າງໆເປັນຫລັກຄື: ເສັ້ນວັດແທກຄວາມທຸກຍາກຂອງ ສປປ ລາວ ມີ 5 ເງື່ອນໄຂຄື: ລາຍຮັບ, ການສຶກສາ, ສາທາລະນະສຸກ, ພື້ນຖານໂຄງລ່າງ ແລະ ທີ່ຢູ່ອາໄສ.

ແຕ່ໂດຍທົ່ວໄປແລ້ວ,ແນວຄວາມຄິດນີ້ເນັ້ນໜັກໃສ່ລາຍຮັບເປັນສ່ວຍໃຫຍ່, ສາມາດວິເຄາະວ່າ ຜູ້ທີ່ທຸກຍາກນັ້ນມີອາຊີບຫຍັງ? ຈາກນັ້ນຈຶ່ງຊອກຫາວິທີການເພີ່ມປະສິດທິພາບຂອງອາຊີບນັ້ນ ຫລື ເພີ່ມອາຊີບເສີມຕ່າງໆ ເພື່ອໃຫ້ມີລາຍຮັບເພີ່ມຂຶ້ນ. ປະສົບການທີ່ໄດ້ຮັບຈາກແນວຄວາມຄິດນີ້ ທີ່ສຳຄັນແມ່ນແຜນພັດທະນາທີ່ເກີດຂຶ້ນຊຶ່ງຕ້ອງໄດ້ລົງທຶນຫລາຍ.

3.2.2 ທິດສະດີການແບ່ງເຂດພູມີສາດ

ທິດສະດີ ເປັນເຄື່ອງມືໃນການກຳນົດທິດທາງການແບ່ງເຂດພູມສາດ ຊຶ່ງນຳໃຊ້ການກວດສອບຄວາມສຳພັນຂອງພື້ນທີ່ຕາມທິດສະດີຂອງເມີກພີ (1991) ຊຶ່ງທິດສະດີດັ່ງກ່າວນີ້ອະທິບາຍວ່າ ການແບ່ງເຂດພູມສາດ ມີຄວາມໝາຍຕ່າງກັນ ແຕ່ສ່ວນໃຫຍ່ບົ່ງຊີ້ເຖິງສ່ວນຕ່າງໆ ຂອງໂລກ ອັນມີຄວາມໝາຍຕາມລັກສະນະທາງກາຍະພາບເທິງພື້ນທີ່, ໜ້າທີ່ຄວາມສຳພັນຂອງສັງຄົມ-ເສດຖະກິດ ແລະ ທໍລະນີສັນຖານ ຫລື ການປະກອບສ້າງຂອງດິນນັ້ນເອງ ຊຶ່ງການປ່ຽນແປງໃນແຕ່ລະພື້ນທີ່ຍ່ອມເກີດຈາກ:

- ການຕອບສະໜອງຕໍ່ແຮງກະຕຸ້ນຂອງສະພາບແວດລ້ອມ ແລະ ຄວາມຕ້ອງການຂອງມະນຸດ.
- ການຕິດຕໍ່ພົວພັນກັບຄົນຕ່າງເຂດພູມີສາດ ຫລື ຕ່າງພູມີພາກ ຫລື ການຍອມຮັບວິຖີຊີວິດຂອງຊຸມຊົນຕົນເອງ.
- ການກະທຳຂອງຄົນໃນເຂດພູມີສາດ ແມ່ນມີຈຸດມຸ່ງໝາຍເພື່ອການພັດທະນາໃຫ້ດີຂຶ້ນ.
- ເຂດພູມີສາດ ບໍ່ໄດ້ເປັນຜົນຈາກກິດຈະກຳຂອງມະນຸດແຕ່ພຽງຢ່າງດຽວ ຫາກແຕ່ມະນຸດຄິດສ້າງຂຶ້ນໃນຮູບຂອງລັດເພື່ອເປັນເຈົ້າຂອງ ແຮເກີສະຕະແຣນ (Hagerstrand) ນັກພູມີສາດຊາວສະວີເດນທີ່ມີຊື່ສຽງ ໄດ້ສະເໜີຄວາມເຫັນຕໍ່ກັບການແບ່ງເຂດພູມີສາດວ່າ:
- ການສຶກສາພື້ນທີ່ ມີຄວາມຈຳກັດເພາະປາກົດການຕ່າງໆ ມີຢ່າງຫລວງຫລາຍ ທີ່ສາມາດສະແດງຄວາມສຳພັນອອກໃຫ້ເຫັນໄດ້ ແຕ່ບາງຄັ້ງບໍ່ສາມາດສະແດງອອກໃຫ້ເຫັນໄດ້.
- ເຂດພູມີສາດໄດ້ເປີດຫົນທາງໃຫ້ຕິດຕໍ່ກັບສາດອື່ນໆໄດ້ດີ.
- ເຂດພູມີສາດຈັດເປັນລາຍວິຊາ ທີ່ມີສ່ວນຊ່ວຍໃນການວາງແຜນການສຶກສາ ໃນອະນາຄົດ ແລະ ການປະເມີນເທັກໂນໂລຊີ.
- ເຂດພູມີສາດມີຄຸນຄ່າທາງການສຶກສາ ເພາະສາມາດເປີດຫົນທາງນຳໄປສູ່ຄວາມເຂົ້າໃຈຢ່າງແຈ່ມແຈ້ງເຖິງຄວາມສຳພັນອັນຊັບຊ້ອນທາງພື້ນທີ່ ຊຶ່ງນັກພູມີສາດທຸກຄົນຄວນຮູ້ກ່ຽວກັບພື້ນທີ່ເຂດພູມີສາດຕ່າງໆ ແລະ ຊ່ວຍໃຫ້ຜູ້ອື່ນເຂົ້າໃຈພື້ນທີ່ນັ້ນໆ. ດັ່ງນັ້ນທິດສະດີໃນການແບ່ງເຂດພູມສາດລາວຈຶ່ງມີດັ່ງນີ້:

3.2.2.1 ທິດສະດີການຈັດການພື້ນທີ່

ທິດສະດີການຈັດການພື້ນທີ່ ເປັນທິດສະດີທີ່ອະທິບາຍປາກົດການໃນການຈັດການພື້ນທີ່ຂອງມະນຸດ ໂດຍອີງໃສ່ຫລັກການ ແລະ ເຫດຜົນທີ່ສະແດງຄວາມສຳພັນລະຫວ່າງອົງປະກອບຂອງປາກົດການການຈັດການພື້ນທີ່ນັ້ນ ຈົນສາມາດທີ່ຈະພະຍາກອນປາກົດການເທິງພື້ນທີ່ໃນອະນາຄົດໄດ້.ທິດສະດີນີ້ມີສ່ວນກ່ຽວພັນກັບທິດສະດີການພັດທະນາ ໂດຍສະເພາະແມ່ນການພັດທະນາພື້ນທີ່ໃຫ້

ກາຍເປັນເຂດເສດຖະກິດຂະຫຍາຍຕົວ ຊຶ່ງມັນຈຳເປັນຕ້ອງຕີຖອຍ ຫລື ຈຳກັດຄວາມທຸກຍາກຂອງ ປະຊາກອນໃນພື້ນທີ່ລົງເລື້ອຍໆ ຈົນກ້າວໄປເຖິງການລົບລ້າງຄວາມທຸກຍາກ, ກ້າວໄປສູ່ການພໍກິນ ພໍໃຊ້ ແລະ ການເຫລືອກິນເຫລືອໃຊ້ ກໍຄືການພັດທະນາຂຶ້ນໄປເລື້ອຍໆນັ້ນເອງ. ຜົນປະໂຫຍດທີ່ ຈະໄດ້ຮັບຈາກການຈັດການພື້ນທີ່ ແມ່ນການພັດທະນາພື້ນທີ່ຊຶ່ງມີດັ່ງນີ້:

ກ່ອນອື່ນໝົດຕ້ອງຮູ້ຂໍ້ມູນທາງພື້ນທີ່ທາງດ້ານທຳມະຊາດ ທີ່ມີຄວາມຈຳເປັນຕໍ່ການຈັດການ ພື້ນທີ່ເພື່ອການພັດທະນາພື້ນທີ່ນັ້ນເອງ. ນອກຈາກນັ້ນ, ກໍຕ້ອງຮູ້ຂໍ້ມູນທາງປະຊາກອນ, ສັງຄົມ, ສະຖາບັນ, ວັດທະນະທຳ, ພື້ນຖານທາງເສດຖະກິດ, ແບບວິທີການຜະລິດ ແລະ ການພົວພັນການຄ້າ-ການຕະຫລາດທີ່ມີຄວາມຈຳເປັນຕໍ່ການຈັດການພື້ນທີ່ ເພື່ອການພັດທະນາພື້ນທີ່ນັ້ນເອງ. ຈາກນັ້ນ, ເມື່ອຮູ້ໄດ້ຂໍ້ມູນດັ່ງກ່າວມານັ້ນແລ້ວ ຈຶ່ງສາມາດຈັດການກັບພື້ນທີ່ຕາມຈຸດປະສົງທີ່ວາງອອກ ໂດຍ ອີງໃສ່ຂໍ້ມູນທີ່ເກັບກຳໄດ້ ແລະ ວິເຄາະອອກມາ ແຕ່ຕ້ອງຄຳນຶງເຖິງຄວາມສາມາດທີ່ຈະເປັນໄປໄດ້ໃນ ການພັດທະນາພື້ນທີ່ແຫ່ງນັ້ນ ຊຶ່ງພື້ນທີ່ບົນໜ້າໂລກມີຄວາມແຕກຕ່າງກັນ ອີງຕາມຄວາມເປັນຈິງ ພາຍໃຕ້ເງື່ອນໄຂທີ່ວ່າ ພື້ນທີ່ໃດໆກໍມີຄວາມສຳຄັນ ພຽງແຕ່ວ່າມັນຈະມີໜ້ອຍ-ຫລາຍພຽງໃດ ຄົນເຮົາ ຕ້ອງຮຽນຮູ້ເພື່ອຊອກຫາວິທີທາງຈັດການກັບພື້ນທີ່ນັ້ນ ເພື່ອໃຫ້ເກີດຜົນປະໂຫຍດຢ່າງສູງໃຫ້ແກ່ ມະນຸດເຮົາເອງ. ດັ່ງນັ້ນ, ທິດສະດີການຈັດການພື້ນທີ່ ຈຶ່ງກ່ຽວຂ້ອງກັບທິດສະດີການພັດທະນາເພື່ອ ແກ້ໄຂຄວາມທຸກຍາກຂອງມະນຸດເຮົາເອງ ຊຶ່ງເພີ່ນສາມາດເອົາການຈັດການພື້ນທີ່ເປັນຕົວສຳຄັນ ອັນດັບ 1 ຫລື ເປັນຕົວຫລັກສຳລັບການພັດທະນາທີ່ຕ້ອງອາໄສການນຳໃຊ້ພື້ນທີ່ ເຊັ່ນ: ການກະສິກຳ, ການອຸດສາຫະກຳ, ການທ່ອງທ່ຽວ ນັບທັງການຂະຫຍາຍຕົວເມືອງ, ການສ້າງຮ້ານຄ້າຂະໜາດໃຫຍ່ ແລະ ອື່ນໆ. ແຕ່ໃນຄວາມເປັນຈິງແລ້ວ ບໍ່ວ່າກິດຈະການໃດໆ ກໍຕາມ ກໍຕ້ອງການນຳໃຊ້ພື້ນທີ່ທັງນັ້ນ. ແນວໃດກໍຕາມ, ທິດສະດີການຈັດການພື້ນທີ່ ແມ່ນກ່ຽວຂ້ອງກັບທິດສະດີການພັດທະນາ ຊຶ່ງຈຸດ ມຸ້ງໝາຍ ແມ່ນເຮັດໃຫ້ປະຊາກອນມະນຸດຢູ່ດີມີສຸກເທິງພື້ນທີ່ຕ່າງໆ ບົນໜ້າໂລກນັ້ນເອງ.

3.2.2.2 ທິດສະດີການພັດທະນາພື້ນທີ່ແບບປະສົມປະສານ


ທິດສະດີການພັດທະນາ ແມ່ນແນໃສ່ໃຫ້ສັງຄົມມະນຸດມີຄວາມກ້າວໜ້າຂະຫຍາຍຕົວໄປສູ່ ຄວາມສີວິໄລ ແລະ ຄວາມທັນສະໄໝເລື້ອຍໆ ໄປ. ດັ່ງນັ້ນ, ການພັດທະນາ ຈຶ່ງຕິດພັນກັບການຈັດການ ພື້ນທີ່ ແລະ ຄວາມຕ້ອງການຂອງສັງຄົມມະນຸດ. ແຕ່ປັດໄຈທີ່ສາມາດພັດທະນານັ້ນ ຂຶ້ນກັບຫລາຍ ປັດໄຈ ຫລື ຫລາຍເງື່ອນໄຂເຊັ່ນ: ດ້ານທຳມະຊາດ (ເທິງພື້ນທີ່ ແລະ ໃນພື້ນທີ່), ດ້ານສັງຄົມ ແລະ ດ້ານ ເສດຖະກິດ. ດັ່ງນັ້ນ, ທິດສະດີການພັດທະນາພື້ນທີ່ແບບປະສົມປະສານ ຈຶ່ງເປັນທິດສະດີທີ່ມີຄວາມ ເໝາະສົມໃນການພັດທະນາພື້ນທີ່ຂອງປະເທດລາວໂດຍທີ່ ໂມເຊ ໄດ້ໃຫ້ຄວາມເຫັນ ຄືດັ່ງນີ້: ທິດສະດີ ການພັດທະນາພື້ນທີ່ ແບບປະສົມປະສານ ແມ່ນການນຳໃຊ້ເຕັກໂນໂລຊີ, ກິດຈະກຳການພັດທະນາ ແລະ ຄ່ານິຍົມຂອງສັງຄົມ ຊຶ່ງຂອບແນວຄິດທາງທິດສະດີ ທີ່ໃຊ້ວິເຄາະບັນຫາການພັດທະນາພື້ນທີ່ ແບບປະສົມປະສານປະກອບດ້ວຍ:

- ການກຳນົດ ແລະ ການເລືອກເປົ້າໝາຍໃນການພັດທະນາພື້ນທີ່ແບບປະສົມປະສານທີ່ ເຮັດໃຫ້ສາມາດຮັກສາຄວາມສົມດຸນລະຫວ່າງເປົ້າໝາຍ ທີ່ເພີ່ມຄວາມຈະເລີນເຕີບໃຫຍ່ທາງ ເສດຖະກິດກັບເປົ້າໝາຍການກະຈາຍຜົນປະໂຫຍດຂອງການພັດທະນາຢ່າງທົ່ວເຖິງ ແລະ ເປັນທຳ.
- ການເລືອກເຄື່ອງມື ຫລື ວິທີການທີ່ເຮັດໃຫ້ການພັດທະນາພື້ນທີ່ມີຄວາມສາມາດບັນລຸ ເປົ້າໝາຍ.
- ບົດບາດຂອງການວິໄຈ ແລະ ການປະເມີນຜົນທີ່ມີປະສິດທິຜົນພ້ອມທັງການພັດທະນາ ເຄື່ອງມື ຫລື ກົນລະຍຸດທີ່ໃຊ້ເຂົ້າໃນການພັດທະນາໃຫ້ບັນລຸຜົນ ລວມເຖິງການນຳເຕັກໂນໂລຊີສະໄໝ ໃໝ່ ທີ່ສາມາດປະຍຸກໃຊ້ໃຫ້ເໝາະສົມກັບສະພາບແວດລ້ອມຂອງທ້ອງຖິ່ນໄດ້ຢ່າງມີປະສິດທິພາບ.

- ການຈັດອົງການທີ່ເໝາະສົມ ເພື່ອເຮັດໜ້າທີ່ໃນການດຳເນີນງານໃຫ້ບັນລຸເປົ້າໝາຍຂອງການພັດທະນາພື້ນທີ່ ຊຶ່ງອາດຈະເປັນການຈັດຕັ້ງໜ່ວຍງານຂຶ້ນໃໝ່ ຫລື ປັບປຸງໜ່ວຍງານທີ່ມີຢູ່ເດີມໃຫ້ມີປະສິດທິພາບຍິ່ງຂຶ້ນ ຕະຫລອດເຖິງການດຳເນີນງານດ້ານການບໍລິຫານ ແລະ ທັດສະນະຄະຕີທີ່ມີຕໍ່ການພັດທະນາພື້ນທີ່.

ໂດຍອີງຕາມປັດໄຈທາງດ້ານພູມສັນຖານ ແລະ ພູມອາກາດການແບ່ງເຂດພູມີສາດຂອງ ສປປ ລາວ ຈຶ່ງແບ່ງອອກເປັນ 3 ເຂດຊຶ່ງລັກສະນະຄວາມສຳຄັນຂອງແຕ່ລະເຂດພູມສາດໃນລາວຕໍ່ການພັດທະນາເສດຖະກິດຈຶ່ງປະກອບມີດັ່ງນີ້:

ແຜນທີ່ 5: ເຂດພູມີສາດ 3 ເຂດຂອງລາວ



ກ. ເຂດເໜືອ

ສະພາບລວມທາງດ້ານທຳມະຊາດ

ເຂດນີ້ກວມເອົາພື້ນທີ່ເຖິງ 10 ແຂວງທີ່ຢູ່ພາກເໜືອຂອງລາວປະກອບດ້ວຍແຂວງຫົວພັນ, ຜົ້ງສາລີ, ຫລວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫລວງພະບາງ, ໄຊຍະບູລີ, ວຽງຈັນ, ຊຽງຂວາງ ແລະ ໄຊສົມບູນ ຊຶ່ງມີເນື້ອທີ່ທັງໝົດ 135.837 ກມ² ເທົ່າກັບ 57,5% ຂອງເນື້ອທີ່ທົ່ວປະເທດ. ທີ່ຕັ້ງຂອງພື້ນທີ່ ແມ່ນຢູ່ອ້ອມແມ່ນ້ຳຂອງ ມີ 7 ແຂວງ ແລະ ນອກອ້ອມແມ່ນ້ຳຂອງ 3 ແຂວງຄື: ແຂວງຫົວພັນ, ຊຽງຂວາງ ແລະ ໄຊສົມບູນ. ທິດຕາເວັນອອກຕິດກັບ ສສ.ຫວຽດນາມ, ທິດເໜືອຕິດກັບ ສ.ປະຊາຊົນຈີນ,

ທິດຕາເວັນຕົກສ່ຽງເໜືອຕິດກັບປະເທດມຽນມາ, ທິດຕາເວັນຕົກຕິດກັບປະເທດໄທ ແລະ ທິດໃຕ້ຕິດກັບ ນະຄອນຫລວງວຽງຈັນ ແລະ ແຂວງບໍລິຄຳໄຊ. ເປັນເຂດພູມສັນຖານພູ ແລະ ພູພຽງເປັນສ່ວນຫລາຍ, ສ່ວນທົ່ງພຽງມີໜ້ອຍ. ລະດັບສູງສະເລ່ຍຂອງເຂດປະມານ 800 ມ ສູງຈາກໜ້ານ້ຳທະເລ. ແມ່ນ້ຳໃນ ເຂດນີ້ ສ່ວນໜຶ່ງໄຫລປ່ອງໃສ່ທະເລບົວລະພາ ດ້ານຕາເວັນອອກຂອງປະເທດຫວຽດນາມ. ເປັນພື້ນທີ່ ທີ່ມີພູມອາກາດພູດອຍ ຂອງເຂດຮ້ອນຊຸ່ມມໍລະສຸມຄື: ໃນລະດູໜາວອຸນຫະພູມລົງຕ່ຳກວ່າ 0°c ໃນ ບາງພື້ນທີ່ໃນເດືອນ ມັງກອນໂດຍສະເພາະແມ່ນ ຢູ່ແຂວງຜົ້ງສາລີ, ຫົວພັນ, ຊຽງຂວາງ ແລະ ໄຊສົມບູນ ມີຝົນຝອຍ. ສຳລັບລະດູຮ້ອນອຸນຫະພູມສູງກວ່າ 10°c. ມີຝົນຕົກສະເລ່ຍຕ່ຳກວ່າ 1000ມມ/ປີ. ແມ່ນ້ຳ ໃນເຂດນີ້ມີຫລາຍສາຍທີ່ສາມາດສ້າງເຂື່ອນໄຟຟ້ານ້ຳຕົກໄດ້ຫລາຍແຫ່ງ. ສຳລັບຊັບພະຍາກອນ ທຳມະຊາດດ້ານບໍ່ແຮ່ ທີ່ສາມາດເປັນພື້ນຖານໃຫ້ແກ່ອຸດສາຫະກຳຂຸດຄົ້ນ ກໍມີບໍ່ແກ້ວປະເສີດທີ່ ແຂວງບໍ່ແກ້ວ, ບໍ່ຖ່ານຫີນທີ່ ເມືອງຫົ້ງສາ ຂຶ້ນກັບ ແຂວງໄຊຍະບູລີ, ບໍ່ເຫລັກທີ່ ແຂວງຊຽງຂວາງ ແລະ ບໍ່ເກືອທີ່ແຂວງວຽງຈັນ. ນອກຈາກນັ້ນ, ເຂດນີ້ຍັງມີໄມ້ທີ່ມີຄຸນນະພາບສູງຫລາຍສົມຄວນ ເປັນຕົ້ນ ແມ່ນຢູ່ແຂວງໄຊຍະບູລີ.

ແຜນທີ 6: ເຂດເໜືອຂອງປະເທດລາວ



ສະພາບລວມທາງດ້ານປະຊາກອນ ແລະ ເສດຖະກິດ

ປະຊາກອນທີ່ດຳລົງຊີວິດຢູ່ໃນເຂດນີ້ມີຫລາຍເຜົ່າ ເມື່ອອີງໃສ່ພາສາປາກເວົ້າ ກໍແມ່ນພາສາ ໄຕ-ລາວ, ມົ້ງ-ຢ້າວ, ຕິເບດ-ພະມ້າ ແລະ ຫ້ໍ. ຈຳນວນປະຊາກອນທັງໝົດມີ 2.876.483 ຄົນ ເປັນຍິງ 1.428.398 ຄົນ (ສູນສະຖິຕິແຫ່ງຊາດປີ 2013), ຄວາມໜາແໜ້ນສະເລ່ຍປະມານ 21 ຄົນຕໍ່ 1 ກມ^2. ຕົວເມືອງໃຫຍ່ທີ່ເຕົ້າໂຮມເອົາປະຊາກອນຢ່າງຫລວງຫລາຍບໍ່ທັນມີ. ປະຊາກອນສ່ວນໃຫຍ່ຍັງດຳເນີນ ອາຊີບກະສິກຳ. ພື້ນຖານເສດຖະກິດຂອງເຂດນີ້ ຍັງແມ່ນການກະສິກຳແບບບໍ່ທັນສະໄໝ. ຍັງສືບ ຕໍ່ດຳເນີນການປູກຝັ່ງ ແລະ ລ້ຽງສັດຕາມແບບດັ້ງເດີມ. ການເຮັດນາປູກເຂົ້າ ແມ່ນປູກຕາມຮ່ອມພູ, ເນື້ອທີ່ ນາບໍ່ກວ້າງຂວາງ. ປະຊາຊົນມີຄວາມເຄີຍຊິນກັບການຖາງປ່າເຮັດໄຮ່ເລື່ອນຍ້າຍ, ແຕ່ເຂດນີ້ມີຄວາມ ສາມາດສູງ ໃນການຂະຫຍາຍເສດຖະກິດດ້ານການປູກພືດອຸດສາຫະກຳທີ່ມີຄຸນຄ່າລາຄາສູງເພື່ອເປັນ ສິນຄ້າເຊັ່ນ: ໝາກແໜ່ງ, ຄັ່ງ, ຍາມ, ຝ້າຍ, ປ່ານ, ປໍ, ຖົ່ວ, ຢາຝິ່ນ, ຊາ ແລະ ກາເຟ. ການອຸດສາຫະກຳເຫັນວ່າມີຄວາມເປັນໄປໄດ້.

ທາງດ້ານການສ້າງອຸດສາຫະກຳຂຸດຄົ້ນບໍ່ແຮ່, ປຸງແຕ່ງໄມ້ ແລະ ປຸງແຕ່ງຜະລິດຕະພັນ ກະສິກຳ. ການຄົມມະນາຄົມຂົນສົ່ງມີບາງເສັ້ນທາງທີ່ເປັນເສັ້ນທາງປູຢາງ, ປູຄອນກີດທີ່ຫລັ່ງລ່ຽນ ທຽວໄດ້ຕະຫລອດປີ ຊຶ່ງສ່ວນຫລາຍແມ່ນເສັ້ນທາງໃນຕົວເມືອງ. ສຳລັບໃນເຂດຊົນນະບົດຍັງຈະຕ້ອງ ໄດ້ເອົາໃຈໃສ່ໃນການພັດທະນາເສັ້ນທາງອີກຢ່າງຕັ້ງໜ້າ ເພາະຍັງເປັນເສັ້ນທາງດິນແດງ.

ຄວາມອາດສາມາດໃນການພັດທະນາເສດຖະກິດ

ເມື່ອເບິ່ງຄືນສະພາບລວມທາງດ້ານທຳມະຊາດ, ເສດຖະກິດ ແລະ ສັງຄົມແລ້ວ, ຄວາມອາດ ສາມາດໃນການພັດທະນາເສດຖະກິດ ແມ່ນມີຄວາມສາມາດຂະຫຍາຍທາງດ້ານການຜະລິດຕ່າງໆ ເຊັ່ນ: ການພັດທະນາທາງດ້ານກະສິກຳ-ປ່າໄມ້ ແລະ ອຸດສາຫະກຳ ໂດຍສະເພາະການປູກພືດ ອຸດສາຫະກຳໃສ່ຕາມເປີ້ນພູແຕ່ກໍຍັງມີຂໍ້ຂັດແຍ່ງໃນຕົວ ລະຫວ່າງການຖາງປ່າເຮັດໄຮ່ເລື່ອນຍ້າຍ ແລະ ການປູກພືດອຸດສາຫະກຳຄົງທີ່. ນັ້ນກໍເພາະວ່າ ຖ້າປູກພືດອຸດສາຫະກຳຄົງທີ່ໃສ່ຕາມເປີ້ນພູແລ້ວ ການຕອບສະໜອງດ້ານເຂົ້າກິນກໍແຫ່ງຫລຸດລົງ ເພາະວ່າເອົາພື້ນທີ່ທີ່ເປັນເປີ້ນພູທີ່ເຄີຍເຮັດໄຮ່ ໄປ ປູກພືດອຸດສາຫະກຳ ແລະ ໄລຍະທີ່ລໍຖ້າພືດອຸດສາຫະກຳທີ່ຈະສາມາດໃຫ້ຜົນຜະລິດໄດ້ກໍອາດໃຊ້ ເວລາຫລາຍປີ. ດັ່ງນັ້ນ, ຄວາມເປັນໄປໄດ້ ກໍແມ່ນຕ້ອງຈັດການແບ່ງພື້ນທີ່ໃຫ້ລະອຽດສະເພາະພື້ນທີ່ ເຮັດໄຮ່ເລື່ອນຍ້າຍ ແລະ ພື້ນທີ່ປູກພືດອຸດສາຫະກຳ. ນອກຈາກນັ້ນ, ການສ້າງໂຮງງານປຸງແຕ່ງ ຜະລິດຕະພັນທາງດ້ານກະສິກຳ ກໍອາດມີຄວາມສາມາດເປັນໄປໄດ້. ສຳລັບການຂຸດຄົ້ນບໍ່ແຮ່ ຊຶ່ງ ປັດຈຸບັນກໍມີການຂຸດຄົ້ນ ຖ່ານຫີນລິກໄນ ທີ່ເມືອງຫົ້ງສາ ແຂວງໄຊຍະບູລີ ເພື່ອຜະລິດໄຟຟ້າ. ນອກຈາກນັ້ນ, ຄວາມສາມາດກໍ່ສ້າງເຂື່ອນໄຟຟ້າຈາກພະລັງງານນ້ຳ ກໍມີຫລາຍແຫ່ງຕາມສາຂາ ແມ່ນ້ຳຂອງ ແລະ ຕາມລຳນ້ຳຂອງ ເຊັ່ນ: ການສ້າງເຂື່ອນໄຟຟ້າຕາມລຳນ້ຳງື່ມ ທີ່ມີຫລາຍແຫ່ງ ແລະ ກຳລັງສ້າງເຂື່ອນນ້ຳຂອງທີ່ແຂວງໄຊຍະບູລີ. ສະເພາະແຂວງຊຽງຂວາງ ແລະ ແຂວງໄຊສົມບູນ ມີພືດ ໃນເຂດອົບອຸ່ນເກີດຂຶ້ນໄດ້ເຊັ່ນ: ຕົ້ນໄມ້ແປກ. ການອຸດສາຫະກຳກໍມີຄວາມສາມາດເປັນໄປໄດ້ໃນ 2 ຂະແໜງຄື:

- ອຸດສາຫະກຳຫລອມເຫລັກ: ເຂດນີ້ມີຄວາມສາມາດນຳໃຊ້ບໍ່ຖ່ານຫີນ ແລະ ໄຟຟ້ານ້ຳຕົກ ຂອງເຂດສົມທົບກັບຈ່ານເຫລັກເພື່ອສ້າງອຸດສາຫະກຳຫລອມເຫລັກ.
- ອຸດສາຫະກຳເຄມີ: ເຂດນີ້ມີບໍ່ຖ່ານຫີນ, ບໍ່ເກືອ ແລະ ບໍ່ໂປຕາສ໌ຢ່າງຫລວງຫລາຍ, ສາມາດ ນຳໃຊ້ເປັນວັດຖຸດິບໃຫ້ແກ່ອຸດສາຫະກຳເຄມີ.


ຂ. ເຂດກາງ

ສະພາບລວມທາງດ້ານທຳມະຊາດ

ເປັນເຂດທົ່ງພຽງທີ່ກວມເອົານະຄອນຫລວງວຽງຈັນ, ແຂວງບໍລິຄຳໄຊ, ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ. ມີເນື້ອທີ່ທັງໝົດ 56.872 ກມ² ເທົ່າກັບ 24% ຂອງເນື້ອທີ່ທົ່ວປະເທດ ແລະ ປະຊາກອນ 2.452.397 ຄົນ[61] ຊຶ່ງຄວາມໜາແໜ້ນສະເລ່ຍຢູ່ນະຄອນຫລວງວຽງຈັນ ໜາແໜ້ນເຖິງ 43ຄົນຕໍ່1ກມ², ເປັນເຂດທີ່ມີຄວາມໜາແໜ້ນສູງກວ່າໝູ່ໃນທົ່ວປະເທດ.ເປັນເຂດທີ່ຕັ້ງຢູ່ອ້ອມແມ່ນ້ຳຂອງ, ທິດຕາເວັນອອກ ແມ່ນສາຍພູຫລວງ ທີ່ເປັນຊາຍແດນຕິດກັບປະເທດຫວຽດນາມ. ດ້ານຕາເວັນຕົກ ແມ່ນແມ່ນ້ຳຂອງ ທີ່ເປັນຊາຍແດນຂອງເຂດນີ້ທີ່ຕິດກັບປະເທດໄທ. ພາກເໜືອຕິດກັບແຂວງວຽງຈັນ, ໄຊສົມບູນ ແລະ ແຂວງຊຽງຂວາງ, ພາກໃຕ້ຕິດກັບແຂວງສາລະວັນ. ລະດັບສູງທຽບໃສ່ໜ້ານ້ຳທະເລ ແມ່ນຢູ່ໃນລະຫວ່າງ 150ມ-300ມ. ປະເພດດິນ ແມ່ນດິນສັນດອນຂອງແມ່ນ້ຳຂອງ ແລະ ສາຂາ ຂອງແມ່ນ້ຳຂອງເຊັ່ນ: ແມ່ນ້ຳງື່ມ, ນ້ຳງຽບ, ນ້ຳຊັນ, ນ້ຳກະດິງ, ເຊບັ້ງໄຟ, ເຊບັ້ງທຽງທີ່ນຳເອົາມາ ທັບຖົມເປັນສ່ວນຫລາຍ. ນອກນັ້ນກໍມີດິນໜຽວສີແດງຢູ່ພາກເໜືອ ຂອງນະຄອນຫລວງວຽງຈັນ ເຮັດໃຫ້ການຊຶມນ້ຳຍາກ ຈຶ່ງມີໜອງ ແລະ ບຶງຫລາຍ. ມີພູມອາກາດຮ້ອນຊຸ່ມມໍລະສຸມຢ່າງເດັ່ນຊັດ, ລະດູໜາວບໍ່ປາກົດຕົວ, ອຸນຫະພູມສະເລ່ຍຂອງເດືອນມັງກອນ ສູງກວ່າ 20°c ເດືອນ ທີ່ຮ້ອນສຸດ ແມ່ນ ເດືອນເມສາ ຊຶ່ງບາງມື້ອຸນຫະພູມສູງເຖິງ 37°c - 39°c ຫລື ອາດຂຶ້ນຮອດ 40°c ໃນບາງປີ. ປະລິມານນ້ຳຝົນຕໍ່ປີ ແມ່ນຫລາຍກວ່າ 1000 ມມຕໍ່ປີ. ມີຊັບພະຍາກອນທຳມະຊາດທາງດ້ານແມ່ນ້ຳ ທີ່ເພີ່ນສາມາດສ້າງເຂື່ອນໄຟຟ້ານ້ຳຕົກໃສ່ຫລາຍແຫ່ງໃນແມ່ນ້ຳເທີນ. ຢູ່ສົ້ນໃຕ້ຂອງເຂດ ແມ່ນທົ່ງພຽງ ສະຫວັນນະເຂດຊຶ່ງມີເນື້ອທີ່ກວ້າງກວ່າທົ່ງພຽງວຽງຈັນເຖິງ 4 ເທົ່າ. ປະເພດຫີນທີ່ເປັນພື້ນຂອງທົ່ງພຽງນີ້ ແມ່ນຫີນຊາທີ່ມີຊັ້ນດິນຍຸກທໍລະນີທີ 4 ປົກຫຸ້ມບາງໆ. ບັນດາໂນນຕ່ຳທັງໝົດມີທິດເນັ່ງໄປຫາແມ່ນ້ຳຂອງ ຊຶ່ງເປັນສາເຫດໃຫ້ປາກົດມີແກ້ງຫລາຍແຫ່ງເຊັ່ນ: ແກ້ງກະເບົາ, ແກ້ງເຂັມມະລາດ ດັ່ງນີ້ເປັນຕົ້ນ. ບໍ່ແຮ່ຕ່າງໆກໍມີ ເປັນຕົ້ນແມ່ນບໍ່ກົ່ວທີ່ໂພນຕ້ອ ແຂວງຄຳມ່ວນ, ບໍ່ຫີນກາວທີ່ດົງເຫັນ, ບໍ່ຄຳທີ່ເຊໂປນ ແຂວງສະຫວັນນະເຂດ ແລະ ບໍ່ເກືອທີ່ນະຄອນຫລວງວຽງຈັນ. ແຕ່ຂໍ້ຈຳກັດທາງດ້ານທຳມະຊາດແມ່ນ ພູມອາກາດທີ່ມີລະດູແລ້ງແກ່ຍາວ, ລະດູຝົນຊ້ຳພັດມີນ້ຳຖ້ວມ.

[61] ສູນສະຖິຕິແຫ່ງຊາດປີ 2013

ແຜນທີ 7: ເຂດກາງ ຂອງປະເທດລາວ



ສະພາບລວມທາງດ້ານປະຊາກອນ ແລະ ເສດຖະກິດ

ປະຊາກອນທີ່ຢູ່ໃນເຂດນີ້ມີຫລາຍເຜົ່າແຕ່ເຜົ່າທີ່ມີຈຳນວນຫລາຍກວ່າໝູ່ ແມ່ນເຜົ່າທີ່ ປາກພາສາລາວ-ໄຕ. ນະຄອນຫລວງວຽງຈັນ ແລະ ແຂວງສະຫວັນນະເຂດ ແມ່ນພື້ນທີ່ທີ່ມີ ປະຊາກອນຫລາຍກວ່າໝູ່. ເປັນເຂດທີ່ມີຄວາມສະດວກໃນການຂະຫຍາຍເສດຖະກິດດີກວ່າເຂດອື່ນ ເຊັ່ນ: ດ້ານກະສິກຳກໍມີພື້ນທີ່ກວ້າງຂວາງ, ສາມາດເຮັດນາໄດ້ທັງ 2 ລະດູ ຖ້າວ່າໃນລະດູແລ້ງ ຫາກມີນ້ຳຊົນລະປະທານສົ່ງໃຫ້. ການປູກພືດປະເພດຕ່າງໆ ກໍໄດ້ດີເພາະເປັນພື້ນທີ່ທີ່ມີດິນຕະກອນ ເໝາະສົມໃນການປູກຝັງ. ການອຸດສາຫະກຳມີຫລາຍກວ່າເຂດອື່ນ ແຕ່ກໍແມ່ນປະເພດອຸດສາຫະກຳ ປຸງແຕ່ງເປັນສ່ວນຫລາຍ. ມີການຄົມມະນາຄົມທີ່ສະດວກກວ່າເຂດອື່ນ.

ຄວາມອາດສາມາດໃນການພັດທະນາເສດຖະກິດ

ຄວາມອາດສາມາດໃນການພັດທະນາເສດຖະກິດພື້ນທີ່ເຂດກາງເປັນທົ່ງພຽງທີ່ກວ້າງຂວາງ ຈຶ່ງມີຄວາມສາມາດເປັນເຂດຜະລິດເຂົ້າຢ່າງພຽງພໍສຳລັບເຂດ.ນອກນັ້ນ,ທົ່ງພຽງລຸ່ມແມ່ນ້ຳຂອງແລະ ສາຂາຂອງມັນ ຊຶ່ງນອກຈາກຈະປູກເຂົ້າດ້ວຍການເຮັດນາແລ້ວ ຍັງປູກພືດຂະນິດອື່ນໆ ເປັນຕົ້ນ ແມ່ນ ພືດຜັກຕ່າງໆ. ແຕ່ບໍລິຄຳໄຊເຖິງຄຳມ່ວນ ສາມາດຜະລິດພືດອຸດສາຫະກຳເຂດຮ້ອນເປັນສິນຄ້າ ເຊັ່ນ: ຝ້າຍ, ຖົ່ວທຸກຊະນິດ, ຢາສູບ, ມອນສຳລັບລ້ຽງມ້ອນ, ກ້ວຍ, ອ້ອຍ. ພື້ນທີ່ພູພຽງນາກາຍ ສາມາດ ປູກກາເຟ, ໝາກແໜ່ງ, ຄັ່ງ, ຍານ, ຊາ. ນອກນັ້ນ, ພື້ນທີ່ເຂດກາງ ສາມາດລ້ຽງສັດໃຫຍ່ເຊັ່ນ: ງົວ, ຄວາຍ, ແບ້.... ນອກຈາກນັ້ນກໍຍັງມີອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ. ພື້ນທີ່ທີ່ສາມາດສ້າງ ເຂື່ອນໄຟຟ້ານ້ຳຕົກກໍແມ່ນມີຫລາຍແຫ່ງ. ດັ່ງນັ້ນ, ການຈັດການສ້າງເຂື່ອນຜະລິດພະລັງງານໄຟຟ້າຈຶ່ງ ຄວນຈັດການສ້າງໃຫ້ເປັນໄປຕາມຄວາມສາມາດຜະລິດໃນແຕ່ລະແຫ່ງວ່າ: ແຫ່ງໃດຄວນສ້າງກ່ອນ ແລະ ແຫ່ງໃດຄວນສ້າງລຸນ ຫລື ແຫ່ງໃດຈະມີເງື່ອນໄຂທີ່ບໍ່ຫຍຸ້ງຍາກຕໍ່ການລົງທຶນສ້າງຫລາຍ ດັ່ງນີ້ ເປັນຕົ້ນ.

ຄ. ເຂດໃຕ້

ສະພາບລວມທາງດ້ານທຳມະຊາດ


ເຂດໃຕ້ປະກອບດ້ວຍ 4 ແຂວງທາງພາກໃຕ້ຄື: ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື. ພື້ນທີ່ເຂດນີ້ມີທັງໝົດ 44.091 ກມ² ເທົ່າກັບ 18,5% ຂອງເນື້ອທີ່ທົ່ວປະເທດ. ມີປະຊາກອນ 1.315.129 ຄົນ (ສູນສະຖິຕິແຫ່ງຊາດປີ 2013), ຄວາມໜາແໜ້ນສະເລ່ຍ 29 ຄົນຕໍ່ 1 ກມ². ພາກຕາເວັນອອກຕິດກັບ ສສ.ຫວຽດນາມ, ທິດຕາເວັນຕົກຕິດກັບປະເທດໄທ, ທິດເໜືອຕິດກັບແຂວງ ສະຫວັນນະເຂດ ແລະ ທິດໃຕ້ຕິດກັບປະເທດກຳປູເຈຍ.

ໃນເຂດນີ້ສາຍພູຫລວງໄດ້ແຜ່ກວ້າງອອກ, ໄດ້ກາຍເປັນພູພຽງຢູ່ໃນລະດັບ 1.000ມ ຫລາຍ ໜ່ວຍຄື: ພູພຽງຕາໂອ້ຍ, ພູພຽງກະເສີ ແລະ ພູພຽງບໍລະເວນ. ຈາກນັ້ນ, ສາຍພູຫລວງໄດ້ ແກ່ຍາວໄປເຖິງຊາຍແດນລາວ-ຫວຽດນາມ ແລະ ກຳປູເຈຍ. ສາຍນ້ຳເຊໂດມ, ເຊກອງ ແລະ ເຊກະໝານເປັນ 3 ສາຍນ້ຳທີ່ສຳຄັນຂອງເຂດທີ່ໄຫລຕາມຮ່ອມລະຫວ່າງພູພຽງ ເຮັດໃຫ້ແຕ່ລະພູພຽງ ມີເອກະລັກຂອງໃຜ-ມັນ. ສຳລັບທົ່ງພຽງກໍມີ 3 ທົ່ງພຽງຄື: ທົ່ງພຽງຈຳປາສັກ, ທົ່ງພຽງສາລະວັນ (ລ້ອງແມ່ນ້ຳເຊໂດມ) ແລະ ທົ່ງພຽງອັດຕະປື (ລ້ອງແມ່ນ້ຳເຊກອງ). ທັງ 3 ທົ່ງພຽງແຈກຢາຍຢູ່ອ້ອມ ພູພຽງບໍລະເວນ. ທົ່ງພຽງທັງ 3 ມີລັກສະນະຮາບພຽງດີ ແລະ ປົກຫຸ້ມດ້ວຍດິນສັນດອນທີ່ອຸດົມສົມບູນ ສຳລັບການປູກພືດຂອງເຂດຮ້ອນຊຸ່ມ.

ສຳລັບພູມອາກາດໃນເຂດໃຕ້ ເຖິງວ່າແມ່ນພູມອາກາດຮ້ອນຊຸ່ມມໍລະສຸມ, ແຕ່ລັກສະນະ ພິເສດຂອງພູມອາກາດໃນເຂດໃຕ້ນີ້ສະແດງອອກແບບລັກສະນະຂອງພູມອາກາດເຂດໃກ້ເສັ້ນສູນສູດ ທີ່ມີອຸນຫະພູມສູງຕະຫລອດປີ, ລະດູຝົນແກ່ຍາວເຖິງ 7 ເດືອນ, ບາງແຫ່ງຮອດ 9 ເດືອນໂດຍສະເພາະ ທີ່ເປັນພູພຽງ ເບື້ອງຕ້ານລົມຕາເວັນຕົກສ່ຽງໃຕ້ຂອງພູພຽງບໍລະເວນ ເຮັດໃຫ້ມີປະລິມານນ້ຳຝົນຫລາຍ ກວ່າແຫ່ງອື່ນ.

ຊັບພະຍາກອນທຳມະຊາດໃນເຂດນີ້ ກໍອຸດົມສົມບູນເໝືອນກັບເຂດອື່ນໆ ເປັນຕົ້ນແມ່ນ ການປາກົດແຮ່ຕ່າງໆ ເຊັ່ນ: ແຮ່ຄຳຕາມລຳນ້ຳເຊກອງ, ເຊກະໝານ ແລະ ເຊຊຸ. ນອກຈາກນັ້ນກໍຍັງມີ ຈຸດປາກົດແຮ່ເຫລັກ, ທອງແດງ, ຊີນ ແລະ ຖ່ານຫີນ. ຕາມລຳນ້ຳກໍມີຫລາຍແຫ່ງທີ່ສາມາດສ້າງ ເຂື່ອນພະລັງງານໄຟຟ້ານ້ຳຕົກໄດ້ ເຊັ່ນ: ເຂື່ອນເຊເສັດ. ປ່າໄມ້ ແລະ ເຄື່ອງປ່າຂອງດົງກໍມີຫລາຍ ແຕ່ກໍໄດ້ຖາກຖາງ ກາຍເປັນສວນຢາງພາລາໃນຈຳນວນເນື້ອທີ່ຫລາຍສົມຄວນ.

ແຜນທີ 8: ເຂດໃຕ້ຂອງປະເທດລາວ



ສະພາບປະຊາກອນ ແລະ ເສດຖະກິດ

ປະຊາກອນໃນເຂດໃຕ້ປະກອບດ້ວຍຫລາຍເຜົ່າ, ແຕ່ເຜົ່າທີ່ມີຫລາຍ ແມ່ນເຜົ່າທີ່ໃຊ້ພາສາ ລາວ-ໄຕ ແລະ ພາສາມອນ-ຂະແມ. ແຂວງທີ່ມີປະຊາກອນຫລາຍກວ່າໝູ່ ແມ່ນແຂວງຈຳປາສັກ. ເຂດນີ້ມີພື້ນຖານທາງດ້ານກະສິກຳດີກວ່າທຸກເຂດໃນປະເທດລາວ. ການຈັດການພື້ນທີ່ການຜະລິດກໍ ຈະແຈ້ງກວ່າເຂດອື່ນຄື: ເຂດທົ່ງພຽງຜະລິດເຂົ້າຕົ້ນຕໍ, ເຂດພູພຽງຜະລິດພືດອຸດສາຫະກຳ ແລະ ລ້ຽງສັດໃຫຍ່ເປັນຕົ້ນຕໍ. ໃນໄລຍະຜ່ານມາເຂດທົ່ງພຽງ. ນອກຈາກໄດ້ສົ່ງເຂົ້າໃຫ້ເຂດພູພຽງແລ້ວຍັງໄດ ສົ່ງໃຫ້ເຂດອື່ນ ແລະ ໄດ້ຂາຍໃຫ້ຕ່າງປະເທດອີກດ້ວຍ. ສ່ວນກາເຟ ແລະ ຊາ, ນອກຈາກຈະ ສະໜອງຄວາມຕ້ອງການຂອງທົ່ວປະເທດແລ້ວ, ຍັງເປັນສິນຄ້າຂາອອກທີ່ສຳຄັນຂອງປະເທດລາວອີກ.

ສຳລັບການອຸດສາຫະກຳຢູ່ເຂດໃຕ້ ຍັງບໍ່ທັນຂະຫຍາຍຕົວເທົ່າທີ່ຄວນ, ມີພຽງອຸດສາຫະກຳຜະລິດໄຟຟ້າຈາກການສ້າງເຂື່ອນ ແລະ ອຸດສາຫະກຳປຸງແຕ່ງກາເຟເທົ່ານັ້ນ. ແຕ່ເຂດນີ້ ມີຄວາມສາມາດຂະຫຍາຍອຸດສາຫະກຳປຸງແຕ່ງ ຜະລິດຕະພັນກະສິກຳອື່ນໆ ອີກຕື່ມ.

ຄວາມອາດສາມາດໃນການພັດທະນາເສດຖະກິດ

ເຂດໃຕ້ມີທ່າແຮງບໍ່ມ້ວນຫລາຍຢ່າງ, ທັງນີ້ກໍເພາະວ່າເຂດນີ້ ມີຊັບພະຍາກອນທຳມະຊາດຫລາຍແຫ່ງທີ່ສາມາດພັດທະນາເປັນແຫລ່ງທ່ອງທ່ຽວ ເຊັ່ນ: ຫລີ່ຜີ. ສຳລັບດິນ ຊຶ່ງເປັນຊັບພະຍາກອນທີ່ສຳຄັນ ໂດຍສະເພາະເຂດນີ້ມີພູພຽງບໍລະເວນ ທີ່ແມ່ນດິນພູໄຟເກົ່າສາມາດປູກຝັງໄດ້ດີ ເປັນຕົ້ນແມ່ນໄດ້ທຳການປູກກາເຟຢ່າງຫລວງຫລາຍໃນປັດຈຸບັນ ແລະ ຜະລິດອຸດສາຫະກຳກາເຟສຳເລັດຮູບສົ່ງຂາຍທັ້ງພາຍໃນ ແລະ ຕ່າງປະເທດ. ສຳລັບດິນສັນດອນ ແມ່ນປົກຫຸ້ມເຂດທົ່ງພຽງຕ່າງໆ ເຊັ່ນ: ທົ່ງພຽງຈຳປາສັກ, ທົ່ງພຽງສາລະວັນ ແລະ ທົ່ງພຽງອັດຕະປືທີ່ເປັນພື້ນທີ່ນາມາແຕ່ໃດໆ, ມີແຕ່ວ່າການເຮັດນາຈະເຮັດແນວໃດ ໂດຍສະເພາະແມ່ນການເຮັດນາແຊງ ຊຶ່ງຕ້ອງສ້າງຊົນລະປະທານເພື່ອນຳເອົານ້ຳເຂົ້າພື້ນທີ່ທົ່ງພຽງທັ້ງ 3 ແຫ່ງນີ້ໃຫ້ເປັນເຂດທີ່ສາມາດເຮັດນາໄດ້ 2 ຄັ້ງຕໍ່ປີຢ່າງທົ່ວເຖິງ.

ຄຳຖາມ:

1. ຈົ່ງອະທິບາຍຄວາມໝາຍ, ຄວາມສຳຄັນຂອງການແບ່ງເຂດພູມສາດ?
2. ໃນຄຳເຫັນຂອງ ເດີ ບໄລ, ຣາຊອນ, ແມກໂດແນນ, ກູດດານ ແລະ ຮອນ ແມ່ນອະທິບາຍຄຳວ່າ: ເຂດພູມີສາດແຕກຕ່າງກັນ, ແຕ່ຕາມຄຳເຫັນຂອງທ່ານເດ ເຂດພູມີສາດແມ່ນແນວໃດ? ຈົ່ງ ອະທິບາຍ?
3. ແນວຄວາມຄິດການແບ່ງເຂດພູມສາດລາວກ່ຽວຂ້ອງກັບແນວຄວາມຄິດໃດແດ່? ຍ້ອນຫຍັງ?
4. ຈົ່ງອະທິບາຍແຕ່ລະແນວຄວາມຄິດທີ່ວາງອອກ ແມ່ນແນໃສ່ແກ້ໄຂບັນຫາຫຍັງໃນເຂດພູມສາດໜຶ່ງໆ?
5. ທິດສະດີການແບ່ງເຂດພູມີສາດລາວຈຶ່ງແມ່ນທິດສະດີການຈັດການພື້ນທີ່ ແລະ ທິດສະດີການພັດທະນາພື້ນທີ່ແບບປະສົມສານ? ຈົ່ງອະທິບາຍແຕ່ລະທິດສະດີ?
6. ສະພາບລວມທາງດ້ານທຳມະຊາດ, ສະພາບລວມທາງດ້ານປະຊາກອນ ແລະ ເສດຖະກິດ ແລະ ຄວາມອາດສາມາດໃນການພັດທະນາເສດຖະກິດຂອງ 3 ເຂດພູມີສາດໃນລາວ ຊຶ່ງແຕ່ລະເຂດເປັນຄືແນວໃດ? ຈົ່ງອະທິບາຍ?

ປະຊາຄົມລາວ

ບົດທີ

4

4.1 ລັກສະນະຂອງປະຊາກອນລາວ


ລັກສະນະຂອງປະຊາກອນ ໝາຍເຖິງລັກສະນະການຂະຫຍາຍຕົວທາງດ້ານຈຳນວນ, ລັກສະນະທາງດ້ານໂຄງປະກອບ (ອາຍຸ, ເພດ, ການສົມລົດ, ການສຶກສາ, ອາຊີບ, ສາສະໜາ, ສັນຊາດ) ແລະ ລັກສະນະທາງດ້ານການແຈກຢາຍຂອງປະຊາກອນ (ການຕັ້ງຖິ່ນຖານທີ່ຢູ່ອາໄສຂອງປະຊາກອນໃນເຂດຕົວເມືອງ ແລະ ເຂດຊົນນະບົດ). ໃນນັ້ນ ຈະມີຈຳນວນໜຶ່ງຈະໃຫ້ກຳເນີດບຸກຄົນໃໝ່ອອກມາ ຫລືວ່າ ຈຳນວນໜຶ່ງທີ່ໄດ້ແຍກຢາຍອອກໄປຢູ່ບ່ອນອື່ນ. ເພື່ອໃຫ້ເຂົ້າໃຈເຖິງບັນຫາທີ່ກ່າວມານັ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ສຶກສາຄົ້ນຄວ້າເຖິງປະຫວັດການຂະຫຍາຍຕົວຂອງປະຊາກອນວ່າມີຄວາມເປັນມາຄືແນວໃດ, ມີຈຳນວນປະຊາກອນຄືແນວໃດ (ການເກີດ, ການຕາຍ ແລະ ການແຈກຢາຍ ຂອງປະຊາກອນ) ດັ່ງລາຍລະອຽດລຸ່ມນີ້:

4.1.1 ປະຫວັດການຂະຫຍາຍຕົວຂອງປະຊາກອນລາວ

ປະຊາຊົນລາວໄດ້ມີປະຫວັດສາດອັນຍາວນານ ປະກອບດ້ວຍຫລາຍເຜົ່າທີ່ດຳລົງຊີວິດຢູ່ຮ່ວມຜືນແຜ່ນດິນອັນດຽວກັນ, ມີຄວາມສາມັກຄີຢ່າງແໜ້ນແຟ້ນ ແລະ ໂຮມກັນເປັນປະເທດລາວເອກະພາບ ມາແຕ່ດຶກດຳບັນ ຫລື ທີ່ເອີ້ນກັນໃນເມື່ອກ່ອນວ່າ: "ອານາຈັກລ້ານຊ້າງ" ແລະ ໃນປັດຈຸບັນເອີ້ນວ່າ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ" ຊຶ່ງເປັນເວລາຫລາຍພັນປີມາແລ້ວ, ແຕ່ກໍ່ມີຄວາມຫຍຸ້ງຍາກທີ່ຈະຫາຫລັກຖານອັນຈະແຈ້ງ ເພື່ອຢັ້ງຢືນເຖິງຈຳນວນປະຊາກອນລາວໃນສະໄໝກ່ອນ, ດັ່ງນັ້ນ ຈຶ່ງຈຳເປັນຈະຕ້ອງໄດ້ສືບຕໍ່ສຶກສາຄົ້ນຄວ້າຕື່ມອີກ. ໃນປະຫວັດລາວສະໄໝກ່ອນໄດ້ປະກົດມີການສຳຫລວດປະຊາກອນລາວ ໃນປີ ຄສ 1377 ຊຶ່ງເຮັດໃຫ້ກະສັດອົງໜຶ່ງໄດ້ຊື່ວ່າ: "ພະເຈົ້າສາມແສນໄທ" ນີ້ກໍເນື່ອງມາຈາກວ່າ, ໄດ້ມີປະຊາກອນລາວປະມານ 300,000 ຄອບຄົວ. ຕໍ່ຈາກນັ້ນມາຈົນເຖິງໄລຍະຕົ້ກເປັນຫ້ວເມືອງຂຶ້ນຂອງຝຣັ່ງຈຶ່ງສາມາດຮູ້ອີກວ່າ ໃນປີ ຄສ 1900 ໄດ້ມີປະຊາກອນລາວພຽງແຕ່ 400,000 ຄົນ. ມາຮອດ ປີ ຄສ 1920 ຈຳນວນປະຊາກອນໄດ້ເພີ່ມຂຶ້ນເຖິງ 813,900 ຄົນ. ໝາຍຄວາມວ່າ ໃນຮອບ 20 ປີ ຈຳນວນປະຊາກອນໄດ້ເພີ່ມຂຶ້ນເທົ່າຕົວ, ຮອດ ປີ ຄສ 1960 ໄດ້ເພີ່ມຂຶ້ນເປັນ 1,900.000 ຄົນ, ຈຳນວນປະຊາກອນໄດ້ເພີ່ມຂຶ້ນເທົ່າຕົວໃນຮອບ 40 ປີ. ເວົ້າລວມ ການເພີ່ມປະຊາກອນຢູ່ໃນໄລຍະນີ້ແມ່ນຍ້ອນການເພີ່ມແບບທຳມະຊາດເປັນຈຸດໜັກ. ພໍກ້າວເຂົ້າສູ່ຊຸມ ປີ ຄສ 1960-1975 ຈຳນວນປະຊາກອນໄດ້ເລີ່ມຂະຫຍາຍຕົວໄວຂຶ້ນກວ່າແຕ່ກ່ອນ ຊຶ່ງບັນຫາຕົ້ນຕໍ ກໍຍັງແມ່ນການເພີ່ມແບບທຳມະຊາດ, ສ່ວນການອົບພະຍົບເຂົ້າປະເທດນັ້ນ ແມ່ນມີໜ້ອຍ ຕົ້ນຕໍແມ່ນຊາວຫວຽດນາມ, ຊາວຈີນ, ຊາວອິນເດຍ. ສະນັ້ນ ມາເຖິງໄລຍະນີ້ ຈຳນວນປະຊາກອນໄດ້ເພີ່ມຂຶ້ນເຖິງ 3,000,000 ຄົນ ໃນປີ 1970.

ນັບແຕ່ອັນທີ 2 ທັນວາ ປີ ຄສ 1975 ເປັນຕົ້ນມາ, ເຖິງແມ່ນວ່າຜົນສະທ້ອນຂອງສົງຄາມຍັງມີຢູ່ກໍ່ຕາມ, ແຕ່ຍ້ອນອັດຕາການເກີດສູງ ແລະ ຄຽງຄູ່ກັບອັດຕາການຕາຍຕ່ຳ, ສະນັ້ນປະຊາກອນເລີ່ມເພີ່ມຂຶ້ນໄວ. ອີງຕາມການສຳຫລວດປະຊາກອນລາວ ໃນປີ ຄສ 1985 ໃຫ້ຮູ້ວ່າ ທົ່ວປະເທດມີຈຳນວນປະຊາກອນ 3,618,000 ຄົນ ໃນນັ້ນມີຍິງ 1,789,000 ຄົນ ແລະ ມາເຖິງການສຳຫລວດປະຊາກອນ ປີ ຄສ 1995 ຈຳນວນປະຊາກອນໄດ້ເພີ່ມຂຶ້ນເປັນ 4,605,000 ຄົນ ໃນນັ້ນມີຍິງ 2,275,000 ຄົນ ແລະ ຢູ່ໃນໄລຍະການສຳຫລວດນີ້ ໄດ້ມີອັດຕາການຂະຫຍາຍຕົວຂອງປະຊາກອນແມ່ນ 2,6 %.

ແຜນວາດທີ 2: ສະພາບການຂະຫຍາຍຕົວ ແລະ ການແຈກຢາຍຂອງປະຊາກອນລາວ
ແຕ່ ປີ ຄສ 1900-2013



ແຫລ່ງຂໍ້ມູນ: ຈາກສູນສະຖິຕິແຫ່ງຊາດ ປີ ຄສ 1900-2013

4.1.2 ການເພີ່ມຂຶ້ນຂອງປະຊາກອນລາວ

4.1.2.1 ສະພາບການເກີດ

ການເກີດ ແມ່ນປັດໄຈທີ່ເຮັດໃຫ້ປະຊາກອນມີການປ່ຽນແປງ ເຮັດໃຫ້ປະຊາກອນມີການເພີ່ມຂຶ້ນໃນແຕ່ລະປີ. ການເກີດ ແມ່ນກ່ຽວພັນກັບແມ່ຍິງໄວຈະເລີນພັນ (15-49 ປີ) ທີ່ແຕ່ງງານ ຫລື ມີເພດສຳພັນແລ້ວ ແລະ ຄູ່ຜົວເມຍທີ່ມີສຸຂະພາບແຂງແຮງດີ ແລະ ສາມາດມີລູກໄດ້ ຄືກັນກັບ ປະເທດອື່ນໆ. ອັດຕາການຈະເລີນພັນຂອງແມ່ຍິງລາວ ກໍຄືຄວາມສາມາດມີລູກສະເລ່ຍແລ້ວ ແມ່ນ 6,4 ຄົນ ຕໍ່ຍິງ 1 ຄົນ. ອັດຕາການຈະເລີນພັນສູງ ເປັນສາເຫດໜຶ່ງທີ່ເຮັດໃຫ້ອັດຕາການເພີ່ມຂອງ ປະຊາກອນສູງ. ຜົນຂອງການສຳຫລວດປະຊາກອນລາວ ປີ ຄສ 1985 ແມ່ນ 6,4%. ການເພີ່ມຂຶ້ນ ຂອງປະຊາກອນໃນໄລຍະດັ່ງກ່າວ ແມ່ນເກີດຈາກຫລາຍປັດໄຈເຊັ່ນ:

ການແຕ່ງງານ:

ໂດຍທົ່ວໄປແລ້ວ ປະຊາກອນລາວມັກຈະມີການແຕ່ງງານໄວ (ແຕ່ງງານແຕ່ອາຍຸຍັງນ້ອຍ). ສະນັ້ນ, ໂອກາດທີ່ຈະມີລູກກໍໄວ ແລະ ຫລາຍຂຶ້ນ ຊຶ່ງສ່ວນຫລາຍ ແມ່ນຊາວຊົນນະບົດ ແລະ ຊົນເຜົ່າ ສ່ວນນ້ອຍທີ່ຢູ່ຫ່າງໄກສອກຫລີກ.

ຈິດຕະສາດ, ວັດທະນະທຳ ແລະ ຮີດຄອງປະເພນີ:

ດ້ານຈິດຕະສາດ, ວັດທະນະທຳ ແລະ ຮີດຄອງປະເພນີຂອງແຕ່ລະຊົນເຜົ່າ ກໍມີຜົນສະທ້ອນ ຕໍ່ການເກີດຂອງປະຊາກອນເຊັ່ນ ບາງຄອບຄົວ ຫລື ບາງເຜົ່າ ແມ່ນຕ້ອງການເພດຍິງ ຫລື ເພດຊາຍ ຫລາຍກວ່າກັນ, ບາງຄອບຄົວພັດຕ້ອງການແຮງງານຫລາຍ ຈຶ່ງຍາກໃຫ້ມີການເກີດຫລາຍ ໂດຍສະເພາະແມ່ນຄອບຄົວຂອງຊາວກະສິກອນ ແລະ ບາງຄອບຄົວ ພັດຕ້ອງການລູກຫລາຍເພາະ ເມື່ອເວລາເຖົ້າແກ່ຊະລາ ຈະໄດ້ມີບ່ອນເພິ່ງພາອາໄສຄືທີ່ໄດ້ກ່າວມາ.

ລະດັບການສຶກສາ:

ປະຊາກອນລາວຜູ້ທີ່ມີລະດັບການສຶກສາສູງຈະເກີດລູກໜ້ອຍ ແລະ ມີລູກຫ່າງ, ຍ້ອນວ່າ ເຂົາເຈົ້າຮູ້ຈັກຫລັກວິທີການຄຸມກຳເນີດໄດ້ດີ. ສ່ວນບຸກຄົນທີ່ມີການສຶກສາຕ່ຳ ຫລື ບໍ່ມີເລີຍນັ້ນກໍມັກຈະ ມີການເກີດລູກຫລາຍ ແລະ ມີລູກຖີ່. ທັງນີ້ຍ້ອນເຂົາເຈົ້າບໍ່ຮູ້ຈັກຫລັກການຄຸມກຳເນີດ ຫລື ການສື່ສານ ດ້ານນີ້ຍັງບໍ່ທົ່ວເຖິງ ໂດຍສະເພາະແມ່ນໃນເຂດຫ່າງໄກສອກຫລີກ.

ອາຊີບ:

ຈາກການສຶກສາຄວາມແຕກຕ່າງຂອງການຈະເລີນພັນຕາມອາຊີບຕ່າງໆ ເຫັນວ່າແມ່ຍິງທີ່ ເປັນຊາວນາຊາວສວນ ຈະມີການຈະເລີນພັນສູງ, ສ່ວນແມ່ຍິງທີ່ເຮັດວຽກໃນກົງຈັກບໍລິຫານ ແລະ ຜູ້ທີ່ ເຮັດວຽກໃນໂຮງຈັກໂຮງງານໃນເຂດຕົວເມືອງຈະມີລະດັບການຈະເລີນພັນຕ່ຳກວ່າ.

ທ່າອ່ຽງຄວາມຕ້ອງການຈຳນວນລູກ:

ປະຊາກອນຢູ່ໃນເຂດຕົວເມືອງ ຫລື ເຂດຊານເມືອງຈະມີທ່າອ່ຽງຂອງຄວາມຕ້ອງການ ຈຳນວນລູກນັບມື້ໜ້ອຍລົງ ຫລື ຂະໜາດຄອບຄົວນ້ອຍ ທັ້ງຫລຸດອັດຕາການຈະເລີນພັນລົງ.

ວຽກເຮັດງານທຳຂອງແມ່ຍິງ:

ການມີວຽກເຮັດງານທຳຂອງແມ່ຍິງກໍມີຜົນສະທ້ອນເຊັ່ນດຽວກັນ ຕໍ່ຈຳນວນລູກເຊັ່ນ: ແມ່ຍິງ ລາວຜູ້ທີ່ມີວຽກເຮັດເປັນປະຈຳ ຈະມີລູກໜ້ອຍກວ່າແມ່ຍິງທີ່ບໍ່ໄດ້ເຮັດວຽກ. ແຕ່ສຳລັບປະເທດທີ່ກຳລັງ ພັດທະນາ ແມ່ຍິງທີ່ເຮັດວຽກ ຫລື ບໍ່ໄດ້ເຮັດວຽກ ກໍຈະມີຈຳນວນລູກບໍ່ແຕກຕ່າງກັນຫລາຍ.

ລາຍໄດ້: ລະດັບການຈະເລີນພັນມີການພົວພັນກັບລາຍໄດ້ ຄື ຄົນທີ່ມີລາຍໄດ້ຕ່ຳມັກຈະ ມີລູກ ຫລາຍກວ່າຄົນທີ່ມີລາຍໄດ້ສູງ.

ປະຊາກອນຊາວຊົນນະບົດ ມີອັດຕາການເກີດຫລາຍກວ່າປະຊາກອນເຂດຕົວເມືອງ ຍ້ອນ ເຫດຜົນທີ່ກ່າວມາຂ້າງເທິງນັ້ນ. ໃນປີ ຄສ 1995 ອັດຕາການເກີດໄດ້ຫລຸດລົງ ເຫລືອພຽງ 4,2% ແລະ ມາເຖິງປີ 2005 ຕົວເລກດັ່ງກ່າວໄດ້ຫລຸດລົງເປັນ 3,9%. ທັງນີ້ກໍຍ້ອນດ້ານສາທາລະນະສຸກ ແລະ ການສຶກສາໄດ້ເພີ່ມທະວີຂຶ້ນໃນທ້ອງຖິ່ນຊົນນະບົດ. ເມື່ອເບິ່ງລວມແລ້ວ, ຄວາມສາມາດໃຫ້ກຳເນີດລູກ ຂອງແມ່ຍິງລາວແມ່ນຕ່ຳ ຢູ່ໃນກຸ່ມອາຍຸ 15-19 ປີ ຈາກນັ້ນກໍເພີ່ມສູງຂຶ້ນ ແລະ ສູງສຸດໃນກຸ່ມອາຍຸ 20-24 ປີ ແລະ ຈະຕ່ຳສຸດໃນກຸ່ມອາຍຸ 45-49 ປີ. ເຖິງຢ່າງໃດກໍຕາມ, ຄວາມສາມາດໃຫ້ກຳເນີດ ລູກຂອງແມ່ຍິງລາວໃນກຸ່ມອາຍຸ 45-49 ປີ ແມ່ນຍັງສູງຫລາຍ ຕົວຢ່າງ: ໃນປີ ຄສ 1995 ແມ່ຍິງທີ່ຢູ່ໃນ ກຸ່ມອາຍຸ 45-49 ປີ ຍັງສາມາດເກີດລູກໄດ້ເຖິງ 31/1000. ນອກຈາກນັ້ນແລ້ວຈຳນວນແມ່ຍິງທີ່ ແຕ່ງງານ ແລະ ເກີດລູກກ່ອນອາຍຸກະສຽນ (<15 ປີ) ກໍຍັງມີຫລາຍ ແລະ ຫລັງອາຍຸກະສຽນ (>49 ປີ) ກໍຍັງປະກົດມີຢູ່ເຊັ່ນກັນ.

ໃນປີ ຄສ 2000 ອັດຕາການເກີດດິບມີ 40.0%, ໃນປີ ຄສ 2003 ອັດຕາການເກີດດິບມີ 39,0% ແລະ ເພີ່ມຂຶ້ນແບບທຳມະຊາດມີ 25% ໃນປີ ຄສ 2008 ອັດຕາການເກີດລວມຕໍ່ 1000 ຄົນ ມີ 31,6%; ໃນປີ ຄສ 2009 ອັດຕາການເກີດລວມຕໍ່ 1000 ຄົນມີ 30,7% ແລະ ອັດຕາການ ຈະເລີນພັນລວມຕໍ່ແມ່ຍິງ 1 ຄົນ ມີ 1%. ອາຍຸຍືນສະເລ່ຍ ໃນປີ ຄສ 2008 ມີ 63,2 ປີ ແລະ ປີ ຄສ 2009 ມີ 64 ປີ.

4.1.2.2 ສະພາບການຕາຍ

ການຕາຍ ແມ່ນກົດເກນການສູນເສຍແບບທຳມະຊາດຂອງສິ່ງມີຊີວິດໃດໜຶ່ງ, ການຕາຍ ຫລື ການເສຍຊີວິດ ແມ່ນເຫດການທີ່ຈະຕ້ອງເກີດຂຶ້ນກັບທຸກໆ ຄົນຢ່າງຫລີກລ່ຽງບໍ່ໄດ້, ການຕາຍຈະ

ເກີດຂຶ້ນພຽງຄັ້ງດຽວໃນຊີວິດຂອງແຕ່ລະຄົນເທົ່ານັ້ນ ຊຶ່ງເປັນການກົງກັນຂ້າມກັບການເກີດ ຫລື ການຈະເລີນພັນ ເພາະແມ່ຍິງຄົນໜຶ່ງໆ ສາມາດ ແລະ ມີໂອກາດໃຫ້ກຳເນີດເດັກໄດ້ຫລາຍກວ່າ 1 ຄັ້ງ.

ການຕາຍແບ່ງອອກເປັນຫລາຍໄລຍະຄື: ການຕາຍກ່ອນ ຫລື ຕາຍໃນໄລຍະຄອດ ຫລື ໄລຍະຄອດທຳອິດ, ຖ້າເດັກຕາຍກ່ອນອາຍຸໄດ້ 4 ອາທິດ ຫລື 1 ເດືອນ ແມ່ນການຕາຍຂອງເດັກແດງ (ເດັກເກີດໃໝ່) (Neonatal Death). ຖ້າການຕາຍມີຂຶ້ນໃນລະຫວ່າງ 52 ອາທິດ ຫລື 1 ປີ ນັ້ນ ແມ່ນການຕາຍຂອງເດັກຫລັງເກີດໃໝ່ (Post Neonatal Death). ນອກຈາກນັ້ນຍັງມີການຕາຍຂອງເດັກໃນທ້ອງ (Fetal death) ແລະ ອື່ນໆ ອີກ ເຊັ່ນ: ການຕາຍຂອງເດັກອາຍຸຕ່ຳກວ່າ 5 ປີ, ການຕາຍຂອງແມ່ຍິງໃນໄລຍະຈະເລີນພັນອາຍຸແຕ່ 15-49 ປີ. ເວົ້າລວມ, ການຕາຍມີ 2 ແບບຄື: ການຕາຍຍ້ອນໝົດອາຍຸສັ້ງຂານ ແລະ ການຕາຍແບບກະທັນຫັນ (ຍ້ອນການເກີດອຸປະຕິເຫດ, ຍ້ອນພະຍາດໂລຄາ, ຍ້ອນໄພທຳມະຊາດ ...).

ມາເຖິງ ປີ ຄສ 2000 ອາຍຸຍືນສະເລ່ຍຂອງປະຊາກອນລາວມີຢູ່ 59 ປີ, ອາຍຸຍືນສະເລ່ຍຂອງເພດຍິງແມ່ນ 61 ປີ, ອາຍຸຍືນສະເລ່ຍຂອງເພດຊາຍ ແມ່ນ 57 ປີ ຊຶ່ງເຫັນວ່າຍັງຕ່ຳກວ່າອາຍຸຍືນສະເລ່ຍຂອງປະຊາກອນຊາດຕ່າງໆ ທີ່ພັດທະນາແລ້ວ, ແຕ່ກໍບໍ່ໜາຍຄວາມວ່າອາຍຸຍືນສູງສຸດຂອງປະຊາກອນລາວມີພຽງແຕ່ເທົ່ານັ້ນ, ບາງທ້ອງຖິ່ນມີບາງຄົນອາຍຸຍືນກວ່າ 100 ປີຂຶ້ນໄປ (ສ່ວນຫລາຍແມ່ນເພດຍິງ ທີ່ມີອາຍຸຍືນສູງກວ່າເພດຊາຍແຕ່ 8-10 ປີ). ໃນປີ 2005 ອາຍຸຍືນສະເລ່ຍຂອງປະຊາກອນລາວ ໄດ້ເພີ່ມຂຶ້ນເປັນ 61 ປີ, ໃນນັ້ນອາຍຸຍືນສະເລ່ຍຂອງເພດຍິງແມ່ນ 63 ປີ ແລະ ເພດຊາຍ 59 ປີ, ປີ 2010 ອາຍຸຍືນສະເລ່ຍແມ່ນ 64.7 ປີ ແລະ ໃນປີ ຄສ 2012 ອາຍຸຍືນສະເລ່ຍຂອງປະຊາກອນໄດ້ເພີ່ມຂຶ້ນເປັນ 66.1 ປີ, ແລະ ໃນປີ ຄສ 2014 ອາຍຸຍືນສະເລ່ຍຂອງເພດຍິງແມ່ນ 65 ປີ, ເພດຊາຍ 60 ປີ.

4.1.2.3 ລັກສະນະການຕາຍຂອງປະຊາກອນລາວ

ສະພາບການຕາຍຂອງປະຊາກອນລາວໃນປັດຈຸບັນ ໄດ້ຫລຸດຜ່ອນລົງຢ່າງເຫັນໄດ້ແຈ້ງ ທຽບກັບສະໄໝກ່ອນ, ພິເສດແມ່ນພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍ, ອັດຕາການຕາຍດິບ (CDR) ໃນຊຸມ ປີ ຄສ 1960-1970 ແມ່ນຢູ່ໃນລະດັບສູງເຖິງ 23/1000. ແຕ່ມາເຖິງຊຸມ ປີ ຄສ 1985 ອັດຕາການ ຕາຍຂອງປະຊາກອນລາວໄດ້ຫລຸດລົງມາເປັນ 17,1/1000 (ລະດັບປານກາງ), 15/1000 ໃນປີ ຄສ 2000 ແລະ ໃນປະຈຸບັນໄດ້ຫລຸດລົງເປັນ 7,4/1000.

ຕາລາງທີ 9: ສະແດງອັດຕາການຕາຍດິບຂອງປະຊາກອນລາວ
ໃນຊຸມປີ ຄສ 1970 ຫາ ປີ ຄສ 2012.

ປີ ຄສ	ຈຳນວນພົນລວມ (ຄົນ)	ອັດຕາການຕາຍດິບ (CDR=Crude Death Rate) ສ່ວນພັນ
1970	3.000.000	23,0
1985	3 584 803	17,1
1990	4 170 000	15,0
1995	4 581 258	15,1
2000	5.200.000	15,0
2005	5 621 982	9,8
2010	6 256 197	8,0
2011	6 385 057	7,7
2012	6 385 057	7,4

ທີ່ມາຂໍ້ມູນ: ຈາກສູນສະຖິຕິແຫ່ງຊາດ ແລະ ທໍສະໜຸດແຫ່ງຊາດ

ກ. ອັດຕາການຕາຍດິບຂອງປະຊາກອນລາວ ແມ່ນມີຄວາມແຕກຕ່າງກັນແຕ່ລະແຂວງຄື:

- ບັນດາແຂວງຢູ່ເຂດພູ ແລະ ພູພຽງລວມມີເຖິງ 11 ແຂວງ ທີ່ມີອັດຕາການຕາຍດິບຂອງ ປະຊາກອນສູງເຊັ່ນ: ແຂວງເຊກອງ (20/1000), ຫລວງນ້ຳທາ (17/1000), ອຸດົມໄຊ ແລະ ອັດຕະປື (15/1000) ແລະ ອື່ນໆ (ເບິ່ງຕາຕະລາງທີ 2). ປະຊາກອນໃນເຂດນີ້ມີລະດັບການສຶກສາຕ່ຳ ແລະ ການເບິ່ງແຍງ ສຸຂະພາບຂອງແມ່ ແລະ ເດັກກໍຍັງບໍ່ທັນຖືກຕ້ອງຕາມຫລັກສຸຂະອານາໄມດີເທົ່າ ທີ່ຄວນ, ເຂົາເຈົ້າດຳລົງຊີວິດດ້ວຍການເຮັດວຽກງານກະສິກຳແບບທຳມະຊາດເປັນຕົ້ນຕໍ. ຢູ່ບາງແຂວງ ກໍເຮັດນາ, ເຮັດສວນ, ລ້ຽງສັດ, ເຮັດຫັດຖະກຳ ແລະ ຄ້າຂາຍຍ່ອຍ.

- ບັນດາແຂວງຢູ່ເຂດທົ່ງພຽງສ່ວນໃຫຍ່ ແມ່ນມີອັດຕາການຕາຍດິບຕ່ຳ ເຊັ່ນ: ນຳແພງ ນະຄອນວຽງຈັນ (4/1000), ແຂວງວຽງຈັນ (7/1000), ຈຳປາສັກ (9/1000) ແລະ ອື່ນໆ (ເບິ່ງຕາຕະລາງ ທີ 2) ປະຊາກອນ ໃນເຂດນີ້ມີລະດັບການສຶກສາສູງກວ່າ, ສຸຂະພາບຂອງແມ່ ແລະ ເດັກໄດ້ຮັບການ ເບິ່ງແຍງດີກວ່າ. ເຂົາເຈົ້າດຳລົງຊີວິດດ້ວຍການເຮັດວຽກງານກະສິກຳແບບທັນສະໄໝກວ່າ, ເຮັດ ວຽກງານອຸດສາຫະກຳ, ວຽກບໍລິການ ແລະ ການຄ້າຂາຍຂະໜາດໃຫຍ່ກວ່າ...

ຂ. ອັດຕາການຕາຍຂອງປະຊາກອນລາວ ຍັງມີຄວາມແຕກຕ່າງກັນຕາມແຕ່ລະກຸ່ມອາຍຸ, ຈຳນວນຄົນຕາຍຫລາຍ ແມ່ນຢູ່ໃນກຸ່ມອາຍຸຕ່ຳກວ່າ 1 ປີ (22/1000) ແລະ ສູງທີ່ສຸດ ແມ່ນຢູ່ໃນກຸ່ມ ອາຍຸ 1-4 ປີ (26/1000) ຊຶ່ງພິເສດ ແມ່ນເພດຊາຍ. ຫລັງຈາກນັ້ນລະດັບການຕາຍໄດ້ຫລຸດລົງຢ່າງ ວ່ອງໄວໃນກຸ່ມ ອາຍຸ 5-9 ປີ (8,5/1000), ຢູ່ໃນກຸ່ມອາຍຸ 10-14 ປີ (3,6/1000), 15-19 ປີ (3/1000) ແລະ ສືບຕໍ່ຫລຸດລົງໃນກຸ່ມອາຍຸ 20-24 ປີ ເຖິງ 45-49 ປີ (2/1000) ແລະ ເມື່ອຮອດອາຍຸ 60 ປີ ຂຶ້ນໄປ ລະດັບການຕາຍເພີ່ມຂຶ້ນເລື້ອຍໆ.

ຕາລາງທີ 10: ສະແດງອັດຕາການຕາຍດິບຂອງປະຊາກອນລາວໃນແຕ່ລະກຸ່ມອາຍຸ

ກຸ່ມອາຍຸ	ອັດຕາການຕາຍດິບ (CDR=Crude Death Rate)	ໝາຍເຫດ
0	22,0	
1-4	26,2	
5-9	8,5	
10-14	3,6	
15-19	3,1	
20-24	2,2	
25-29	2,2	
30-34	1,9	
35-39	2,4	
40-44	2,1	
45-49	2,6	
50-54	2,9	
55-59	2,9	
60-64	3,7	
65+	13,6	
ບໍ່ບອກ	0,1	
ທົ່ວປະເທດ	9,0	

ຂໍ້ມູນ: ຈາກການສຳຫລວດປະຊາກອນປີ ຄ.ສ 2005, 2010 ຈາກສູນສະຖິຕິແຫ່ງຊາດ

ຄ. ບັນຫາທີ່ຄວນເອົາໃຈໃສ່ທີ່ສຸດກ່ຽວກັບສະພາບການຕາຍຂອງປະຊາກອນລາວ ແມ່ນ ອັດ ຕາການຕາຍຂອງເດັກນ້ອຍ (104/1000). ແຂວງທີ່ມີອັດຕາການຕາຍຂອງເດັກນ້ອຍສູງທີ່ສຸດ ແມ່ນ ແຂວງ ບໍລິຄຳໄຊ (136/1000), ໄຊຍະບູລີ (134/1000) ແລະ ຫລວງພະບາງ (132/1000). ແຂວງທີ່ມີອັດຕາການຕາຍຂອງເດັກນ້ອຍຕ່ຳສຸດແມ່ນນະຄອນວຽງຈັນ. ຍ້ອນອັດຕາ ການຕາຍຂອງເດັກນ້ອຍສູງຄືດັ່ງກ່າວມານີ້ ຈຶ່ງເຮັດໃຫ້ອາຍຸຍືນປານກາງຂອງປະຊາກອນລາວຍັງຕ່ຳ ຄື ຍິງ 63 ປີ ແລະ ຊາຍ 59 ປີ.

ตารางที 11: ສະແດງອັດຕາການຕາຍຂອງເດັກນ້ອຍ ແລະ ອາຍຸຍືນປານກາງແຕ່ລະແຂວງ.

ລ/ດ	ຊື່ແຂວງ	ອັດຕາການຕາຍດິບ ຕໍ່ 1000 ຄົນ (CDR)	ອັດຕາການຕາຍຂອງເດັກຕໍ່ 1000 ຄົນ (IMR)	ອາຍຸຍືນປານກາງ (ປີ)	
				ຊາຍ	ຍິງ
1	ນະຄອນຫຼວງວຽງຈັນ	3,9	72	68	71
2	ຜົ້ງສາລີ	13,6	94	60	63
3	ຫລວງນ້ຳທາ	17,5	119	56	59
4	ອຸດົມໄຊ	15,7	88	58	60
5	ບໍ່ແກ້ວ	13,9	82	63	66
6	ຫລວງພະບາງ	12,9	132	59	62
7	ຫົວພັນ	9,0	125	60	63
8	ໄຊຍະບູລີ	8,7	134	63	66
9	ຊຽງຂວາງ	9,8	121	60	63
10	ວຽງຈັນ	7,1	102	65	68
11	ບໍລິຄຳໄຊ	8,8	136	63	66
12	ຄຳມ່ວນ	10,6	83	56	59
13	ສະຫວັນນະເຂດ	11,7	80	60	63
14	ສາລະວັນ	13,6	86	56	59
15	ເຊກອງ	20,5	96	54	56
16	ຈຳປາສັກ	9,5	91	60	63
17	ອັດຕະປື	15,9	93	55	58
ທົ່ວປະເທດ	9,0	104	59	63	

ຂໍ້ມູນ:ຈາກການສຳຫລວດປະຊາກອນ ປີ ຄ.ສ 2005, ສະຖິຕິປີ 2012 ຈາກສູນສະຖິຕິແຫ່ງຊາດ

4.1.2.4 ອັດຕາການເພີ່ມຂຶ້ນຂອງປະຊາກອນລາວ

ໂດຍສ່ວນໃຫຍ່ແລ້ວສັງເກດເຫັນວ່າມີ 4 ສາເຫດໃຫຍ່ທີ່ມີຜົນຕໍ່ການເພີ່ມຂຶ້ນຂອງປະຊາກອນລາວ ເຊັ່ນ:

1) ປະຊາກອນເພີ່ມໄວ ແມ່ນຍ້ອນອັດຕາການເກີດຢູ່ໃນລະດັບສູງ (CBR=4,1%), ແລະ ອັດຕາການຕາຍພັດຫລຸດລົງໄວ (CDR=1,5 %), ບັນຫານີ້ ແມ່ນຍ້ອນພັກ ແລະ ລັດຖະບານ ກໍຄື ອຳນາດການປົກຄອງທຸກຂັ້ນ ບໍ່ພຽງແຕ່ໄດ້ຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນທຸກຊັ້ນຄົນໃນ ທົ່ວປະເທດເທົ່ານັ້ນ, ແຕ່ຍັງໄດ້ເອົາໃຈໃສ່ຕໍ່ສຸຂະພາບຂອງປະຊາຊົນບັນດາເຜົ່າ ພິເສດແມ່ນ ສຸຂະພາບຂອງຜູ້ເປັນແມ່ ແລະ ເດັກນ້ອຍນຳອີກ. ຍ້ອນລະດັບການຫັນປ່ຽນດ້ານເສດຖະກິດ-ສັງຄົມ ຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນທົ່ວປະເທດນັບມື້ຈະເລີນກ້າວໜ້າ.

2) ສະພາບການແຕ່ງງານຂອງປະຊາກອນ ກໍມີຜົນສະທ້ອນໂດຍກົງເຖິງການເອົາລູກຂອງ ຄູ່ຜົວ-ເມຍ. ອາຍຸກະສຽນຂອງການແຕ່ງງານ ແມ່ນມີຄວາມຈຳເປັນ, ຕາມກົດເກນແລ້ວ ຍິງ-ຊາຍ ໄດ້ ແຕ່ງງານໄວ ໂອກາດມີລູກກໍຫລາຍຂຶ້ນ. ຢູ່ປະເທດເຮົາເຖິງວ່າຈະມີການກຳນົດອາຍຸກະສຽນການ

ແຕ່ງງານໄວ້ແລ້ວກໍ່ຕາມ, ແຕ່ຍັງບໍ່ທັນປະຕິບັດເອົາຈິງເອົາຈັງເທື່ອ ແລະ ອີກບັນຫາໜຶ່ງ ແມ່ຍິງລາວທີ່ມີອາຍຸແຕ່ 35-49 ປີ ກໍຍັງສາມາດເກີດລູກໄດ້ຫລາຍ ເຊັ່ນ: ຜົນການສຳຫລວດປະຊາກອນປີ 1995 ຊີ້ໃຫ້ເຫັນວ່າ: ແມ່ຍິງລາວທີ່ຢູ່ໃນກຸ່ມອາຍຸ 45-49 ປີ ຍັງສາມາດເກີດລູກເຖິງ 4,4%, ໂດຍສະເພາະແມ່ຍິງຢູ່ໃນເຂດຊົນນະບົດຫ່າງໄກສອກຫລີກ ແລະ ເຂດພູດອຍ.

3) ສະພາບການຄົງຕົວຂອງຮີດຄອງປະເພນີ ແລະ ຈິດຕະສາດອັນເກົ່າແກ່ຍັງຄົງຄ້າງຢູ່ນຳ ປະຊາຊົນບັນດາເຜົ່າ ເຊັ່ນ: ຜູ້ໃດມີລູກຫລາຍຖືວ່າມີບຸນຫລາຍ, ຕ້ອງເກີດລູກຫລາຍເພື່ອເປັນກຳລັງແຮງງານ ໃນການຜະລິດ, ຕ້ອງການລູກຫລາຍຍ້ອນວ່າ ເມື່ອເວລາເຖົ້າສະລາຈະໄດ້ມີຜູ້ລ້ຽງດູເບິ່ງແຍງຕົນ.

4) ລະດັບການສຶກສາ, ສາທາລະນະສຸກຢູ່ໃນເຂດຊົນນະບົດ ແລະ ເຂດພູດອຍຍັງຕ່ຳຫລາຍຫລື ບາງບ່ອນກໍບໍ່ມີການສຶກສາເລີຍ. ສະນັ້ນ ໂອກາດທີ່ຈະເຂົ້າໃຈເພື່ອວາງແຜນຄອບຄົວນັ້ນມີໜ້ອຍ, ເຖິງວ່າຈະມີໂຄງການເອົາລູກຫ່າງ ແລະ ເອົາລູກໜ້ອຍທີ່ກຳລັງປະຕິບັດໃນປັດຈຸບັນນີ້ ກໍພຽງແຕ່ດຳເນີນປົກກະຕິຢູ່ໃນເຂດທີ່ສະດວກ ແລະ ເຂດຈະເລີນເທົ່ານັ້ນ.

ບັນຫາຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນໄດ້ເຮັດໃຫ້ອັດຕາການເພີ່ມປະຊາກອນແບບທຳມະຊາດ ຢູ່ໃນລະດັບສູງສົມຄວນ, ອີງຕາມຕົວເລກການເພີ່ມປະຊາກອນໃນປັດຈຸບັນນີ້ (2,6%) ຖ້າຫາກວ່າບໍ່ມີສະພາບອັນໃດກະທົບຕໍ່ອັດຕາສ່ວນຕ່າງໆ ດ້ານປະຊາກອນແລ້ວ ຄາດວ່າ ໃນປີ ຄສ 2020 ປະຊາກອນລາວຈະມີເຖິງ 8,700,000 ຄົນ, ໝາຍຄວາມວ່າແຕ່ລະປີ ຈະມີຈຳນວນປະຊາກອນເພີ່ມຂຶ້ນຫລາຍກວ່າ 100,000 ຄົນ.

4.1.3 ລັກສະນະການແຈກຢາຍຂອງປະຊາກອນ

4.1.3.1 ຄວາມໜາແໜ້ນ

ປະເທດລາວ ແມ່ນປະເທດໜຶ່ງທີ່ຢູ່ໃນພາກພື້ນອາຊີອາຄະເນ ທີ່ມີຄວາມໜາແໜ້ນຕ່ຳທຽບ ໃສ່ບັນດາປະເທດທີ່ຢູ່ອ້ອມຂ້າງລາວ ເຊັ່ນ: ປະເທດສິງກະໂປ 7023 ຄົນ/ກມ^2, ຫວຽດນາມ 259 ຄົນ/ກມ^2, ມຽນມ້າ 74 ຄົນ/ກມ^2, ກຳປູເຈ້ຍ 82 ຄົນ/ກມ^2 [62] ສຳລັບຄວາມໜາແໜ້ນໂດຍສະເລ່ຍຂອງປະຊາກອນລາວ ໃນປີ ຄສ 1985 ແມ່ນ 15 ຄົນ/ກມ^2, ປີ ຄສ 1995 ແມ່ນ 19 ຄົນ/ກມ^2, ປີ ຄສ 2005 ແມ່ນ 24 ຄົນ/ກມ^2 , ປີ ຄສ 2010 ແມ່ນ 26 ຄົນ/ກມ^2 ແລະ ປີ ຄສ 2012 ແມ່ນ 28 ຄົນ/ກມ^2 (ເບິ່ງຕາຕະລາງ 4). ເຖິງວ່າຄວາມໜາແໜ້ນຂອງປະຊາກອນຈະນັບມື້ນັບສູງຂຶ້ນກໍຕາມ ແຕ່ຄວາມອາດສາມາດຂອງທຳມະຊາດທີ່ຈະຕອບສະໜອງພື້ນທີ່ນຳໃຊ້ເປັນທີ່ຢູ່ອາໄສ ແລະ ການບຸກເບີກສ້າງສາເສດຖະກິດຂອງຄົນລາວໃນອານາຄົດ ແມ່ນຍັງຕ່ຳຢູ່.

[62] http://en.wikepedia.org.wikl/east-asia ວັນທີ 29/7/2011

ຕາລາງທີ 12: ສະແດງຄວາມໜາແໜ້ນປະຊາກອນລາວບາງປີແຕ່ສະໄໝກ່ອນເຖິງປະຈຸບັນ

ປີ	ຈຳນວນປະຊາກອນ (ຄົນ)	ຄວາມໜາແໜ້ນສະເລ່ຍ (ຄົນ/ກມ2)
1900	400,000	2
1980	3.199,000	14
1985	3,618,000	15
1990	4,140,000	17
1995	4,581,258	19
2000	5,200,000	21
2005	5,621,982	24
2010	6,256,197	26
2011	6,385,057	27
2012	6,514,432	28
2013	6,771,000	29

ແຫລ່ງຂໍ້ມູນ: ຈາກສູນສະຖິຕິແຫ່ງຊາດ, ປີ 2014

4.1.3.2 ສະພາບການແຈກຢາຍຂອງປະຊາກອນ

ການແຈກຢາຍຂອງປະຊາກອນລາວ ແມ່ນບໍ່ສະໝ່ຳສະເໝີກັນລະຫວ່າງເຂດທົ່ງພຽງ ແລະ ເຂດພູສູງ, ລະຫວ່າງຕົວເມືອງ ແລະ ຊົນນະບົດ ແລະ ລະຫວ່າງບັນດາແຂວງດ້ວຍກັນ ອັນເນື່ອງມາຈາກ ການແຈກຢາຍຂອງປະຊາກອນລາວ ໄດ້ຕິດພັນກັນຢ່າງສະໜິດແໜ້ນກັບພູມສັນຖານ, ເງື່ອນໄຂໃນ ການທຳມາຫາກິນ, ຄວາມສຳຄັນທາງດ້ານການເມືອງ, ເສດຖະກິດ, ສັງຄົມຂອງແຕ່ລະທ້ອງຖິ່ນທີ່ ແຕກ ຕ່າງກັນ. (ຕາລາງທີ 5).

ເຂດທີ່ມີປະຊາກອນເຕົ້າໂຮມກັນຫລາຍ ສ່ວນໃຫຍ່ແມ່ນຢູ່ຕາມເຂດທົ່ງພຽງແຄມແມ່ນ້ຳຂອງ ເບື້ອງຕາເວັນອອກເຊັ່ນ: ທົ່ງພຽງວຽງຈັນ, ທົ່ງພຽງສະຫວັນນະເຂດ ແລະ ທົ່ງພຽງຈຳປາສັກ. ນອກຈາກນັ້ນກໍຍັງດຳລົງຊີວິດແຈກຢາຍຢູ່ຕາມທົ່ງພຽງນ້ອຍຕາມຮ່ອມພູ ແລະ ຢູ່ລຽບຕາມແຄມ ແມ່ນ້ຳທີ່ເປັນສາຂາຂອງແມ່ນ້ຳຂອງ. ຍ້ອນເປັນເຂດທີ່ອຸດົມສົມບູນ, ມີເງື່ອນໄຂເອື້ອອຳນວຍແກ່ ການຜະລິດກະສິກຳ, ມີຄວາມສະດວກແກ່ການຄົມມະນາຄົມ-ຂົນສົ່ງ, ການຜະລິດອຸດສາຫະກຳ ແລະ ການບໍລິການອື່ນໆ ຊຶ່ງເປັນເຂດທີ່ມີການພັດທະນາຢ່າງວ່ອງໄວທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ.

ຕາລາງທີ 13: ສະແດງຈຳນວນປະຊາກອນ, ເນື້ອທີ່ ແລະ ຄວາມໜາແໜ້ນ ຂອງປະຊາກອນລາວ ໃນປີ 2012

ລ/ດ	ຊື່ແຂວງ	ເນື້ອທີ່ ກມ²	ຈຳນວນພົນ (ຄົນ)		ຄວາມໜາແໜ້ນ
			ລວມ	ຍິງ	
1	ນຄ.ວຽງຈັນ	3 920	797,130	398,654	203
2	ຜົ້ງສາລີ	16 270	179,822	89,390	11
3	ຫລວງພະບາງ	9 325	171,967	86,548	18
4	ອຸດົມໄຊ	15 370	314,269	156,943	20
5	ບໍ່ແກ້ວ	6 196	173,962	87,229	28
6	ຫລວງພະບາງ	16 875	463,485	231,232	27
7	ຫົວພັນ	16 500	333,762	165,336	20
8	ໄຊຍະບູລີ	16 389	389,139	192,653	24
9	ຊຽງຂວາງ	16 358	282,769	139,978	17
10	ວຽງຈັນ	22 554	506,881	249,362	22
11	ບໍລິຄຳໄຊ	14 863	281,207	139,013	19
12	ຄຳມ່ວນ	16 315	390,701	197,995	24
13	ສະຫວັນນະເຂດ	21 774	937,907	473,686	43
14	ສາລະວັນ	10 691	384,438	195,003	36
15	ເຊກອງ	7 665	103,326	52,046	13
16	ຈຳປາສັກ	15 415	670,122	337,110	43
17	ອັດຕະປື	10 320	133,545	67,802	13
ທົ່ວປະເທດ		236 800	6,514,432	3,259,980	28

ແຫລ່ງຂໍ້ມູນ: ຈາກສູນສະຖິຕິແຫ່ງຊາດ ປີ 2012

ເຂດທີ່ມີປະຊາກອນດຳລົງຊີວິດຢູ່ຢ່າງເບົາບາງ ແລະ ກະແຈກກະຈາຍ ແມ່ນຢູ່ເຂດພູສູງ ທາງ ພາກເໜືອ, ພາກຕາເວັນອອກ, ເຂດພູພຽງທາງພາກກາງ ແລະ ພາກໃຕ້. ເຂດນີ້ເປັນເຂດທີ່ມີ ຊັບພະຍາກອນທຳມະຊາດຫລາຍຊະນິດ ແຕ່ພັດເປັນເຂດທຸລະກັນດານ, ການຄົມມະນາຄົມພົບຄວາມ ຫຍຸ້ງຍາກຫລາຍ, ພື້ນຖານເສດຖະກິດຂະຫຍາຍຕົວຊ້າ, ລະດັບການສຶກສາຕ່ຳ ແລະ ເປັນເຂດທີ່ ຊົນເຜົ່າສ່ວນໜ້ອຍອາໄສຢູ່.

ປະຊາກອນລາວ ອາໄສຢູ່ຢ່າງຫລວງຫລາຍຕາມຕົວເມືອງໃຫຍ່ ແລະ ນ້ອຍຕ່າງໆ ໃນ ທົ່ວປະເທດ ໂດຍສະເພາະ ແມ່ນບັນດາຕົວເມືອງທີ່ເປັນທີ່ຕັ້ງຫ້ອງວ່າການແຂວງ ແລະ ທີ່ຕັ້ງຫ້ອງວ່າ ການເມືອງ ເຊັ່ນ: ເມືອງຫລວງພະບາງ, ເມືອງໄຊ, ເມືອງໂພນໂຮງ, 4 ຕົວເມືອງຂອງເທດສະບານ ນະຄອນຫລວງວຽງຈັນ ເປັນຕົ້ນ.

ລັກສະນະຂອງການແຈກຢາຍປະຊາກອນລາວບໍ່ສະໝ່ຳສະເໝີ ຊຶ່ງມັນຍັງສະແດງອອກ ລະຫວ່າງ ບັນດາແຂວງ, ບັນດາເມືອງໃຫຍ່-ນ້ອຍ ແລະ ລະຫວ່າງບ້ານຕ່າງໆ ດ້ວຍກັນເຊັ່ນ: ແຂວງທີ່ມີ ພົນລະເມືອງຫລາຍຫວ່າໝູ່ ແມ່ນແຂວງສະຫວັນນະເຂດ, ນະຄອນວຽງຈັນ, ຈຳປາສັກ, ຫລວງພະບາງ ແລະ ແຂວງອື່ນໆ. ສ່ວນແຂວງທີ່ມີພົນລະເມືອງໜ້ອຍ ແມ່ນແຂວງເຊກອງ.

4.2 ໂຄງປະກອບປະຊາກອນລາວ

ໂຄງປະກອບປະຊາກອນແມ່ນໝາຍເຖິງໂຄງປະກອບດ້ານເພດ, ອາຍຸຂອງປະຊາກອນ ເຊິ່ງ ປະກອບດ້ວຍເພດຍິງ, ເພດຊາຍເທົ່າໃດ, ມີຂະໜາດສັດສ່ວນເທົ່າໃດ, ແຕ່ລະກຸ່ມອາຍຸ ຈຳນວນເທົ່າໃດ ແລະ ນອກຈາກນັ້ນແລ້ວ ຍັງມີໂຄງປະກອບຂອງຊົນເຜົ່າ, ໂຄງປະກອບດ້ານພາສາ, ສາສະໜາ ແລະ ຄວາມເຊື່ອ ແລະ ໂຄງປະກອບດ້ານອາຊີບດັ່ງລາຍລະອຽດລຸ່ມນີ້:

4.2.1 ໂຄງປະກອບດ້ານເພດ

ໂຄງປະກອບສ້າງທາງເພດຂອງປະຊາກອນລາວ ແມ່ນອັດຕາສ່ວນເພດຍິງຫລາຍກວ່າ ເພດຊາຍປະມານ 2%. ນັບແຕ່ ປີ ຄສ 1985 ເຖິງປັດຈຸບັນຄວາມແຕກຕ່າງລະຫວ່າງສອງເພດ ນີ້ເກືອບວ່າບໍ່ມີການປ່ຽນແປງຄື ຈຳນວນເພດຊາຍແມ່ນ 49 % ແລະ ຈຳນວນເພດຍິງ 51%, ໂຄງ ປະກອບສ້າງທາງເພດນີ້ ຄ້າຍຄືກັບໂຄງປະກອບສ້າງທາງເພດຂອງບັນດາປະເທດໃນຂົງເຂດ ອາຊີຕາເວັນອອກສ່ຽງໃຕ້ທົ່ວໄປ. ໂຄງປະກອບສ້າງທາງເພດນີ້ຍັງມີຄວາມແຕກຕ່າງກັນລະຫວ່າງ ເມືອງ ແລະ ຊົນນະບົດ. ພິເສດ ຢູ່ນະຄອນຫລວງວຽງຈັນ ຈຳນວນເພດຊາຍພັດຫລາຍກວ່າເພດຍິງ ຊຶ່ງກົງກັນຂ້າມກັບທ່າອ່ຽງລວມຂອງປະເທດ ເຊັ່ນ: ໃນປີ ຄສ 1985 ມີຜູ້ຊາຍ 105 ຄົນຕໍ່ຜູ້ຍິງ 100 ຄົນ. ປາກົດການນີ້ຍັງມີຢູ່ແຂວງວຽງຈັນ ຄື% ມີຊາຍ 101 ຄົນ ຕໍ່ຜູ້ຍິງ 100 ຄົນ. ສາເຫດແມ່ນຍ້ອນການ ເຄື່ອນຍ້າຍຂອງປະຊາກອນຈາກຊົນນະບົດເຂົ້າມາອາໄສຢູ່ຕົວເມືອງ ຊຶ່ງໃນນັ້ນຈຳນວນຫລາຍ ແມ່ນ ເພດຊາຍທີ່ມາຈາກແຂວງຕ່າງໆ ເພື່ອຊອກຫາວຽກເຮັດງານທຳ ແລະ ການສຶກສາຮ່ຳຮຽນ.

4.2.2 ໂຄງປະກອບດ້ານອາຍຸ


ໂດຍທົ່ວໄປແລ້ວໂຄງປະກອບສ້າງດ້ານອາຍຸຂອງປະຊາກອນລາວ ແມ່ນປະຊາກອນໜຸ່ມ ຊຶ່ງກວມເອົາອັດຕາສ່ວນຫລາຍ, ຕໍ່ກັບບັນຫາດັ່ງກ່າວນີ້ອາດສາມາດສົມທຽບກັບບາງຕົວເລກຂອງ ປີ ຄສ 1970, ປີ ຄສ 1985 ແລະ ປີ ຄສ 1995 ພວກເຮົາສາມາດເຫັນໄດ້ວ່າ ປີ ຄສ 1970 ຈຳນວນ ປະຊາກອນໃນກຸ່ມອາຍຸ 0-4 ປີ ໄດ້ກວມເອົາ47,6 %, ໃນກຸ່ມອາຍຸແຮງງານ 15-59 ປີກວມເອົາ 43,8 % ແລະ ໃນກຸ່ມອາຍຸສູງກວ່າ 60 ປີ ມີພຽງແຕ່ 8,6 %. ພໍກ້າວເຂົ້າຫາ ປີ ຄສ 1985 ອັດຕາສ່ວນດັ່ງກ່າວ ໄດ້ມີການປ່ຽນແປງ ເຊັ່ນ: ອັດຕາສ່ວນໃນກຸ່ມອາຍຸ 0-4 ປີ ຫລຸດລົງຍັງ 44,3 %, ໃນກຸ່ມແຮງງານ 15-59 ປີ ພັດເພີ່ມຂຶ້ນເປັນ 49,4 % ແລະ ກຸ່ມອາຍຸສູງກວ່າ 60 ປີ ຫລຸດລົງຍັງ 6,3 %. ເຫດຜົນຕົ້ນຕໍຂອງ ບັນຫາດັ່ງກ່າວນີ້ ແມ່ນຍ້ອນຜົນສະທ້ອນຍ້ອນຫລັງຈາກສົງຄາມ, ເສດຖະກິດ, ການເມືອງ ແລະ ອື່ນໆ.

ຕາມຂໍ້ມູນສະຖິຕິຈາກການສຳຫລວດພົນລະເມືອງ ປີ ຄສ 2005 ນັ້ນໄດ້ໃຫ້ຮູ້ຕື່ມວ່າ ຈຳນວນ ປະຊາກອນໃນໄວອາຍຸ 0-4 ປີ ມີຈຳນວນຫລຸດລົງມີຢູ່ 39,4%, ໄວອາຍຸແຕ່ 15-59 ປີ ໄດ້ເພີ່ມຂຶ້ນ ເປັນ 54,8% ແລະ ໄວອາຍຸແຕ່ 60 ປີຂຶ້ນໄປຫລຸດລົງມີປະມານ 5,8%. ການທີ່ປະເທດລາວມີຄົນ ສູງອາຍຸກວມອັດຕາສ່ວນໜ້ອຍຄືແນວນັ້ນ ສະແດງໃຫ້ເຫັນວ່າປະຊາກອນທີ່ມີອາຍຸຍືນມີຈຳນວນ ໜ້ອຍ ໝາຍຄວາມວ່າຄົນລາວມີອາຍຸບໍ່ຍືນປານໃດນັ້ນເອງ. ໂດຍອີງຕາມໂຄງສ້າງດ້ານອາຍຸທີ່ກ່າວມາ ນັ້ນ ທາດອາຍຸຂອງພົນລະເມືອງລາວຈຶ່ງມີລັກສະນະສ້ວຍເປັນປາຍແຫລມຂຶ້ນ ຊຶ່ງລັກສະນະດັ່ງກ່າວ ບົ່ງບອກໃຫ້ຮູ້ເຖິງໂຄງສ້າງດ້ານອາຍຸຂອງພົນລະເມືອງ ປະເທດທີ່ມີປະຊາກອນໜຸ່ມກໍຄືຢູ່ໃນບັນດາ ປະເທດທີ່ກຳລັງພັດທະນາທັງຫລາຍ.

ຕາລາງທີ 14: ສະແດງການແຈກຢາຍຂອງພົນລະເມືອງ ແບ່ງຕາມເພດ ແລະ ໝວດອາຍຸ ປີ 2012

ໝວດອາຍຸ	ຍິງ		ຊາຍ		ລວມ	
Age group	Female	%	Male	%	Total	%
0-4	460,973	14,1	479,591	14,7	940,564	14,4
5-9	376,636	11,6	383,734	11,8	760,370	11,7
10-14	356,728	10,9	362,988	11,2	719,716	11,0
15-19	368,021	11,3	382,697	11,8	750,718	11,5
20-24	330,914	10,2	337,441	10,4	668,355	10,3
25-29	264,933	8,1	258,668	7,9	523,601	8,0
30-34	215,657	6,6	207,994	6,4	423,651	6,5
35-39	180,242	5,5	172,511	5,3	352,753	5,4
40-44	163,635	5,0	159,670	4,9	323,305	5,0
45-49	140,122	4,3	137,784	4,2	277,906	4,3
50-54	113,931	3,5	112,217	3,4	226,148	3,5
55-59	92,685	2,8	87,852	2,7	180,537	2,8
60-64	66,087	2,0	60,388	1,9	126,475	1,9
65-69	48,464	1,5	42,640	1,3	91,104	1,4
70-74	34,748	1,1	30,075	0,9	64,823	1,0
75+	46,204	1,4	38,202	1,2	84,406	1,3
ລວມ/Total	3,259,980	100	3,254,452	100	6,514,432	100

ແຜນວາດທີ 3 : ຮູບທາດອາຍຸຂອງພົນລະເມືອງລາວປີ 2012



ແຫລ່ງຂໍ້ມູນ: ຕົວເລກຄາດຄະເນຈາກຜົນ ຂອງການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ ຄສ 2005, ສູນສະຖິຕິແຫ່ງຊາດ,ຜທ.

ໃນປັດຈຸບັນລາວກຳລັງກະກຽມເຂົ້າສູ່ປະຊາຄົມເສດຖະກິດອາຊຽນ, ແຕ່ພື້ນຖານເສດຖະກິດຍັງບໍ່ທັນຂະຫຍາຍຕົວເທົ່າທີ່ຄວນ ຊຶ່ງຖືວ່າເປັນສິ່ງທີ່ທ້າທາຍພໍສົມຄວນໃນການພັດທະນາປະເທດຊາດກໍຄືການພັດທະນາເສດຖະກິດ, ສັງຄົມ ແລະ ການພັດທະນາປະຊາກອນ. ລັດຖະບານຄວນມີທິດນຳທີ່ເໝາະສົມ ເພື່ອຄວບຄຸມຈຳນວນປະຊາກອນໃຫ້ແທດເໝາະກັບການຂະຫຍາຍຕົວຂອງເສດຖະກິດໃນປັດຈຸບັນ ແລະ ອະນາຄົດ, ໂດຍສະເພາະ ແມ່ນການສ້າງເງື່ອນໄຂໃຫ້ແກ່ກຸ່ມຄົນທີ່ຢູ່ໃນໄວອອກແຮງງານ ໃຫ້ມີວຽກເຮັດງານທຳ, ຖ້າບໍ່ດັ່ງນັ້ນຈະພາໃຫ້ເກີດມີບັນຫາຕ່າງໆ ດ້ານປະຊາກອນຕາມມາ ຕົວຢ່າງເຊັ່ນ: ອັດຕາການອີງອາໄສ (ການເອື່ອຍອີງ) ຂອງໄວເດັກ ແລະ ຜູ້ເຖົ້າຈະສູງ ເຊັ່ນ: ໃນປີ 1995 ອັດຕາການອີງອາໄສ ແມ່ນ 99/100 ໝາຍຄວາມວ່າເດັກນ້ອຍ 99 ຄົນໄດ້ອາໄສກຳລັງແຮງງານ 100 ຄົນ ຫລື ຜູ້ອອກແຮງງານ 100 ຄົນ ຕ້ອງໄດ້ຮັບພາລະລ້ຽງດູເດັກ (0-4 ປີ) ຈຳນວນ 99 ຄົນ. ຖ້າວ່າຄິດໄລ່ຜູ້ເຖົ້າໃສ່ນຳ (0-4 ປີ + 60+ ປີ) ອັດຕາດັ່ງກ່າວຈະສູງເຖິງ 102 /100 ໝາຍຄວາມວ່າຜູ້ອອກແຮງງານ 100 ຄົນ ຈະຕ້ອງຮັບພາລະລ້ຽງດູເດັກນ້ອຍ ແລະ ຜູ້ເຖົ້າ 102 ຄົນ.

ອັດຕາການອີງອາໄສ ຈະມີຄວາມແຕກຕ່າງກັນໃນແຕ່ລະແຂວງ, ໝາຍຄວາມວ່າແຂວງໃດມີອັດຕາການອີງອາໄສສູງ ກໍຈະເຮັດໃຫ້ລະດັບຄ່າຄອງຊີບສູງກວ່າແຂວງທີ່ມີອັດຕາການອີງອາໄສຕ່ຳ ຊຶ່ງນີ້ແມ່ນບັນຫາທີ່ຄວນເອົາໃຈໃສ່ແກ້ໄຂຢູ່ໃນຂອດນະໂຍບາຍປະຊາກອນແຕ່ລະແຂວງ.

4.2.3 ໂຄງປະກອບຊົນເຜົ່າ

ພົນລະເມືອງລາວໄດ້ມີປະຫວັດສາດອັນຍາວນານ ແລະ ໄດ້ຕັ້ງຫລັກແຫລ່ງຢູ່ຜືນແຜ່ນດິນແຫ່ງນີ້ ທີ່ເອີ້ນວ່າ "ອານາຈັກລາວລ້ານຊ້າງ" ໃນເມື່ອກ່ອນ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປັດຈຸບັນ ໄດ້ສືບເຊື້ອສາຍມາຈາກບັນພະບຸລຸດຫລາຍກົກເຫລົ່າ ເຊິ່ງດຳລົງຊີວິດຮ່ວມກັນມາເທິງແຜ່ນດິນຕອນນີ້ເປັນຫລາຍພັນປີແລ້ວ. ດັ່ງນັ້ນ ມາເຖິງປັດຈຸບັນ ພົນລະເມືອງລາວຈຶ່ງປະກອບດ້ວຍຫລາຍເຜົ່າ ຊຶ່ງມີເອກະລັກໃນການດຳລົງຊີວິດແຕກຕ່າງກັນໄປ ໂດຍຕາມລັກສະນະຄ້າຍຄືກັນທາງດ້ານພາສາເວົ້າ ແລ້ວກໍສາມາດແບ່ງອອກເປັນໝວດຕ່າງໆໄດ້ດັ່ງນີ້:



ຮູບທີ 25: ບາງຊົນເຜົ່າໃນພາກເໜືອລາວ
ແຫລ່ງຂໍ້ມູນ: ພາກວິຊາປະຫວັດສາດ ຄະນະວິທະຍາສາດສັງຄົມ ມຊ

ຕາມການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໄສໃນປີ 2005 ນັ້ນພົບວ່າພົນລະເມືອງລາວ ປະກອບດ້ວຍຊົນເຜົ່າຕ່າງໆເຖິງ 49 ຊົນເຜົ່າ. ແຕ່ຊົນເຜົ່ານັ້ນຕ່າງກໍ່ມີເອກະລັກໃນການດຳລົງຊີວິດທີ່ແຕກຕ່າງກັນໄປ, ຊຶ່ງຖ້າອີງຕາມລັກສະນະທີ່ຄ້າຍຄືກັນທາງດ້ານພາສາປາກເວົ້າແລ້ວ ກໍ່ສາມາດແບ່ງອອກເປັນໝວດຕ່າງໆໄດ້ດັ່ງນີ້:

ກ. ໝວດທີ່ໃຊ້ພາສາໃນຕະກຸນພາສາລາວ-ໄຕ ມີ 8 ຊົນເຜົ່າຄື: ຊົນເຜົ່າລາວ, ໄຕ, ຜູ້ໄທ, ລື້, ຍວນ, ຢັ້ງ, ແຊກ ແລະ ຊົນເຜົ່າໄທເໜືອ. ບັນດາຊົນເຜົ່າເຫລົ່ານີ້ສ່ວນຫລາຍດຳລົງຊີວິດ ແລະ ປະກອບອາຊີບທຳການປູກຝັງຄົງທີ່ຢູ່ຕາມເຂດທົ່ງພຽງລ້ອງແມ່ນ້ຳຂອງ ແລະ ສາຂາຂອງມັນ, ມີການພົວພັນກັນງ່າຍ ແລະ ຄ້າຂາຍໄປມາຢ່າງໃກ້ຊິດກັນ. ດ້ວຍເຫດນີ້ການຕັ້ງຖິ່ນຖານຈຶ່ງບໍ່ຄ່ອຍມີການປ່ຽນແປງ, ໝວດນີ້ ກວມເອົາອັດຕາສ່ວນເຖິງ 65% ຂອງຈຳນວນພົນລະເມືອງລາວທັງໝົດ.

ຂ. ໝວດທີ່ໃຊ້ພາສາໃນຕະກຸນພາສາມອນ-ຂະແມ ມີ 32 ຊົນເຜົ່າຄື: ຊົນເຜົ່າກຶມມຸ, ໄປຣ, ຊິງມູນ, ຜ້ອງ, ແທ່ນ, ເອີດູ, ບິດ, ລະເມດ, ສາມຕາວ, ກະຕາງ, ມະກອງ, ຕຣີ, ຢຣຸ, ຕຽງ, ຕະໂອ້ຍ, ແຢະ,ເບຣ໊າ, ກະຕູ, ຣາຣັກ, ໂອຍ, ກຽງ, ເຈ້ງ, ສະດາງ, ຊ່ວຍ, ຍະເຫີນ, ລະວີ, ປະໂກະ, ຂະແມ, ຕູ້ມ, ງວນ, ມ້ອຍ, ກຣີ. ໜວດພາສາມອນ-ຂະແມນີ້ ແມ່ນເປັນຜູ້ຕັ້ງຖິ່ນຖານທຳອິດໃນດິນແດນແຫ່ງນີ້. ປັດຈຸບັນນີ້ ການເຊື່ອຖືຕ່າງໆ ໄດ້ກາຍເປັນວັດທະນະທຳສຳຄັນຕ່າງໆ ຂອງລາວ. ປະຊາກອນກວມເອົາອັດຕາສ່ວນເຖິງ 22,6% ຂອງຈຳນວນພົນລະເມືອງລາວທັງໝົດ. ຕາມປົກກະຕິ ແລ້ວເຂົາເຈົ້າທຳມາຫາກິນດ້ວຍການຖາງປ່າເຮັດໄຮ່ຕາມເນີນສູງ, ການປູກຝັງ ແມ່ນພຽງແຕ່ລະດູການດຽວກໍໝົດໄປເທົ່ານັ້ນ. ສຳລັບຢູ່ທາງພາກເໜືອນັ້ນແມ່ນການຜະລິດກະສິກຳເປັນຫົວໜ່ວຍກະແຈກກະຈາຍ, ສ່ວນທາງພາກໃຕ້ເປັນເຂດຮາບພຽງ ຫລື ເຂດພູພຽງຕ່າງໆທາງພາກໃຕ້ ແລະ ຢູ່ລຽບສາຍພູຫລວງທີ່ອຸດົມສົມບູນເໝາະແກ່ການປູກຝັງ ສາມາດທຳການຜະລິດແບບໝູນວຽນ.

ຄ. ໝວດທີ່ໃຊ້ພາສາໃນຕະກຸນພາສາມົ້ງ-ອີ້ວມຽນ: ປະກອບດ້ວຍ 2 ຊົນເຜົ່າຄື: ມົ້ງ (ມົ້ງຂາວ, ມົ້ງດຳ, ມົ້ງແດງ, ມົ້ງຂຽວ...) ແລະ ອີ້ວມຽນ (ຢ້າວ, ລາວຫ້ອຍ, ລາມແຕນ...) ໂດຍປົກກະຕິແລ້ວມັກຕັ້ງຖິ່ນຖານຢູ່ເຂດພູສູງທາງພາກເໜືອຂອງລາວ, ປະເພນີທຳການຜະລິດຂອງເຂົາເຈົ້າ ແມ່ນແບບເລື່ອນລອຍ ພາຍຫລັງເກັບກູ້ຜົນຜະລິດໝົດແລ້ວ ກໍເຄື່ອນຍ້າຍໄປສູ່ສະຖານທີ່ໃໝ່ເລື້ອຍໆ. ໝວດດັ່ງກ່າວນີ້ ກວມເອົາອັດຕາສ່ວນເຖິງ 8,5% ຂອງຈຳນວນພົນລະເມືອງລາວທັງໝົດ.

ງ. ໝວດທີ່ໃຊ້ພາສາໃນຕະກຸນພາສາຈີນ-ທິເບດ ມີ 7 ຊົນເຜົ່າຄື: ຊົນເຜົ່າອາຄາ, ຜູ້ນ້ອຍ, ລາຫູ, ສີລາ, ຣາຍ, ໂລໂລ ແລະ ຊົນເຜົ່າຫໍ້ ຊຶ່ງອາໄສຢູ່ໃນແຂວງຕ່າງໆລຽບຕາມຊາຍແດນ ລາວ-ຈີນ ແລະ ລາວມຽນມາ (ຜົ້ງສາລີ, ອຸດົມໄຊ, ຫລວງນ້ຳທາ, ບໍ່ແກ້ວ...) ພວກເຂົາເຈົ້າກໍມີປະເພນີການທຳມາຫາກິນ ແບບເລື່ອນລອຍ ພາຍຫລັງການເກັບກ່ຽວຜົນຜະລິດແລ້ວ ກໍຍ້າຍໄປຫາບ່ອນໃໝ່, ປະຊາກອນໝວດພາສານີ້ກວມອັດຕາສ່ວນພຽງແຕ່ 2,8% ຂອງຈຳນວນພົນລະເມືອງລາວທັງໝົດ.

ນອກຈາກຊົນເຜົ່າຕ່າງໆ ເຫລົ່ານີ້ແລ້ວ ຢູ່ ສປປ ລາວ ຍັງມີຊາວຕ່າງດ້າວອີກເຊັ່ນ: ຊາວຫວຽດນາມ, ຈີນ, ໄທ, ອິນເດຍ... ຊຶ່ງຈຳນວນໜຶ່ງກໍໄດ້ປ່ຽນສັນຊາດເປັນຄົນລາວແລ້ວໂດຍກວມ ເອົາອັດຕາສ່ວນ 0,2% ຂອງຈຳນວນພົນລະເມືອງລາວທັງໝົດ ແລະ ທົ່ວໄປມັກອາໄສຢູ່ໃນເມືອງໃຫຍ່ຕ່າງໆ. ສ່ວນພົນລະເມືອງອີກ 1% ໄດ້ແກ່ພວກທີ່ບໍ່ບອກໄດ້ວ່າຕົນສັງກັດຊົນເຜົ່າໃດ.

4.2.4 ໂຄງປະກອບດ້ານພາສາ, ສາສະໜາ ແລະ ຄວາມເຊື່ອ

4.2.4.1 ພາສາ

ລັດຖະທຳມະນູນແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວນັ້ນ, ພາສາ ແລະ ຕົວອັກສອນລາວ ແມ່ນພາສາ ແລະ ໄດ້ຖືກນຳໃຊ້ເປັນພາສາທາງການຂອງປະເທດລາວເຮົາ ແລະ ຕົວອັກສອນທີ່ໄດ້ນຳໃຊ້ໃນປະຈຸບັນນີ້ ແມ່ນໄດ້ມີການສືບທອດ ແລະ ໄດ້ມີການດັດແປງຈາກ ຕົວອັກຄະລະຂອງອິນເດຍ ແລະ ຂອມ, ເປັນຕົວໜັງສືທີ່ຂຽນງ່າຍ ແລະ ອ່ານງ່າຍ ເພາະໃຊ້ສະກົດ ຕາມສຽງ, ບໍ່ມີຕົວຫ້ອຍ ແລະ ຕົວການັນ.

ໂດຍປົກກະຕິແລ້ວພົນລະເມືອງລາວມີຫລາຍຊົນເຜົ່າ, ເພາະສະນັ້ນຈຶ່ງມີຫລາຍພາສາ ປາກເວົ້າທີ່ແຕກຕ່າງກັນຢູ່ໃນສັງຄົມລາວເຮົາ ແລະ ໂດຍສະເພາະໃນແຕ່ລະທ້ອງຖິ່ນຈະມີພາສາ ປາກເວົ້າທີ່ແຕກຕ່າງກັນທາງດ້ານການຜັນສຽງ, ເນັ້ນສຽງ ແລະ ຈັງຫວະຂອງຄວາມຊ້າ-ໄວ, ໜັກ-ເບົາ ລວມທັງຄວາມໝາຍທີ່ແຕກຕ່າງກັນໃນແຕ່ລະຂົງເຂດດັ່ງຕາຕະລາງລຸ່ມນີ້:

ຕາລາງທີ 15: ສະແດງການປຽບທຽບຄວາມແຕກຕ່າງຂອງຊື່ເອີ້ນໃນແຕ່ລະພາກ

ພາກເໜືອ	ນະຄອນຫລວງວຽງຈັນ (ພາກກາງ)	ພາກໃຕ້
ເຂົ້າປຸກເສັ້ນ	ເຂົ້າປຸກເສັ້ນ	ບັນກັນ
ໝາກເອືອດ	ໝາກເຜັດ	ໝາກພິກ
ໝາກກ້ວຍນ້ຳອ້ຳ	ໝາກກ້ວຍນ້ຳ	ໝາກກ້ວຍທະນີອອງ
ຜັກຊູ	ຜັກກະລ່ຳປີ	ຜັກຊູ
ໝາກຊູ	ໝາກຊູ	ໝາກສະເດ

4.2.4.2 ສາສະໜາ ແລະ ຄວາມເຊື່ອ


ບັນດາຊົນເຜົ່າຕ່າງໆໃນລາວເຮົາໄດ້ມີຄວາມເຊື່ອຖືທີ່ແຕກຕ່າງກັນໄປ. ໂດຍປົກກະຕິແລ້ວ ຊາວລາວສ່ວນໃຫຍ່ນັ້ນນັບຖືສາສະໜາພຸດນິກາຍເຖລະວາດ ຫລື ຫິນຍານ ຄືກັບສາສະໜາທົ່ວໄປ ຂອງຊາວໄທ, ຂະແມ, ມຽນມ້າ, ສຣີລັງກາ... ແຕ່ຊາວລາວຈຳນວນໜຶ່ງກໍນັບຖືສາສະໜາຄຣິດສະຕຽນ ແລະ ອີກສ່ວນໜຶ່ງ ຊຶ່ງມີຈຳນວນບໍ່ໜ້ອຍໄດ້ພາກັນນັບຖືຜີ ຫລື ເທພາອາຣັກ ແລະ ອື່ນໆ ຕາມຄວາມ ເຊື່ອຖືດັ້ງເດີມມາແຕ່ບັນພະບຸລຸດຂອງເຂົາເຈົ້າໃນສະໄໝບູຮານ.

ການນັບຖືພຸດທະສາສະໜານີ້ ໄດ້ເລີ່ມມີຂຶ້ນນັບແຕ່ສະໄໝກໍ່ຕັ້ງອານາຈັກລ້ານຊ້າງ ເອກະພາບໃນລັດຊະການຂອງເຈົ້າຟ້າງຸ່ມມະຫາລາດ (ສະຕະວັດທີ 14) ເປັນຕົ້ນມາ. ສປປ ລາວ ມີ ວັດໃນພະພຸດທະສາສະໜາໃນທົ່ວປະເທດປະມານ 3,000 ກວ່າວັດ ແລະ ມີພະສົງສາມະເນນຢູ່ ປະມານ 15,000 ອົງ. ໃນປັດຈຸບັນ, ເຮົາສາມາດເວົ້າໄດ້ວ່າສາສະໜາພຸດໄດ້ກາຍມາເປັນສູນລວມທາງ ດ້ານຈິດໃຈຂອງຊາວລາວທັງຫລາຍທັງປວງ ແລະ ກາຍເປັນພື້ນຖານສ່ວນໜຶ່ງຂອງວັດທະນາທຳລາວ. ຈະເຫັນໄດ້ວ່າສິລະປະ, ວັນນະກຳ, ງານບຸນ, ງານປະເພນີ, ພິທີກຳ, ປັດຊະຍາ, ກົດໝາຍ, ຫລັກການ, ຄຳສັ່ງສອນຕ່າງໆ ແລະ ແນວປະຕິບັດໃນການປົກຄອງ ຫລື ຄຸ້ມຄອງລັດ ຄຸ້ມຄອງສັງຄົມລາວນັ້ນ ກໍລ້ວນແຕ່ມີສ່ວນກ່ຽວພັນກັບຫລັກສິນທຳຄຳສອນຂອງສາສະໜາດັ່ງກ່າວນີ້ບໍ່ຫລາຍກໍໜ້ອຍ.


ຈາຣີດປະເພນີ:

ວັດທະນະທຳຈາຣີດ ຫລື ປະເພນີຕາມຈາຣີດຂອງລາວທີ່ມີການປະຕິບັດສືບຕໍ່ກັນມານັ້ນ ເອີ້ນວ່າ "ຮີດ" ຊຶ່ງໝາຍເຖິງ "ຮີດສິບສອງ" ແລະ ຮີດອື່ນໆ ອັນເປັນປະເພນີທີ່ຖືການປະຕິບັດກັນແຕ່ໃດໆມາ.


ຮີດສິບສອງຄືປະເພນີ "ບຸນ" ປະຈຳແຕ່ລະເດືອນໃນຮອບປີທີ່ຊາວລາວໄດ້ສືບຕໍ່ກັນມາ ຊຶ່ງກ່ອນໜ້າການເຂົ້າມາຂອງພະພຸດທະສາສະໜານັ້ນໄດ້ເນັ້ນພິທີກຳທາງຜີ ແລະ ພາມທລາຍກວ່າ. ແຕ່ເມື່ອພະພຸດທະສາສະໜາໄດ້ແຜ່ເຂົ້າມາຄວາມເຊື່ອ ແລະ ພິທີກຳມີການປ່ຽນແປງໄປ ເນື່ອງຈາກ ມີການນຳເອົາພິທີກຳທາງສາສະໜາເຂົ້າໄປປະສົມປະສານ ແລະ ມີພະສົງເຂົ້າຮ່ວມໃນພິທີ.



ຮູບທີ 25. ປະເພນີທາງສາສະໜາ (ການຕັກບາດ)



ຮູບທີ 26. ງານບຸນຊ້າງແຂວງໄຊຍະບູລີ



ຮູບທີ 27. ງານບຸນບັ້ງໄຟ

ຮູບທີ 27: ບຸນປະເພນີ ໃນ ສປປ ລາວ

ປະເພນີດັ່ງກ່າວ ເປັນປະເພນີທີ່ສົ່ງເສີມໃຫ້ຜູ້ຄົນໃນຊຸມຊົນໄດ້ເຂົ້າຮ່ວມ "ເອົາບຸນ" ນຳກັນ ກໍ່ຄືເຂົ້າຮ່ວມກິດຈະກຳສ້າງຄວາມດີຄວາມງາມນັ້ນເອງ. ຜົນທີ່ໄດ້ຮັບກໍ່ຄືທຸກຄົນຈະໄດ້ມີເວລາເຂົ້າ ໃກ້ຊິດກັບຫລັກທຳຄຳສອນທາງສາສະໜາຫລາຍຂຶ້ນ, ເຮັດໃຫ້ຜູ້ຄົນໃນຊຸມຊົນນັບທາງໃນພື້ນທີ່ ໃກ້ຄຽງກັນ ໄດ້ພົບປະສ້າງສັນ ແລະ ຮູ້ຈັກຄຸ້ນເຄີຍກັນເພື່ອຄວາມມ່ວນຊື່ນລື້ນເລີງ ແລະ ສາມັກຄີ ຮັກແພງກັນ ຊຶ່ງເປັນການສືບທອດສິ່ງທີ່ດີງາມມາຈົນເຖິງປັດຈຸບັນນີ້ ອັນສະແດງເຖິງຄວາມເປັນຊາດທີ່ ເກົ່າແກ່ ແລະ ຈະເລີນມາແຕ່ເທິງນານຂອງຊາດລາວ.

ຢ່າງໃດກໍດີ, ການປະຕິບັດຮີດສິບສອງຂອງຊາວລາວໃນສັງຄົມປັດຈຸບັນນີ້ ເຫັນວ່າບໍ່ ສາມາດເຮັດໄດ້ທຸກປະການຕາມທີ່ມີການກຳນົດໄວ້. ບຸນປະເພນີທີ່ມີການປະຕິບັດໃນທົ່ວປະເທດ ແລະ ສືບຕໍ່ ກັນມາປົກກະຕິໄດ້ແກ່:

- ເດືອນໜຶ່ງ (ເດືອນຈຽງ): ເຮັດບຸນລ້ຽງຜີມົດຜີໝໍ, ຜີຟ້າຜີແຖນ ແລະ ນິມົນພະສົງອົງຄະເຈົ້າ ເຂົ້າປະລິວາດສະກຳ ໝາຍເຖິງ ພະສົງອົງຄະເຈົ້າປະຕິບັດທຳ.
- ເດືອນສອງ (ເດືອນຍີ): ນິມົນພະສົງອົງຄະເຈົ້າມາສູດໄຊຍະມົງຄຸນ, ເອົາບຸນຄຸນເຂົ້າ.
- ເດືອນສາມ: ເຮັດບຸນເຂົ້າຈີ່ ແລະ ບຸນມາຄະບູຊາ (ມີງານບຸນວັດພູທີ່ແຂວງຈຳປາສັກ).
- ເດືອນສີ່: ເຮັດບຸນຟັງທຳມະເທດສະໜາ ຫລື ບຸນພະເໜວດສັນຕະຊາດົກ (ບຸນມະຫາ ຊາດ).
- ເດືອນຫ້າ: ບຸນກຸດສົງການ (ບຸນປີໃໝ່ລາວ). ໃນເດືອນຫ້າສົງຂານປີໃໝ່ໃຫ້ນິມົນພະສົງ ອົງຄະເຈົ້າຕັ້ງສູດໄຊຍະມົງຄຸນ, ຕອນເຊົ້າມື້ໃໝ່ໄດ້ພາກັນເຮັດບຸນໃຫ້ທານເຂົ້າປາອາຫານແກ່ ສົງຄະເຈົ້າຜູ້ມີສິນ, ສຳມາຄາລະວະພະພຸດທະເຈົ້າ, ຄູບາອາຈານ ແລະ ພໍ່ແມ່ນເຖົ້າແກ່.
- ເດືອນຫົກ: ເຮັດບຸນພຸດທະພິເສກ, ຫົດສົງພະພຸດທະຮູບແລ້ວເຊີນພະພຸດທະຮູບຂຶ້ນບັນລັງ ຕາມເດີມ ຫລື ເຮັດບຸນບວດຫົວ, ເຮັດບຸນວິສາຂະບູຊາ ແລະ ເຮັດບຸນບັ້ງໄຟ.
- ເດືອນເຈັດ: ເຮັດບຸນລ້ຽງມະເຫສັກຫລັກເມືອງບົນອາລັກຂາເທວະດາທັງສີ່ ແລະ ເທວະດາ ທັງແປດທິດ, ບຸນເຮືອນ ຫລື ບຸນບ້ານ (ບຸນຊຳລະລ້າງສິ່ງສົກກະປົກ ຫລື ປັດເປົ່າເຄາະເຂັ່ນ).
- ເດືອນແປດ: ບຸນເຂົ້າພັນສາ, ໃຫ້ນິມົນພະສົງອົງຄະເຈົ້າເຂົ້າພັນສາປ່າວເຕືອນຍາດພີ່ນ້ອງ ເອົາເຜົ້າມາສີທຽນເຫລົ້ມໃຫຍ່ມາຖະຫວາຍແກ່ພະສົງອົງຄະເຈົ້າ ແລະ ຖະຫວາຍເຂົ້າບໍ່ໂພສະນາ ອາຫານ, ຟັງທຳມະເທດສະໜາຕາມສັດທາ.

- ເດືອນເກົ້າ: ໃນເດືອນເກົ້າສົນດັບບຸນເຂົ້າຫໍ່ເຂົ້າປະດັບດິນ ນິມົນພະສົງອົງຄະເຈົ້າ, ສູດ ໄຊຍະມົງຄຸນ. ຮຸ່ງເຊົ້າເອົາເຂົ້າປະດັບດິນໄປຍາຍໄວ້ຕາມດິນຕາມຫຍ້າອຸທິດຝາກໄປໃຫ້ຍາດພີ່ນ້ອງ ແລະ ເຜດຜີທັງຫລາຍ ແລະ ຖະຫວາຍທານແກ່ສັງຄະເຈົ້າ, (ມີງານຊ່ວງເຮືອທີ່ແຂວງຫລວງພະບາງ).

- ເດືອນສິບ: ໃນເດືອນສິບສົນເພັ້ງເຮັດບຸນເຂົ້າສະຫລາກ ຝາກໄປໃຫ້ຍາດພີ່ນ້ອງ ແລະ ເທວະດາອາລັກຂາທັງຫລາຍ.

- ເດືອນສິບເອັດ: ໃນເດືອນສິບເອັດສົນເພັ້ງນິມົນພະສົງອົງຄະເຈົ້າອອກພັນສາ ແລະ ທຳການ ບາສີພະພິຊຸສາມະເນນ, ຖະຫວາຍເຂົ້າໂພສະນາເຂົ້າປາອາຫານ ແລະ ຖະຫວາຍຜ້າຈຳນຳ ວັດສາ ແກ່ພະສົງ ແລະ ນິມົນທ່ານໃຫ້ຢູ່ຕໍ່ໄປເພື່ອຈຳວັດສາປີໜ້າ, (ມີງານຊ່ວງເຮືອທີ່ນະຄອນຫລວງ ວຽງຈັນ ແລະ ໃນຫລາຍແຂວງ)

- ເດືອນສິບສອງ: ໃນເດືອນສິບສອງເພັ້ງເຮັດບຸນກັນຖິນ, ຖະຫວາຍອັດຖະບໍລິຂານ ຕັ້ງ ກອງບຸນຂຶ້ນເພື່ອຖະຫວາຍແກ່ພະສົງ ເອີ້ນວ່າ: ກອງອັດຖະບໍລິຂານ ແກ່ພະສົງອົງຄະເຈົ້າ ແລະ ຖືເອົາ ບຸນມະນັດສະການພະທາດຫລວງທີ່ນະຄອນຫລວງວຽງຈັນ ເປັນມື່ງຂວັນຂອງລາວມາແຕ່ດຶກດຳບັນ.

ສ່ວນຮີດຄອງອື່ນໆທີ່ຊາວລາວໄດ້ຖືກປະຕິບັດໄປຄຽງຄູ່ກັບຮີດສິບສອງກໍ່ຄື: ບຸນກອງບວດ ກອງຫົດ, ງານແຕ່ງດອງ, ງານບາສີສູ່ຂວັນ, ງານບຸນແຈກເຂົ້າ, ປະເພນີເຕົ້າຂ່ວງລ້ຽງຜີ, ປະເພນີລ້ຽງ ຜີຕາແຮກ, ປະເພນີແຮກນາ, ປະເພນີລ້ຽງຜີປູ່ຕາ ແລະ ອື່ນໆອີກ. ສຳລັບຊົນເຜົ່າອື່ນໆ ກໍມີບຸນປະເພນີ ຂອງຕົນເຊັ່ນກັນເຊັ່ນ: ບຸນກິນຈຽງຂອງຊົນເຜົ່າມົ້ງ, ບຸນກະເລີຂອງຊົນເຜົ່າກຶມມຸ, ບຸນເຕດ ຂອງຊົນເຜົ່າ ໄຕດຳ... ດັ່ງນີ້ເປັນຕົ້ນ.

4.2.4.3 ໂຄງປະກອບດ້ານອາຊີບ

ພົນລະເມືອງລາວໄດ້ມີການປະກອບອາຊີບຫລາຍໆຢ່າງທີ່ແຕກຕ່າງກັນໄປແລ້ວແຕ່ຖິ່ນ ຖານພູມລຳເນົາ ແລະ ກຳລັງແຮງງານ ແມ່ນນັບເອົາກຸ່ມຄົນທີ່ມີອາຍຸແຕ່ 10 ປີຂຶ້ນໄປ ຊຶ່ງປະກອບ ດ້ວຍຜູ້ເຮັດວຽກເສດຖະກິດ ແລະ ຜູ້ບໍ່ເຮັດວຽກເສດຖະກິດ, ໃນນັ້ນພົນລະເມືອງລາວຜູ້ທີ່ເຮັດວຽກ ເສດຖະກິດໄດ້ແບ່ງອອກເປັນ 2 ກຸ່ມຄື: ຜູ້ມີວຽກເຮັດງານທຳ ແລະ ຜູ້ວ່າງງານ. ສ່ວນຫລາຍປະຊາກອນ ລາວຜູ້ມີວຽກເຮັດງານທຳສ່ວນໃຫຍ່ ແມ່ນຜູ້ທີ່ເຮັດວຽກໃຫ້ຕົນເອງຊຶ່ງຕົ້ນຕໍແມ່ນວຽກກະສິກຳ ແລະ ວຽກຄອບຄົວໂດຍບໍ່ໄດ້ຮັບຄ່າຈ້າງ. ຢູ່ ສປປ ລາວ ໃນຈຳນວນຜູ້ອອກແຮງງານທັງໝົດນັ້ນຜູ້ຜະລິດ ໂດຍກົງໄດ້ກວມເອົາອັດຕາສ່ວນຫລາຍກວ່າໝູ່ຊຶ່ງໃນນັ້ນເດັ່ນກວ່າໝູ່ແມ່ນຊາວກະສິກອນ.ນັ້ນກໍເນື່ອງ ມາຈາກ ວ່າວຽກກະສິກຳແມ່ນຂະແໜງການຕົ້ນຕໍຂອງເສດຖະກິດໃນທ້ອງປະເທດ. ຍົກເວັ້ນແຕ່ ນະຄອນຫລວງ ວຽງຈັນຊຶ່ງມີຜູ້ເຮັດວຽກທີ່ບໍ່ແມ່ນກະສິກຳຫລາຍກວ່າຢູ່ແຂວງອື່ນໆ.

ຕາມການສຳຫລວດປະຊາກອນເມື່ອປີ 2005, ຈຳນວນປະຊາກອນລາວມີທັງໝົດ 5,621,982 ຄົນ, ໃນນີ້ຈຳນວນປະຊາກອນທີ່ມີອາຍຸແຕ່ 15-60 ປີ ມີ 4,171,199 ຄົນ ຊຶ່ງເທົ່າກັບ 74,2% ແລະ ຈຳນວນປະຊາກອນທີ່ມີອາຍຸຕ່ຳກວ່າ 15 ປີ ແລະ ສູງກວ່າ 60 ປີ ມີ 1,450,123 ຄົນ ຊຶ່ງ ເທົ່າກັບ 25,8% ປະຊາກອນທີ່ເຄື່ອນໄຫວທາງເສດຖະກິດມີປະມານ 66,6% ໃນນີ້ຜູ້ທີ່ມີວຽກເຮັດ ງານທຳມີ 98,6% ແລະ ຜູ້ທີ່ຍັງບໍ່ທັນມີວຽກເຮັດມີປະມານ 1,4%. ສ່ວນຈຳນວນປະຊາກອນທີ່ບໍ່ ເຄື່ອນໄຫວເສດຖະກິດ ໂດຍກົງມີ 32,4% ໃນນີ້ປະກອບມີນັກສຶກສາ 70%. ນອກນັ້ນກໍມີປະຊາກອນ ທີ່ເຮັດວຽກຢູ່ກັບຄອບຄົວ ຊຶ່ງມີ 14%, ຜູ້ບຳນານ ແລະ ຄົນເຖົ້າມີ 17%... ທັງໝົດນັ້ນແມ່ນບັນຫາທີ່ ສຳຄັນຂອງປະເທດ ແລະ ລັດຖະບານຂອງລາວເຮົາຕ້ອງໄດ້ຊອກຫາວິທີການແກ້ໄຂໃຫ້ເໝາະສົມ ທີ່ສຸດໃນການວາງແຜນການການພັດທະນາເສດຖະກິດ-ສັງຄົມ ເພື່ອຮອງຮັບເອົາບັນຫາດັ່ງກ່າວນັ້ນ. ປະຊາກອນໃນໄວອອກແຮງງານ ຫລື ໃນໄວກຳລັງແຮງງານຢູ່ລາວໃນປັດຈຸບັນເພີ່ນໄດ້ກຳນົດເອົາຄົນ ຜູ້ມີອາຍຸ 15 ປີເຖິງ 60 ປີ ສຳລັບ ເພດຊາຍ ແລະ 15 ປີ ເຖິງ 55 ປີ ສຳລັບເພດຍິງ.

ແຜນວາດທີ 4: ການຈັດແບ່ງແຮງງານຂອງປະຊາກອນລາວປີ 2005



ສະນັ້ນ, ຈຶ່ງເວົ້າໄດ້ວ່າ ປະຊາກອນຜູ້ອອກແຮງງານ ແລະ ໂຄງປະກອບສ້າງດ້ານອາຍຸ ແມ່ນມີການພົວພັນກັນແບບກາຍະອິນຊີ. ມາເຖິງປັດຈຸບັນ ຈຳນວນແຮງງານລາວນັບມື້ເພີ່ມຂຶ້ນສະເລ່ຍແຕ່ລະປີປະມານ 40,000 ຄົນ, ໃນນັ້ນຈຳນວນແຮງງານຍິງມີຫລາຍກວ່າຊາຍ (51%-49%). ຜ່ານຕົວເລກດັ່ງກ່າວນີ້ສາມາດເວົ້າໄດ້ວ່າ ປະເທດລາວມີຈຳນວນແຮງງານພຽງພໍເພື່ອກໍ່ສ້າງ ແລະ ພັດທະນາປະເທດໃຫ້ຈະເລີນໄດ້, ແຕ່ທີ່ຍັງເປັນບັນຫາຢູ່ກໍຄືລະດັບການສຶກສາ (ຄຸນນະພາບ) ຂອງແຮງງານລາວຍັງຕ່ຳຫລາຍເມື່ອທຽບກັບສາກົນ.

4.3 ການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດໃນລາວ

ລັດຖະບານ ສປປ ລາວ ແມ່ນໄດ້ມີການສົ່ງເສີມເອົາໃຈໃສ່ການສຶກສາຮ່ຳຮຽນຍົກລະດັບຄວາມຮູ້ຄວາມສາມາດ, ມີວຽກເຮັດງານທຳ, ມີອາຊີບ ແລະ ມີລາຍໄດ້ສູງຂຶ້ນ, ພ້ອມກັນນັ້ນກໍເອົາໃຈໃສ່ຮັກສາສຸຂະພາບພະລານາໄມ, ມີຄຸນສົມບັດສິນທຳສິນທຳປະຕິວັດ ແລະ ມີຄວາມຮັກຊາດດູດດື່ມ, ເອົາ ໃຈໃສ່ຍົກອັດຕາດັດສະນີຄາດໝາຍຊັບພະຍາກອນໃຫ້ສູງຂຶ້ນ.

4.3.1 ການສຶກສາ

ການສຶກສາຢູ່ໃນປະເທດລາວເຮົາ ໄດ້ມີການເຕີບໃຫ່ຍຂະຫຍາຍຕົວຂຶ້ນ ໃນຊ່ວງຫລັງສົງຄາມເຢັນ, ເລື່ອງການສຶກສາຂອງລາວກໍ່ເປັນອີກຫົວເລື່ອງທີ່ກຳລັງຮັບຄວາມສົນໃຈ ເນື່ອງຈາກການສຶກສາເປັນຮາກຖານສຳຄັນຂອງພັດທະນາການຕ່າງໆທັງໃນສ່ວນບຸກຄົນ ແລະ ສັງຄົມໂດຍລວມ ການສຶກສາ ເປັນໜຶ່ງໃນເຄື່ອງຊີ້ວັດຂອງການພັດທະນາການທາງສັງຄົມ, ເປັນຂະບວນການ ໃນການກໍ່ສ້າງປະຊາຊົນໃຫ້ມີຄວາມຮູ້ ຄວາມຄິດ ທັດສະນະຄະຕິ ທີ່ສອດຄ່ອງກັບອຸດົມການຂອງລັດ ໂດຍສະເພາະ ໃນສັງຄົມລາວຊຶ່ງເປັນສັງຄົມທີ່ໄດ້ຜ່ານປະສົບການໃນການປ່ຽນແປງທາງສັງຄົມ ແລະ ການປ່ຽນແປງ ທາງປະຫວັດສາດທີ່ສຳຄັນ, ລວມທັງສະພາບການເມືອງ ເສດຖະກິດສັງຄົມ ແລະ ອຸດົມການຂອງລັດ ໃນແຕ່ລະຍຸກສະໄໝ ຍ້ອນມີບົດບາດໃນການກຳນົດນະໂຍບາຍແນວທາງໃນການຈັດການສຶກສາຂອງລັດໃຫ້ກັບປະຊາຊົນທີ່ແຕກຕ່າງກັນໄປ, ດັ່ງນັ້ນຈ ະເຫັນໄດ້ວ່າ ໃນສະໄໝບູຮານ

ຫລື ໃນຍຸກແບບຈາຣີດ ຊຶ່ງເປັນຍຸກທີ່ຍັງບໍ່ມີການສຶກສາໃນລະບົບໂຮງຮຽນ ການສຶກສາໃນລາວເຮົາ ແມ່ນໄດ້ເກີດຂຶ້ນ ແລະ ຂະຫຍາຍໂຕຂຶ້ນໃນແວດວົງຂອງຈຸດມຸ່ງໝາຍຫລັກຂອງການສຶກສາ ບໍ່ມີ ພຽງແຕ່ການໄດ້ຮູ້ໜັງສືເທົ່ານັ້ນ ແຕ່ເພື່ອສືບຕໍ່ສາສະໜາ ແລະ ເພື່ອເຕົ້າໂຮມປະຊະຊົນໃຫ້ຢູ່ຮ່ວມກັນ ດ້ວຍຄວາມສາມັກຄີ ແລະ ປະຕິບັດໃນຄ່ານິຍົມຂອງສັງຄົມໃນສະໄໝນັ້ນໄດ້ຢ່າງເໝາະສົມ.

ນັບແຕ່ມີການປ່ຽນແປງການປົກຄອງເປັນຕົ້ນມາ ການສຶກສາຢູ່ ສປປ ລາວ ໄດ້ຮັບການ ປັບປຸງໃຫ້ດີຂຶ້ນເລື້ອຍໆ ແລະ ມີການຂະຫຍາຍຕົວຢ່າງຈ່ອງໄວ. ໂຮງຮຽນໄດ້ຂະຫຍາຍໄປເຖິງທຸກເຂດ ນັບແຕ່ຂັ້ນສູນກາງລົງສູ່ທ້ອງຖິ່ນທີ່ຢູ່ເຂດຫ່າງໄກສອກຫລີກ ແລະ ຈຳນວນຄູ ແລະ ນັກຮຽນກໍໄດ້ ເພີ່ມຂຶ້ນຢ່າງຫລວງຫລາຍ. (ສຳລັບການສຶກສາແຫ່ງຊາດແບ່ງອອກເປັນ 2 ລະບົບຄື: ການສຶກສາ ໃນລະບົບ ແລະ ການສຶກສານອກລະບົບ. ໃນນັ້ນການສຶກສາໃນລະບົບ ຫລື ໃນລະບົບໂຮງຮຽນ ແບ່ງເປັນແຕ່ລະຂັ້ນດັ່ງນີ້:

1.) ການສຶກສາລະບົບສາມັນສຶກສາແບ່ງເປັນຂັ້ນຕ່າງໆຄື: ອະນຸບານສຶກສາ ໃຊ້ເວລາຮຽນ 3 ປີ, ປະຖົມສຶກສາ ໃຊ້ເວລາຮຽນ 5 ປີ, ມັດທະຍົມສຶກສາຕອນຕົ້ນ ໃຊ້ເວລາຮຽນ 4 ປີ ແລະ ມັດທະຍົມ ສຶກສາຕອນປາຍໃຊ້ເວລາຮຽນ 3 ປີ.) ການສຶກສາລະດັບປະຖົມສຶກສານັ້ນຖືກຈັດເປັນການສຶກສາພາກ ບັງຄັບສຳລັບທຸກຄົນໂດຍທີ່ເດັກນ້ອຍຈະເລີ່ມເຂົ້າຮຽນໄດ້ເມື່ອອາຍຸຄົບ 6 ປີ.

ສຳລັບຂົງເຂດການສຶກສາ, ໂຮງຮຽນຂັ້ນປະຖົມໄດ້ເພີ່ມຂຶ້ນຈາກ 80% ໃນປີ 2000 ມາເປັນ 85% ໃນປີ 2005, ຫລາຍກວ່າ 90% ໃນປີ 2009 ແລະ ອັດຕາຄວາມຮູ້ໜັງສື ໄດ້ເພີ່ມຂຶ້ນເຖິງ 74% ໃນປີ 2005 (ກະຊວງແຜນການ ແລະ ການລົງທຶນ, 2011). ຕາໜ່າງການສຶກສາໄດ້ຮັບການປັບປຸງ ໂດຍເນັ້ນໃສ່ໃນລະດັບພາກລັດ ແລະ ຊຸມຊົນ. ໃນທົດສະຫວັດທີ່ຜ່ານມາຈຳນວນໂຮງຮຽນປະຖົມ, ມັດທະຍົມຕອນຕົ້ນ ແລະ ຕອນປາຍ ແມ່ນໄດ້ເພີ່ມຂຶ້ນ. ພ້ອມດຽວກັນນີ້ໂຮງຮຽນວິຊາຊີບ, ມະຫາ ວິທະຍາໄລ ແລະ ສະຖາບັນການສຶກສາຊັ້ນສູງກໍໄດ້ຮັບການພັດທະນາດີຂຶ້ນ.

2) ການອາຊີວະສຶກສາ ໃຊ້ເວລາຮຽນແຕ່ 1 ຫາ 3 ປີ ຊຶ່ງແບ່ງເປັນລະດັບຕ່າງໆຄື: ປະກາສະນິ ຍະບັດວິຊາຊີບ ຊັ້ນຕົ້ນ, ລະດັບຊ່ຳເຕັກນິກ ຊັ້ນກາງ ແລະ ລະດັບວິຊາຊີບຊັ້ນສູງ.

3) ການສຶກສາລະດັບມະຫາວິທະຍາໄລ: ລວມມີ 3 ລະດັບຄື ລະດັບປະລິນຍາຕີ (4 ປີ), ລະດັບປະລິນຍາໂທ (2 ປີ) ແລະ ລະດັບປະລິນຍາເອກ (3 ປີ) ຊຶ່ງໃນທົ່ວປະເທດມີມະຫາວິທະຍາໄລ ຢູ່ 5 ແຫ່ງຄື: ມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລຈຳປາສັກ, ມະຫາວິທະຍາໄລສຸພານຸວົງ, ມະຫາວິທະຍາໄລສະຫວັນນະເຂດ ແລະ ມະຫາວິທະຍາໄລວິທະຍາສາດສຸຂະພາບ.

ເວົ້າສະເພາະການສຶກສາສາຍກໍ່ສ້າງຄູໄດ້ແບ່ງອອກເປັນ: ໂຮງຮຽນສ້າງຄູປະຖົມສຶກສາ ໃຊ້ ເວລາ ຮຽນ 3 ປີ ແລະ ຄະນະສຶກສາສາດ ໃຊ້ເວລາຮຽນ 4 ປີ. ສ່ວນການສຶກສານອກລະບົບໂຮງຮຽນ ມີຢູ່ 3 ປະເພດຄື: ປະຊາສຶກສາ ຫລື ເຝິກອົບຮົມຜູ້ໃຫຍ່ທີ່ບໍ່ຮູ້ອ່ານ ແລະ ບໍ່ຮູ້ຂຽນໜັງສື, ຍົກລະດັບ ທາງວິຊາຊີບໃຫ້ແກ່ຜູ້ໃຫຍ່ ແລະ ຍົກລະດັບດ້ານວິຊາການໃຫ້ແກ່ພະນັກງານ.

ນອກຈາກການສຶກສາພາກລັດແລ້ວໃນ ສປປ ລາວ ຍັງມີການສຶກສາພາກເອກະຊົນ ຊຶ່ງ ໄດ້ຮັບອານຸຍາດໃຫ້ຈັດການຮຽນການສອນ ແຕ່ລະດັບອະນຸບານສຶກສາເຖິງລະດັບວິຊາຊີບຊັ້ນສູງ. ສຳລັບຊົນເຜົ່າທີ່ຢູ່ຫ່າງໄກສອກຫລີກ ແລະ ດ້ວຍໂອກາດລັດກໍຈັດໃຫ້ມີໂຮງຮຽນວັດທະນະທຳ ຊົນເຜົ່າຂຶ້ນ ແລະ ສຳລັບພະສົງ ກໍຈັດໃຫ້ມີໂຮງຮຽນຂອງພະສົງເຊັ່ນກັນ.

4.3.2 ປະຊາກອນກັບການພັດທະນາເສດຖະກິດ

ລັດຖະບານໄດ້ໃຫ້ບູລິມາສິດເພື່ອອຳນວຍຄວາມສະດວກ ແລະ ຫລຸດຜ່ອນການເກັບພາສີອາກອນສຳລັບນັກລົງທຶນໃສ່ເຂດທຸກຍາກ, ທຸລະກັນດານ, ຊົນນະບົດຫ່າງໄກສອກຫລີກ, ໄດ້ກຳນົດທີ່ຢູ່ອາໄສ ແລະ ສະຖານທີ່ທຳການຜະລິດໃຫ້ແກ່ປະຊາຊົນຢ່າງສົມສ່ວນ, ໂຮງຮຽນ, ໂຮງໝໍ, ໂຮງຈັກ, ໂຮງງານໄດ້ຂະຫຍາຍໄປສູ່ທ້ອງຖິ່ນຮາກຖານນັບມື້ນັບຫລາຍຂຶ້ນ. ເລັ່ງໃສ່ການພັດທະນາຢ່າງຮອບດ້ານເພື່ອຮອງຮັບກຳລັງແຮງງານທີ່ຂະຫຍາຍຕົວຢ່າງຕໍ່ເນື່ອງໃນລະດັບ 2,1% ຕໍ່ປີ ແລະ ຄາດວ່າ ຈະເພີ່ມ ຂຶ້ນ 3% ຕໍ່ປີ ໃນປີ 2015-2016. ສ້າງເງື່ອນໄຂດ້ານການສຶກສາ-ສາທາລະນະສຸກ ແລະ ການມີວຽກເຮັດງານທຳໃຫ້ຊາວຊົນນະບົດ ເພື່ອຈຳກັດການລັ່ງໄຫລຂອງປະຊາກອນລາວຈາກຊົນນະບົດ ເຂົ້າສູ່ຕົວເມືອງ. ເຖິງວ່າປະຊາກອນລາວປະມານ 75% ຂອງຈຳນວນປະຊາກອນທົ່ວປະເທດ ແມ່ນປະກອບອາຊີບດ້ານກະສິກຳ ແລະ ສ່ວນທີ່ເຫລືອເຖິງຈະປະກອບອາຊີບອື່ນແຕ່ກໍບໍ່ສາມາດຕັດແຍກອອກຈາກວຽກງານກະສິກຳໄດ້ 100%. ແຕ່ເຖິງຢ່າງໃດກໍຕາມລາຍໄດ້ສະເລ່ຍຕໍ່ຫົວຄົນນັບມື້ນັບເພີ່ມຂຶ້ນ ເຊັ່ນເພີ່ມຈາກ 150 USD ໃນປີ 1985 ມາເປັນ 320 USD ໃນປີ 1998, 350 USD ໃນປີ 2000, 596 USD ໃນປີ 2005, 1355 USD ໃນປີ 2012 ແລະ ຈະສູງຂຶ້ນເລື້ອຍໆ ຍ້ອນສະພາບການພັດທະນາ ນັບມື້ຂະຫຍາຍຕົວຢ່າງ ຮອບດ້ານ.

4.3.3 ດ້ານການສົ່ງເສີມການເກັບກຳຂໍ້ມູນ

ຊຸກຍູ້ການເກັບກຳຂໍ້ມູນ ແລະ ສຶກສາຄົ້ນຄວ້າກ່ຽວກັບການເກັບກຳປະຊາກອນ ໂດຍສະເພາະແມ່ນການຄົ້ນຄວ້າທີ່ຈຳເປັນເພື່ອສ້າງນະໂຍບາຍແຜນການ, ແຜນງານ ແລະ ປະຕິບັດວຽກງານດ້ານປະຊາກອນຢ່າງມີປະສິດທິຜົນ. ແນໃສ່ນຳພາປະເທດຊາດຫລຸດພົ້ນອອກຈາກພາວະດ້ອຍພັດທະນາໃນປີ ຄສ 2020 ແລະ ບັນລຸເປົ້າໝາຍສະຫະສະວັດ ດ້ານການພັດທະນາ ປີ ຄສ 2015 ແມ່ນເນັ້ນໃສ່ວຽກງານສຸຂະພາບຈະເລີນພັນຂອງແມ່ຍິງໃນ ສປປ ລາວ ຄື ແນໃສ່ກຳຈັດຄວາມທຸກຍາກ ແລະ ຄວາມອຶດຫິວ ກໍ່ຄືຫລຸດຜ່ອນການຂາດສານອາຫານ, ຫລຸດຜ່ອນການຕາຍຂອງເດັກນ້ອຍ, ປັບປຸງສຸຂະພາບຂອງແມ່. ຕົວຢ່າງ: ທຸກມື້ໆແມ່ຍິງຫລາຍກ່ວາ 2 ຄົນ ຕາຍໃນໄລຍະຖືພາ, ເກີດລູກຢູ່ບ້ານ, ຂໍ້ມູນຂ່າວສານ ແລະ ການບໍລິການດ້ານສຸຂະພາບຈະເລີນພັນສຳລັບໄວໜຸ່ມຍັງມີຈຳກັດ. ຫລາຍກ່ວາ 50% ຂອງການຖືພາ ແມ່ນບໍ່ໄດ້ວາງແຜນ, ການຖືພາແບບບໍ່ຕັ້ງໃຈຈະມີຄວາມສ່ຽງຫລາຍ. ດັ່ງນັ້ນ ຕ້ອງເລັ່ງໃສ່ໃຫ້ຜູ້ຊາຍຮັບຮູ້ ແລະ ເຂົ້າໃຈເຖິງການບໍລິການ-ການຄຸມກຳເນີດ, ການວາງແຜນຄອບຄົວ ຄືການເອົາລູກຫ່າງ.

ຄຳຖາມ:

1. ລັກສະນະຂອງປະຊາກອນລາວເປັນຄືແນວໃດ ?
2. ປະຫວັດການຂະຫຍາຍຕົວຂອງປະຊາກອນລາວເປັນຄືແນວໃດ ?
3. ລັກສະນະການແຈກຢາຍຂອງປະຊາກອນລາວເປັນຄືແນວໃດ ?
4. ໂຄງປະກອບຂອງປະຊາກອນລາວມີດ້ານໃດແດ່ ?
5. ໂຄງປະກອບດ້ານຊົນເຜົ່າຂອງລາວເປັນຄືແນວໃດ ?
6. ອະທິບາຍກ່ຽວກັບລະບົບການສຶກສາຂອງ ສປປ ລາວ ເປັນຄືແນວໃດ ?

ບົດທີ

5

ພູມປັນຍາທ້ອງຖິ່ນລາວ

ລາວ ເປັນຊົນຊາດໜຶ່ງໃນອາຊີຕາເວັນອອກສ່ຽງໃຕ້ ທີ່ມີພັດທະນາການໃນການດຳລົງຊີວິດ ໃນຜືນແຜ່ນດິນແຫ່ງນີ້ມາຍາວນານ ຊຶ່ງການປ່ຽນແປງໃນການດຳລົງຊີວິດນັ້ນ ກໍເພື່ອຄວາມຢູ່ລອດນັ້ນ ເອງ ແລະ ກໍພັດທະນາມາເປັນ ພູມປັນຍາ. ເທົ່າທີ່ມີຫລັກຖານບົ່ງບອກຢ່າງຊັດເຈນ ເຖິງ ພູມປັນຍາທ້ອງຖິ່ນ ຂອງຄົນລາວນັ້ນຄື ພູມປັນຍາ ການເລືອກພື້ນທີ່ໃນການຕັ້ງຖິ່ນຖານ ຊຶ່ງຄົນບູຮານ ກໍອາໄສປະສົບການ ໃນການເຄື່ອນຍ້າຍແຕ່ລະຄັ້ງມາ ສົມທົບກັບວິຖີການ ດຳລົງຊີວິດ ໂດຍມີການຖ່າຍທອດ ພູມປັນຍາ ຂອງບັນພະບູລຸດມາສູ່ຄົນຮຸ່ນຫລັງ. ພູມປັນຍາທັງຫລາຍເຫລົ່ານັ້ນແມ່ນລ້ວນແລ້ວແຕ່ເກີດມາ ຈາກການ ສັງເກດ, ການຄົ້ນຄວ້າ ແລະ ທົດລອງເຮັດ ແບບຜິດໆ ຖືກໆ ຂອງຄົນໃນທ້ອງຖິ່ນເມື່ອ ພົບຂໍ້ຍຸຕິ ທີ່ເປັນ ປະໂຫຍດແລ້ວກໍຖືປະຕິບັດສືບຕໍ່ກັນມາ. ບາງຄັ້ງ ພູມປັນຍາທ້ອງຖິ່ນຕ່າງໆ ກໍອາດຈະຖືກປະຍຸກ

ເພື່ອໃຫ້ເໝາະສົມກັບວິຖີຊີວິດ, ສັງຄົມ, ການເມືອງ, ເສດຖະກິດ ແລະ ເທັກໂນໂລຍີ ທີ່ເໝາະສົມກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ພູມປັນຍາເຫລົ່ານັ້ນໄດ້ກໍ່ໃຫ້ເກີດເປັນອາຊີບຫລັກຫລື ອາຊີບເສີມເພື່ອຫລໍ່ລ້ຽງຜູ້ຄົນ ໃນສັງຄົມທ້ອງຖິ່ນນັ້ນໆ ມາຫລາຍຊົ່ວຊີວິດຄົນ ແລະ ມີພັດທະນາການສືບທອດຕໍ່ກັນມາບໍ່ໄດ້ຂາດຫາຍ ຈຶ່ງສົມຄວນມີການບັນທຶກເລື່ອງລາວ ຂອງພູມປັນຍາທ້ອງຖິ່ນນັ້ນໄວ້ໃຫ້ຄົນ ຮຸ່ນຫລັງໄດ້ພາກພູມໃຈ ແລະ ສຶກສາຄົ້ນຮູ້.

5.1 ຄວາມໝາຍຄວາມສຳຄັນຂອງພູມປັນຍາທ້ອງຖິ່ນ

5.1.1 ຄວາມໝາຍ

ພູມປັນຍາ ເປັນພື້ນຖານຄວາມຮູ້ຂອງປະຊາຊົນ ຊຶ່ງໃນສັງຄົມລາວເຮົາມີການຮຽກເອີ້ນຄຳນີ້ ຢ່າງຫລາກຫລາຍ ເຊັ່ນ: ບາງຄົນກໍເອີ້ນວ່າ ພູມປັນຍາຊາວບ້ານ, ບາງຄົນກໍເອີ້ນວ່າພູມປັນຍາ ທ້ອງຖິ່ນ ແລະ ບາງຄົນກໍເອີ້ນວ່າ ພູມປັນຍາຄົນລາວ. ແຕ່ຢ່າງໃດກໍຕາມ,ຄຳເວົ້າເຫລົ່ານີ້ ກໍເປັນຄຳ ທີ່ຊາວລາວເຮົາໄດ້ມີການເວົ້າເຖິງ ແລະ ມີຄວາມສຳຄັນຫລາຍໃນສັງຄົມປັດຈຸບັນ. ພູມປັນຍາຈັດວ່າ ເປັນທຶນທາງວັດທະນະທຳ ທີ່ມີຄວາມສຳຄັນຢ່າງຍິ່ງຂອງມະນຸດ ຊຶ່ງສິ່ງດັ່ງກ່າວນີ້ ໄດ້ຖືກສະສົມ ງອກງາມຂຶ້ນມາຈາກຄວາມຮັບຮູ້, ປະສົບການ ປະກອບກັບຄວາມສະຫລາດແຫລມຄົມໃນການ ຊອກຮູ້ ເພື່ອການປັບປຸງນະພາບຊັບພະຍາກອນ ແລະ ອົງຄວາມຮູ້ທີ່ມີຢູ່ເດີມໃຫ້ເພີ່ມພູນມີ ຄຸນຄ່າຂຶ້ນຢ່າງສອດຄ່ອງ ແລະ ເໝາະສົມກັບເລື່ອງຕ່າງໆ ຂອງຊຸມຊົນທ້ອງຖິ່ນ ແລະ ສັງຄົມຂອງຕົນ.

ຄຳວ່າ ພູມປັນຍາທ້ອງຖິ່ນນັ້ນ ມາຈາກຄຳສັບສອງຄຳໃນພາສາລາວບວກເຂົ້າກັນ ຄື: ຄຳວ່າ "ພູມ ປັນຍາ" +"ທ້ອງຖິ່ນ" ເອີ້ນວ່າ "ພູມປັນຍາທ້ອງຖິ່ນ. ຄຳວ່າພູມປັນຍາໃນພາສາລາວນັ້ນ ພາສາອັງກິດ ເອີ້ນວ່າ "Wisdom" ຊຶ່ງມີຄວາມໝາຍຕາມວັດຈະນານຸກົມພາສາລາວສະບັບຂອງ ທ່ານ ທອງຄຳ ອ່ອນມະນີສອນ ໝາຍເຖິງພື້ນຄວາມຮູ້ຄວາມສາມາດຂອງບຸກຄົນ ຫລື ກຸ່ມຄົນທີ່ສະສົມກັນມານານ ຕັ້ງແຕ່ອະດີດ. ສ່ວນຄຳວ່າ "ທ້ອງຖິ່ນ" ໃນພາສາອັງກິດເອີ້ນວ່າ "Local" ນັ້ນ ແມ່ນໝາຍເຖິງພື້ນທີ່ ສະເພາະແຫ່ງໃດໜຶ່ງ ຊຶ່ງໃນພື້ນທີ່ດັ່ງກ່າວນັ້ນ ແມ່ນມີສັບພະສິ່ງທັງຫລາຍໃນໂລກອາໄສຢູ່ ແລະ ສັບພະສິ່ງເຫລົ່ານັ້ນ ກໍມີການປ່ຽນແປງຢູ່ຕະຫລອດເວລາ. ການປ່ຽນແປງຕ່າງໆ ນັ້ນອາດຈະເປັນໄປ ຈົນສັງເກດ ເຫັນໄດ້ ແຕ່ບາງຢ່າງອາດຈະເປັນໄປຢ່າງຊ້າໆ ແລະ ໃຊ້ເວລາຍາວນານ. ວິຖີການດຳລົງຊີວິດ (Way of Life) ຂອງມະນຸດກໍເປັນໄປຕາມກົດເກນດັ່ງກ່າວ. ຢ່າງໃດກໍຕາມ, ຄຳວ່າ ພູມປັນຍາທ້ອງຖິ່ນນີ້ ມີນັກປາດອາຈານຫລາຍທ່ານໄດ້ໃຫ້ຄວາມໝາຍໄວ້ແຕກຕ່າງກັນ ຊຶ່ງສາມາດສັງຮວມໄດ້ ດັ່ງນີ້:

ສະພາແຫ່ງຊາດລາວ (ປີ ຄສ 2007) ໄດ້ໃຫ້ຄວາມໝາຍ ຂອງພູມປັນຍາຊາວບ້ານໄວ້ໃນ ກົດໝາຍຊັບສິນທາງປັນຍາວ່າ: ພູມປັນຍາຊາວບ້ານໝາຍເຖິງ ຄວາມຮູ້ຄວາມສາມາດຂອງຊາວບ້ານ ຊຶ່ງເກີດ ມາຈາກປະສົບການດຳລົງຊີວິດ ແລະ ຄວາມສະຫລຽວສະຫລາດຂອງຊາວບ້ານໃນແຕ່ລະ ທ້ອງຖິ່ນລວມທັງການສືບທອດຄວາມຮູ້ຈາກບັນພະບຸລຸດ, ຮຸ່ນສູ່ຮຸ່ນ ຊຶ່ງໃນການສືບທອດນັ້ນມີທັງ ການປັບຕົວ, ການປະຍຸກ ແລະ ການປ່ຽນແປງຈົນກາຍເປັນຄວາມຮູ້ໃໝ່ ເພື່ອໃຫ້ເຂົ້າກັບສະພາບ ແວດລ້ອມໃນປະຈຸບັນ.

-ພູມປັນຍາທ້ອງຖິ່ນ ຄື ອົງຄວາມຮູ້, ປະສົບການ ຫລື ທຸກສິ່ງທຸກຢ່າງທີ່ຊາວບ້ານເປັນ ຜູ້ຄິດຂຶ້ນມາເອງ, ເຮັດເອງ ແລະ ແກ້ໄຂບັນຫາດ້ວຍຕົນເອງ ເພື່ອນຳມາໃຊ້ໃນຊີວິດປະຈຳວັນ ແລະ ເກີດ ການສະສົມມາເປັນເວລານານ ໂດຍມີການຖ່າຍທອດຈາກຄົນຮຸ້ນໜຶ່ງ ໄປຫາຄົນອີກຮຸ້ນໜຶ່ງໃນທ້ອງຖິ່ນ ເພື່ອໃຫ້ທຸກຄົນສາມາດດຳເນີນຊີວິດຢູ່ຮ່ວມກັນຢ່າງມີຄວາມຜາສຸກ.

- ພູມປັນຍາທ້ອງຖິ່ນ ເກີດຈາກການສະສົມຮຽນຮູ້ມາ ເປັນໄລຍະເວລາອັນຍາວນານທີ່ມີລັກສະນະເຊື່ອມໂຍງກັນໄປໝົດທຸກສາຂາວິຊາ ຊຶ່ງມີການປະສົມປະສານກັນ ລະຫວ່າງ ເສດຖະກິດ, ອາຊີບ, ຄວາມເປັນຢູ່, ການສຶກສາ, ການປົກຄອງ ແລະ ວັດທະນະທຳ.

- ພູມປັນຍາທ້ອງຖິ່ນ ເປັນວິທີການປະຕິບັດ ຊຶ່ງຊາວບ້ານໄດ້ມາຈາກປະສົບການ, ແນວທາງແກ້ໄຂບັນຫາໃນແຕ່ລະເລື່ອງ, ແຕ່ລະປະສົບການ, ແຕ່ລະສະພາບສິ່ງແວດລ້ອມ ທີ່ມີເງື່ອນໄຂ ແລະ ປັດໄຈສະເພາະແຕກຕ່າງກັນອອກໄປ.

- ພູມປັນຍາທ້ອງຖິ່ນ ເປັນຂະບວນການຮຽນຮູ້ທາງປັນຍາ ທີ່ມີຈຸດປະສົງຈະໃຊ້ວັດທະນະທຳຂອງຕົນເອງຕອບໂຕ້ຄືນກະແສ ແລະ ການຕໍ່ສູ້ໃຫ້ພົ້ນຈາກການຄວບຄຸມເປັນອິດສະຫລະ ແລະ ສ້າງສັນ. ເມື່ອປະຕິບັດສຳເລັດແລ້ວ ກໍຈະມີເຄືອຂ່າຍເຊື່ອມໂຍງພູມປັນຍາ ລະຫວ່າງກັນຂອງຊຸມຊົນ ທ້ອງຖິ່ນ ຊຶ່ງມີອຳນາດ ແລະ ພະລັງຊຸກດັນໃຫ້ສັງຄົມປ່ຽນແປງໄປສູ່ສັນຕິສຸກ.

- ພູມປັນຍາທ້ອງຖິ່ນ ຄືຄວາມຮູ້ຄວາມສາມາດໃນການດຳເນີນຊີວິດຂອງຄົນ ໃນແຕ່ລະທ້ອງຖິ່ນ ເພື່ອໃຫ້ຢູ່ລອດ ໂດຍການຮຽນຮູ້ທັກສະ, ປະສົບການຕະລອດຮອດເວລາໃນການປັບຕົວ ເພື່ອເລືອກສັນ ໂດຍມີການສະສົມສືບທອດຕໍ່ກັນມາເປັນເວລາຍາວນານ. ລັກສະນະຂອງພູມປັນຍາເຫລົ່ານັ້ນ ຈະສະແດງອອກເຖິງພື້ນຖານຄວາມຄິດ ທີ່ນຳມາແກ້ໄຂ ໂດຍມີການເຊື່ອມໂຍງກັນໄປໃນຫລາຍສາຂາ ຊຶ່ງສຸດທ້າຍກໍພັດທະນາການກາຍມາເປັນອາຊີບຫລັກ ຫລື ອາຊີບເສີມໃຫ້ຄົນໃນທ້ອງຖິ່ນມີລາຍຮັບ.

ຈາກຄຳຈຳກັດຄວາມທີ່ກ່າວມາຂ້າງເທິງນີ້ ສາມາດສະຫລຸບຄວາມໝາຍຄຳວ່າພູມປັນຍາທ້ອງຖິ່ນອອກເປັນ 2 ລັກສະນະ ຄື:

1) ພູມປັນຍາທ້ອງຖິ່ນ ທີ່ມີລັກສະນະເປັນຂະບວນການ ຊຶ່ງໝາຍເຖິງຂະບວນການທາງປັນຍາທີ່ຄົນໃນຊຸມຊົນທ້ອງຖິ່ນຄິດຂຶ້ນມາຈາກການຮຽນຮູ້,ການຖ່າຍທອດຈາກບັນພະບຸຣຸດ,ຈາກປະສົບການທັງທາງກົງ ແລະ ທາງອ້ອມ ເພື່ອໃຊ້ໃນການປັບຕົວ ແລະ ການດຳລົງຊີວິດທີ່ສຳພັນ ກັບສະພາບແວດລ້ອມທາງທຳມະຊາດ, ສັງຄົມ ແລະ ວັດທະນະທຳ ໂດຍໃຊ້ການລອງຜິດລອງຖືກ, ການສັງເກດ, ການສະສົມ, ການສືບທອດ, ການກັ່ນຕອງ ປັບປຸງພັດທະນາ ແລະ ເລືອກສັນ ກັນມາເປັນເວລາຍາວນານ ຈາກຄົນຮຸ່ນໜຶ່ງໄປສູ່ຄົນອີກຮຸ່ນໜຶ່ງຈົນ ເປັນເອກະລັກຂອງຊຸມຊົນໃນທ້ອງຖິ່ນ.

2) ພູມປັນຍາທ້ອງຖິ່ນທີ່ ເປັນຜົນຊຶ່ງໝາຍເຖິງ ພື້ນຖານ ແລະ ຄວາມຮູ້ຂອງຊາວບ້ານທີ່ຄິດຂຶ້ນມາ ຈາກສະຕິປັນຍາ ແລະ ຄວາມສາມາດເພື່ອໃຊ້ໃນການແກ້ໄຂບັນຫາ ແລະ ເປັນແນວທາງປະຕິບັດໃນການດຳເນີນຊີວິດໃຫ້ສອດຄ່ອງກັບສະພາບສັງຄົມ ທີ່ປ່ຽນແປງໄປໃນແຕ່ລະຊ່ວງເວລາ ເພື່ອໃຫ້ບຸກຄົນດຳລົງຊີວິດຮ່ວມກັນຢ່າງມີຄວາມສຸກ ອັນເປັນການສັ່ງສົມທຶນທາງປັນຍາ ຊຶ່ງຖືວ່າເປັນທຶນທາງສັງຄົມ.

5.1.2 ຄວາມສຳຄັນ

ພິຈາລະນາຈາກຄວາມໝາຍຂອງພູມປັນຍາທີ່ກ່າວມາຂ້າງເທິງນັ້ນຈະເຫັນໄດ້ວ່າ ຄວາມສຳຄັນ ຂອງພູມປັນຍາທ້ອງຖິ່ນເປັນວັດທະນະທຳ, ເປັນອົງຄວາມຮູ້ ທີ່ສະສົມທີ່ເກີດຈາກການປະຕິບັດຕົວຈິງໃນທ້ອງທົດລອງທາງສັງຄົມ; ເປັນຄວາມຮູ້ດັ້ງເດີມທີ່ຖືກຄົ້ນພົບ, ມີການທົດລອງໃຊ້, ມີການແກ້ໄຂ ແລະ ດັດແປງ ຈົນກາຍເປັນອົງຄວາມຮູ້ທີ່ສາມາດແກ້ບັນຫາໃນການດຳເນີນຊີວິດ ແລະ ຖ່າຍທອດ

ສືບຕໍ່ກັນມາ. ດ້ວຍຄວາມສຳຄັນນັ້ນ ເຮົາສາມາດເວົ້າໄດ້ວ່າພູມປັນຍາທ້ອງຖິ່ນເປັນຂຸມຊັບທາງປັນຍາ ທີ່ຄົນລາວເຮົາໃນຍຸກປັດຈຸບັນທີ່ທຸກຄົນຄວນໄດ້ຮຽນຮູ້, ຄວນໄດ້ສຶກສາເພື່ອປັບປຸງ ແລະ ພັດທະນາ ໃຫ້ ສາມາດນຳເອົາສິ່ງຍອດຍິ່ງດັ່ງກ່າວເຫລົ່ານັ້ນມານຳໃຊ້ ແລະ ແກ້ໄຂບັນຫາໃຫ້ສອດຄ່ອງກັບ ສະພາບ ຂອງສັງຄົມໃນທ້ອງຖິ່ນ.

ຄຸນຄ່າ ແລະ ຄວາມສຳຄັນຂອງພູມປັນຍາທ້ອງຖິ່ນບໍ່ພຽງແຕ່ສຳລັບຜູ້ຄົນ ຫລື ທ້ອງຖິ່ນນັ້ນໆ ແຕ່ຍັງເອື້ອອຳນວຍຜົນປະໂຫຍດຢ່າງໃຫຍ່ຫລວງຕໍ່ການພັດທະນາປະເທດ ໂດຍພາບລວມກ່າວ ຄື ມັນ ຊ່ວຍໃຫ້ການພັດທະນາເປັນໄປແບບຍືນຍົງ ແລະ ໝັ້ນຄົງ. ດ້ວຍເຫດນັ້ນ, ຈຶ່ງເວົ້າໄດ້ວ່າພູມປັນຍາ ທ້ອງຖິ່ນ ແມ່ນມີຄວາມສຳຄັນຫລາຍຕໍ່ກັບຊາວບ້ານ, ຄອບຄົວ, ຊຸມຊົນ ແລະ ສັງຄົມ ຊຶ່ງຄວາມສຳຄັນ ດັ່ງກ່າວນັ້ນສະແດງອອກ ດັ່ງນີ້:

1) ພູມປັນຍາທ້ອງຖິ່ນ ຊ່ວຍໃຫ້ຜູ້ຄົນໃນຊຸມຊົນທ້ອງຖິ່ນກໍຄືຊາດ ສາມາດຜ່ານວິກິດການ ແລະ ດຳລົງຄວາມເປັນຊາດຫລືຊຸມຊົນໄວ້ໄດ້.

2) ພູມປັນຍາທ້ອງຖິ່ນ ເປັນອົງຄວາມຮູ້ທີ່ມີຄຸນຄ່າ ແລະ ຄວາມດີງາມ ໃນການດຳລົງຊີວິດ ຂອງຄົນໃນຊຸມຊົນໃຫ້ຢູ່ຮ່ວມກັນກັບທຳມະຊາດ, ສະພາບແວດລ້ອມໄດ້ຢ່າງກົມກືນ ແລະ ສົມດຸນ.

3) ພູມປັນຍາ ເປັນຮາກຖານການພັດທະນາ ທີ່ເລີ່ມຕົ້ນຈາກການພັດທະນາ ເພື່ອການ ເພິ່ງພາຕົນເອງ, ການອາໄສຊຶ່ງກັນ ແລະ ກັນປະກອບກັບການພັດທະນາປະສົມປະສານຄວາມຮູ້ ສາກົນບົນຖານພູມປັນຍາເດີມ ເພື່ອເກີດເປັນພູມປັນຍາຮ່ວມສະໄໝທີ່ໃຊ້ປະໂຫຍດໄດ້ຫລາຍຂຶ້ນ.

4) ພູມປັນຍາ ເປັນມໍລະດົກທາງວັດທະນະທຳທີ່ສືບທອດກັນມາແຕ່ອະດີດອັນຍາວນານ ຈົນກາຍ ເປັນວິຖີຊີວິດປະຈຳວັນຂອງຕົນເອງ ແລະ ຊຸມຊົນຕະຫລອດມາ.

5) ພູມປັນຍາ ເປັນແນວທາງນຳໄປສູ່ການປັບຕົວຂອງຄົນໃນສັງຄົມດ້ວຍການຊ່ວຍໃຫ້ ຕົນເອງ ສາມາດເພິ່ງຕົນເອງໄດ້.

ສະຫລຸບແລ້ວ ພູມປັນຍາທ້ອງຖິ່ນ ເປັນມໍລະດົກທາງວັດທະນະທຳ ທີ່ມີຄວາມສຳຄັນຫລາຍ ໃນການຊ່ວຍໃຫ້ຄົນເຮົາໃນປັດຈຸບັນເກີດການຮຽນຮູ້, ການພັດທະນາ, ການຮັກສາ ແລະ ນຳມາປັບໃຊ້ ເພື່ອການປັບຕົວ, ປັບວິຖີຊີວິດຂອງຕົນໃຫ້ຄົງຢູ່ສາມາດເພິ່ງຕົນເອງໄດ້ຢ່າງໝັ້ນຄົງ ທັງເປັນການຊ່ວຍ ໃນການພັດທະນາສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ.

5.2 ລັກສະນະແລະປະເພດພູມປັນຍາທ້ອງຖິ່ນລາວ

5.2.1 ລັກສະນະຂອງພູມປັນຍາທ້ອງຖິ່ນ

ລັກສະນະພູມປັນຍາທ້ອງຖິ່ນຂອງລາວ ສະແດງອອກໃນຫລາຍໆ ຢ່າງທີ່ໄດ້ສະທ້ອນ ອອກມາ ໃຫ້ເຫັນກ່ຽວກັບວິຖີຊີວິດການດຳເນີນຊີວິດ ທັງໃນສ່ວນທີ່ເປັນທັດສະນະຄະຕິ, ປະເພນີ ຄວາມເຊື່ອ ແລະ ກິດຈະກຳການປະດິດສ້າງຂອງຕ່າງໆ. ແຕ່ຫາກນຳມາພິຈາລະນາ ສາມາດຈັດແບ່ງ ລັກສະນະພູມປັນຍາທ້ອງຖິ່ນລາວ ອອກເປັນສອງກຸ່ມໃຫຍ່ ຄື:

1) **ພູມປັນຍາທີ່ເປັນຮູບປະທຳ**

ໝາຍເຖິງ ພູມປັນຍາຄວາມຮູ້ ຫລື ເຄັດລັບໃນການປະດິດສ້າງຕ່າງໆ ຊຶ່ງເປັນຄວາມຮູ້ ສະເພາະດ້ານ ເຊັ່ນ: ການທຳມາຫາກິນ, ດົນຕີ, ກະສິກຳ, ຫັດຖະກຳ, ສິລະປະ ແລະ ອື່ນໆ ທີ່ມີຄວາມສຳພັນກັນ ແລະ ສະທ້ອນອອກມາເປັນຂະບວນທັດສະນ 3 ປະການຄື: ຄວາມສຳພັນ ຢ່າງໃກ້ຊິດລະຫວ່າງຄົນກັບໂລກສິ່ງແວດລ້ອມ, ສັດ, ພືດທຳມະຊາດ. ຄວາມສຳພັນຂອງຄົນ

ກັບຄົນອື່ນໆ ທີ່ຮ່ວມກັນໃນສັງຄົມ ຫລື ໃນຊຸມຊົນ ແລະ ຄວາມສຳພັນ ລະຫວ່າງ ຄົນກັບສິ່ງສັກສິດ, ສິ່ງເໜືອທຳມະຊາດ ຕະຫລອດທັງສິ່ງທີ່ບໍ່ສາ ມາດສຳພັດໄດ້ທັງຫລາຍ.

ຕົວຢ່າງ:

- ການກະສິກຳ: ການເຮັດສວນໝາກມ່ວງໃຫ້ອອກຜົນຕະຫລອດປີ
- ງານຫັດຖະກຳ: ການຈັກສານ, ການແກະສະຫລັກໄມ້ ແລະ ການເຮັດເຄື່ອງປັ້ນດິນເຜົາ...
- ການແຕ່ງອາຫານ: ການແປຮູບອາຫານແປຮູບ, ການຖະໜອມອາຫານ
- ສິລະປະ ແລະ ດົນຕີ: ການປະດິດເຄື່ອງດົນຕີຈາກໄມ້ໄຜ່ ແລະ ກະໂປະໜາກພ້າວ...
- ການຫລິ້ນກິດຈະກຳຕ່າງໆ: ການຫລິ້ນມ້າກ້ານກ້ວຍ, ການຫລິ້ນວ່າວ, ການຫລິ້ນເສືອໄລ່ໝູ ຂອງຊົນເຜົ່າໄທພວນ, ການຫລິ້ນໝາກແລ່ຂອງເຜົ່າລາວ ແລະ ອື່ນໆ

2) **ພູມປັນຍານາມມະທຳ**

ໝາຍເຖິງ ພູມປັນຍາຄວາມຮູ້ລັກສະນະທີ່ເປັນນາມມະທຳເປັນໂລກະທັດ, ຊີວະທັດ, ເປັນປັນຍາຄວາມຮູ້ໃນການດຳເນີນຊີວິດ ເປັນຕົ້ນ ແມ່ນເລື່ອງກ່ຽວກັບການເກີດ, ແກ່, ເຈັບ, ຕາຍ. ຄຸນຄ່າ ແລະ ຄວາມໝາຍ ທຸກສິ່ງຢ່າງໃນຊີວິດປະຈຳວັນ.

ຕົວຢ່າງ:

- ຄຳສອນ ຫລື ຂໍ້ປະຕິບັດສຳລັບແມ່ຍິງຖືພາ ຫລື ການຢູ່ກຳຂອງຜູ້ຍິງເກີດລູກໃໝ່ໆ.
- ຄຳສອນ ແລະ ການປະຕິບັດຕໍ່ຜູ້ອາວຸໂສ ແລະ ອື່ນໆ.

5.2.2 ປະເພດພູມປັນຍາທ້ອງຖິ່ນລາວ

ເປັນທີ່ຍອມຮັບກັນວ່າມາຮອດປັດຈຸບັນ ໃນລາວເຮົາບໍ່ທັນມີການຈັດແບ່ງປະເພດ ຂອງ ພູມປັນຍາທ້ອງຖິ່ນຢ່າງເປັນທາງການ. ເທົ່າທີ່ມີຂໍ້ມູນເຖິງແມ່ນວ່າຈະບໍ່ກຳນົດໂດຍກົງ ແຕ່ກໍມີ ລັກສະນະກ່ຽວພັນກັນ ສ່ວນໃຫຍ່ມີການແບ່ງຕາມເຫດຜົນພໍໃຜລາວ. ຢ່າງໃດກໍຕາມ, ເມື່ອຫາກ ພິຈາລະນາຕາມລັກສະນະ ຄວາມໝາຍຂອງຄຳຈຳກັດຄວາມ ກ່ຽວກັບ ພູມປັນຍາທ້ອງຖິ່ນລາວແລ້ວ ສາມາດຈັດແບ່ງປະເພດ ພູມປັນຍາທ້ອງຖິ່ນລາວໄດ້ ດັ່ງນີ້:

1) **ພູມປັນຍາກ່ຽວກັບຄວາມເຊື່ອ ແລະ ສາສະໜາ**

ພູມປັນຍາປະເພດນີ້ ພົບເຫັນວ່າມີຄວາມຫລາກຫລາຍ ທີ່ມີລັກສະນະແຕກຕ່າງກັນ ໄປຕາມ ແຕ່ລະເຜົ່າຊົນ ແລະ ຕາມແຕ່ລະທ້ອງຖິ່ນ. ທັງນີ້ເນື່ອງຈາກວ່າ ແຕ່ລະເຜົ່າຊົນໃນແຕ່ລະທ້ອງຖິ່ນມີພື້ນ ຖານໃນຄວາມເຊື່ອ ແລະ ສາສະໜາທີ່ແຕກຕ່າງກັນ. ສຳລັບພູມປັນຍາທ້ອງຖິ່ນຂອງລາວຊຶ່ງ ກ່ຽວກັບ ຄວາມເຊື່ອໃນທາງພຸດທະສາສະໜາເປັນຫລັກນັ້ນ ໄດ້ມີສ່ວນຊ່ວຍສ້າງສັນສັງຄົມ ໂດຍການປະສົມ ປະສານກັບ ຄວາມເຊື່ອແບບດັ້ງເດີມ ແລ້ວພັດທະນາການມາ ເປັນລັກສະນະສະເພາະຂອງແຕ່ລະ ທ້ອງຖິ່ນ.

2) **ພູມປັນຍາກ່ຽວກັບປະເພນີ ແລະ ພິທີກຳ**

ພູມປັນຍາປະເພດນີ້ ພົບເຫັນວ່າມີຄວາມຫລາກຫລາຍທັງນີ້ກໍເນື່ອງຈາກວ່າ ປະເພນີ ແລະ ພິທີກຳ ເປັນສິ່ງທີ່ດີງາມທີ່ຄົນໃນທ້ອງຖິ່ນສ້າງຂຶ້ນມາ ໂດຍສະເພາະເປັນການເພີ່ມຂວັນ ແລະ ກຳລັງໃຈ ຄົນໃນສັງຄົມ. ພູມປັນຍາປະເພດນີ້ ຈຶ່ງມີຄວາມສຳຄັນຕໍ່ການດຳເນີນຊີວິດໃນສັງຄົມ ຢ່າງຫລວງຫລາຍ ດັ່ງຈະເຫັນໄດ້ຈາກປະເພນີ ແລະ ພິທີກຳທີ່ສຳຄັນໃນປະເທດລາວ ລ້ວນກ່ຽວຂ້ອງກັບການດຳເນີນ ຊີວິດຂອງຄົນໃນສັງຄົມເກືອບທັງສິ້ນ.

3) ພູມປັນຍາກ່ຽວກັບສິລະປະພື້ນບ້ານ

ລັກສະນະພູມປັນຍາທ້ອງຖິ່ນທີ່ ກ່ຽວກັບ ສິລະປະພື້ນບ້ານໃນລາວເຮົາພົບເຫັນວ່າ ມີຄວາມຫລາກຫລາຍ ເພາະເປັນອົງກອນໜຶ່ງທີ່ຕິດພັນໃນການດຳລົງຊີວິດ ທີ່ເປັນການສ້າງສັນງານສິລະປະຕ່າງໆ ໂດຍການນຳເອົາຊັບພະຍາກອນທີ່ມີຢູ່ມາປະຍຸກໃຊ້ໃນຊີວິດປະຈຳວັນ ຫລັງຈາກນັ້ນໄດ້ສືບທອດ ໂດຍການພັດທະນາຢ່າງບໍ່ຂາດສາຍ ກາຍເປັນສິລະປະທີ່ມີຄຸນຄ່າສະເພາະທ້ອງຖິ່ນ.

ຕົວຢ່າງ:

ພູມປັນຍາທ້ອງຖິ່ນທີ່ ກ່ຽວກັບ ການຂັບລຳພື້ນບ້ານ ຊຶ່ງພູມປັນຍາປະເພດນີ້ສ່ວນຫລາຍສະແດງເຖິງຄວາມສະໜຸກສະໜານ ແລະ ຍັງເປັນຄະຕິສອນໃຈສຳລັບຄົນໃນສັງຄົມ ຊຶ່ງມີສ່ວນແຕກຕ່າງກັນ ອອກໄປຕາມໂລກະທັດຂອງຄົນໃນພາກຕ່າງໆ.

4) ພູມປັນຍາກ່ຽວກັບອາຫານ

ລັກສະນະພູມປັນຍາທ້ອງຖິ່ນທີ່ ກ່ຽວກັບ ອາຫານ ແລະ ການບໍລິໂພກຜັກພື້ນບ້ານ ພົບເຫັນວ່າ ມີຄວາມຫລາກຫລາຍ. ນອກຈາກມະນຸດຈະນຳເອົາອາຫານມາບໍລິໂພກ ເພື່ອການຢູ່ລອດແລ້ວມະນຸດຍັງໄດ້ນຳເທັກນິກການຖະໜອມອາຫານ ແລະ ການປຸງອາຫານມາໃຊ້ ເພື່ອໃຫ້ອາຫານທີ່ມີຫລາຍເກີນຄວາມຕ້ອງການ ສາມາດເກັບໄວ້ບໍລິໂພກໄດ້ເປັນເວລານານ ຊຶ່ງຖືວ່າເປັນພູມປັນຍາອີກປະເພດໜຶ່ງທີ່ສຳຄັນຕໍ່ການດຳລົງຊີວິດ ນອກຈາກນີ້ ຍັງນຳຜັກພື້ນບ້ານຊະນິດຕ່າງ ມາບໍລິໂພກອີກດ້ວຍ.

5) ພູມປັນຍາກ່ຽວກັບກິດຈະກຳການຫລິ້ນ

ພູມປັນຍາທ້ອງຖິ່ນທີ່ ກ່ຽວກັບ ການຫລິ້ນແບບພື້ນບ້ານພົບເຫັນວ່າ ມີຄວາມຫລາກຫລາຍໃນແຕ່ລະທ້ອງຖິ່ນ ຊຶ່ງມີທັງສ່ວນທີ່ຄ້າຍຄືກັນ ແລະ ມີທັງສ່ວນທີ່ແຕກຕ່າງກັນ ເປັນເອກະລັກສະເພາະຖິ່ນ. ເນື້ອໃນການຫລິ້ນແບບພື້ນບ້ານກໍມີລັກສະນະສະເພາະ. ກິດຈະກຳການຫລິ້ນແບບພື້ນບ້ານ ຖືວ່າເປັນການຜ່ອນຄາຍຄວາມອິດເມື່ອຍ ທັງເປັນການຝຶກໃຫ້ເດັກກໍຄືຄົນໃນທ້ອງຖິ່ນມີຄວາມສະໜຸກສະໜານເພີດເພີນ. ພູມປັນຍາການຫລິ້ນແບບທ້ອງຖິ່ນຂອງລາວສ່ວນໃຫຍ່ ຈະໃຊ້ອຸປະກອນໃນການຫລິ້ນ ທີ່ປະດິດມາຈາກທຳມະຊາດ ຊຶ່ງສະແດງໃຫ້ເຫັນວິຖີຊີວິດທີ່ຜູກພັນກັບທຳມະຊາດ ແລະ ຮູ້ຈັກປັບຕົວໃຫ້ເຂົ້າກັບ ສະພາບແວດລ້ອມໄດ້ຢ່າງກົມກືນ.

6) ພູມປັນຍາກ່ຽວສິລະປະກຳ

ພູມປັນຍາທ້ອງຖິ່ນທີ່ ກ່ຽວກັບ ສິລະປະກຳຂອງລາວພົບເຫັນວ່າມີຫລາກຫລາຍ ຊຶ່ງມັນເກີດຈາກ ການສ້າງສັນຂອງແຕ່ລະຊຸມຊົນທ້ອງຖິ່ນ. ໃນປະເທດລາວຂອງພວກເຮົາສາມາດພົບໄດ້ຈາກຮ່ອງຮອຍຂອງສິລະປະວັດທະນະທຳ ທີ່ປະກົດກະຈາຍຢູ່ທົ່ວໄປ ເຊັ່ນ: ສະຖາປັດຕະຍະກຳ, ປະຕິມາກຳ, ຈິດຕະກອນເປັນຕົ້ນ ຊຶ່ງສະແດງໃຫ້ເຫັນເທັກນິກຄວາມຄິດ ຄວາມເຊື່ອຂອງບັນພະບຸລຸດເປັນຢ່າງດີ.

5.3 ພູມປັນຍາທ້ອງຖິ່ນໃນແຕ່ລະເຂດຂອງລາວ

ລາວເຮົາ ເປັນຊາດໜຶ່ງໃນອາຊີຕາເວັນອອກສ່ຽງໃຕ້ ທີ່ປະກອບດ້ວຍຫລາຍຊົນເຜົ່າ ຊຶ່ງແຕ່ລະຊົນເຜົ່າ ກໍມີຮີດຄອງປະເພນີວັດທະນະທຳທີ່ເປັນເອກະລັກສະເພາະຕົນ ທີ່ຜ່ານການສະສົມ ແລະ ຖ່າຍທອດມາແຕ່ບັນພະບຸລຸດ. ບັນດາສິ່ງເຫລົ່ານັ້ນ ລ້ວນແລ້ວແຕ່ເກີດມາຈາກຫົວຄິດປະດິດສ້າງຂອງຄົນຮຸ້ນກ່ອນ ໂດຍຜ່ານການສະສົມຖ່າຍທອດ ແລະ ປັບປຸງຜ່ານຫລາຍເຊັ່ນຄົນມາແລ້ວ. ເມື່ອເວົ້າເຖິງພູມປັນຍາທ້ອງຖິ່ນ ກໍຄືພູມປັນຍາຊາວບ້ານມາຮອດປັດຈຸບັນນີ້ ເຮົາຕ້ອງຍອມຮັບກັນວ່າ ການເກັບ

ກຳຮວບຮວມຂໍ້ມູນທາງດ້ານພູມປັນຍາຊາວບ້ານ ໃນແຕ່ລະທ້ອງຖິ່ນໃນທົ່ວປະເທດຂອງລາວເຮົາ ຍັງບໍ່ທັນສຳ ມາດເກັບກຳ ແລະ ສ້າງເປັນຖານຂໍ້ມູນໄດ້ຊັດເຈນວ່າໃນແຕ່ລະພາກ ແຕ່ລະທ້ອງຖິ່ນ ມີພູມປັນຍາຊາວບ້ານທີ່ມີລັກສະນະຄ້າຍຄື ແລະແຕກຕ່າງກັນຄືແນວໃດ.

ຢ່າງໃດກໍຕາມ, ຫາກເບິ່ງຕາມຜະລິດຕະພັນທີ່ຊາວບ້ານໃນແຕ່ລະທ້ອງຖິ່ນ ທີ່ອາໄສຢູ່ໃນ ແຕ່ລະເຂດແຕ່ລະພາກໃນຂອບເຂດທົ່ວປະເທດແລ້ວ ເຮົາກໍສາມາດບອກໄດ້ແບບ ໂດຍພາບລວມ ທີ່ສະທ້ອນໃຫ້ເຫັນພູມປັນຍາຊາວບ້ານ ເຊັ່ນ:

ກ. ພາກເໜືອ:

ຕາມການຈັດແບ່ງພື້ນທີ່ທາງການທ່ອງທ່ຽວ ພາກເໜືອຂອງລາວປະກອບມີ 8 ແຂວງ ໂດຍ ຈັດແບ່ງອອກເປັນສອງຕອນ ຄື: ພາກເໜືອຕອນເທິງປະກອບມີ 4 ແຂວງໄດ້ແກ່ແຂວງຜົ້ງສາລີ, ຫລວງນ້ຳທາ, ບໍ່ແກ້ວ ແລະ ແຂວງອຸດົມໄຊ. ພາກເໜືອຕອນລຸ່ມປະກອບມີ 4 ແຂວງໄດ້ແກ່: ແຂວງ ຫລວງພຣະບາງ, ຫົວພັນ, ໄຊຍະບູລີ ແລະ ແຂວງຊຽງຂວາງ.

ປະຊາກອນ ທີ່ອາໄສໃນເຂດແຂວງພາກເໜືອນີ້ປະກອບມີ ຫລາຍຊົນເຜົ່າ ຊຶ່ງແຕ່ລະຊົນເຜົ່າ ລ້ວນແຕ່ມີພູມປັນຍາຊາວບ້ານທີ່ເປັນເອກະລັກຂອງຕົນໃນແຕ່ລະທ້ອງຖິ່ນ ໂດຍພິຈາລະນາຈາກວິຖີ ການດຳລົງຊີວິດ ແບບພື້ນບ້ານຂອງບັນດາຊົນເຜົ່າໃນເຂດແຂວງພາກເໜືອແລ້ວ ສາມາດສັງຮວມ ພູມປັນຍາຂອງຊາວບ້ານໄດ້ ດັ່ງນີ້:

1) ພູມປັນຍາ ກ່ຽວກັບ ການລ້ຽງຊີບ ໄດ້ແກ່: ພູມປັນຍາກ່ຽວກັບການທຳມາຫາກິນ, ພູມປັນຍາກ່ຽວກັບທີ່ຢູ່ອາໄສ, ພູມປັນຍາກ່ຽວກັບວັດທະນະທຳການກິນ, ພູມປັນຍາກ່ຽວກັບ ເຄື່ອງ ນຸ່ງຫົ່ມ ແລະ ພູມປັນຍາກ່ຽວກັບ ການປິ່ນປົວພະຍາດ.

ຕົວຢ່າງ: ພູມປັນຍາກ່ຽວກັບອາຫານການກິນ

- ເຫລົ້າຊຽວ ພູມປັນຍາໃນການຜະລິດເຄື່ອງດື່ມປະເພດເຫລົ້າຂອງແຂວງຜົ້ງສາລີ.
- ແຈ່ວປາບ໋ຳ ພູມປັນຍາໃນການຖະໜອມອາຫານຂອງແຂວງ ຫົວພັນ.
- ເຂົ້າຊອຍ ພູມປັນຍາອາຫານການກິນ ຂອງແຂວງຫລວງນ້ຳທາ.
- ແຈ່ວບອງ ພູມປັນຍາໃນການເກັບຖະໜອມອາຫານຂອງແຂວງຫລວງພຣະບາງ
- ນົກແອ່ນຕຸ໋ງ ພູມປັນຍາໃນການເກັບຖະໜອມອາຫານຂອງແຂວງຊຽງຂວາງ

2) ພູມປັນຍາກ່ຽວກັບການປະດິດ ແລະ ສິລະປະກຳ ຊຶ່ງໄດ້ແກ່: ພູມປັນຍາກ່ຽວກັບການ ຫັດຖະກຳ, ພູມປັນຍາກ່ຽວກັບປະຕິມາກຳ, ພູມປັນຍາກ່ຽວກັບຈິດຕະກຳ, ພູມປັນຍາກ່ຽວກັບການຂັບ ລຳ ແລະ ພູມປັນຍາກ່ຽວກັບ ການສະແດງຕ່າງໆ

ຕົວຢ່າງ: ພູມປັນຍາກ່ຽວກັ ການຫັດຖະກຳຕ່ຳແຜ່ນ:

" ລວດລາຍນາກໃນຜ້າລາວ"

ການຫັດຖະກຳຕ່ຳແຜ່ນປະກອບມີຫລາຍຂັ້ນຕອນ ຊຶ່ງແຕ່ລະຂັ້ນຕອນນັ້ນ ລ້ວນແຕ່ບົ່ມຊ້ອນ ໄປດ້ວຍຄວາມຮູ້ທີ່ເອີ້ນວ່າ "ພູມປັນຍາ" ທີ່ມີຄວາມສະລັບຊັບຊ້ອນ ກ່ວາຈະປະດິດອອກມາເປັນຜະລິດ ຕະພັນສິນຄ້າໄດ້. ການອອກແບບລວດລາຍໃນຜືນຜ້າເປັນອົງປະກອບທີ່ສຳຄັນຊ່ວຍໃຫ້ຜືນຜ້ານັ້ນ ມີຄວາມງົດງາມ ແລະ ກາຍເປັນຈຸດທີ່ສ້າງຄວາມສົນໃຈໃຫ້ເກີດການຊື້ ແລະ ຕ້ອງການມາໄວ້ໃນ ຄອບຄອງ. ລວດລາຍທີ່ອອກແບບໃນຜືນຜ້າແພລາວນັ້ນ ປາກົດວ່າມີຢ່າງຫລວງຫລາຍໜຶ່ງໃນລວດ ລາຍຜ້າແພ ລາວທີ່ນຳມາສະເໜີເປັນຕົວຢ່າງທີ່ສະທ້ອນໃຫ້ເຫັນພູມປັນຍາຂອງຄົນລາວກໍຄື "ລາຍນາກ" ໃນຜ້າລາວ.

ສິ່ງທີ່ບົ່ງບອກໃຫ້ເຫັນເຖິງພູມປັນຍາໃນ "ລວດລາຍນາກໃນຜ້າລາວ" ນັ້ນກໍຄື ການອອກແບບ ດັ່ງຄຳຜຸຍພິນລືຊາ (2010) ໄດ້ເວົ້າເຖິງ ລວດລາຍນາກໃນຜ້າລາວວ່າ "ເປັນເອກະລັກໜຶ່ງຊຶ່ງບໍ່ພຽງແຕ່ສ້າງຄຸນຄ່າຄວາມງາມໃຫ້ແກ່ແພເທົ່ານັ້ນ ຫາກຍັງເປັນສັນຍາລັກທີ່ມີຄວາມໝາຍທາງສັງຄົມ ແລະ ວັດທະນະທຳລາວ. ການຜະລິດຊ້ຳລວດລາຍນາກໃນຜ້າແພຂອງແມ່ຍິງລາວຊ່ວຍຊີ້ຄວາມໝາຍ ຄວາມເປັນລາວໄວ້ໃນສັນຍະລັກນາກ ຈາກອະດີດເຖິງປັດຈຸບັນ ໄດ້ຢ່າງໜ້າອັດສະຈັນ". ລວດລາຍນາກໃນຜ້າແພລາວທຸກໆລວດລາຍລ້ວນແລ້ວແຕ່ປະກອບດ້ວຍເສົ້າ, ກາບ ແລະ ດອກຈຽງ ຊຶ່ງໝາຍເຖິງເວລາ ແລະ ແຜ່ນດິນ. ຮູບສັນຍະລັກນາກໃນລວດລາຍຜ້າແພລາວ ທຸກຮູບແບບແມ່ນການສະແດງຮູບລັກສະນະການເຄື່ອນເໜັ້ງຂອງນາກພາຍໃຕ້ຂອບເຂດຂອງແຜ່ນດິນ ແລະ ເວລາ.

ພູມປັນຍາໃນການອອກແບບລວດລາຍນາກໃນຜ້າລາວ ຄືການເກັບຂິດ ເພື່ອເຮັດລວດລາຍ ຖ້າຂາດກາບ, ເສົ້າ ແລະ ດອກຈຽງແລ້ວ ແມ່ນບໍ່ສາມາດເກີດດອກດວງລວດລາຍຕ່າງໆ ໃນຜ້າແພ ໄດ້. ການຕ່ຳຈົກໃຫ້ເກີດລວດລາຍນາກທີ່ສົມບູນ ແລະ ສວຍງາມສະດຸດຕາໃນຜ້າແພລາວນັ້ນ ແມ່ນຕ້ອງອາໄສຄວາມຊຳນານໃນການສະຫລັບສີ ຊຶ່ງໃນຜ່ານມາຄົນລາວເຮົາສາມາດສະຫລັບສີລວດລາຍນາກໃນຜ້າແພຕາມຄວາມເຊື່ອສີປະຈຳຕົວນາກ 9 ສີ. ສີປະຈຳຕົວນາກ 9 ສີ ນັ້ນເປັນສີທຳມະຊາດ ທີ່ຄົນລາວສາມາດຍ້ອມ ແລະ ປະສົມສີທັ້ງ 9 ດ້ວຍພືດ ແລະ ຕົ້ນໄມ້ທຳມະຊາດມາແຕ່ສະໄໝບູຮານ ຊຶ່ງສີດັ່ງກ່າວນັ້ນ ແມ່ນມີຄວາມສວຍງາມ,ທົນທານຕໍ່ແດດຕໍ່ຝົນ ແລະ ບໍ່ຕົກສີງ່າຍ.

ລວດລາຍນາກໃນຜ້າແພລາວທີ່ສຶກສາພົບວ່າມີ 96 ແບບ ຊຶ່ງລວດລາຍດັ່ງກ່າວໄດ້ສ້າງຂຶ້ນບົນພື້ນຖານການຂິດແລ້ວຕ່ຳຈົກ ແລະ ຕ່ຳຂິດ. ການຕ່ຳຈົກ ແລະ ຕ່ຳຂິດໃຫ້ໄດ້ລວດລາຍນາກທີ່ສວຍງາມແລະ ໂດດເດັ່ນຈະຕ້ອງໃຊ້ລວດລາຍນ້ອຍໆຕໍ່ກັນຈົນເຖິງ700-800ດ້ອ.ດັ່ງນັ້ນ,ລວດລາຍນາກຈຶ່ງກາຍເປັນລວດລາຍຊັ້ນສູງ ແລະ ກາຍມາເປັນລາຍມາດຕະຖານໃນການວັດແທກສີມື ທີ່ດີເດັ່ນໃນການຕ່ຳທູກຂອງແມ່ຍິງລາວ.

ຂ. ພາກກາງ:

ພາກກາງປະກອບມີ 6 ແຂວງ ໄດ້ແກ່ ແຂວງວຽງຈັນ, ໄຊສົມບູນ, ນະຄອນຫລວງ,ບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ. ບັນດາແຂວງເຫລົ່ານີ້ ຕ່າງກໍມີຜົນງານຄົ້ນຄ້ວາທີ່ເປັນພູມປັນຍາຂອງຊຸມຊົນທ້ອງຖິ່ນ ທັງໃນສ່ວນທີ່ເປັນເອກະລັກ ແລະ ປະສົມປະສານມາຈາກແຫລ່ງອື່ນຢ່າງຫລວງຫລາຍ ເຊັ່ນ:


1) ພູມປັນຍາກ່ຽວກັບ ການລ້ຽງຊີບ ໄດ້ແກ່: ພູມປັນຍາກ່ຽວກັບການທຳມາຫາກິນ, ພູມປັນຍາກ່ຽວກັບທີ່ຢູ່ອາໄສ, ພູມປັນຍາກ່ຽວກັບວັດທະນະທຳການກິນ, ພູມປັນຍາກ່ຽວກັບເຄື່ອງນຸ່ງຫົ່ມ ແລະ ພູມປັນຍາ ກ່ຽວກັບການປິ່ນປົວພະຍາດ.

ຕົວຢ່າງ: ພູມປັນຍາກ່ຽວກັບ ອາຫານການກິນ

- ຊີ້ນສະຫວັນ ພູມປັນຍາໃນການເກັບຖະໜອມອາຫານຂອງແຂວງສະຫວັນນະເຂດ.
- ໝ້ຳ ພູມປັນຍາໃນການຖະໜອມອາຫານຂອງແຂວງຄຳມ່ວນ.

2) ພູມປັນຍາກ່ຽວກັບການປະດິດ ແລະ ສິລະປະກຳ ຊຶ່ງໄດ້ແກ່: ພູມປັນຍາກ່ຽວກັບການຫັດຖະກຳ, ພູມປັນຍາກ່ຽວກັບປະຕິມາກຳ, ພູມປັນຍາກ່ຽວກັບຈິດຕະກຳ, ພູມປັນຍາກ່ຽວກັບການຂັບລຳ ແລະ ພູມປັນຍາກ່ຽວກັບການສະແດງຕ່າງໆ. ຕົວຢ່າງ: ພູມປັນຍາສິ່ງປະດິດທາງຫັດຖະກຳ

ຫັດຖະກຳການຈັກສານ, ການແກະສະລັກ ແລະ ການເຮັດເຄື່ອງປັ້ນດິນເຜົາ.



ຮູບທີ 29: ຫັດຖະກຳຈັກສານ

ພູມປັນຍາກ່ຽວກັບການຂັບລຳ ເຊັ່ນ:

- ການຂັບງື້ມ ເປັນພູມປັນຍາການຂັບລຳທ້ອງຖິ່ນ ຂອງຊຸມຊົນຄົນໄທທົ່ງແຂວງວຽງຈັນ
- ການຂັບລຳມະຫາໄຊເປັນພູມປັນຍາການຂັບລຳທ້ອງຖິ່ນ ຂອງແຂວງຄຳມ່ວນ
- ການຂັບລຳ 4 ຈັງຫວະ ໄດ້ແກ່ ລຳຄອນສະຫວັນ, ລຳຜູໄທ, ລຳບ້ານຊອກ ແລະ ລຳຕັ້ງຫວາຍ ເປັນພູມປັນຍາການຂັບລຳທ້ອງຖິ່ນ ຂອງແຂວງສະຫວັນນະເຂດ.

ຄ. ພາກໃຕ້:

ພາກໃຕ້ປະກອບມີ 4 ແຂວງ ໄດ້ແກ: ແຂວງສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື. ບັນດາແຂວງເຫລົ່ານີ້ ຕ່າງກໍມີຜົນງານຄິດຄົ້ນທີ່ເປັນພູມປັນຍາຂອງຊຸມຊົນທ້ອງຖິ່ນທັງໃນສ່ວນທີ່ເປັນເອກະລັກ ແລະ ປະສົມປະສານມາຈາກແຫລ່ງອື່ນຢ່າງຫລວງຫລາຍ ເຊັ່ນ:

1) ພູມປັນຍາກ່ຽວກັບການລ້ຽງຊີບ ໄດ້ແກ: ພູມປັນຍາກ່ຽວກັບການທຳມາຫາກິນ, ພູມປັນຍາກ່ຽວກັບທີ່ຢູ່ອາໄສ, ພູມປັນຍາກ່ຽວກັບວັດທະນະທຳການກິນ, ພູມປັນຍາກ່ຽວກັບ ເຄື່ອງນຸ່ງຫົ່ມ ແລະ ພູມປັນຍາ ກ່ຽວກັບການປິ່ນປົວພະຍາດ.

ຕົວຢ່າງ: ພູມປັນຍາກ່ຽວກັບ ອາຫານການກິນ

- ປາແດກໜຽວ ແຂວງສາລະວັນ
- ປາເຄັ່ມ, ປາຈາວ ,ປາກະເຕົາ ພູມປັນຍາໃນການເກັບຖະໜອມອາຫານຂອງແຂວງຈຳປາສັກ.
- ຕະໂບດ ພູມປັນຍາໃນການຖະໜອມອາຫານຂອງແຂວງອັດຕະປື.

2) ພູມປັນຍາກ່ຽວກັບການປະດິດ ແລະ ສິລະປະກຳ ຊຶ່ງໄດ້ແກ: ພູມປັນຍາກ່ຽວກັບການຫັດຖະກຳ, ພູມປັນຍາກ່ຽວກັບປະຕິມາກຳ, ພູມປັນຍາກ່ຽວກັບຈິດຕະກຳ, ພູມປັນຍາກ່ຽວກັບການຂັບລຳ ແລະ ພູມປັນຍາກ່ຽວກັບການສະແດງຕ່າງໆ

ຕົວຢ່າງ: ພູມປັນຍາການຂັບລຳ

- ລຳສາລະວັນ ເປັນພູມປັນຍາການຂັບລຳທ້ອງຖິ່ນ ຂອງແຂວງສາລະວັນ
- ລຳສີພັນດອນ, ລຳຂັບໂສມ, ລຳເລື່ອງ

3) ພູມປັນຍາກ່ຽວກັບຄະຕິ, ຄວາມຄິດ, ຄວາມເຊື່ອ ແລະ ສາສະໜາ ເປັນພູມປັນຍານາມະທຳ ທີ່ສະທ້ອນໃຫ້ເຫັນທາງດ້ານວິຖີຊີວິດຂອງຊາວລາວ ຊຶ່ງມີຄວາມຜູກພັນກັບຄວາມເຊື່ອໃນເລື່ອງສິ່ງ ສັກສິດ, ຜີບັນພະບຸລຸດ ແລະ ອື່ນໆ. ດັ່ງນັ້ນ, ການຈະກະທຳສິ່ງໃດໆ ຈຶ່ງຈຳເປັນຕ້ອງມີພິທີຮິນຕອງ ເພື່ອຄວາມເປັນສິຣິມຸງຄຸນແກ່ຊີວິດ ແລະ ຄອບຄົວ. ປັດຈຸບັນ, ມີຫລາຍແນວຄວາມຄິດທີ່ເປັນຄະຕິ ຫລື ຍຸດໂທບາຍໃນການສ້າງຄວາມສາມັກຄີໃນໝູ່ຄະນະ, ບາງແນວຄວາມຄິດກໍ ເພື່ອຄວາມສະບາຍຈິດສະບາຍໃຈ ບໍ່ມີຄວາມກັງວົນໃນສິ່ງໃດໆ ຊຶ່ງໃນປັດຈຸບັນ ມີຫລາຍພິທີກຳໄດ້ປະຕິບັດສືບຕໍ່ມາບໍ່ໄດ້ ຂາດ.ຕົວຢ່າງ: ພູມປັນຍາຄວາມເຊື່ອ ເລື່ອງຣີກາງານຍາມດີ ກ່າວຄືຄົນລາວຖືເວລາມີອິດທິພົນໃນຊີວິດ ໂດຍສະເພາະ ເວລາທີ່ໃຊ້ໃນການປະກອບພິທີກຳຕ່າງໆ ເຊັ່ນ: ເວລາ ຫລື ຍາມທີ່ບໍ່ເປັນມົງຄົນໃນສັງຄົມ "ສົ່ງ 14" ເປັນພູມປັນຍາຄວາມເຊື່ອຂອງປະຊາຊົນຕໍ່ກັບການປະກອບກິດຈະກຳທີ່ມີພະສົ່ງມາກ່ຽວຂ້ອງ ຄື ວັນຂຶ້ນ ຫລື ແຮມ 14 ຄ່ຳ ເປັນວັນຫ້າມປະກອບພິທີກຳໃດໆ ທີ່ກ່ຽວຂ້ອງກັບການນິມົນພະສົ່ງມາປະກອບພິທີກຳ.

5.4 ການປົກປັກຮັກສາພູມປັນຍາທ້ອງຖິ່ນຂອງລາວ

ຄືດັ່ງທີ່ກ່າວມາຂ້າງເທິງກ່ຽວກັບ ພູມປັນຍາທ້ອງຖິ່ນມີຄວາມສຳຄັນຫລາຍໃນວິຖີຊີວິດປະຈຳວັນຂອງຄົນໃນສັງຄົມລາວປັດຈຸບັນ ເພາະພູມປັນຍາທ້ອງຖິ່ນບໍ່ພຽງແຕ່ເປັນຄວາມຮູ້ສະເພາະດ້ານເທົ່ານັ້ນ ແຕ່ມັນຍັງເປັນສັບພະວິຊາຄວາມຮູ້ທີ່ມີຄວາມສຳພັນກັນທີ່ຊຸມຊົນໃນທ້ອງຖິ່ນນຳມາປະຍຸກໃຊ້ໃນການ ແກ້ໄຂບັນຫາໃນການຫາລ້ຽງຊີບ. ປັດຈຸບັນກະແສຂອງຄວາມເປັນທັນສະໄໝທີ່ກະຈາຍເຂົ້າມາ ພ້ອມກັບການພັດທະນາໃນຍຸກໃໝ່ ຍິ່ງມີສ່ວນເຮັດໃຫ້ສິ່ງປະດິດຕ່າງໆ ທີ່ເກີດຈາກພູມປັນຍາຊາວບ້ານ ໃນແຕ່ລະແຫ່ງຖືກລົດບົດບາດຄວາມສຳຄັນລົງໄປທັ້ງໆ ທີ່ພູມປັນຍາດັ່ງກ່າວນັ້ນສາມາດນຳມາຕໍ່ຍອດ ເພື່ອປະຍຸກໃຊ້ໃນການດຳລົງຊີວິດປະຈຳວັນໄດ້.

ຢ່າງໃດກໍຕາມ,ເພື່ອເຮັດໃຫ້ຄົນລາວຫັນມາສົນໃຈ, ມາທຳຄວາມຮູ້ຈັກ, ມາທຳຄວາມເຂົ້າໃຈ ແລະ ພູມໃຈໃນອະດີດເບື້ອງຫລັງ ແລະ ຮາກເຫງົ້າວັດທະນະທຳ ອັນເປັນຜົນງານແຫ່ງການຄິດຄົ້ນທີ່ເກີດຈາກພູມປັນຍາທ້ອງຖິ່ນຂອງຊາວບ້ານໄວ້ໃຫ້ຄົນຮຸ່ນຫລັງໃນຕໍ່ມາໄດ້ສຶກສາຮຽນຮູ້; ຈຳເປັນມາຮອດນະເວລານີ້ ໜ່ວຍງານຂອງລັດທີ່ກ່ຽວຂ້ອງ ແລະ ຊຸມຊົນໃນແຕ່ລະທ້ອງຖິ່ນຕ້ອງມີແນວທາງ ແລະ ວິທີການເພື່ອທີ່ຈະປົກປັກຮັກສາພູມປັນຍາທ້ອງຖິ່ນໄວ້ ດັ່ງນີ້:

1) ການຖ່າຍທອດ:

ການຖ່າຍທອດພູມປັນຍາທ້ອງຖິ່ນມີວິທີການຖ່າຍທອດຢູ່ 2 ວິທີຄື:

- ການຖ່າຍທອດພູມປັນຍາທ້ອງຖິ່ນແກ່ເດັກນ້ອຍ ຫລື ເຍົາວະຊົນ ໂດຍທົ່ວໄປເດັກມີຄວາມສົນໃຈ ຊ່ວງເວລາສັ້ນໆໃນສິ່ງທີ່ໃກ້ຕົວ ຊຶ່ງແຕກຕ່າງຈາກຜູ້ໃຫຍ່. ກິດຈະກຳການຖ່າຍທອດຕ້ອງງ່າຍໆ ບໍ່ຊັບຊ້ອນແຝງຄວາມມ່ວນຊື່ນສະນຸກສະໜານ ແລະ ດຶງດູດຄວາມສົນໃຈ ເຊັ່ນ: ການຫລິ້ນ, ການເລົ່ານິທານ, ການທົດລອງເຮັດຕາມຕົວຢ່າງ, ປະຕິບັດຕົວຈິງ, ການຫລິ້ນປິດສະໜາທາຍຄຳສັບເປັນຕົ້ນ. ວິທີເຫລົ່ານີ້ ເປັນການສົ່ງເສີມລັກສະນະນິໄສ ແລະ ບຸກຄະລິກະພາບທີ່ສັງຄົມປາຖາໜາ ເຊິ່ງສ່ວນໃຫຍ່ ເນັ້ນໜັກ ໄປທາງຈະຣິຍະທຳທີ່ເປັນສິ່ງທີ່ຄວນຫລືບໍ່ຄວນ. ການຖ່າຍທອດພູມປັນຍາທ້ອງຖິ່ນແກ່ເຍົາວະຊົນອີກຮູບແບບໜຶ່ງ ເປັນການຖ່າຍທອດຄວາມຮູ້ ເພື່ອໃຫ້ເກີດການສືບທອດອຸດົມການໃຫ້ລູກຫລານໄດ້ຮຽນຮູ້ຈາກການປະຕິບັດຕົວຈິງ ຊ່ວຍໃຫ້ເຍົາວະຊົນຮູ້ຈັກຄິດຮູ້ຈັກສັງເກດ, ຮູ້ຈັກປຽບທຽບອັນເປັນ ການຮຽນຮູ້ຈາກຮາກເຫງົ້າຂອງຕົນເອງເກີດຄວາມຊາບຊຶ້ມ ແລະ ພູມໃຈທີ່ໄດ້ເກີດມາໃນຊຸມຊົນທ້ອງຖິ່ນນັ້ນໆ.

- ການຖ່າຍທອດພູມປັນຍາທ້ອງຖິ່ນແກ່ຜູ້ໃຫຍ່ກ່າວຄື ຜູ້ໃຫຍ່ເປັນຜູ້ທີ່ຜ່ານປະສົບການຕ່າງໆ ມາພໍສົມຄວນ ແລະ ເປັນໄວທີ່ແຂງແຮງມີວຸງກາເຮັດງານທຳ ຈຶ່ງມີວິທີການຖ່າຍທອດໄດ້ຫລາຍຮູບແບບ ເຊັ່ນ: ການບອກເລົ່າໂດຍກົງ ຫລື ບອກເລົ່າໂດຍຜ່ານພິທີສູ່ຂວັນ, ພິທີກຳທາງສາສະໜາ, ພິທີກຳຕາມ ຂະນົບທຳນຽມປະເພນີຂອງທ້ອງຖິ່ນຕ່າງໆ ເປັນຕົ້ນ.

ຮູບແບບການຖ່າຍທອດນັ້ນອາດດຳເນີນໃນຫລາຍລັກສະນະ ເຊັ່ນ:

1) **ສະຖາບັນຄອບຄົວ**

ການຖ່າຍທອດໃນສະຖາບັນຄອບຄົວຈະເປັນການຖ່າຍທອດຈາກພໍ່ແມ່ສູ່ລູກ,ຍາດຕິພີ່ນ້ອງເຄືອຍາດໃກ້ຊິດກ່ອນ ເພື່ອສືບທອດພູມປັນຍາໄວ້ ທັງນີ້ກໍເພາະວ່າຄວາມຮູ້ຫລາຍຢ່າງບໍ່ມີການເຜີຍແຜ່ໃຫ້ຜູ້ອື່ນເພາະຖືເປັນ "ມໍລະດົກ" ຂອງວົງຕະກຸນ ເຊັ່ນ: ຄວາມຮູ້ເລື່ອງການຮັກສາໂລກພະຍາດຢາສະໝຸນໄພ, ສິລະປະກຳການສະແດງ, ສິນລະປະກຳຕ່າງໆເຫລົ່ານີ້ເປັນຕົ້ນ. ສ່ວນໃຫຍ່ຈະມີເຄັດລັບເກັບໄວ້ຖ່າຍທອດໃຫ້ຜູ້ທີ່ຕ້ອງການໃຫ້ເປັນຜູ້ສືບທອດພູມປັນຍາເທົ່ານັ້ນ. ການຖ່າຍທອດຈະໃຊ້ວິທີການບອກເລົ່າ, ການສັງເກດ ແລະ ການຝຶກປະຕິບັດ ດ້ວຍການວິທີການຄ່ອຍເຮັດຄ່ອຍປະຕິບັດໄປໃນແຕ່ລະວັນ ຊຶ່ງເປັນການສືບທອດຄວາມຮູ້ຄວາມຊຳນານ ທີ່ມີລັກສະນະສະເພາະຂອງບຸກຄົນຫລືສະເພາະຄອບຄົວ ສຳລັບການຖ່າຍທອດມີຫລາຍປະການ ແລະ ບໍ່ໄດ້ສະແດງອອກຢ່າງຊັດເຈນ ເປັນການຮຽນຮູ້ ທີ່ໄດ້ຮັບ ການເຊື່ອມຊຶມຈາກການປະຕິບັດຕົວຈິງໃນຊີວິດປະຈຳວັນ.

2) **ວັດ ແລະ ຊຸມຊົນ**

ວັດເປັນສູນກາງການຮຽນຮູ້ຂອງຊຸມຊົນ ຫລື ສູນການສຶກສານອກລະບົບ, ເປັນທີ່ເຝົ້າອາຊີບທີ່ປະຊຸມສຳມະນາ ແລະ ເປັນບ່ອນນັດໝາຍສຳຫລັບການຈັດກິດຈະກຳທາງສາສະໜາພິທີກຳຕ່າງໆ ຮວມທັງການຈັດງານທາງປະເພນີ ການເຮັດບຸນເນື່ອງໃນໂອກາດສຳຄັນ ລວມໄປເຖິງກິດຈະກຳທາງສັງຄົມຂອງສ່ວນລວມ ຕັ້ງແຕ່ອະດີດຈົນເຖິງປະຈຸບັນ ຜູ້ຄົນໃນຊຸມຊົນໂດຍສະເພາະຊົນນະບົດ ຈະຜູກພັນກັບວັດ. ວັດເປັນສູນລວມຄວາມເຊື່ອໝັ້ນຄວາມສັດທາ ໂດຍມີພະສົງ ເປັນຜູ້ລິເລີ່ມຜູ້ປະສານ ສົ່ງເສີມໃຫ້ເກີດກິດຈະກຳ. ນອກຈາກນີ້ວັດຍັງມີບົດບາດເປັນສະຖານທີ່ດູແລຮັກສາສຸຂະພາບກາຍ ແລະ ສຸຂະພາບຈິດຂອງຄົນໃນຊຸມຊົນ ເປັນສູນກາງພົບປະສົນທະນາຂອງປະຊາຊົນຊຸມຊົນ ມີຄວາມ ໃກ້ຊິດກັບວັດ, ວັດຈຶ່ງເປັນສູນຂອງຊຸມຊົນ. ພະເປັນເຈົ້າຂອງສຳນັກ ຊຶ່ງປຽບເໝືອນເປັນຄູຜູ້ໜຶ່ງ ທີ່ເຮັດໜ້າທີ່ໃນການຖ່າຍທອດຄວາມຮູ້ຄວາມຊຳນານໃຫ້ແກ່ບຸກຄົນອື່ນ ຊຶ່ງບຸກຄົນຜູ້ທີ່ຈະມາເປັນລູກສິດນັ້ນ ອາດເປັນລູກຫລານຫລືຜູ້ສົນໃຈສະມັກເປັນສິດ. ພະເອງກໍໄດ້ຮັບການຖ່າຍທອດຈາກຄູມາໃນລັກສະນະດຽວກັນ ເຮັດໃຫ້ເກີດຄວາມຊ່ຽວຊານໃນເລື່ອງນັ້ນໆ ໄດ້ເປັນຢ່າງດີ. ການຮັບເປັນຄູ ແລະ ສິດຈະເລີ່ມ ຕົ້ນດ້ວຍພິທີກຳທີ່ເອີ້ນວ່າ "ຍົກຄູ" ອັນສະແດງເຖິງຄວາມສຳພັນ ທີ່ມີຄວາມເລິກເຊິ່ງຢ່າງຍິ່ງ ເພາະຄູຈະເປັນຜູ້ຖ່າຍທອດບໍ່ພຽງແຕ່ທັກສະ ຫລື ວິຊາການຕ່າງໆ ໃຫ້ເທົ່ານັ້ນ ແຕ່ຈະຖ່າຍທອດວິນຍານໃຫ້ສິດທີ່ເກັ່ງ ແລະ ດີທັ້ງມີຄວາມສາມາດສືບທອດທຸກຢ່າງຈາກຄູທັ້ງເລື່ອງທັກສະເນື້ອຫາຮູບແບບ ແລະ ຈິດວິນຍານ ຂອງເລື່ອງ ນັ້ນໆ ອັນທີ່ເປັນຄວາມຊຳນານຂອງຄູ.

ຊຸມຊົນ ໂດຍສະເພາະຜູ້ນຳ ຫລື ອຳນາດການປົກຄອງ ແລະ ນັກປາດຊາວບ້ານ ກໍຄືປັນຍາຊົນໃນທ້ອງຖິ່ນ ລ້ວນແຕ່ເປັນອົງປະກອບທີ່ສຳຄັນໃນການທີ່ຈະເຄື່ອນໄຫວ ເພື່ອປົກປັກຮັກສາ ແລະ ສົ່ງເສີມພູມປັນຍາທ້ອງຖິ່ນຂອງຕົນໄວ້ໃຫ້ເຊັ່ນລູກເຊັ່ນຫລານໄດ້ສຶກສາຮຽນຮູ້ ແລະ ປະຕິບັດ. ທັງນີ້ກໍເພາະ ບຸກຄົນເຫລົ່ານີ້ເປັນເຄືອຂ່າຍສູນກາງການຮຽນຮູ້ຂອງຊຸມຊົນ ໃນການທີ່ຈະຮວມກຸ່ມ ເພື່ອຈັດການຊັບພະຍາກອນທີ່ມີໃນທ້ອງຖິ່ນໃຫ້ເກີດເປັນຜະລິດຕະພັນສິນຄ້າ. ການສືບທອດພາຍໃນຊຸມຊົນ ສ່ວນໃຫຍ່ເປັນເລື່ອງອາຊີບຂອງຊາວບ້ານ ທີ່ທຸກຄອບຄົວພາຍໃນບ້ານທຳການຜະລິດ

ອາດເປັນອາຊີບເສີມ ຮອງຈາກອາຊີບຫລັກ ເຊັ່ນ: ເຄື່ອງປັ້ນດິນເຜົາ, ຈັກສານ, ຕຳຜ້າ. ດັ່ງນັ້ນ, ການຮຽນຮູ້ ໂດຍຜ່ານການຈັດ ຕັ້ງຂອງຊຸມຊົນທ້ອງຖິ່ນ ແລະ ເຄືອຂ່າຍ ອາດຈະເປັນການຈັດເວທີຊຸມຊົນ ຫລື ເວທີຊາວບ້ານ ເພື່ອປະຊຸມສຳມະນາແລກປ່ຽນຄວາມຄິດເຫັນລວມທັງການລະດົມສະໝອງໃນການວາງແຜນແກ້ໄຂບັນຫາ ຮ່ວມກັນນັ້ນ ຈັດວ່າເປັນຮູບແບບການຖ່າຍທອດ ແລະ ສືບທອດພູມປັນຍາທີ່ມີປະສິດທິພາບຫລາຍທີ່ສຸດອີກຮູບແບບໜຶ່ງ.

3) ລັດ

ໜ່ວຍງານຂອງລັດເປັນອົງກອນທີ່ສຳຄັນທີ່ສຸດໃນການທີ່ຈະຊ່ວຍປົກປັກຮັກສາ ແລະ ສົ່ງເສີມພູມປັນຍາທ້ອງຖິ່ນຂອງຊຸມຊົນໃຫ້ມີຄວາມຍືນຍົງ ເພາະໜ່ວຍງານຂອງລັດຄືຜູ້ທີ່ນຳເອົາແນວທາງ ພັດທະນາປະເທດຂອງລັດມາເຜີຍແຜ່ ແລະ ຝັງຂະຫຍາຍ ໄປສູ່ການປະຕິບັດໃຫ້ເກີດໝາກເກີດຜົນ. ຄວາມຈິງແລ້ວ ໃນຜ່ານມາລັດກໍໄດ້ມີແຜນການເພື່ອປົກປັກຮັກສາ ແລະ ສົ່ງເສີມພູມປັນຍາທ້ອງຖິ່ນຂອງຊາວບ້ານມາແລ້ວ ເຊັ່ນ:

ກ. ນະໂຍບາຍສົ່ງເສີມຫັດຖະກຳລາວ

ລັດຖະບານ ໄດ້ສົ່ງເສີມການຜະລິດຂອງຂະແໜງຫັດຖະກຳ ບໍ່ພຽງແຕ່ຮັບໃຊ້ການບໍລິໂພກຂອງຄອບຄົວເທົ່ານັ້ນ ແຕ່ຍັງຜະລິດໃຫ້ເປັນສິນຄ້າຈຳໜ່າຍພາຍໃນ ແລະ ຕ່າງປະເທດ. ເພື່ອສົ່ງເສີມການຜະລິດຂະແໜງຫັດຖະກຳ ລັດຖະບານໄດ້ໃຫ້ການສະໜັບສະໜູນທາງດ້ານການເງິນ ແກ່ກອງທຶນສົ່ງເສີມການຕະຫລາດ ເພື່ອສົ່ງອອກສິນຄ້າຫັດຖະກຳ ແລະ ທິດທາງສະໜັບສະໜູນຜະລິດຕະພັນຫັດຖະກຳຂອງລາວ ໃຫ້ເປັນທີ່ນິຍົມຂອງຕະຫລາດສາກົນ ໂດຍການເພີ່ມປະລິມານການຜະລິດໃຫ້ສອດຄ່ອງກັບ ຄວາມຕ້ອງການຂອງຕະຫລາດ ແລະ ແນະນຳແນວທາງການປັບປຸງຄຸນນະພາບ ເພື່ອໃຫ້ ໄດ້ມາດຕະຖານ ຂອງສິນຄ້າລາວຢູ່ໃນລະດັບສາກົນຍອມຮັບ.

ນະໂຍບາຍຂອງລັດ ທີ່ສະແດງອອກເຖິງການປົກປັກຮັກສາ ແລະ ສົ່ງເສີມພູມປັນຍາຊາວບ້ານກໍຄື ທ້ອງຖິ່ນສະແດງອອກໃນນະໂຍບາຍກ່ຽວກັບວຽກງານຫັດຖະກຳ ເຊັ່ນ: ນະໂຍບາຍການຄຸ້ມຄອງ, ການສົ່ງເສີມ ແລະ ພັດທະນາ, ການອະນຸຮັກ ແລະ ການສະຫງວນ ເພື່ອໃຫ້ຂະແໜງຫັດຖະກຳມີການຂະຫຍາຍຕົວຢ່າງຍືນຍົງ. ລັດສົ່ງເສີມ ແລະ ພັດທະນາວຽກງານຫັດຖະກຳ ດ້ວຍການໃຫ້ນະໂຍບາຍ ແລະ ປະຕິບັດມາດຕະການຕົ້ນຕໍ ດັ່ງນີ້:

- ທຶນ ແລະ ກອງທຶນ
- ພາສີ ແລະ ອາກອນ
- ການປົກປ້ອງສິນຄ້າຫັດຖະກຳ
- ການສະໜອງຂໍ້ມູນຂ່າວສານ
- ການຕະຫລາດ
- ການນຳໃຊ້ເຕັກໂນໂລຊີ
- ການໃຫ້ຄຳປຶກສາ
- ການຝຶກອົບຮົມ ແລະ ຍົກລະດັບສີມືແຮງງານ
- ສູນສົ່ງເສີມຫັດຖະກຳ
- ສູນຝຶກອົບຮົມວິຊາຊີບຫັດຖະກຳ
- ການສ້າງຕັ້ງກຸ່ມຜູ້ຜະລິດ ທຸລະກິດຫັດຖະກຳ

๒. ນະໂຍບາຍ ໜຶ່ງເມືອງໜຶ່ງຜະລິດຕະພັນ (One District One Product)

ນະໂຍບາຍ "ໜຶ່ງເມືອງໜຶ່ງຜະລິດຕະພັນ" ເປັນນະໂຍບາຍກະຕຸ້ນ ແລະ ສົ່ງເສີມພູມປັນຍາ ການຄົ້ນຄິດ ແລະ ປະດິດສິ່ງວັດຖຸ ໂດຍຄົນລາວທີ່ມີຖິ່ນຖານ ແລະ ມີສຳນະໄນຄົວທີ່ເປັນຄົນລາວໂດຍ ກຳເນີດ. ເນື້ອໃນຄວາມສຳຄັນຂອງນະໂຍບາຍດັ່ງກ່າວນີ້ ສະທ້ອນໃຫ້ເຫັນຢູ່ໃນການໝາຍທີ່ ເອີ້ນວ່າ "ໜຶ່ງເມືອງໜຶ່ງຜະລິດຕະພັນ" ຄື:

ເລກໜຶ່ງລາວ (๑) ສ່ອງແສງໃຫ້ເຫັນຂະບວນການຜະລິດສິນຄ້າ ແລະ ຮູບແບບການບໍລິການ ທີ່ເປັນເອກະລັກ "ໜຶ່ງເມືອງໜຶ່ງຜະລິດຕະພັນ" ຢູ່ ສປປ ລາວ. ນອກຈາກນີ້, ເລກໜຶ່ງລາວຍັງມີຄວາມ ໝາຍວ່າ ເປັນວຸກບຸລິມະສິດອັນດັບໜຶ່ງ ຂອງລັດຖະບານໃນການແກ້ໄຂຄວາມທຸກຍາກ, ສ້າງວຸກເຮັດ ງານທຳ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນບົນພື້ນຖານການນຳໃຊ້ພູມປັນຍາທ້ອງຖິ່ນ. ລວດລາຍ ໃນເລກໜຶ່ງໝາຍເຖິງຄວາມປານີດ, ສີໄມ້ລາຍມື ແລະ ພູມປັນຍາທ້ອງຖິ່ນຂອງປະຊາຊົນລາວ. ສີແທ້ ຂອງການໝາຍ ແມ່ນສີມໍລະກົດ ເຊິ່ງເປັນສີແຫ່ງສັນຍາລັກຂອງການພັດທະນາເສດຖະກິດການຄ້າ, ແຕ່ການນຳໃຊ້ຕົວຈິງນັ້ນສີ ແລະ ຂະໜາດຂອງການໝາຍ ແມ່ນບໍ່ຕາຍຕົວ, ຂຶ້ນກັບລັກສະນະ ແລະ ຂະໜາດຂອງຜະລິດຕະພັນ.

ແນວຄວາມຄິດຫລັກຂອງນິຍາມກ່ຽວກັບ"ໜຶ່ງເມືອງໜຶ່ງຜະລິດຕະພັນ" ຄືການຍຶດຫລັກການ 8B's ໃນພາສາອັງກິດວ່າ:

- be locally produced
- be unique and special
- be of high quality
- be safe, nature and ecological
- be the pride in each district, be marketable / tradable
- be sustainable
- be made by local business of less than 50 workers ເຊິ່ງມີຄວາມໝາຍ ໃນພາສາລາວວ່າ:

- ຜະລິດຢູ່ໃນທ້ອງຖິ່ນ ເມືອງໃດເມືອງໜຶ່ງ
- ເປັນສິນຄ້າເອກະລັກ, ພິເສດຂອງເມືອງໃດເມືອງໜຶ່ງ
- ສິນຄ້າຄຸນນະພາບສູງ
- ເປັນສິນຄ້າທີ່ມີຄວາມປອດໄພຕໍ່ຜູ້ຊົມໃຊ້, ບໍ່ມີຜົນກະທົບຕໍ່ທຳມະຊາດ, ສິ່ງແວດລ້ອມແລະ ລະບົບນິເວດ
- ເປັນຜົນງານ ແລະ ຄວາມພາກພູມໃຈໜຶ່ງດຽວໃນເມືອງ
- ເປັນສິນຄ້າທີ່ມີອະນາຄົດຍາວໄກຮັບປະກັນຄວາມຍືນຍົງ
- ຂະບວນການຜະລິດສິນຄ້າດັ່ງກ່າວ ແມ່ນດຳເນີນການໂດຍຜູ້ປະກອບການລະດັບທ້ອງຖິ່ນ ເຊິ່ງໃຊ້ແຮງງານຜະລິດທາງກົງຕ່ຳກວ່າ 50 ຄົນ

ສິ່ງດັ່ງກ່າວນັ້ນ, ແມ່ນຜົນການຄົ້ນຄວ້າຂອງຊ່ຽວຊານຍີ່ປຸ່ນ ແຕ່ໂດຍລວມແລ້ວ ໂອດອບແມ່ນ ການຈັດຕັ້ງປະຕິບັດແຜນນະໂຍບາຍ ການສົ່ງເສີມຂະບວນການຜະລິດເປັນສິນຄ້າຂອງລັດຖະບານ ແຫ່ງ ສປປ ລາວ ດ້ວຍການອຳນວຍຄວາມສະດວກໃນຮູບການຕ່າງໆ ເປັນຕົ້ນ ແມ່ນການຊ່ວຍເຫລືອ ທາງດ້ານເຕັກນິກວິຊາການ, ເຕັກໂນໂລຊີ ແລະ ການບໍລິຫານຈັດການເພື່ອຊຸກຍູ້ສົ່ງເສີມໃຫ້ປະຊາຊົນ ນຳໃຊ້ພູມປັນຍາຂອງເຂົາເຈົ້າເຂົ້າໃນການພັດທະນາ ແລະ ຜະລິດສິນຄ້າເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກໄປຕ່າງປະເທດ. ການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ແມ່ນແນໃສ່ສ້າງວຸກເຮັດງານທຳ

ແລະ ເພີ່ມລາຍໄດ້ໃຫ້ແກ່ປະຊາຊົນ ໂດຍສະເພາະແມ່ນເຂດຊົນນະບົດເພື່ອໃຫ້ເຂົາເຈົ້າເຂັ້ມແຂງຂຶ້ນເລື້ອຍໆ ສາມາດເພິ່ງຕົນເອງໄດ້ທັງເປັນການປະກອບສ່ວນຢ່າງເປັນເຈົ້າການໃນການສ້າງສາພັດທະນາທ້ອງຖິ່ນຂອງຕົນ ແລະ ປະເທດຊາດໂດຍລວມ.

ຢ່າງໃດກໍຕາມ, ແນວທາງການສືບທອດພູມປັນຍາທ້ອງຖິ່ນ ທີ່ມີລັກສະນະແບບຍືນຍົງນັ້ນ ທາງໜ່ວຍງານ ຂອງລັດທີ່ກ່ຽວຂ້ອງຮວມທັງສະຖາບັນການສຶກສາ ຈະຕ້ອງໄດ້ຮ່ວມມືກັນໃຫ້ເກີດເປັນຮູບປະທຳ ຄື:

- ກະຕຸ້ນໃຫ້ຊຸມຊົນໃນທ້ອງຖິ່ນມີຄວາມພູມໃຈ ແລະ ຍອມຮັບໃນຄວາມຄິດຂອງບຸກຄົນ
- ເກັບກຳຊອກຫາບຸກຄົນທີ່ເປັນພູມປັນຍາທ້ອງຖິ່ນໃນແຕ່ລະສາຂາວິຊາ
- ເກັບກຳ,ຮວບຮວມ ແລະ ສ້າງຖານຂໍ້ມູນພູມປັນຍາທ້ອງຖິ່ນ
- ສະໜັບສະໜູນການຄົ້ນຄວ້າວິໄຈ
- ບັນຈຸໃນຫລັກສູດການສຶກສາ
- ສົ່ງເສີມການຜະລິດ ແລະ ເຜີຍແຜ່
- ຮັກສາ ແລະ ຄຸ້ມຄອງຊັບສິນທາງປັນຍາ.

ຄຳຖາມ:

1. ຈົ່ງບອກຄວາມໝາຍຂອງຄຳວ່າພູມປັນຍາທ້ອງຖິ່ນ?
2. ລັກສະນະພູມປັນຍາທ້ອງຖິ່ນຂອງລາວສະແດງອອກແນວໃດ?
3. ປະເພດພູມປັນຍາທ້ອງຖິ່ນຂອງລາວປະກອບມີອັນໃດແດ່?
4. ຕາມທັດສະນະສ່ວນຕົວຂອງນັກສຶກສາ ຄິດວ່າຈະມີແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມ ພູມປັນຍາທ້ອງຖິ່ນຂອງລາວໄວ້ໃຫ້ຍືນຍົງແນວໃດ?
5. ເກັບກຳຮວບຮວມພູມປັນຍາຊາວບ້ານໃນທ້ອງຖິ່ນຂອງນັກສຶກສາວ່າປະກອບມີອັນໃດແດ່?